ຄຳພີ
ສຸວັນນະມຸກຂາ

ລິດຈະນາໂດຍ: ສຳລິດ ບົວສີສະຫວັດ

ອຸປະຖຳໂດຍ: ມູນນິທິໂຕໂຢຕາ ແຫ່ງປະເທດຍີ່ປຸ່ນ

THE TOYOTA FOUNDATION

Shinjuku Mitsui Building 37F • 2-1-1 Nishi-Shinjuku • Shinjuku-ku • Tokyo 163-04 • Japan
Telephone: (03) 3344-1701 • Facsimile: (03) 3342-6911 • Cable: Tytfoundation, Tokyo

ຄຳພີ ສຸວັນນະມຸກຂາ

ລິດຈະນາໂດຍ: ສຳລິດ ບົວສີສະຫວັດ

ພິມເທື່ອທີໜຶ່ງ 1994

© ສະຫງວນລິຂະສິດ

ອຸປະກຳໂດຍ: ມູນນິທິ ໂຕໂຢຕາ ແຫ່ງປະເທດຍີ່ປຸ່ນ

Sponsored by : The TOYOTA Foundation
Shinjuku Mitsui Building 37 F · 2-1-1 Nishi-Shinjuku
Shinjuku-ku · Tokyo 163-04 · Japan

ສາລະບານ

ໜ້າ

ຄຳເຫັນຂອງທ່ານ ບົວບານ ວໍຣະຊຸນ ຮອງລັດຖະມົນຕີ
ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ .... ກ
ຄຳນຳຂອງກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ... ງ
ທັດສະນະແລະຄຳອະທິບາຍຂອງຜູ້ຊຳຮະ ແລະ ປະຣິວັດ...... 1
ຄຳຈຳກັດຄວາມ " ອະທິນນາທານ " 9
ເກີດໂທດ 5 ປະການ 15
ໂທດລັກຊັບຂ້າສັດ 16
ໂທດລັກຊັບ 16
ໂທດມິດສາຈານ 17
ໂທດມຸສາວາດ 18
ໂທດດື່ມນ້ຳເມົາ 18
ຕຳນານຊາຍ 4 ຄົນຍາດນາງ 19
ຕຳນານຊາຍ 2 ຄົນຍາດຄຳ 19
ຕຳນານຊາຍ 2 ຄົນຍາດນົກ 20
ຕຳນານຊາຍ 5 ຄົນຮັກສາຕີນແມວ 20
ຕຳນານຍິງ 3 ຄົນຍາດຜົວ 21
ຕຳນານຄົນ 5 ຄົນເຮັດຂອງພະຍາເສຍ 21
ຕຳນານໂຈດຈອດເຮືອນ 21
ຕຳນານໃຫ້ໜີ້ທວງບໍ່ໄດ້ 22
ຕຳນານຜົວເມຍຢ່າກັນ 22
ແກ້ບັນຫາ 3 ຄົນຍາດນອນກາງ 23
ຕັດສິນເຮັດເຮືອຫຼົ້ມ 23
ຕັດສິນປັນເຄື່ອງ 23

ຕຳນານງ່າວ 24
ຕຳນານຣັດສີ 4 ຕົນ 26
ຕຳນານວິໄຊຍະອາມາດ 28
ເອກະໄນ 33
ທຸກະໄນ 35
ຕິກະໄນ 37
ຈະຕຸກະໄນ 38
ຕິກະໄນ 38
ນິທານເວຕານ 39
ນິທານນາງຕັນໄຕ 44
ໂທດ 20 ຈຳພວກ 50
ທັມມະສາດທິສາປາໂມກ 54
ຄອງເມືອງ 57
ຂ້າກັນຕາຍບໍ່ມີໂທດ 68
ລັກຂອງທ່ານ 69
ໄດ້ຂອງຕົກເຣ່ຍ 70
ຢືມຂອງກັນ 71
ເນຣະຄຸນຍ້ອນອະຄະຕິ 75
ພິຈາລະນາຄະດີຕ້ອງຊັ່ງຊາໃຫ້ກ້ວນກີ່ 76
ຕັດສິນຕາມປະຕິຍານ 78
ຕັດສິນຄຳຕ້ອງພິຈາລະນາໃຫ້ກ້ວນກີ່ 79
ຂັນຄ່າຄໍ 83
ທຳນຽມສ່ວນກິນ 83
ຄວ່າຈ່າຍເງິນແດງ 84
ທຳລາຍວັດຖຸແລະລະບຽບຫຼັກການ 84
ຣາຊສາດໂພທິສານ 116

ຫ້ອງຜິດຫ້ອງຊອບ 116
ເມຍ 4 ຈຳພວກ.. 121
ກະກຸນ 4 ຈຳພວກ 122
ຜົວເມຍມີການເມືອງກັບຕົນ 129
ກະບິນເມືອງ 11 ປະການ 164
ຜິດຈາຣີດບ້ານ 16 ປະການ 165
ກະບິນເມືອງມີ 6 ປະການອັນບໍ່ງາມຕາມຮີດ 166
ກະເສີມເມືອງ 5 ປະການ 166
ອະວະຫານ 25 175
ລັກຂະນະກີເອົາສີ່ງຂອງຄວນຫຼືບໍ່ຄວນ 181
ລັກຂະນະຄົວເຮືອນ 182
ລັກຂະນະຫ້ອງພິກຂຸ 195
ສຸດຕະບັນຫາ 201
ປຽບທຽບອານາຈັກທັມມະຈັກ 205

ຄຳເຫັນຂອງທ່ານ ບົວບານ ວໍລະຂຸນ
ຮອງລັດຖະມົນຕີກະຊວງກະແຫຼງຂ່າວແລະວັດທະນະທຳ

ຊາດລາວເປັນຊາດໜຶ່ງ ທີ່ມີອະລິຍະທຳ ມາແຕ່ດົນນານ. ຄວາມມີອະລິຍະທຳດັ່ງກ່າວນັ້ນ ແມ່ນຜົນແຫ່ງການອອກແຮງງານໃນການສ້າງບ້ານແປງເມືອງ ແລະ ການຕໍ່ສູ້ເພື່ອປົກປັກຮັກສາຊາດຂອງຕົນ ດ້ວຍຄວາມທໍລະຫົດອົດທົນ ໃນປະຫວັດສາດອັນຍາວນານ. ອາໄສການອອກແຮງງານ ການທຳມາຫາກິນ ສ້າງສາບ້ານເມືອງ ແລະການຕໍ່ສູ້ກັບສັດຕູ ເພື່ອປົກປັກຮັກສາດິນແດນ ອັນເປັນທີ່ຫວງແຫນຂອງຕົນນັ້ນ ຈຶ່ງເຮັດໃຫ້ຊາດຂອງພວກເຮົາຢືນຢົງຄົງຕົວ ແລະຂະຫຍາຍຕົວຈາກຕ່ຳໄປຫາສູງ, ຈາກການເປັນເຜົ່າຊົນ ກາຍມາເປັນກຸ່ມຊົນ ແລະໂຮມເອົາຫຼາຍກຸ່ມຊົນຄະນະຍາດ ຜູກພັນກັນເຂົ້າເປັນວົງຄະນະຍາດແຫ່ງຊາດ ແລະ ເປັນປະເທດຊາດໜຶ່ງທີ່ເປັນເອກະພາບຈົນມາເຖິງເທົ່າທຸກວັນນີ້. ໄປພ້ອມກັບການເຕີບໃຫຍ່ຂະຫຍາຍຕົວຂອງປະເທດຊາດນັ້ນ ສະຕິປັນຍາ ຄວາມສັງມແຫຼມຂອງຄົນລາວ ກໍ່ມີການຂະຫຍາຍຕົວ, ຄວາມຮູ້ວິຊາການຕ່າງໆທີ່ຂຸດຄົ້ນໄດ້ຈາກການອອກແຮງງານຂອງຕົນເອງ ແລະບັນດາຄວາມຮູ້ທີ່ວົງຄະນະຍາດຊາດອື່ນ ໄດ້ປະດິດສ້າງຂຶ້ນໃນຂະບວນວິວັດ ແຫ່ງການເຄື່ອນໄຫວຊີວິດຂອງຕົນນັ້ນ ກໍ່ເປັນການເພີ່ມເຕີມເສີມສ້າງໃຫ້ຄົນລາວ ຊາດລາວ ມີຄວາມຮູ້ ຄວາມສາມາດໃນຫຼາຍດ້ານ ຢູ່ໃນນັ້ນລວມມີທັງ ຮີດບ້ານຄອງເມືອງ ລະບຽບກົດໝາຍຕ່າງໆ ເພື່ອຄຸ້ມຄອງແຜ່ນດິນ ແລະ ໄພ່ຟ້າປະຊາກອນຂອງຕົນ.

ສິ່ງທີ່ຄົນລາວໃນສະໄໝບູຮານໃຊ້ເປັນກົດໝາຍ ເພື່ອຄຸ້ມສັງຄົມນັ້ນກໍ່ມີຫຼາຍສະບັບດ້ວຍກັນ, ແຕ່ອັນໃຫຍ່ໆກໍ່ມີຄຳພີທຳມະສາດ

ຫຼວງ ຊຶ່ງເປັນກົດໝາຍແມ່ ໂດຍອາໄສປັນຈະສິນເປັນຫຼັກ ແຕ່ບໍ່ແມ່ນສິນຫ້າ ຄືດັ່ງສາດສະໜາ ແຕ່ເປັນວິຊາກົດໝາຍໂດຍສະເພາະ. ນອກຈາກນັ້ນກໍ່ມີສ້ອຍສາຍຄຳ ໂດຍອີງໃສ່ພະປາຕິໂມກຂອງພະສົງມາເປັນຫຼັກ (ສິນ ຫຼື ວິໄນ 227 ຂໍ້ຂອງພະສົງ) ແຕ່ໃນທາງປະຕິບັດນັ້ນ ມີຄວາມແຕກຕ່າງກັນ. ຕົວຢ່າງ ຖ້າພະສົງຕ້ອງອາບັດປາລະຊິກ ກໍ່ຖືວ່າເປັນໂທດໜັກທີ່ສຸດໃນຄອງພະ ໝາຍຄວາມວ່າ ຖ້າພະສົງອົງໃດຫາກຕ້ອງອາບັດປາລະຊິກຂໍ້ໃດຂໍ້ໜຶ່ງ ໃນ 4 ຂໍ້ນັ້ນ ພະອົງນັ້ນຕ້ອງໝົດຄວາມເປັນພະສົງ ໂດຍອັດຕະໂນມັດ. ແຕ່ສ່ວນໃນທາງຄະລີຫັດນັ້ນ ຖ້າຕ້ອງໂທດຂະໜາດດັ່ງກ່າວພັດຕ້ອງປະຕິບັດຕ່າງກັນ ແລ້ວແຕ່ການກະທຳຜິດນັ້ນໜັກຫຼືເບົາແລະຈະຕ້ອງໄດ້ລົງໂທດຕາມຄວາມໜັກ ແລະເບົາ. ກົດໝາຍທີ່ແກ້ໄຂໂທດດັ່ງກ່າວ ແມ່ນສ້ອຍສາຍຄຳອັນເປັນກົດໝາຍຂອງຄົນລາວໃນສະໄໝບູຮານ.

ສ່ວນຄຳພີ ສຸວັນນະມຸກຂາ ເຫຼັ້ມທີ່ທ່ານກຳລັງຈັບອ່ານຢູ່ນີ້ ເມື່ອພິຈາລະນາຢ່າງກີ້ກວນນັ້ນ ແມ່ນປະມວນກົດໝາຍຂອງລາວໃນສະໄໝບູຮານນັ້ນເອງ. ແຕ່ປະມວນກົດໝາຍນີ້ ບໍ່ມີມາດຕາຄືກົດໝາຍໃນປະຈຸບັນ ແຕ່ເພິ່ນໄດ້ເອົານິທານມາເປັນຄະຕິສອນໃຈໃຫ້ແກ່ຄົນເຊັ່ນ ນິທານນາງຕັນໄຕ ແລະ ນິທານເວຕານ. ທັງສອງແມ່ນວັນນະຄະດີຊັ້ນຍອດ ຂອງອິນເດຍບູຮານ. ເນື່ອງຈາກວ່າໃນສະໄໝກ່ອນນັ້ນ ອິດທິພົນຂອງພາມ ແລະ ພຸດ ທີ່ມາຈາກອິນເດຍນັ້ນ ໄດ້ເຂົ້າມາມີອິດທິພົນ ໃນຂົງເຂດອາຊີອາຄະເນຢ່າງແຜ່ຫຼາຍ, ການໃຊ້ກົດໝາຍ ຫຼື ລະບຽບການຕ່າງໆກໍ່ສາມາດຢືມກັນມາໃຊ້ ໂດຍດັດແປງໃຫ້ເຂົ້າກັບສະພາບແວດລ້ອມຂອງປະເທດນັ້ນ. ສະນັ້ນ, ຄຳພີສຸວັນນະມຸກຂາ ມັນແມ່ນປະມວນກົດໝາຍຂອງສັກດີນາໂດຍແທ້ ຈຶ່ງບໍ່ປາດສະຈາກໄດ້ການເຂົ້າຂ້າງ ຫຼື ຍົກຍໍອິດທິພົນເຊື້ອງຊົນຊັ້ນວັນນະ ແລະມີການຈຳແນກທາງສັງຄົມ. ສິ່ງດັ່ງກ່າວ

ບໍ່ຄວນກໍເປັນຂໍ້ຄະຣະຫາ ເພາະສະພາບແວດລ້ອມ ຂອງສັງຄົມໃນ ໃນເວລານັ້ນ ມັນຈໍາໃຫ້ເປັນໄປຄືແນວນັ້ນ.

ແຕ່ເຖິງຢ່າງໃດກໍຕາມ ປື້ມຄໍາພີສຸວັນນະມຸກຂາ ທີ່ອາຈານ ສໍາລິດ ບົວສີສະຫວັດ ເປັນຜູ້ຊໍາລະ ແລະປະລິວັດອອກມານີ້ ເຖິງ ແມ່ນຄຸນຄ່າຂອງມັນ ເມື່ອນໍາໃຊ້ເຂົ້າໃນພຶດຕິກໍາມີນ້ອຍກໍ່ຕາມ ແຕ່ ມັນມີຄຸນປະໂຫຍດອັນໃຫຍ່ຫຼວງ ໃນທາງສຶກສາວິໄຈສໍາຫຼັບນັກຄົ້ນ ຄວ້າທາງດ້ານກົດໝາຍ ແລະ ຜ່ານການອ່ານ ຫຼືຄົ້ນຄວ້າປື້ມນັ້ນ ຢ່າງກືກວ້ນແລ້ວ ພວກເຮົາກໍ່ຈະຮັບຮູ້ໄດ້ວ່າ ລະດັບຄວາມຮັບຮູ້ ແລະແນວຄວາມຄິດຂອງຄົນລາວ ໃນສະໄໝກ່ອນນັ້ນ ມີແນວໃດ ແລະ ເປັນຫຍັງພວກເພິ່ນຈຶ່ງມີລະດັບຄວາມຮູ້ ແລະ ມີແນວຄິດລິ ເລີ່ມແຕ່ງກົດໝາຍອອກມາ ເພື່ອປົກຄອງບ້ານເມືອງ ? ຜ່ານການ ອ່ານປື້ມນີ້ ກໍ່ຈະຮູ້ວ່າ ແນວຄວາມຄິດທີ່ຢາກໃຫ້ສັງຄົມເປັນລະບຽບ ມີຄວາມຍຸດຕິທໍາ ສະແດງໃຫ້ເຫັນວ່າແນວຄິດນີ້ ມີມາກັບຄົນລາວ ແຕ່ສະໄໝບູຮານພຸ້ນແລ້ວ. ນີ້ແມ່ນມູນເຊື້ອອັນໜຶ່ງຂອງຄົນລາວ ແລະ ຂອງຊາດລາວເຮົາ.

ຄຳເຫັນ
ຂອງຫົວໜ້າກົມ ວັນນະຄະດີ ແລະ
ວັດທະນະທຳມະຫາຊົນ

" ສຸວັນນະມຸກຂາ " ແມ່ນຊື່ປຶ້ມປະມວນກົດໝາຍບູຮານລາວ
ທີ່ນັກປາດອາຈານຜູ້ມີຄວາມຮູ້ ແລະປະສົບການທາງດ້ານກົດໝາຍ
ໄດ້ຂຽນຂຶ້ນແລວຈານໃສ່ໃບລານໄວ້ ເພື່ອກຳນົດໃຊ້ເປັນເຄື່ອງມືໃນ
ການປົກຄອງບ້ານເມືອງ. ປະມວນກົດໝາຍບູຮານສະບັບນີ້ ມີເນື້ອ
ໃນໃຈຄວາມບໍ່ຕ່າງກັບ ໜັງສືມູນລະຕັນໄຕ ແລະທຳມະສາດຫຼວງ
ປານໃດ.

ການທີ່ ທ່ານອາຈານມະຫາ ສຳລິດ ບົວສີສະຫວັດໄດ້ພາກ
ພຽນຄົ້ນຄວ້າ ແລະຮິບໂຮມ " ສຸວັນນະມຸກຂາ " ເຂົ້າເປັນປຶ້ມ
ພິມອອກຮັບໃຊ້ສັງຄົມນີ້ ນັບວ່າເປັນການອຸທິດເຫື່ອແຮງ ແລະພູມ
ປັນຍາທີ່ຄວນຍ້ອງຍໍສັນລະເສີນເປັນຢ່າງຍິ່ງ. ເພາະວ່າ ຄຳພີດັ່ງ
ກ່າວນີ້ ມີຄຸນປະໂຫຍດມະຫາສານ ເປັນຕຳນານກົດໝາຍທີ່ໃຫ້ຂໍ້
ມູນສຳຄັນ ແລະ ເປັນການ :

1. ປົກປັກຮັກສາວັດທະນະທຳ ທາງດ້ານນິຕິສາດ, ທັງເປັນ
ການເຜີຍແຜ່ອັນດີມີຄຸນຄ່າໃຫ້ແກ່ສັງຄົມ.

2. ເປັນການຍື່ນມອບປຶ້ມຄູ່ມື ຫຼື ຕຳລາອັນເກົ່າແກ່ທາງກົດ
ໝາຍທີ່ຫາຍາກໃຫ້ນັກຄົ້ນຄວ້າ ນັກວິໄຈ : ບັນຫາສັງຄົມ ວັດທະ
ນະທຳ, ການປົກຄອງ ຈິດຕະວິທະຍາ, ປະຫວັດສາດ ແລະ ມະ
ນຸດວິທະຍາ ເຊິ່ງເປັນຂໍ້ມູນຕົວຈິງ ແລະ ມີຄ່າສູງທາງວິຊາການ.

3. ເປັນການເຕືອນບອກຄົນລາວຍຸກໃໝ່ ໃຫ້ເຫັນໄດ້ຄວາມ
ອຸດົມສົມບູນຂອງພາສາລາວ, ສັບລາວ, ສຳນວນລາວ ໃນການບັນ
ຍັດກົດໝາຍ.

4. ກົດໝາຍບູຮານສະບັບນີ້ ຍັງສາມາດນຳໃຊ້ເຂົ້າໃນການໄກ່ເກ່ຍ ປົກປັກຮັກສາຄວາມສາມັກຄີ ຄວາມຖືກຕ້ອງປອງດອງລະຫວ່າງຍາດຕິພີ່ນ້ອງ, ຊາວບ້ານຊາວເມືອງ ໂດຍສະເພາະຢູ່ຕາມທ້ອງຖິ່ນຕ່າງໆ ຍ້ອນວ່າເນື້ອໃນຂອງມັນບັນຈຸໄວ້ເຊິ່ງ ສິນທຳ ຈະລິຍະທຳ ແລະ ນິທານສຸພາສິດ ທີ່ມີອິດທິພົນສອນໃຈ ຢ່າງຫຼວງຫຼາຍ.

ດັ່ງນັ້ນ, ກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນຈຶ່ງຂໍສັນລະເສີນຊົມເຊີຍ ແລະ ຍ້ອງຍໍ ທ່ານອາຈານມະຫາ ສຳລິດ ບົວສີສະຫວັດ ທີ່ໄດ້ມີຄວາມອົດທົນ ພາກພຽນພະຍາຍາມຄົ້ນຄວ້າຮຽບຮຽງປຶ້ມ " <u>ສຸວັນນະມຸກຂາ</u> " ແລະ ພິມພົນງານນີ້ອອກມາຮັບໃຊ້ປະເທດຊາດ ແລະ ປັນຍາຊົນຢ່າງສຸດອົກສຸດໃຈ.

ວຽງຈັນ, ວັນທີ 12 ຕຸລາ 1994.
ຫົວໜ້າກົມ ວັນນະຄະດີ ແລະ ວັດທະນະທຳມະຫາຊົນ

ດຣ. ທອງຄຳ ອ່ອນມະນີສອນ

ທັດສະນະ ແລະ ຄຳອະທິບາຍຂອງຜູ້ຊຳຣະ ແລະປະຣິວັດ

ອັນກົດໝາຍບູຮານລາວນັ້ນມີຢູ່ຫຼາຍຜູກຫຼາຍມັດ ຫຼືຫຼາຍຄຳ-
ພີເທົ່າທີ່ຂ້າພະເຈົ້າໄດ້ຄົ້ນພົບ ແລະ ຄົ້ນຄວ້າມີຢູ່ແປດຄຳພີດ້ວຍກັນ
ທີ່ຂ້ອນຂ້າງໃຫຍ່ ແລະ ສຳຄັນ ນອກນີ້ກໍມີປະເພດໜັງສືກ້ອມ ມີ
ຫຼາຍສຳນວນ ແລະ ຫຼາຍລັກສະນະຕາມວັດຖຸປະສົງໃນການນຳໃຊ້
ຍົກຕົວຢ່າງ ປະເພດໄຈ້ແຍກຮູບຄະດີມີດັ່ງນີ້ :
*ທາງພັນທົວ ງົວພັນຫຼັກ ງົວເລີຍເຊືອກ ທົວລ້ານລໍ້ງຜູກ
ຈໍຣະເຄ້ແຝງຕໍ ພະຣາມແຜງສອນ* ເປັນຕົ້ນ ແຕ່ລະຊື່ກໍມີຄຳອະ-
ທິບາຍປະກອບ ພ້ອມທັງວິທີວິທະຍາ ໃນການສືບສວນ ແລະ ສອບ
ສວນໄວ້ນຳ.ສ່ວນຄຳພີທີ່ກ່າວນາມມານັ້ນກໍມີຈຸດພິເສດ ແລະເນື້ອໃນ
ແຕກຕ່າງກັນໄປຕາມເປົ້າໝາຍ ແລະ ຈຸດຈຳນົງ ຄືຄຳພີທັມມະ
ສາດຫຼວງ ແມ່ນກົດໝາຍຫຼັກ ມີສີ່ຮ້ອຍສາມສິບອັດມາດຕາອາໄສ
ປັນຈະສີນເປັນຫຼັກແບ່ງພາກ ແຕ່ບໍ່ແມ່ນອະທິບາຍແບບສາດສະໜາ
ຫາກເປັນວິຊາການ ດ້ານກົດໝາຍໂດຍ ສະເພາະ ສ່ວນຄຳພີມູລະ
ຕັນໄຕໄປອີກຮູບແບບໜຶ່ງຄືເປັນຕົວຢ່າງຕັດສິນຄະດີທີ່ຫຍຸ້ງຍາກລຶກລັບ
ສັບສົນ ພ້ອມທັງແກ້ປົດສະໜາບັນຫາ ທີ່ມີລັກສະນະຍາກແກ່ໃຈ ໃນ
ການແກ້ໄຂທຳນອງກືນບໍ່ເຂົ້າ ຄາຍບໍ່ອອກ ແຕ່ຊອກຫາທາງອອກທີ່
ີບົວບໍ່ໃຫ້ ຊ້ຳນ້ຳບໍ່ໃຫ້ຂຸ່ນ ມີຫຼາຍຕົວຢ່າງໃນທາງຣັດຖະສາດ. ແຕ່
ຄຳພີສອຍສາຍຄຳນັ້ນຊ້ຳພັດນຳເອົາພະປາຕິໂມກ ຫຼືສີນພິກຂຸ 227
ສິກຂາບົດມາເປັນຫຼັກ ໃນການປຽບທຽບຄວາມແຕກຕ່າງ ລະຫວ່າງ
ຄະຫັດກັບບັນພະຊິດ ໃນການດຳລົງຊີວິດທາງສັງຄົມ ຕົວຢ່າງທາງ
ພະວິໄນໃສ່ໂທດທຳນອງນັ້ນ ທາງການບ້ານເມືອງໃສ່ໂທດທຳນອງ
ນີ້ ເພາະມີອັນຕ່າງກັນ. ສ່ວນຄຳພີສຸວັນນະມຸກຂາທີ່ທ່ານກຳລັງອ່ານ
ຢູ່ນີ້ ມີລັກສະນະຄ້າຍປະມວນກົດໝາຍບູຮານລາວ (The code
of Lao Customary law) ນັບເປັນອັນດັບທີສີ່ ທີ່ຂ້າພະເຈົ້າໄດ້

ຊຳຣະ ແລະປະຣິວັດຂ້ອນຂ້າງຍາວປະມານ 300 ໜ້າ ແຕ່ວ່າບໍ່ໄດ້ ວາງໄວ້ເປັນຂໍ້ ຫຼື ມາດຕາເໝືອນພະທຳມະສາດຫຼວງ ຫາກກ່າວ ລວມທຳນອງທົ່ວໄປ ຄ້າຍຈະເປັນບົດສະຫຼຸບ ມີຫຼາຍອັນ ທີ່ໜ້າສຶກ ສາພິຈາລະນາ ທີ່ເຫັນວ່າພິເສດ ແມ່ນຍົກຕົວຢ່າງນິທານ ຈາກນິ ທານນາງຕັນໄຕ ຫຼື ພັນຣາຕີ (Thousand Nights) ແລະ ນິ ທານເວຕານ ທັງສອງນີ້ແມ່ນວັນນະຄະດີຊັ້ນຍອດ ຂອງອິນເດຍບູ ຮານ ເຊິ່ງນິຍົມກັນທົ່ວໂລກ ດັ່ງດຽວກັບມະຫາພາຣະຕະ ແລະ ຣາ ມາຍະນະ ຕົ້ນສະບັບດັ້ງເດີມ ເປັນພາສາສັນສະກິດ ດັ່ງນັ້ນ ຄຳທີ່ ຍົກມາອ້າງໃນຄຳພີນີ້ ຈຶ່ງມີພາສາສັນສະກິດຫຼາຍ ເກືອບເທົ່າກັບພາ ສາປາລີທີ່ອ້າງຈາກຄຳພີພະພຸດທະສາດສະໜາ ແລະ ເປັນລັກສະ ນະປາລີສົມສັນສະກິດ ສັນສະກິດສົມປາລີ ຍາກທີ່ຈະເຂົ້າໃຈ ສະນັ້ນ ຈຶ່ງຄົງໄວ້ຕາມເດີມ ເຖິງຢ່າງໃດກໍດີລັກສະນະເຊັ່ນນີ້ ມັນສະແດງ ໃຫ້ເຫັນຢ່າງຈະແຈ້ງວ່າ ນັກປາດລາວບູຮານມີຄວາມຮູ້ກວ້າງຂວາງ ຫຼາຍເກັ່ງທັງປາລີ ແລະ ສັນສະກິດ ຮູ້ແຕກສານຊ່ຽວຊານທັງທາງ ຄະດີໂລກ ແລະຄະດີທຳ ສາມາດນຳມາປຽບທຽບອະທິບາຍທັງຝ່າຍ ພຸດແລະພາມ ທັງນີ້ ກໍຍ້ອນວ່າພື້ນການແນວຄິດ ທາງກົດໝາຍ ຕົ້ນຕໍແມ່ນໄດ້ຈາກຄຳພີກົດໝາຍ ພະມະນູຂອງອິນເດຍ ເຊິ່ງມີອິດ ທິພົນຢູ່ໃນອາຊີອາຄະເນ ໃນສະໄໝບູຮານ ສະນັ້ນ ມັນຈຶ່ງແມ່ນ ກົດໝາຍສັກດີນາ ໂດຍປາດສະຈາກຄຳສົງກາ ອິດທິພົນ ເຊື້ອງຊາດ ຊັ້ນ ວັນນະແລະ ຈຳແນກບຸກຄົນທາງສັງຄົມ ຈຶ່ງມີຢູ່ໃນກົດໝາຍ ເຫຼົ່ານີ້ຢ່າງໜີບໍ່ພົ້ນ ໂດຍສະເພາະ ເລື້ອງຂ້າທາດ ແມ່ນມີຫຼາຍ ແລະ ໃຫ້ອັດຖາທິບາຍຢ່າງຄົບຖ້ວນ ກົດໝາຍລາວບູຮານ ຮັບຮູ້ ເລື້ອງນີ້ຢ່າງເຕັມສ່ວນ ນີ້ໝາຍຄວາມວ່າ ມັນລ່ວງມາແລ້ວຫຼາຍ ສະຕະວັດ ຫຼື ອາດນັບເປັນພັນປີ ຈຶ່ງບໍ່ຄວນຖືເປັນຂໍ້ຕຳໜິເຮົາສຶກ ສາໃນການະເປັນປະຫວັດສາດກົດໝາຍ ຕາມຍຸກຕາມສະໄໝ ຈະ ໄດ້ຮູ້ແນວຄິດຂອງມະນຸດໃນຍຸກນັ້ນໆ ອັນເປັນດ້ານໜຶ່ງ ແຫ່ງມະ–

ມຸດສະວິທະຍາແລະການວິວັດ ຂອງວັດທະນະທຳດ້ານນິຕິທຳ.

ສ່ວນໃນດ້ານດີ ແລະມີປະໂຫຍດນັ້ນແມ່ນມີຫຼາຍຖ້າຫາກເຮົາຮູ້ໄຈ້ແຍກວິໄຈວ່າອັນໃດເປັນແກ່ນ ອັນໃດເປັນເປືອກແລ້ວເລືອກນຳໃຊ້ຕາມຄວາມຕ້ອງການ ບາງທ່ານອາດຄິດວ່າ ຄຳພີເຫຼົ່ານີ້ຫຼ້າສະໄໝ ແລະເປັນກົດໝາຍສັກດີນາ ບໍ່ຄວນເອົາມາເຜີຍແຜ່ ແຕ່ຖ້າເຮົາບໍ່ສຶກສາເຫດໃດຈະຮູ້ວ່າດີ ຫຼືຮ້າຍ ຄົນຍຸກນີ້ມີວິວັດທະນາການພໍຈະຕັດສິນໄດ້ວ່າ ອັນໃດຄວນບໍ່ຄວນ ໃຫ້ໂອກາດເຂົາໃຊ້ສະຕິປັນຍາດີກວ່າປິດບັງ ຈະໄດ້ມີໃຈກວ້າງເບິ່ງບັນຫາດ້ວຍຄວາມເປັນສັດຈະທຳ.

ຕາມຫຼັກການສຶກສາ ກ້າກົກວິທີແມ່ນມີປະໂຫຍດບໍ່ວ່າໃນຂອງເກົ່າ ຫຼືຂອງໃໝ່ ສາຣະແທ້ຈິງຂຶ້ນຢູ່ທີ່ຕົວເຮົາເອງ ຈະຮູ້ຈັກເລືອກເຟັ້ນ ຫຼື ຕັດສິນໃຈແນວໃດ ຂ້າພະເຈົ້າຫວັງພຽງວ່າ ໃຫ້ຄຳພີກົດໝາຍເຫຼົ່ານີ້ເປັນເຄື່ອງມືຄົ້ນຄວ້າ ບໍ່ແມ່ນຕຳຣາຕາຍຕົວ ສຳລັບຜູ້ຕ້ອງການຄວາມຮູ້ກວ້າງຂວາງໃນທາງປະຫວັດສາດກົດໝາຍ ແລະການປົກຄອງ ຂອງຊາດເຮົາໃນອະດີດ ເພື່ອປຽບທຽບຊົ່ວຊາກັບສະພາວະການໃນປັດຈຸບັນ.

ຖ້າເຮົາຫາກຄິດດ້ວຍຄວາມເປັນທຳເຮົາຈະຮູ້ສຶກທະນົງໃຈເປັນຢ່າງຍິ່ງທີ່ມີສິ່ງປະເສີດດ້ານພູມປັນຍາຂອງປູ່ຍ່າຕາຍາຍ ບຸບພະບຸຣຸດເຮົາໄດ້ສ້າງໄວ້ ແລະໄດ້ຕົກທອດມາຮອດໝູ່ເຮົາ ປັດຈຸບັນນີ້ ຍັງບໍ່ທັນເວົ້າເຖິງສ້າງໃໝ່ ພຽງຮັກສາຂອງເກົ່າ ແລະ ເຂົ້າໃຈຄຸນຄ່າກໍ່ຍັງຍາກ ສິ່ງເຫຼົ່ານີ້ນັບມື້ແຕ່ຈະສູນຫາຍອັນຕະຣາທານໄປຊຸກໄຊ້ຖ້າເຮົາບໍ່ຮີບຊ່ວຍກັນປົກປັກຮັກສາ.

ເອກະສານບູຮານ ແລະ ບູຮານວັດຖຸເປັນສິ່ງມີຄ່າມະຫາສານໃນສາຍຕາ ຂອງນັກວິຊາການ ໃຜໆກໍບໍ່ສາມາດປະຕິເສດໄດ້ ເພາະນັ້ນມັນເປັນຄວາມຈິງ ຍິ່ງໃນປັດຈຸບັນນີ້ ຍິ່ງມີຄວາມສຳຄັນຍ້ອນວ່າມັນກາຍເປັນແນວຄິດສາກົນໄປແລ້ວ.

ສ່ວນການຈະປົກປັກຮັກສາແນວໃດນັ້ນ ມັນມີຫຼາຍແບບ ຫຼາຍ

ວິທີ ຂຶ້ນຢູ່ກັບເງື່ອນໄຂ ແລະ ສັກຍະພາບ ຂອງໃຜລາວ ມີໂອກາດ ສໍາໃດກໍຊ່ວຍກັນຄົ້ນລະໄມ້ລະມື ສໍານັ້ນ ເພາະສິ່ງເຫຼົ່ານີ້ ເປັນສິນບັດ ຂອງຊາດ ການເຜີຍແຜ່ໃຫ້ຮູ້ຈັກຄຸນຄ່າ ກໍເປັນວິທີໜຶ່ງໃນການອະນຸຮັກຂອງເກົ່າ ເປົ້າໝາຍ ຂອງການຊໍາຣະປະຣິວັດຈັດພິມປຶ້ມນີ້ ເພື່ອວັດຖຸປະສົງທີ່ກ່າວນີ້ຄືກັນ.

ສ່ວນຍັງອີກສີ່ຄໍາພີ ຄື ຣາຊສາດ ໂຄສະຣາດ ຫຼື ໂພສະຣາດ ສັງຄະປະກອບ ແລະ ຄະດີໂລກຄະດີທໍານັ້ນ ຖ້າມີເງື່ອນໄຂ ແລະ ໂອກາດອໍານວຍ ຄິດວ່າຈະຊໍາຣະ ແລະ ປະຣິວັດຈັດພິມໃນໂອກາດຕໍ່ໄປ ບັນຫາຫຍຸ້ງຍາກປະການໜຶ່ງ ແມ່ນຫາຕົ້ນສະບັບຍາກ ຈາກການສໍາຫຼວດ ໜັງສືໃບລານທົ່ວປະເທດ ປາກົດເຫັນໜ້ອຍເຕັມທີ ແມ່ນໃນຫໍສະໝຸດແຫ່ງຊາດກໍບໍ່ມີ ເປັນບັນຫາໜ້າຄິດ ຄວນຈະແກ້ໄຂແນວໃດ ຂໍຝາກໄວ້ໃຫ້ນັກຄົ້ນຄວ້າ ແລະ ທ່ານນັກປາດທັງຫຼາຍຊ່ວຍກັນພິຈາລະນາ.

ບັນຫານີ້ ບໍ່ສະເພາະແຕ່ເລື້ອງກົດໝາຍບູຮານລາວ ເລື້ອງວັນນະກໍາ ຄໍາພີດີກາ ແລະ ຕໍາຫຼັບຕໍາຣາອື່ນໆກໍເຊັ່ນດຽວກັນ ຍິ່ງກວ່ານັ້ນ ຍັງມີການລັກລອບຊື້ຂາຍ ແລະໃຫ້ລາ ໂດຍບໍ່ມີການກໍາກັບນັບຊາ ໃນວັດວາຕ່າງໆ ຖ້າຫາກສະພາບການເຊັ່ນນີ້ບໍ່ຖືກຍັບຍັ້ງ ຂອງເກົ່າຄົງຈະບໍ່ຍັງເຫຼືອເພື່ອອະນຸຊົນພາຍຫຼັງ.

ປາກົດການທີ່ກ່າວນີ້ ອາດຍ້ອນເຫດ ແລະ ປັດໄຈຫຼາຍປະການ ແຕ່ທີ່ສໍາຄັນ ແມ່ນບໍ່ເຫັນຄຸນຄ່າ ຖືວ່າຫຼ້າສະໄໝໃຊ້ບໍ່ໄດ້ ເລີຍບໍ່ເອົາຫົວຊາ ຕາມວັດວາບາງແຫ່ງທີ່ເຄີຍມີຫໍໄຕ ແລະ ໜັງສືໃບລານຫຼາຍຫີບຫຼາຍຕູ້ ກໍອັນຕະຣາທານສູນຫາຍໄປໝົດ ພ້ອມທັງຫໍໄຕ ອັນນີ້ໜ້າເສຍດາຍຢ່າງຍິ່ງ ທີ່ຍັງເຫຼືອຢູ່ດຽວນີ້ມີໜ້ອຍ ແລະການປົກປັກຮັກສາກໍຍັງບໍ່ທັນດີເທົ່າທີ່ຄວນ.

ການຕໍ່ໄປເຫັນວ່າ ຄວນຈະມີການເຮັດໃຫ້ຮັບຮູ້ໃນຄຸນຄ່າເອກະສານໃບລານ ໂດຍການປະຊາສໍາພັນ ແລະ ນໍາໃຊ້ໃຫ້ເຫັນຄຸນປະ–

ໂທຍດໂດຍແທ້ຈິງ ເວົ້າໂດຍສະເພາະ ວິຊາການດ້ານກົດໝາຍດັ່ງ ທີ່ບົ່ງຊື່ແລ້ວນັ້ນ ມັນມີຄຸນປະໂຫຍດທາງດ້ານວິຊາການຫຼາຍ ກ່ອນ ອື່ນແມ່ນການໝູນໃຊ້ສິນທຳ ທາງພະພຸດທະສາດສະໜາ ເຂົ້າໃນ ການບໍລິຫານບ້ານເມືອງ ໃນຮູບຂອງກົດໝາຍຫຼາຍປະການ ຄືບາງ ຄຳພີກໍ່ປັນຈະສີລາ ຫຼືສິນຫ້າປະການເປັນຫຼັກ ໃນການແບ່ງໝວດໝູ່ ແລະມາດຕາຂອງກົດໝາຍ ພ້ອມທັງນຳວັດຖຸນິທານ ແລະພາວະ ການທາງພະພຸດທະສາດສະໜາ ມາອ້າງອີງສ່ວນຫຼາຍແມ່ນອ້າງ ວ່າ ເປັນພຸດທະພົດ ບາງຄຳພີເອົາພະປາຕິໂມກ ຊຶ່ງແມ່ນວິໄນສິງ 227 ສິກຂາບົດເປັນບ່ອນອີງ ແລະ ປຽບທຽບຄູ່ກັນໄປທັງຝ່າຍອານາ ຈັກ ແລະ ທັມມະຈັກບາງຄຳພີ ອ້າງວັນນະກຳອັນລືຊື່ ຂອງອິນເດຍ ບູຮານ ເຊັ່ນນິທານນາງຕັນໄຕ ແລະ ນິທານເວຕານເປັນຕົ້ນ ສ່ວນວັນນະຄະດີ ທາງພຸດທະສາດສະໜານັ້ນ ສາມາດກ່າວໄດ້ວ່າ ມີອ້າງຢ່າງຮອບດ້ານ ດັ່ງນັ້ນ ມັນຈຶ່ງສະແດງໃຫ້ເຫັນຢ່າງຈະແຈ້ງ ວ່າ ພະພຸດທະສາດສະໜາ ມີອິດທິພົນຫຼາຍຕໍ່ການປົກຄອງໃນຍຸກ ນັ້ນ ແລະ ນັກການປົກຄອງໃນຍຸກນັ້ນ ໝັ້ນໃຈໃນພຸດທະທຳ ຫຼາຍ ພຽງໃດຈຶ່ງນຳມາປະຍຸກໃຊ້ໃນການບໍລິຫານບ້ານເມືອງ ແລະ ທ່ານ ເຫຼົ່ານັ້ນກໍເຂົ້າໃຈດີ ມີຄວາມຮູ້ແຕກສານໃນຄຳພີດີກາຕ່າງໆ ຢ່າງເຫັນ ໄດ້ຊັດໃນການນຳມາອ້າງອີງ ແລະ ປຽບທຽບທັງທັມມະຈັກ ແລະອາ ນາຈັກ ເຮັດໃຫ້ທັດສະນະທາງສາດສະໜາ ກັບການປົກຄອງປອງ ດອງກັນຢ່າງສະນິດແໜ້ນນັ້ນ ແມ່ນຈິດຕະສາດຊັ້ນສູງ ເຊິ່ງບໍ່ອາດ ປະຕິເສດໄດ້ ນອກຈາກນີ້ ຍັງມີຄວາມເຊື່ອຖື ແລະ ຮີດຄອງປະເພນີ ຕ່າງໆ ເຊິ່ງລືບລ້າງບໍ່ທັນໄດ້ໃນຍຸກນັ້ນກົດໝາຍກໍຮັບຮູ້ ໂດຍຜ່ອນໜັກ ໃຫ້ເປັນເບົາຕົວຢ່າງ ການເຊື່ອຜີ ເຊື່ອໂຊກ ເຊື່ອລາງ ເຊື່ອໄສຍະສາດ ແລະຄວາມເຂັດຄວາມຂວງຕ່າງໆ ຜູ້ບໍ່ເຊື່ອກໍບໍ່ຄວນທຳລາຍສິ່ງທີ່ຄົນ ອື່ນເຊື່ອຖື ມີບັນຍັດໄວ້ໃນກົດໝາຍຄັກແນ່ ແຕ່ສຳລັບຕົນເອງນັ້ນກົດ ໝາຍບໍ່ໄດ້ຫ້າມ ນີ້ຮຽກວ່າມີລັກສະນະປະນີປະນອມ.

ເມື່ອພິຈາລະນາໃຫ້ເລິກເຊິ່ງລົງໄປ ຈະເຫັນໄດ້ວ່າ ກົດໝາຍສັກດີນາຍຸກນັ້ນ ກໍເໝາະສົມກັບຄົນຍຸກນັ້ນໆເຊິ່ງມີລະດັບການຮັບຮູ້ຕໍ່າທັມມະຊາດ ແລະ ລະດັບການສຶກສາຂະໜາດນັ້ນ ມັນແມ່ນຍຸກຂອງໃຜລາວ ສະພາບແວດລ້ອມຕ່າງກັນ ສະນັ້ນເຮົາຈຶ່ງຄວນເຮັດໃຈໃຫ້ກວ້າງ ບໍ່ຄວນເອົາປັດຈຸບັນໄປຍັດໃສ່ອະດີດ ເພາະວ່າໃນອະນາຄົດຂ້າງໜ້າ ມະນຸດໃນຍຸກຕໍ່ໄປ ຈະມີທັດສະນະເໝືອນມະນຸດຍຸກນີ້ຫຼືບໍ່ ເຮົາກໍບໍ່ມີອັນໃດຮັບປະກັນ ມັນຈະຕ້ອງເປັນໄປ ຕາມເຫດຕາມປັດໄຈຂອງມັນເອງບໍ່ຕ້ອງອື່ນໄກກອຍຫຼັງໄປປະມານຮ້ອຍກວ່າປີມານີ້ເອງ ຜູ້ໃດເຊື່ອວ່າມີເຮືອເຫຼັກ ຜູ້ນັ້ນຈະກຶກຜູ້ອື່ນສົງໄສວ່າມີສະຕິ ແລະ ຈິດໃຈເປັນປົກກະຕິ ຫຼືບໍ່ ທັງນີ້ ເພາະທິດສະດີການແທນທີ່ຂອງວັດຖຸ ຍັງບໍ່ທັນວິວັດເຖິງຂັ້ນນັ້ນ ສະນັ້ນ ຈຶ່ງເຊື່ອວ່າເຫຼັກຈະຕ້ອງຈົມນ້ຳສະເໝີໄປ ເພາະວ່າ ໜັກກວ່ານ້ຳໃນບໍລິມາດເທົ່າກັນ ປາກົດການຕົວຈິງ ຂາເຈົ້າເຫັນແຕ່ເຮືອໄມ້ ຈຶ່ງໄດ້ເຊື່ອດັ່ງນັ້ນ.

ສະນັ້ນ ການຮັບຮູ້ວິວັດທະນາການ ຂອງສັບພະສິ່ງ ຈຶ່ງມີປະໂຫຍດມະຫາສານ ໃນການຮັບຮູ້ຂອງຄົນເປັນຢ່າງດີທີ່ກ່າວມານີ້ຢາກຊີ້ໃຫ້ເຫັນວ່າ ປະຫວັດສາດ ຫຼື ຄວາມເປັນມາຂອງສິ່ງຕ່າງໆຫາກເຮົາຮູ້ດີເທົ່າໃດ ຍິ່ງເປັນປະໂຫຍດແກ່ເຮົາເທົ່ານັ້ນ ບໍ່ຄວນເບິ່ງແຕ່ໃນແງ່ຂອງເກົ່າ ຂອງໃໝ່ ແຕ່ໃຫ້ເບິ່ງໃນແງ່ສັດຈະທຳນັ້ນແຫຼະຈະທັນສະໄໝຕະຫຼອດການ.

ການທີ່ຂ້າພະເຈົ້າສະເໜີກົດໝາຍເກົ່າ ຂອງສັກດີນາ ບໍ່ໄດ້ໝາຍຄວາມວ່າ ຈະດຶງແນວຄິດໃຫ້ກອຍຫຼັງໄປຍັງຍຸກນັ້ນ ເປັນແຕ່ຢາກໃຫ້ປຽບທຽບຈຸດດີ ຈຸດອ່ອນແລ້ວກອດກອນເປັນບົດຮຽນ ສຳລັບນັກຄິດຍຸກໃໝ່ເທົ່ານັ້ນເອງ ການຈະກອຍຫຼັງໄປຫາສັກດີນານັ້ນມັນຝືນທັມມະຊາດ ຝືນສັດຈະທັມ ຂັດຕໍ່ການວິວັດພັດທະນາການຂອງມະນຸດຊາດ ແຕ່ຄວນຢຸດຄິດບຶດໜຶ່ງ ກ່ອນຈະກ້າວໄປຂ້າງໜ້າ

ຄວນຮູ້ຂ້າງຫຼັງ ເພື່ອເປັນບ່ອນຢັນໃຫ້ມັນແໜ້ນ ບໍ່ດັ່ງນັ້ນອາດພາດພັ້ງຮູ້ໄວ້ບໍ່ໃຊ້ໄດ້ແບກໄດ້ຫາມ.

ອີກປະການໜຶ່ງ ແມ່ນປາກສະແດງໃຫ້ເຫັນ ຄວາມສາມາດອັນລ້ຳເລີກທາງດ້ານສະຕິປັນຍາ ແລະວິຊາການ ຂອງນັກປາດບູຮານແຫ່ງຊາດລາວ ເຮົາຄວນພາກພູມ ແລະ ທະນຸງໃຈໃນທ່ານເຫຼົ່ານັ້ນ ແລະສະແດງຄວາມຮູ້ບຸນຄຸນຕໍ່ເພິ່ນ ເຖິງຈະເປັນນິຣະນາມກໍ່ຕາມ ເຮົາອະນຸຊົນລູກຫຼານພາຍຫຼັງ ຍັງລຳລຶກເຖິງບຸນຄຸນຂອງເພິ່ນສະເໝີ ການສະແດງອອກ ເຊິ່ງກະຕັນຍູກະຕະເວທີຕາຄຸນເຊັ່ນນີ້ ກໍເປັນອຸດົມມະນຸດຄຸນປະການໜຶ່ງ ເຊິ່ງນັກປາດສັນເສີນ.

ເລື່ອງເອກະສານບູຮານ ທີ່ຈານໄວ້ໃນໃບລານມີຫຼາຍປະການບໍ່ແມ່ນແຕ່ໃນດ້ານກົດໝາຍ ດ້ານອື່ນໆກໍມີ ເຊັ່ນ ດ້ານວັນນະຄະດີປາລີ ພະໄຕປິດົກ ຄຳພີດີກາຕ່າງໆ, ວັນນະຄະດີບູຮານອີງຊາດົກອີງປະຫວັດສາດ ຄຳສອນບູຮານ ປະເພດຕ່າງໆ ເຊັ່ນ ຫຼານສອນປູ່ປູ່ສອນຫຼານ ອິນທິຍານສອນລູກ ຕຳຣາຢາ ຕຳຣາໂຫຣາສາດແມ່ນແຕ່ໄສຍະສາດເວດມົນ ຄາຖາອາຄົມມານາຊະນິດກໍມີຢູ່ໃນໜັງສືໃບລານ ການທີ່ສິ່ງເຫຼົ່ານີ້ຈະອຳນວຍປະໂຫຍດ ຫຼື ນຳໃຊ້ໃຫ້ໄດ້ຜົນປະການໃດນັ້ນ ມັນຂຶ້ນຢູ່ກັບຕົວເຮົາເອງຈະຮູ້ຈັກຄຸນຄ່າ ໂດຍຕີລາຄາຢ່າງເປັນສັດຈະທຳ ນຳໃຊ້ໃຫ້ຖືກກັບກາລະໂອກາດ ກໍສາມາດໃຫ້ສຳຣິດທິຜົນໄດ້ຕາມປະສົງ ຄວາມສຳຄັນຂອງເອກະສານບູຮານຢູ່ບ່ອນນີ້ ສະນັ້ນ ນອກຈາກຈະປົກປັກຮັກສາແລ້ວ ຈະຕ້ອງຮູ້ຈັກນຳໃຊ້ໃຫ້ເໝາະກັບເງື່ອນໄຂ ປັດໄຈ ແລະ ກາລະສະໄໝດ້ວຍ.

ເຖິງຢ່າງໃດກໍດີ ບາງຢ່າງອາດນຳໃຊ້ບໍ່ໄດ້ ເພາະບໍ່ເປັນສັດຈະທຳ ແລະກາຍຍຸກ ກາຍສະໄໝ ແຕ່ກໍມີຄຸນຄ່າໃນທາງສຶກສາວິໄຈສຳລັບນັກຄົ້ນຄວ້າ ດັ່ງນັ້ນ ຈຶ່ງບໍ່ຄວນກຸ້ມປະລະເລີຍ ຄວນອະນຸຮັກໄວ້ຕາມສົມຄວນ ປັດຈຸບັນນີ້ ປາກົດວ່າສິ່ງເຫຼົ່ານີ້ ໄດ້ສູນຫາຍໄປຫຼາຍແລ້ວ ແຕ່ກໍຍັງບໍ່ທັນຫຼາສວາຍເກີນໄປ ທີ່ຈະປ້ອງກັນໃຫ້ທັນການ.

ການທີ່ນຳສະເໜີ ສຸວັນນະມຸກຂາ ທີ່ທ່ານກຳລັງອ່ານຢູ່ນີ້ກໍເພື່ອພິສູດຄຸນຄ່າຂອງເອກະສານດ້ານໜຶ່ງ ພຽງເລັກນ້ອຍເທົ່ານັ້ນ ຈະເປັນຈິງພຽງໃດ ມັນຂຶ້ນຢູ່ກັບຄວາມພິນິດພິຈາລະນາດ້ວຍຈິດໃຈທີ່ເປັນທັມຂອງທ່ານເອງ. ຢ່າງໃດກໍດີແຕ່ກໍຄົງບໍ່ພົ້ນຈາກຄຳກ່າວທີ່ວ່າ ຂອງແຊບຢູ່ນຳຜູ້ມັກ ຄັກສຳໃດຢູ່ນຳໃຈຜູ້ກ່ຽວ ເພາະຕ່າງຄົນກໍຕ່າງຈິດຕ່າງໃຈ ແຕ່ຄວາມຈິງກໍຕ້ອງເປັນຄວາມຈິງຢູ່ນັ້ນເອງ.

ບຸນກຸສົນ ຫຼືຄຸນງາມຄວາມດີໃດໆ ຫາກເພິ່ງມີຈາກການຊຳຣະປະຣິວັດ ແລະຈັດພິມປຶ້ມຫົວນີ້ ຜູ້ຂ້າຂໍອຸທິດບູຊາຄຸນບຸບພາຈານເຈົ້າເຫຼົ່ານັກປາດເກົ່າບູຮານລາວ ຜູ້ມີສະຕິປັນຍາອັນລ້ຳເລີກ ໄດ້ແຕ່ງແປງຄຳພີນີ້ໄວ້ໃຫ້ອະນຸຊົນຄົນພາຍຫຼັງໄດ້ຮູ້ໄດ້ເຫັນ ແລະ ຄູບາອາຈານຜູ້ສືບທອດຕໍ່ໆມາ ພ້ອມທັງປະຊາຊົນຜູ້ໃຈບຸນລົງທຶນສ້າງ ແລະຜູ້ລິດຈະນາທຸກກ້ອນໜ້າ ຈົ່ງໄດ້ຮັບຄຳຊົມເຊີຍ ແລະ ສັນເສີນດ້ວຍຈິງໃຈຈາກພວກເຮົາເຫຼົ່າອະນຸຊົນດ້ວຍເທີ້ນ.

ປະການສຸດທ້າຍອັນບໍ່ຄວນລືມ ກໍແມ່ນຂໍຂອບອົກຂອບໃຈ ແລະຂອບຄຸນມູນນິທິ ໂຕໂຢຕາ ທີ່ໃຫ້ທຶນໃນການຄົ້ນຄວ້າ ແລະ ພິມເຜີຍແຜ່ປຶ້ມຫົວນີ້ຈົນປະສົບຜົນສຳເຫຼັດດັ່ງປາກົດເຫັນນີ້.

ສຳລິດ ບົວສີສະຫວັດ

ວຽງຈັນ, ວັນທີ 20 ເມສາ 1994.

ສຸວັນນະມຸກຂາ
ປະມວນກົດໝາຍບູຮານລາວ

ຈຳກັດຄວາມ " ອະທິນນາທານ "

ປະຣິຈາຄາທິມທີ ອະກະເຕ ອິມັງ ມະມະ ສັນຕະກັນຕິ ວັດຖຸສາມິກາ ອະວິທິຕັມປິ ປະຣະປະຣິທິຕະເມວະ ປຸຕຕານັງ ມາຕາປິຕູນັງ ອັຈຈະເຍນະ ສັນຕະກັງວິຍະ ຕັງ ອັຕກະໂຕ ອະປະຣິຈັຕເຕ ສັງຄະຫັງ ຄັດສະຕິ. ບົດນີ້ ອອກໃນວະຊິຣະຕິກາສາ ມິນ ປະຣິຈາຄາທິມທີ ໃນເມື່ອອາການ ອັນມີອັນສະຫວ່າງໃຫ້ເປັນ ຕົ້ນວ່າ ວັດຖຸ ສາມິນາ ອັນເຈົ້າຂອງ ອະກະເຕ ບໍ່ໄດ້ກະທຳ ມັກ ວ່າບໍ່ໄດ້ສະຫວ່າງໃຫ້ ຜູ້ອື່ນເປັນຕົ້ນ ສະຕິ ແລມີດັ່ງນັ້ນ ຕັງ ທະນັງ ອັນວ່າເຂົ້າຂອງອັນນັ້ນ ວັຕຖຸຖຸສາມິນາ ອັນເຈົ້າຂອງ ອະວິທິ ຕັມປິ ແມ່ນບໍ່ຮູ້ດ້ວຍຄຳວ່າ ອິມັງ ມະມະ ສັນຕະກັງ ອັນວ່າເຂົ້າຂອງອັນນີ້ ເປັນເຂົ້າຂອງແຫ່ງກູແລ ແມ່ນວ່າ ບໍ່ຮູ້ດັ່ງນີ້ກໍດີ ຕັງ ສັນຕະກັງ ອັນວ່າເຂົ້າຂອງອັນນັ້ນ ປະຣະປະຣິຄະທິຕັງເອວະ ຊື່ວ່າເຈົ້າຂອງຍັງ ຮັກສາໄວ້ສິ່ງດຽວ ສັນຕະກັງວິຍະ ເໝືອນດັ່ງຂອງ ປຸຕຕານັງ ແຫ່ງ ລູກທັງຫຼາຍ ອັຈຈະເຍນະ ໃນກາລະເມື່ອສັ້ງ ມາຕາປິຕູນັງ ແຫ່ງພໍ່ແລແມ່ທັງຫຼາຍ ມັກວ່າ ຄັນວ່າພໍ່ແລແມ່ຕາຍ ຂອງພໍ່ແລ ແມ່ທັງຫຼາຍ ມາເປັນຂອງລູກທັງມວນ ຕັງ ສັນຕະກັງ ອັນວ່າເຂົ້າ ຂອງອັນນັ້ນ ຄັດສະຕິ ກໍເກິງ ສັງຄະຫັງ ຍັງອັນນັບເຂົ້າ ອະປະຣິຈັຕເຕ ໃນຂອງອັນເຈົ້າຂອງບໍ່ໄດ້ສະໃຫ້ ອັຕກະໂຕ ດ້ວຍອະທິບາຍວ່າ ຂອງອັນໃດ ເຈົ້າຂອງກໍບໍ່ໄດ້ສະໃຫ້ ແກ່ຜູ້ໃດຜູ້ໜຶ່ງ ເຈົ້າຂອງບໍ່ໄດ້ ຮັກສາຂອງອັນນັ້ນ ແມ່ນເຈົ້າຂອງບໍ່ຮູ້ຂອງອັນນັ້ນ ແມ່ນບໍ່ຮູ້ດັ່ງນີ້ກໍດີ ຂອງອັນນັ້ນໄດ້ຊື່ວ່າເຈົ້າຂອງຍັງຮັກສາໄວ້ເໝືອນດັ່ງຂອງພໍ່ແມ່ ຄັນພໍ່ແມ່ຕາຍເສຍ ກໍເປັນຂອງລູກທັງມວນແລ ອະທິບາຍ ວະຊິຣະ

ບົດນີ້ເປັນດັ່ງນີ້ແລ.

ປະຣິຈາຄາທິມຫິ ອະກະເຕ ອິທັງ ມັຍທັງ ສັນຕະກັງ ອະວິທິຕັມປິ ປະຣະປະຣິຄະທິຕະເມວະ ມາຕາປິຕູນັງ ອັຈຈະເຍນະ ມັນຕານັງ ອຸຕຕານັງ ສະຍະການັງ ທາຣະການັງ ສັນຕະເມວະ ບົດນີ້ອອກໃນຕິກາສາມົນ. ປະຣິຈາຄາທິມຫິ ໃນເມື່ອອາການອັນມີອັນສະໃຫ້ເປັນຕົ້ນ ມູລະສາມິນາ ອັນຜູ້ເປັນເຈົ້າຂອງ ອະວິທິຕັມປິ ແມ່ນບໍ່ຮູ້ວ່າ ອິມັງ ມັຍທັງ ສັນຕະກັງ ອິຕິ ດັ່ງນີ້ກໍດີ ອິທັງ ສັນຕະ–ກັງ ອັນວ່າຂອງອັນນີ້ ສັນຕະກັງ ອັນເປັນຂອງ ມັຍທັງແຫ່ງກູແລ ຕັງ ສັນຕະກັງ ອັນວ່າຂອງອັນນັ້ນ ປະຣະປະຣິຄະທິຕັງ ເອວະ ຊື່ວ່າເຈົ້າຂອງຍັງຮັກສາໄວ້ສືບໆມາ ຕັງ ສັນຕະກັງ ອັນວ່າຂອງອັນນັ້ນ ສັນຕະກັງເອວະເປັນດັ່ງຂອງ ທາຣະການັງ ແຫ່ງເດັກນ້ອຍທັງຫຼາຍ ມັນຕານັງ ອັນປະຫຍາອ່ອນ ອຸຕຕານັງ ສະຍະການັງ ອັນນອນຢູ່ໃນຜ້າອ້ອມ ອັຈຈະເຍນະ ໃນກາລະເມື່ອລ້ຽງໄປແຫ່ງພໍ່ແລແມ່ຕົນ ມັກວ່າຂອງອັນໃດເຈົ້າຂອງບໍ່ສະໃຫ້ແກ່ຜູ້ໃດຜູ້ໜຶ່ງ ແລອັນໜຶ່ງຜູ້ເປັນເຈົ້າຂອງລືມເສຍກໍດີບໍ່ຮູ້ວ່າ ປະຣະປະຣິຄະທິຕັງ ຄືວ່າເຈົ້າຂອງຍັງຮັກສາໄວ້ຄືດັ່ງເດັກນ້ອຍນອນຢູ່ເໜືອຜ້າອ້ອມ ອັນພໍ່ແມ່ເຂົາຫາກຕາຍເສຍແລຕົນເຂົາຜູ້ລູກຍັງສືບເຊື້ອກະກຸນພໍ່ແມ່ເຂົານັ້ນ ແລມັກວ່າຍັງເປັນເດັກນ້ອຍຜູ້ນອນເໜືອຜ້າອ້ອມນັ້ນ ຜູ້ອື່ນຈັກເອົາບໍ່ໄດ້ແລ.

ປະຣິຈາຄາທິມຫິ ອະກະເຕ ອິທັງ ມັຍທັງ ສັນຕະກັງ ວັຕກຸສາມິນາປິ ອະວິທິຕັງ ປະຣະປະຣິຄະຕະເມວະ ພາລຸມຸຕ–ຕະກາທີນັງ ສັນຕະກັງວິຍາຕາທິສັງ ອະວະຫະຣັນເຕປິ ຍາຕະກາທິຫິປັດສາ ຍັຕວາ ວັຕກຸສາມິນາຈະ ອະນຸພັນທິຕວາ ຄະໂຕ ປະຣາຊິໂກວະໂຫຕິ. ບົດນີ້ອອກໃນວິມະຕິວິໂນທະນີ.

ປະຣິຈາຄາທິມຫິ ໃນເມື່ອອາການອັນມີອັນສະໃຫ້ເປັນຕົ້ນແກ່ຜູ້ໃດຜູ້ໜຶ່ງ ວັຕກຸສາມິນາ ອັນເຈົ້າຂອງ ອະກະເຕ ບໍ່ໄດ້ສະໃຫ້ແກ່ຜູ້ໃດຜູ້ໜຶ່ງ ສັນຕະກັງ ອັນວ່າເຂົ້າຂອງ ວັຕກຸສາມິນາ

ອັນເຈົ້າຂອງວັດຖຸ ອະວິທິຕັງປິ ແມ່ນບໍ່ຮູ້ວ່າ ອິທັງ ມັຍທັງ ສັນຕະກັງ ອິຕິດັ່ງນີ້ ອິທັງ ສັນຕະກັງ ອັນວ່າຂອງອັນນີ້ ສັນຕະກັງ ເປັນຂອງ ມັຍທັງແຫ່ງກູ ຕັງ ສັນຕະກັງ ອັນວ່າຂອງອັນນັ້ນປະຣະປະຣິຄະຫິຕັງ ເອວະ ຊື່ວ່າເຈົ້າຂອງຍັງຮັກສາສິ່ງດຽວ ຈັກເປັນດັ່ງຣິຈາສັນຕະກັງວິບະ ເປັນດັ່ງຂອງ ພາລຸມຸຕຕະກາທິນັງ ແຫ່ງເດັກນ້ອຍຊາວບ້ານທັງຫຼາຍແລຫຼົງແລລືມນັ້ນກໍດີ ອັນໜຶ່ງແຫ່ງຜູ້ເປັນຂ້າລືມສະຕິເສຍ ປະລະເຂົ້າຂອງເສຍນັ້ນກໍດີ ພິກຂຸ ອັນວ່າພິກຂຸ ເຖຍຍະ-ຈິຕໂຕ ອັນມີຈິດອັນລັກເອົາ ອະວະຫັນໂຕປິ ແມ່ນວ່າລັກເອົາ ຕາທິສັງພັນທັງ ຍັງເຂົ້າຂອງເຫັນປານດັ່ງນັ້ນ ປະຣາຊິໂກວະ ເປັນປາຣະຊິກສິ່ງດຽວແລ. ເຫດໃດ ຍາຕະກາທິທິ ປັດສາຍັຕວາ ອະນຸພັນທິຕັພໄພຈະ ເຫດສະພາວະແຫ່ງເຂົ້າຂອງອັນນັ້ນ ອັນບຸກຄະລະທັງຫລາຍຝູງມີຍາດເປັນຕົ້ນ ຮູ້ເມື່ອພາຍລຸນຫາກເພິ່ງໄລ່ໂຕ່ນຳເອົາເພື່ອຮັກສາໄວ້ແກ່ເຂົາດີຫລືອັນໜຶ່ງ ປັດສາຍັຕວາ ວັຕກຸສາມີນາ ອະນຸພັນທິຕັພໄພຈະ ເຫດສະພາວະແຫ່ງຂອງອັນນັ້ນອັນເຈົ້າຂອງຮູ້ເມື່ອພາຍລຸນຫາກເພິ່ງໄລ່ໂຕ່ນຳເອົາມາໄວ້ອະທິບາຍວະມະຕິ ບົດນີ້ວ່າ ຂອງອັນໃດອັນເຈົ້າຂອງບໍ່ໄດ້ສະໃຫ້ແກ່ຜູ້ໃດຜູ້ໜຶ່ງແລຂອງອັນນັ້ນແມ່ນເຈົ້າຂອງລືມເສຍກໍດີ ບໍ່ຮູ້ຈັກວ່າອັນນີ້ຂອງກູແລວ່າອັນກໍດີ ບໍ່ຮູ້ເປັນຂອງຕົນຂອງສິ່ງນັ້ນກໍຍັງໄດ້ຊື່ວ່າເປັນຂອງມັນ ຜູ້ນັ້ນແລ ເພິ່ງຮູ້ດ້ວຍອຸບປະມາດັ່ງເດັກນ້ອຍແລຜູ້ເປັນຂ້ານັ້ນແລ.

ຜີພິກຂຸລັກເອົາດັ່ງນັ້ນ ເສຍສິນເປັນຄົນດາຍແລ້ວ ຜີຄົນລັກເອົາຂອງດັ່ງວ່າມານີ້ ໂທດກໍມີແກ່ຄົນຜູ້ນັ້ນ ເຫດວ່າບຸກຄະລະທັງຫຼາຍຍາດພີ່ນ້ອງມັນຮູ້ພາຍລຸນ ເພິ່ງໄລ່ໂຕ່ເອົາກໍໄດ້ ອັນໜຶ່ງຜີເຈົ້າວັດຖຸຫາກຮູ້ພາຍລຸນໃຫ້ເອົາຄືນມາກໍໄດ້ແລ ອະທິບາຍວະມະຕິເປັນດັ່ງນີ້.

ອັຕຕະໂນ ສັນຕະກັງ ໂຈເຣທິ ປະຣິຄຄະຫິຕຕະປະຣະຫິຕັງຕັສມາ ປະໂຣ ປະຕັງ ເຖຍຍະຈິຕໂຕ ປະຣາຊິໂກເອວະ ໂນ ເຈຄັນຫາຕິ ນະ ປະຣາຊິໂກ ຕັສມາ ໂຈເທຕວາ ອັດສິນທິຕວາ

ວະໂສ ມູລະສາມິໂກ ມະມະ ສັນຕະກັງ ຄັນຫາມິຕິ ຄະເຫຕຸງ ລັພພະຕິ.

ບົດນີ້ອອກໃນ ວະຊິຣະໂພຄິຕິກາສາມິນ ສັນຕະກັງ ອັນວ່າຂອງ ອັຕຕະໂນແຫ່ງຕົນ ໂຈເຣຫິ ອັນໂຈນທັງຫຼາຍ ຫະຕັງ ຫາກລັກ ເອົາຂອງອັນນັ້ນ ປະຣະປະຣິຄຄະຫິຕັງ ຊື່ວ່າ ປະຣະປະຣິຄະຫິຕະ ກໍມີແລ ເຫດໃດ ໂຈເຣຫິ ປະຣະປະຣິຄຄະຕັຕຕາ ເຫດພາວະແຫ່ງ ຂອງອັນນັ້ນ ອັນໂຈນທັງຫຼາຍຫາກຮັກສາໄວ້ ຕັສມາ ເຫດດັ່ງນັ້ນ ປະໂຣ ພິກຂຸ ອັນວ່າພິກຂຸຕົນໜຶ່ງ ເຖຍຍະຈິຕໂຕ ມີຈິດອັນລັກ ເຈ ຄັນຫາຕິ ຜິແລກື້ເອົາ ພັນທັງ ຍັງຂອງອັນໂຈນຫາກຮັກສາໄວ້ນັ້ນ ໂສ ພິກຂຸ ອັນວ່າພິກຂຸຕົນນັ້ນ ປະຣາຊິໂກ ເປັນປາຣະຊິກສີ່ງດຽວ ໂສ ພິກຂຸ ອັນວ່າພິກຂຸຕົນນັ້ນ ໂນເຈ ຄັນຫາຕິ ຜິແລບໍ່ເອົາ ນະ ປະຣາຊິໂກ ພິກຂຸຕົນນັ້ນບໍ່ເປັນປາຣະຊິກແລ ຕັສມາ ເຫດດັ່ງນັ້ນ ໂສ ມູລະສາມິໂກ ອັນວ່າບຸກຄະລະຜູ້ເປັນເຈົ້າຂອງນັ້ນ ໂຈເທຕວາໂຈດ ແລ້ວ ອັດສິນທິຕວາ ຄຸບເອົາສີ່ງດຽວດອມໂຈນກໍໄດ້ ຄະເຫຕຸງເພື່ອ ກື້ເອົາດ້ວຍຄຳວ່າ ມະມະ ສັນຕະກັງ ຄັນຫາມິ ດັ່ງນີ້ ອະທັງ ອັນວ່າກູ ຄັນຫາມິ ກໍກື້ເອົາ ມະມະ ສັນຕະກັງ ຍັງຂອງແຫ່ງກູແລ ອະທິບາຍວະຊິຣະບົດວ່າດັ່ງນີ້ ຂອງພິກຂຸລັກເອົາແລ ເຫດໂຈນຍັງຮັກສາໄວ້ ພິກຂຸຕົນອື່ນມີຈິດອັນລັກເອົາຂອງອັນໂຈນລັກ ເອົາໄວ້ນັ້ນພິກຂຸຕົນນັ້ນເປັນປາຣະຊິກ ຜີຕົນເອົາຂອງອັນໂຈນເອົາໄວ້ ນັ້ນກໍເປັນໂທດແລ ຜີພິກຂຸຕົນເປັນເຈົ້າຂອງເຫັນແລ້ວ ແລໂຈດເອົາ ແລຄຸບເອົາດ້ວຍສະກະສັນຍາວ່າຂອງອັນນີ້ຂອງກູແລ ວ່າດັ່ງນັ້ນກໍຄວນ ແລອະທິບາຍ ວະຊິຣະໂພຄິຕິກາ ບົດນີ້ເປັນສັນນີ້ແລ.

ໂຈຣະພິກຂຸມຫິ ມະເຕ ມະຕະກະປະຣິຂາຣັນຕິ ສັງໂຄ ວິພັຊ ຊິຕິວາ ຄັນຫາຕິ ມູລະສາມິໂກ ມະມະ ສັນຕະກັງ ວະທັນຕິ ຄະ ເຫຕຸງ ລັພພະຕິ.

ບົດນີ້ ອອກໃນວະຊິຣະໂພຄິຕິກາສາມິນ. ໂຈຣະພິກຂຸມຫິ ໃນເມື່ອ

ພິກຂຸໂຈນ ມະເຕ ຕາຍ ສະຕິ ແລມີດັ່ງນັ້ນ ສັງໂຄ ອັນວ່າສິງວິພັຊ-
ຊິຕວາ ແຈກແລ້ວ ຄັນທາຕິ ກໍກິເອົາດ້ວຍຄຳວ່າ ມະຕະກະປະຣິ-
ຂາຣັງອິຕິ ດັ່ງນີ້ ອິທັງ ປະຣິຂາຣັງ ອັນວ່າ ບໍຣິຂານອັນນີ້ມະຕະກະ-
ປະຣິຂາຣັງ ເປັນບໍຣິຂານແຫ່ງພິກຂຸຕົນຕາຍ ແລມູລະສາມີໂກ ອັນ
ວ່າພິກຂຸຕົນເປັນເຈົ້າຂອງ ລັພພະຕິກໍໄດ້ ຄະເທຕຸງ ເພື່ອກິເອົາ
ສະກະສັນຍາຍະ ດ້ວຍສະກະສັນຍາວ່າ ມະມະ ສັນຕະກັງ ອິທັງ
ອັນວ່າຂອງອັນນີ້ເປັນຂອງກູແລ. ອະທິບາຍ ວະຊິຣະບົດນີ້ວ່າດັ່ງນີ້
ພິກຂຸຕົນໜຶ່ງ ໄປລັກເອົາບໍຣິຂານພິກຂຸຕົນໜຶ່ງນັ້ນແລ້ວ ໄປຢູ່ໃນອາ-
ວາດທີ່ອື່ນ ພິກຂຸນັ້ນລວດຕາຍໃນອາວາດອັນມັນຢູ່ນັ້ນ ເມື່ອພິກຂຸໂຈນ
ຈັກຕາຍ ມັນໄດ້ສະ (ສະລະ) ບໍຣິຂານອັນມັນລັກໃຫ້ແກ່ບຸກຄະລະຜູ້ໃດ
ຜູ້ໜຶ່ງແລ້ວ ຕາຍໄປບໍຣິຂານອັນມັນລັກນັ້ນ ເປັນຂອງສິງຢູ່ໃນອາ
ວາດທີ່ນັ້ນແລ ສິງຢູ່ໃນອາວາດທີ່ນັ້ນໃສ່ໃຈວ່າເປັນຂອງສິງພ້ອມກັນ
ແລ້ວແລແຈກເອົາ ພິກຂຸຕົນເປັນເຈົ້າບໍຣິຂານເຫັນໃສ່ໃຈວ່າ ບໍຣິ-
ຂານອັນນີ້ເປັນຂອງກູແລ ວ່າດັ່ງນີ້ ກໍເອົາຄວນແລ ສິງອັນຢູ່ໃນອາ
ວາດທີ່ນັ້ນຈັກເອົາບໍ່ໄດ້ ວັດຖຸອັນເປັນສະວິນຍານກໍດີ ອະວິນຍານກໍດີ
ທັງມວນນີ້ ຕິດດ້ວຍມູລະຊາດໂຄດກະກຸນແລ. ພະລະກາເຣນະປິ
ສະກະສັນຍາຍະ ຄະຫະເນ ໂທໂສ ນັດຖິ ອະວະຫະທັນຕັສເສວະ
ອະວະຫາໂຣ ໂຫຕິ. ບົດນີ້ອອກໃນເວມະຕິສາມິນ. ໂທໂສ ອັນວ່າໂທດ
ນັດຖິກໍບໍ່ມີ ພິກຂຸໂນ ແກ່ພິກຂຸ ຄະຫະເນ ໃນກິຍາ ອັນພິກຂຸກິເອົາ
ອັດຕະໂນ ສັນຕະກັງ ບັງຂອງແຫ່ງຕົນ ສະກະສັນຍາຍະ ດ້ວຍ
ອັນໃສ່ໃຈວ່າຂອງຕົນ ພະລະກາເຣນະ ດ້ວຍພະລະການກໍດີ
ອະວະຫາໂຣ ອັນວ່າ ອະວະຫານ ໂຫຕິ ກໍມີ ອະຫະທັນຕັສເສວະ
ແກ່ພິກຂຸຕົນບໍ່ໃຫ້ສິ່ງດຽວ ມັກວ່າໂຈນລັກເອົາຂອງ ພິກຂຸອັນວ່າພິກຂຸຕົນ
ເປັນເຈົ້າຂອງເຫັນຂອງຕົນຢູ່ດອມພິກຂຸໂຈນ ພິກຂຸ ໃສ່ໃຈວ່າຂອງຕົນ
ກິເອົາດ້ວຍພະລະການກໍດີ ຫາໂທດບໍ່ໄດ້ແລ ຜີພິກຂຸໂຈນຫາກບໍ່ໃຫ້
ແກ່ພິກຂຸຕົນເປັນເຈົ້າຂອງ ຜີຂອງອັນນັ້ນພໍບາດ ພິກຂຸໂຈນນັ້ນ ເປັນປາ

ຣະຊິກແລ.

ວັດຖຸ ຜູ້ໜຶ່ງເອົາໃຫ້ທ່ານ ເຈົ້າວັດຖຸເອົາຄືນກໍໄດ້ ດັ່ງພະຍາກຸສະຣາດແລ. ໂຍ ປະນະ ຣາຊາ ປຸນຍະກາໂມ ເຕສັງ ພິກຂູນັງ ວິຫາຣັຕກາຍະ ສັງຄັສສະຈະ ເຕສັງ ຄະຫັຕການັງ ວາສະນັຕກາຍະ ຄະຫັຕກາຍະຈະ ທາຕຸກາໂມ ຍັງ ອັຕຕະໂນ ສັນຕະກັງ ຄາມະເຂຕຕັງ ວິສຸພຸຕຕັງ ສັງຄັສສະຈະ ຄະຫັຕກັສສະຈະ ເທຕິ ພະຫຸປຸນຍັງ ປັສສະຕິ ໂຍ ປະນະ ຣາຊາ ອັນວ່າພະຍາຕົນໃດ ປຸນຍະກາໂມ ມັກຍັງບຸນ ທາຕຸກາໂມ ມັກໃຫ້ ຄາມະເຂຕຕັງ ຍັງຄາມະເຂດ ສັງຄັສສະຈະ ແກ່ສົງກໍດີ ວິຫາຣັຕກາຍະ ເພື່ອເປັນວິຫານ ເຕສັງ ພິກຂູນັງ ແກ່ພິກຂຸທັງຫຼາຍຝູງນັ້ນ ຄະຫັຕກັສສະຈະ ແກ່ຄົນຄະຫັດກໍດີ ວາສະນັຕກາຍະ ເພື່ອເປັນທີ່ຢູ່ ເຕສັງ ຄະຫັຕການັງ ແກ່ຄົນດາຍທັງຫຼາຍຝູງນັ້ນ ຍັງ ຄາມະເຂດຕັງ ອັນວ່າຄາມະເຂດອັນໃດ ອັຕຕະໂນ ສັນຕະກັງ ອັນເປັນຂອງແຫ່ງພະຍາຕົນນັ້ນ ເທຕິ ກໍໃຫ້ຕັງຄາມະເຂຕຕັງ ຍັງຄາມະເຂດແຫ່ງຕົນນັ້ນ ວິສຸງ ວິສຸງ ພຸຕຕັງ ເກີດເປັນອັນຕ່າງໆ ສັງຄັສສະຈະ ແກ່ສົງກໍດີ ຄະຫັຕກັສສະ ຈະແກ່ຄົນດາຍກໍດີ ໂສ ຣາຊາ ອັນວ່າພະຍາຕົນນັ້ນ ພະຫຸ ປຸນຍັງ ປະວະສະຕິ ກໍໄດ້ສະເຫວີຍບຸນມາກແລ ຍະທິ ໂຍຣາຊາ ອັນເຍສັງ ມະນຸສສານັງ ສັນຕະກັງ ວິສຸງ ວິສຸງ ພຸຕຕັງ ຄາມະເຂຕຕັງ ຄະເຫຕວາ ພະລະກາເຣນະ ສັງຄັສສະຈະ ຄະຫັຕກັສສະ ຈະ ເທຕິ ເຕນະ ທາຕຸງ ນະ ວັຕຕະຕິ ໂຍ ຣາຊາ ອັນວ່າພະຍາຕົນໃດ ຄັນຕວາໄປ ຄະເຫຕວາ ກໍເອົາ ຄາມະເຂຕຕັງ ຍັງຄາມະເຂດ ວິສຸງ ວິສຸງ ພູຕັງ ເກີດເປັນອັນຕ່າງໆ ສັນຕະກັງ ອັນເປັນຂອງມະນຸສສານັງ ແຫ່ງຄົນທັງຫຼາຍຝູງອື່ນ ຍະທິ ເທຕິ ຜີແລໃຫ້ຍັງຄາມະເຂດແຫ່ງຄົນຝູງອື່ນນັ້ນ ສັງຄັສສະຈະ ແກ່ສົງກໍດີ ຄະຫັຕກັສສະຈະແກຄະຫັດກໍດີ ນະ ທາຕຸງ ກິຍາອັນໃຫ້ແຫ່ງພະຍາຕົນນັ້ນ ຍັງຄາມະເຂດແຫ່ງທ່ານຝູງອື່ນເປັນທານນັ້ນ ນະ ວັຕຕະຕິ ກໍບໍ່ຄວນ

ໂສ ໂຈຣະຣາຊານາມະ ອະທັມມະຣາຊາ ນິຣິເຍ ຄາມິ ໂຫຕິ ຣາຊາປຸຕຕະກາມັຈຈາທິສຸ ເອເສວະ ນະໂຍ ນະ ຕັງ ມະຫາຜະລັງ ໂຫຕິ ມະຫານິສັງສັງໂຫຕິ ໂສ ຣາຊາ ອັນວ່າພະຍາຕົນນັ້ນ ອັນເອົາຄາມະເຂດແຫ່ງຄົນທັງຫຼາຍຝູງອື່ນໃຫ້ເປັນທານນັ້ນ ໂຈຣະ ຣາຊານາມະ ຊື່ວ່າພະຍາໂຈນອະທັມມະຣາຊາ ເປັນພະຍາບໍ່ຊອບ ນິຣິເຍຄາມິ ຄັນຕາຍຈັກໄດ້ໄປເກີດໃນອະບາຍ ໂຫຕິກໍມີແລ. ບົດນີ້ວ່າ ຣາຊະປຸຕຕາມັຈຈາ ເອເສວະ ນະໂຍ ແມ່ນວ່າຣາຊບຸດກໍດີ ອາມາດກໍດີ ເອົາຂອງບຸກຄະລະຜູ້ອື່ນ ໃຫ້ທານກໍບໍ່ຄວນ ທານນັ້ນຫາຜະລະຫາ ອານິສົງບໍ່ໄດ້ແລ.

<u>ເກີດໂທດຫ້າປະການ</u>

ເມື່ອອາຍຸຄົນໄດ້ 50 000 ປີ ພະຍາດຈັກເກີດກະເສີມນັກໃນ ໂລກນີ້ແລ.

ເມື່ອອາຍຸຄົນໄດ້ 5000 ປີ ຄົນຈັກຂ້າຟັນກັນແລ ລັກຂອງກັນ ຫອກດາບຈຶ່ງເກີດມີແຕ່ນັ້ນມາແລ.

ເມື່ອອາຍຸຄົນ ກຸອຍມາຢູ່ 20 000 ປີ ຄໍາສໍ້ສົນເກີດແຕ່ນັ້ນມາ ແລ.

ເມື່ອອາຍຸຄົນ ກຸອຍລົງມາ 10 000 ປີ ຄົນມີຮູບ ຜາງຮ້າຍເຂົາ ກໍຫຼູ້ມຊູກັບດ້ວຍເມຍທ່ານ ຝູງງາມມິດສາຈານເກີດມີແຕ່ນັ້ນມາ ແລ.

ເມື່ອອາຍຸຄົນກຸອຍລົງມາຢູ່ 40 000 ໂລພະ ໂທສະ ໂມຫະ ເກີດມີແຕ່ນັ້ນມາແລ.

ເມື່ອອາຍຸຄົນກຸອຍລົງມາຢູ່ 10 000 ປີ ມິດສາທິດກິເກີດມີແຕ່ ນັ້ນມາແລ.

ເມື່ອອາຍຸຄົນກຸອຍລົງມາ 50 000 ປີ ອະທັມມະຣາຄະ ວິສະມະໂລພະ ມິດສາທໍາເກີດມີແຕ່ນັ້ນມາແລ.

ເມື່ອອາຍຸຄົນກຸອຍລົງມາຢູ່ 10 000 ປີ ທະສະອະກຸສະລະ

ກັມມະບົດ ເກີດມີແຕ່ນັ້ນມາແລ.

ໂທສະ 5 ອັນ ຄື ປານາຕິບາດ ອະທິນນາທານ ກາເມສຸມິດ ສາຈານ ມຸສາວາດ ສຸຣາເມລະຍະມັດຊາປະມາ ເກີດຈຳເຣີນມາ ຕໍ່ເທົ່າບັດນີ້ແລ.

<u>ໂທດຂ້າສັດ</u>

ເຈຕະນາມະຍະປາປັນຈະ ປານະຄາຕັງ ສະມາຫະໂຕ ອັປປະຍຸທັມມະຕັງ ປາໂປ ປານະຄາໂຕ ປະຣາຊິໂກ ປາໂປ ອັນວ່າຄົນບາບ ສະມາຫະໂຕ ທຽມຍ່ອມນຳມາ ປານະຄາຕັງ ຍັງອັນຂ້າສັດ ເຈຕະນາມະຍະປາປັນຈະ ອັນເປັນບາບອັນແລ້ວດ້ວຍເຈຕະນາ ອັປປະຍຸທັມມະຕັງ ມີສະພາວະອາຍຸສັ້ນ ປານະຄາໂຕ ອັນວ່າຄົນຂ້າສັດນັ້ນ ປະຣາຊິໂຕ ກໍຍ່ອມພ່າຍແພ້ ຜູ້ບໍ່ຂ້າສັດນັ້ນແລ ປັນຈະຊາຕິສະຕັງ ເປຕາມັດສານາຄາມິຄາ ຣຸຣູມະຫິງສາໂສມາ ມິຄຄາຣະປານະຄາຕັສສະ ໂທສະກາປານະຄາໂຕອັນວ່າຄົນຜູ້ຂ້າສັດນັ້ນ ປັນຈະສະຕັງເປຕາ ຈຸໂຕ ຄັນມັນຕາຍໄປເປັນຜີ 500 ຊາດ ມັດສາໄດ້ເປັນປາ ປັນຈະຊາຕິສະຕັງໄດ້ 500 ຊາດ ນາຄາ ເປັນນາກໄດ້ 500 ຊາດ ມິຄຄາເປັນເນື້ອປ່າ 500 ຊາດ ຣຸຣູເປັນລະມັ່ງ 500 ຊາດ ມະຫິງສາໂສມາເປັນຄວາຍ ເປັນຫມາປ່າ 500 ຊາດ ສິງຄາຣາເປັນຫມາຈິກຈອກ ປັນຈະຊາຕິສະຕັງກໍໄດ້ 500 ຊາດ ປານະຄາຕັສສໂທສະກາ ອັນນີ້ເປັນໂທດແຫ່ງຜູ້ຂ້າສັດນັ້ນແລ.

ຄາກາສອງອັນຜູ້ແຕ່ງກ້ອຍສວນຄວາມກໍຊັກເອົາມາຕັດຄຳອັນກຽງກັນແຫ່ງຜູ້ຂ້າສັດວ່າບໍ່ໄດ້ບາບແລ້ວທໍ່ນັ້ນແລ.

<u>ໂທດລັກຊັບ</u>

ປະຣະທະນັງ ເກຍຍາວະຫັງ ເຈເຕຍຍະຈິຕຕັງ ປາປະກັງ ທະລິທໂທ ທັມມະຕາສູໂຣ ໂຈຣະກັມເມນະ ປະຣາຊິໂຕ ອະທິນ–ນາທານາ ອັນວ່າຄົນລັກຂອງທ່ານທີ່ບໍ່ໄດ້ໃຫ້ ປະຣະທະນັງ ເກຍຍາວະຫັງ ມັນມາລັກເອົາຂອງທ່ານຜູ້ອື່ນນັ້ນ ເຈເຕຍຍະຈິຕຕັງ

ປາປະກັວ ມັນຂິນຂວາຍດ້ວຍໃຈບາບ ທະລິທໂທ ທັມມະຕາສູໂຣ ເມື່ອຕາຍໄປ ກໍໄດ້ເປັນຄົນກ່ອຍທຸກໄຮ້ເຂັນໃຈແລ ທາກຳລັງບໍ່ໄດ້ ໂຈຣະກັມເມມະ ປະຣາຊິໂຕ ເມື່ອຄົນຜູ້ລັກຂອງທ່ານນັ້ນ ມັນຕາຍ ເທດວ່າກຳອັນລັກທ່ານ ມັນວ່າບໍ່ເປັນສັງນີ້ແລ ທະລິທໂທ ກັປປັນໂນ ເອໂກ ວິຣູໂປ ພະຫຸປັທທະໂວ ນິເຈ ກຸເລ ປະຊາຍະຕິ ອະທິນນັສສະ ໂທສະກາ ໂຈໂຣ ອັນວ່າໂຈນຜູ້ເປັນຄົນລັກທ່ານນັ້ນ ທະລິທໂທ ກັປປັນໂນ ເອໂກ ເມື່ອຕາຍພາຍລຸນ ມັນເກີດມາເປັນຄົນເຂັນໃຈ ເປັນກຳພ້າຫາກຢູ່ຜູ້ດຽວ ວິຣູໂປ ພະຫຸປັທທະໂວ ມີຮູບຜາງຮ້າຍ ມີອຸບປະທະວະ ກໍມາກແລ ນິເຈ ກຸເລ ຊາຍະຕິ ໄດ້ເກີດໃນກະກຸນ ອັນກ່ອຍ ເປັນຕົ້ນວ່າ ກະກຸນຄົນຈັນທານ ອະທິນນາສສະ ໂທສະກາ ອັນນີ້ເປັນໂທດແຫ່ງຜູ້ລັກຂອງທ່ານແລ.

ຄາກາສອງອັນນີ້ ຜູ້ແຕ່ງກ່ອຍສວນຄຳແກ່ທ່ານນັ້ນ ຄວນເອົາ ມາຕັດຄຳ ອັນກຽວກັນແຫ່ງຜູ້ລັກຂອງທ່ານ ວ່າບໍ່ເປັນໂທດໃຫ້ຂາດ ແລ.

<u>ໂທດມິດສາຈານ</u>

ຣາຄະມິດສາປະຣະທາຣັງ ໂລພະທັມມະອະວຸທິກັງ ທັນດະກັງ ເຊກຸດສັງ ກັມມັງ ປະຣະທາໂຣ ປະຣະທາເຣ ປະຣາຊິໂຕ ປະຣະທາ ໂຣ ອັນວ່າຄົນຜູ້ສູ່ເມຍທ່ານ ມິດສາ ຄາໂທ ມັນກໍຜິດ ຣາຄະມິດສາ ປະຣະທາຣັງ ເຊິ່ງຣາຄະແຫ່ງເມຍທ່ານ ອັນຜິດກໍດີ ກຳນັ້ນໂລພະ ກັມມະອະວຸທິຕັງ ອັນເປັນໂລພະກຳແລ ບໍ່ເປັນອັນຈຳເຣີນ ສັກອັນແລ ປັນດະກັງ ເຊຣຸດສັງກັມມັງ ເປັນກຳເຊິ່ງອັນເປັນມອງ ອັນຄວນກຽດນັກ ປະຣະທາເຣ ປະຣາຊິໂຕ ອັນວ່າຄົນຜູ້ສູ່ເມຍທ່ານວ່າບໍ່ເປັນໂທດນັ້ນ ມັນຕາຍ ແຕ່ນັ້ນ ປັນຈະຊາຕິສະຕັງ ອິຕກີ ມະປຸງສະກັງ ຕະເກ ວະຈະ ຊິກຸດສາຈະ ນະຣາເທສສາ ປະຣະທາຣັສສະ ໂທສະກາ ປະຣະທາໂຣ ອັນວ່າຄົນຜູ້ໄປສູ່ເມຍທ່ານນັ້ນ ປັນຈະຊາຕິສະຕັງ ອິດກີ ຕາຍເກີດເປັນຜູ້ຍິງຜາງຮ້າຍ ໄດ້ 500 ຊາດ ມະປຸງສະກັງ ຕະເກາວະ

ຈະ ເກີດເປັນມອງກີໄດ້ 500 ຊາດ ຊິກຸດສາ ນະຣາເທສສາເກີດເປັນ ຄົນຊົ່ວແຫ່ງທ່ານທັງຫຼາຍແລ ເພິ່ງກ່ຽດນັກ ປະຣະທາຣັສສະ ໂທສະ ກາ ອັນນີ້ເປັນໂທດແຫ່ງຜູ້ຫຼີ້ນຊູ້ດ້ວຍເມຍທ່ານແທ້ແລ.

ຄາກາສອງອັນນີ້ ຜູ້ແຕ່ງກອຍສວນຄວາມ ເອົາມາຕັດຄໍາອັນ ກ່ຽງກັນແຫ່ງຜູ້ຫຼີ້ນຊູ້ສູ່ເມຍທ່ານ ວ່າຫາໂທດບໍ່ໄດ້ນັ້ນໃຫ້ຂາດແລ.

<u>ໂທດມຸສາວາດ</u>

ມຸສາວາທັນຈະ ວັນຈະນັງ ປະຣະນາສັນຈະ ວະທະຕິ ວິຣູໄປ ວັນຈະນະວາໂທ ສຸນຍະວາໂທ ປະຣາຊິໂຕ ປຸກຄະໂລ ອັນວ່າບຸກ ຄະລະ ວະທະຕິກໍກ່າວ ມຸສາວາທັງ ຍັງຄໍາລ່າຍພາງທ່ານ ປະຣະນາສັນຈະ ໃຫ້ທ່ານຜູ້ອື່ນຈິບຫາຍດັ່ງນັ້ນ ວິຣູໄປ ວັນຈະລັຫໂກ ມັນຍ່ອມມີຮູບຜາງຮ້າຍແລຢູ່ ບ່ອນໄດ້ຍັງທ່ານກ່າວລ່າຍພາງທຸກເມື່ອແລ ສຸນຍະວາໂທ ປະຣາຊິໂຕ ເມື່ອມັນຜູ້ກ່າວລ່າຍພາງແລຕາຍໄປດັ່ງ ນັ້ນ ປູຕິວາໂຕ ມຸຂາຍາຕິ ນະຣານັງ ຊິກຸດສັມພະເວ ທັມມັນເຈວະ ມະຊານາຕິ ມຸສາວະທັສສະ ໂທສະກາ ປູຕິວາໂຕ ອັນວ່າລົມອັນ ເໝັນນັກ ມຸຂາຍາຕິ ກໍຫຼັ່ງອອກໄປຈາກປາກ ມັນຜູ້ກ່າວລ່າຍນັ້ນ ນະຣານັງ ຊິກຸດສັມພະເວ ເປັນອັນຄວນກ່ຽດແກ່ຄົນທັງຫຼາຍ ໂສ ມຸສາວາໂທອັນວ່າຜູ້ລ່າຍນັ້ນ ທັມມັນເຈວະ ມະຊານາຕິ ບໍ່ຮູ້ກໍາສັກ ອັນແລ ມຸສາວາທັສສະ ໂທສະກາ ອັນນີ້ເປັນໂທດແຫ່ງອັນກ່າວລ່າຍ ແລ ໃຫ້ຈ່າເມືອງດູທຸກຢ່າງເທີ້ນ.

<u>ໂທດດື່ມນ້ຳເມົາ</u>

ສິນທິຕວາ ມັຊຊະປານັນຈະ ອຸມມັຕຕະກັສສະ ກາຣະນັງ

ວິນາໂສ ທັມມະຕາ ໂລເກ ມັຊຊະປາໂນ ປະຣາຊິໂຕ

ທໍາມະຊາດໃດໃນໂລກນີ້ ມັຊຊະປາໂນ ປະຣາຊິໂຕ ອັນວ່າຄົນ ກິນເຫຼົ້າຢາກໍພ່າຍແຕ່ນັ້ນ

ປັນຈະຊາຕິສະຕັງ ເປຕາ ມຸນຫັນໂຕຈະ ອຸມມັຕຕະໂກ

ສຸກະໂຣ ສຸນະຊຸມມັຕໂຕ ສຸຣາປານັສສະ ໂທສະກາ

ປັນຈະຊາຕິສະຕັງ ເປຕາ ອັນວ່າຜູ້ກິນເຫຼົ້າຕາຍ ເປັນເຜດ 500 ຊາດ ມູນທັນໂຕຈະ ອຸມມັຕຕະໂກ ເກີດເປັນຄົນຫຼົງໆ 500 ຊາດເກີດເປັນບ້າກໍ 500 ຊາດ ສຸກະໂຣ ສຸນະຂຸມມັຕໂຕ ເກີດເປັນໝູບ້າ ໝາບ້າ 500 ຊາດ ສຸຣາປານັສສະໂທສະກາ ອັນນີ້ເປັນໂທດແຫ່ງການກິນເຫຼົ້າແລ.

ໃຫ້ຈ່າເມືອງເອົາຄາຖາສອງອັນນີ້ ມາຕັດກ້ອຍຄຳ ທີ່ກິນນ້ຳເມົາມົວນັ້ນ ຄຳໜຶ່ງກໍຜິດ ກະທຳດ້ວຍຕົນ ກໍຜິດ ກ່າວອອກປາກ ກໍຜິດ ຍ່າງໄປກໍຜິດ ຢືນຢູ່ກໍຜິດ ນັ່ງກໍດີ ຫຼິ້ງດູກໍດີ ກໍທຽມຍ່ອມຜິດທຳອັນເສຍມໍຣິຍາດສິ້ນແລ 500 ຊາດ ປັນຈະ ໂທສາ ອັນວ່າໂທດຫ້າປະການປກອບດ້ວຍຄາຖາ 10 ອັນນີ້ ມີໃນກຳພີຕັນໄຕ ວາກະຍະ-ປາລີ ແລ້ວທໍ່ນີ້ແລ.

<u>ຕຳນານຊາຍສີ່ຄົນຍາດນາງ</u>

ຈະຕຸຄຸນາ ສະມາໂທນຕີ ເອກັສສະ ອະທິກາຍະທີ
ຊີວິຕັງ ວັຕຕະໂຕ ເອໂສ ກິມັຕກາ ມະຕັງ ນະຮັງ

ຈະຕຸຄຸນາ ສະມາ ໂທນຕີ ອັນວ່າ ຄຸນແຫ່ງລູກພະຍາ 4 ຄົນກໍມີຄຸນ ສະເໝີກັນແລ ເອກັສສະ ອະທິກາຍະທີ ອັນວ່າຄຸນ ແຫ່ງລູກພະຍາຜູ້ໜຶ່ງ ຄວນຍິ່ງ ຊີວິຕັງ ວັຕຕະໂຕ ເອໂສ ອັນວ່າມັນຜູ້ນັ້ນ ກໍໃຫ້ຊີວິດແກ່ລູກສາວພະຍາເກີດມີດ້ວຍຢາ ກິມັຕກາ ມະຕັງ ນະຮັງ ຈັກເປັນປະໂຍຊະນະອັນໃດ ແຫ່ງຄົນຕາຍນັ້ນແລ ຕຳນານອັນນີ້ ລູກພະຍາ 4 ຄົນໄດ້ໄປຮຽນສາຕສິນໃນເມືອງຕັກກະສິລາແລ.

<u>ຕຳນານຊາຍສອງຄົນ ຍາດຄຳ</u>

ເອຕະ ອັກຂາຕິ ປະກະນັງ ວາຈັງ ລັພພະຕິ ທະວະຍະ-ພາຄັງ

ໂສ ເອກັງ ພາຄັງ ປະໂຣ ທັພພະໂກຕກາສາ ຕິວິທາ ພະວຸໂຍ ປຸຣິໂສ ອັນວ່າ ຊາຍຜູ້ໃດ ອັກຂະຕິ ກໍກ່າວວາຈັງ ຍັງກ້ອຍ

ຄຳວ່າມີຂອງ ປະກະມັງ ກ່ອນ ໂສ ປຸຣິໂສ ອັນຊາຍຜູ້ນັ້ນ ລັພພະຕິ ກໍໄດ້ ທະວະຍະພາຄັງ ຍັງສອງສ່ວນ ປະໂຣ ອັນວ່າຜູ້ ໜຶ່ງນັ້ນ ລັພພະຕິ ກໍໄດ້ ເອກັງພາຄັງ ຍັງສ່ວນໜຶ່ງ ໂກຕກາສາ ອັນວ່າໂກດກາກທັງຫຼາຍ ພະວຸງກໍເປັນ ຕິວິທາ ສາມພູດແລ ຕຳນານອັນນີ້ຂາສອງຄົນຊຸດດິນ ແລໄດ້ຕ້ອງໄຫຄຳພ້ອມກັນ ຂາກໍຊິວກັນແລ.

ຕຳນານຊາຍສອງຄົນຍາດນົກ

ສັປປຸຕໂກ ສະກຸໂນ ທະວິທາ ທະວິນນັງ ເອໂກ ມະໂຕ

ນະ ທະໂຕ ປະມະ ເອໂກຈະ ຈິນຕະຍັນຕຸ ວິຈັກຂະນາ

ສັປປຸຕໂກ ສະກຸໂນ ທະວິທາ ອັນວ່ານົກຕົວໜຶ່ງ ສອງຄົນຫາກຍິງກຶກດ້ວຍປືນ 2 ເຫລັ້ມພ້ອມກັນທີ່ດຽວ ທະວິນນັງ ຕະໂຕ ມະໂຕ ລ້ຳປືນ 2 ເຫລັ້ມນັ້ນ ກຶກທີ່ຕາຍ ຈິນຕະຍະວິຈັກຂະນາ ອັນວ່າຜູ້ມີປະຫຍາ ຈົ່ງຕິຫາໃຫ້ຮູ້ຈິ່ງເທີ້ນ ຕຳນານອັນນີ້ 2 ຄົນຍິງນົກກຶກພ້ອມທີ່ດຽວແລ.

ຕຳນານຊາຍ 5 ຄົນ ຮັກສາຕີນແມວ

ຕັສສະ ຣັນໂຍວະ ອັກຂາເຕ ປະກະມັງ ເຫຕຸປັຈຈະຍາ

ຍະການຸຄະຕິຍາພາວະ ອະນັຕກະຍັງ ກະກັງ ວິຊາ ແປຄາ ການີ້ໃນທຳມະສາດ ທີໂຄຈັດ ຕັກກະໄນ ແມ່ນກ້ຳໜ້າຫີບ ໂຍ ປຸຣິໂສ ອັນວ່າຊາຍຜູ້ໃດ ຕັສສະ ຣັນໂຍວະ ອັກຂາເຕ ແລບອກແກ່ພະຍາ ປະກະມັງ ເຫຕຸປັຈຈະຍາ ເຫດມັນເປັນເຫດກ່ອນທັງຫຼາຍອະນັຕກະຍັງ ກະກັງວິຊາ ອັນວ່າຜູ້ອື່ນບໍ່ມີດັ່ງຣິແລ ໃຜຈັກຮູ້ການ ຍະການຸຄະຕິຍາພາວະ ໂດຍສະພາວະອັນມີນັ້ນ ຕຳນານອັນນີ້ເຂົາ 5 ຄົນຮັກສາຕີນແມວແລ.

ຕຳນານຍິງ ສາມຄົນຍາດຜົວ

ຕະໂຍປິ ອິຕກີໂຍ ເຍນະ ເຕນະ ຄຸນາ ວັຕຕັນຕິ ຈະ

ເພສັຊຊະກະຣິຍາເຫຕຸ ເອກະອິຕກີ ລັພພະຕີຈະ

ຕະໂຍປິ ອິຕກີໂຍ ເຍນະ ອັນວ່າຍິງສາມຄົນ ມີຄຸນແກ່ຊາຍໂຈນນັ້ນ ດ້ວຍອັນໃດ ເຕນະ ຄຸນາ ວັຕຕັນຕິຈະ ອັນວ່າຄຸນອັນນັ້ນ ເອກາ ອິຕກີ ລັພພະຕີ ຈະ ອັນວ່າຍິງຜູ້ໜຶ່ງ ກໍໄດ້ຊາຍໂຈນນັ້ນເປັນຜົວມັນ ເພສັຊຊະ ກິຣິຍາເຫຕຸ ເຫດວ່າ ກຳຢາໃສ່ ທີ່ໄມ້ແຫຼມ ແທງໃຫ້ຫາຍພະຍາດນັ້ນແລ ຕຳນານອັນນີ້ ຜູ້ຍິງ 3 ຄົນຊິງກັນເອົາໂຈນ ຜູ້ທ່ານສຽບດ້ວຍໄມ້ຫຼາວນັ້ນເປັນຜົວເຂົາແລ.

ຕຳນານຄົນຫ້າຄົນເຮັດຂອງພະຍາເສຍ

ປັນຈະ ຊະນາ ສະມາໂທສາ ວິວາເທສຸ ປະຕິຕກິຕາ

ເອໂກ ຄີໂກ ເປລະປາໂລ ສະໂຫໂສ ນະ ວິຈາຣິຕຸງ

ປັນຈະຊະນາ ສະມາໂທສາ ອັນວ່າເຂົາ 5 ຄົນມີໂທດສະເໝີກັນ ວິວາເທສຸ ປະຕິຕກິຕາ ກໍຕັ້ງຢູ່ໃນອັນຖຽງບໍ່ຮູ້ແລ້ວນັ້ນ ເອໂກຄີໂກ ເປລະປາໂລ ອັນວ່າຜູ້ຮັກສາຫີບຂອງນັ້ນ ແຄວນຍິ່ງກວ່າເຂົາ 5 ຄົນນັ້ນ ສະໂຫໂສ ນະ ວິຈາຣິຕຸງ ສ່ວນມັນເປັນດ້ວຍໂທດ ເພື່ອມັນບໍ່ພິຈາລະນາດູ ຫີບພະຍານັ້ນແລ ຕຳນານອັນນີ້ ເຂົາ 5 ຄົນຖຽງກັນດ້ວຍເສຍຂອງພະຍາແລ.

ຕຳນານໂຈນຈອດເຮືອນ

ສາມິເຄຫານຸຍາຕັມປິ ໂຈໂຣ ອຸປປະຄະໂຕ ຂະເນ

ເຕມິຕຕັງ ກະໂຣສາມິ ວິນາສັງ ປັດສິມັງ ຄະໂຕ

ອະຊານັນເຕ ຄະຣາສາມິ ຕັສສະ ນາກະກະໂຣທິຕິ

ໂຈໂຣ ອັນວ່າໂຈນ ອຸປປະຄະໂຕ ຂະເນ ເຂົ້າມາຈອດໃນເຮືອນຜູ້ໜຶ່ງ ຂະນະຍາມໜຶ່ງ ກໍດີ ສາມິເຄຫານຸຍາຕັມປິ ເຈົ້າເຮືອນຫາກ

ໃຫ້ອະນຸຍາດ ວ່າໃຫ້ຢູ່ ເຕນະ ມິຕຕັງ ກະໂຣສາມິ ອັນວ່າເຈົ້າ
ເຮືອນນັ້ນກະທຳມິດກັບດ້ວຍໂຈນເປັນຕົ້ນວ່າ ໃຫ້ກິນເຂົ້າກິນນ້ຳກໍດີ
ວິນາສັງ ປັດສິມັງຄະໂຕ ອັນວ່າເຈົ້າເຮືອນນັ້ນ ກໍເຖິງເຊິ່ງອັນຈິບ
ຫາຍເມື່ອພາຍລຸນ ເຫດບ່າວພະຍາທຳຮ້າຍດ້ວຍໂທດ ອັນໂຈນມາ
ຈອດນັ້ນ ອະຊານັນເຕຈະ ຄະຣາສາມິ ຜິວ່າເຈົ້າເຮືອນບໍ່ຮູ້ ສະພາ
ວັງ ບັງຜູ້ມາຈອດນັ້ນເປັນໂຈນ ຕັສສະ ນາກະກະໂຣທິຕິ ອັນວ່າ
ຜູ້ມີປະຫຍາ ຄວນກະທຳເປັນທີ່ເພິ່ງ ແກ່ເຈົ້າເຮືອນນັ້ນແລ ຕຳ
ນານອັນນີ້ ໃຫ້ໂຈນມາຈອດເຮືອນແລ.

ຕຳນານໃຫ້ໜີ້ທວງບໍ່ໄດ້

ຣາຊາເສນາທິທາໂສຈະ ທະລິທໂທ ປະຄະໂຕ ອິທັງ
ເນວັນເຕ ອິຕຕັງເຫຕິ ທຸຄຄະເຫ ກຸກກຸຈັງ ຄະໂຕ
ອິນາສາມິ ອະນາກັສສະ ວິຈາໂຣ ອຸປປະກັມພິໂກ

ຣາຊາເສນາທິທາໂສ ຈະ ທະລິທໂທ ອັນວ່າຂ້ອຍຄົນກໍດີ ບ່າວພະ
ຍາ ເສນາອາມາດທັງຫຼາຍ ກໍດີ ຄົນເຂັນໃຈກໍດີ ອຸຄຄະໂຕ ອິນັງ
ແລເຂົ້າໄປສູ່ຄົນຜູ້ເປັນດີ ມີເຂົ້າຂອງ ເພື່ອຈັກກູ້ເອົາເຂົ້າຂອງ ທະ
ນະວັນໂຕ ອິນັງ ເຫຕິ ອັນວ່າເຈົ້າຂອງມັນກໍໃຫ້ໜີ້ແກ່ເຂົາ ອຸຄຄະ
ເຫ ກຸກກຸຈຈັງ ຄະໂຕ ສ່ວນເຈົ້າຂອງນັ້ນ ກໍເຖິງອັນກິນແໜງເຫດ
ເອົາຍາກ ວິຈາໂຣ ອຸປປະກັມພິໂຕ ອັນວ່າຜູ້ພິຈາລະນາກ້ອຍຄຳ
ກໍຄວນເປັນທີ່ເພິ່ງ ອິນາສາມິ ອະນາກັສສະ ຄະໂຕ ແກ່ເຈົ້າໜີ້
ອັນຫາທີ່ເພິ່ງບໍ່ໄດ້ແລ ເຂົ້າໄປສູ່ນັ້ນແລ ຕຳນານອັນນີ້ ໃຫ້ໜີ້
ແກ່ທ່ານແລ ເອົາບໍ່ໄດ້ດັ່ງນີ້ແລ.

ຕຳນານຜົວເມຍຢ່າກັນ

ທາຣະສາມິກະວິວາໂທ ສາມິໂກ ປິຍະສັງຄະໂຕ
ນິດສິສາ ເຕນະ ປະລາຍິຕຸງ ສິນທິຕຸງ ນະ ປະກາສະຍິ
ຍະທາ ຈະ ສາມິໂກ ທິຕວາ ຕະທາ ຕັງ ອະນຸມາຕະຍິ

ທາຣະສາມິກະວິວາໂທ ອັນວ່າຜົວ ແລະເມຍຜິດກັນ ສາມີເກ ປິຍະສັງຄະໂຕ ຜູ້ເປັນຜົວຍັງເກີງສະພາວະອັນຮັກນັ້ນ ນິດ–ສິສາ ຕານະ ປະລາຍິຕຸງ ສ່ວນຜູ້ເປັນເມຍນັ້ນນັ້ນ ມັກຢູ່ກັບດ້ວຍຜົວນັ້ນ ຍ່ອມສຳແດງເພື່ອຈັກໜີສູ່ວັນ ສິນທິຕຸງ ນະ ປະກາສະຍິ ຈ່າເມືອງ ບໍ່ເພິງຕັດຄຳອັນນັ້ນໃຫ້ຂາດຈາກກັນໄດ້ແລ ຍະທາ ຈະ ສາມີເກ ທິຕວາ ເມື່ອໃດຜົວມັນແລ ລະ ມັນເສຍວ່າ ກູບໍ່ເອົາເປັນເມຍກູແລ ວ່າອັນ ຕະທາ ຕັງ ອະນຸຍາຕະຍິ ເມື່ອນັ້ນຈ່າເມືອງກໍຄວນໃຫ້ອະ–ນຸຍາດກ້ອຍຄຳຜູ້ຜົວມັນນັ້ນໃຫ້ຂາດຈາກກັນແລ ຕຳນານອັນນີ້ຜົວ ເມຍປາກປ່າກັນແລ.

ແກ້ບັນຫາ 3 ຄົນຍາດນອນກາງ

ຈັກກາວຕັກກະໄນ ພະຍາຜູ້ໄຕສວນກ້ອຍຄຳ ເຂົາ 3 ຄົນ ຊີງກັນນອນກາງ ແຕ່ງໃຫ້ມານອນສຸມເສົາກັນ ຮັບວ່າ ສຸຄະຕິຄະມະ ມະແລ.

ຕັດສິນເຮັດເຮືອຫຼົ້ມ

ພະຍາໄຕ່ຄຳເຂົາ 3 ຄົນ ຂໍຂີ່ເຮືອພໍ່ຄ້າແລເຂົາເຫັນໄມ້ຜຸງວ ຜູ້ໜຶ່ງວ່າໄມ້ນັ້ນດີ ເບັຍແປງເພັຍດິດດັ່ງໂຕງໆ ຜູ້ໜຶ່ງຕົບມື ຜູ້ ໜຶ່ງໃຈຂຶ້ນລຸກຂຶ້ນຟ້ອນ ເຮືອຫຼົ້ມເສຍຂອງ ພໍ່ຄ້າໄປສູ່ພະຍາໆໄຕໃຫ້ ຜູ້ຫຼົ້ມດ້ວຍປາກໂຕງໆນັ້ນເສຍເທົ່າໜຶ່ງ ໃຫ້ຜູ້ຕົບມືເສຍເທົ່າເກິ່ງຜູ້ ລຸກຂຶ້ນຟ້ອນເສຍສອງເທົ່າ ໄຕສັນນີ້ຮັບວ່າ ສຸຄະຕິຄະມະນະແລ.

ຕັດສິນປັນເຄື່ອງ

ຍັງມີເສດຖີຜູ້ໜຶ່ງມີລູກຊາຍ 3 ຄົນ ເສດຖີຕາຍ ເຂົາຊີງກັນ ເອົາສິນບັດພໍ່ ໄປສູ່ພະຍາ ໃຫ້ຕອງດູ ແຕ່ງໃຫ້ຜູ້ພີ່ໄດ້ 2 ທໍ່ ຜູ້ກາງທໍ່ຄືງ ຜູ້ນ້ອງທໍ່ໜຶ່ງ ຮັບວ່າ ສຸຄະຕິຄະມະນະແລ.

ຍັງມີກະຕຸມພີຜູ້ໜຶ່ງ ມີລູກຊາຍ 3 ຄົນ ຜູ້ພີ່ເດີນກິນນາຂຸມ

ຄືວ່າເຮັດຊຸມດອມອາດຍາ ຜູ້ກາງໄປຄ້າມາລ້ຽງພໍ່ແມ່ ຜູ້ນ້ອງໄປບວດ
ເມື່ອພໍ່ແມ່ເຂົາຕາຍ ເຂົາຊິງກັນເອົາຂອງ ໄປສູ່ພະຍາ ພະຍາໄຕ່ວ່າ
ຜູ້ນ້ອງບວດມີຄຸນໃຫ້ໄດ້ 2 ທໍ່ ຜູ້ເປັນຊຸມໄດ້ທໍ່ເກິງ ຜູ້ຄ້າຂາຍລ້ຽງພໍ່
ແມ່ໄດ້ທໍ່ໜຶ່ງແທນເຮືອນ ພໍ່ເຂົາແຕ່ງສັນນີ້ວ່າ ສຸຄະຕິຄະມະນະແລ
ອັນນີ້ຊື່ວ່າ ຕັກກະໄນແລ.

ຍັງມີພໍ່ຄ້າສະເພົາ 4 ຄົນໄປຄ້າຮັກສາແມວຕົວໜຶ່ງເປັນມັງຄະ
ລະ ບໍ່ໃຫ້ໜູໝາກັດເຂົ້າຂອງ ເຂົາຮັກສາຕີນແມວແລຄົນແລຕີນ
ຕີນໜຶ່ງເປັນຜີ ຜູ້ຮັກສາຕີນນັ້ນ ເອົາຍວງຝ້າຍຈຸບນ້ຳມັນຢາພອກ
ໄວ້ ແມວໄປຜີງໄຟ ໄຟໄໝ້ຍວງຝ້າຍອັນນັ້ນ ແມວຍິນຮ້ອນ
ພາໄປໄໝ້ຜ້າຜ່ອນໃນສະເພົາເສຍສິ້ນ ເຂົາ 3 ຄົນ ຂົນໄໝຜູ້ຮັກສາ
ຕີນເຈັບນັ້ນໃຊ້ ມັນບໍ່ໃຊ້ ພາໄປສູ່ພະຍາ ພະຍາໄຕ່ວ່າເບື້ອງຕີນເຈັບນັ້ນ
ຍ່າງໄປໄດ້ຕີນ 3 ອັນຫາກພາໄປໄດ້ດາຍ ໃຫ້ເຂົາ 3 ຄົນໃຊ້ເພື່ອ
ອັນແລ ດ້ວຍແທ້ ໂທດຜູ້ຮັກສາຕີນເຈັບກໍຍັງມີ ເຂົາ 3 ຄົນມີ 2
ທໍ່ແລ ຄາຖາອັນນີ້ ຢູ່ພາຍຫຼັງ ມັງຄະລະແລ.

ຕຳນານງ່າວ

ຍັງມີມານະວະ 4 ຄົນ ເຫັນນາງຜູ້ໜຶ່ງງາມນັກ ເຂົາກວັກ
ເອົາມານາງຜູ້ນັ້ນມາສູ່ ເຂົາຊິງກັນເອົາເປັນເມຍ ນາງວ່າປີເດືອນ
ກູໃຫ້ເອົາຜູ້ງ່າວເປັນຜົວດາຍ ສູ່ໃຊ້ງ່າວດາຍວ່າອັນ ເຂົາຊິງກັນວ່າກູງ່າວ
ຕ່າງຄົນຕ່າງວ່າມັນງ່າວ ເຂົາພາກັນໄປສູ່ພະຍາ ພະຍາແຕ່ງເຂົາຜູ້ໜຶ່ງ
ບອກເພດງ່າວ ມັນວ່າສັນນີ້ ຍັງມີຊູ້ເມຍຂ້າ ມາຈອດເຊົາໃຕ້ເຮືອນຂ້າ
ຜູ້ຊູ້ເມຍຂ້ານັ້ນ ແປງທຸ່ມອັນໜຶ່ງຄືເປັນດັ່ງຜູ້ຍິງນຸ່ງສິ້ນເສື້ອກີກຸບມາ
ຍາມຄ່ຳ ມາການນອນວ່າເຜືອຂ້າຜົວເມຍຂໍນອນໃຕ້ເຮືອນເຂືອເຈົ້າ
ແດ່ວ່າອັນ ຂ້າກໍໃຫ້ນອນແທ້ ຍາມເດິກເມຍຂ້າອຸບາຍວ່າ ກູເຈັບ
ທ້ອງກູນັກ ເຈົ້າລົງເພື່ອນກູແດ່ວ່າດັ່ງນີ້ ຂ້າກໍລົງໄປຕາມຢູ່ຫົວຂັ້ນໃດ
ເມຍຂ້າໄປເກິງຂອກບ້ານ ແລ້ວຄືນມາທາງອື່ນຫາຊູ້ມັນ ໃຫ້ຊູ້ມັນເຍັດ

ຕໍ່ໜ້າ ຂ້າໃສ່ໃຈວ່າມັນເຍັດເມຍມັນ ເມື່ອລຸນຈຶ່ງຮູ້ເຫດດັ່ງນັ້ນ ຂ້າວ່າຂ້າເປັນງ່າວແລ ພະຍາກ່າວວ່າມຶງກໍງ່າວແທ້ແລ.

ຜູ້ໜຶ່ງບອກເຫດງ່າວມັນວ່າ ເມຍຂ້າຫຼິ້ນຊູ້ຂ້າບໍ່ຮູ້ ໃນວັນໜຶ່ງ ເຜືອຂ້າຜົວເມຍໄປຫຼົກຂ່າ ຊູ້ເມຍແຫ່ງຂ້າຂຶ້ນຕົ້ນໄມ້ຮ້ອງວ່າຂ້າຜົວເມຍເຍັດກັນ ຂ້າຜົວເມຍວ່າບໍ່ມີ ມັນຂານວ່າມີ ເມຍຂ້າວ່າຢູ່ທີ່ນີ້ ຫາກຜາກົດແກ່ຕາຜູ້ຢູ່ເທິງປາຍໄມ້ດາຍ ມຶງໄປຂຶ້ນຢູ່ປາຍໄມ້ດູທອນ ໃຫ້ມັນມາຢູ່ຈຶ່ມເກົ້ານີ້ ມິດາວ່າເປັນດັ່ງມັນເຫັນ ຊະຣິວ່າອັນແກ່ຂ້າ ຂ້າກໍຟັງຄຳເມຍຂ້າ ຂ້າກໍໃຫ້ຜູ້ຢູ່ປາຍໄມ້ມາຢູ່ຈຶ່ມເມຍຂ້າ ຂ້າກໍເຍັດກັນໃຫ້ຂ້າເຫັນ ຂ້າຮ້ອງຂ້າວ່າຫາກດູເປັນແກ່ຕາດາຍວ່າອັນ ພາຍລຸນຂ້າຈຶ່ງຮູ້ເຫດອັນນັ້ນ ຂ້າວ່າຂ້າງ່າວເພື່ອອັນແລ ພະຍາວ່າມຶງກໍງ່າວແທ້ແລ.

ຜູ້ໜຶ່ງບອກເຫດງ່າວມັນວ່າ ຂ້ານີ້ເມື່ອຍັງບ່າວ ໄປກິນເຂົ້າເຂົາຮຽກຂ້າກິນເຂົ້າ ຂ້າຍິນອາຍແກ່ສາວ ຂ້າບໍ່ກິນເຂົ້າ ເກືອງເມື່ອຕັ້ງເຫຼົ້າຂ້າຍິນຢາກເຂົ້າ ຂ້າຈິກໃຕ້ຊ່ອງໄດ້ກາກເຂົ້າໜົ້າ ຂ້າເອົາມາອົມເຂົ້າໃຄ່ເຕັມແກ້ມຂ້າ ເຂົາຮຽກຂ້າກິນເຫຼົ້າ ຂ້າບໍ່ປາກໄດ້ ເຂົາໃຕ້ໄຟມາດູຂ້າ ເຫັນເຂົ້າໜົ້າໃຄ່ເຕັມປາກ ຂ້າກໍຍິນອາຍນັກ ເຫດດັ່ງນັ້ນຂ້າວ່າຂ້າງ່າວ ເພື່ອອັນແລ ພະຍາວ່າມຶງກໍງ່າວແທ້ແລ.

ຜູ້ໜຶ່ງເລົ່າເຫດງ່າວມັນວ່າ ຍັງມີວັນໜຶ່ງຂ້າກືຫອກໄປປ່າ ຂ້າຜູກທໍ່ເຂົ້າກັບປາຍຫອກ ເກືອງປ່າຂ້າປັກຫອກໄວ້ ເມື່ອຂ້າຢາກເຂົ້າຂຶ້ນຕົ້ນໄມ້ເອົາທໍ່ເຂົ້າ ຫອກຕ່າວມາສຽບແກ້ມຂ້າທີ່ນີ້ກໍແປ້ວ ເຫດດັ່ງນັ້ນຂ້າວ່າຂ້າງ່າວເພື່ອອັນແລ ພະຍາຈຶ່ງຄະນິງວ່າສັນນີ້ ເຂົາທັງ 3 ຄົນງ່າວແທ້ແລ ທໍ່ວ່າຫາສັກຂີບໍ່ໄດ້ ມັນຜູ້ລຸນນີ້ເປັນງ່າວແທ້ສັກຂີທີ່ແກ້ມມັນແລ ວ່າອັນ ຈຶ່ງໃຫ້ນາງຜູ້ນັ້ນເປັນເມຍມັນ ຜູ້ລຸນນີ້ແລ ໄຕ່ສັນນີ້ວ່າ ສຸຄະຕິຄະມະນະແລ.

ຕຳນານຣັດສີສີ່ຕົນ

ຍັງມີຣັດສີ 4 ຕົນ ຢູ່ໃນອາສົມບົດທີ່ໜຶ່ງ ເຂົາຕັ້ງສາລາຢູ່ 4 ແຈ່ງພາວະນາ ຍັງມີພານພໍ່ຄ້າຜູ້ໜຶ່ງ ຝາກຄຳໝື່ນໜຶ່ງໄວ້ກ້ຳກາງເຈົ້າຣັດສີແລ້ມັນໜີໄປຄ້າ ເມື່ອລຸນມັນຄືນມາຫາຄຳບໍ່ໄດ້ ກຸານເຈົ້າຣັດສີຕ່າງຕົນວ່າບໍ່ໄດ້ເອົາ ພານເຈົ້າຂອງຄຳໄປບອກແກ່ພະ–ຍາວ່າດັ່ງນີ້ ເສຍຄຳຂ້າໃນແຜ່ນດິນພະຍາເຈົ້າ ສົນໃດຈັກໄດ້ບໍ່ກວ່າ ພະຍາເຈົ້າແລ ມັນບອກອາການອັນເສຍຄຳມັນນັ້ນແກ່ພະຍາ ພະຍາວ່າ ກູຈັກໃຫ້ໄດ້ແກ່ມຶງແລ ພະຍາແລອາມາດທັງຫຼາຍ ຕິປອງສົນໃດໜັກໃຈພະຍານັກ ຍັງມີລູກສາວພະຍາຜູ້ໜຶ່ງຊື່ວ່ານາງວິຈິດຕະສາຣີ ມີປະຫຍານັກ ວ່າແກ່ພໍ່ຕົນສັນນີ້ ມະຫາຣາຊເຈົ້າຢ່າໜັກໃຈ ຂ້າຫາກຈັກຕູ້ໃຫ້ໄດ້ຊະແລ ເມື່ອນັ້ນນາງຈິດຕະສາຣີຈຶ່ງແປງເປດສະໜາ 4 ອັນ ໄປສົ່ງແກ່ຣັດສີ 4 ຕົນ ວ່າດັ່ງນີ້ ຂ້າແຕ່ເຈົ້າຣັດສີ ຍັງມີເປດສະໜາ 4 ອັນ ຂ້າສິນເຫນັກ ຈັກກຸານເຈົ້າກູທັງຫຼາຍ ຈຶ່ງແກ້ແກ່ຂ້າເທີ້ນ ຍັງມີນາງສາວຜູ້ໜຶ່ງງາມນັກ ໄປຮຽນສາຕະສິນແຫ່ງດາບົດຕົນໜຶ່ງ ຮຽນແລ້ວບູຊາຄຳພັນໜຶ່ງແກ່ດາບົດ ວ່າກັບດາບົດວ່າສັນນີ້ ຕາບໃດຂ້າບໍ່ໄດ້ໃຫ້ເຈົ້າກູຢູ່ນອນດອມຂ້າກ່ອນ ຂ້າໄປ່ໃຫ້ຜົວຂ້າຢູ່ນອນດອມຂ້າແລ້ມັນໃຫ້ຄຳສັດຈະແກ່ດາບົດແລໜີເມືອ ມືນນານດາບົດສິກເປັນຄົນ ນາງຜູ້ນັ້ນກໍຈຶ່ງໄດ້ຜົວ ມັນຈຶ່ງບອກແກ່ຜົວມັນບໍ່ໃຫ້ຢູ່ນອນດອມກັບມັນ ເມື່ອນັ້ນຜົວມັນວາງໃຫ້ໄປສູ່ດາບົດຜູ້ສິກນັ້ນ ນາງຜູ້ນັ້ນປະດັບເນື້ອຕົນມັນ ດ້ວຍເຄື່ອງແກ້ວແຫວນແລະເງິນຄຳ ຈຶ່ງລຸກໄປສູ່ດາບົດທັງເຄື່ອງ ຍັງມີເສືອໂຄ່ງຕົວໜຶ່ງຢູ່ກາງຫົນທາງ ປາກເຫວີຍອາຫານນັກ ມັນເຫັນນາງຜູ້ນັ້ນມາສູ່ມັນມັນຈັກກິນ ນາງຜູ້ນັ້ນຈຶ່ງຂໍຊີ່ວິເສືອວ່າສັນນີ້ ດູຣາເສືອກູໄດ້ໃຫ້ຄຳສັດຈະດາບົດຕົນໜຶ່ງ ວັນນັ້ນວ່າ ຈັກໃຫ້ຢູ່ນອນດອມກູກ່ອນຜົວກູເຍີຍ ໃຫ້ຜົວກູນອນດອມກູແລວ່າສັນນີ້ ຂ້າຂໍໄປຫາດາບົດຕົນນັ້ນກ່ອນຄືນມາ ເຈົ້າກູກໍຈຶ່ງກິນເທີ້ນ ເສືອໄດ້ຍິນ ຄະນິງວ່ານາງ

ຜູ້ມີມິຄຳສັດຈະສັນນີ້ ກູວາງໃຫ້ມຶງໄປກ່ອນ ເສືອກໍວາງໃຫ້ໄປສູ່ດາບິດຕົນນັ້ນ ໄປໜ້າພົບໂຈນຜູ້ໜຶ່ງເລົ່າ ໂຈນຜູ້ນັ້ນມັນເຫັນນາງຜູ້ນັ້ນ ທະຣົງເຄື່ອງປະດັບມາ ມັນຈັກຂ້າເອົາເຄື່ອງປະດັບ ນາງຜູ້ນັ້ນກໍບອກສັດຈະແກ່ໂຈນສັນດຽວ ໂຈນກໍວາງໃຫ້ໄປແລ ມັນໄປເຖິງດາບິດມັນກໍບອກແກ່ດາບິດວ່າ ຂ້ານາສູ່ທ່ານນີ້ ເພື່ອບໍ່ໃຫ້ເສຍຄຳສັດ-ຈະ ອັນໄດ້ວ່າກັບດ້ວຍທ່ານດາຍ ດາບິດຮູ້ສະພາວະມັນມີຜົວ ຈຶ່ງກ່າວວ່າດູຣານາງ ຣາ ກໍໄດ້ໃຫ້ຄຳສັດຈະແກ່ກັນແທ້ແລ ນາງມີຜົວແລ້ວດັ່ງນັ້ນ ກູບໍ່ຢູ່ບໍ່ນອນກັບມຶງແລ ມຶງຈົ່ງເມືອເທີ້ນ ຊື່ອັນວ່າກະທຳມິດສາຈານຜິດໃນກາມນີ້ ເປັນໂທດໜັກດາຍ ມານະວະຜູ້ນັ້ນກໍບໍ່ຢູ່ບໍ່ນອນກັບດອມນາງແລ ລ້ຳເຂົາ 4 ຄົນຄືວ່າ : ຜົວມັນໜຶ່ງເສືອ ໂຈນ ແລມານະວະຜູ້ຊູ້ນັ້ນ ລ້ຳເຂົາ 4 ຄົນ ເຈົ້າກູທັງຫຼາຍ 4 ຕົນ ຍັງວິດໃຈຜູ້ໃດຈາ ? ເຈົ້າກູທັງຫຼາຍ ຈຶ່ງກ່າວແກ່ຂ້າເທີ້ນເຈົ້າຣັດສີຕົນໜຶ່ງວ່າ ເຮົາວິດຜູ້ຜົວແລ ເມຍຕົນດາຍສັງຄວ່າໃຫ້ໄປຫາຊູ້ດັ່ງຣື ເຮົາວິດໃຈມັນແລ ນາງຈິດຕະສາຣີໝາຍໃຈວ່າ ເຈົ້າກູຕົນນີ້ ມັກເຫິງເມຍແລ ເຈົ້າຣັດສີຕົນຫນຶ່ງວ່າ ເຮົານີ້ວິດໃຈເສືອນັ້ນແລມັນຢາກອາຫານນັກ ສັງຄວ່າວາງໃຫ້ໄປນີ້ຈາ ນາງຈຶ່ງໝາຍໃຈວ່າເຈົ້າຣັດສີຕົນນັ້ນ ມັກໂລບໃນຄວາມກິນແລ ເຈົ້າຣັດສີຕົນຫນຶ່ງວ່າເຮົາວິດໂຈນແລ ຂອງອັນຈັກໄດ້ແລມາວາງໃຫ້ໜີສັງຈາ ນາງຈຶ່ງຮູ້ວ່າຣັດສີຕົນນັ້ນເອົາຄຳໝື່ນນີ້ແລ ເຈົ້າຣັດສີຕົນໜຶ່ງວ່າ ກູວິດມານະວະຜູ້ນັ້ນແລ ນາງຈຶ່ງຄະນຶງວ່າຣັດສີຕົນນີ້ມັກຫຼິ້ນຊູ້ແລ ນາງຮູ້ໃຈເຈົ້າຣັດສີ 4 ຕົນແລ້ວ ຈຶ່ງອຸບາຍໄປມັກຣັດສີຕົນເອົາຄຳນັ້ນ ຣັດສີຈັກສີກອອກນາງອຸບາຍກາມຫາຂອງແຫ່ງເຂົາເຈົ້າຣັດສີຄຶດວ່າຈັກໄດ້ນາງ ຈຶ່ງເອົາຄຳໝື່ນນັ້ນມາໃຫ້ແກ່ນາງ ນາງໄດ້ເອົາຄຳໄປຖວາຍແກ່ພະຍາຕົນພໍ່ພະຍາໃຫ້ແກ່ພາມພໍ່ຄ້າ ມັນຍິນດີບູຊາພະຍາຫ້າພັນຄຳ ແລ້ວຈຶ່ງໜີໄປສູ່ບ້ານເມືອງແຫ່ງຕົນແລຜູ້ຈັກໄຕ່ກ້ອຍສວນຄຳ ຄວນຫຼີໃຫ້ຮູ້ທົ່ວໃຈທ່ານກ່ອນແລ້ວຈຶ່ງຕັດຄຳສັນນີ້ ຊື່ວ່າ ອະນຸມານະວິນິດໄສແລ.

ຕຳນານວິໄຊຍະອາມາດ

ພະຍາອົງໜຶ່ງ ມີປະຫຍາ ຍ່ອມຂ້າອາມາດຜູ້ມານອນເຝົ້າເສຍ ເອົາຫົວບູຊາຍັນແລ ເມື່ອໃດອາມາດຝູງຫາຜະຫຍາບໍ່ໄດ້ ມານອນຫຼັບໜັກ ເມື່ອນັ້ນ ພະຍາປອງມາຂ້າເສຍ ແລຍັງມີໃນວັນໜຶ່ງ ເຖິງວາຣະນອນແຫ່ງອາມາດຜູ້ໜຶ່ງ ຊື່ວ່າ ວິໄຊຍະເສນາ ມັນມານອນເຝົ້າພະຍາມັນບໍ່ຫຼັບ ເຖິງປະຖົມມະຍາມ ພະຍາເອົາສີຄັນໄຊອອກມາຈັກຕັດຫົວວິໄຊຍະນັ້ນ ມັນຮູ້ວ່າພະຍາປອງມາ ມັນກ່າວຄຳອັນເປັນເປດສະໜາວ່າສັນນີ້ ໂອນໍ ກູຈັກວ່າກໍບໍ່ດີ ກູບໍ່ວ່າກໍບໍ່ດີ ພະຍາໄດ້ຍິນຄືນເມືອນອນຢູ່ເຖິງມັດຊິມະຍາມ ພະຍາປອງອອກມາວິໄຊຍະໄດ້ຍິນ ມັນກ່າວວ່າສັນນີ້ ໂລກຄະຫັດນີ້ ບໍ່ຄວນວ່າເກີດກໍຍັງເກີດວ່ານໍ ພະຍາໄດ້ຍິນໜີຄືນເລົ່າ ເຖິງປັດສິມະຍາມ ພະຍາກໍ່ສີຄັນໄຊມາ ເພື່ອວ່າຈັກຂ້າວິໄຊຍະອາມາດຜູ້ມີຜະຫຍາ ມັນຮູ້ວ່າພະຍາມາມັນວ່າສັນນີ້ ເລົ່າທີ່ແທ້ກຳນີ້ ກໍຫາກແຕ່ງແປງດາຍ ທີ່ນັ້ນພະຍາຮູ້ບໍ່ຂ້າໄດ້ ຄືນເມືອສູ່ຜາສາດຊັ້ນບົນ ຄຶດຫາເປດສະໜາ 3 ອັນ ອັນວິໄຊຍະອາມາດຫາກກ່າວນັ້ນ ຫາອັນໃດມາຄຶດກໍບໍ່ໄດ້ເລີຍຣິບຮຸ່ງເຊົ້າເສຍແລ ພະຍາກໍຊຳຣະເນື້ອຕົນເສຍ ແລ້ວປະດັບປະດາກິນເຂົ້ານ້ຳໂພຊະນະອາຫານແລ້ວ ຈຶ່ງໃຊ້ໃຫ້ໄປຫັນວິໄຊຍະອາມາດມາແລ້ວ ກໍຖາມມັນກ້ຳກາວອາມາດທັງຫຼາຍໃນໂຮງພະຍາແລ ທີແທ້ເປດສະໜາ 3 ປະການນັ້ນ ຫາກມີໃນພະຍາຫັ້ນແລ ອັນໜຶ່ງຍັງມີເສດຖີຜູ້ໜຶ່ງຕາຍ ມີລູກຊາຍ 2 ຄົນ ຂ້າຊິງກັນແທນພໍ່ ບູ-ຮານແຕ່ກ່ອນ ຜູ້ພີ່ຍ່ອມໄດ້ແທນເຮືອນພໍ່ຕົນແລ ທີ່ນີ້ຜູ້ນ້ອງໄປຂໍແຫ່ງພະຍາປາກແທນພໍ່ວ່າ ພະຍາເຈົ້າໃຫ້ຜູ້ຂ້າໄດ້ເປັນເສດຖີແທນພໍ່ ຂ້າຈັກບູຊາພະຍາເຈົ້າ 2 ແສນຄຳ ແລ້ວພະຍາວ່າດີແລທ່ານຈົ່ງປັ້ງຢູ່ເຖິງ 7 ວັນກ່ອນໃນວັນກ້ວນ 7 ກູຈັກອຸດສາພິເສກມຶງເປັນເສດຖີແທນພໍ່ມຶງແລ ໃນຫວ່າງແຫ່ງ 7 ວັນ ຫາຜູ້ອັນຈັກຫ້າມກູກໍບໍ່ໄດ້ພະຍາຄະນິງດັ່ງນີ້ແລ້ວ ພະຍາຈຶ່ງປອງເຂົ້າມາລັກຟັນຄໍອາ

ມາດນອນເຝົ້າເຫັນເຂົາຫຼັບນັກ ພະຍາຈຶ່ງຕັດເອົາບູຊາຍັນສິ້ນ 5 ຄົນ ອັນນີ້ໂທດພະຍາເພື່ອອັນແລ ອັນໜຶ່ງນາງພະຍາລັກຫຼັ້ນຊູ້ ອັນໜຶ່ງລູກພະຍາຍ່ອມໄປນອນດອມເມຍອາມາດທັງຫຼາຍໂທດ 3 ອັນນີ້ມີແກ່ພະຍາແລ ພະຍາວ່າ ເມື່ອປະກົມມະຍາມມຶງວ່າ ຈັກວ່າກໍບໍ່ດີ ບໍ່ວ່າກໍບໍ່ດີ ແມ່ນສິ່ງໃດນັ້ນຈາ ວິໄຊຍະອາມາດແກ້ວ່າ ຂ້າເຫັນພະຍາເຈົ້າເອົາສິນຈ້າງລູກເສດຖີຜູ້ນ້ອງໃຫ້ແທນພໍ່ ຊາວເມືອງຮູ້ສິ້ນແລ ຂ້າວ່າຈັກຫ້າມພະຍາເຈົ້າ ພະຍາເຈົ້າຈັກວ່າຂ້າຮ້າຍແລເມື່ອຂ້າບໍ່ຫ້າມ ຊາວເມືອງທັງຫຼາຍຈັກອາຣິພະຍາເຈົ້າຮ້າຍສິ້ນແລ ເຂົາຈັກປົດຍົດສັກມະຫາຣາຊເຈົ້າເສຍແລ ຂ້າທໍ່ເພິ່ງຕາມຄຳເຈົ້າຣັດສີ ບໍ່ຜິດແລວ່າອັນດາຍພະຍາວ່າ ຄຳເຈົ້າຣັດສີວ່າດັ່ງຣິ ວິໄຊຍະອາມາດ ຊັກຕຳນານມາວ່າສັນນີ້.

ຍັງມີວັນໜຶ່ງເຈົ້າຣັດສີໄປໂຄຈອນ ເຫັນເສືອໂຄ່ງກັບງູເຫົ່າແລຊາຍຜູ້ໜຶ່ງຕົກຂຸມສາງອັນໜຶ່ງ ຣັດສີມີຄຳກູນາ ຈຶ່ງເອົາເສືອອອກກ່ອນ ແລ້ວຈຶ່ງເອົາງູອອກກົດນັ້ນຈຶ່ງເອົາຊາຍຜູ້ນັ້ນອອກລຸນ ຊາຍຜູ້ນັ້ນຄະນຶງວ່າ ກູນີ້ຍັງວ່າຄົນ ທ່ານຣັດສີຕົນນີ້ບໍ່ເອົາກູອອກກ່ອນ ພອຍເລົ່າເອົາສັດອອກກ່ອນກູ ກູຫາກຈັກຮູ້ແກ່ມຶງແລ ຊາຍຜູ້ນັ້ນໝາຍໝັ້ນແກ່ເຈົ້າຣັດສີຫັ້ນແລ ໃນເມື່ອຈັກໜີເມືອສູ່ທີ່ຢູ່ເຂົາແລ ເສືອສັ່ງເຈົ້າຣັດສີວ່າ ສັນນີ້ ເຈົ້າກູກະທຳຄຸນແກ່ຂ້ານັກແລ ທີ່ຢູ່ຂ້າໃນປ່າທີ່ນັ້ນແລ ເຈົ້າກູຈຶ່ງໄປສູ່ຂ້າ ຂ້າຈັກຕອບຄຸນເຈົ້າກູແລວ່າອັນແລ້ວ ມັນກໍໜີໄປແລ ກົດນັ້ນງູໄຫວ້ເຈົ້າຣັດສີ ບອກທີ່ຢູ່ແກ່ເຈົ້າຣັດສີວ່າຈັກຕອບຄຸນແລ້ວກໍໜີໄປແລ ສວນດັ່ງຊາຍຜູ້ນັ້ນ ມັນບອກທີ່ຢູ່ແກ່ເຈົ້າຣັດສີວ່າ ເຈົ້າກູຈຶ່ງໄປສູ່ຂ້າ ຂ້າຈັກຕອບຄຸນແລ ມັນກໍໜີເມືອແລ ແຮກແຕ່ນັ້ນໄປພາຍໜ້າ ເຈົ້າຣັດສີວ່າ ກູຈັກລອງເຂົາທັງ 3 ຄວນແລ ຣັດສີໄປສູ່ເສືອຕົວນັ້ນກ່ອນ ເມື່ອເຫັນເຈົ້າຣັດສີມາສູ່ຕົນ ດັ່ງນັ້ນ ເມື່ອກ່ອນເສືອຕົວນັ້ນໄດ້ກິນລູກພະຍາຜູ້ໜຶ່ງ ມັນໄດ້ເຄື່ອງປະດັບສ້ອຍສັງວານໄວ້ ມັນຈຶ່ງເອົາເຄື່ອງປະດັບອັນນັ້ນ ບູຊາເຈົ້າຣັດສີແລ

ກົດນັ້ນຮັດສີໄປສູ່ງູເຫົ່າ ເລົ່າງູເຫົ່າຕົວນັ້ນ ມັນຮູ້ທີ່ເຂົ້າຂອງ ມີໃນ ຈອມປວກອັນໜຶ່ງ ມັນກໍບອກແກ່ເຈົ້າຮັດສີແລ ກົດນັ້ນເຈົ້າຮັດສີໄປ ສູ່ຊາຍຜູ້ນັ້ນ ດ້ວຍຄຳຄະນິງວ່າຊາຕີສັດກໍຍັງຮູ້ທີ່ກະທຳແກ່ຕົນ ສ່ວນ ຄົນຈັກກ່າວສັນໃດຈາ ຜິວ່າມັນຍັງຮູ້ຄຸນກູ ກູນີ້ເປັນນັກບວດແລ ເຂົ້າຂອງຝູງນີ້ ຈັກໃຫ້ແກ່ມັນເຄິ່ງໜຶ່ງ ຈັກໃຫ້ພະຍາເຄິ່ງໜຶ່ງແລ ເຈົ້າຮັດສີໄປການທາທີ່ຢູ່ມັນ ມັນໄດ້ເປັນອາມາດແກ່ພະຍາມັດທະ-ຣາດແລ ມັນເຫັນເຈົ້າຮັດສີມາຫາມັນ ມັນຄະນິງວ່າບັດນີ້ກູຈັກໃຫ້ ຮັດສີຈິບຫາຍແລ ມັນເຫັນເຄື່ອງປະດັບລູກພະຍາດອມເຈົ້າຮັດສີ ມັນເອົາເມືອໃຫ້ແກ່ພະຍາວ່າ ຂ້າແກ່ມະຫາຣາຊເຈົ້າ ຮັດສີຕົນມາຫາ ຜູ້ຂ້ານີ້ ເປັນຍັກເອົາລູກພະຍາເຈົ້າໄປກິນວັນນັ້ນດາຍ ຂ້າໄດ້ເຄື່ອງປະ ດັບມານີ້ແລ ເມື່ອນັ້ນພະຍາບໍ່ພິຈາລະນາ ຟັງຄຳສໍ່ ກໍວາງຄຳໃຫ້ ເອົາຮັດສີໄປຂ້າເສຍ ພວກຂ້າຄົນກໍເອົາໄປຕາມຄຳພະຍາແທ້ ໃນວັນນັ້ນ ກໍຄ່ຳຈວນເສຍ ເຂົາເອົາເຈົ້າຮັດສີໄປສູ່ປະຕູຫີນວັນອອກນາຍປະຕູວ່າ ສັນນີ້ ບູຮານ ທ້າວພະຍາບໍ່ຫ້ອນໃຫ້ຂ້າຄົນເສຍ ເມື່ອຄ່ຳເມືອຄືນ ດາຍ ຄວນພິຈາລະນາດູກ່ອນ ແຈ້ງແລ້ວຈຶ່ງຂ້າເມື່ອວັນຊອບດາຍບໍ່ ພິຈາລະນາ ຍ່ອມໄດ້ກິນແໜງພາຍລຸນ ເປັນດັ່ງພະຍາຕົນໜຶ່ງວັນ ນັ້ນ ຍັງມີອຳມາດຜູ້ໜຶ່ງຫາໂຫດບໍ່ໄດ້ ໝໍໂຫຣາທວາຍວ່າ ທ່ານ ຍັງມີເຄາະ ກ້ວນ 7 ວັນ ທ່ານຢ່າໄດ້ລີງໄປຈາກເຮືອນ ໃນວັນກ້ວນ 7 ນັ້ນ ພໍກາງວັນຊ້າຍ 36 ຕີນເບັຍເອົາມະຫລຸງສົ້ມປ່ອຍ ທີ່ສິບ ນ້ຳດຳຫົວເສຍເທີ້ນ.

ໃນວັນກ້ວນເຈັດນັ້ນ ກາງວັນຍັງໄປທ່ຽງ ເຄາະຍັງມີ ມັນດູ ດັ່ງຊ້າຍແລ້ວ ຮີບເອົາມະຫລຸງສົ້ມປ່ອຍໄປຜູ້ດຽວໃນວັນນັ້ນ ລູກພະຍາ ໄປຫຼິ້ນເຂົາຫາບໍ່ເຫັນສັກແຫ່ງ ເຂົາໄປສູ່ອາມາດຈັກດຳຫົວ ເຂົາເຫັນມະຫລຸງເປັນດັ່ງຫົວລູກພະຍາ ເຂົາມາບອກແກ່ພະຍາ ພະຍາວ່າສູ່ຈົ່ງເອົາໄປຂ້າເສຍ ເຂົາກໍມາຜູກເອົາມັນວ່າຈັກຂ້າເສຍ ມັນຄະນິງວ່າເຄາະກູໄປພົ້ນ ບໍ່ທັນເກືອງຍາມກູຮີບມາດຳຫົວ ກູຈັກອຸ-

ບາຍຈາກເຄາະກູເຫັ້ນ ຕາເວັນຊ້າຍແລ້ວກໍຈັກພົ້ນຊະແລ ມັນຈິ່ງວ່າ ແກ່ອາມາດຜູ້ມາເອົາຕົນວ່າສັນນີ້ ສ່ວຍໄຣພະຍາເຈົ້າຍັງໃນຜູ້ຂ້າ ມາກຫຼາຍແລ ໃຫ້ຂ້າໂຣມໜັງສືເຊັ່ນຂອງຝູງໄດ້ກົດສ່ວຍໄຣແຫ່ງຂ້າ ແລ້ວກ່ອນ ຈິ່ງເອົາໄປຂ້າເຫັ້ນ ຄັນເຈົ້າຣິບຂ້າ ເສຍຂອງສ່ວຍໄຣພະຍາ ເຈົ້າຝູງນັ້ນແລ ມັນວ່າອັນ ເຂົາກໍປົ້ງຢູ່ໜ້ອຍໜຶ່ງ ກາງວັນຊ້າຍ 36 ຕີນ ເຄາະອັນຂ້າລູກພະຍາ ມັນຖາດໜີ ເຖິງຍາມນີ້ລູກພະຍາ ໄປຫຼິ້ນກໍມາສຸ່ ພະຍາຕົກໃຈໃຊ້ຄົນໃຫ້ໄປວ່າ ຢ່າຂ້າມັນ ຍາມນັ້ນມະ ຫລຸງກໍເປັນມະຫລຸງດັ່ງເກົ່າແລ ຈ່າປະຕູຊັກຕຳນານອັນນີ້ມາຫ້າມບໍ່ ໃຫ້ອອກແລ.

ເຂົາເອົາເຈົ້າຣັດສີໄປສູ່ປະຕູກ້ຳໃຕ້ ນາຍປັກຕູບໍ່ໃຫ້ອອກ ຈ່າປັກຕູຊັກຕຳນານອັນໜຶ່ງມາວ່າສັນນີ້ ຍັງມີພະຍາຕົນໜຶ່ງຢູ່ໃນເມືອງ ກາສີ ຍັງມີເຈົ້າຣັດສີຕົນໜຶ່ງ ກະທຳຕະປະແຂງນັກ ຢູ່ໃນປ່າທີ່ໜຶ່ງ ເມື່ອນັ້ນໂຈນລັກຂອງຊາວເມືອງ ຊາວເມືອງໄຕ່ຂັບໂຈນໆເຫັນແລ່ນ ໜີໄປສູ່ອາສົມບົດເຈົ້າຣັດສີນັ້ນ ໂຈນຜູ້ນັ້ນມັນກໍປະຂອງເສຍທີ່ນັ້ນ ແລ້ວມັນກໍແລ່ນໜີໄປທາງອື່ນ ຊາວເມືອງແລ່ນມາເຫັນຂອງໃນທີ່ ຢູ່ເຈົ້າຣັດສີ ເຂົາເມືອບອກແກ່ພະຍາ ພະຍາວ່າເຈົ້າຣັດສີເປັນໂຈນ ພະຍາບໍ່ພິຈາລະນາ ໃຫ້ໄປເອົາເຈົ້າຣັດສີສຽບກົ້ນເສຍ ທີ່ປະຕູວຽງ ດັ່ງນັ້ນ ແຜ່ນດິນແຕກສູບເອົາໂຈນນັ້ນລົງພຽງແອວ ມັນເວດທະນານັກ ມັນຈິ່ງຮ້ອງວ່າເສຍຂອງຊາວເມືອງກູຫາກເອົາ ກູຫາກເຣັດກົນແກ່ເຈົ້າຣັດ ສີດາຍ ແຜ່ນດິນສູບເອົາກູ ເພື່ອອັນດາຍ ອາມາດຈິ່ງມາບອກແກ່ພະຍາ ບັດນັ້ນແຜ່ນດິນພື້ນຜາສາດທັງແທ່ນ ກໍແຕກເປັນສອງພາກສູບເອົາ ພະຍາ ເພື່ອຫາຄຳພິຈາລະນາບໍ່ໄດ້ ວັນນັ້ນ ຍຽວເປັນດັ່ງນັ້ນ ກູບໍ່ໃຫ້ອອກແລ.

ເມື່ອນັ້ນເຂົາພາໄປສູ່ປັກຕູວັນຕົກ ນາຍປັກຕູກໍວ່າສັນດຽວນັ້ນ ມັນຊັກເອົາຕຳນານມາວ່າ ຍຽວເປັນດັ່ງພະຍາພາຣາມະສີ ໄດ້ຂ້າ ນາງພະຍາເສຍ ບໍ່ພິຈາລະນາກົນແໜງເມື່ອພາຍລຸນແລ ມີພວກ

ນ້ອຍຜູ້ໜຶ່ງສໍ່ໃຫ້ພະຍາ ແລນາງພະຍາພັດພາກຈາກກັນ ວ່າສັນນີ້ ຂ້າແຕ່ມະຫາຣາຊເຈົ້າ ບັດນີ້ນາງພະຍາຮຽນຢາແຜດໃໝ່ ຄໍາບໍ່ໄດ້ ເປັນຜີຮ້າຍແລບອກນາງພະຍາວ່າ ພະຍາມີຫາງ ກ້າບໍ່ເຊື່ອຈິ່ງຄໍາ ດູ ນາງຄອງວ່າມີແທ້ ກາງຄືນນາງຄໍາດູກົ້ນພະຍາ ພະຍາວ່ານາງ ພະຍາຜູ້ນີ້ເປັນຜີຮ້າຍແທ້ ບໍ່ພິຈາລະນາເອົາສີຄັນໄຊຕັດນາງເສຍ ພາຍລຸນຮູ້ວ່ານາງຫາໂທດບໍ່ໄດ້ ກິນແໜງອິກຈັກແຕກຕາຍຢຽວເປັນ ດັ່ງນັ້ນ ກູບໍ່ໃຫ້ອອກແລ.

ເຂົາພັນໄປສູ່ປະຕູຫີນເໜືອ ນາຍປັກຕູບໍ່ໃຫ້ອອກ ຊັກເອົາຕໍານານນິທານມາວ່າ ຢຽວເປັນດັ່ງພະຍາມັນທາຕຸຣາດແລ ພະຍານັ້ນ ມີອາມາດໃຫຍ່ 4 ຄົນ ເມື່ອພະຍາໄປລໍ້າຂ້າເສິກໃຫຍ່ ຍ່ອມໄວ້ອາມາດ 4 ຄົນ ນັ້ນປ່ຽນກັນນອນເຝົ້ານາງພະຍາແລ ເມື່ອນັ້ນນາງ ພະຍາມັກເຂົ້າອາມາດໃຫຍ່ 4 ຄົນ 3 ຄົນບໍ່ຢ້ານພະຍາ ເຂົ້າມານອນ ກັບນາງພະຍາ ຜູ້ໜຶ່ງມັນຊື່ຕໍ່ພະຍາບໍ່ກະທໍາ ນາງພະຍາຄະນຶງວ່າ ກູຈັກບອກຂ້າອາມາດຜູ້ນີ້ເສຍດີແລ ຄັນມັນບອກເຫດອັນນີ້ແກ່ພະຍາ ຕູວາຍແທ້ແລ. ນາງພະຍາຈິ່ງຄູດເນື້ອຄີງຕົນໃຫ້ຂາດແລມາບອກແກ່ ພະຍາວ່າ ຂ້າແຕ່ມະຫາຣາຊເຈົ້າ ອາມາດຜູ້ນີ້ມັນເມືອນອນເຝົ້າຂ້າ ກຸມຢູ່ນອນດອມຂ້າບໍ່ສູ່ ມັນຄູດເນື້ອຄີງຂ້າເປັນດັ່ງນີ້ ແລພະຍາບໍ່ພິ-ຈາລະນາຟັງນາງສໍ່ໃຫ້ຂ້າອາມາດເສຍ ພາຍລຸນຈິ່ງຮູ້ວ່ານາງຫຼົ້ນຊູ້ ດ້ວຍອາມາດ 3 ຄົນ ພະຍາກິນແໜງມັກຢຽວເປັນດັ່ງ ນັ້ນແລ ເຂົາວ່າທ່ານຣັດສີຕົນນີ້ເປັນຍັກກໍບໍ່ຮູ້ ບໍ່ເປັນຍັກກໍບໍ່ຮູ້ ກູບໍ່ໃຫ້ອອກແລ ຄືນອັນນັ້ນກໍຮຸ່ງຈວນເສຍແລ.

ເມື່ອນັ້ນພະຍາຖາມເຂົາວ່າ ສູຂ້າເຈົ້າຣັດສີແລ້ວອັນຊະລີ ເຂົາຂານວ່າໄປ່ໄດ້ຂ້າ ເຂົາເອົາຕໍານານນາຍປັກຕູທັງ 4 ມາບອກແກ່ ພະຍາ ພະຍາຈິ່ງໃຫ້ເອົາເຈົ້າຣັດສີມາຖາມດູ ເຈົ້າຣັດສີຄະນຶງດັ່ງນີ້ ກູວ່າຕາມຄໍາມີດັ່ງນັ້ນ ພະຍາເຍັດແກ່ມັນຕາມຄໍາຊະແລ ຜີກູບໍ່ວ່າ ພະຍາຈັກຂ້າກູ ຜູ້ບໍ່ມີໂທດພະຍາຈັກຈິບຫາຍແລ ຄວນກູວ່າຕາມຄໍາມີແລ

ຣັດສີກ່ວ່າຕາມຄຳນີແລ ເມື່ອນັ້ນພະຍາໄດ້ຍິນຄຳເຈົ້າຣັດສີໃຫ້ຂ້າອາ-ມາດຜູ້ຮ້າຍເສຍ ເອົາເຈົ້າຣັດສີສິກເປັນອາມາດແທນ ເມື່ອເຈົ້າຣັດສີໄດ້ເປັນອາມາດແລ້ວ ຊວນພະຍາໄປເອົາຂອງ 25 ໂກດອັນງູບອກນັ້ນມາ ພະຍາເອົາເຄິ່ງໜຶ່ງ ໃຫ້ແກ່ອາມາດເຄິ່ງໜຶ່ງແລ.

ຕຳນານອັນນີ້ ວິໄຊຍະອາມາດຊັກເອົາມາສາທົກໃນຄຳແຫ່ງຕົນອັນໄດ້ກ່າວ ຕາມຄຳເຈົ້າຣັດສີນັ້ນແລ ພະຍາວ່າສັນນີ້ ຄຳອັນມີງກ່າວໃນມັດຊິມະຍາມ " ຈັກວ່າກໍບໍ່ດີ ບໍ່ວ່າກໍບໍ່ດີ " ໄດ້ແກ່ອັນໃດນັ້ນຈາວິໄຊຍະອາມາດວ່າສັນນີ້ ຂ້າເຫັນລູກພະຍາເຈົ້າໄປມັກເມຍອາມາດທັງຫຼາຍ ຈັກວ່າຢຽວລູກພະຍາເຈົ້າໄໝຂ້າຈິບຫາຍ ເຫດອັນຂ້າວ່າຄຳອັນນັ້ນ ເພື່ອອັນດາຍດ້ວຍແທ້ຄວນວ່າແລ. ພະຍາກາມໄປຄືນວ່າສັນນີ້ ເມື່ອປັດສິມະຍາມມີງວ່າ ຄຳອັນນີ້ ກຳຫາກແຕ່ງແປງດາຍວ່າອັນ ໄດ້ແຕ່ອັນໃດຈາ ວິໄຊຍະອາມາດແກ້ວ່າສັນນີ້ ຂ້າເຫັນຫຼາກນາງພະຍາຫຼີ້ນຊູ້ແລ ເມື່ອຂ້າຈັກວ່ານາງພະຍາຫຼີ້ນຊູ້ດັ່ງນັ້ນ ພະຍາຈັກຂ້າໃຫ້ຈິບຫາຍ ເມື່ອຂ້າບໍ່ວ່າ ຢຽວຊູ້ນາງຂ້າພະຍາເຈົ້າເສຍ ກຳສັດຫາກແຕ່ງແປງດາຍ ເພິ່ງຜູ້ຂ້າບອກແທ້ແລ ວິໄຊຍະອາມາດກ່າວເຫດນັ້ນແກ່ພະຍາ ພະຍາຈິ່ງໃຫ້ອຸດສາພິເສກວິໄຊຍະອາມາດ ຂຶ້ນເປັນເສນາປັດດີຜູ້ໃຫຍ່ ລູກເສດຖີຜພີຫ້າແທນພໍ່ ຜູ້ນ້ອງໃຫ້ແທນພີ່ ລູກຕົນຜູ້ມັກເມຍອຳມາດ ໃຫ້ເອົາເມຍ ນາງພະຍາມີໂທດໃຫ້ເອົາເສຍຕາມໂທດແລ ຕຳນານແຕ່ພໍ່ແມ່ເຂົ້າມາແລ.

ຕຳນານທິສາປາໂມກຂະອາຈານ ສອນໄວ້ໃຫ້ແຈ້ງໂລກນີ້ແລພິຈາລະນາຄະຕິ 5 ອັນແລ້ວເຍັຍໄຕ່ຄຳເທີ້ນ.

<u>ເອກະໄນ</u>

ຍັງມີພໍ່ຄ້າເຮືອ ໄປເຖິງສີມາພະຍາຕົນໜຶ່ງ ຈອດເຮືອຢູ່ຣິມນ້ຳໃນກາງປ່າ ຍັງມີງົວ 2 ໂຕຢູ່ຟາຍນ້ຳເບື້ອງພຸ້ນໄລ່ກັນມາຂຶ້ນຝັ່ງນ້ຳເວີນໂພະເຮືອຫຼົ້ມເສຍຂອງພໍ່ຄ້າໆໄປຫາພະຍາໆວ່າ ແຜ່ນດິນ

ກູແຫ້ ຄວນກູແຫນຂອງແຫ້ແລ ພະຍາແຫນຂອງນັ້ນເກືອງໜຶ່ງໆໄວ້ແກ່ພໍ່ຄ້າຮຽກວ່າເປັນດ້ວຍເຄາະແລ.

ໄນຍະໜຶ່ງພໍ່ຄ້າກວຽນ 500 ເຫຼັ້ມ ໄປຄ້າເກືອງສີມາ ພະຍາອົງໜຶ່ງເຂົ້ານອນໃນປ່າຫານ້ຳບໍ່ໄດ້ ເຂົ້າໄປສະແຫວງຫານ້ຳເຫັນຂຸມຄຳໃນປ່າ ພານປ່າວ່າເມືອງພະຍາເຈົ້າກູດາຍ ເຂົ້າພາກັນໄປສູ່ພະຍາໆວ່າແຜ່ນດິນກູແຫ້ ເຂົ້າຂອງກໍແມ່ນຂອງກູແຫ້ດາຍ ດ້ວຍແຫ້ເກີດດ້ວຍບຸນພໍ່ຄ້າທັງຫຼາຍດາຍໃຫ້ພໍ່ຄ້າເກືອງໜຶ່ງ ເອົາມາເລັ້ມພະຍາເກືອງໜຶ່ງແລ.

ໄນຍະໜຶ່ງ ຍັງມີກະດຸມພິດຜູ້ໜຶ່ງຕາຍ ຫາເຜົ່າພົງວົງສາບໍ່ໄດ້ ມັນຕາຍ ພະຍາແຕ່ງຂອງມັນເປັນ 3 ປຸນ ປຸນໜຶ່ງໃຫ້ທານແກ່ຊາວເຈົ້າພິກຂຸ ແລະ ຄົນໃຫ້ບຸນແກ່ມັນ ປຸນໜຶ່ງເອົາມາໃສ່ເລັ້ມເບຍເຮົາເຫັ້ນ. ໄນຍະໜຶ່ງແຜ່ນດິນເມືອງພະຍາອົງໜຶ່ງ ໃນທີ່ໜຶ່ງເປັນເງື້ອມໃນເມື່ອຝົນຕົກຄົນຍ່ອມເຂົ້າໄປຢູ່ຮົ່ມ ດິນນັ້ນເພທັບຄົນຕາຍ ເຂົ້າບອກແກ່ພະຍາໆວ່າແຜ່ນດິນກູແຫ້ ຄວນກູແຫນ ພະຍາແຫນຜູ້ຕາຍເກືອງໜຶ່ງ. ຄົນທັງຫຼາຍຢູ່ໃນສີມາ ເຂົ້ານຳເບັ້ຍນຳເງິນມາອັນໜຶ່ງໄດ້ຂອຍມາ ອັນໜຶ່ງຈິບຫາຍເຂົ້າມາເປັນຂ້າ ອັນໜຶ່ງວ່າຂ້າເກີດໃນບ້ານເມືອງຜູ້ໃຈທະນາວ່າ ຂ້າ 3 ຈຳພວກນີ້ ຄວນແກ່ພະຍາແຫ້ແລ ຂ້າຈຳພວກອັນເກີດໃນສີມາ ບໍ່ເພີ່ງວ່າຂ້າແຫ້ ທີສາປາໂມກຂະອາຈານໄດ້ຮຽນແຕ່ປາກເຈົ້າຣັດສີ ຕົນຊື່ວ່າ ອັດສະທິດສະມະຫາຣັດສີ ວ່າສັນນີ້ຊື່ວ່າພະຍາທະຣົງຣາຊການບ້ານເມືອງບໍ່ໃຫ້ຈິບຫາຍດ້ວຍອາການ 2 ອັນ ອັນໜຶ່ງຄືວ່າ ບໍ່ໃຫ້ທ້າວພະຍາເມືອງອື່ນມາກະທຳຮ້າຍໄດ້ ອັນໜຶ່ງບໍ່ໃຫ້ໂຈນກະທຳຮ້າຍໄດ້ແລ ໃຫ້ຈຳເຣີນ 2 ອັນ ຄືວ່າໃຫ້ບັງເກີດແກ່ຄົນທັງຫຼາຍ ອັນໜຶ່ງສັ່ງສອນຄົນທັງຫຼາຍໃຫ້ສະຫຼາດ ໃຫ້ກະເສີມບ້ານເມືອງ ຄຸນພະຍາສັນນີ້ ຄົນອັນເກີດໃນສີມາຮຽກວ່າຂ້າຈຳພວກໜຶ່ງແລ.

ໃນເມື່ອອາຍຸຄົນກອນລົງມາຢູ່ແສນປີ ໄດ້ຊື່ວ່າ ສຳມາທິໂຍກ

ກາງແສນປີຊື່ວ່າ ກາລີໂຍກ ໃນເມື່ອນັ້ນເຈົ້າຣັດສີຕົນໜຶ່ງຊື່ວ່າ ອັດສະທິດສະມະຫາຣັດສີ ປະກອບດ້ວຍປັນຍາພິຍານ ຢູ່ໃນຫິມະວັນມີໝູ່ຣັດສີ 500 ຕົນເປັນປະຣິວານ ເມື່ອນັ້ນມີພະຍາທັງຫຼາຍເຂົ້າໄປກາມອັດກະທັງມວນແຫ່ງທິສາປາໂມກຂະອາຈານ ອັນຢູ່ໃນຕັກກະສີລາ ຫາກໄດ້ຮຽນເອົາແຕ່ອັດສະທິດສະມະຫາຣັດສີ ຊື່ວ່າເອກະນັຍດັ່ງກ່າວມານີ້ແລ.

ທຸກະໄນ

ອັນໜຶ່ງວ່າທຸກະໄນ 2 ຜົວເມຍຝາກຄຳໄວ້ແຫ່ງ 2 ຜົວເມຍເພິ່ງຮູ້ດ້ວຍອັນໃຫ້ຫາມກອງຮຽບວຽງ ໃຫ້ຜູ້ໜຶ່ງເຂົ້າຢູ່ໃນກອງຟັງດູຮູ້ແລ້ວເບັຍຕັດດີແລ. ຄົນຊິງເມຍກັນເພິ່ງຮູ້ດ້ວຍຂອງລ້ຽງ ເປັນຕົ້ນວ່າທ່ານແລ. ທຸກະໄນໜຶ່ງເລົ່າຍັງມີ 2 ຄົນຜິດກັນຫາສັກຂີບໍ່ໄດ້ ເພິ່ງໃຫ້ກາມພິງສາດູ ເພິ່ງເລັ້ງດູຈາຣິດອັນໜັກ ອັນເບົາແຫ່ງຂາເພິ່ງດູອັນລຽງອັນຊື່ ແຫ່ງຂາແລ້ວເບັຍຕັດ ດັ່ງມະຫາເສດກີຜູ້ໜຶ່ງໄດ້ຝາກແກ້ວລູກໜຶ່ງຄ່າແສນຄຳ ໃສ່ກົງໜຶ່ງຕິດຈິດໄວ້ໄດ້ຝາກ ແຫ່ງເສດກີຜູ້ລຽງເມື່ອລຸນເຈົ້າແກ້ວມາເອົາ ກົງກໍຍັງດີດັ່ງເກົ່າ ເຫັນແກ້ວມີຄ່າຮ້ອຍຄຳ ມະຫາເສດກີເຈົ້າແກ້ວໄປບອກແກ່ພະຍາໆ ໃຫ້ຫາເສດກີຜູ້ທ່ານຝາກໄວ້ມາກາມ ມັນວ່າບໍ່ຮູ້ ພະຍາສິນເຫນັກ ພະຍາຫລິງດູອິຣິຍາບົດ ແຫ່ງມັນບໍ່ເປັນສັນເກົ່າ ປຸ່ນໄປບໍ່ເປັນດັ່ງເກົ່າດູຫລາກພະຍາຈິ່ງສ່ອງຮູ້ຈິ່ງອຸບາຍໃຫ້ຊ່າງຜ້າ ຍັງມີຜ້າຜືນໜຶ່ງຄ່າແສນຄຳຊັກຢ່າໃຫ້ຂາດຜິຫາກໃຫ້ຂາດເສັ້ນໜຶ່ງ ຈັກຂ້າມຶງເສຍແລ ພະຍາຫາກເບາະເສຍຂາດ 3 ເສັ້ນ ໃຫ້ແກ່ຊ່າງໄປຊັກແລ້ວມາສົ່ງໃຫ້ແກ່ພະຍາ ພະຍາເອົາທີ່ຂາດໃຫ້ມັນດູ ວ່າຈັກຂ້າເສຍ ຜິວ່າມຶງຫາຜູ້ຮູ້ສິນດີດັ່ງເກົ່າໄດ້ກໍແລ້ວ ດັ່ງນັ້ນ ຜູ້ຊ່າງຊັກຈິ່ງໄປຫາຊ່າງສິນໄດ້ເອົາມາກວາຍແກ່ພະຍາໆໃຫ້ນາງຜູ້ນັ້ນດູ ແລ້ວພະຍາຈິ່ງກາມມັນທຸກອັນມັນກໍບອກອາການອັນເສດກີໃຫ້ ມັນສິນກົງແກ້ວນັ້ນແກ່ພະຍາໆ ຮູ້

ແລ້ວຈຶ່ງຫາເສດຖີເຈົ້າແກ້ວມາວ່າ ມຶງເອົາແກ້ວຄ່າຮ້ອຍຄຳໃສ່ກົ່ງ ຈິ່ງເຢັຍດີ ມາກູຈັກອະທິການດູລາງຄາບເຄາະມີ ເຂົາຫາກແຜ່ມາເສດຖີສະຫາຍມຶງຈັກແລກເອົາແກ້ວບໍ່ມີ ເສດຖີເຈົ້າແກ້ວ ຈຶ່ງເອົາແກ້ວລູກຄ່າຮ້ອຍຄຳໃສ່ກົ່ງຈິດດີມາໄວ້ແຫ່ງພະຍາ ພະຍາຈຶ່ງຫາເສດຖີຜູ້ເອົາແກ້ວມາກຳຮາບວ່າ ມຶງແລກເອົາແກ້ວກູຫາກຮູ້ດ້ວຍຜະຫຍາກູແລ ມັນອຳບໍ່ໄດ້ຈຶ່ງເອົາແກ້ວນັ້ນມາໃຫ້ແກ່ພະຍາໆວ່າ ເມື່ອກູບອກແກ່ສະຫາຍມຶງ ໄມຕີເຂືອຈະຂາດເສຍຈາກກັນ ເສດຖີນັ້ນຈຶ່ງເອົາບູຊາພະຍາແສນຄຳໜຶ່ງ ພະຍາເອົາແກ້ວນັ້ນອອກຈາກກົ່ງ ແລ້ວເອົາລູກຄ່າແພງໃສ່ໃນກົ່ງນັ້ນ ແລ້ວຫານາງຊ່າງສິນມາສິນກົ່ງນັ້ນ ແລ້ວຫາເສດຖີເຈົ້າແກ້ວມາວ່າ ກູອະທິການແລ້ວແລ ມຶງເອົາເມືອອະທິການດູ 3 ວັນ ແລ້ວເອົາມາໄຂຕໍ່ໜ້າກູເທີ້ນ ມັນກະທຳຕາມຄຳພະຍາ ແລ້ວມາໄຂຕໍ່ໜ້າພະຍາ ພະຍາຖາມວ່າ ແກ້ວລູກນີ້ແມ່ນຂອງມຶງຣື ມັນວ່າແມ່ນແລ ພະຍາພິຈາລະນາດູວ່າ ໄມຕີເຂືອຈັກຂາດເສຍຈາກກັນແລ ເສດຖີເຈົ້າແກ້ວບູຊາພະຍາແສນຄຳໜຶ່ງແລ ອັນວ່າທຸກະໄນຫາສັກຂີບໍ່ໄດ້ ໃຫ້ປົ່ງດູອິຣິຍາບົດອັນຫລາກແລ້ວໃຫ້ຕັດດ້ວຍອຸບາຍບໍ່ໃຫ້ຫາຍທຶນ.

ໄນຍະອີກອັນໜຶ່ງ ຊາຍໜຶ່ງມານອນຈຶ່ມໃກ້ບ້ານໜຶ່ງ ຄືນນັ້ນໂຈນມາເຂົ້າລັກຂອງເຈົ້າບ້ານໜີໄປເຂົ້າສາລາ ຜູ້ນອນຢຸ່ງໂທດມີມັນກຸມເອົາວ່າມຶງເປັນໂຈນ ກໍກຸມມີກັນ ຕ່າງຄົນຕ່າງວ່າກູໄດ້ໂຈນແລ້ວເຈົ້າບ້ານຜູກຂາ 2 ຄົນ ໄປເຖິງພະຍາໆຖາມຫາສັກຂີບໍ່ໄດ້ ຈຶ່ງມັດຂາໄປຈອດໄວ້ປ່າຂ້າຄົນແລ ຄົນແລແຫ່ງພະຍາໃຊ້ຄົນສັກຂີໄປຟັງເມືອຄືນຮູ້ແລ້ວຕັດແລ.

ໄນຍະໜຶ່ງ ຜູ້ໜຶ່ງມາຈອດນອນເຮືອນ ເຈົ້າເຮືອນໄປຄ້າຝາກເຮືອນໄວ້ແກ່ມັນ ເມື່ອລຸນເຈົ້າເຮືອນມາ ມັນວ່າເຮືອນມັນຂາຊິງກັນພາກັນໄປເຖິງຈ່າເມືອງຟັງຄຳໂຈດແທກຂີ້ແທກແປໄປເຖິງພະຍາໆໃຫ້ໄປຫາເຄົ້າໄມ້ໃຫ້ໄດ້ ຈຶ່ງເຊື່ອເປັນສັກຂີ

ຄຳນັ້ນເຈົ້າເຮືອນຮູ້ສັກຂີ ມັນໄດ້ເອົາໄມ້ຍາວກໍມີເຄົ້າເສົາແລປັ່ງເສົາ ໂຈນຫາສັກຂີບໍ່ໄດ້ ພະຍາຈຶ່ງຕັດແລ ສອງຄົນຊິງກັນເພິ່ງຮູ້ດວຍເຈົ້າ ເອົາມັນໄປຕໍ່ຜູ້ແປງດູແລ.

ໄນຍະໜຶ່ງສອງຄົນຊິງເມຍກັນ ເພິ່ງຮູ້ດວຍການມາມະກອນແຫ່ງ ລູງຕາແລ.

ຕິກະໄນ

ຍັງມີກະດຸມພີຜູ້ໜຶ່ງ ຫາລູກບໍ່ໄດ້ ມີຂ້າຊາຍ 3 ຄົນ ຜູ້ໜຶ່ງເອົາ ການພະຍາຊຸມເຮືອນ ຜູ້ໜຶ່ງໄປຄ້າມາລ້ຽງ ຜູ້ໜຶ່ງຢູ່ຮັກສາເມືອມັ້ນ ກະດຸມພີຜູ້ນັ້ນກໍຕາຍ ເຂົ້າຊິງກັນເອົາຂອງ ເຂົ້າໄປເຖິງພະຍາໆແຕ່ງ ໃຫ້ຜູ້ຊຸມເຮືອນໄດ້ 2 ທີ່ ຜູ້ໄປຄ້າມາລ້ຽງໄດ້ທີ່ຄື່ງ ຜູ້ຮັກ ສາທີ່ໜຶ່ງແລ.

ຍັງມີຊາຍຜູ້ໜຶ່ງທຽວທາງມານອນສາລາຫລັງໜຶ່ງ ດັງໄຟທຸງ ເຂົ້າກິນບໍ່ມອດໄຟເສຍ ຍັງມີຜູ້ໜຶ່ງທຽວທາງມາເຫັນມັນປີ້ງຊີ້ນບໍ່ທັນ ກິນ ຮຸ່ງມາຊູດເອົາຊີ້ນກັບໄຟບິນໄປຈັບຜາສາດພະຍາໄຟໄໝ້ປາສາດ ເສຍພະຍາໃຫ້ຂາມາໄຕ່ດູ ໃຫ້ເອົາໄທຣາມາຕ່ອງໄທດແທນຜູ້ດັງໄຟ ບໍ່ມອດແລຜູ້ປີ້ງຊີ້ນແລ້ວກອດເສຍ ເຫດວ່າມັນບໍ່ຮັກສາພະຍາແລ.

ຍັງມີຊາຍຜູ້ໜຶ່ງທຽວທາງມາຢູ່ພັກສາລາຫຼັງໜຶ່ງ ມັນປັກຫອກໄວ້ ຍັງມີຊາຍຜູ້ໜຶ່ງແວ່ພັກກິນເຂົ້າທີ່ ພານປ່າເອົາໝາໄປໄລ່ເນື້ອມາແວ່ ພັກຢູ່ ຜູ້ກິນເຂົ້າອັນເຫຼືອ ໝາເຫັນມັນຊິງກັນກິນເຂົ້າອັນນັ້ນ ມັນຂົບກັນກຶກຫອກທາວລົ້ມປັກຊາຍຜູ້ໜຶ່ງຕາຍ ພີ່ນ້ອງມາເອົາເຂົ້າ ໄປສູ່ພະຍາໆວ່າ ໃຫ້ຜູ້ກິນເຂົ້າກັບເຈົ້າຫມາຫາເຂົ້າແລະເຫຼົ້າຍາ ລົງສິ່ງສະການມັນຜູ້ຕາຍ ໃຫ້ເຈົ້າຫອກໃຊ້ຄ່າຄົນແລ.

ໄນຍະອັນໜຶ່ງ ຍັງມີພະຍາຕົນໜຶ່ງມີລູກ 3 ຄົນ ພໍ່ຕາຍເຂົ້າ ຊິງກັນແທນເມືອງ ອາມາດທັງຫຼາຍ ໄປສ່ຽງເຈົ້າຣັດສີ ລ້ຳເຂົ້າ 3 ຄົນນັ້ນ ຜູ້ໜຶ່ງຮູ້ໄທຣາ ຜູ້ໜຶ່ງຮູ້ທະນູສິນ ຜູ້ໜຶ່ງຮູ້ເອົາໃຈອາມາດ

ບໍ່ໃຫ້ໄປໃນອະຄະຕິຄະມະນະ 4 ເຈົ້າຣັດສີໃຫ້ຜູ້ຮູ້ໂຫຣາເປັນປະໂຣຫິດ ຜູ້ຮູ້ທະມູສິນນັ້ນເປັນເສນາບໍດີຜູ້ໃຫຍ່ ຜູ້ຮູ້ເອົາໃຈອາມາດນັ້ນເປັນພະຍາແລ.

ຈະຕຸກະໄນ

ຍັງມີເມືອງອັນໜຶ່ງ ພະຍາຕາຍຫາລູກບໍ່ໄດ້ ຍັງມີຣາຊບຸດເມືອງໜຶ່ງ 4 ຄົນໄປຮຽນສາຕະສິນໃນເມືອງຕັກກະສິລາ ມາຢູ່ເໜືອຫີນສິລາໃນອຸດທິຍານເມືອງອັນນັ້ນ ວັນນັ້ນ ອາມາດທັງຫຼາຍປ່ອຍຜຸດສະຣົດເຂົ້າໄປເກີງທີ່ນັ້ນຢືນຢູ່ ປຸໂຣຫິດເຫັນຣາຊບຸດ 4 ຄົນ ໃຫ້ເຂົາຊຳຣະເນື້ອຕົນເສຍ ແລ້ວໃຫ້ທະຣິງອາພອນດອກໄມ້ ກິນເຂົ້າແລ້ວປະໂຣຫິດຜູ້ມີຜະຫຍາຈຶ່ງແປງເປດສະໜາ 4 ອັນ ສົ່ງແກ່ເຂົາວ່າ ຍັງມີຣາຊກັນຍາ 4 ຄົນ ຜູ້ໜຶ່ງງາມນັກ ຜູ້ໜຶ່ງບົວລະບັດເຂົ້າຂອງກິນຖືກໃຈນັກ ຜູ້ໜຶ່ງຮູ້ຫອມຫຍັບເຂົ້າຂອງ ຜູ້ໜຶ່ງສົງເຄາະແກ່ຄົນທັງຫຼາຍ ມັກຈ່າຍໃຫ້ທານແກ່ສະມະນະພາມລ້ຳເຂົາ 4 ນາງນີ້ ເຈົ້າທັງຫຼາຍວ່າຜູ້ໃດແຄວນຍິ່ງຈາ ເມື່ອນັ້ນຣາຊບຸດວ່າຕ່າງກັນຕາມຄຳນັກຕົນ ລ້ຳຣາຊບຸດ 4 ຄົນນັ້ນ ປະໂຣຫິດກັບອາມາດທັງຫຼາຍອະພິເສກຣາຊບຸດ ຜູ້ຍ້ອງນາງຜູ້ລຸນນັ້ນເປັນພະຍາເຂົາ 3 ຄົນນັ້ນເປັນອຸບປະຣາດແລ.

ຕິກະໄນ

ມີຊາຍຜູ້ໜຶ່ງຫຽວທາງດັງໄຟຫຸງເຂົ້າບໍ່ມອດ ຜູ້ໜຶ່ງຈີ້ຊີ້ນຮຸ້ງຊູດເອົາຊີ້ນທັງຕັບຫ່ຽວ ອັນໄຟໄໝ້ນັ້ນ ບິນໄປຈັບປາສາດໄໝ້ເສຍ ພະຍາເອົາເຂົາມາໄຕ່ດູໂທດ ເຂົາທັງ 3 ຄົນ ຜູ້ດັງໄຟ ມັນລວນເວຣາອາດຍາຄວນມອດບໍ່ມອດໃຫ້ຂ້າເສຍ ຜູ້ຈີ້ຊີ້ນກໍຄວນເຫັນກາເສຍເອົາຄົວດ້ວຍໜໍໂຫຣາກອດມາເສຍ ເຫດບໍ່ພິຈາລະນາດູຊາຕາ ເຄາະບ້ານເມືອງຫັ້ນແລ.

ນິທານເວຕານ

ໃນຍະໜຶ່ງພະຍາກະບິນລະຍັກ ຈັກໄປຣົບພະຍາເທວະທຳແລ ພະຍານັ້ນມີເທວະດາຢູ່ຮັກສາປະຕູເມືອງ ພະຍາກະບິນລະຍັກເອົາຣິພົນໄປເກີງເວຕາລະຍັກ ຈັກເອົາຍັກເປັນຫົວໜ້າ ຊັກເອົາມືເວຕາລະຍັກລົງຈາກໄມ້ນິໂຄດ ແລຍັກນັ້ນໄດ້ປາກດ້ວຍຜູ້ໃດ ຜູ້ນັ້ນໄດ້ປາກດ້ວຍມັນເກີງມີອິດທິຣິດທໍ່ໃດ ກໍຫຼູດມືເສຍແລ ພະຍາຊັກມືມັນລົງ ມັນຊັກເອົາຕຳນານໄດ້ 400 ນິຍາຍມາສອນພໍໃຫ້ຮູ້ແກ່ພະຍາບໍ່ອາດຈັກຊັກໄດ້ແລ ຍັກສ່ຽງຫົວທີ່ວ່າສັນນີ້ :

ຍັງມີມະນະວະ 4 ຄົນ ຜູ້ໜຶ່ງໄຄ່ກິນເຂົ້າຊາກພະຍາ ຂອງກິນພະຍາ 11 ອັນ ມານະວະຜູ້ນັ້ນເອົາຄຳພັນໜຶ່ງບູຊາພະຍາ ພະຍາຈຶ່ງປົງລົງໃຫ້ມັນກິນແລ. ຜູ້ໜຶ່ງໄຄ່ນອນກັບນາງນັກສະໜົມ ຜູ້ງາມນັ້ນ ຈ້າງຄຳພັນໜຶ່ງຈຶ່ງໄດ້ນອນ. ຜູ້ໜຶ່ງງົວມັນເສຍຕົວໜຶ່ງ ໂຈນລັກໄປ ມັນເອົາຊ້າງຕົວໜຶ່ງໄປຈ້າງຫາຈຶ່ງໄດ້ງົວມັນ.

ຜູ້ໜຶ່ງໄຄ່ກິນປາ ຂ້າປາແລຕົວຄ່າແລຮ້ອຍ ກະທາຊາຍມານະວະຜູ້ນັ້ນ ຂ້າຄົນຜູ້ໜຶ່ງເປັນເຫຍື່ອຈຶ່ງໄດ້ປາຕົວໜຶ່ງແລ.

ລ້ຳເຂົາທັງຫຼາຍມະຫາຣາຊເຈົ້າວ່າຜູ້ໃດ ແຄວນໄບ້ກວ່າເຂົາຈາ ພະຍາຂານວ່າ ເຂົາທັງ 4 ກໍໄບ້ຊູ່ຄົນແລ ຜູ້ຂ້າຄົນເປັນເຫຍື່ອປາ ແຄວນໄບ້ກວ່າ ເຫດວ່າປາຈັກກິນ ບໍ່ກິນກໍບໍ່ຮູ້ ຄັນວ່າພະຍາປາກດ້ວຍເວຕາລະຍັກຫຼູດມືໄປຢູ່ໄມ້ນິໂຄດແລ.

ພະຍາຊັກມືລົງເລົ່າ ຍັກສ່ຽງວ່າສັນນີ້ ດູຣາມະຫາຣາຊເຈົ້າ ຍັງມີມານະວະ 4 ຄົນ ໄປຮຽນສາຕະສິນໃນເມືອງຕັກກະສີລາ ມາ ຍາມນັ້ນ ຍັງມີຜີປ່າມາຕາມເຂົາຈັກກິນເຂົາ ຜູ້ໜຶ່ງມັນມົນນ້ຳຜາຍໃສ່ ກ້ວມຜີປ່າສິ້ນມັນຈຶ່ງມາບໍ່ໄດ້ ຄັນນ້ຳບົກຜີປ່າຕາມມາກິນເລົ່າຜູ້ໜຶ່ງເສກມົນໄຟໄໝ້ປ່າ ຜີຕາມມາບໍ່ໄດ້ ຄັນໄຟດັບມອດຈຶ່ງມາຕາມ ຜູ້ໜຶ່ງເລົ່າມົນເປັນລົມພິດ ປ່າຫອບສິ້ນ ຄັນຫາຍຜີປ່າເລົ່າມາຕາມ ຜູ້ໜຶ່ງເລົ່າຮວາດທະນູສິນຍິງພະຍາຜີເສື້ອຕາຍ ດ້ວຍນ້ຳ ດ້ວຍໄຟ

ດ້ວຍລົມ ແລະ ທະນູສິນມັນຈຶ່ງຕາຍແລ ລ້ຳເຂົາທັງຫຼາຍ ມະຫາ
ຣາຊເຈົ້າຈັກວ່າຜູ້ໃດແຄວນຍິ່ງຈາ ພະຍາວ່າ ຜູ້ຍິງທະນູສິນຍິ່ງກວ່າ
ເຂົາແລ.

ເມື່ອນັ້ນມັນຫລູດຈາກມືພະຍາແລ ພະຍາຈັບມັນລົງມາອີກ ເວຕາລະຍັກເລົ່າສຽງວ່າສັນນີ້ ຍັງມີພະຍາອົງໜຶ່ງ ມີລູກສາວຜູ້ໜຶ່ງ ງາມນັກ ຫາຜູ້ປຽບປານບໍ່ໄດ້ ຍັງມີທິບພະຍາທອນຜູ້ໜຶ່ງ ຈັກບູຊາຍົນ ມັນຣິບລູກສາວພະຍາຮ້ອຍເອັດ ມາຜູກໄວ້ດ້ວຍເຫຼັກໄປ່ພໍຜູ້ໜຶ່ງມັນຈຶ່ງ ໄປເອົາລູກສາວພະຍາຜູ້ງາມນັ້ນ ໄປຜູກໄວ້ແທບໄມ້ນິໂຄດຕົ້ນໜຶ່ງກັບ ລູກສາວພະຍາຮ້ອຍເອັດ ທິບພະຍາທອນຫາກກາງຍົນໄວ້ ຈັກຕັດຍົນ ໃຫ້ຕາຍ ເມື່ອນັ້ນຍັງມີຣາຊບຸດຜູ້ໜຶ່ງໄດ້ສາຕະສິນ ມາຫຼົງທາງໄປ ທີ່ໄມ້ນິໂຄດຕົ້ນນັ້ນ ເຫັນລູກສາວພະຍາທັງຫຼາຍ ຈຶ່ງຣວາດທະນູສິນຍິງ ສາຍຍົນນັ້ນຂາດໄດ້ປ່ອຍລູກສາວພະຍາທັງມວນ ຕ່າງຄືນຕ່າງເມືອສູ່ ເມືອງເຂົາ ຣາຊບຸດຕົນນັ້ນ ເອົາລູກສາວພະຍາຜູ້ງາມນັ້ນເປັນເມຍ ຂາເອົາກັນເດີນປ່າມາສູ່ເມືອງພໍ່ນາງ ເມື່ອນັ້ນບ່າວແຫ່ງພະຍາທັງ ຫຼາຍ ຈັບເອົາຣາຊບຸດຜູ້ນັ້ນວ່າ ມັນຜູ້ນີ້ເປັນທິບພະຍາທອນຜູ້ມາລັກ ເອົາລູກພະຍາເຈົ້າແຫ່ງເຮົາ ວ່າດັ່ງນັ້ນອາມາດຜູ້ໜຶ່ງໄດ້ຍິນຄຳພະຍາ ແຕ່ວັນອັນເສຍລູກສາວນັ້ນວ່າ ຜູ້ໃດຫາລູກສາວກູມາໄດ້ ຈັກໃຫ້ຂາ ເອົາກັນ ຈັກໃຫ້ມັນເປັນອຸບປະຣາຊແລ ອາມາດຜູ້ໄດ້ຍິນຄຳພະຍານັ້ນ ມັນກຸມເອົານາງໄວ້ທີ່ໜຶ່ງແລ້ວ ມັນເມືອໄຫວ້ພະຍາວ່າ ຂ້າໄດ້ທິບ ພະຍາທອນ ຜູ້ລັກລູກສາວມະຫາຣາຊເຈົ້າໄປນັ້ນແລ ບໍ່ຂ້າເສຍຢຽວ ເປັນອິນຕາຍແລ ເມື່ອນັ້ນ ພະຍາບໍ່ພິຈາລະນາ ກໍອານັດໃຫ້ອອກໄປ ຂ້າເສຍພາຍນອກວຽງ ຢ່າໃຫ້ເລືອດຕົກໃນວຽງ ເມື່ອນັ້ນເຂົາເອົາ ຣາຊບຸດໄປເຖິງປະຕູກ້ຳເໜືອເມື່ອຍາມຄ່ຳ ນາຍປະຕູວ່າ ກາງຄືນຈະ ເອົາຄົນໄປຂ້າຣີດບໍ່ມີ ຂ້າກາງວັນດາຍ ຢຽວທີ່ໄດ້ກິນແໜງດັ່ງພະຍາ ປັດຈັນຕະປະເທດ ໄດ້ຕັດມືພະຍາຣາຊທານີເສຍແລກິນແໜງດາຍ. ຍັງມີພະຍາໃຫຍ່ຜູ້ໜຶ່ງໃນຣາຊທານີ ໝໍໄຫຣາທວາຍວ່າ ເຄາະມະຫາ

ຣາຊເຈົ້າຈັກສິ້ນຊີວິດແລ ຜີວ່າບໍ່ໃຫ້ສິ້ນຊີວິດ ມະຫາຣາຊເຈົ້າຈຶ່ງເອົາ ເພດເປັນດັ່ງຄົນຜູ້ໜຶ່ງນຸ່ງເສື້ອຜ້າເກົ່າ ໜີຈາກເມືອງດັ່ງນັ້ນ ກໍຍັງຈັກເສຍ ອົງຄະແກ່ທ່ານດາຍໄດ້ເຈັດເດືອນ ຈຶ່ງພົ້ນເຄາະແລ ເມື່ອນັ້ນພະຍາ ຟັງຄຳໜໍ ຈຶ່ງເອົາເພດເປັນຜູ້ອື່ນ ເອົາຫໍ່ເຂົ້າກັບກົງລົງຈາກຜາສາດ ໄປແດນເມືອງພະຍາອົງໜຶ່ງຢາກເຂົ້າກໍໄຂ ຈັກກິນເຫັນເປັນດິນຊາຍ ຊັດເສຍຫາມາເອົາໄປກິນ ພະຍາໄປເອົາກໍຊ້ຳເປັນຊາຍ ພະຍາກ່າວວ່າ ອັນນີ້ຫາກເປັນເຄາະກູແລ ໜີໄປພາຍໜ້າເຫັນແຕງໄຮ່ ພະຍາເອົາ ໃສ່ກົງຊາວເມືອງຫ້ວງວ່າແບ້ເຂົາກັບມາ ເຫັນແຕງເປັນດັ່ງລູກແບ້ ໃນກົງພະຍາ ເຂົາຜູກເອົາເມືອຍື່ນແກ່ພະຍາ ປັດຈັນຕະປະເທດອັນ ຢູ່ໃນແດນພະຍາຜູ້ຜູກເອົານັ້ນ ພະຍາປັດຈັນຕະປະເທດວ່າສັນນີ້ ມັນ ນີ້ຮູບໃສມັນຍັງໜຸ່ມໄປເປັນພວກຂັນທີເທີ້ນວ່າອັນກໍໃຫ້ໄວ້ແທ້ ຍັງມີໃນ ວັນໜຶ່ງ ພະຍາໄປຍ້າຍຄືນກອດແຫວນໄວ້ ຍັງມີນົກຂຸ້ມຕົວໜຶ່ງ ພະຍາລ້ຽງມາສັບກິນຫາຜູ້ອື່ນເຫັນບໍ່ໄດ້ ພະຍາມາບໍ່ເຫັນແຫວນ ມັນ ບອກວ່ານົກຂຸ້ມກິນ ພະຍາບໍ່ເຊື່ອ ບັງຄັບໃຫ້ຕັດມືເສຍ ເຂົາຕັດເສຍ ຕາມຄຳພະຍາ ມືຂາດທັງສິບນີ້ວ ເມື່ອນັ້ນພະຍາຣາຊທານີນັ້ນໄປ ທຸ່ງວໍກິນ ນານນັກເວລານັ້ນເຄາະຕົວສິ້ນແລ້ວ ພະຍາອິນເອົາເພດ ເປັນດັ່ງຄົນມາຂາຍເຂົ້າໜົມ ເມື່ອນັ້ນລູກຈ່າລ້ຽງງົວກໍເອົາເຂົ້າໜົມໄວ້ ສິບລູກ ຈ່າງົວຜູ້ແຄວນແກ່ວ່າສັນນີ້ ອິດູຊາຍຜູ້ມີກຸດນີ້ ມາເຮົາໂຮມ ເຂົ້າໜົມສິບລູກນີ້ໃຫ້ແກ່ມັນເທີ້ນ ເຂົາກໍໃຫ້ແກ່ພະຍາໆໄດ້ກິນເຂົ້າ ໜົມສິບລູກນັ້ນນີ້ວມືກໍງອກມາດີທັງສິບນີ້ວດັ່ງເກົ່າ ພະຍາຮູ້ວ່າເຄາະ ຕົນພົ້ນຈຶ່ງຄືນມາສູ່ພະຍາປັດຈັນຕະປະເທດໆກາມຮູ້ວ່າ ເປັນພະຍາຜູ້ ໃຫຍ່ກວ່າຕົນຈຶ່ງໄຫວ້ນົບ ໃຫ້ອົດໂທດ ແລ້ວເອົານ້ຳຫອມມາຫົດ ແລ້ວນຳເມືອສູ່ເມືອງຣາຊທານີດັ່ງເກົ່າແລ ຢ້ານກິນແໜງດັ່ງພະຍາ ປັດຈັນຕະປະເທດບໍ່ໃຫ້ອອກແລ.

ເຂົາເລົ່າໄປສູ່ປະຕູກ້ຳວັນອອກ ນາຍປະຕູວ່າ ບູຮານບໍ່ຫ່ອນຂ້າ ຄົນເມື່ອຄືນ ຄັນຂ້າຢ້ານກິນແໜງ ດັ່ງພະຍາຕົນໄດ້ຂ້າໜໍໂຫຣາ

ເສຍວັນນັ້ນແລ ຍັງມີຫມໍຜູ້ໜຶ່ງຮູ້ກວ່າຫມໍທັງຫຼາຍ ມັນຫາຍາມ
ໃຫ້ແກ່ພະຍາປຸກເສົາໂຮງ ຄັນປຸກແລ້ວເສົາໂຮງຈັກເປັນຄຳແລ ພະຍາ
ໃຫ້ເອົາມາໄວ້ແທບຮູເສົາທັງມວນ ຄັນເກີງຍາມດີໃຫ້ຕີຄ້ອງໄຊໃຫ້ຄົນ
ທັງຫຼາຍປຸກເສົາ ບໍ່ໄດ້ດັ່ງໃຈ ຄາດຍາມດີຈຶ່ງໄດ້ປຸກເສົາໄດ້ແລ ບໍ່ເປັນ
ຄຳດັ່ງຫມໍວ່ານັ້ນ ພະຍາບໍ່ພິຈາລະນາຄວັກຕາຫມໍເສຍ ເມື່ອນັ້ນຍັງ
ມີຍາຍເຖົ້າຜູ້ໜຶ່ງ ຂຸດຂຸມກ້ວຍໄວ້ ຄັນໄດ້ຍິນສຽງຄ້ອງມັນເອົາຕົ້ນກ້ວຍ
ນັ້ນໃສ່ຂຸມ ກ້ວຍໃຫຍ່ມາເປັນລູກຄຳທັງມວນ ມັນເອົາໄປກວາຍແກ່
ພະຍາໆເຫັນກ້ວຍເປັນຄຳກໍກາມ ມັນບອກຕາມດັ່ງມັນໄດ້ປູກ ພະຍາ
ຈຶ່ງກິນແໜງເສຍດາຍຫມໍ ເສົາໂຮງນີ້ໃຫຍ່ປຸກຍາກ ຄັນຕີຄ້ອງປຸກບໍ່ໄດ້
ກາຍຍາມດີ ປຸກຈຶ່ງໄດ້ແລ ຮຽກວ່າທ້າວພະຍາບໍ່ພິຈາລະນາແລກະທຳ
ຢຽວເປັນດັ່ງນັ້ນບໍ່ໃຫ້ອອກແລ.

ເຂົ້າໄປສູ່ປະຕູທິນໃຕ້ ນາຍປະຕູວ່າກາງຄືນບໍ່ໃຫ້ອອກແລ
ເຫດອັນໃດບໍ່ໄດ້ພິຈາລະນາຍ່ອມກິນແໜງ ດັ່ງພະຍາຜູ້ໜຶ່ງຈັກໃຫ້
ຂ້າສອງເຖົ້າຢູ່ຮັກສາປ່າໝາກມ່ວງຄຳວັນນັ້ນ ຍັງມີຊາຍຜູ້ໜຶ່ງຮູ້ປູກ
ໝາກມ່ວງ ມີຣົດກວ່າທັງຫຼາຍ ມັນມາປູກເປັນລູກ ຍັງມີລູກໜຶ່ງຫຼົ່ນ
ຕົກ ງູເຫົ່າຕົວໜຶ່ງຢູ່ໃນຕົ້ນມ່ວງນັ້ນ ໄດ້ຍິນໝາກມ່ວງຕົກ ມັນ
ແລ່ນອອກຈາກຮູມາຕອດລູກໝາກມ່ວງນັ້ນ ແລ້ວເຂົ້າຢູ່ຮູດັ່ງເກົ່າຂາ
ສອງເຖົ້າມາເຫັນລູກໝາກມ່ວງນັ້ນໃຫຍ່ງາມນັກ ຂາເອົາເມືອຍື່ນ
ແກ່ພະຍາ ພະຍາໃຫ້ພວກຂັນປອກດູ ບໍ່ມີຣົດເຫັນວ່າພິດງູມີໃນພະ-
ຍາໃຫ້ຂັນກິນມັນດິ້ນຕາຍ ພະຍາວ່າຂານີ້ຮູ້ແຕ່ງວ້ອນພິດ ເອົາໄປ
ຂ້າເສຍເທີ້ນ ບັດນີ້ ຍັງມີອາມາດຜູ້ໜຶ່ງຢັ່ງຮູ້ເຫດອັນນັ້ນ ຈຶ່ງຫ້າມພະ
ຍາວ່າ ມະຫາຣາຊເຈົ້າຄວນພິຈາລະນາດູ ໃນຕົ້ນມ່ວງນັ້ນດີດາຍ
ເມື່ອອາມາດຜູ້ນັ້ນມັນໄປເກີງທີ່ນັ້ນ ມັນໂຍນກ້ອນດິນຂຶ້ນຕົກລົງດູ ງູ
ໄດ້ຍິນດິນຕົກ ແລ່ນອອກມາພົ່ນພິດຕອດກ້ອນດິນ ແລ້ວເຂົ້າຢູ່ຮູມັນ
ແລ ອາມາດຈຶ່ງໃຫ້ເອົາງູຕົວນັ້ນໄປເສຍອາມາດຈຶ່ງເອົາໝາກມ່ວງໃຫຍ່
ງາມນັກຫຼົ່ນຕົກລົງ ເອົາເມືອກວາຍແກ່ພະຍາ ພະຍາກິນມີຣົດອັນ

ແຊບໄປທົ່ວຕົນທັງມວນ ພະຍາກໍ່ແຫນງວ່າ ແຂວງກູບໍ່ຟັງຄວາມອາ-
ມາດຈັກໄດ້ຂ້າເສຍແທ້ນໍ ຢຽວເປັນສັນນີ້ ກູບໍ່ໃຫ້ອອກແລ.

ເຂົາເລົ່າໄປສູ່ປະຕູວັນຕົກ ນາຍປະຕູບໍ່ໃຫ້ອອກ ຊັກເອົານິທານມາວ່າສັນນີ້ ຍັງມີຜູ້ໜຶ່ງລ້ຽງກົບຕົວໜຶ່ງແລ ກົບຕົວນັ້ນຮູ້ປາກຮູ້ຮັກສາເຈົ້າດີນັກ ເມື່ອນັ້ນເມຍເຈົ້າມັນມີຊູ້ ມັນເຫັນຜູ້ຊູ້ມານອນດອມເມຍເຈົ້າມັນ ເມຍເຈົ້າມັນຄຶດວ່າ ກູບໍ່ອຸບບາຍຂ້າກົບຕົວນີ້ເສຍບໍ່ດີ ມັນຈິ່ງໃຫ້ສາຄັນແກ່ແມ່ມົດ ແມ່ມົດວ່າຂວັນເມຍມຶງ ຢາກກິນກົບແຫ່ງເຊື່ອນັ້ນດາຍ ຜີວ່າມຶງບໍ່ຂ້າກົບຕົວນັ້ນ ສູ່ຂວັນເມຍມຶງ ເມຍມຶງຈັກຕາຍຊະແລ ມັນມາເອົາກົບໄປວ່າຈັກຂ້າ ມັນເອົາມີດມາພາດຄໍກົບໄວ້ລອງດູ ກົບບໍ່ຮ້ອງມັນຈຶ່ງວ່າເມື່ອແຫລວ ເອົາມຶງວັນນັ້ນມຶງຍັງຮ້ອງດາຍເມື່ອກູຈັກຂ້າມຶງ ສັງບໍ່ຮ້ອງຈາ ກູຂ້າມຶງເສຍກໍຫາກແລ້ວແລກົບຂານເຈົ້າມັນວ່າ ຂ້າເສິກກູ ກູຮ້ອງຫາເຈົ້າແລ ບັດນີ້ເຈົ້າກູຈັກຂ້າເສຍຂ້າຈັກຮ້ອງຫາຜູ້ໃດຈາ ແມ່ນວ່າຮ້ອງກໍຫາປະໂຍຊະນະອັນໃດບໍ່ໄດ້ແລ ເມື່ອໄຟລຸກເອົານໍ້າມາມອດດາຍ ເມື່ອໄຟຫາກລຸກໃຕ້ນໍ້າສັນນີ້ຫາອັນຈັກມອດບໍ່ໄດ້ແລ ກົບວ່າສັນນີ້ ຊາຍຜູ້ນັ້ນພິຈາລະນາແລ້ວບໍ່ຂ້າກົບ ກົບກໍບອກອາການອັນເມຍມັນມີຊູ້ ກັບຊາຍຜູ້ນັ້ນມັນຮູ້ໂທດເມຍຕົນຢຽວໄດ້ຂ້າກົບ ມັນຄຶດກິນແຫນງດາຍຢຽວເປັນສັນນີ້ພິຈາລະນາດູກ່ອນ ນາຍປະຕູບໍ່ໃຫ້ອອກແລ.

ເມື່ອນັ້ນລວດຮຸ່ງແຈ້ງຈວນເສຍ ເຂົາມາບອກອາການ ອັນນາຍປະຕູທັງຫຼາຍບໍ່ໃຫ້ອອກແກ່ພະຍາ ພະຍາຣາຊທານີ ຈິ່ງໃຫ້ໄປເອົາຣາຊບຸດຜູ້ນັ້ນມາຖາມດູແລ້ວແລເອົາລູກສາວຕົນມາຖາມດູຈິ່ງຮູ້ວ່າຣາຊບຸດຕົນນີ້ມີຄຸນແກ່ລູກສາວຕົນ ແລະລູກພະຍາຮ້ອຍເອັດຕົນຈຶ່ງອຸດສາພິເສກຣາຊບຸດກັບລູກສາວຕົນໃຫ້ເປັນພະຍາ ສ່ວນນາຍປະຕູ 4 ຄົນນັ້ນ ພະຍາເອົາມາເປັນເສນາບັດດີ ນາຍປະຕູຜູ້ໜຶ່ງແຄວນເປັນໃຫຍ່ແລ ຕໍານານອັນນີ້ ເວຕາລະຍັກຂາຊັກເອົາມາສ່ຽງແກ່ພະຍາກະບິນລະຍັກວ່າ ມະຫາຣາຊເຈົ້າວ່າ 4 ຄົນເຂົານັ້ນ ຜູ້ໃດ

ແຄວນຍິ່ງຈາ ພະຍາວ່ານາຍປະຕູຜູ້ຫົວທີ່ນັ້ນຮຽກວ່າເປັນດັ່ງເຂັມແລ 3 ຄົນເຂົ້ານັ້ນເປັນດັ່ງໄຫມ ຜູ້ກ່ອນແຄວນຍິ່ງແລ ຄັນພະຍາວ່າດັ່ງນັ້ນ ເວຕາລະບັກຫລູດມີຂຶ້ນໄປຢູ່ໄມ້ນິໂຄດດັ່ງເກົ່າແລ.

ນິທານນາງຕັນໄຕ

ໃນຍະໜຶ່ງ ຍັງມີພະຍາຕົນໜຶ່ງປຸ່ມນອນດ້ວຍເມຍແລຄົນແລນາງ ນາງຜູ້ໃດມານອນນຳ ພະຍາຍ່ອມຂ້າເສຍ ນາງທັງຫຼາຍຕາຍມາກນັກ ຍັງມີນາງຜູ້ໜຶ່ງມີຜະຫຍາມາກມານອນດອມພະຍາ ມັນບໍ່ຫຼັບແລ້ວເມື່ອປະກົມຍາມນັ້ນ ນາງວ່າສັນນີ້ ເພິ່ງມີມຸນຕີຕ່າງໆດັ່ງມຸນຕີພະຍາເວຊະມາທິດ ບໍ່ເພິ່ງມີມຸນຕີຜູ້ຮ້າຍດັ່ງມຸນຕີຜູ້ໜຶ່ງ ແຫ່ງພະຍາເວຊະມາທິດນັ້ນ ເພິ່ງມີນາງອັກຄະມະເຫສີ ດັ່ງນາງປັນຈະກັນລະຍານີ ບໍ່ເພິ່ງມີນາງຜູ້ຮ້າຍດັ່ງນາງຣັດຊະເກສອນແລ.

ເມື່ອນັ້ນພະຍາຈິ່ງຖາມວ່າ ນາງຜູ້ຊື່ປັນຈະກັນລະຍານີເປັນສັນໃດ ນາງຜູ້ນັ້ນຈິ່ງຊັກຕຳນານມາແກ່ພະຍາວ່າສັນນີ້ :

ຍັງມີພະຍາຕົນໜຶ່ງຊື່ ເວຊະມາທິດ ຫາລູກຊາຍບໍ່ໄດ້ ທໍ່ມີລູກຍິງຜູ້ໜຶ່ງ ຊື່ວ່າ ນາງປັນຈະກັນລະຍານີ ພະຍາວ່າຈັກເອົາຜົວໃຫ້ແກ່ນາງ ເພື່ອບໍ່ໃຫ້ຂາດພົງສາຕົນເສຍ ເມື່ອນັ້ນ ນາງຮຳເພິງວ່າລູກທ້າວພະຍາທັງຮ້ອຍເອັດນີ້ ບໍ່ເພິ່ງເປັນຜົວກູ ເພື່ອເຂົາຫາຜະຫຍາບໍ່ໄດ້ແລ ຄວນກູເອົາເພດເປັນດັ່ງຄົນໃບ້ຢູ່ແລ ຢ່າເອົາຜົວເທີ້ນ ແຕ່ນັ້ນນາງຢູ່ບໍ່ປາກ ພະຍາຜູ້ພໍ່ຈິ່ງບອກແກ່ພະຍາທັງຮ້ອຍເອັດວ່າ ຜູ້ໃດມາປາກຈາກັບລູກກູ ໃຫ້ນາງປາກດອມຈັກໃຫ້ເປັນເມຍມັນຜູ້ນັ້ນແລ ເມື່ອລູກພະຍາຮ້ອຍເອັດຮູ້ຂ່າວ ຕ່າງຄົນຕ່າງມາປາກຈາດອມນາງ ນາງກໍບໍ່ປາກຈາດອມເຂົາສັກຄົນແລ ກັດນັ້ນ ເວຊະມາທິດຣາຊບຸດເອົາຫົວໃຈໄປໃສ່ຂັນໝາກນາງ ພອຍຊຶມຂັນໝາກວ່າ ດູລາຂັນໝາກກູຈັກເມືອແລ ຈັກຖາມບັນຫາອັນໜຶ່ງ ເຊິ່ງມີງກ່ອນຍັງມີມານະວະ 4 ຄົນ ໄປຮຽນສາຕະສິນໃນເມືອງຕັກກະສິລາ ມານອນແທບຫ້ວຍ

ໜຶ່ງເນື້ອຄະນອງນັກ ເຂົາຫຼັບບໍ່ໄດ້ເຂົາເອົາໄມ້ທອງມາຄວັດຮູບນາງ
ຜູ້ໜຶ່ງງາມນັກ ແລ້ວໃຫ້ຮູບນັ້ນທະຣົງເຄື່ອງປະດັບ ແລະຮູ້ປາກຈາເຂົາ
ຊິງກັນເອົາເປັນເມຍ ດັ່ງໃຈມຶງໃຫ້ໄດ້ແກ່ຜູ້ໃດແຄວນຊອບຈາ ຂັນ
ໝາກວ່າຄວນໄດ້ແກ່ຜູ້ອວາຍຫົວໃຈ ແລນາງຊັດຂັນໝາກເສຍວ່າ
ຂັນໝາກອັນກຸ່ອຍຮ້າຍ ຢ່າຢູ່ໃນສຳນັກກູ ໄຕ່ຄຳບໍ່ຊອບ ໃຫ້ຜູ້ຄວັດ
ຮູບເປັນພໍ່ ຜູ້ໃສ່ເຄື່ອງປະດັບເປັນພີ່ຊາຍຜູ້ໃສຫົວໃຈເປັນດັ່ງແມ່
ຜູ້ໃສ່ອິງຄະຊາດໃຫ້ເປັນຜົວ ເຫດວ່າຂາໄດ້ຮູ້ທີ່ລັກອາຍກັນ ໃຫ້ຂາ
ອຸບປະກາກພວກນັ້ນຊອບແລ ນາງປາກທໍ່ນັ້ນເລົ່າບໍ່ປາກແລ ກັດນັ້ນ
ຣາຊບຸດເອົາໃຈໃສ່ໝໍ້ແລ້ວສ່ຽງວ່າ ດູຣາໝໍ້ ຍັງມີແມ່ຄຳຣາງ 4
ຄົນ ເຫັນໂຈມຜູ້ໜຶ່ງງາມນັກ ຜິດພະຍາໆໃຫ້ເອົາໄປສຽບເສຍແທບ
ປະຕູວຽງໄປ່ທັນຕາຍ ເຂົາຜູ້ໜຶ່ງເອົາຄຳພັນໜຶ່ງໄປໄກ່ເອົາດອມພະ
ຍາໄດ້ແລ້ວ ເຂົາຊິງກັນເອົາເປັນຜົວ ມຶງຈັກວ່າຄວນໄດ້ແກ່ຜູ້ໃດ
ແຄວນຊອບຈາ ໝໍ້ວ່າຄຳທັງພັນຫາຍາກ ຄວນໃຫ້ແກ່ຜູ້ເອົາຄຳໄປ
ໄກ່ແລ ນາງທຳຫມໍ້ຊັດເສຍວ່າ ຢ່າຢູ່ໃນສຳນັກກູໄຕ່ຄຳບໍ່ຊອບ ຜູ້ເຈົ້າ
ຄຳໃຫ້ເປັນແມ່ ຜູ້ຫາຍປາມາໃສ່ໃຫ້ເປັນດັ່ງພໍ່ ຜູ້ຄາມາລ້ຽງເປັນດັ່ງພີ່
ຜູ້ຮູ້ທີ່ເນົ່າເໜັນໃຫ້ເປັນເມຍ ເຫດວ່າ ໄດ້ຮູ້ທີ່ເພິດລັກອາຍດາຍໃຫ້
ຂາອຸບປະກາກເຂົາຝູງນັ້ນຊອບແລ ນາງຈາທໍ່ນັ້ນແລ້ວ ກໍຢູ່ບໍ່ປາກ
ເມື່ອນັ້ນວິຊະຣາຊບຸດວ່ານາງນັ້ນຫາມໍຣິຍາດບໍ່ໄດ້ ເປັນກາລະຂືນິດາຍ
ກູເປັນລູກທ້າວພະຍາປານດັ່ງນີ້ ມາປາກຕ້ານດອມມັນ ມັນບໍ່ປາກ
ດອມ ຂັນໝາກແລຫມໍ້ອັນຫາວິນຍານບໍ່ໄດ້ແລມາປາກດອມ ນາງ
ຜູ້ນີ້ມັນຫາຄຳລັກອາຍບໍ່ໄດ້ ບໍ່ຄວນກູກັດຕີໃນນາງຜູ້ນີ້ແລ ວ່າດັ່ງນັ້ນ
ແລ້ວລວດລົງໄປ ເມື່ອນັ້ນນາງປັນຈະກັນລະຍານີ ຣິມເພິງວ່າ ແຕ່ລູກ
ທ້າວພະຍາທັງຫຼາຍມາສູ່ກູໄດ້ຮ້ອຍເອັດນີ້ແລ ຈັກມີຄຳອັດສະຈັນດັ່ງ
ຣາຊບຸດຕົນນີ້ ບໍ່ມີສັກຄົນ ເຈົ້າຕົນນີ້ຂອງອັນຫາວິນຍານບໍ່ໄດ້ກໍຮູ້ປາກ
ດອມສັນນີ້ ຄວນກູເອົາເປັນຜົວແລ ນາງຣິບແລ່ນກອດເອົາວິຊະມາທິດ
ຣາຊກຸມານນັ້ນໄວ້ແລ ພະຍາຜູ້ພໍ່ຮູ້ກໍຍິນດີ ຈຶ່ງໃຫ້ອຸດສາພິເສກຂາ

ເປັນທ້າວພະຍາແທນຕົນຊື່ວ່າ ເວຊະມາທິດແລມົນຕີຜູ້ໄດ້ຮຽນມົນ ວັນນັ້ນກໍໄດ້ເປັນເສນາບັດດີແລ ຢູ່ໄດ້ເຫິງນານນັກ ໃນວັນໜຶ່ງ ພະຍາກັບມຸນຕີຜູ້ນັ້ນໄປແອ່ວຫຼິ້ນໃນປ່າດອມກັນ ເຫັນຊາກຫວາຍຕົວໜຶ່ງ ພະຍາຈິ່ງເອົາຫົວໃຈເຂົ້າໃນຫວາຍໃຫ້ເປັນຕົວແລ່ນໄປມາຫຼິ້ນດັ່ງນັ້ນ ມົນຕີຈິ່ງເອົາໃຈເຂົ້າໃນຮູບພະຍາອັນເປົ່ານັ້ນ ແລ້ວລະຮູບມັນເສຍຮີບພະລັນເຂົ້າມາສູ່ເມືອງ ຫົວໃຈມຸນຕີເຂົ້າມາຢູ່ໃນຮູບພະຍາດັ່ງນັ້ນ ນາງປັນຈະກັນລະຍານິເຫັນຫຼາກວ່າ ຕົນເຈົ້າພະຍາກູແທ້ ມໍຣິຍາດອັນຢູ່ອັນໄປບໍ່ເປັນດັ່ງເກົ່າ ອັນນີ້ບໍ່ໃຊ່ເຈົ້າກູແລ ກູໄປ່ຄວນໃຫ້ເນື້ອຄີງກູແລ ອັນໜຶ່ງຜູ້ມຸນຕີກໍບໍ່ເຫັນມາດາຍ ນາງບໍ່ຢູ່ບໍ່ນອນກັບຮູບພະຍາມີນນານ ເມື່ອນັ້ນ ຫົວໃຈພະຍາອັນຢູ່ໃນຫວາຍນັ້ນ ໄປດູດກິນນ້ຳຄຸງຄາ ຍັງມີນົກແຂກເຕົ້າຕົວໜຶ່ງຕາຍໄຫຼມາ ພະຍາຈິ່ງຮີບ ເອົາຫົວໃຈເຂົ້າໃນຊາກນົກແຂກເຕົ້າ ແລ້ວບິນມາສູ່ປາສາດນາງພະຍາ ຈັບຢູ່ເບັ້ງຊອນໜ້າຕ່າງວ່າສັນນີ້ ເຂົາວ່າບໍ່ຄວນເຊື່ອຜູ້ຍິງໃນໂລກນີ້ແລວ່າອັນກໍມີແທ້ນໍ ເມື່ອນັ້ນນາງຄະນິງວ່ານົກແຂກເຕົ້າຕົວນີ້ ມາກ່າວຍັງຄຳດັ່ງນີ້ ເປັນດັ່ງຣືຈານາງກ່າວ ກູນີ້ໃຊ່ຍິງສາມານດາຍ ຜິວ່າຜົວກູຢູ່ທີ່ໃດແລ ຍັງຮູ້ແຈ້ງບອກໃຫ້ສິມຣິດທີດັ່ງໃຈເທີ້ນ ດູຣານົກມີງມາແຕ່ທີ່ໃດ ເປັນດັ່ງກູຈັກຮູ້ສຽງປາກຈາທ່ານນີ້ຈາ ນົກກ່າວວ່າ ນາງພະຍາຍິ່ງຫຼາກສິ່ງໃດຈາ ນາງພະຍາວ່າກູຍິ່ງຫຼາກດ້ວຍອິຣິຍາບົດບໍ່ເປັນດັ່ງເກົ່າແລ ພະຍາເຈົ້າໄປຫຼິ້ນໃນປ່າແລມານີ້ຮູບພະຍາເຈົ້າແທ້ ແຕ່ມໍຣິຍາດໃຊ່ພະຍາເຈົ້າ ເຫດດັ່ງນັ້ນກູບໍ່ເຊື່ອແລ ຣອຍວ່າພະຍາເຈົ້າເອົາຫົວໃຈເຂົ້າຮູບອັນອື່ນ ຜູ້ມຸນຕີເອົາຫົວໃຈມັນເຂົ້າມາຢູ່ໃນຮູບພະຍາເຈົ້າບໍ່ສິງແລ ປະຫຍາປານດັ່ງກູນີ້ ຍັງເພິງສະແຫວງຫາຫົວໃຈຜົວກູໄດ້ ດັ່ງນາງຜູ້ຊື່ວ່າໂສພານັ້ນແລ ເມື່ອນັ້ນນົກແຂກເຕົ້າຖາມວ່າ ນາງຜູ້ມີຊື່ວ່າໂສພານີ້ເປັນດັ່ງຣືຈາ ນາງພະຍາຈິ່ງຊັກຕຳນານໃຫ້ນົກແຂກເຕົ້າຟັງວ່າ ຍັງມີພະຍາຕົນໜຶ່ງຊື່ວ່າ ສາມັນຕະຣາດ ມີຜະຫຍານັກ ມີນາງອັກຄະມະເຫສີຜູ້ໜຶ່ງຊື່ວ່າ ສີໂສພາ ພະຍາຕົນນັ້ນໄປ່ເຖົ້າຮີບຕາຍ

ນາງຜູ້ນັ້ນແຕ່ງໂກດຄຳໄວ້ໃສ່ຊາກພະຍາບໍ່ເນີ່າ ນາງຈຶ່ງຮຳເພິງວ່າ
ກູນີ້ ຍັງສະແຫວງຫາຢາທິບແລະ ໂມນທິບມາໃສ່ຊາກຜົວກູແລ ນາງຈຶ່ງ
ເອົາເພດເປັນຜູ້ອື່ນໄປຫາສາຕະສິນນັ້ນທົ່ວທຸກເມືອງ ມາເຖິງເມືອງ
ພະຍາໜຶ່ງມີເກີບແກ້ວທິບ ນາງຮູ້ຈຶ່ງອຸບາຍໄປປາໄສກັບນາງເຖົ້າຜູ້
ໜຶ່ງ ອັນເປັນຈ່າສວນດອກໄມ້ພະຍາ ນາງຈຶ່ງຄ້ອງດອກໄມ້ໃຫ້ຍິງ
ເຖົ້າເອົາໄປຖວາຍແກ່ພະຍາ ພະຍາເຫັນດອກໄມ້ງາມນັກຈຶ່ງຖາມ
ຍິງເຖົ້າ ຍິງເຖົ້າບອກແກ່ພະຍາວ່າ ນາງຜູ້ໜຶ່ງມີຮູບໂສມງາມຍິ່ງ
ມາຄ້ອງແລ ພະຍາຈຶ່ງໃຫ້ແຕ່ງຣົດໄປຮັບເອົານາງນັ້ນກັບຈ່າສວນມາ
ນາງພະຍາຈັກຂຶ້ນເມືອສູ່ພະຍາ ນາງບໍ່ໃຫ້ນາງຈ່າສວນເມືອ ວ່າກູ
ຈັກໃຫ້ເປັນໜັກແກ່ມຶງກ່ອນ ກູຍັຍໃຫ້ພະຍາມາເຖິງເຮືອນນີ້ດີຫລີ
ດາຍ ນາງຈ່າສວນກໍຢູ່ແລ. ເມື່ອນັ້ນນາງເມືອເຖິງພະຍາໆເອົານາງ
ເມືອສູ່ຜາສາດທີ່ນອນຕົນ ນາງເຫັນເກີບແກ້ວແຂວນໄວ້ຈຶ່ມແສຕະ
ສັດນາງທັກວ່າ ມະຫາຣາຊເຈົ້າເປັນທ້າວພະຍາ ແຂວນເກີບໄວ້ເທິງ
ເໜືອຫົວສັນນີ້ ບໍ່ຄວນແລ ພະຍາວ່າເກີບທິບຣາດາຍ ຜູ້ໃດໄປ່ເຖົ້າ
ແລຕາຍເອົາເກີບທິບນີ້ຊຸບນ້ຳຫົດດູ ກໍຄືນມາດາຍ ຜີຈັກຫຽວຫາງ
ສອດເກີບທິບແລວັນໄປໄດ້ຮ້ອຍໂຍດດີຫລີ ເມື່ອນັ້ນນາງຈຶ່ງອຸບາຍວ່າ
ມະຫາຣາຊເຈົ້າເອົາຂ້າມານີ້ເພື່ອຈັກໃຫ້ເປັນມັງຄະລະ ບັດນີ້ບໍ່ເປັນ
ມັງຄະລະ ຜີຈັກໃຫ້ເປັນມັງຄະລະແທ້ ພະຍາເຈົ້າລຸກໄປເຖິງນາງຈ່າ
ສວນຂໍເອົາຂ້າດອມມັນດີດາຍ ມັນບໍ່ໃຫ້ດັ່ງຣີຈັກເປັນມັງຄະລະຈາພະ
ຍາວ່າກໍດີແລ ຈ່າສວນກໍເປັນຂ້າ ຣາດາຍ ມັນຈັກເປັນລຸງຕາຣາກໍ
ຄວນແລ ພະຍາຫໍ່ຂອງຝາກ ແລ້ວຈຶ່ງໄປຂໍເອົາເຊີງນາງຈ່າສວນ
ແລ ເມື່ອນັ້ນນາງສີໄສພາຣິບເອົາເກີບມາສອດຕີນ ແລ້ວໜີມາດ້ວຍ
ອານຸພາບເກີບທິບ ມາຮອດເມືອງຕົນ ເອົາເກີບທິບຊຸບນ້ຳຫົດຊາກ
ຜົວຕົນ ພະຍາກໍຄືນມາເປັນຄົນສັນນີ້ ກູກໍຍັງອາດອຸບາຍຊຸບຜົວຕົນຄືນ
ມາໄດ້ແລ ຕາບໃດກູບໍ່ສະແຫວງຫາຫົວໃຈຜົວກູໄດ້ ກູກໍບໍ່ຢູ່ແລເມື່ອ
ນັ້ນນົກແຂກເຕົ້າບອກອາການອັນມຸນຕີ ເຊິ່ງເອົາຮູບຕົນເປັນພະຍາ

ນັ້ນແລ ດັ່ງນັ້ນ ນາງຈຶ່ງອຸບາຍ ເຊີ່ງຮູບພະຍາອັນມຸນຕີເອົາຫົວໃຈ ເຂົ້ານັ້ນວ່າ ຜູ້ຂ້າໄດ່ຢາກຮູ້ຣິດມະຫາຣາຊເຈົ້າແລ ຍັງຈັກສຳແດງ ໃຫ້ຂ້າເຫັນໄດ້ບໍ່ຈາ ມຸນຕີວ່າໄດ້ແລ ນາງໃຫ້ເອົາເຍືອງຕາຍຕົວໜຶ່ງ ມາ ເມື່ອມຸນຕີຈັກໄດ່ໃຫ້ນາງຮູ້ອັນວິເສດແຫ່ງຕົນ ລວດກອດຫົວໃຈ ໃສ່ເຍືອງຕາຍລຸກເປັນຕົນຂຶ້ນ ເມື່ອນັ້ນພະຍາເວຊະມາທິດ ຣີບເອົາ ຫົວໃຈຕົນອອກຈາກຮູບນົກມາເຂົ້າຮູບຕົນດັ່ງເກົ່າແລ ກຸ້ດນັ້ນກໍອານັດ ໃຫ້ຂ້າເຍືອງເສຍ ຂ່າຜົວເມຍຢູ່ສະເຫວີຍຣາຊການບ້ານເມືອງ ດັ່ງ ເກົ່າແລ.

ສະພາວະອັນເປັນທ້າວພະຍານີ້ ຄວນຫານາງອັກຄະມະເຫສີ ຜູ້ດີດັ່ງພະຍາເວຊະມາທິດ ມີນາງປັນຈະກັນລະຍານີນັ້ນ ບໍ່ຄວນຈັກ ມີມຸນຕີຜູ້ຮ້າຍດັ່ງຜູ້ເອົາຫົວໃຈເຂົ້າເຊີ່ງຮູບພະຍານັ້ນແລ.

ນາງເອົາຕຳນານອັນນີ້ມາຈາກັບດອມພະຍາຕອນກາງຄືນແລ ເມື່ອນັ້ນພະຍາຊ້ຳກາມວ່າ ມີງນາງວ່າມຸນຕີຜູ້ດີແຫ່ງພະຍາເວຊະ ມາທິດນັ້ນເປັນສັນໃດນັ້ນຈາ ນາງຊັກຕຳນານມາກ່າວວ່າ :

ຍັງມີພະຍາຕົນໜຶ່ງຊື່ວ່າ ເວຊະມາທິດ ຍ່ອມມີສຸກແຕ່ນ້ອຍມາ ບໍ່ຫ່ອນຮູ້ຄຳທຸກຈັກເທື່ອ ຍ່ອມກາມມຸນຕີທັງຫຼາຍວ່າສັນນີ້ ຊື່ອັນວ່າ ທຸກນີ້ ກູບໍ່ຫ່ອນໄດ້ເຫັນ ກູຂໍຮູ້ຂໍເຫັນເທີ້ນ ຍ່ອມວ່າສັນນີ້ຊູວັນ ອາມາດທັງຫຼາຍຈຶ່ງຫາທວາຍຕົວໜຶ່ງມາຫ້າງໃສ່ອານຕາງມ້າ ໃຫ້ ພະຍາຂີ່ ຄັນພະຍາຂຶ້ນຂີ່ ທວາຍກໍແລ່ນໄປສຸດແດນເມືອງກໍບໍ່ຢູ່ ຂ້າມພົ້ນແດນສອງເມືອງຈຶ່ງຢູ່ ພະຍາເປັນທຸກນັກ ຄັນພະຍາລົງຈາກ ຫຼັງທວາຍ ຈຶ່ງຂໍຈອດຢູ່ເຮືອນແມ່ຄຳຮາງພະຍາເມືອງນັ້ນ ນາງຜູ້ນັ້ນມີຮູບງາມນັກ ຜູ້ໃດມີຄຳຈ້າງແລພັນຈຶ່ງໄດ້ນອນດອມມັນ ມັນຍອມສ່ວຍຄຳແກ່ພະຍາແລເດືອນລະພັນຄຳ ເມື່ອນັ້ນພະຍາເວ–ຊະມາທິດເປັນຜົວມັນໄດ້ຕັກນ້ຳທ່າຫຼວງແກ່ນາງຜູ້ນັ້ນ ເປັນທຸກນັກ ເມື່ອນັ້ນມຸນຕີໄປເດີນຫາເຈົ້າຕົນ ຮູ້ວ່າພະຍາໄດ້ຕັກນ້ຳທ່າຫຼວງ ມັນ ຄຶດວ່າ ກູນີ້ຈັກໄປໃນເມືອງອື່ນ ຫາຂອງວິເສດເພື່ອເຈົ້າກູ ບໍ່ມີອັນວິ

ແສດບໍ່ດີ ຄວນກູຫາຂອງອັນວິເສດກ່ອນດາຍ ມັນຈິ່ງໄປຮຽນເອົາມົນ
ດອມເຈົ້າຣັດສີຕົນໜຶ່ງ ແມ່ນໄດ້ຊົ່ວກ້ອນດິນກ້ອນຫີນ ກໍເປັນຄຳມັນ
ໄດ້ແລ້ວຄະນິງວ່າ ກູໄດ້ເທົ່ານີ້ກໍໄປ່ຄວນໄປແລ ມັນຊໍ້າເຂົ້າໄປສູ່ປ່າ
ຫີມະວັນ ເກິງຫນ້າສະອັນໜຶ່ງ ເຫັນໝູ່ກິນນະຣີ ກິນນະຣອນ
ມາເອົາເປືອກໄມ້ຕົ້ນໜຶ່ງທາເນື້ອຕົນ ກາຍເປັນຊາວລິງຫຼິ້ນໃນສະອັນ
ນັ້ນ ຫຼິ້ນແລ້ວມາເອົາເປືອກໄມ້ຕົ້ນໜຶ່ງທາເນື້ອຕົນຄືນ ເປັນກິນນະ
ຣີ ກິນນະຣອນດັ່ງເກົ່າ ແລ້ວເລົ່າເອົາເປືອກໄມ້ຕົ້ນໜຶ່ງທາຕົນເຂົ້າ
ຈິ່ງຮູ້ປາກຈາ ມັນເຫັນຈິ່ງເອົາເປືອກໄມ້ຝູງນັ້ນມາຫາພະຍາຕົນ
ມັນຈວບແລ້ວຊວນພະຍາເມືອ ພະຍາວ່າອັນຣາຈັກຄືນເມືອເປັນອັນ
ຍາກແລ ກູໄດ້ກີ່ຫນີ້ນາງຜູ້ນີ້ມາກກວ່າແສນຄຳດີຫລີດາຍ ເມື່ອນັ້ນ
ມຸນຕີໃຫ້ຊົ່ວກ້ອນຫີນເປັນຄຳໃຫ້ແກ່ມັນມາກກວ່າແສນຄຳ ນາງຜູ້ນັ້ນກໍ
ໃຫ້ຂາຫນີເມືອ ມຸນຕີເອົາຢານັ້ນມາຊຸບນ້ຳ ອັນນາງອາບນັ້ນໄວ້
ນາງໄດ້ອາບກາຍເປັນຊາວພັງຕົວໜຶ່ງ ຊ່າລືເກິງພະຍາໃຫ້ປ່າວວ່າ
ຜູ້ໃດໃຫ້ຢານາງຜູ້ນີ້ຄືນເປັນດັ່ງເກົ່າໄດ້ ກູຈັກໃຫ້ເມືອງເກິ່ງໜຶ່ງແລ
ມຸນຕີບອກວ່າກູຮູ້ຢາແລ ມຸນຕີຈິ່ງທາຢາຄືນເປັນຄືນດັ່ງເກົ່າ ທີ່ບໍ່ຮູ້
ປາກ ເມື່ອນັ້ນພະຍາໃຫ້ປ່າວສົມດຽວນັ້ນແລ ມຸນຕີຈາກັບເຈົ້າຕົນວ່າ
ນາງຜູ້ນີ້ຄັນມັນປາກມັນຈັກບອກແກ່ເມືອງນີ້ ຄັນມັນບອກດັ່ງນັ້ນຣາຈັກ
ຕາຍແລ ຣາຈິ່ງແຕ່ງຢາໄວ້ໃຫ້ເຂົາອາບມັນ ຣາຈິ່ງລັກໜີເມືອກ້ຳນີ້
ເທີ້ນ ຂາແຕ່ງຢາໄວ້ແລ້ວສັ່ງເຂົາວ່າ ວັນພຸກຍາມທ່ຽງສູເບັຍອາບຢາ
ນີ້ແກ່ນາງພະຍາເທີ້ນ ຄັນຄ່ຳຂາກໍລັກໜີເມືອຈັກໃກ້ຮຸ່ງອອກພົ້ນເຂດ
ແດນເມືອງແລ້ວ ວັນລຸນເຂົາເອົາຢາອາບນາງນັ້ນຮູ້ປາກແລ້ວ
ນາງບອກແກ່ພະຍາໆໃຫ້ໄປຕາມຫາ ຂາຂ້າມພົ້ນແດນເມືອງແລ້ວ
ມາເຖິງເມືອງອັນຢູ່ກາງທາງນັ້ນ ຍັງມີແມ່ຄຳຣາງຜູ້ໜຶ່ງງາມນັກ
ຜູ້ໃດໄປນອນດອມມັນ ໃຫ້ຈ້າງຄຳແລພັນຄຳໜຶ່ງ ບໍ່ຫ່ອນໄດ້ກີກຕ້ອງ
ຄີງມັນ ຍ່ອມອາຍແລ້ວໜີເປົ່າດາຍ ຂາວ່າຈັກໄປນອນດອມນາງຜູ້ນັ້ນ
ມຸນຕີຫ້າມວ່າເຈົ້າກູຍັ້ງກ່ອນ ຂ້າຈັກໄປລອງດູກ່ອນ ມຸນຕີໄປໃຫ້ຄຳພັນ

ໜຶ່ງເປັນຄ່າຈ້າງ ນາງນັ້ນ ຈຶ່ງເອົາມີມຸນຕີເຂົ້າໄປທີ່ໜຶ່ງ ອັນແຕ່ງ
ຍິນໄວ້ ຄັນເກີງຍິນຄວິດມຸນຕີ ຕົກກັ່ງອັນໜຶ່ງ ຍິນນັ້ນກຸມຊູດຜົມ
ເສຍ ເອົາໝີ້ນໝໍ້ລູບແລ້ວໂຍນອອກມາ ເມື່ອນັ້ນມັນພາຫົວຫຼ້ອນ
ມາເປັນອັນອາຍມາສູ່ພະຍາຕົນ ມັນວ່າ ເຊື່ອວ່າເຈົ້າກູໄປກໍເປັນດັ່ງ
ຂ້ານີ້ຊະແລ ທີ່ແທ້ເຈົ້າກູໄປ ເຈົ້າກູເທົ່າກືເອົາມືນາງກ້ຳຂວາກ່ອນດີ
ຫລື ຮູ້ແຈ້ງໄປຈ້າງຄຳພັນໜຶ່ງແກ່ນາງໆນັ້ນກືມີພະຍາໄປທີ່ຍິນນັ້ນ
ພະຍາຄັນເກີງຮີບເອົາມືນາງກ້ຳຂວາໄດ້ ຍິນຂວິດນາງຕົກກັ່ງຊູດຜົມ
ເສຍລູບໝີ້ນໝໍ້ແລ້ວຂວິດມາ ນາງເລົ່າເຄາະນັ້ນວ່າ ແຕ່ທ້າວພະ
ຍາຜູ້ໄດ້ມາສູ່ກູມາກນັກແລ ບໍ່ເປັນດັ່ງພະຍາຜູ້ນີ້ ມີປະຫຍານັກ ກູ
ຈັກເອົາເປັນຜົວເທີ້ນ ມັນເອົາພະຍາຢູ່ດອມມັນໄດ້ຫົກເດືອນກໍມີທ້ອງ
ແລ ພະຍາຈຶ່ງສັ່ງນາງວ່າ ແຫວນລູກນີ້ຄວນຄ່າເທົ່າເມືອງ ຜີວ່າ
ລູກຮາເປັນຜູ້ຍິງ ໃຫ້ມີງຂາຍແຫວນລ້ຽງເທີ້ນ ຜີວ່າເປັນຜູ້ຊາຍມັນ
ໃຫຍ່ມາ ກືແຫວນລູກນີ້ໄປຫາກູທີ່ນວັນອອກພຸ້ນ ກູນີ້ຊື່ວ່າພະຍາເວ
ຊະມາທິດແລ ຂາມຸນຕີພາກັນມາເກີງເມືອງດັ່ງເກົ່າແລ ຕຳນານ
ອັນນີ້ຜູ້ນອນດອມພະຍາເລົ່າແລ ຄັນຮຸ່ງແລ້ວພະຍາວ່ານາງຜູ້ນີ້ມີ
ຜະຫຍານໍວ່າອັນ ເອົາເປັນນາງອັກຄະມະເຫສີແລ.

<u>ໂທດຊາວຈຳພວກ</u>

ອັນໜຶ່ງກືໜີ້ກັນ ອັນໜຶ່ງປຸ້ນຂອງອັນຈ້າງກັນ ອັນໜຶ່ງໃຫ້ແລ້ວ
ແລເອົາຄືນ ອັນໜຶ່ງແປກຂອງກັນ ອັນໜຶ່ງເອົາຜູ້ບໍ່ຜິດ ອັນໜຶ່ງຂ້າກັນ
ອັນໜຶ່ງເມຍຫຼິ້ນຊູ້ ອັນໜຶ່ງຜົວເມຍຂ້າກັນ ອັນໜຶ່ງລັກຂອງກັນ ອັນ
ໜຶ່ງນາບກັນ ອັນໜຶ່ງຜິດດ້ວຍຂອງຜູ້ຕາຍ ອັນໜຶ່ງຝາກຂອງໄວ້ແລ
ເສຍ ອັນໜຶ່ງຊີງທີ່ກັນ ອັນໜຶ່ງກະທຳແກ່ຜູ້ມີບຸນ ແລໂທດມີຫຼາຍ
ຈຳພວກສັນນີ້ແລ. ເຫດດັ່ງຣີ ຮູ້ແຈ້ງທັ້ນຈາ. ຜີວ່າທ້າວພະຍາເສ
ນາອາມາດຜູ້ໃດແລປາດສະຈາກໂທດ 4 ອັນ ຜູ້ນັ້ນອາດສົງເຄາະ
ກ້ອຍຄຳຝູງນີ້ໄດ້ແລ ໂທດ 4 ອັນຄືວ່າ : ບໍ່ໂລບ ບໍ່ລີບ ບໍ່ມັກຟັງ

ຄຳບໍ່ເພິງມັກຄຽດ ຜູ້ປາດສະຈາກໂທດນີ້ໄດ້ ອຸບປະມາເປັນດັ່ງໜຶ່ງແລ ຜູ້ແກ້ວຫານແກ່ຂ້າເສິກແລມັກປາດຜູ້ຈັກແຕ່ງຄຳນີ້ ໃຫ້ຄ້ຳຄູນຕົນ ໃຫ້ທ່ຽງປະດຸດຈະດັ່ງກາງເຮືອໃຫ້ສະເໝີ ບໍ່ຫ່ອນລົ້ມນັ້ນແລ ຜີວ່າຄົນຜິດກັນດ້ວຍກຶຫນີ້ ຫາອັນໃຊ້ບໍ່ໄດ້ໃຫ້ເສມາໃຊ້ຕາງ ຜີໜີ້ມາກ ມັກ ໃຫ້ເສດກຶແລພະຍາໃຊ້ຕາງປ່ອຍເປັນໄທແລ ຜີວ່າເປັນດີ ຄວນປານີຄົນໄຮ້ແລ ຜີໃຊ້ຫນີ້ບໍ່ໄດ້ມັນຕາຍເປັນເຜດແລ ສັດຕິຣັດ–ສານຜູ້ໃຊ້ຕາງບໍ່ຫ່ອນຂ້າສັກເທື່ອແລ ຜີວ່າຜິດກັນດ້ວຍຂອງບໍ່ຄວນ ເອົານັ້ນໃຫ້ໃຊ້ຕອບ ຜີໃຊ້ບໍ່ໄດ້ໃຫ້ 7 ແສ້ 8 ແສ້ ປ່ອຍເສຍ ຜີໃຊ້ໄດ້ໃຫ້ແຈກສິນຜິດນັ້ນເປັນ 2 ສ່ວນໆໜຶ່ງໃຫ້ແກ່ເຈົ້າຄຳ ສ່ວນໜຶ່ງ ໃຫ້ແກ່ພະຍາແລຈ່າເມືອງແລ ບໍ່ໃຊ້ໄດ້ມັນຕາຍຕົກມະຣິກແລ ຜິດກັນ ກຶໜີ້ໃຫ້ກາມສາກສີ ຜີວ່າເຈົ້າຂອງກ່າວຄຳທ່ຽງ ໃຫ້ໃຊ້ຕາມຄຳເຈົ້າ ຂອງ ຜີກ່າວຄຳບໍ່ທ່ຽງໃຫ້ໃຊ້ເທົ່າໜຶ່ງ ຜີຂາມີຄຳທ່ຽງດັ່ງຄຳສຳຄັນ ເພິງໃຫ້ມັນກູນາໃຫ້ເສຍເຄິ່ງເອົາເຄິ່ງ ຜີທີ່ໜີທ່ານແລປະໝາດເຈົ້າ ຂອງໃຫ້ໃຊ້ຕາມຄຳເຈົ້າຂອງກໍຄວນ ຜີໃຊ້ບໍ່ໄດ້ໃຫ້ຈ້າງກູວັນແລ້ວ ກະທຳການບໍ່ແລ້ວເປັນໂທດແກ່ມັນແລ ບໍ່ເພິງໃຈເຈົ້າຂອງ ໃຫ້ເຍັຍໃຫ້ເພິງໃຈເຈົ້າຂອງດີດາຍ ຜີມັນບໍ່ໃຫ້ຂອງ ທ່ານສູນເສຍຢ່າ ໃຫ້ວ່າ ຄົນບໍ່ເອົາຕາຍເປັນເຜດດາຍ ຜີດ້ວຍຂອງອັນໃຫ້ແລ້ວແລ ເອົາຄືນເລົ່າ ໃຫ້ກາມຂາທັງສອງຕໍ່ກັນ ອັນໜຶ່ງຮັກກັນແລໃຫ້ ອັນໜຶ່ງ ອາສາແກ່ກັນແລໃຫ້ 2 ປະການນີ້ບໍ່ເພິງເອົາຄືນແລ ຜີເອົາຄືນ ເປັນເຜດແລ ຜີຜູ້ຈັກໃຫ້ກໍຮູ້ປະຫມານ ຜູ້ຈັກເອົາກໍໃຫ້ຮູ້ຄຸນທ່ານດີ ດາຍ ຜິດກັນດ້ວຍແປກຂອງຊ້າງມ້າງົວຄວາຍຂ້າຄົນເປັນຕົ້ນ ໃຫ້ກາມສາກສີທີ່ຫມາຍໃນຕົນ ຜູ້ໃດຮູ້ໃຫ້ເປັນຂອງຜູ້ນັ້ນບໍ່ຮູ້ທີ່ໝາຍ ຂອງນັ້ນຫາກກຽງຕົນແລ ຜີວ່າຄົນໃຫ້ກາມຫາພີ່ນ້ອງ ຫາປີເດືອນ ຊອບຜູ້ໃດເປັນຜູ້ນັ້ນ ບໍ່ຊອບດ້ວຍຄຳ ກໍເສຍເພື່ອກ່າວບໍ່ຊອກແລ ບໍ່ຮູ້ທີ່ແຈ້ງ ຜູ້ຮູ້ບາຍເອົາຄົນຕາຍຕົກມະຣິກແລ ຜິດດ້ວຍດ່າກັນໃຫ້ ກາມສັກຂີ ຜູ້ໃດດ່າຜູ້ບໍ່ຜິດ ໃຫ້ຄວນຄ່າມັນຜູ້ຜິດນັ້ນເປັນ 4 ສ່ວນ

ສ່ວນໜຶ່ງເປັນສິນໃຊ້ທັນດະກຳແກ່ມັນແລ ຜີເຂັນໃຈໃຫ້ຕີ 10 ແສ້ ຜີຜູ້ເປັນດີດ່າຜູ້ເຂັນໃຈ ໃຫ້ທັນດະກຳແກ່ມັນ ບໍ່ອັນຕາຍຕົກນະຣົກແລ ຜິດກັນດ້ວຍຕີກັນໃຫ້ກາງມສັກຂີ ຜີຜູ້ໃດຕີກ່ອນບໍ່ບາດ ທ່ານຕີຕອບມີບາດດັ່ງນັ້ນໂທດສະເໝີກັນ ຜີມັນຕີທ່ານ ທ່ານບໍ່ຕອບໃຫ້ຄວນຄ່າຜູ້ນັ້ນເປັນ 5 ສ່ວນ ຜີມັນເຈັບໜ້ອຍໃຫ້ໃຊ້ສ່ວນໜຶ່ງ ເຈັບມາກໃຫ້ໃຊ້ 2 ສ່ວນ ບໍ່ໃຊ້ໄດ້ໃຫ້ຕີດ້ວຍກະຕັກ 10 ທີແລ້ວໃຫ້ພີ່ນ້ອງເຈົ້າໄທມັນໃຊ້ຕາງເຄິ່ງໜຶ່ງ ບໍ່ອັນມັນຕາຍຕົກນະຣົກແລ ຜິດດ້ວຍລັກໄດ້ກະຊັງມີໃຫ້ໃຊ້ 3 ເທົ່າ ບໍ່ໃຊ້ໄດ້ໃຫ້ຣາຊທັນດະກຳແກ່ມັນ ໃຫ້ພີ່ນ້ອງເຈົ້າໄທມັນໃຊ້ຕາງ ເຫດສັນໃດໃຫ້ໃຊ້ຕາງ ຍັງມີບ້ານອັນໜຶ່ງມີຄົນຢູ່ 4 ເຮືອນ ຜູ້ໜຶ່ງລັກກິນກໍຍັງໃຫ້ 3 ເຮືອນໃຊ້ດາຍ ຄຳວ່າບໍ່ເຫັນວ່າອັນຈັກຟັງຄຳນັ້ນບໍ່ດີແລ ຜີຜູ້ລັກຍັງມີໃຫ້ໃຊ້ 5 ເທົ່າ 7 ເທົ່າ 4 ເທົ່າ ຜີແລ່ນໜີ ຜີສຽງກອງບໍ່ໄດ້ຍິນ ຜີວ່າຜູ້ໃຫຍ່ໃຫ້ຂ້າຜູ້ລັກເສຍໄດ້ຂອງກະຊັງມີ ບໍ່ມີຜູ້ເອົາຕົວໃຫ້ແກ່ພະຍາວ່າບໍ່ມີສັງພະຍາໃຊ້ຕາງເປັນຂ້າທ່ານພະຍາ ບໍ່ດັ່ງນັ້ນມັນຕາຍຕົກນະຣົກເປັນຂ້າທ່ານ 5 ຊາດ ສ່ວຍແກ່ເຈົ້າຂອງແລ ຜີຕີກັນຕາຍໃຫ້ຄວນຄ່າຜູ້ຕາຍເທົ່າໃດ ໃຫ້ໃຊ້ 7 ເທົ່າ ບໍ່ໄດ້ໃຫ້ຕັດຕີນມືເສຍ ໃຫ້ພີ່ນ້ອງເຈົ້າໄທມັນໃຊ້ຕາງ 2 ເທົ່າ ຜີເປັນຂຸນບໍ່ຄວນຂ້າແລ ຂ້າທ່ານໃຫ້ໃຊ້ 9 ເທົ່າ ກອດນາເສຍໃຫ້ໜີຈາກທີ່ຢູ່.

ໂທດອັນຄວນຕີແຫ່ງຜູ້ຊາຍ ມີ 5 ແຫ່ງ ຜູ້ຍິງມີ 3 ອັນ

ຜູ້ຊາຍ: ຂ້າທ່ານອັນໜຶ່ງ ລັກຂອງທ່ານໆໄດ້ກະຊັງມີອັນເປັນເຂົ້າຂອງຜູ້ບໍ່ຜິດເສຍອັນໜຶ່ງ ເບັຍຊູ້ດ້ວຍເມຍທ່ານອັນໜຶ່ງ ບໍ່ຊື່ແກ່ບ້ານເມືອງເຈົ້າພະຍາອັນໜຶ່ງ ລັກຂອງສິງອັນໜຶ່ງ ໂທດ 5 ອັນນີ້ ຄວນຂ້າເສຍແລ.

ຜູ້ຍິງ: ໂທດມີ 3 ອັນ ອັນໜຶ່ງຫຼົ້ນຊູ້ຈາກຜົວ ບໍ່ຊື່ແກ່ບ້ານເມືອງເຈົ້າພະຍາ ອັນໜຶ່ງດ່າທ່ານຕ່າງເມືອງມາຈອດ ອັນໜຶ່ງລັກຂອງສິງ 3 ອັນນີ້ຄວນຂ້າແລ ອັນອື່ນບໍ່ຄວນຂ້າ ອັນອື່ນໃຫ້ພີ່ນ້ອງ

ເຂົາຄ້ຳຕາວຍັງໄດ້ ອັນລັກຂອງສິງກໍບໍ່ເພິງຄ້ຳໄດ້ ວິບາກຫາກໄໝ້ຕົນດາຍ ຜິດກັນດ້ວຍເບັຍຊູ້ບໍ່ໄດ້ຢູ່ນອນ ໃຫ້ຄວນຄ່າຜູ້ຍິງເປັນ 3 ສ່ວນ ໃຊ້ 2 ສ່ວນ ກ້າເຂັນໃຈໃຊ້ສ່ວນໜຶ່ງ ຜີວ່າໄດ້ຢູ່ນອນດ້ວຍກັນໃຫ້ແຈກຕົວເປັນ 3 ສ່ວນ 2 ສ່ວນເປັນສິນໃຊ້ ຜີຫາກໄດ້ຂາເສຍທັງສອງໃຫ້ຄ່າຕົວ 3 ສ່ວນ ເອົາ 2 ສ່ວນ ສ່ວນໜຶ່ງໄວ້ແກ່ລູກເມຍມັນ ໄດ້ຂ້າຕາຍແລ້ວກໍເອົາຄົວ ບໍ່ອັນມັນຕາຍຕົກນະຣົກແລຜີຜົວເມຍຈັກຢ່າກັນໃຫ້ການສາກສີ ຄຳຕ້ານເຂົາເມື່ອກ່ອນ ຜີວ່າຜູ້ຍິງບໍ່ຮູ້ສາງເຮືອນ ມັນດູແຄວນຜົວແຮ່ງລັກໃຈຜົວດັ່ງນັ້ນ ຄວນຕາມໃຈຜົວມັນແລ ຜີວ່າຜູ້ຊາຍບໍ່ຮູ້ສາງເຮືອນ ມັກຊູກຽດໜ້າທີ່ດັ່ງອັນພີ່ນ້ອງຜູ້ຍິງຂືນຄ່າຄືນເທົ້ນຄືວ່າ ຜູ້ຊາຍເມື່ອສູ່ຂອງອັນເອົາເມື່ອຢ່າຄືນ ລູກຜູ້ຊາຍໄດ້ແກ່ຜູ້ຊາຍ ລູກຜູ້ຍິງໄດ້ແກ່ຜູ້ຍິງແລ ຜິດກັນດ້ວຍຂອງຜີຕາຍໃຫ້ການສາກສີ ຜູ້ໄດ້ຍິນວ່າບໍ່ມີ ໃຫ້ແຈກຂອງເປັນ 3 ສ່ວນ 2 ສ່ວນໃຫ້ແກ່ຜູ້ສິ່ງສະການ ໜຶ່ງສ່ວນໃຫ້ທານໄປຫາມັນຜູ້ຕາຍຜີບໍ່ອັນວ່າລັກຂອງຜີຕາຍ ຈັກໄດ້ແທນມັນດາຍ ຜິດກັນດ້ວຍພັນກັນໃຫ້ການສາກສີວ່າ ຂາຫຼົ້ນພັນອັນໃດ ໃຫ້ເອົາອັນນັ້ນໄວ້ສ່ວນໜຶ່ງສ່ວນໜຶ່ງຢ່າຫຼົ້ນເລົ່າ ຜີຍັງຫຼົ້ນຄວນຣາຊທັນດະກຳແກ່ມັນ ຄົນຫຼົ້ນເສຍຄຸນ5 ອັນ ບໍ່ຫຼົ້ນມີຄຸນ 9 ອັນ.

ເສຍຄຸນ 5 ອັນນັ້ນ ໄດ້ແກ່ອັນໃດຈາ ອັນໜຶ່ງຄືວ່າ ແພ້ທ່ານທ່ານຊ້ຳແພ້ ຈັກແຂວງຢູ່ກໍຍາກດ້ວຍກ້ອຍຄຳນັກ ອັນໜຶ່ງຄືວ່າທ່ານແພ້ກໍເສຍຂອງຕົນໆກໍເພີດລັກອາຍແກ່ທ່ານ ອັນໜຶ່ງລືມການຢາວເຮືອນຕົນເສຍ ອັນໜຶ່ງຜູ້ກ່ອຍກໍດູແຄວນຕົນ ອັນໜຶ່ງຮາມຮຽນອັດກະປາລີທຳອັນມີຜະລະຊົ່ວນີ້ຊົ່ວໜ້າແລ.

ບໍ່ຫຼົ້ນມີຄຸນ 9 ອັນ : ອັນໜຶ່ງຄືວ່າບໍ່ເສຍຂອງຕົນ ອັນໜຶ່ງບໍ່ກັດຕີໃນອັນຫຼົ້ນ ອັນໜຶ່ງໄດ້ຢູ່ພິຈາລະນາຫາຄຳເປັນຄຸນບໍ່ເປັນຄຸນແກ່ຕົວໃນຊົ່ວນີ້ຊົ່ວໜ້າແລ.

ທັມມະສາດທິສາປາໂມກ

ສີສະຫວັດສະດີ ບັດນີ້ຈັກກ່າວຕຳນານນິທານ ທຳມະສາດຕາມທິສາປາໂມກຂະອາຈານເຈົ້າ ອັນຢູ່ຕັກກະສີລານະຄອນ ຈົບເພດທັງ3 ຄືວ່າ ອິຣຸບພະເພດ ຍັນຍະເພດ ແລສາມະເພດ ແຈ້ງໜັກໜາ ທຽນບ່ອນສັ່ງສອນທ້າວພະຍາທັງຫຼາຍຕ່າງໆດັ່ງນີ້ :

– ວັດອັນໃຫ້ຈຳເຣີນແກ່ທ້າວພະຍາ ມີ 6 ປະການ : ອັນໜຶ່ງຄືວ່າຕື່ນເຊົ້າ ອັນໜຶ່ງຄຽດບໍ່ໃຫ້ຜາກົດ ອັນໜຶ່ງມີສັດຈະ ອັນໜຶ່ງຢູ່ໃນປັນຈະຄະຕິ ອັນໜຶ່ງບໍ່ມັກຫຼັ້ນຄ່ຳ ອັນໜຶ່ງພິຈາລະນາແລ້ວຈຶ່ງທຳ.

– ກຳການອັນໃຫ້ຈິບຫາຍແກ່ທ້າວພະຍາ ມີ 8 ປະການດັ່ງນີ້ : ອັນໜຶ່ງມັກຄຽດໃຫ້ປາກົດ ອັນໜຶ່ງຫາຄຳສັດບໍ່ໄດ້ ອັນໜຶ່ງນອນຕື່ນສວາຍ ອັນໜຶ່ງນັ່ງທ້າຍຊາງ ອັນໜຶ່ງນັ່ງກ້ຳທາງປະຕູທີ່ທ່ານຂຶ້ນລົງ ອັນໜຶ່ງມັກຫຼັ້ນຄ່ຳ ອັນໜຶ່ງບໍ່ຢູ່ໃນປັນຈະຄະຕິ ອັນໜຶ່ງກະທຳອັນໃດບໍ່ພິຈາລະນາໃຫ້ແຈ້ງແລ້ວຈຶ່ງທຳ.

– ໃນຍະໜຶ່ງ ບຸກຄະລະ ຜູ້ຈັກພິຈາລະນາກ້ອຍຄຳທັງຫຼາຍທັງມວນໃຫ້ລະອະຄະຕິ 4 ປະການຄືວ່າ : ສັນທາຄະຕິ ໂທສາຄະຕິ ພະຍາຄະຕິ ແລໂມຫາຄະຕິ. ເມື່ອວ່າ ສັນທະຄະຕິນັ້ນໄດ້ແກ່ຜູ້ພິຈາະລນາຄຳອັນຜິດບໍ່ຊອບ ເຫດວ່າໄດ້ກິນຈ້າງທ່ານ ອັນເຫັນແກ່ມິດສະຫາຍພໍ່ແມ່ ຄູບາອາຈານພີ່ນ້ອງຕົນແລ້ວຕັດຄຳໃຫ້ແພ້ທ່ານຜູ້ອື່ນ ຊື່ວ່າສັນທາຄະຕິແລ. ບຸກຄົນຜູ້ພິຈາລະນາຄຳໃຫ້ແພ້ຜູ້ຫາຍົດສັກບໍ່ໄດ້ເຫດກົວຜູ້ມີຍົດສັກດັ່ງນັ້ນ ຊື່ວ່າພະຍາຄະຕິແລ. ບຸກຄະລະຜູ້ພິຈາລະນາຄຳໃຫ້ແພ້ ຜູ້ຫາໂທດບໍ່ໄດ້ຄືວ່າບໍ່ຮູ້ຈັກຜູ້ຜິດຜູ້ຊອບສັກອັນ ກະທຳຕາມອຳນາດອາດຍາຕົນ ຄືວ່າຜູ້ໜຶ່ງຫາກຜິດເລົ່າໃສ່ໂທດຜູ້ບໍ່ຜິດ ອັນນີ້ຊື່ວ່າ ໂມຫາຄະຕິແລ (ຂາດໂທສະຄະຕິ ຄື ພິຈາລະນາຄະດີໃຫ້ແພ້ແກ່ຜູ້ຕົນຄຽດຊັງ) ບຸກຄະລະຜູ້ພິຈາລະ–

ນາດັ່ງນີ້ ບໍ່ຊອບເພິງໃສ່ຣາຊທັນດະກໍາແກ່ມັນ ມັນຕາຍຈັກໄດ້ໄປເກີດໃນອະບາຍທັງ 4 ແລ.

– ປະການໜຶ່ງຜູ້ພິຈາລະນາກອ່ຍຄໍາ 2 ຄົນຜິດກັນນັ້ນ ຜູ້ໃດມາເລົ່າຄວາມກ່ອນບໍ່ເພິງຟັງ ໃຫ້ຂາທັງສອງຕັ້ງໄວ້ໃນທີ່ຊຸມນຸມ ແລ້ວໃຫ້ຂຽນການຄໍາປາກຂາທັງສອງ ດ້ວຍອັນກູນາໃຫ້ຂາທັງສອງທັນໃຈເຂົ້າອອກເຖິງ 2 ທີ 3 ທີ ແລ້ວໃຫ້ແຕ້ມໜັງສືຄໍາປາກຂາໄວ້ນັ້ນແລ້ວເອົາມາທຽມກັນແລ້ວຈິ່ງໃຫ້ຕັດ ປະການໜຶ່ງໃຫ້ຊຸມພິຈາລະນາຫຼິງດູດ້ວຍຄະຕິຄືວ່າ ຜ່ານປັ່ງມຊົ້ວຊາດູດ້ວຍເຫດ 5 ປະການຄືວ່າ : ວັດກຸອັນໃດອັນໜຶ່ງ ເຂົ້າຂອງທັງມວນມີຕົ້ນວ່າ ເງິນຄໍາແກ້ວແຫວນເສື້ອຜ້າຝູງນັ້ນ. ກາລະອັນໜຶ່ງຄືວ່າເມື່ອກີ່ກເມື່ອແພງເມື່ອເກົ່າ ເມື່ອໃໝ່ ເມື່ອວັນ ເມື່ອຄືນແລ. ເທສະອັນໜຶ່ງຄືວ່າທີ່ເກີດແຫ່ງວັດກຸແຫ່ງກອ່ຍຄໍານັ້ນແລ. ອະທະ ອັນໜຶ່ງຄືວ່າ ກົດໝາຍຄ່າແຫ່ງຂອງອັນນ້ອຍ ອັນມາກ ອັນໜັກ ອັນເບົານັ້ນແລ. ປະຣິໂພຄະ ໄດ້ບໍຣິໂພກແລ້ວໄປໄດ້ບໍຣິໂພກນັ້ນແລ ເມື່ອວ່າສັນນີ້ເຫດໂບຮານາຈານເຈົ້າທັງຫຼາຍ ຂອດຄາຖາໄວ້ໃນສາມັນຕະປາສາທິກາວ່າ :

ວັຕກຸກາລັນຈະ ເທສັນຈະອະທະປະຣິໂພຄັນຈະ ປັນຈັຕກາ–ນານີ ຈາເຣຍັຕກັ່ງ ວິຈັກຂະໂນຕິດັ່ງນີ້ແລ.

– ປະການໜຶ່ງຊຸມພິຈາລະນາຄໍາ ຕັດຄໍາບໍ່ຊອບ ເພິງມາງເສຍມີ 8 ປະການດັ່ງນີ້ :

ອັນໜຶ່ງຄືວ່າ ຕັດດ້ວຍອໍານາດ, ຕັດດ້ວຍອາດຍາມານະແຫ່ງຕົນ, ຕັດດ້ວຍບຽດບຽນຂົ່ມເຫັງ ເຕັງເອົາເຂົ້າຂອງລູກເມຍແຫ່ງທ່ານ,ອັນຕົນຫາກໄຕ່ຫາກຕັດເວລາກາງຄືນ, ອັນຕົນຫາກໄຕ່ເຫັນແລ້ວທັບປະຕູໄວ້ແລ, ອັນໜຶ່ງໄຕ່ຄໍາບໍ່ໃສພາບ, ຜິດຄອງທໍາມະສາດອັນຕັ້ງໄວ້, ອັນໜຶ່ງຜູ້ຍິງຕັດຄໍາ, ຄໍາຕັດຝູງນີ້ບໍ່ຊອບ ໃຫ້ມາງເສຍກ່ອນຈິ່ງຕັດໃນທີ່ຊຸມນຸມ ຕາມທໍາມະສາດເທີ້ນ.

– ປະການໜຶ່ງ 2 ຜິດກັນ ມາສູ່ຊຸມພິຈາລະນາຄຳເພິ່ງໃຫ້ຫາສັກຂີແຫ່ງຂາທັງ 2 ນັ້ນເທີ້ນ. ບຸກຄະລະຜູ້ຈັກຄວນເອົາເປັນສັກຂີມີ 12 ສັນນີ້ : ຕະປະສີໂລ ອັນໜຶ່ງຄືວ່ານັກປາດເຈົ້າຕົນມີສີນກໍດີ. ທານະສີລາ ຄືວ່າຄົນຜູ້ມັກໃຫ້ທານຮັກສາສີນກໍດີ, ກຸລີນາຄືວ່າ ຄົນຜູ້ມີກະກຸນວົງສາກໍດີ, ສັດຈະວາທີນາ ຄືວ່າຄົນຜູ້ກ່າວຄຳສັດຈະທ່ຽງແທ້ກໍດີ, ທັມມະປະກະນາ ຄືວ່າຜູ້ປູ່ໃນຄອງອັນຊອບເປັນປະທານກໍດີ, ອຸຊຸວາ ຄົນຜູ້ມີໃຈອັນຊື່ແທ້ກໍດີ, ປຸຕຕະວັນໂຕ ຄົນຜູ້ມີລູກຫຼານຫຼາຍກໍດີ, ຕັພຍະວະຫາຣາ ຄົນຜູ້ຮູ້ຄາຂາຍ ລ້ຽງຊີວິດອັນຊອບກໍດີ, ເພສັຊຊະໂມທີນາ ຄົນຜູ້ຍິນດີໃນການແພດກໍດີ, ອັນໜຶ່ງຜູ້ມີວັດຕະຕາມສະພາວະອັນທ່ຽງແທ້ ບໍ່ຮູ້ລ່າຍຄຳກໍດີ ຄົນທັງຫຼາຍຝູງນີ້ ຄວນເອົາເປັນສັກຂີແລ.

– ປະການໜຶ່ງ ບຸກຄະລະທັງຫຼາຍ 18 ຄົນ ຝູງນີ້ລາງຄາບກໍຍັງຄວນເອົາເປັນສັກຂີ ລາງຄາບກໍບໍ່ຄວນເອົາເປັນສັກຂີ ຄືວ່າ ຍິງຜູ້ເກົ້າຊະຣາການໜຶ່ງ, ເດັກນ້ອຍໜຶ່ງ, ຜູ້ມັກຫຼິ້ນໝາກສະກາໜຶ່ງ, ຜູ້ເມົາເຫຼົ້າໜຶ່ງ, ຜູ້ໂລພະໂມຫະໜຶ່ງ, ຜູ້ມົວເມົາໄປດ້ວຍອັນຂັບອັນຟ້ອນໜຶ່ງ, ຜູ້ມັກໄປດູທ່ານຟ້ອນໜຶ່ງ, ຜູ້ເກີດໃນກະກຸນຈັນທານໜຶ່ງ, ຜູ້ຮູ້ລ່າຍລື້ມປື້ນຄວາມໜຶ່ງ, ຜູ້ເສຍອົງຄະຄືວ່າ ຫູໜວກຕາບອດໜຶ່ງ, ຜູ້ມີກະກຸນອັນມາກເສຍໜຶ່ງ, ຜູ້ເປັນຂ້າເສິກກັບ ເຈົ້າຄວາມແຕ່ກ່ອນໜຶ່ງ, ຜູ້ເປັນມິດສະຫາຍພີ່ນ້ອງເຜົ່າພົງວົງສາແຫ່ງເຈົ້າຄວາມໜຶ່ງ, ຜູ້ມັກໃຫ້ທ່ານຈິບຫາຍດ້ວຍໂທດໜຶ່ງ, ຜູ້ຍິນດີໃນບາບຫຍາບຊ້າກ້າແຂງແຮ່ງມັກປາກຫນຶ່ງ, ຜູ້ຍິນດີໃນໂທດແຫ່ງທ່ານຜູ້ອື່ນໜຶ່ງ, ລ້ຳເຂົາທັງຫຼາຍຝູງນີ້ ຜູ້ຍິງແລະເດັກນ້ອຍ ຜູ້ຮູ້ລ່າຍລື້ມປື້ນຄຳ ຜູ້ເປັນພີ່ນ້ອງມິດສະຫາຍເຈົ້າຄວາມ ຜູ້ເປັນຂ້າເສິກກັບເຈົ້າຄວາມແຕ່ກ່ອນແລຜູ້ເປັນບາບເຂົາຝູງນີ້ ບໍ່ຄວນເອົາເປັນສັກຂີສັກຄົນແລ ລ້ຳນັ້ນທີ່ຄວນເອົາເປັນກໍມີ ບໍ່ຄວນເອົາເປັນກໍມີແລ. ຜີວ່າຂາຜິດກັນ ຊູ່ຄົນຊູ່ບໍ່ມີສັກຂີກໍດີໃຫ້ຫລິ່ງດູວົງສາແຫ່ງຂາ ອັນໜຶ່ງໃຫ້ຫລິ່ງດູຈາຣີດອັນໜັກອັນເບົາ

ແຫ່ງຂາ ອັນໜຶ່ງໃຫ້ຫລີງດູຕາອັນຫລາກຫລ່າແຫ່ງຂາກໍຮູ້ວ່າມີໂທດມາກແລ ອັນໜຶ່ງເກິງສັດຈາທີການຕາງເຫີ້ນ ອັນວ່າໂທດຕົກແກ່ຜູ້ໃດ ຈັກໃສ່ທັມດະກຳຄືໃສ່ສິນໄຫມແກ່ຜູ້ນັ້ນຄວນແລ.

ຄອງເມືອງ

ບັດນີ້ ຈັກກ່າວຄອງທຳມະສາດແຕ່ງໄວ້ ໃຫ້ແຈ້ງໃສ່ໃຈຍັງຣາຊທັມດະແກ່ບຸກຄະລະຜູ້ຜິດຄອງເມືອງ ຕາມຜູ້ນ້ອຍຜູ້ໃຫຍ່ດັ່ງນີ້ :

ຜີວ່າຣາຊກະກຸມຜິດຄອງເມືອງ ຂັນຄ່າຄໍພັນຫົກຂັນໄໝແປດຮ້ອຍຂັນແປງສີ່ຮ້ອຍ.

ຫົວໝື່ນຫົວແສນ ຂັນຄ່າຄໍພັນສອງ ຂັນໄໝຫົກຮ້ອຍ ຂັນແປງສາມຮ້ອຍ.

ຫົວພັນຫົວຮ້ອຍ ຂັນຄ່າຄໍແປດຮ້ອຍ ຂັນໄໝສີ່ຮ້ອຍ ຂັນແປງສອງຮ້ອຍ.

ຂຸນກວານໃຫຍ່ນ້ອຍ ຂັນຄ່າຄໍຫົກຮ້ອຍ ຂັນໄໝສາມຮ້ອຍ ຂັນແປງຫ້າບາດ.

ຊາວບ້ານຊາວເມືອງມັກບຸນຂຸນຄາ ຂັນຄ່າຄໍສີ່ຮ້ອຍ ຂັນໄໝສອງຮ້ອຍ ຂັນແປງຮ້ອຍໜຶ່ງ.

ຜູ້ໄພ່ທີມະຊາວເມືອງ ຂັນຄ່າຄໍສອງຮ້ອຍ ຂັນໄໝຮ້ອຍໜຶ່ງຂັນແປງຫ້າບາດ. ໃນສິນໄໝຝູງນີ້ໃຫ້ຜ່າສາມສ່ວນ ສ່ວນໜຶ່ງໃຫ້ແກ່ເຈົ້າຄຳ ສ່ວນໜຶ່ງໃສ່ຣາຊໂກດ ສ່ວນໜຶ່ງໃຫ້ຂຸນພິຈາລະນາ. ຜີວ່າສິນໄຊດຄົນຫົກຮ້ອຍ ສາມຮ້ອຍໃຫ້ແກ່ເຈົ້າຄົນ ສາມຮ້ອຍເລົ່າໃຫ້ຜ່າສາມສ່ວນ ໃຫ້ແກ່ເຈົ້າຄົນສ່ວນໜຶ່ງໃສ່ຣາຊໂກດສ່ວນໜຶ່ງສ່ວນໜຶ່ງເປັນຂອງຂຸນພິຈາລະນາ.

ທັມມະສາດ ຣາຊສາດ ອາດຍາເຈົ້າແຜ່ນດິນ ຕັ້ງໄວ້ແກ່ເສນາບັດດີທັງຫຼາຍໃຫ້ປະຕິບັດດັ່ງນີ້ :

ຣາຊການມີ ເວົ້າເກິ່ງສາມທີ ບໍ່ໄປຄວນດ່າ ຄວນຕີໃຫ້ຕີ ຄວນຜູກໃຫ້ຜູກ ມາເກີ່ງວຽກການແລ້ວແກ້ເສຍ ຢ່າເອົາເບັຍເອົາເງິນ.

ອັນໜຶ່ງເຈົ້າຂຸນກິນບ້ານກິນເມືອງ ທີ່ໃດກໍດີຢ່າບຽດໄພ່ໃໝໄພ່ ຍາມໄຣ່ຍາມນາໃຫ້ວາງໄພ່ ເມື່ອຫາໄຣ່ຫານາ ຢ່າເອົາໄປຮົ້ງເຮືອໄວ້.

ອັນໜຶ່ງໄພ່ຫາບໍ່ໄດ້ ກູ້ເງິນດອນເຈົ້າເມືອງສາມປີຈຶ່ງເອົາດອກ.

ອັນໜຶ່ງໄພ່ສ້າງໄຣ່ນາ ຮົ້ວສວນກ່ອນໝ້າ ກິນສາມປີຈຶ່ງເອົາຄ່າ.

ອັນໜຶ່ງ ຢ່າເອົາໄພ່ມາເປັນຂ້ອຍ ອັນຈະເອົາໄພ່ເປັນຂ້ອຍນີ້ທໍ່ມີເຫດ ສີ່ຈຳພວກ ຄືວ່າ : ໄປຕ້ອງຫນີ້ສິນທ່ານຜູ້ອື່ນຫາສົ່ງເສຍບໍ່ໄດ້ເອົາມາເປັນຂ້ອຍ. ໄພ່ເປັນໂຈນຂ້າທ່ານຫາສົ່ງເສຍບໍ່ໄດ້ມາເປັນຂ້ອຍ. ໄປເສີກລັກໜີເສຍ ໄປເສີກລະເຄື່ອງເສຍຫາສົ່ງໃຊ້ບໍ່ໄດ້ມາເປັນຂ້ອຍ. ອັນນີ້ຈຶ່ງໄດ້ວ່າເປັນຂ້ອຍດ້ວຍອາດຍາ ອານາຈັກແຜ່ນດິນຕັ້ງໄວ້ແລ.

ໃນຍະໜຶ່ງ ຂ້ອຍໃນທຳມະຈັກ ມີສີ່ຈຳພວກສັນນີ້ : ອັນໜຶ່ງຄືວ່າ ອັນໂຕຊາດ ອັນໜຶ່ງຄືວ່າ ທະນະກີຕາ ອັນໜຶ່ງຄືວ່າ ກີຣະມານີຕະ ອັນໜຶ່ງຄືວ່າ ສາມັງທາສັພຍະ ອຸປະຄະໂຕ ອັນໜຶ່ງຊາວບ້ານຊາວເມືອງອັນເກີດໃນກາງສີມາ ບ້ານເມືອງເຈົ້າແຜ່ນດິນກໍໄດ້ຊື່ວ່າຂ້ອຍສາມານຈຳພວກໜຶ່ງແລ.

ອັນໜຶ່ງຜູ້ໃດສ້າງບ້ານແປງເມືອງທີ່ຣົກເຮື້ອ ໃຫ້ເປັນທີ່ຢູ່ທີ່ກິນແລ້ວມີຜູ້ອ້າງວ່າມີເງິນມາຊື້ດອນ ເຈົ້າເມືອງໃຫ້ຄຳມາກກວ່າເກົ່າບໍ່ຊອບ ຢ່າໄດ້ໃຫ້ແກ່ມັນ. ອັນຜິດກັນເມືອງນອກ ໃຫ້ເຈົ້າບ້ານເຈົ້າເມືອງພິຈາລະນາດູໃຫ້ກີ່ ຜິດຄວນຂ້າປ່າຂ້າ ຢ່າຮື້ຄອກກອງກຄົວກັນໃຫ້ນຳມາພິຈາລະນາໃນເມືອງຫລວງ ຜີຜິດແຕ່ເລັກນ້ອຍ ພໍເປັນແຕ່ເງິນຮ້ອຍລົງມາລຸ່ມ ໃຫ້ແປງກັນແຕ່ນອກໃຫ້ແລ້ວ. ອັນໜຶ່ງຂ້າ

ທ້າວບ່າວພະຍາສູ່ໄພ່ ມີລູກຍິງຊາຍ ຕົວມັນຕາຍໃຫ້ລູກມັນແທນທີ່ນັ້ນ ຜີມັນບໍ່ຕາຍຈັກໜີຈາກໄພ່ໃຫ້ເອົາເງິນສອງຮ້ອຍ ລູກເມຍມັນໃຫ້ໄວ້ເປັນໄພ່. ໄພ່ສູ່ຂອຍໃຫ້ມັນເປັນຂອຍ. ຜີມັນຈັກໜີໃຫ້ເງິນສອງຮ້ອຍ ອັນໜຶ່ງໄພ່ບໍ່ຜິດ ຜູກໄພ່ໄໝໄພ່ ໄພ່ສວນແພ້ໃຫ້ໄໝຂອງໄພ່ໃຫ້ຄືນສຽງ ໃຫ້ໄໝມຊ້ຳໃຫ້ມັນ ແປງຂວັນໄພ່ເງິນຫົກເບ້ຍຜູ້ໃດລັກອາດຍາເຈົ້າພະຍາໄປເມືອງນອກ ໃຫ້ທ່ານຄຸ່ມອັນໜຶ່ງສີ່ຂີບຣິບກິນອັນໜຶ່ງເບ້ຍກ້ອຍຄຳ ບາປໄໝມທ່ານກໍດີ ອັນໜຶ່ງລັກເອົາດວງມາດດວງຕາກາຍດ່ານກໍດີ ເອົາໄດ້ໃຫ້ໃສ່ຄອກເຈັດວັນ ແມ່ນວ່າຂ້ອຍໃຜກະທຳດັ່ງນັ້ນ ໃຫ້ກືເອົາເຈົ້າມັນໃຫ້ໄດ້ ຄັນວ່າໄດ້ໃຫ້ໃສ່ຄອກຫົກວັນ ຜີບໍ່ໃຫ້ໄໝເຈົ້າມັນຂັ້ນຄ່າຄໍໜດກື້ຂ້ອຍບໍ່ໄດ້ ຜີມັນຮູ້ມັນໜີເຈົ້າມັນເອົາບໍ່ໄດ້ໃຫ້ໄໝມເຈົ້າມັນຂັ້ນແປງໜຶ່ງ.

ອັນໜຶ່ງ ເຈົ້າຂຸນຜູ້ໃດ ເຫັນລູກຍິງນາງສາວທ່ານ ມັກບໍ່ກ່າວບໍ່ໂອມດ້ວຍອັນຊອບ ອັນໜຶ່ງກ່າວໂອມແລ້ວພໍ່ແມ່ບໍ່ໃຫ້ ສາວກໍບໍ່ມັກຢ່າໄດ້ເອົາ ຜູ້ໃດຫາກຈັບຫາກບາຍເອົາເຫຼືອໃຈ ໃຫ້ໄໝມເປັນຂັ້ນໜຶ່ງລູກເພີ່ນໃຫ້ຄືນ ແປງຂັນພໍ່ແມ່ເງິນຫົກເບ້ຍ.

ອັນໜຶ່ງລວງປູລວງປາ ກິນສວນ ກວນຫຍ້າ ໄພ່ ເຈົ້າຂຸນຜູ້ໃດສະຫາວບໍ່ກາມໄປຕຶກໄປທ່ອງເອົາ ອັນໜຶ່ງໄປຮຸກຮານເອົາລູກສົ້ມລູກຫວານດ້ວຍອຳນາດອາດຍາຕົນ ໃຫ້ໄໝມຫ້າບາດ. ບໍ່ຮູ້ໄປຕຶກໄປທ່ອງແລຄົນ ຢ່າວ່າຫີສັງ ຂ້ອຍແລະລູກຂຸນຜູ້ໃຫຍ່ຜູ້ໃດກໍດີ ເຈົ້າບໍ່ວ່າຮ້າຍຫາກໜີໃຫ້ຜູກມາໄວ້ດັ່ງເກົ່າ ອັນໜຶ່ງລູກຂຸນໃຜຍາມເປັນທຸກເຈົ້າລູກຂຸນບໍ່ປ້ອງປົກ ແລລະເສຍຜູ້ໃດ ປ້ອງປົກເອົາໃຫ້ໄດ້ແກ່ຜູ້ນັ້ນອັນໜຶ່ງລູກຂຸນມັກຍິນດີດອມກັນ ມາປະຕິບັດແກ່ກັນ ບໍ່ໃຊ່ເຊື້ອລູກຂຸນແຕ່ເກົ້າແກ່ບໍ່ມັກຢູ່ ຈັກໜີຢ່າວ່າຫີເຫັ້ນ. ມັນຂ້ອຍແລລູກຫຼານກໍດີຍາມທຸກເຖິງຄືວ່າພະຍາດຮ້າຍ ເຈົ້າມັນແລພໍ່ແມ່ລະເສຍກໍດີ ອັນໜຶ່ງເມືອເຂົ້າແພງ ເຈົ້າມັນພໍ່ແມ່ມັນຫາສັງລ້ຽງບໍ່ໄດ້ ລະເສຍກືກອັນຈັກຕາຍຜູ້ໃດເອົາມາລ້ຽງມາເຖິງອີ່ມດີພີແລ້ວ ເຈົ້າຄົນເຫັນຈັກເອົາຢ່າ

ໃຫ້ ວ່າຈັກໃຫ້ຄ່າແກ່ຜູ້ລຽງ ບໍ່ເອົາຄ່າຈັກເອົາຄືນ ກໍຢ່າວ່າສັງແກ່ມັນ.
ອັນໜຶ່ງໄພ່ກໍດີລູກຊຸມກໍດີ ບວດເປັນພິກຂຸແລ້ວ ມັນເລົ່າສິກໄປຫາຊຸມ
ຫານາງທີ່ໃດກໍດີ ຢ່າວ່າສັງແກ່ມັນເທີ້ນ ອັນໜຶ່ງຂ້າເສິກມາປະຈົນ
ບ້ານເມືອງໄດ້ຂ້ອຍແລຄົນສິນກໍດີ ໄດ້ລູກເມຍໃຜກໍດີຜູ້ໃດໄປເສິກຢາກ
ໄດ້ໄກ່ເອົາດອມຂ້າເສິກກໍດີ ຂໍເອົາກໍດີ ມັກເອົາໜີກໍດີ ມັນເລວເອົາ
ກໍດີ ໃຫ້ເປັນຂ້ອຍເປັນເມຍມັນເທີ້ນ ເຈົ້າຜົວມັນພໍ່ແມ່ມັນເຫັນຈັກ
ເອົາບໍ່ໄດ້ແລ ວ່າຈັກເອົາໃຫ້ໄກ່ເອົາແລ. ອັນໜຶ່ງໄພ່ກໍດີ ລູກຊຸມກໍດີ
ກູ້ຫນີ້ທ່ານສາມຮ້ອຍໃຫ້ໃຊ້ຜູ້ໜຶ່ງ ອັນໜຶ່ງຂ້ອຍລັກມາຂຶ້ນເຮືອນເຖິງ
ສາມວັນ ຍັງຮູ້ທີ່ເຈົ້າໃຫ້ບອກ ບໍ່ຮູ້ທີ່ເຈົ້າຂ້ອຍໃຫ້ບອກແກ່ເພີ່ນ ໃຫ້
ປ່າວ ຄັນເຈົ້າຂ້ອຍມາເອົາ ໃຫ້ມີເງິນເບັຍໜຶ່ງ ແປງເຮືອນເຫຼືອ
ກວ່ານັ້ນຢ່າໃຫ້ເທີ້ນ ຜີເຈົ້າເຮືອນບໍ່ວາງຂ້ອຍມອບໄວ້ ຂ້ອຍຕາຍກໍດີ
ລັກໜີກໍດີ ໃຫ້ໃຊ້ຂ້ອຍທ່ານ ຜີບໍ່ຕາຍບໍ່ໜີແຕ່ນັ້ນເມືອໜ້າ ໃຫ້ນັບ
ເອົາຄ່າແຮງ ຂ້ອຍຜູ້ຊາຍເອົາມື້ສ່ຽວ ຂ້ອຍຜູ້ຍິງເອົາມື້ຊີກ ຜີວ່າເຖິງ
ສາມວັນ ເຈົ້າເຮືອນບໍ່ບອກແກ່ເຈົ້າຂ້ອຍ ໃຫ້ໄໝເຈົ້າເຮືອນຮ້ອຍ
ໜຶ່ງຂ້ອຍໃຫ້ຄືນ ຜີຂ້ອຍລັກໜີ ກາຍແຕ່ໜື່ນວາ ເມືອໜ້າໃຜເຫັນ
ໄກ່ເອົາດອມຜູ້ໄດ້ ພາຍໜ້ານັ້ນໃຫ້ເຈົ້າຂ້ອຍເທີ້ນ ເງິນຜູ້ນັ້ນຄ່າ
ທ່ານປາກທ່ານຈາ ໃຫ້ເອົາຮ້ອຍໜຶ່ງ ຂ້ອຍທ່ານໃຫ້ຄືນ. ຜີຕົກໄກພໍ
ຄາວແລງຄາວງາຍ ຈັກພົ້ນແດນດິນໃຫ້ຜ່າຄ່າເອົາ ຜີແດນດິນໄທ
ການໄດ້ໃຫ້ເອົາສອງສ່ວນ ສ່ວນໜຶ່ງໄວ້ແກ່ມັນ ຜີຕົກກາງເມືອງໃຜ
ໄດ້ຢ່າໃຫ້ເທີ້ນ ຜີເຈົ້າຂ້ອຍຈັກເອົາໃຫ້ໃຊ້ ອັນໜຶ່ງໄປເສິກຂ້ອຍພັດ
ເສຍ ໃຜໄດ້ຜ່າສາມສ່ວນ ຜູ້ໄດ້ເອົາສ່ວນໜຶ່ງ ຜີຂ້ອຍຕາຍດິກນ້ຳ
ກໍດີ ຜູກຄໍຕາຍກໍດີໃຜໄດ້ໃຫ້ຜ່າກອງຄ່າເອົາ ອັນໜຶ່ງທ່ານລັກໜີມາ
ຈອດເຮືອນມັນບໍ່ຮູ້ວ່າເປັນຂ້ອຍ ເພີ່ນລັກໜີແລ້ວມັນບໍ່ເອົາໄວ້ ພອຍ
ຊ້ຳຈຳຂ້ອຍທ່ານໜີ ໃຫ້ໄໝຮ້ອຍໜຶ່ງ ຂ້ອຍທ່ານໃຫ້ໃຊ້ ຜີເຈົ້າ
ເຮືອນບໍ່ໄດ້ຈຳໜີ ຢ່າວ່າສັງແກ່ເຈົ້າເຮືອນ ຜີເຈົ້າເຮືອນບໍ່ຮູ້ວ່າຂ້ອຍ
ທ່ານລັກໜີຫາກມາຢູ່ ມັນຫາກໜີຢ່າວ່າສັງແກ່ເຈົ້າເຮືອນ ເຫດວ່າ

ມັນບໍ່ຮູ້ວ່າຂ້ອຍລັກໜີດາຍ ຜີວ່າຂ້ອຍລັກໜີຂໍລອບເຮືອເຈົ້າເຮືອບໍ່ຮູ້ວ່າ ມັນລັກໜີ ມັນລ່າຍວ່າຂ້າໄປຫາພີ່ນ້ອງຂ້າ ຜູ້ມີຊື່ດັ່ງນັ້ນວ່າອັນກໍຢ່າ ໃຫ້ເປັນໂທດແກ່ເຈົ້າເຮືອເທີ້ນ ອັນຂ້ອຍແລຄົນສິນທ່ານ ມັນລັກໜີໄປຢູ່ໃນບ້ານເຮືອນທີ່ໃດກໍດີ ເຈົ້າບ້ານ ເຈົ້າເຮືອນ ຊຸນກາມຄຳປາກ ມັນວ່າ ຂ້ອຍບໍ່ໄດ້ເປັນຂ້ອຍຄົນໃຜແລ ວ່າອັນ ເຈົ້າບ້ານເຈົ້າເຮືອນຈິ່ງໃຫ້ມັນຢູ່ດອມ ເມື່ອລຸນ ເຈົ້າມັນຈິ່ງໄປເຫັນມັນດັ່ງນັ້ນ ບໍ່ບອກແກ່ເຈົ້າບ້ານເຈົ້າເຮືອນໃຫ້ຮູ້ໃຫ້ເອົາໃຫ້ມັນ ມັນຫາກໄປໄລ່ເອົາຂ້ອຍມັນ ເມື່ອນັ້ນຂ້ອຍແລຄົນສິນມັນແລ່ນໜີໄປທີ່ໃດບໍ່ຮູ້ ດັ່ງນັ້ນກໍຢ່າໃຫ້ເປັນໂທດແກ່ເຈົ້າບ້ານເຈົ້າເຮືອນເທີ້ນ ອັນໜຶ່ງເຈົ້າຂ້ອຍເຫັນຂ້ອຍມັນ ມັນຈັກເອົາໜີເຈົ້າບ້ານ ບໍ່ໃຫ້ເອົາໜີ ຂໍເອົາໄວ້ໃຫ້ຢູ່ໜີ້ກ່ອນ ມັນບໍ່ຮ່າງວ່າຈັກໜີໄປທີ່ໃດແລວ່າອັນກໍດີ ອັນໜຶ່ງໃຫ້ເຈົ້າຂ້ອຍເອົາບາດໜຶ່ງແປງຕູກ່ອນ ຈິ່ງເອົາຂ້ອຍໜີວ່າອັນກໍດີ ຂ້ອຍຜູ້ນັ້ນມັນລວດໜີເສຍໃຫ້ເຈົ້າບ້ານເຈົ້າເຮືອນໃຊ້ ເຫດວ່າເຈົ້າຂ້ອຍມັນຈັກເອົາບໍ່ໃຫ້ດາຍ ອັນໜຶ່ງຂ້ອຍສູ້ກັບເຈົ້າຂ້ອຍ ຜູ້ໃດໃຫ້ໃຊ້ຄ່າ ຄ່າຂ້ອຍທໍ່ໃດໃຫ້ເອົາທໍ່ນັ້ນ ອັນໜຶ່ງຜູ້ຊາຍໜີໄປຫາຂ້ອຍຜູ້ຍິງ ໃຫ້ຜ່າສາມສ່ວນໄວ້ແກ່ຂ້ອຍຜູ້ຍິງສ່ວນໜຶ່ງ ຜີບໍ່ໄກ່ໃຫ້ເຈົ້າຜູ້ ຊາຍແປງເຮືອນຜູ້ຍິງເບັຍໜຶ່ງ ເອົາຂ້ອຍຄືນ ຂ້ອຍຍິງໜີເມືອຫາຂ້ອຍຜູ້ຊາຍ ໃຫ້ໃຊ້ສາມຮ້ອຍ ໃຫ້ເອົາຊາວແປດບາດ ຜີບໍ່ໄກ່ໃຫ້ເອົາເງິນເຮືອນເບັຍໜຶ່ງຄ່າເຂົ້າຢ່າວ່າສັງ ອັນໜຶ່ງຂາຫາກມັກກັນ ເຈົ້າຂ້ອຍຜູ້ຊາຍຈັກໄກ່ເອົາເຈົ້າຂ້ອຍຜູ້ຍິງບໍ່ໃຫ້ ເຈົ້າຂ້ອຍຜູ້ຍິງຈັກໄກ່ເອົາ ເຈົ້າຂ້ອຍຜູ້ຊາຍບໍ່ໃຫ້ສອງຂາພາກັນລັກໜີ ຢ່າວ່າຫີແກ່ກັນ ເຈົ້າຂ້ອຍຫາກເບັຍເຫຼືອໃຈຂາດາຍ ອັນໜຶ່ງຂ້ອຍຜູ້ຊາຍລັກເອົາຂ້ອຍຜູ້ຍິງໜີ ແລ້ວມັນເລົ່າພັດຄືນມາໃຫ້ຂາຍເອົາຄ່າມັນ ເຫັນຂ້ອຍຜູ້ຍິງມາແລ້ວໃຫ້ເຈົ້າຜູ້ຍິງຄືນຄ່າຂ້ອຍຜູ້ຊາຍໝົດສິ້ນ ໄໝຜູ້ຊາຍຮ້ອຍຜີຂາຊູ່ຄົນຊູ່ຊວນກັນໜີ ຢ່າວ່າສັງແກ່ກັນ ໃຫ້ຊອຍກັນຫາຂ້ອຍໃຫ້ໄດ້ ອັນໜຶ່ງຜູ້ໃດຊື້ຂ້ອຍທ່ານໃຫ້ພັດເດືອນໜຶ່ງ ຜີຂ້ອຍຜູ້ນັ້ນແມ່ນຂ້ອຍນໍ້າຄົນຫຼວງກໍດີ ເປັນປອບ

ໂພງກໍດີ ເປັນພະຍາດອັນໜັກ ເປັນບ້າເປັນຕາຟາງກໍດີ ເຫດໝູ່ນີ້
ໃຫ້ຄືນແກ່ເຈົ້າຂ້ອຍ ຜີກາຍເດືອນໜຶ່ງເມືອໜ້າ ຢ່າໄດ້ຄືນເທີ້ນ ຜີ
ວ່າເປັນຂ້ອຍຫຼວງ ກາຍເດືອນໜຶ່ງ ໃຫ້ຄືນແມ່ນວ່າ ຊື້ຊາງມາງົວ
ຄວາຍກໍດີ ແມ່ນຂອງຫຼວງໃຫ້ຄືນ ໃຫ້ເອົາເງິນດອມຜູ້ຂາຍ ຄືນໃຫ້
ແກ່ຜູ້ຊື້ ອັນໜຶ່ງຂ້ອຍຜູ້ໃດຂ້າທ່ານ ຄືວ່າເປັນໂຈນກໍດີລັກຂອງທ່ານ
ກໍດີ ກູ້ໜີ້ກິນສິນທ່ານກໍດີ ຜິດທ່ານຜູ້ໃດກໍດີ ເຈົ້າມັນຂາຍເສຍໄປຕົກ
ພາຍໜ້າ ເພິ່ນຈຶ່ງເຫັນມັນມີໂທດ ຢ່າໃຫ້ຕິດຜູ້ໄກ່ພາຍໜ້າໃຫ້ຕິດ
ເຈົ້າຜູ້ຂາຍໃຫ້ແກ່ໂທດມັນຜູ້ນັ້ນ ເຫດມັນກິນຄ່າຂ້ອຍແຫ່ງມັນແລ
ອັນໜຶ່ງຜູ້ໃດຂັດທ່າວກໍດີ ປັກຂວາກກໍດີ ໃນຂ່ວງບ້ານຈີ່ມເຮືອນມັນບໍ່
ບອກເລົ່າແກ່ຊາວບ້ານໃຫ້ຮູ້ ງົວຄວາຍ ຊ້າງມ້າໝາຂອງລ້ຽງທ່ານ
ຕາຍໃຫ້ໃຊ້ ຜີບໍ່ຕາຍໃຫ້ມັນປົວ ຜີກືກຄົນກາງຄືນຢ່າວ່າສັງແກ່ມັນ
ມັນໃສ່ເພິງວ່າ ຈັກຮັກສາຢາວເຮືອນເພິ່ນດາຍ ຜີວ່າກືກເມື່ອວັນໃຫ້
ໃຊ້ ຜີບໍ່ຕາຍໃຫ້ຊ່ອຍຢາດີແລ້ວໃຫ້ສູ່ຂວັນ ອັນໜຶ່ງຜູ້ໃດຮັກສາໄຟ
ເຮືອນບໍ່ດີ ໃຫ້ໄໝ້ເຮືອນທ່ານສິບເຮືອນມາຫຼັງໃຫ້ໄໝຫ້າບາດຫຼາຍ
ກວ່ານັ້ນເມືອໜ້າໃຫ້ໄໝສອງຮ້ອຍ ອັນໜຶ່ງ ຜີເພິ່ນຈູດປ່າກໍດີ ຈູດ
ໄຮ່ກໍດີ ໄຟລາມມາຫາເຮືອນໃຜ ເຈົ້າເຮືອນບໍ່ຜຽດໄຟໄວ້ ໃຫ້ໄໝ້
ເຮືອນຕົນກໍດີ ເຮືອນເພິ່ນກໍດີ ໃຫ້ໄໝເຈົ້າເຮືອນຮ້ອຍໜຶ່ງ ຄົນຊະ
ດົມກໍດີ ຄົນລະຄວາງກໍດີ ລຶບປະຄຸນຄົນແປງເງິນຄຳລຶບລັບກໍດີ ໃຫ້
ເອົາພໍ່ຄູເຂົ້າໃສ່ຄອກ ສາມສິບຫ້າວັນ ຜູ້ບ່າວໃສ່ຄອກເຈັດວັນ ຂອງ
ທ່ານເຂົ້າເອົາເທົ່າໃດໃຫ້ຄືນຕົງສຽງ ແມ່ນໄດ້ຊື້ກິນ ກໍໃຫ້ໃຊ້ ອັນ
ໜຶ່ງຂ້ອຍສວນເຈົ້າໃຫ້ໃສ່ຄອກສາມວັນ ຜູ້ໃດປັກໂທດໃສ່ທ່ານ ທ່ານ
ສວນແພ້ໃຫ້ໄໝຮ້ອຍບາດ ອັນໜຶ່ງ ລູກຂຸນຜູ້ໃດກິນດິນໃຫ້ຊ່ອຍຈັບ
ເຈົ້າດິນການ ຢ່າເອົາໄປ ພວກໜີ້ເມືອຫາໄພ່ກອງ ແລ້ວໄພ່ກອງ
ເມືອຫາໄພ່ພວກ ໃຫ້ເຈົ້າໄພ່ເອົາຄືນ ອັນໜຶ່ງໄພ່ກອງ ຢ່າໃຫ້ເຍັງ
ເຈົ້າເມືອງ ອັນເພິ່ນຂ້າຄົນກໍດີ ໂຈນລັກງົວຄວາຍກໍດີ ໄກເຂດບ້ານ
ເມືອງໃຜ ໃຫ້ແຫກນັບແຕ່ນັ້ນໄປຫາບ້ານ ຫ້າສິບວາສຸດບ້ານໃຫ້

ໄໝເຈົ້າບ້ານຫ້າບາດ ລ້ຳແຕ່ນັ້ນເມືອສອງຮ້ອຍວາ ສາມຮ້ອຍວາ ໃຫ້ໄໝກຸ່ອງບາດ ລ້ຳແຕ່ສາມຮ້ອຍວາເມືອໜ້າຢ່າວ່າສັງ ອັນໜຶ່ງ ທຸງທາງແວນອນຕີນນ້ຳ ຕີນທ່າໃຫ້ເລົ່າເຈົ້າບ້ານ ຜີວ່າໂຈນເລວ ໃຫ້ເຈົ້າບ້ານຊ່ອຍ ຫາກບໍ່ຊ່ອຍຍັງຕາຍ ໃຫ້ເຈົ້າບ້ານໃຊ້ຄ່າຄົນຂອງ ເສຍກໍໃຫ້ໃຊ້ ຜີບໍ່ຕາຍໃຫ້ສູ່ຂວັນຜີໄດ້ໂຈນຢ່າວ່າຫຍັງເທີ້ນ ຜີເລວເຈົ້າ ບ້ານໃຫ້ແຂກຊ່ອຍ ບໍ່ຊ່ອຍໃຫ້ໃສ່ໂທດສັນຖຸງວກັນ ຄົນໂຈນເລວເຈົ້າ ບ້ານ ໃຫ້ຕີກອງຫວງໃຫ້ບ້ານເມືອງຊ່ອຍ. ຜີບໍ່ຊ່ອຍຄົນຍັງເປັນຍັງ ຕາຍ ໃຫ້ໃສ່ຂັນໄໝສັນຖຸງວນັ້ນ ອັນໜຶ່ງຄົນລັກຂຶ້ນເຮືອນເອົາຂອງຜູ້ ໃດ ເຈົ້າເຮືອນໃກ້ປະມານ ສອງເຮືອນ ສາມເຮືອນກໍດີ ບໍ່ລົງຊ່ອຍ ຕ້ອນໄລ່ຍັງເສຍຂອງກໍດີ ຍັງຈັບຍັງຕາຍໃຫ້ໃສ່ໂທດສັນຖຸງວນັ້ນ. ຜີ ວ່າຍັງຮູ້ຜູ້ລັກຢ່າວ່າສັງແກ່ກັນເທີ້ນ ໃຫ້ຊ່ອຍກັນເອົາໂຈນໃຫ້ໄດ້. ອັນ ໜຶ່ງ ຜີໂຈນໄປ່ທັນໄດ້ຂອງໃຫ້ໄໝຮ້ອຍບາດເງິນ ອັນໜຶ່ງໂຈນແວ່ ເຮືອນໃຜ ມັນກໍຮູ້ວ່າເປັນໂຈນແລ້ວ ມັນຫາກໃຫ້ແວ່ໃຫ້ໄໝສອງ ຮ້ອຍບາດ ອັນໜຶ່ງ ຊ້າງມ້າງົວຄວາຍກໍດີ ຕົວນ້ອຍໃຫ້ຫຼີກຕົວໃຫຍ່ ຊ້າງຕົວບໍ່ນ້ອຍໃຫ້ຫຼີກຕົວນ້ອຍ ງົວຄວາຍຕົວບໍ່ຮ້າຍໃຫ້ຫຼີກຕົວຮ້າຍ ບໍ່ ຫຼີກຊົນກັນຕາຍຄວາມແລ້ວ ຜີຊູ່ຕົວຊູ່ຫຼີກກັນແລ້ວ ຂາຊູນຊົນກັນ ຄວາມແລ້ວເຫດຊວດກຳລັງດາຍ ຜີຕົວໜຶ່ງຫຼີກ ຕົວໜຶ່ງບໍ່ຫຼີກ ຊົນ ຕາຍກໍດີບໍ່ຕາຍກໍດີ ໃຫ້ໃສ່ໂທດແກ່ເຈົ້າຄວາຍ ຄວາມຮັກສາໄປບໍ່ຫຼີກ ນັ້ນ ອັນໜຶ່ງ ຊ້າງປ່ອຍໃນເກືອນປອກແຕກ ໄລ່ແທງທ່ານຕາຍ ໃຫ້ໃສ່ຄອກຄວາມຊ້າງ ເຫດບໍ່ດູປອກ ຊ້າງຕົວນັ້ນໃຫ້ເອົາດາຍດອກ ຜີວ່າຊ້າງນ້ອຍ ມັນຫາກແທງປອກແຕກ ໄປແທງຊ້າງທ່ານຕາຍ ໃຫ້ເອົາຊ້າງຕົວນັ້ນ ຢ່າວ່າສັງແກຄວາມເທີ້ນ ຜີວ່າເຮືອສອງເຫຼັ້ມ ຂຶ້ນແລລ່ອງກໍດີ ເຮືອເຫຼັ້ມຕາມຫຼັງຊົນເຮືອເຫຼັ້ມໄປກ່ອນຫຼົ້ມ ໃຫ້ໃຊ້ ຂອງທ່ານ ຜີວ່າເຮືອເຫຼັ້ມໜຶ່ງລ່ອງເຫຼັ້ມໜຶ່ງຂຶ້ນ ຈອດປູ່ກ່ອນບໍ່ເປັນ ທີ່ຈອດແນບບົກໄວ້ ເຮືອຊົນກັນເຫຼັ້ມລ່ອງຫຼົ້ມ ໃຫ້ໃຊ້ຂອງຜີເຫຼັ້ມຂຶ້ນ ຫຼົ້ມຄຳແລ້ວ. ຜີເຫຼັ້ມຂຶ້ນຈອດ ເຫຼັ້ມລ່ອງຊົນຫຼົ້ມໃຫ້ໃຊ້ຂອງທ່ານຜີ

ເຫຼັ້ມລ່ອງຫຼົ້ມຄຳແລ້ວ ອັນໜຶ່ງເຮືອເບົາໃຫ້ຫຼີກເຮືອໜັກ ບໍ່ຫຼີກຊູນ
ກັນເຮືອໜັກຫຼົ້ມເສຍຂອງໃຫ້ໃຊ້ເຮືອເບົາຫຼົ້ມຄຳແລ້ວ ຜິວ່າຊູ່ເຫຼັ້ມຊູ່
ໜັກສະເທີນແກ່ກັນຫຼີກບໍ່ໄດ້ ໃຜຢ່າວ່າທໍ່ເທີ້ນ ເຫດສຸດກຳລັງ ອັນ
ໜຶ່ງເຮືອບໍ່ຫຼີກແພ ຊູນຫຼົ້ມຄຳແລ້ວ ອັນໜຶ່ງ ເຮືອໄວ້ທ່າຫາກໄຫຼ
ເສຍ ໃຜໄດ້ຍັງຮູ້ເຈົ້າຂອງໃຫ້ເລົ່າ ບໍ່ຮູ້ຈັກໃຫ້ເລົ່າແກ່ບ້ານໃຕ້ບ້ານ
ເໜືອໄວ້ ເຈົ້າເຮືອໄປຫາໃຫ້ບອກ ເຈົ້າເຮືອໃຫ້ໝາຍຫົວເຮືອກ່ອນ
ເຮືອເພິ່ນໃຫ້ຄືນ ບໍ່ຄືນບໍ່ຊອບ ອັນໜຶ່ງໄດ້ເຮືອເພິ່ນບໍ່ບອກບໍ່ເລົ່າໃຫ້
ຮູ້ເປັນສັກຂີໄວ້ ອຳເອົາເຮືອທ່ານ ອັນໜຶ່ງ ແປງເຮືອເສຍໃຫ້ເສຍ
ໄໝເບ້ຍໜຶ່ງ ເຮືອເພິ່ນໃຫ້ຄືນ ຜິວ່າບໍ່ເສຍ ພໍໃຫ້ຮອດກວ້ານໃຫ້ໃສ່
ຂື່ມຫ້າບາດ ຜິວ່າເຮືອເພິ່ນໄຫຼເສຍກັບແກບພວງ ໃຜເຫັນຢ່າເອົາ
ໃຜຜູ້ເອົາເປັນໂທດ ອັນໜຶ່ງຄົນທຽວທາງກໍດີ ໃຫ້ດູດັ່ງເຮືອນັ້ນຕາມ
ອັນໜັກອັນເບົາດາຍ ອັນກີ້ຫາບ ຜິດຄວນໃຊ້ໃຫ້ໃຊ້ສົມດຽວນັ້ນ ອັນ
ກາຍຄອງອາດຍາ ຜູ້ໃດຈັກກາຍດ່ານ ໃຫ້ວົງນ້ຳກັບໄຟ ບໍ່ມີໃຫ້ຕາ
ຈຶ່ງໃຫ້ໃສ່ດ່ານກໍດີ ໄປຮັບເພິ່ນກໍດີ ໃຫ້ຜູກໄວ້ຊື່ນຕາ ຈຶ່ງປ່ອຍເສຍ
ໂທດຢ່າໃສ່ຂື່ມຢ່າໃສ່ ແມ່ນຄົນໃຜໃຫ້ສົ່ງຮອດເຈົ້າມັນ ຜິວ່າເຈົ້າ
ມັນຈັກເຢັດຄວາມ ໃຫ້ໄໝເຈົ້າມັນ ເຫດວ່າພວກຜູ້ຮ້າຍດາຍອັນ
ໜຶ່ງ ສອງຜິດກັນດ່າຕີກັນ ຜີຜູ້ໜຶ່ງເພິ່ນບໍ່ຜິດ ມັນຫາກມາດ່າເພິ່ນ
ກ່ອນ ເພິ່ນບໍ່ດ່າມັນຕອບ ໃຫ້ໄໝຂື່ມທັກເບ້ຍ ຜິວ່າເພິ່ນຜິດ ມັນຈຶ່ງ
ດ່າເພິ່ນເລົ່າດ່າຕອບ ໃຫ້ໄໝຜູ້ດ່າຕອບເບ້ຍໜຶ່ງ ເຫດວ່າມັນຜິດ
ເພິ່ນເພິ່ນຈຶ່ງດ່າດາຍ ອັນໜຶ່ງເພິ່ນບໍ່ຜິດມັນຫາກດ່າເພິ່ນ ເພິ່ນເລົ່າ
ດ່າຕອບ ມັນເລົ່າບໍ່ດ່າຕອບ ຊູ່ຄົນຢ່າວ່າສົ່ງແກ່ກັນ ຜີມັນເລົ່າດ່າ
ຕອບໃຫ້ໃສ່ຂື່ມທັກບາດ ອັນໜຶ່ງສອງຜິດກັນ ຜູ້ໜຶ່ງດ່າ ຜູ້ໜຶ່ງຕີ
ເລືອດບໍ່ອອກໃຫ້ໄໝຄືວ່າສູ່ຂວັນ ຜິວ່າເລືອດອອກ ໃຫ້ໄໝຂື່ມແປງ
ໜຶ່ງ ຕາຍໃຊ້ໂທດໜຶ່ງ ຜິວ່າຜູ້ຜິດຕີຜູ້ບໍ່ຜິດ ເລືອດບໍ່ອອກໃຫ້ຂື່ມ
ຫ້າບາດ ເລືອດອອກໃຫ້ໄໝຂື່ມໄໝໜຶ່ງ ຕາຍໃຫ້ໃຊ້ສອງໂທດອັນ
ໜຶ່ງຊູ່ຄົນຊູ່ຕີກັນ ຜູ້ຕີກ່ອນເລືອດບໍ່ອອກ ຜູ້ຕີລຸນເລືອດອອກໃຫ້ໄໝ

ໃຜບໍ່ໄດ້ ຊື່ວ່າສະເໝີກັນ ຜູ້ຕີກ່ອນໃຫ້ເລືອດອອກໄໝ ຂັນໜຶ່ງຜີວ່າ
ເລືອດອອກທັງສອງໄໝຜູ້ຕີກ່ອນ ຜີເລືອດບໍ່ອອກທັງສອງແຕ່ຈັບໃຫ້
ຜູ້ຕີກ່ອນສູ່ຂວັນເບ້ຍໜຶ່ງ ອັນໜຶ່ງຜູ້ໜຶ່ງກີ້ຄອນ ຜູ້ໜຶ່ງກີ້ດາບແລວ
ກັນ ຜູ້ກີ້ຄອນຕີຜູ້ມີອາວຸດເລືອດອອກ ກີສະເໝີກັນ ຜີຜູ້ກີອາວຸດຟັນ
ແທງ ຜູ້ກີ້ຄອນເລືອດອອກ ໃຫ້ໄໝຜູ້ກີອາວຸດຂັນໜຶ່ງ ຜີວ່າຕາຍ
ໃຫ້ໃຊ້ໂທດ ຜີຜູ້ກີອາວຸດຕາຍຄຳແລວ ອັນໜຶ່ງລັກເຜີ້ງທີ່ເປັນງວດ
ທ່ານ ໃຫ້ໄໝຮ້ອຍໜຶ່ງ ຜູ້ໃດລັກຜັກໝົດທັງສວນກໍດີ ໃຫ້ໄໝຫ້າ
ບາດ ແຕ່ເອົາກິນພໍອີ່ມຢ່າວ່າສັງ ລັກຄາດລັກໄກບາດໜຶ່ງ ລັກກໍ່ລັກ
ພາຍຂັນເຄິ່ງໜຶ່ງ ຜູ້ໃດຕັດໄມ້ເສື້ອບ້ານເສື້ອເມືອງທີ່ລ້ຽງເສຍ ໃຫ້ໃຊ້
ຂອງລ້ຽງທ່ານທັງມວນ ຜີມັນບໍ່ໃຊ້ ຄົນຍັງຕາຍກໍດີ ສັດຕາຍກໍ່ດີໃຫ້
ໃຊ້ຄ່າຄົນຄ່າສັດ ແມ່ນຂອຍທ່ານໃຫ້ເຈົ້າມັນໃຊ້ຕາງ ແຕ່ກ້ານຫົວ
ໝື່ນລົງລຸ່ມ ບໍ່ໃຊ້ໃຫ້ໃສ່ຄອກໄວ້ສາມສິບວັນ ກ້ານຫົວແສນເມືອເທິງ
ໃຫ້ໄໝສອງຮ້ອຍ ອັນໜຶ່ງຜິດໃນກາດລັກໝາກ ລັກພູ ແລຂີງຫງມ
ມ້ຽງໝາກ ພ້າວຕານກ້ວຍອ້ອຍ ລູກສົ້ມລູກຫວານ ໃຫ້ໃສ່ຂັນໄໝ
ເບ້ຍພັນໜ່ວຍ ຜີວ່າລັກຊີ້ນປາ ເຫຼົ້າຢາມີດພ້າ ໝໍ້ໄຫໃຫ້ໄໝເບ້ຍ
ສອງຮ້ອຍໜ່ວຍ ຜີວ່າລັກເງິນຄຳ ແກ້ວແຫວນ ແຜ່ນເສື້ອເນື້ອຜ້າ
ໃຫ້ໃສ່ຂັນໄໝເປັນເງິນ ເບ້ຍໜຶ່ງ ອັນໜຶ່ງແຜກກັນ ຜີຮົບແລວກັນ
ດ່າຕີກັນໃຫ້ໄໝສາມຮ້ອຍໜ່ວຍ ຂອງແຜກກັນໃນກາດໃຫ້ພິຈາລະ
ນານາທີ ເຈົ້າເຂື່ອນທາດໃຫ້ແລ້ວ ຢ່າໄດ້ພາກັນເມືອຫາກວ້ານ
ສານ ອັນໜຶ່ງ ໂຈນລັກງົວຄວາຍ ຂ້າສູ່ເພື່ອນຊາວບ້ານກິນ ແມ່ນ
ບ່ວງໜຶ່ງກໍດີ ເຂົາກໍຮູ້ວ່າໂຈນລັກແລ້ວ ເຂົາອຳໄວ້ຊ່ອຍໂຈນໃຫ້ໃສ່
ຂັນໄໝນອກໂຈນນັ້ນແລ ເກືອງຄົນໃຫ້ໄດ້ຮ້ອຍໜຶ່ງບາດ ອັນໜຶ່ງ
ທ່ານບໍ່ຮູ້ວ່າໂຈນລັກມາຂາຍ ທ່ານໄດ້ຊື້ກິນ ເອົາມາໃຫ້ທ່ານກະທຳ
ອັນໃດອັນໜຶ່ງກໍດີ ເຂົາທັງຫຼາຍຝູງນັ້ນ ບໍ່ຮູ້ວ່າມັນໄປລັກ ໄວ້ໃຈວ່າ
ຂອງມັນແທ້ມາໃຫ້ດັ່ງນັ້ນ ຢ່າໃຫ້ເປັນໂທດແກ່ເຂົາທັງຫຼາຍຝູງນັ້ນ
ເທີ້ນ ເຫດວ່າທ່ານບໍ່ຮູ້ດາຍ ຜີວ່າຜູ້ລັກຜູ້ໜຶ່ງຊອບຜູ້ໜຶ່ງຊ້ຳອຳໄວ້

ສາມປະການນີ້ ໃຫ້ໃສ່ໂທດແກ່ຜູ້ອຳໄວ້ເຄິ່ງໜຶ່ງດາຍ ຜູ້ຊວນໃຫ້ໃສ່ເຄິ່ງຜູ້ລັກຊອບແລ ອັນໜຶ່ງເຂົ້າເຮືອເຫຼັ້ມດຽວກັນ ເພິ່ນຊວນມັນໄປລັກມັນບໍ່ໄປ ມັນຫ້າມເຂົາ ເຂົາບໍ່ຟັງມັນ ເຂົາໄປລັກມາປັນມັນ ມັນບໍ່ເອົາ ຢ່າໃສ່ໂທດແກ່ມັນ ຜິເພື່ອນຊວນມັນບໍ່ໄປ ມັນກໍຫ້າມເຂົາເຂົາໄດ້ມາປັນມັນ ມັນກໍຍັງເອົາ ໃຫ້ໄໝກ່ອງຂັນໂຈນໜຶ່ງ ອັນໜຶ່ງໂຈນລັກຂອງທ່ານ ເຈົ້າບ້ານເຈົ້າເຮືອນຕ້ອນໄດ້ ຢ່າເອົາຂອງຄືນແກ່ເຈົ້າຂອງ ໃຫ້ສ່ອງເຫດວ່າ ເຈົ້ານີ້ເປັນຄຸນຮັກສາຊາວບ້ານຊາວເມືອງໃຫ້ມີສຸກດາຍ ອັນໜຶ່ງຂ້ອຍລັກເອົາຂອງເຈົ້າມັນໜີ ໃຜຜູ້ໄດ້ໃຫ້ກ່ອງຄ່າແກ່ຜູ້ໄດ້ຂອງມັນ ຜູ້ຂ້ອຍຢ່າເອົາ ເຫດມັນຍັງຮັກສາຂອງມັນໄປດາຍ ທໍ່ໃຫ້ຜ່າເອົາຄ່າຕົວມັນຊອບແລ ອັນໜຶ່ງໂຈນເລວໄດ້ໄປພາຍໜ້າແລ້ວ ຜູ້ໜຶ່ງເລົ່າໄປເລວໂຈນໄດ້ຂອງນັ້ນຄືນ ໃຫ້ຜ່າກ່ອງແກ່ເຈົ້າຂອງ ອັນໜຶ່ງ ໂຈນລັກຂອງທ່ານໄປຂາຍ ມັນກໍຮູ້ວ່າໂຈນລັກແລ້ວ ມັນແລກໍເອົາດອມໂຈນ ເມື່ອເຈົ້າຂອງມາການຫາມັນບໍ່ບອກບໍ່ເລົ່າອຳໄວ້ ພາຍລູນເພິ່ນໄດ້ໂຈນມານຳເອົາຂອງໃຫ້ໄໝມັນທໍໂຈນ ຂອງໃຫ້ຄືນແກ່ເຈົ້າຂອງໃຫ້ສຽງຄ່າໃຫ້ຜູ້ກໍເອົາດອມໂຈນຄືນຜິວ່າຜູ້ກໍບໍ່ຮູ້ວ່າລັກ ໄວ້ໃຈວ່າເປັນຂອງມັນດາຍໄດ້ກໍເອົາ ເມື່ອເຈົ້າຂອງມານຳເອົາ ໃຫ້ຜູ້ກໍຄືນໂທດຢ່າໃສ່ ໃຫ້ກໍເອົາວ່າຂອງດອມໂຈນຄືນ ອັນໜຶ່ງໂຈນເອົາຂອງໄປຂາຍໃນກາດ ຜູ້ໃດຊື້ເທົ່າໃດ ໃຫ້ເຈົ້າຂອງເທົ່ານັ້ນ ຂອງໃຫ້ເອົາຄືນ ໂທດຢ່າໃສ່ແກ່ຜູ້ຊື້ ອັນໜຶ່ງ ຊື້ທີ່ສະຫງັດ ຄືວ່າໃນປ່າແລເຮືອນ ແລທາງຫຼວງກໍດີ ຍັງມີສັກຂີໃຫ້ເຈົ້າຂອງແທນເຄິ່ງໜຶ່ງໂທດຢ່າໃສ່ແກ່ຜູ້ຊື້ ອັນນີ້ຈາຂອງອັນຫາວິນຍານບໍ່ໄດ້ ຜິວ່າຂອງມີວິນຍານ ງົວຄວາຍຂ້ອຍຂ້າໂຈນລັກໄປຂາຍຜິວ່າຊື້ໃນກາງກາດທັງຫຼາຍ ກໍຮູ້ກໍເຫັນແທ້ ຫາກບໍ່ຮູ້ຈັກຜູ້ລັກ ຂອງນັ້ນໃຫ້ເຈົ້າຂອງເອົາດາຍດອກ ໂທດຢ່າໃສ່ ຜິວ່າຊື້ສະຫງັດໃຜກໍບໍ່ຮູ້ບໍ່ເຫັນ ໂຈນກໍບໍ່ຮູ້ຈັກ ໃຫ້ໄໝເຄິ່ງໂຈນ ຂອງໃຫ້ເອົາດາຍດອກ ຜິຮູ້ຈັກໂຈນໃຫ້ຜູ້ຊື້ ໄປນຳເອົາໂຈນມາໄດ້ແລ້ວ ເງິນຜູ້ຊື້ໃຫ້ຄືນ ໂທດ

ຢ່າໃສ່ແກ່ຜູ້ຊື້ ອັນໜຶ່ງຊ້າງມ້າງົວຄວາຍ ຕົກໄຮ່ນາຮົ້ວສວນຂອງຜູ້ໃດ ໃຫ້ຜູ້ໄດ້ບອກແກ່ເຈົ້າ ແລ້ວໃຫ້ມັນໄປເອົາພາຍໃນສາມວັນ ບໍ່ໄປເອົາຫາກປ່ອຍເສຍກໍດີ ຕາຍເສຍກໍດີ ຢ່າວ່າສັງແກ່ເຈົ້ານາເຈົ້າສວນເທີ້ນ ຍັງເສຍຂອງສວນເທົ່າໃດໃຫ້ໃຊ້ເທົ່ານັ້ນ ຂວັນເຂົ້າ ກໍໃຫ້ແປງເຫຼົ້າສອງໄຫໄກ່ສອງຕົວ ຜີເຈົ້າໄຮ່ນາສວນເອົາງົວຄວາຍທ່ານໄປ ແລ້ວບໍ່ບອກບໍ່ເລົ່າແກ່ເຈົ້າຂອງ ຂອງທ່ານຕາຍເສຍກໍດີ ໃຫ້ເຈົ້ານາໄຮ່ສວນໃຊ້ ເສຍເຂົ້າເທົ່າໃດ ໃຫ້ເຈົ້າງົວຄວາຍໃຊ້ເທົ່ານັ້ນ ອັນໜຶ່ງເຈົ້າໄຮ່ສວນບອກແກ່ເຈົ້າງົວຄວາຍແລ້ວ ເຈົ້າງົວຄວາຍບໍ່ໃຊ້ຂອງທ່ານ ຈັກເອົາງົວຄວາຍໜີຢ່າໃຫ້ ໃຫ້ໃຊ້ເຈົ້າຂອງແລ້ວກ່ອນຈຶ່ງເອົາໜີ ຜີວ່າຕາຍກໍດີ ໜີກໍດີຄຳແລ້ວ ຜີເຈົ້າງົວເຈົ້າຄວາຍມາການຫາ ບໍ່ບອກບໍ່ເລົ່າ ໃຫ້ໄໝເຈົ້າສວນເຈົ້ານາ ຂັນແປງໜຶ່ງຍັງເສຍງົວຄວາຍເພີ່ນໃຫ້ໃຊ້ທໍ່ໜຶ່ງ ອັນໜຶ່ງໝູກໍດີ ໄກ່ກໍດີ ເປັດກໍດີ ເຂົ້າສວນແລ້ວກິນເຂົ້າທ່ານກໍດີ ໃຫ້ເຈົ້າເລົ່າແກ່ເຈົ້າມັນ ສອງທີສາມທີໃຫ້ຂັງໄວ້ ຜີເຈົ້າໝູເຈົ້າໄກ່ບໍ່ຂັງໄວ້ ຍັງເຂົ້າສວນເຂົ້ານາທ່ານລ້ອມໄວ້ນັ້ນ ຜີຕີຕາຍໃຫ້ບອກແກ່ເຈົ້າມັນໃຫ້ຮູ້ ຫາໂທດບໍ່ໄດ້ແລ ຜີວ່າຕາຍບໍ່ບອກແກ່ເຈົ້າມັນຫາກເອົາກິນໃຫ້ໃຊ້ສອງຕົວ ຂອງເສຍທໍ່ໃດໃຫ້ເຈົ້າສັດໃຊ້ທໍ່ນັ້ນ.

ປະການໜຶ່ງ ຜູ້ໃດກົ້ມເຮືອນທ່ານເມື່ອຄືນ ໃຫ້ໄໝຮ້ອຍໜຶ່ງເມື່ອວັນໃຫ້ໄໝຫ້າບາດ ກົ້ມເມື່ອຄືນທ່ານຂ້າຕາຍກັບບ່ອນຄຳແລ້ວຢ່າໃຫ້ເປັນໂທດແກ່ເຈົ້າເຮືອນເທີ້ນ ອັນໜຶ່ງຜູ້ໃດເປັນພະຍາດຮ້ອງວ່າມັນຜູ້ນັ້ນເປັນປອບມາຍັດກູແລ ວ່າທີໜຶ່ງຢ່າຟ້າວຟັງວ່າທີສອງທີສາມໃຫ້ການສັກຂີພິຍານແຕ່ຫຼັງ ເພີ່ນຍັງວ່າຜູ້ນັ້ນ ເປັນປອບແທ້ການຄຳປາກມັນດູກ່ອນ ຜີມັນວ່າໄດ້ເປັນແລ້ວ ໃຫ້ໄຫຂັບຜີມັນໜີໄດ້ຍັດຕາຍໃຫ້ໃຊ້ໂທດຄົນ ແລ້ວໃຫ້ຂັບໜີຕົກນອກເມືອງ ຢ່າຂ້າເທີ້ນ. ຜີຜູ້ເບັຍຮູບຮອຍໃຫ້ທ່ານຕາຍ ໃຫ້ມັນໃຊ້ຄົນ ຜີບໍ່ຕາຍ ໃຫ້ໄໝຂັນຄ່າຄໍ ຕົວມັນໃຫ້ຂັບໜີ.

ຂ້າກັນຕາຍບໍ່ມີໂທດ

ບັດນີ້ຈັກກ່າວຂ້າກັນຕາຍຫາໂທດບໍ່ມີ ຫ້າປະການ :

ອັນໜຶ່ງກີ້ມເຮືອນທ່ານກາງຄືນ ທ່ານຕອມໄດ້ຂ້າກັບບ່ອນ.

ອັນໜຶ່ງລັກຂອງທ່ານ ທ່ານຕອມໄດ້ກັບມື.

ອັນໜຶ່ງ ກີເຄື່ອງໄປສູ່ທ່ານ ຂ້າທ່ານເກີ້ງທີ.

ອັນໜຶ່ງຂຶ້ນເຮືອນທ່ານ ເມື່ອຄືນ.

ອັນໜຶ່ງເຂົ້າບ້ານທ່ານ ເມື່ອຄືນ.

ອັນໜຶ່ງຈູດບ້ານທ່ານ ທ່ານຕອມກັບບ່ອນຟັນເສຍ ຫາໂທດບໍ່ໄດ້ແທ້ແລ.

ຜີຜູ້ໜຶ່ງກີ້ຄອນໄປສູ່ຕີທ່ານ ຜູ້ເຈົ້າທີ່ຕີຕາຍຢ່າວ່າສັງ.

ຜີເຈົ້າທີ່ກີ້ອາວຸດ ແທງຕາຍໃຊ້ກູ່ອງຄ່າຄົນ ບໍ່ພໍເລືອດອອກກີສະເໝີກັນ.

ອັນໜຶ່ງມັນກີ້ອາວຸດໄປສູ່ທ່ານ ທ່ານກີ້ອາວຸດຂ້າຕາຍຄຳແລ້ວ.

ຜີຜູ້ໜຶ່ງກີ້ອາວຸດໄປໄລ່ຟັນແທງທ່ານ ຜີວ່າຜູ້ໜຶ່ງ ຄອນກໍດີ ມີດາຍກໍດີ ຊັດທອກດາບໃສ່ບໍ່ກີ້ກໍດີ ໃຫ້ໄໝຮ້ອຍສອງບາດ.

ຜີຕີທ່ານຜູ້ບໍ່ຜິດ ພໍໃຫ້ເສຍອົງຄະໃຫ້ໄໝສອງບາດ.

ໃຜຜູ້ຕີລູກເມຍຂ້ອຍຄົນກໍດີ ໄລ່ໄປຂຶ້ນເຮືອນທ່ານໃຫ້ແປງເບ້ຍໜຶ່ງ.

ອັນໜຶ່ງເຍັຍນ້ຳຈິມກັນ ທ່ານຊວນໄປເອົາມັນບໍ່ໄປ ລັກເອົານ້ຳມາທ່ານກໍດີ ລັກທັງໝອງທ່ານເອົາປາກໍດີ ໃຫ້ໄໝມັນເປັນເງິນຮ້ອຍໜຶ່ງ ຜີທ່ານຂ້າຕາຍຄຳແລ້ວ. ອັນໜຶ່ງໃຜຜູ້ຕີລູກຫຼານຕີຂ້ອຍໃສ່ໃຈໃຫ້ຕາຍໃຫ້ໄໝເອົາຄ່າໃສ່ຣາຊໂກດ ຜີບໍ່ໃສ່ໃຈໃຫ້ຕາຍຢ່າວ່າສັງ.

ຜີວ່າຕີເມຍໃສ່ໃຈໃຫ້ຕາຍໄໝຄ່າຄົນ ຄົວເຮືອນໄວ້ແກ່ພີ່ນ້ອງພໍ່ແມ່ມັນຜູ້ຕາຍຕົງສຽງ ຜີວ່າມັນບໍ່ໃສ່ໃຈໃຫ້ຕາຍ ໃຫ້ຂັບມັນໜີຄົວເຮືອນ ຢ່າໃຫ້ມັນເຫັນ.

ໂທດບໍ່ຄວນໄໝໃຫ້ທັນດະກຳ

ອັນໜຶ່ງ ກຳອັນໜັກບໍ່ຄວນໄໝ ທີ່ຄວນໃສ່ທັນດະກຳ ມີສິບປະການ :

ອັນໜຶ່ງ ມັນລັກຂ້າທ່ານຜູ້ບໍ່ຜິດ ອັນໜຶ່ງເອົາລູກເມຍທ່ານໄປຂາຍ ອັນໜຶ່ງ ມ້າງສະກູບຮູບພະເຈົ້າ ພະເຈດີ ອັນໜຶ່ງຂ້າຊາວເຈົ້າສະມະນະພາມ ອັນໜຶ່ງລັກຂອງສິງ ອັນໜຶ່ງເປັນໂຈນຄຸບເລວທ່ານ ອັນຫນຶ່ງເອົາຂ້າເສິກມາຊ່ອນໄວ້ໃນເຮືອນ ອັນຫນຶ່ງຂ້າເຈົ້າຕົນເອງ ອັນໜຶ່ງລູກຂ້າພໍ່ແມ່ ອັນໜຶ່ງນ້ອງຂ້າພີ່ ຝູງນີ້ໂທດຫນັກແລ.

ໂທດສາມປະການ

ອັນໜຶ່ງ ຈັກກະທຳໂທດເຂົາ ມີສາມປະການ : – ອັນໜຶ່ງໃຫ້ຂ້າເສຍ ອັນໜຶ່ງໃຫ້ຕັດຕີນສິນມືເສຍ ອັນໜຶ່ງໃຫ້ໄປຂາຍເສຍຕ່າງປະເທດ ຝູງນີ້ໜັກແລ.

ອັນໜຶ່ງຜູ້ໃດຜິດອາຄຍາ ທ້າວພະຍາໃຫ້ໄປເອົາມັນມາພິຈາລະນາມັນກໍ່ເຄືອງຕອນເລວ ຜີໄດ້ຂ້າເສຍມັນຕາຍ ປ່າວ່າສັງເທິ້ນຜີມັນໂຍມກໍດີ ຢ້ານແລ່ນໜີກໍດີ ຢ່າໃຫ້ຂ້າໃຜຜູ້ຂ້າເປັນໂທດແລ.

ລັກຂອງທ່ານ

ຈັກກ່າວລັກຂອງທ່ານ ລັກຜູ້ດຽວກໍດີ ຫຼາຍຄົນກໍດີ ຍັງໄດ້ຂອງເຄົ້າໃຫ້ໄໝທັງມວນເຂົ້າຮ້ອຍໜຶ່ງ ຜີບໍ່ໄດ້ຂອງເກົ່າຄືນໃຫ້ໄໝຄິງຄົນແລ້ວຮ້ອຍ ຂອງເສຍທີ່ໃດໃຫ້ໃຊ້ທີ່ນັ້ນ ຜີຂ້ອຍຜູ້ໃດໄປລັກຂອງທ່ານໜີໃຫ້ເຈົ້າຂ້ອຍຊ່ອຍໄຕ່ຫາຂອງໃຫ້ໄດ້ ບໍ່ໄດ້ໃຫ້ເຈົ້າມັນໃຊ້ຕາງຂ້ອຍຜູ້ລັກນັ້ນ ຂ້ອຍໃຫ້ໃສ່ຄອກ ໃຫ້ໄໝເຈົ້າມັນຕາງ ຂັ້ນແປງໜຶ່ງ ອັນໄປເປັນໂຈນເລວເພີ່ນຕາຍ ເອົາຂ້ອຍໃສ່ຄອກ ສາມສິບ–ຫ້າສິບວັນ ໃຫ້ເຈົ້າມັນໃຊ້ໂຊດຄົນຜູ້ຕາຍນັ້ນ ຂອງທ່ານເສຍເທົ່າໃດໃຫ້ໃຊ້ຕົງສຽງຜີບໍ່ຕາຍຍັງເຈັບ ໃຫ້ສູ່ຂວັນສອງບາດ ຜີຂ້ອຍລັກຊ້າງມ້າໃຫ້ໃສ່ຄອກຫົກສິບວັນ ຊ້າງມ້າເສຍໃຫ້ເຈົ້າມັນໃຊ້ສອງທີ່ ຜີວ່າລັກງົວ ຄວາຍ

ໃຫ້ໃສ່ຄອກສາມສິບວັນ ຜີລັກໝູໝາເປັດໄກ່ນົກປາ ເຂົ້າໄຮ່ເຂົ້ານາ ລັກໝາກພູ້ພ້າວຕານ ຝູງນີ້ໃຫ້ຂອຍໃສ່ຄອກສາມສິບວັນ ຜີບໍ່ໄດ້ຂອງ ເກົ່າຄືນໃຫ້ເຈົ້າມັນໃຊ້ຕາງ ສອງທໍ່ ຜີຍັງໄດ້ຂອງເກົ່າຄືນ ໃຊ້ທໍ່ໜຶ່ງ ຜີບໍ່ໄດ້ຂອຍໃສ່ຄອກໃຫ້ໄໝເຈົ້າມັນເສຍເບ້ຍໜຶ່ງ ຜີລັກຄາດໄກລັກຈົກ ສຸ້ງມພ້າຂວານໃຫ້ໃສ່ຄອກຊາວວັນ ຂອງເສຍໃຫ້ເຈົ້າມັນໃຊ້ ຜີລັກກໍ່ ພາຍ ລັກຫລາ ກໍສັນດຽວກັນນັ້ນແລ ຜີວ່າແຫມອງນາມໃຫ້ໃສ່ ຄອກຊາວຫ້າວັນ ຂອງເສຍໃຫ້ໃຊ້ສອງທໍ່ ຜີຂ້ອຍຈັບຍາດເອົາຂອງ ທ່ານກໍດີ ໃຫ້ກະທໍາຕາມດັ່ງນັ້ນເທີ້ນ ບໍ່ໄດ້ຂ້ອຍໃສ່ຄອກໃຫ້ໄໝເຈົ້າ ມັນເບ້ຍໜຶ່ງ ຜີຂ້ອຍລັກຕັດຕົ້ນສົ້ມຕົ້ນຫວານທ່ານກໍດີ ຂ້າຂອງລ້ຽງ ຂອງດູທ່ານເສຍກໍດີ ໃຫ້ໃສ່ຄອກສອງວັນ ໃຫ້ເຈົ້າມັນໃຊ້ທໍ່ໜຶ່ງ ອັນ ໜຶ່ງຜູ້ໃດຍິງກໍດີ ຊັດໄມ້ຄ້ອນກ້ອນດິນຫອກດາບກຶກສັດຕົວໃດຕົວໜຶ່ງ ກຶກຄົນກໍດີຕາຍໃຫ້ໃຊ້ຄ່າ ຜີບໍ່ຕາຍແຕ່ຈັບໃຫ້ສູ່ຂວັນທ່ານ ອັນໜຶ່ງ ກຶກໜ້າໃຫ້ໄຕພາດ ທ່ານແຕກກໍດີ ກຶກເສື້ອຜ້າຂາດກໍດີໃຫ້ໃຊ້ທ່ານ ອັນໜຶ່ງຫອກໄວ້ບໍ່ໝັ້ນລົ້ມທັບຄົນຕາຍໃຫ້ໃຊ້ເກິ່ງໜຶ່ງ.

<u>ໄດ້ຂອງຕົກເຮ່ຍ</u>

ທີ່ນີ້ຈັກກ່າວອັນໄດ້ຂອງກັນ ຂອງທ່ານຕົກເຮ່ຍເສຍກໍດີ ຜີຜູ້ໃດ ເຫັນຂອງທ່ານເຮ່ຍ ໃຫ້ຮ້ອງສາມທີ ຜີຫາຄົນຮູ້ເຫັນບໍ່ໄດ້ ໃຫ້ເອົາ ຂອງອັນນັ້ນມາໄວ້ ແລໃຫ້ບອກເລົ່າແກ່ເພີ່ນໃຫ້ຮູ້ ຄັນວ່າເຈົ້າຂອງ ມາກາມຫາໃຫ້ບອກ ແລ້ວຈຶ່ງຜ່າເອົາຂອງເຄິ່ງໜຶ່ງ ຜີຜູ້ໃດໄດ້ຂອງ ບໍ່ບອກເລົ່າແກ່ເພື່ອນບ້ານໃຕ້ບ້ານເໜືອໃຫ້ເຈົ້າຂອງມາກາມຫາມັນ ຈຶ່ງບອກ ໃຫ້ຜ່າຂອງອັນນັ້ນສາມສ່ວນ ໃຫ້ແກ່ຜູ້ໄດ້ສ່ວນໜຶ່ງ ອັນ ໜຶ່ງໄດ້ຂອງທ່ານບໍ່ບອກແກ່ໃຜ ແມ່ນວ່າເຈົ້າຂອງມາກາມຫາ ກໍບໍ່ ບອກເລົ່າອໍາໄວ້ ພາຍລູນຮູ້ວ່າມັນໄດ້ຂອງນັ້ນ ຢ່າໃຫ້ແກ່ມັນສັກອັນ ໃຫ້ຄືນແກ່ເຈົ້າຂອງຕົ້ງສ້ຽງ ມັນບໍ່ຄືນໃຫ້ເຈົ້າຂອງ ຍາດເອົາດ້ວຍກໍາ ລັງແມ່ນມັນໄດ້ຈ່າຍກໍດີ ມັນເຍັດເສຍໃຫ້ໃຊ້ ໄທດຢ່າໃສ່ແກ່ມັນອັນໜຶ່ງ ຂອງຕົກເຮ່ຍໃນບ້ານ ໃນເຮືອນກໍດີ ຜູ້ໃດໄດ້ໃຫ້ຄືນແກ່ເຈົ້າຂອງທັງ

ມວນເຫີ້ມ ເຫດຕົກໃນທີ່ຢູ່ທີ່ກິນຕົນດາຍ ຜີເຈົ້າບ້ານເຈົ້າເຮືອນຍັງ ອຳໄວ້ໃຫ້ໄໝທໍ່ຂອງອັນເສຍ ມັນຈ່າຍກິນແລຍັດເສຍກໍດີ ໃຫ້ໃຊ້ຕົງ ສູງ ອັນໜຶ່ງຂອງຜູ້ໃດເສຍເປັນເຫີງນານນັກ ແລະ ແມ່ນເຈົ້າຂອງ ກໍໃສ່ໃຈວ່າເສຍຫາບໍ່ໄດ້ ມັນກໍທອດອາໄລເສຍກໍບໍ່ຫາແລ້ວ ຜູ້ໃດໄດ້ໃຫ້ເອົາດາຍດອກ ຜີເຈົ້າຂອງມັກເອົາຈິ່ງໃຫ້ໄກ່ ຈິ່ງໃຫ້ເຫີ້ມ ແມ່ນຈັກທຽມທຳມະຈັກກໍໄດ້ ດັ່ງເຈົ້າພິຊຸຕົນໜຶ່ງໄດ້ເຄືອງປະຣິຂານ ແຫ່ງພິກຊຸຕົນໜຶ່ງຕົກເສຍ ມີຕົ້ນວ່າຜ້າພິກຊຸຕົນເຈົ້າຂອງໄວ້ໃຈວ່າ ຂອງຕົນໄດ້ເສຍແລ້ວທອດອາໄລເສຍ ພິກຊຸຕົນໄດ້ບໍ່ຄືນແກ່ເຈົ້າຂອງ ກໍບໍ່ໄດ້ອາບັດສັງແລ ອັນໜຶ່ງຜູ້ໃດໄປ່ເສີກແພ້ປະຂອງເສຍກໍດີ ຕົກເສຍ ກໍດີ ໃຜຜູ້ໄດ້ຢ່າໃຫ້ຄືນແກ່ມັນ ເຫດວ່າຍາມນັ້ນເຈົ້າຂອງທໍ່ຮັກສາຊີ ວິດມັນ ມັນບໍ່ຮັກສາຂອງມັນໄດ້ດາຍ ອັນໜຶ່ງຜູ້ໃດໄດ້ຊຸມເງິນຊຸມຄຳ ໃຫ້ເລົ່າແກ່ເຈົ້າບ້ານເຈົ້າເມືອງໃຫ້ຮູ້ ແລ້ວຜ່າກ່ອງໃສ່ຣາຊໂກດ ກ່ອງໜຶ່ງໄວ້ແກ່ຜູ້ໄດ້ ຜີບໍ່ບອກບໍ່ເລົ່າແກ່ເຈົ້າບ້ານເຈົ້າເມືອງແລອຳ ໄວ້ຢ່າໃຫ້ແກ່ມັນສັກເມັດ ໃຫ້ເອົາໃສ່ຣາຊໂກດຕົງສູງ ໂທດຢ່າໃສ່ແກ່ ມັນທ້ອນ ອັນນີ້ຣາຊສາດວ່າມັນຮ້າຍແລ ຜີຈັກຕາມວັດກຸຄະມະເນ ຈັນທະວ່າ ຜູ້ໃດໄດ້ໃຫ້ແກ່ມັນຜູ້ນັ້ນທັງມວນ ເຫດວ່າບຸນມັນຈິ່ງໄດ້ ດາຍ ເຫດວ່າເຂົ້າຂອງນີ້ເກີດໃນແຜ່ນດິນດາຍ ອັນນີ້ພະຍາອັດສະ ມຸຂາຕັ້ງແລ ຈັກຕາມທຳມະສາດຫລວງ ກ່າວໃຫ້ໃສ່ຣາຊໂກດສອງ ສ່ວນ ສ່ວນໜຶ່ງໃຫ້ແກ່ມັນຜູ້ໄດ້ ເຫດວ່າສິນບັດເກີດໃນແຜ່ນດິນດາຍ.

<u>ຢືມຂອງກັນ</u>

ທີ່ນີ້ ຈັກກ່າວຂອງຢືມກັນ ຄືວ່າຢືມງົວຄວາຍໄປເຍັດນາກໍດີ ຊ້າງມ້າຂີ່ກໍດີ ໂຈນລັກເອົາແລອິດຕາຍກໍດີ ຄ່າທໍ່ໃດໃຫ້ໃຊ້ທໍ່ນັ້ນ ຄ່າ ແຮງກໍໃຊ້ຕາມອັນຈາກັນ ຜີໄປ່ທັນເຮັດນາຄ່າແຮງຢ່າເອົາ ຜີເປັນພະຍາດບໍ່ບອກແກ່ເຈົ້າຂອງ ຍັງຕາຍໃຫ້ຄ່າກ່ອງໜຶ່ງ ຜີໃຫ້ແຄ່ງຂາຫັກ ໃຫ້ໃຊ້ງົວຄວາຍ ຕົວຕາຍນັ້ນໄວ້ແກ່ຜູ້ຢືມ ຜີວ່າເປັນພະຍາດໄດ້ບອກແກ່ເຈົ້າຂອງແລ້ວ ມັນຫາກບໍ່ດີຕາຍ

ຢ່າວ່າສັງແກ່ຜູ້ປີ້ນເຫິ້ນຜີຍັງເປັນພະຍາດ ບໍ່ມາບອກຕາຍ ໃຫ້ໃຊ້ເຄິ່ງໜຶ່ງ. ປີ້ນເຮືອທ່ານໄປເສຍກໍໃຊ້ສົມຄຽງວັນນັ້ນ ແມ່ນປີ້ນເສື້ອຜ້າທ່ານກໍສົມຄຽງວັນນັ້ນແລ ອັນໜຶ່ງຜູ້ໃດຈຳທ່ານກີ້ມກໍດີ ຊັດກໍດີຂອງຕົນອັນໃດອັນໜຶ່ງກໍດີ ຫາກແຕກຫັກກໍດີ ຢ່າໃຫ້ເປັນໂທດແກ່ຜູ້ກະທຳຕາມຄຳເຈົ້າຂອງນັ້ນເທີ້ນ ບັສມາທິ ເປັນວັດຖຸຄະມະເນຈັນທະຊິນນະນັ້ນແລ.

<u>ປັນຂອງໃຫ້ສະເໝີກັນ</u>

ທີ່ນີ້ຈັກກ່າວຕຳນານປັນຂອງໃຫ້ສະເໝີກັນດັ່ງນີ້ແລ ຍັງມີສອງຄົນຊວນກັນໄປຊຸດມັນແຫ່ງໜຶ່ງ ສຽນຂາທັງສອງກໍໄທຄຳພ້ອມກັນຊູ່ຄົນຊູ່ຈັກເອົາຫລາຍ ໄປຫາເຈົ້າວິໄຊຍະກຸມານໃຫ້ຕັດ ວ່າຜູ້ໃດຊວນກ່ອນໃຫ້ຜູ້ນັ້ນຫລາຍຊອບແລ ອັນໜຶ່ງຍັງມີຍັກສອງຕົວໄດ້ຄົນຜູ້ໜຶ່ງຂາຈັກຊິງກັນກິນຫລາຍ ໄປຫາຂຸນຍັກຕົວໜຶ່ງໃຫ້ປັນ ຂຸນຍັກຕົວນັ້ນຕັດຄົນເປັນສາມສ່ວນໃຫ້ແກ່ຂາແລຕົວທ່ອນໜຶ່ງ ທ່ອນໜຶ່ງຂຸນຍັກເອົາຂຸນຍັກປັນສະເໝີແລ ຜີວ່າບຸກຄະລະຜູ້ໃດ ໄດ້ເຂົ້າຂອງປັນກັນກິນບໍ່ເປັນ ພາມາຫາເຈົ້າຂຸນມູນນາຍໃຫ້ປັນດັ່ງນັ້ນ ໃຫ້ເຈົ້າຂຸນກິນສ່ວນໜຶ່ງ ລ້ຳນັ້ນປັນແກ່ເຂົາຜູ້ໄດ້ ຕາມຄຸນແຫ່ງເຂົາເທີ້ນແມ່ນຈັກທຽມທຳມະວິໄນກໍໄດ້ດັ່ງພິກຂຸ ອັນຫາຍົກໃຫ້ເປັນຂອງສົງພາຍນອກສີມ ພິກຂຸບໍ່ໄດ້ແຈກປັນກັນ ພາມາສູ່ວິຫານຂອງອັນນັ້ນກໍລວດເປັນຂອງສົງໃນອາຣາມວິຫານທີ່ນັ້ນແລ ໄດ້ແຈກໄດ້ປັນແກ່ສົງດີຫລືດາຍອັນໜຶ່ງບຸກຄະລະຜູ້ໃດຊິງເອົາຂອງກັນ ຕາງຄົນວ່າຂອງມັນດັ່ງນັ້ນ ເພິ່ງໃຫ້ພິຈາລະນາດູທີ່ໝາຍເຂົານັ້ນ ເປັນສັກຂີແກ່ຂາຜີວ່າຜູ້ໃດກ່າວຫາວ່າຂອງກູອັນນັ້ນແລວ່າອັນໃຫ້ດູທີ່ໝາຍຂອງມັນຜີແມ່ນດັ່ງມັນວ່າແທ້ ຂອງອັນນັ້ນກໍເປັນຂອງມັນຜູ້ນັ້ນແລ ຜີວ່າຜູ້ໃດກ່າວວ່າ ໝາຍບໍ່ເປັນຂອງມັນຢ່າໃຫ້ມັນເທີ້ນ ເປັນດັ່ງຜະລະຕຳນານອັນໜຶ່ງ ຝາກເຮືອນມັນໄວ້ດອມໂຈນ ໂຈນລວດວ່າເຮືອນມັນ ຈຶ່ງພາກັນໄປຫາພະຍາໆກາມດູສັກຂີແຫ່ງເຈົ້າເຮືອນເຈົ້າເຮືອນວ່າຂ້າໄດ້ເອົາໄມ້ຍາວມາຍັດມົ່ງເຮືອນຂ້າດາຍ ພະຍາຈຶ່ງ

ໃຫ້ໄປດູ ກໍແມ່ນແທ້ພະຍາຈຶ່ງກາມໂຈນ ໂຈນຫາສັກຂີບໍ່ໄດ້ ພະຍາຈຶ່ງຕັດໃຫ້ແກ່ເຈົ້າເຮືອນແລ ອັນໜຶ່ງຜູ້ໃດຕ້ອນໂຈນກໍດີ ເຫາດເຫັນຜູ້ໃດຜູ້ໜຶ່ງບໍ່ເຫັນຂອງກັບມື ຢ່າຟ້າວວ່າມັນເປັນໂຈນ ຢ່າຟ້າວຂ້າຕີໃຫ້ກາມມັນດູກ່ອນ ຜີວ່າມັນວ່າມາຢູ່ຄ່ຳດອນສາວ ກາມດູສັກຂີແຫ່ງມັນຄືວ່າ ປີ່ແລເພີຍຍັງມີແມ່ນແລ ອັນໜຶ່ງຜີມັນ ວ່າມາຫາພີ່ນ້ອງມັນ ກໍໃຫ້ດູວັດກຸເຂົ້າຂອງ ອັນຄວນເອົາມາຫາພີ່ ນ້ອງມັນກໍມີແທ້ ອັນໜຶ່ງໃຫ້ກາມພີ່ນ້ອງກໍມີແທ້ດັ່ງນັ້ນ ຢ່າວ່າມັນ ເປັນລັກເປັນໂຈນເທີ້ນ ເປັນດັ່ງຕຳນານ ຜູ້ໜຶ່ງມັນໄປຢາມພີ່ນ້ອງ ມັນຈອດນອນສາລາແຫ່ງໜຶ່ງ ຄືນນັ້ນໂຈນມາລັກເອົາ ງົວ ຄວາຍ ເຈົ້າທັນໄປ ມັນຜູ້ຄົນດີຄະນຶງວ່າ ເມື່ອກູບໍ່ເອົາໂຈນຜູ້ນີ້ໄດ້ ເຂົາກໍຈັກວ່າກູເປັນໂຈນ ບໍ່ຢ່າຊະແລ ມັນຈຶ່ງກຸມເອົາໂຈນ ໂຈນຜູ້ນັ້ນ ກໍກຸມເອົາຄົນດີ ສອງຂາຊູ່ຄົນຊູ່ວ່າ ມັນເປັນຄົນດີ ຈຶ່ງໄປຫາພະຍາ ພະຍາກາມຄົນດີວ່າ ມຶງມາສັງ ມັນວ່າ ຂ້າມາຫາພີ່ນ້ອງຂ້າຜູ້ມີຊື່ດັ່ງ ນີ້ ພະຍາວ່າມຶງຍັງມີສັງມາຫາພີ່ນ້ອງມຶງແດ່ ມັນວ່າຂ້າມີຂອງຝາກ ມາຫາພີ່ນ້ອງແລ ພະຍາໃຫ້ດູມີແທ້ແມ່ນວ່າກາມຫາພີ່ນ້ອງມັນກໍ ມີແທ້ ພະຍາຈຶ່ງວ່າມັນນີ້ບໍ່ໃຊ່ໂຈນດາຍ ຍັງມີສັກຂີໃນຕົວ ຢ່າໃສ່ໂທດ ແກ່ມັນເທີ້ນ ພະຍາເລົ່າກາມສັກຂີແຫ່ງໂຈນບໍ່ມີສັງ ທໍ່ເຫັນເຄື່ອງ ຫຼ້າງເປັນໂຈນແລ ພະຍາຈຶ່ງວ່າມັນນີ້ເປັນໂຈນແລ ພະຍາຕັດຄຳ ດັ່ງນີ້ ສຸຄະຕິແລ.

ອັນໜຶ່ງຍັງມີ ຈະຕຸມານະວະ ໄປຮຽນສາຕະສິນ ໃນຕັກກະສິ ລານະຄອນ ຕາເຂົາບອດເສຍ ກໍຮູ້ວ່າຫມາກອຳພາເປັນຢາຕາ ມີໃນ ສວນອຸດທິຍານແຫ່ງພະຍາເຂົາເອົາກັນໄປສູ່ສວນອຸດທິຍານ ຜູ້ໜຶ່ງ ຮູ້ອຳພາເປັນຢາຕາບອກແກ່ເຂົາ ຜູ້ໜຶ່ງຮູ້ຈັກກົ່ນໝາກມ່ວງອັນມີລູກ ຜູ້ໜຶ່ງຮູ້ມົນຊຸດໃຫ້ໝາກມ່ວງ ຕົກລົງມາ ຜູ້ໜຶ່ງຮູ້ມົນຮັບເອົາບໍ່ໃຫ້ ຕົກດິນ ຄັນຕົກດິນຈັກເສຍພິດຢາ ຄັນວ່າໄດ້ແລ້ວ ເຂົາຊູ່ຄົນວ່າມັນ ມີຄຸນຈັກກິນຫລາຍໄປຫາພະຍາ ພະຍາຈຶ່ງຕັດໃຫ້ຜູ້ຮັບໄດ້ກິນຫລາຍ

ເຫດວ່າມັນໄດ້ດາຍ ແຂວງວ່າມັນບໍ່ໃຫ້ແກ່ສູ ສູກໍບໍ່ຮູ້ບໍ່ເຫັນດອມມັນ ຄຸນມັນມີຫລາຍກວ່າສູແລ ພະຍາຕັດຄຳສັນນີ້ ສຸດະຕິແລ.

ປະການໜຶ່ງ ສອງຜິດກັນດ້ວຍອັນຊິງເມຍກັນ ຜູ້ໜຶ່ງມັນໄດ້ຢູ່ນອນດອມ ຜູ້ໜຶ່ງໄປ່ໄດ້ຢູ່ນອນ ທີ່ໄດ້ຕ້ານຈາຣະຈາກັນ ໃຫ້ເຂົ້າຂອງແກ່ຜູ້ຍິງ ຊູ່ຄົນຊູ່ຈັກເອົາເປັນເມຍດັ່ງນັ້ນ ເພິ່ງໃຫ້ແກ່ຜູ້ນອນນັ້ນເທີ້ນ ເປັນດັ່ງຕຳນານອັນໜຶ່ງ ຍັງມີຈະຕຸມານະວະໄປຮຽນສາຕສິນ ໃນຕັກກະສິລານະຄອນ ມານອນແຫ່ງໜຶ່ງ ຜູ້ຮູ້ຫູຣາມັນທວາຍວ່າສັນນີ້ ນົກຫັດສະດີລີງ ຈັກເອົານາງຜູ້ໜຶ່ງມາເໜືອອາກາດແລ ມັນທວາຍດັ່ງນີ້ ເມື່ອນັ້ນ ນົກກໍເອົາລູກສາວພະຍາບິນມາເໜືອອາກາດ ຜູ້ໜຶ່ງຮູ້ທະນູສິນ ມັນກໍຍິງນົກຕົວນັ້ນຕົກລົງນ້ຳຈົມໄປ ຜູ້ໜຶ່ງຮູ້ດຳນ້ຳ ມັນກໍດຳໄປອູ້ມເອົານາງອອກມາ ຜູ້ໜຶ່ງຮູ້ມົນເປົ່າໃຫ້ນາງເປັນຄົນຄືນມາ ຊູ່ຄົນຊູ່ວ່າມັນເປັນຄຸນນັກ ຈັກຊິງກັນເອົາເປັນເມຍ ໄປຫາພະຍາ ພະຍາຕັດວ່າ ໃຫ້ແກ່ຜູ້ດຳນ້ຳເອົານາງອອກນັ້ນເປັນເມຍມັນເທີ້ນ ເຫດວ່າ ຂາຫາກໄດ້ກິກຕ້ອງເນື້ອຄີງກັນແລ້ວດາຍ ຜູ້ຮູ້ທະນູນັ້ນໃຫ້ເປັນພີ່ຂາເທີ້ນ ຜູ້ທວາຍຫູຣາໃຫ້ເປັນພໍ່ຂາ ຜູ້ຮູ້ມົນເປົ່າເປັນຄົນນັ້ນ ໃຫ້ເປັນແມ່ຂາເທີ້ນ ແລ້ວໃຫ້ຂາຢູ່ອຸບປະກາກລ້ຽງເກືອກັນຢ່າໃຫ້ໜີ ພະຍາວ່າສັນນີ້ ສຸດະຕິແລ.

ໄນຍະໜຶ່ງ ຍັງມີແມ່ກຳຮາງສີ່ຄົນ ເຫັນຜູ້ໜຶ່ງມີຮູບອັນງາມ ພະຍາໃຫ້ສຽບເສຍແທບປະຕູໄປ່ທັນຕາຍ ແມ່ກຳຮາງຜູ້ໜຶ່ງມີຄຳພັນໜຶ່ງ ຂີໄກ່ເອົາດອມພະຍາ ຜູ້ໜຶ່ງຮູ້ຫວ້ານຢາຫາໃສ່ໃຫ້ບາດດີ ຜູ້ໜຶ່ງຂົນຂວາຍຫາມາລ້ຽງເຂົ້າໜູ່ນັ້ນ ຜູ້ໜຶ່ງແຕ່ງຢູ່ປົວເນົ່າໜອງໃນຄີງໂຈນ ມັນດີແລ້ວຊູ່ຄົນຊູ່ຈັກເອົາເປັນຜົວ ໄປຫາພະຍາ ພະຍາຕັດວ່າ ໃຫ້ຜູ້ປົວເນົ່າໜອງນັ້ນເປັນເມຍ ເຫດວ່າຂາຫາກຕ້ອງເນື້ອຄີງ ຮູ້ທີ່ເຜີດລັກອາຍແລ້ວດາຍ ຜູ້ມີຄຳພັນໜຶ່ງໄປໄກ່ນັ້ນ ໃຫ້ເປັນດັ່ງພໍ່ ຂາຜູ້ຮູ້ຫວ້ານຢາມາໃສ່ນັ້ນ ໃຫ້ເປັນດັ່ງແມ່ ຂາຜູ້ຮູ້ຄາຂາຍມາລ້ຽງນັ້ນ ໃຫ້ເປັນພີ່ຂາແລ ໃຫ້ຂາອຸບປະກາກແກ່ເຂົາຊູ່ຄົນ

ພະຍາຕັດສັນນີ້ ສຸຄະຕິແລ.

<u>ເນຣະຄຸນຍ້ອນອະຄະຕິ</u>

ອັນໜຶ່ງ ບຸກຄະລະທ່ານກະທຳຄຸນແກ່ຕົນມັນ ມັນບໍ່ຮູ້ຈັກຄຸນແຫ່ງທ່ານ ເພິ່ນໃຫ້ຈິບຫາຍດັ່ງເກົ່າແລ ເປັນດັ່ງຕຳນານເສືອຕົວໜຶ່ງໄປນອນຢູ່ທີ່ງູເຫົ່າງູເຫົ່າຕອດຕາຍ ເມື່ອນັ້ນ ຍັງມີເຈົ້າຣັດສີຕົນໜຶ່ງໄປຄວ່າເຫັນເສືອຕາຍ ກູມາເສືອບໍ່ໃຫ້ຕາຍຈຶ່ງເອົາພິດອອກເສຍເສືອຈຶ່ງຄືນມາເປັນຕົວດັ່ງເກົ່າ ພາຍລຸນ ເສືອພອບຈັກກິນເຈົ້າຣັດສີເສຍ ວ່າມຶງຫາກມາຢູ່ເຂດແດນກູດາຍ ກູຈັກກິນມຶງແລ ເຈົ້າຣັດສີບໍ່ໃຫ້ກິນ ຂາພາກັນໄປສູ່ງົວ ງົວກົວເສືອຈັກກິນພາຍໜ້າ ຈຶ່ງຕັດວ່າໃຫ້ເສືອກິນເຈົ້າຣັດສີ ງົວຕັດຄຳດັ່ງນີ້ເປັນພະຍາຄະຕິແລບໍ່ຊອບ ຂາເລົ່າໄປຫາໝາຈຶ່ງຈອກໃຫ້ຕັດ ໝາຕົວນັ້ນເຫັນແກ່ເສືອອັນຢູ່ເພື່ອນປ່າດົງດອນ ໝາຈຶ່ງຕັດວ່າ ໃຫ້ເສືອກິນເຈົ້າຣັດສີ ໝາຕັດຄຳສັນນີ້ເປັນສັນທາຄະຕິບໍ່ຊອບ ເຈົ້າຣັດສີບໍ່ໃຫ້ກິນ ຈຶ່ງພາກັນໄປຫາວອກໃຫ້ຕັດ ວອກນັ້ນຄະນຶງວ່າເມື່ອກ່ອນ ປູ່ກູເຫັນຄົນຜູ້ໜຶ່ງຕົກຂຸມການປູ່ກູເອົາອອກໄດ້ ຍັງມີເສືອຕົວໜຶ່ງເຫັນຄົນຜູ້ນັ້ນຈັກກິນ ປູ່ກູເລົ່າດຶງແຂນຂຶ້ນຕົ້ນໄມ້ເສືອຈຶ່ງບໍ່ກິນໄດ້ ພາຍລຸນຊາຍຜູ້ນັ້ນເລົ່າຂ້າ ຍິງອີປູ່ກູກິນ ວອກຄະນຶງດັ່ງນີ້ ຈຶ່ງວ່າຄວນໃຫ້ເສືອກິນແລ ວອກຕັດຄຳດັ່ງນັ້ນເປັນໂມຫະຄະຕິບໍ່ຊອບແລ ເຂົາພາກັນໄປຫາແຮ້ງໃຫ້ຕັດແຮ້ງປາກກິນເຈົ້າຣັກສີ ມັນກໍຕັດວ່າ ໃຫ້ເສືອກິນເຈົ້າຣັດສີແລ ແຮ້ງຕັດຄຳສັນນີ້ເປັນໂລພາຄະຕິ ບໍ່ຊອບແລ ເຈົ້າຣັດສີບໍ່ໃຫ້ກິນ ຂາພາກັນໄປຫາເທວະດາ ອັນຢູ່ຮັກສາໄມ້ຕົ້ນໜຶ່ງໃຫ້ຕັດ ເທວະດາຕົນນັ້ນຄຽດແກ່ຄົນທັງຫລາຍ ອັນຢູ່ຮົ່ມໄມ້ຫັກຮານງ່າໄມ້ເສຍ ເທວະດາຕົນນັ້ນຈຶ່ງຕັດວ່າ ໃຫ້ເສືອກິນເຈົ້າຣັດສີແລ ເທວະດາຕັດຄຳສັນນີ້ເປັນໂທສາຄະຕິບໍ່ຊອບແລ ຂາເລົ່າພາກັນໄປຫາກະຕ່າຍ ໃຫ້ຕັດກະຕາຍຕົວນັ້ນ ກໍຮູ້ຈັກຄຸນເຈົ້າຣັດສີເປົ່າເສືອລຸກມາດັ່ງນັ້ນ ກະຕ່າຍຄະນຶງວ່າເສືອຕົວນີ້ ອາທຳ ມັນບໍ່ຮູ້ຄຸນເຈົ້າຣັດສີ ອັນໃຫ້ມັນມີຊີວິດ

ກູຈັກເອົາເສືອຕົວນີ້ ໄປໄວ້ທີ່ເກົ່າ ໃຫ້ງູຕອດມັນຕາຍເທີ້ນ ກະຕ່າຍຄະນິງດັ່ງນີ້ ຈຶ່ງກ່າວແກ່ເສືອວ່າ ທ່ານຢູ່ທີ່ໃດ ຣັດສີຢູ່ທີ່ໃດຈາຈຶ່ງໄປບອກແກ່ຂ້າເທີ້ນ ເມື່ອນັ້ນເສືອຈຶ່ງພາກະຕ່າຍໄປຮອດທີ່ມັນນອນທັ້ນແລ ທ່ານຈຶ່ງໄປນອນຢູ່ທີ່ທ່ານນອນເທີ້ນ ຂ້າຈັກພິຈາລະນາດູກ່ອນ ເມື່ອນັ້ນເສືອກໍນອນຢູ່ທີ່ເກົ່າມັນ ງູເຫົ່າເລົ່າຕອດເສືອໃຫ້ຕາຍດັ່ງເກົ່າ ກະຕ່າຍຈຶ່ງເອົາເຈົ້າຣັດສີໜີ ບໍ່ໃຫ້ເປົ່າພິດງູເຫົ່າແກ່ເສືອ ລະໄວ້ໃຫ້ມັນຕາຍຢູ່ທັ້ນແລກະຕ່ານຕັດຄຳສັນນີ້ສຸຄະຕິແລ.

<u>ພິຈາລະນາຄະດີຕ້ອງຊົ່ວຊ້າໃຫ້ກ້ວມກີ່</u>

ການພິຈາລະນາຄະດີກ້ອຍຄຳອັນເປັນວັດກຸ້ມ້ອຍໂທດເບົາ ກ້າພິຈາລະນາມັນຈະໃຫ້ໂທດກ້ວາງໄປໜ້າ ເນື້ອເລື້ອງເຈືອກັບທ້າວພະຍາເສນາອາມາດແລພໍ່ຄູອາຈານຕົນແລ ພໍ່ແມ່ເຈົ້ານາຍຕົນຈັກໃຫ້ເປັນເຫດອັນຜິດກຽງກັນ ຣິບເລວກັນມາກນັກ ດັ່ງນັ້ນກໍບໍ່ຄວນໃຫ້ໄຕ່ຕໍ່ກ້ອຍຄຳຕາມເບື້ອງນັ້ນແລ ໃຫ້ລະງັບເສຍ ຢ່າໃຫ້ໄຕ່ຕາມເທີ້ນ ແມ່ນທັມມະວິໄນ ພະເຈົ້າກໍດີ ພິກຂຸຜິດກັນດ້ວຍ ອາທິກອນອັນນ້ອຍມາພິຈາລະນາດູ ມັນລວດເປັນຄະຣະຫະວິວາດມາກນັກ ດັ່ງນັ້ນພະເຈົ້າກໍໃຫ້ກະທຳເປັນ ຕິນະວັດກາຣະກຳເສຍ ເປັນດັ່ງເອົາຫຍ້າແລະໃບໄມ້ປົກໄວ້ຍັງອັນຮ້າຍບໍ່ໃຫ້ປາກົດນັ້ນແລອັນນີ້ທຽມໄວ້ແກ່ນັກປາດຜູ້ພິຈາລະນາກ້ອຍຄຳແລ.

ປະການໜຶ່ງ ກ້ອຍຄຳອັນຜິດກັນເຫີງນານ ລ້ຳກວ່າຊາວປີແລ້ວ ຢ່າໃຫ້ໄຕ່ຕາມເທີ້ນ ຜິວ່າເຂົາຍັງໄດ້ວ່າໄດ້ການກັນມາບໍ່ຂາດ ດັ່ງນັ້ນຈຶ່ງເພິ່ງວາເທີ້ນ ຜິວ່າຂ້າກັນຕາຍ ແມ່ນນານກວ່າຊາວປີກໍເພິ່ງວ່າແກ່ເຂົາແລ.

ອັນໜຶ່ງພິຈາລະນາຄຳອັນໃດ ຕັດໃຫ້ໄດ້ຣິມເພິ່ງຕົກຮ່ອມແລ້ວ ຢ່າໃຫ້ໄດ້ຕູ້ກັບຄົນຜູ້ມັກຕົວະລ່າຍຫາປະໝານບໍ່ໄດ້ ອັນໜຶ່ງຢ່າໄດ້ຕູ້ກັບຜູ້ຢ້ານນັກ ອັນໜຶ່ງຢ່າໃຫ້ໄດ້ຕູ້ກັບດ້ວຍຄົນຜູ້ຈິບຫາຍນັ້ນ ອັນໜຶ່ງຢ່າໄດ້ຕູ້ກັບເດັກນ້ອຍ ອັນໜຶ່ງ ຢ່າໄດ້ໃຫ້ຕູ້ກັບຄົນຜູ້ໃບ້ນັ້ນເທີ້ນ

ຄົນວ່າຕູ໊ກັບດ້ວຍຄົນຝູງນັ້ນ ກ້ອຍຄຳກິດຈະການທັງມວນ ບໍ່ບໍຣະ-ບວນຈັກເທື່ອແລ ອັນໜຶ່ງຜົວເມຍ ແລພໍ່ແມ່ຜິດກັນກໍດີ ສິດແລຄູຜິດກັນກໍ່ດີຢ່າໃສ່ໂທດແກ່ກັນຄືວ່າສິນໄໝເທີ້ນ ຂໍໃຫ້ເຂົາສິມມາແກ່ກັນແຕ່ເຊົ້າຕອກດອກໄມ້ ເຜີ້ງທຽນຊອບແລ ເຫດວ່າມັນທໍ່ເປັນວິວາດສີ່ງດຽວ ບໍ່ເປັນອະທິກອນແກ່ເຂົາແລ.

ແລ້ວສຸດແມ່ນວ່າ ນັກບວດຜິດກັບຄະຫັດ ໃຫ້ຂະມາໂທດແກ່ກັນກໍມີ ເປັນດັ່ງສຸທັມມະເຖຸນ ວ່າແກ່ຈິດຕະຄະຫະບັດດີ ເມື່ອຣາດທະນາມະຫາສາຣີບຸດ ມະຫາໂມນລານະເຈົ້າສັນເຂົ້າໄປເຮືອນນັ້ນວ່າ ດູຣາຈິດຕະຄະຫະບັດດີ ອາຫານການກິນແຫ່ງທ່ານອັນອື່ນ ກໍຍັງມີມາກແລ ທໍ່ວ່າຍັງບໍ່ມີແຕ່ເຂົ້າໜົມແດກງາດາຍ ອະທິບາຍວ່າສຸທັມມະເຖຸນ ກ່າວສຽດຈິດຕະຄະຫະບັດດີ ເຫດວ່າທ່ານຂາຍເຂົ້າໜົມແດກງາຊູ່ວັນແລ ເມື່ອນັ້ນຄຳຣອດພະເຈົ້າໆ ກໍຕິສຸທັມມະເຖຸນຈຳໃຫ້ສິມມາແກ່ຈິດຕະຄະຫະບັດດີ ເຫດວ່າຄະຫະບັດດີເປັນໂສດາບັນດາຍ ເປັນອະຣິຍຸບປະວາທະ ແກ່ສຸທັມມະເຖຸນແລ ເຫດດັ່ງນັ້ນຈຶ່ງໃຫ້ສິມມາເພື່ອອັນແລ.

ຜິບຸກຄະລະມັກໃຫ້ທ່ານຈິບຫາຍ ຕາຍໄປດ້ວຍກຳອັນໃດ ກຳອັນນັ້ນກໍມາເຖິງແກ່ມັນ ໃຫ້ມັນຈິບຫາຍຕາຍໄປ ດັ່ງນັ້ນ ກໍຢ່າໃຫ້ເປັນໂທດແກ່ມັນ ຜູ້ຈຳກະທຳນັ້ນເທີ້ນ ເປັນດັ່ງຕຳນານພໍ່ໝໍຢາຜູ້ໜຶ່ງ ໄຄ່ປາກກິນຈ້າງຜູ້ເປັນພະຍາດດ້ວຍຢາ ມັນເຫັນງູເຫົ່າຕົວໜຶ່ງຢູ່ໃນໂກນໄມ້ ມັນກໍລ່າຍແກ່ໂພທິສັດເຈົ້າວ່າ ລູກນົກຍຸງຢູ່ຫັ້ນໃຫ້ຂຶ້ນເມືອເອົາ ມັນລ່າຍເພື່ອໃຫ້ງູຕອດໂພທິສັດເຈົ້າແລ້ວມັກຈັກຢາກິນຈ້າງ ເມື່ອນັ້ນໂພທິສັດເຈົ້າເປັນປະທານເດັກນ້ອຍທັງຫລາຍກໍຂຶ້ນເມືອບາຍເອົາແທ້ ກໍຮູ້ວ່າງູຈຶ່ງຊັດລົງມາກ້ຽວຄໍໝໍຢາຜູ້ນັ້ນກໍຕອດມັນຕາຍຫັ້ນແລ ເມື່ອນັ້ນ ຄົນທັງຫຼາຍ ກໍຜູກເອົາເດັກນ້ອຍທັງຫລາຍກັບໂພທິສັດເຈົ້າເມືອຫາພະຍາ ພະຍາກໍພິຈາລະນາດູໂທດແຫ່ງໂພທິສັດເຈົ້າກໍບໍ່ມີ ພະຍາໃຫ້ຜູກຕີຄົນທັງຫລາຍຝູງນັ້ນ ແລ້ວພະຍາ

ໃຫ້ຍົດສັກແກ່ໂພທິສັດເຈົ້າວັນນັ້ນແລ.

ຕັດສິນຕາມປະຕິຍານ

ອັນໜຶ່ງ ຜິຜິດກັນໃຫ້ຕາມປະຕິຍານ ແຫ່ງຂາທັງສອງນັ້ນ ເປັນດັ່ງຕຳນານຊາຍຜູ້ໜຶ່ງ ຈັກຂ້າມນ້ຳບໍ່ໄດ້ ມັນວ່າດັ່ງນີ້ ຜູ້ໃດມີກຳລັງເອົາກູຂ້າມນ້ຳໄດ້ ຂອງອັນໃດເພິງໃຈກູ ກູຈັກໃຫ້ແກ່ມັນແລ ຂອງນັ້ນມີ ເຂົ້າສານທະນານໜຶ່ງ ເຂົ້າສຸກຫໍ່ໜຶ່ງ ກັບຄຳພັນໜຶ່ງ ເມື່ອນັ້ນຍັງມີຊາຍຜູ້ໜຶ່ງ ກຳລັງມາກນັກ ມັນເອົາຂ້າມນ້ຳໄດ້ແລ້ວ ມັນຜູ້ເຈົ້າຂອງນັ້ນວ່າ ລ້ຳເຂົ້າຫໍ່ໜຶ່ງແລ ເຂົ້າສານທະນານໜຶ່ງ ນັ້ນມຶງມັກອັນໃດກໍເອົາເທີ້ນ ຊາຍຜູ້ນັ້ນມັນວ່າບໍ່ເອົາ ຄຳພັນນັ້ນກູຈັກເອົາແລ ມັນຜູ້ເຈົ້າບໍ່ໃຫ້ ຂາພາກັນໄປຫາຈ່າໄຕ່ຄຳໃຫ້ ຈ່າໄດ້ຕັດຄຳວ່າໃຫ້ມັນເອົາຫໍ່ເຂົ້າ ມັນບໍ່ເອົາຂາເລົ່າພາກັນໄປຫາພະຍາ ພະຍາໃຫ້ນາງສະລາກະເທວີຕັດພິຈາລະນາ ນາງໃຫ້ເອົາຫໍ່ເຂົ້າສຸກແລເຂົ້າສານທະນານໜຶ່ງ ກັບທັງຄຳກພັນນັ້ນຮຽງກັນໄວ້ ນາງຈຶ່ງກ່າວກາມເຈົ້າຂອງວ່າ ດູຣາທ່ານຂອງອັນໃດເພິງໃຈແກ່ທ່ານ ທ່ານຈົ່ງເອົາໜີເທີ້ນ ມັນລວດເອົາຄຳໜີ ນາງຈຶ່ງຮຽກກັບຄືນມາວ່າ ຄຳພັນນີ້ເພິງໃຈມຶງ ຫລື ມັນຂານວ່າເພິງໃຈຂ້າແລ ນາງຈຶ່ງກ່າວວ່າ ມຶງຈົ່ງໃຫ້ຄຳນັ້ນ ແກ່ຊາຍຜູ້ເອົາມຶງຂ້າມນ້ຳນັ້ນເທີ້ນ ເຫດວ່າມຶງຫາກກ່າວວ່າ ຂອງອັນເພິງໃຈກູ ກູຈັກໃຫ້ແກ່ມຶງດາຍວ່າອັນດາຍ ນາງຕັດຄຳດັ່ງນີ້ ສຸຄະຕິແລ.

ຍັງມີນັກບວດຜູ້ໜຶ່ງສິກຫາຜ້ານຸ່ງບໍ່ໄດ້ ໂຕນນ້ຳຂີ້ຂອນໄຫລໄປ ຍັງມີຍິງສອງຄົນເຫັນຂອນອັນນັ້ນໄຫລມາ ຜູ້ໜຶ່ງວ່າກູຈັກເອົາຂອນ ຜູ້ຫນຶ່ງວ່າກູຈັກວັດກຸອັນມີໃນຂອນຫັ້ນແລ ເມື່ອນັ້ນຂາກໍເຫັນຊາຍຜູ້ໜຶ່ງຫາຜ້ານຸ່ງບໍ່ໄດ້ ຍິງຜູ້ຈັກເອົາຂອນນັ້ນກໍເອົາຂອນແທ້ ຍິງຜູ້ວ່າກູ ຈັກເອົາວັດກຸອັນມີໃນຂອນນັ້ນ ມັນໄດ່ຢາກໄດ້ຊາຍຜູ້ນັ້ນ ຈຶ່ງແລ່ນເມືອບ້ານ ເອົາຜ້າມາໃຫ້ນຸ່ງໄປທັນມາ ຍິງຜູ້ເອົາຂອນນັ້ນມັນຮິບຈິກຜ້າສະໄບມັນໃຫ້ນຸ່ງເຄິ່ງໜຶ່ງ ແລກໍພາເມືອເຮືອນ ພໍ່ແມ່

ຜູ້ຍິງກໃຫ້ເຂົາເອົາກັນແລ້ວ ເມື່ອນັ້ນຍິງຜູ້ໄປເອົາຜ້າໄປ່ທັນນັ້ນມັນວ່າຜົວມັນ ຂາຈຶ່ງພາກັນໄປຫາຈ່າຕັດຄໍາວ່າ ໃຫ້ເປັນຜົວມັນຜູ້ຈິກຜ້າສະໄບໃຫ້ນຸ່ງຊອບແລ ເຫດຂາເປັນສັນທະວາສີນີ ອັນໜຶ່ງພໍ່ແມ່ຜູ້ຍິງກໍໃຫ້ແລ ອັນໜຶ່ງໄດ້ໃນເມຍໂອທະປັດຕະກີນີ້ນັ້ນແລ ຍິງຜູ້ເມືອເອົາຜ້ານັ້ນທໍ່ວ່າແຕ່ຄໍາປາກເປົ່າດາຍ ໄປ່ເປັນເມຍມັນດາຍ ຕັດເຊັ່ນນີ້ ສຸຄະຕິແລ.

<u>ຕັດສິນຄໍາຕ້ອງພິຈາລະນາໃຫ້ກີ່</u>

ອັນໜຶ່ງ ບຸກຄະລະຜູ້ຈັກຕັດຄໍາ ໃຫ້ພິຈາລະນາດູໃຫ້ແຈບດີແລ້ວຈຶ່ງຕັດ ຢ່າໃຫ້ທ່ານສົງກາອາໄລເຫີ້ນ ຍັງມີໂຈນໄປລັກເອົາໝາກອຳພາໃນສວນອຸດທິຍານພະຍາ ຈ່າສວນໄລໂຈນບໍ່ພິຈາລະນາ ໂຈນແລ່ນເຂົ້າໄປໃນສວນອຸດທິຍານແລ້ວກັບໜີໄປທີ່ອື່ນ ຈ່າສວນລວດວ່າເຈົ້າຣັດສີຕົນຢູ່ໃນສວນອຸດທິຍານ ລັກກິນໝາກມ່ວງພະຍາມັນລວດຂ້າເຈົ້າຣັດສີເສຍ ມັນຈຶ່ງເມືອບອກແກ່ພະຍາ ພະຍາພິຈາລະນາໂທດເຈົ້າຣັດສີບໍ່ມີ ພະຍາຈຶ່ງຕັດຄໍາໃຫ້ຈ່າສວນໃຊ້ຄ່າເຈົ້າຣັດສີ ຄໍາພັນໜຶ່ງໃຊ້ເຈັດທໍ່ ພະຍາຫາກໃຊ້ຕາງ ເຫດສະມະນະນັກບວດຄວນໄຫວ້ນົບຄ່າມາກນັກ ພະຍາຈຶ່ງໃຫ້ຄໍາເກິ່ງໜຶ່ງຫລໍ່ຮູບເຈົ້າຣັດສີໄວ້ແລ້ວ ຈຶ່ງເອົາຄໍາສາງເຈດີສຸບທີ່ເຜົາຫັ້ນໄວ້ ຄໍາອັນເຫລືອນັ້ນໃຫ້ຕີຟອກເຈດີຫັ້ນແລ.

ຍັງມີນາງສອງຄົນ ຜູ້ໜຶ່ງໄປ່ມີຜົວ ຜູ້ໜຶ່ງມີຜົວ ແລຂາຫຽວທາງດອມກັນ ຂາເຫັນໄຫຄໍາອັນໜຶ່ງພ້ອມກັນ ປັນກັນບໍ່ເປັນ ຊູ່ຄົນຊູ່ວ່າມັນເຫັນກ່ອນຈັກເອົາຫລາຍ ຂາກໍພາກັນໄປຫາພະຍາ ພະຍາຈຶ່ງຕັດຄໍາແກ່ຂາ ພະຍາແຕ່ງຄໍາເປັນສາມສ່ວນ ສ່ວນໜຶ່ງພະຍາເອົາ ຍັງສອງສ່ວນພະຍາຈຶ່ງພິຈາລະນາກາມຂາວ່າ ຜູ້ໃດຍັງເຫັນກ່ອນ ຂາທັງສອງນັ້ນຊູ່ຄົນຊູ່ວ່າເຫັນກ່ອນ ພະຍາເລົ່າກາມວ່າເຂືອທັງສອງຜູ້ໃດຍັງມີສິນຈາ ນາງຜູ້ມີຜົວວ່າຂ້າມີສິນແລ ເມື່ອເດືອນເພັງຂ້າຮັກສາສິນແປດຊູ່ວັນສິນແລ ນາງຜູ້ຫາຜົວບໍ່ໄດ້ກ່າວວ່າ ຂາ

ກໍມີສິນຫ້າຊູ່ວັນ ບໍ່ຂາດສາຍໃນຄີງຂ້າແລ ເມື່ອເຖິງມໍລະນະແລພົ້ນ ຂ້າກໍຮັກສາສິນແປດຊູ່ວັນ ປັກຂະສິນແລ ພະຍາຈຶ່ງປັນຄຳໃຫ້ນາງຜູ້ມີຜົວທີ່ໜຶ່ງ ເຫດວ່າມັນຮັກສາສິນແຕ່ວັນອຸໂປສົດສີ່ວດຽວດາຍໃຫ້ນາງຜູ້ບໍ່ມີຜົວທີ່ກ່ອງ ເຫດນາງຮັກສາສິນຊູ່ວັນບໍ່ຂາດ ມີສັດຈະແທ້ແລພະຍາຕັດສັນນີ້ ເອົາສິນເປັນສັກຂີແກ່ຂາຊອບທຳແລ.

ຍັງມີມານະວະຜູ້ໜຶ່ງໄປຂຶ້ນໝາກມ່ວງກິນ ມັກຕົກແຂວນງ່າໄມ້ຢູ່ ຍັງມີຄວານຊ້າງຜູ້ໜຶ່ງຂີ່ຊ້າງມາໃນປ່າ ມັນຜູ້ຕົກຮ້ອງວ່າໃຫ້ເອົາມັນລົງ ກູຈັກໃຫ້ຄຳແກ່ທ່ານຮ້ອຍໜຶ່ງວ່າອັນ ນາຍຊ້າງຢາກໄດ້ຄຳຮ້ອຍນັ້ນ ກໍສັ່ນຊ້າງໄປຈັກເອົາແທ້ ນາຍຊ້າງຢູ່ຄໍຊ້າງປີນເອົາແຄ່ງມັນບໍ່ເຖິງ ມັນຈຶ່ງລຸກຢືນເໜືອຄໍຊ້າງ ຂາມັນສັ່ນຊ້າງໄວ້ໃຈວ່າເຈົ້າມັນສັ່ນໃຫ້ໄປຊ້າງກໍແລ່ນກາຍ ເມື່ອນັ້ນນາຍຊ້າງກໍຈັບແຄ່ງມັນແຂວນຢູ່ເປັນເວດທະນາມັກ ຍັງມີພານປ່າຜູ້ໜຶ່ງໄປຄວ່າ ກໍເຫັນແຂວນຢູ່ ເມື່ອນັ້ນ ນາຍຊ້າງຈຶ່ງຮຽກໃຫ້ມັນມາເອົາວ່າ ຈັກໃຫ້ຄຳຮ້ອຍໜຶ່ງ ນາຍພານຈຶ່ງຕັດໄມ້ກ່າຍເກີນເອົາຂາລົງ ແລ້ວຈຶ່ງກາມເອົາສິນຈ້າງດອມຂາ ຂາໜຶ່ງກັນເອົາຄຳໃຫ້ສິນຈ້າງ ແກ່ນາຍພານປ່າ ພານຈຶ່ງເອົາຂາເມືອຫາພະຍາ ພະຍາຈຶ່ງຕັດວ່າໃຫ້ຄວນຊ້າງເສຍສອງສ່ວນ ໃຫ້ຜູ້ຕົກຕົ້ນໄມ້ນັ້ນເສຍສ່ວນໜຶ່ງຊອບແລ ເຫດວ່າຄວນຊ້າງຢາກກິນຈ້າງທ່ານ ມັນບໍ່ພິຈາລະນາໃຫ້ກີ່ ອັນໜຶ່ງມັນບໍ່ໃສ່ໃຈເອົາທ່ານລົງໃຫ້ໄດ້ ອັນໜຶ່ງມັນແຮ່ງແຂວນທ່ານໃຫ້ເວດທະນາອັນໜຶ່ງມັນອາໄສເຊື່ອທ່ານຈຶ່ງມີຊີວິດດາຍ.

ຍັງມີຊາຍຜູ້ໜຶ່ງໄປໄກນາ ແລ້ວມັນເອົາງົວມາຜູກໄວ້ໃຕ້ເຮືອນກຸ້ດທີ່ນອນມັນນັ້ນ ກາງຄືນໂຈນມາລັກໄປຂ້າກິນ ເອົາຊີ້ນໄປຊ່ອນໄວ້ໃນສວນພານຜູ້ໜຶ່ງ ເຈົ້າສວນບໍ່ຮູ້ເຈົ້າງົວວ່າເຈົ້າສວນເປັນໂຈນລັກເອົາງົວມັນ ມັນກໍຜູກເອົາເຈົ້າສວນເມືອຫາພະຍາ ມູລະຕັນໄຕໃຫ້ພິຈາລະນາດູ ເຈົ້າມູລະຕັນໄຕຈຶ່ງຮຽກກາມເຈົ້າສວນ ເຈົ້າສວນວ່າບໍ່ໄດ້ລັກ ຂ້າບໍ່ຮູ້ບໍ່ເຫັນແລ ເມື່ອນັ້ນເຈົ້າມູລະຕັນໄຕຈຶ່ງກ່າວແກ່

ເຈົ້າງົວວ່າດູຣາທ່ານພາມ ຜີວ່າໂຈນຜູ້ໜຶ່ງລັກວັດຖຸອັນໃດໃນທີ່ອື່ນ ມາກີ້ມໃນຄຸມທ່ານທ່ານບໍ່ໄດ້ລັກດັ່ງນັ້ນ ເຈົ້າຂອງວ່າທ່ານລັກວ່າອັນທ່ານຈັກວ່າກູລັກແລ ທ່ານຈັກວ່າບໍ່ອັນຈາ ພາມກ່າວວ່າຂ້າບໍ່ໄດ້ລັກດັ່ງນັ້ນ ຂ້າກ່າວວ່າຂ້າບໍ່ໄດ້ລັກແລ ເຈົ້າມູລະຕັນໄຕຈຶ່ງກ່າວວ່າງົວມີງໄວ້ໃຕ້ທີ່ນອນໂຈນມາລັກເອົາມີງກໍບໍ່ຮູ້ດາຍ ພາມເຈົ້າສວນນອນເຮືອນມັນຢູ່ໄກດາຍດັ່ງຣີ ໃຫ້ມັນຮູ້ມັນເຫັນນັ້ນຈາ ອັນໜຶ່ງທ່ານກໍບໍ່ເຫັນຂອງກັບມືມັນດາຍ ຈັກວ່າມັນລັກບໍ່ໄດ້ແລ ບັດນີ້ມີງບໍ່ພິຈາລະນາໃຫ້ແຈ້ງ ມາຜູກມັນສັງມີງຜິດແລ ພະຍາກໍໄໝເຈົ້າງົວທັ້ນແລ.

ເຈົ້າມູລະຕັນໄຕ ຈຶ່ງຊຸັກຕຳນານອັນໜຶ່ງມາກ່າວແກ່ເສນາທັງຫລາຍວ່າ ດູຣາເສນາທັງຫລາຍ ຍັງມີເສນາພະຍາລັງກາຜູ້ໜຶ່ງຊື່ວ່າ ເວສາຍະພາມເປັນຜູ້ພິຈາລະນາກອບຄຳຕາງພະຍາ ຍັງມີສອງຄົນຜິດກັນ ຜູ້ໜຶ່ງມີຄຳພັນໜຶ່ງໃສ່ກົງໄວ້ ໂຈນມາລັກເອົາແຕ່ຄຳໜີປະກົງໄວ້ໃຕ້ຂັ້ນໄດພາມຜູ້ໜຶ່ງ ພາມຜູ້ເຈົ້າຂອງເຫັນວ່າພາມຜູ້ນັ້ນລັກຂອງແລວ່າອັນ ຈຶ່ງພາກັນໄປຫາເສນາພະຍາໃຫ້ຕັດຄຳ ມັນບໍ່ພິຈາລະນາໃຫ້ແຈ້ງ ພອບເລົ່າວ່າເຈົ້າເຮືອນນັ້ນລັກຈຶ່ງໃສ່ສິນໄໝສອງທໍ່ເປັນຄຳສອງພັນເຈົ້າຂອງໄດ້ຍິນດີມາກ ບໍ່ນານເທົ່າໃດພາມຜູ້ເຈົ້າຂອງນັ້ນໜີເມືອຫາເຮືອນ ມັນຮອດກາງທາງເສືອໂຄ່ງຂົບຕາຍເກີດເປັນຍັກແລ ເວສາຍະພາມຜູ້ຕັດຄຳນັ້ນ ລົງໄປອາບນ້ຳ ຜີເສືອນ້ຳກິນມັນຕາຍ ກໍເກີດເປັນເຜດ ແປວໄຟກຸ້ງວິດລົງຢູ່ມາຮອງສຳ ແດງໃຫ້ຄົນທັງຫລາຍຮູ້ວ່າ ພິຈາລະນາຄຳບໍ່ຊອບ ເຈົ້າມູລະຕັນໄຕ ຊຸັກຕຳນານອັນນີ້ ມາສອນເສນາທັງຫລາຍຊູຄົນ ໃຫ້ພິຈາລະນາກອບຄຳດ້ວຍຊອບທຳ ເມື່ອພາຍລຸນແລ ຍະກາ ປະກະວິ ອາກາສະປະກະວິຕະກາ ອະສະຕັງ ຕັສມາ ສະຕັນຈະ ທຣະ ອະສະ ຕາກ–ສະເລທິ ປີນເຕຕັພພາ ຍັງມີພະຍາຕົນໜຶ່ງ ໄຕ່ຄຳແທ່ງເຂົ້າສາມຄົນຊິງກັນນອນກາງ ດັ່ງນັ້ນພະຍາແຕ່ງໃຫ້ນອນສຸມເສົາກັນ ບໍ່ໃຫ້ນ້ອຍໃຈໃຜຈັກຄົນ ພະຍາໄຕ່ຄຳສັນນີ້ ຮຽກຊື່ວ່າ ສຸດະຕິດະມະນະແລ.

ຍັງມີພະຍາຕົນໜຶ່ງ ໄຕ່ຄຳຄົນຟ້ອນສາມຄົນ ເຂົາຂໍຂີ່ເຮືອພໍ່ຄ້າໄປສູ່ລັງກາ ເຫັນໄມ້ໄຜ່ສວຍລຳໜຶ່ງງາມນັກ ເຂົາເອົາໄມ້ໄຜ່ນັ້ນແປງວອນເພັຍດີດດັ່ງໂຕ່ງໆວ່າອັນ ເຂົາສາມຄົນຜູ້ໜຶ່ງດີດເພັຍ ຜູ້ໜຶ່ງຕົບມື ຜູ້ໜຶ່ງລຸກຂຶ້ນຟ້ອນ ຕີນມັນໄດ້ຢ່ຳແຄມເຮືອ ເຮືອເຂົາຫລົ້ມເສຍຂອງຄ້າເຂົາ ເຂົາພາກັນໄປສູ່ພະຍາ ພະຍາຕັດໃຫ້ຜູ້ເພັຍດ້ວຍປາກໃຫ້ເສຍທໍ່ໜຶ່ງ ເຫດຜິດດ້ວຍປາກ ຜູ້ຕົບມືຜິດດ້ວຍອົງຄະແຫ່ງມັນຕົບມື ໃຫ້ເສຍສອງທໍ່ເກິ່ງ ຜູ້ລຸກຂຶ້ນຟ້ອນຜິດດ້ວຍຕົນທັງມວນ ໃຫ້ທໍ່ຂາສອງຄົນ ເຫດວ່າຜິດດ້ວຍຕົນກາຍ ພະຍາໄຕ່ຄຳສັນນີ້ຮຽກຊື່ວ່າ ສຸຄະຕິຄະມະນະແລ.

ຍັງມີເສດຖີຜູ້ໜຶ່ງມີລູກສາມຄົນ ເມື່ອເສດຖີຜູ້ເປັນພໍ່ເຂົາຕາຍ ເຂົາຊິງເອົາສົມບັດພໍ່ເຂົາບໍ່ຊອບພາກັນໄປສູ່ພະຍາ ພະຍາແຕ່ງໃຫ້ຜູ້ພີ່ສອງທໍ່ ຜູ້ກາງທໍ່ເຄິ່ງ ຜູ້ນ້ອງທໍ່ໜຶ່ງ ພະຍາໄຕ່ຄຳສັນນີ້ ຮຽກຊື່ວ່າ ສຸຄະຕິຄະມະນະແລ.

ຍັງມີມານະວະສີ່ຄົນ ໄປຮຽນສາຕະສິນ ໃນເມືອງຕັກກະສີລາກັບມາເຖິງປ່າທີ່ໜຶ່ງ ມີເສືອເຂົາກົວນອນບໍ່ຫລັບ ເຂົາຈາກັນສັນນີ້ເຮົາມາລອງສາຕະສິນເຮົາດູ ເຮົາຈິ່ງຊັກຮູບນາງຜູ້ໜຶ່ງເທີ້ນ ລ້າເຂົາສີ່ຄົນນັ້ນ ຜູ້ໜຶ່ງເອົາໄມ້ທອງມາຊັກຮູບ ເປັນນາງຜູ້ໜຶ່ງງາມນັກ ຜູ້ໜຶ່ງໃສ່ຫູຕາລີ້ນຜົມອົງຄະຊາດ ເຄື່ອງອັນມີໃນຕົນອັນລັກອາຍ ຜູ້ໜຶ່ງໃສ່ຜີວໜັງອັນອ່ອນລະອຽດດັ່ງເຊື້ອນາງແທ້ ໃຫ້ນຸ່ງສົ້ນເສື້ອ ຜູ້ໜຶ່ງມັນເປົ່າໃຫ້ລຸກເປັນຄົນ ຮູ້ປາກຕາມຈາລະຈາ ຂາກໍບັງເກີດຕັນຫາອັນກັດຕິໃນນາງຜູ້ນັ້ນ ຊິງກັນເອົາເປັນເມຍ ຂາພາກັນໄປສູ່ພະຍາ ພະຍາພິຈາະລະນາດູວ່າ ໃຫ້ຜູ້ໃສ່ຫູໃສ່ຕາອົງຄະເນື້ອຕົນທັງມວນເປັນຜົວ ເຫດມັນຮູ້ທີ່ເພິດລັກອາຍ ແຫ່ງນາງນັ້ນດາຍໃຫ້ຂາຜົວເມຍອຸບປະກາກ ເຂົາທັງມວນສາມຄົນນັ້ນ ຜູ້ເປົ່າໃຫ້ເປັນຄົນເປັນດັ່ງພໍ່ ຜູ້ຊັກຮູບໃຫ້ເປັນດັ່ງແມ່ ຜູ້ໃສ່ຜີວໜັງເປັນດັ່ງພີ່ຊາຍ ພະຍາໄຕ່ຄຳສັນນີ້ ຊື່ວ່າສຸຄະຕິຄະມະນະແລ.

ຕິກະໄນ : ຍັງມີກະດຸມພິດຜູ້ໜຶ່ງຫາລູກບໍ່ໄດ້ ມີຂ້າຊາຍສາມຄົນ ຜູ້ໜຶ່ງເອົາຣາຊການພະຍາ ຊຸມເຮືອນ ຜູ້ໜຶ່ງໄປຄ້າມາລ້ຽງຜູ້ໜຶ່ງຢູ່ໃຊ້ສອຍ ເມື່ອເປັນພະຍາດຮັກສາກະດຸມພິດ ເມື່ອຕາຍເຂົາຊີງກັນເອົາຂອງ ຕ່າງຄົນຕ່າງວ່າມີຄຸນ ເຂົາພາກັນໄປເຖິງພະຍາ ພະຍາແຕ່ງວ່າໃຫ້ຜູ້ຊຸມເຮືອນສອງທໍ່ ຜູ້ໄປຄ້າມາລ້ຽງທໍ່ເຖິງ ຜູ້ຮັກສາທໍ່ໜຶ່ງແລ ພະຍາຕັດສັນນີ້ ສຸດະຕິຄະມະນະແລ.

ຂັນຄ່າຄໍ

ຂັນຄ່າຄໍຣາຊກະກຸນພັນສີ່ຮ້ອຍ ຫົວແສນໃນນາພັນສອງຮ້ອຍ ຂັນໄໝຫົກຮ້ອຍ ຂັນແປງສາມຮ້ອຍ ຂັນຄ່າຄໍຫົວໝື່ນແປດຮ້ອຍຂັນໄໝສີ່ຮ້ອຍ ຂັນແປງສອງຮ້ອຍ ຂັນຄ່າຄໍແສນນອກນາ ຜູ້ໂອກາດແປດຮ້ອຍ ຂັນໄໝສີ່ຮ້ອຍ ຂັນແປງສອງຮ້ອຍ ຂັນຄ່າຄໍໝື່ນນອກນາໂອກາດຫົກຮ້ອຍ ຂັນໄໝສາມຮ້ອຍ ຂັນແປງຮ້ອຍຫ້າສິບ ຂັນຄ່າຄໍຊຸມກວານນາຍນ້ຳຫົກຮ້ອຍ ຂັນໄໝສາມຮ້ອຍ ຂັນແປງຮ້ອຍຫ້າສິບ ໄພ່ແລຊາວເມືອງອາຄັນຕຸກະ ຂັນຄ່າຄໍສີ່ຮ້ອຍ ຂັນໄໝສອງຮ້ອຍ ຂັນແປງຮ້ອຍໜຶ່ງ ຂັນຄ່າຄໍນາງເຈົ້ານາງໄທ ຜູ້ມີຍົດຫົກຮ້ອຍ.

ຄ່າທຳມຸງມສ່ວນກິນ

ຜີວ່າຕາມຂອງເກົ່າກູ້ຫາກັນ ຮ້ອຍກຸອດສິບ ນຳໜີມາແຕ່ນອກຮ້ອຍກຸອດໜຶ່ງ ພິຈາລະນາຂອງເກົ່າອັນຍາກ ໄດ້ຕັດໃຫ້ຮ້ອຍກຸອດສອງ ອັນຕົກມີໃຈມພິຈາລະນາ ຈຶ່ງໄດ້ໃຫ້ຜ່າສາມສ່ວນ ໃຫ້ໄວ້ເຈົ້າວັດກຸສອງສ່ວນ ໃຫ້ໃສ່ຣາຊໂກດຄັງແລວິນິດໄສສ່ວນໜຶ່ງ.

ຜູ້ໃດເປັນພໍ່ສື່ແມ່ສື່ເມຍທ່ານ ໃຫ້ໄໝຂັນໜຶ່ງສອງຮ້ອຍ ຂັນມິດສາຈານ ຜີໄໝພ້ອມກັນ ໃຫ້ເອົາຂັນຜູ້ໜຶ່ງທັງກິນໃຫ້ແກ່ຜູ້ເຈົ້າຜົວ ໃນຂັນໜຶ່ງ ຈຶ່ງໃຫ້ມາຜ່າສາມສ່ວນ ສ່ວນໜຶ່ງໃຫ້ໄດ້ແກ່ເຈົ້າຜົວສ່ວນໜຶ່ງໃຫ້ວິນິດໄສ ສ່ວນໜຶ່ງໃຫ້ຣາຊໂກດ ຜີວ່າຜູ້ຜົວຈັກພັດເອົາເມຍ ໃຫ້ສິນມາເງິນຮ້ອຍໜຶ່ງ ໃຫ້ມັນເອົາເມຍມັນ ຜີຜູ້ຍິງບໍ່

ມີພີ່ນ້ອງຮັບເອົາ ຜົວມັນຈັກຮັບເອົາ ຜີວ່າບໍ່ເອົາເປັນເມຍ ໃຫ້ຜ່າເອົາພູດຣາຊໂກດແລວິນິດໄສ ລ້ຳນັ້ນຍັງຢູ່ນຳຜູ້ຍິງ ມັນຈະເຮັດສິ່ງໃດກໍຕາມ ພູດຂັນຜູ້ຊາຍໃຫ້ໄວ້ແກ່ມັນທັງມວນເທີ້ນ.

<u>ຄວ່າຈ່າຍເງິນແດງ</u>

ຄວ່າຈ່າຍເງິນແດງ ແປງເງິນຄວາງ ຈ່າຍແລລຶບປະຄຸມຫຼອນໄດ້ດອມຜູ້ໃດ ໃຫ້ຈັບເອົາພໍ່ຄູເຂົ້າໃສ່ຄອກ ສາມຮ້ອຍສີ່ສິບຫ້າວັນຂອງເພີ່ນອັນມັນກືນັ້ນໃຫ້ຄືນຕົງສຽງ ຟູງບ່າວຄວາມໃຫ້ໃສ່ຂັນຄ່າຄໍ ຫາເສຍບໍ່ໄດ້ໃຫ້ໃສ່ຄອກສິບເຈັດວັນ ຂອງເພີ່ນອັນກືນັ້ນ ຫາອັນໃດຄືນບໍ່ໄດ້ໃຫ້ຂາຍລູກເມຍຂ້ອຍຄົນແທນຂອງທ່ານຕົງສ້ຽງ.

<u>ທຳລາຍວັດຖຸແລະລະບຽບຫລັກການ</u>

ຜູ້ໃດສະຫາວງານ ມາຕັດຕົ້ນສົ້ມຕົ້ນຫວານພາວຕານໝາກຜັກທ່ານເສຍ ແລຂອງລ້ຽງຂອງດູທ່ານໃຫ້ເສຍ ໃຫ້ໃສ່ຂັນໄໝສອງຮ້ອຍ ຜີຫາສັງບໍ່ໄດ້ ໃຫ້ໃສ່ຄອກຊາວວັນ ຜີສັດຕົວມີຊີວິດ ມີງົວຄວາຍໝາໝູແມວເປັນເຄົ້າກໍດີ ສັດຕົວມີປີກມີຕີນວ່າ ເປັດໄກ່ ໃຫ້ແທນຕາມລຳນຳ ດັ່ງຜູ້ລັກແຕ່ຫົນຫລັງນັ້ນເທີ້ນ.

ຂອງບໍ່ມີວິນຍານ ໃຫ້ມັນປູກເຄື່ອງຂອງທ່ານ ບົກເບົາເປັນລູກເປັນໝາກ ຜີມັນບໍ່ປູກປ້ອງໃຫ້ໄລ່ເອົາ ຫລ້າງແຮງຂາຍໄດ້ປີທີ່ໃດໃຫ້ໄລ່ຊູ່ປີ ເທົ່າເກີງໄດ້ກິນໄດ້ຂາຍນັ້ນ ເຫດໃຫ້ເປັນຜະລະແກ່ເຈົ້າຂອງດາຍ.

ຜູ້ໃດລັກອາດຍາ ໄປສົມທາບມາບເຕັງບາປໄໝເອົາເບັ້ຍ ເອົາເງິນທ່ານເມືອງນອກກໍດີ ສີ່ຂຶບລຶບກິນ ຕ້ອນປາພາເຂົ້າຄ້ຳທ່ານຄ່ຽມຫາບຄ່ຽມຄອນ ໂທດເຂົ້າຟູງນີ້ໜັກສະເໝີກັນ ໃຫ້ເອົາໃສ່ຄອກເຈັດສິບຫ້າວັນ ຂອງທ່ານໃຫ້ຄືນຕົງສ້ຽງ ເງິນຄຳໝູ່ຄວ່າໄໝທ່ານນັ້ນໃຫ້ຈັດມາໄວ້ໃນພິຈາລະນາ ອັນຄວນຜ່າກ່ອງຂຶ້ນຣາຊໂກດໃຫ້ຜ່າ.

ຊຸນເມືອງນອກ ຜູ້ຄົນຜິດໂທດຄວນຂ້າແທ້ ບໍ່ເອົາມາສູ່ອາດ

ຍາເຂົາຫາກຂ້າເສຍເມືອງນອກ ໃຫ້ໃສ່ຂັນຄ່າຄໍໃຊ້ໂຊດຜູ້ຕາຍໜຶ່ງຜູ້ ພ້ອມໃຫ້ໃສ່ຂັນຄ່າຄໍຊູ່ຄົນ ຜີຜິດບໍ່ຄວນຂ້າແລຂ້າເສຍ ໃຫ້ໃສ່ຂັນຄ່າຄໍ ຜູ້ພ້ອມກັນຂ້າ ໃຫ້ໃສ່ຂັນຄ່າຄໍຊູ່ຄົນ ໃຫ້ເຂົາໂຮມກັນໃຊ້ໂຊດ ຜູ້ຕາຍສອງໂຊດຂັນຄ່າຄໍນັ້ນ ຜີຫາອັນເສຍບໍ່ໄດ້ໃຫ້ໃສ່ຄອກທັກສິບສີ່ວັນ.

ຂ້ອຍມັນຫາກຜິດຂ້າເສຍ ໃຫ້ໃຊ້ໂຊດຂຶ້ນເລັ້ມສາວແລ ວິນິດໄສໂຊດໜຶ່ງ ໃຫ້ໃສ່ຂັນຄ່າຄໍໂຊດໜຶ່ງຂຶ້ນເລັ້ມສາວ ຜີຫາສັງເສຍບໍ່ໄດ້ໃຫ້ໃສ່ຄອກທັກວັນ ເວັ້ນໄວ້ແຕ່ຜິດອາດຍາໃຫ້ໄປເອົາ ມັນກໍອາວຸດຮົບເລວໄດ້ຂ້າຕາຍຢ່າວ່າສັງ.

ຂ້ອຍມັນຜິດ ມັນຜູກຕີ ມັນກໍຫອກດາບເລວເຈົ້າມັນ ໄດ້ຂ້າຕາຍຫາກແລ້ວ ຜີຜູ້ໃດເລວໃຫ້ເອົາຮອດອາດຍາ ໃຫ້ພິຈາລະນາດູຜິດຄວນຂ້າຈຶ່ງຂ້າບໍ່ເປັນໂທດດາຍ ຜີມັນກໍເຄືອງອາວຸດຮົບເລວ ເຈົ້າມັນຜູກບໍ່ໄດ້ ໄດ້ຂ້າຕາຍຫາໂທດບໍ່ໄດ້ແກ່ຜູ້ເປັນເຈົ້າແລ.

ເມຍມີຊູ້ ເຈົ້າຜົວຜູກເອົາຊູ້ເມຍມັນໄດ້ແລ ບໍ່ເອົາມາສູ່ອາດຍາຫາກຂ້າເສຍ ໃຫ້ໃສ່ໂທດໜຶ່ງຂັນຄ່າຄໍ ແກ່ຜູ້ເຈົ້າຜົວຜູ້ພ້ອມມີໃສ່ຂັນແປງຊູ່ຄົນ ຜີຂ້ອຍມັນຊ່ອຍຢ່າວ່າສັງ ເຫດເຂົາເກີງໃຈດອມກັນ ອັນນີ້ເຫລືອໃຈຜົວສີ່ງດຽວ ພັນດັ່ງຂ້າປອບແລລັກໂຈນນັ້ນ ເຂົາເຫລືອໃຈຊູ່ຄົນ ດ້ວຍຄຳວ່າ ຄັນບໍ່ຂ້າເສຍມັນຈັກເຮັດແລລັກເອົາຂອງທ່ານແລວ່າອັນ ເຫດດັ່ງນັ້ນຈຶ່ງໃຫ້ຂັນຄ່າຄໍຊູ່ຄົນ ຜູ້ພ້ອມຂ້ານັ້ນແລ.

ຜິດກັນ ຜູ້ບໍ່ຜິດຕີຜູ້ຜິດ ເລືອດບໍ່ຕົກປາງບໍ່ອອກໃຫ້ສູ່ຂວັນໜຶ່ງ ຜີເລືອດຕົກປາງອອກໃຫ້ສູ່ຂວັນສອງ ຜີຜູ້ຜິດຕີຜູ້ບໍ່ຜິດ ເລືອດບໍ່ຕົກປາງບໍ່ອອກສູ່ຂວັນທັກບາດ ເລົ່າໃສ່ຂັນແປງໜຶ່ງ ຜີເລືອດຕົກປາງອອກສູ່ຂວັນທັກເບັ້ຍ ໄໝສອງຮ້ອຍ ຜີຫລາຍຄົນຕີຜູ້ດຽວ ສູ່ຂວັນທັກເບັຍຂັນດຽວໄໝຊູ່ຄົນ ຜູ້ດຽວຕີຫລາຍຄົນ ໃຫ້ມັນສູ່ຂວັນຜູ້ເຈັບຊູ່ຄົນແລຫົວຄີງຄົນທັກເບັ້ຍ ໃຊ້ໂຊດກິນຄົນສອງໂຊດ ຂັນຄ່າຄໍກໍດີໃສ່ສີ່ງດຽວນັ້ນເທີ້ນ.

ສອງຜິດກັນກໍອາວຸດຊູ່ຄົນ ຜີຜູ້ບໍ່ຜິດ ໄດ້ຟັນແທງຜູ້ຜິດແທ້ບໍ່

ຕາຍ ໃຫ້ສູ່ຂວັນຜູ້ເຈັບແລບ່ອນແລຫົກເບັຍຊູ່ຄົນ ໄໝຂັນໜຶ່ງ ຜີບໍ່ເຂົ້າສູ່ຂວັນຫົກບາດຊູ່ບ່ອນຟັນແທງນັ້ນ ຂັນແປງໜຶ່ງຜີຍັງຕາຍໃຫ້ໃຊ້ສອງໄຊດ ຂັນຄ່າຄໍໜຶ່ງ ຜີຜູ້ຜິດໄດ້ຟັນແທງຜູ້ບໍ່ຜິດ ບໍ່ຕາຍໃຫ້ສູ່ຂວັນແລບ່ອນແລຫົກບາດ ໃຫ້ໃສ່ຂັນແປງໜຶ່ງ ຜີບໍ່ເຂົ້າບໍ່ຂາດ ສູ່ຂວັນແລບ່ອນກືກນັ້ນສອງບາດຊູ່ບ່ອນ ໄໝກ່ອງຂັນແປງໜຶ່ງ ຜີຍັງຕາຍໃຫ້ໃຊ້ໄຊດສອງໄຊດ ຂັນຄ່າຄໍຫາເສຍບໍ່ໄດ້ ໃຫ້ໃສ່ຄອກສາມສິບຫາວັນວ່າອັນ ດ້ວຍບໍ່ໃຊ່ບ່ອນຊູ່ຄົນ ຜີຜູ້ໜຶ່ງຢູ່ໃນທີ່ມັນ ຜູ້ໜຶ່ງກືອາວຸດມາສູ່ຂາເຈົ້າ ເຈົ້າທີ່ຂ້າຕາຍຫາກແລ້ວ ຢ່າໃຫ້ເປັນໂທດແກ່ເຈົ້າທີ່ຜີມັນຂ້າເຈົ້າທີ່ຕາຍໃຊ້ໄຊດ ຂັນຄ່າຄໍໜຶ່ງ ຜີເຈົ້າທີ່ບໍ່ໄດ້ກືອາວຸດກັ້ນກາງໃຫ້ໃສ່ຂັນຄ່າຄໍ ຢ່າໃຫ້ຂາຫຍ້າມຂ້າທ່ານເທີ້ນ ຜີສອງຜິດກັນກືອາວຸດຢູ່ກັບທີ່ຊູ່ກ້ຳ ໃຫ້ກືຄ່າກັນເສຍ ຜູ້ໜຶ່ງຍັງແລ່ນອອກທີ່ໄປໃຫ້ໄໝກ່ອງຂັນແປງ ຜີເຈົ້າທີ່ບໍ່ກືອາວຸດຕອບ ໄໝຂັນແປງໜຶ່ງ ຜີກືຄ້ອນຢູ່ກັບທີ່ຊູ່ຄົນໃຫ້ກືທໍ່ກັນ ຜູ້ໜຶ່ງຍັງອອກທີ່ຕົນໄປໄໝຊາວຫາຜີຜູ້ໜຶ່ງກືຄ້ອນອອກຈາກທີ່ສູ່ທ່ານ ຜູ້ໜຶ່ງອອກມາສູ່ເປົ່າດາຍ ໄໝຜູ້ກືຄ້ອນຊາວຫ້າ ຜີເປົ່າອອກສູ່ທ່ານໄໝຊາວ ຜີຜູ້ໃດອອກກືຄ້ອນເຈົ້າທີ່ກືອາວຸດໄໝເຈົ້າທີ່ບໍ່ຄວນແລ ເຫດທ່ານຮັກສາຊີວິດທ່ານກັບທີ່ດາຍ.

ສອງດ່າກັນຜູ້ດ່າກ່ອນຄວາມໜຶ່ງ ຜູ້ດ່າລຸນສອງຄວາມ ກືສະເໝີກັນ ຜີຜູ້ໜຶ່ງມັນບໍ່ດ່າຕອບ ໃຫ້ຜູ້ດ່າທ່ານນັ້ນ ແຕ່ງເຂົ້າຕອກດອກໄມ້ມີທຽນສີ່ຄູ່ສິມມາ ຜີຜູ້ຍິງມີຍົດກວ່າໃຫ້ເອົາຕີນມືໃສ່ຫົວ ຜີບໍ່ເອົາໃສ່ໃຫ້ມີເງິນຊາວ ເຝົ້າທຽນດອກໄມ້ສິມມາ.

ຜູ້ທຸກແລເຈົ້າຂຸນຜູ້ມີຍົດຕ່ຳ ປະໝາດ ແລດ່າຜູ້ມີຍົດສັກໄໝເອົາເປັນຂ້ອຍ ຢ່າໃຫ້ຜູ້ນ້ອຍຫຍາມດູງ່າຍ ຜູ້ໃຫຍ່ເຈົ້າໄຮ່ເຈົ້ານາເຈົ້າໝື່ນເຈົ້າແສນ ຜູ້ເປັນອົງອາດສາມາດ ຢ່າໃຫ້ດູງ່າຍເທີ້ນ.

ຜູ້ໜຶ່ງກືຫອກດາບວ່າຈັກໄປຂ້າທ່ານ ແລຂອດເວນກັນແຕ່ກ່ອນພາຍລຸນມັນຄຶດວ່າບໍ່ແມ່ນ ບໍ່ໄປຈາກທີ່ຢ່າຟ້າວວ່າສັງແກ່ມັນ ອອກໄປເກີງທີ່ທ່ານມີຄົນຫ້າມມັນກໍດີ ມັນຈຶ່ງຄືນກໍດີໄໝຂັນໜຶ່ງ ຜີບໍ່ມີ

ຄົນຫ້າມມັນ ມັນຄຶດວ່າໄປສູ່ທ່ານບໍ່ແມ່ນອາດຍາ ມັນຫາກຄຶດແຕ່ກ່ອນເຂດທ່ານໃຫ້ໃສ່ຂັນແປງໜຶ່ງແລ.

ໄປການສິ່ງຂອງບໍ່ໄດ້ ສິ່ງກ້ອຍຄວາມຫາກັນ ເຈົ້າທີ່ຫາກຕີຜູ້ແຂກສິ່ງນັ້ນໃຫ້ເຈົ້າທີ່ສູ່ຂວັນ ຕາມອັນເຈັບໃສ່ຂັນສອງຮ້ອຍ ຜິໄດ້ຄ້ອນສອງຕີກັນເຈັບ ໃຫ້ພິຈາລະນາ ຕາມສັກຂີພິຍານດູ ໃຫ້ແຕ່ງຕາມຄອງຜູ້ຜິດຕີຜູ້ບໍ່ຜິດ ຕາມລຳນຳດັ່ງກ່າວມາແລ້ວນັ້ນ.

ຜິຈ້າວລູກທ່ານຂ້ອຍຄົນທ່ານ ຂຶ້ນໝາກພ້າວຕານຫວານສົ້ມ ພໍ່ແມ່ເຈົ້າຂອງບໍ່ຮູ້ຫາກເປັນຄວາມກັນຂຶ້ນ ລູກທ່ານຂ້ອຍຄົນແລຄົນສິນທ່ານຫລອນຕົກຕາຍ ໃຫ້ແທນຄ່າ ຜິຈ້າວຮອດພໍ່ແມ່ເຈົ້າຄົນກໍໃຫ້ຂຶ້ນກິນຈ້າວຫລອນຕົກຕາຍ ຢ່າວ່າສັງແກ່ຜູ້ຈ້າວທ້ອນ ເທົ່າໃຫ້ຜູ້ຈ້າວເງິນຫ້າບາດ ໄປສິ່ງສະການຜູ້ຕາຍ ຜິຍັງຫາຄວາມກັນຮອດເຈົ້າຂຸນໃຫ້ມີເງິນຮ້ອຍໜຶ່ງສິ່ງສະການ ຜິທໍ່ແຕ່ວານດາຍດອກບໍ່ໄດ້ໃຫ້ສິ່ງແທ້ ໃຫ້ປັ່ງຄ່າຜູ້ຕາຍ ຜ່າສາມສ່ວນໃຫ້ແທນສອງສ່ວນລະເສຍສ່ວນໜຶ່ງ ເຫດປາກທ່ານຫາກວ່າໃຫ້ໄປແລ້ວ ດ້ວຍແທ້ໄປເປົ່າດາຍ ຈັກໃຫ້ຄົນທ່ານຕາຍດາຍດອກໃຊ້ການ.

ຜູ້ຈູງມ້າແລ້ວຄວາຍໄປທາງດຽວ ບໍ່ບອກໃຫ້ທ່ານຫຼີກໄກຫຼອນຊິນ ແລຂີບທ່ານຕາຍ ໃຫ້ແທນຄ່າຄົນທ່ານທັງມວນ ຜິຍັງເຈັບໃຫ້ສູ່ຂວັນຫົກເບ້ຍເງິນ ຜິປ່ອຍໄວ້ກາງທົ່ງກາງນາ ຫາກຊິນທ່ານຕາຍ ໃຫ້ສັດຕົວນັ້ນມາຜ່າກ່ອງໜຶ່ງສິ່ງສະການ ກ່ອງໜຶ່ງໄວ້ຜູ້ເຈົ້າ ຜິມ້າຫາກປ່ອຍໄວ້ແລຫຼູດມືໄປໄດ້ຂາທ່ານຕາຍ ໃຫ້ຜ່າຄ່າມ້າເປັນສາມສ່ວນ ໃຫ້ສິ່ງສະການຜູ້ຕາຍສ່ວນໜຶ່ງ ໄວ້ແກ່ເຈົ້າມ້າສອງສ່ວນ.

ເຈົ້າມ້າກໍດີ ມ້າໄລ່ກາງເມືອງກໍດີ ມ້າແຂງບໍ່ຮ້ອງໃຫ້ທ່ານຫລີກໄດ້ຂີບທ່ານຕາຍ ໃຫ້ແທນຄ່າຄົນທັງມວນ ຍັງເຈັບເລືອດຕົກປາງອອກ ໃຫ້ເຈົ້າມ້າສູ່ຂ້ວນຫົກເບ້ຍ ບໍ່ເລືອດຕົກປາງອອກສູ່ຂວັນຫົກບາດ ຜິຢ່ຳແຄ່ງຂາຫັກເສຍການ ໃຫ້ຜ່າກ່ອງຄ່າມ້າແທນ ຜິວ່າເຈົ້າມ້າບອກວ່າມ້າຮ້າຍ ມ້າແຂງໃຫ້ຫລີກ ຫາກບໍ່ຫລີກຢ່ຳຕາຍ

ກໍດີ ຢ່າໃຫ້ວ່າສັງເທີ້ນ.

ທ່ານບໍ່ໄດ້ກູ້ເງິນຄຳຊ້າງມ້າ ຕູ່ວ່າທ່ານກູ້ ຜູ້ແກ້ຕົກໃຫ້ມັນໃຊ້ທໍ່ອັນມັນຕູ່ທ່ານນັ້ນ.

ຄົນທຽວທາງກາງຄືນ ລ້ຳກອງຄາດຕູດຕັ້ງລ້ຳກອງເດິກບໍ່ມີໂຄມໄຟບໍ່ປາກບໍ່ຈາໄປເດິກ ທ່ານຕ້ອນລັກໂຈນຈອບມັນຍັງໄດ້ ກໍ່ເປັນໂທດສະເໝີໂຈນ ຜີສັກຂີກັບມີມັນມີ ເປັນຕົ້ນວ່າ ແຄນ ເພັຍ ຊໍ່ອັນໜຶ່ງມັນຮຽກຫາ ຜູ້ຮູ້ຈັກຈິ່ງໃຫ້ວາງເສຍ ອັນໜຶ່ງຄົນຫລິງເຂົ້າບ້ານຂ່ວງເຂດທ່ານກາງຄືນໄປລ້ຳເດິກ ທ່ານລິງມາຕ້ອນ ມັນບໍ່ເລົ່າວ່າຫລິງ ມັນບໍ່ປາກບໍ່ຈາແລ່ນໜີ ເຈົ້າບ້ານໄດ້ຂ້າຕາຍ ຢ່າວ່າສັງແກ່ເຈົ້າບ້ານ ເຫດທ່ານຮັກສາເຂດຂ່ວງທີ່ຢູ່ທ່ານດາຍ ຜີເຈົ້າບ້ານຈັບເອົາໄດ້ແລ້ວມັນຮ້ອງມີຜູ້ຍາດທົ້ນເອົາ ມັນຍັງດິ້ນຂ້າເສຍ ຈັກໃຫ້ເປັນໂທດແກ່ຜູ້ໃດ້ຂ້າ.

ຜີລ້ຳເດິກຄາດຮິງຫວານໄວ້ແລ້ວ ເຈົ້າຂຸນທຽວຄືນໃຫ້ມີໂຄມໄຟແລບັ້ງນ້ຳ ກັບໃຫ້ປາກຈາໄປ ໃຫ້ຮູ້ວ່າເປັນຄົນດີ ຜີໄປແລບໍ່ມີສຳຄັນທ່ານຕ້ອນລັກໂຈນທຽວເຫັນບ້ານ ທ່ານໄດ້ຂ້າຢ່າວ່າຫື ມີໄຟແລ້ວນອກໂຄມໄຕ້ຊຸດຍັງ ບັ້ງນ້ຳໂຄມໄຟຍັງ ທ່ານໂທດຜູ້ຂ້າແມ່ນຄົນໃຊ້ສອຍ ກໍໃນຍະດຽວນັ້ນ ຜີຄົນໃຊ້ຄັນຮອດປະຕູບ້ານ ໃຫ້ຮຽກເຈົ້າບ້ານ ຢ່າຫລອນເຂົ້າບ້ານທ່ານ ຄອງຄົນຮ້າຍທ່ານໄດ້ຂ້າຕາຍຫາກແລ້ວຢ່າວ່າຫື ຄົນຍັງຮຽກແລ້ວ ເຈົ້າບ້ານບໍ່ພິຈາລະນາ ໂທດເຈົ້າຜູ້ຂ້າ.

ຜູ້ຂີ່ຊ້າງທຽວທາງຕົວນ້ອຍກໍດີ ຕົວໃຫຍ່ກໍດີ ບໍ່ມີສຳຄັນໃຫ້ເຕີນຄົນຫລີກໄກ ຜີບໍ່ບອກຊ້າງຍັງຂ້າຕາຍ ໃຫ້ແທນຄ່າຫົວມວນ ຜີບໍ່ຕາຍໃຫ້ໃສ່ຂັນຕີໜຶ່ງ ແປງຂັນໜຶ່ງ ຜີຍັງຂີ່ໄລ່ທ່ານໄດ້ ແທງຈັບເລືອດຕົກຢາງອອກໃຫ້ສູ່ຂວັນທົກເບັຍເງິນ ຊູບ່ອນບາດໄຫມຂັນໜຶ່ງ ຜີທີ່ໄລ່ໃຫ້ທ່ານກົວ ໃສ່ຂັນແປງໜຶ່ງ ເລົ່າຂັນງານໜຶ່ງຮ້ອຍຊາວເຫດໃຫ້ໃຈສັດເຍັດຫລີ້ນ ຍ່ອມເປັນແທ້ ຍັງຂ້າທ່ານຕາຍໃຫ້ໃຊ້ໂຊດ

ສອງໂຊດ ຂັນຄ່າຄໍໜຶ່ງ ບໍ່ມີອັນເສຍຂັນຄ່າຄໍ ໃຫ້ໃສ່ຄອກຕາມສັກ ຂ້ອຍໄທມີບາດເງິນ ຜີຊ້າງທ່ານກາຍດີ ທ່ານໃຫ້ຫລີກມັນບໍ່ຫລີກຍັງ ຍົວະເຍົ້າຊ້າງທ່ານກໍດີ ຊູ່ຄົນຊູ່ເຍົ້າຍົວະຫລີ້ນ ຊ້າງໄດ້ແທງຕາຍ ຫາກແລ້ວ ເຈົ້າຊ້າງຕົກຕາຍ ຊ້າງປ່ອຍຫາກແລ້ວ ຢ່າວ່າຫື ອັນ ໜຶ່ງ ຊ້າງມາທ່ານໄວ້ກັບທີ່ກໍດີ ຂີ່ກາຍກໍດີ ຜີຜູ້ໜຶ່ງຫລອກຊ້າງມາ ທ່ານປ່ອຍເສຍ ໃຫ້ແທນຄ່າທັງມວນ ຜູ້ຂີ່ຊ້າງຕົກເສຍອົງຄະ ໃຫ້ ແທນຄ່າກຸ່ອງໜຶ່ງ ສູ່ຂວັນຫົກເບັ້ຍໄໝຂັນໜຶ່ງ ຜີບໍ່ເສຍອົງຄະ ແຕ່ ໄໝແລສູ່ຂວັນ ຜີເລືອດບໍ່ຕົກ ສູ່ຂວັນຫົກບາດ ຂັນແປງຮ້ອຍເງິນ ໜຶ່ງ ຜີຍັງຕາຍໃຊ້ໂຊດສອງຂັນຄ່າຄໍໜຶ່ງ ຜີບອກມັນບໍ່ຫລີກແລຊ້າງ ຊອດຂີໄດ້ແທງຈັບຕາຍ ຢ່າວ່າຫື ຊວດກຳລັງບໍ່ໄດ້ດັ່ງໃຈ.

ຊ້າງຕົວນ້ອຍໃຫ້ຫລີກຕົວໃຫຍ່ ຜີຊ້າງນ້ຳມັນ ຕີພ່າງຮາດສາ ຄົນ ຕົວບໍ່ນ້ຳມັນໃຫ້ຫລີກ ຕົວນ້ຳມັນ ຜີຫາກຫລີກແລ້ວກໍດີ ບໍ່ທັນ ຫລີກກໍດີ ຊ້າງນ້ຳມັນພານາຍໄລ່ແທງເອົາໄວ້ບໍ່ໄດ້ ຣຸນເສຍຟັນຊວດ ແທງຕາຍຢ່າວ່າຫືເທີ້ນ ຜີຊ້າງຕົວນ້ຳມັນນາຍບໍ່ສັບບໍ່ຟັນໄວ້ ຍັງ ແທງທ່ານຕາຍໃຫ້ໃຊ້ຄ່າກຸ່ອງໜຶ່ງ ຜີຕັ້ງໄສ້ໄລ່ແທງແທ້ ໃຫ້ເຈົ້າ ຊ້າງແທນຄ່າຕົງສຽງ ຜີຊ້າງຮາຊວັດ ບໍ່ໃຫ້ສັບຟັນເອົາໄວ້ດ້ວຍແຄ່ງ ຂາບໍ່ຟັງຢ່າວ່າຫືເທີ້ນ.

ທ່ານຜຽງຊ້າງ ໃນເກືອນທ່ານກ່ອນ ເຈົ້າຂຸນພັດເອົາຊ້າງໄປ ຜຽງເມືອລຸນ ບໍ່ຮູ້ແລຊ້າງຜຽງກ່ອນໄດ້ແທງຕາຍຫາກແລ້ວເສຍ ຜີ ຊ້າງຕົວຜຽງລຸນ ແທງຕົວຜຽງກ່ອນຕາຍ ໃຫ້ເອົາຕົວແທນຕົວ ບໍ່ ອັນໃຫ້ເຈົ້າຊ້າງໃຊ້ແກ່ເຈົ້າຊ້າງຕົວນັ້ນຕົງສຽງ ຜີຊ້າງຕົວຜຽງກ່ອນ ນັ້ນ ຫາກບໍ່ໃຊ້ເຖິງເຈົ້າຊ້າງຕົວປ່ອຍກ່ອນນັ້ນ ພາຍລຸນມີຊ້າງຕົວ ໜຶ່ງ ນ້ຳມັນກໍດີ ບໍ່ນ້ຳມັນກໍດີ ຫາກໄປປ່ອຍເກືອນອັນນັ້ນວ່າຊ້າງ ຮ້າຍໃຫ້ເອົາຊ້າງເຂົາໜີ ເຂົາຫາກບໍ່ເອົາໜີ ໄດ້ແທງຕາຍຫາກ ແລ້ວ ຜີຊ້າງຕົວປ່ອຍກ່ອນໄດ້ແທງຕາຍຫາກແລ້ວ ເຫດຊູ່ຄົນຊູ່ວ່າ ຊ້າງມັນແຂ້ງເຂົາຈຶ່ງບໍ່ເອົາໜີຈາກກັນ ຜີຈັກປ່ອຍຊ້າງຕົວກ່ອນຫາກ

ຫາດິນ ເຈົ້າດິນໃຫ້ອະນຸຍາດແລ້ວ ຈັກປ່ອຍທີ່ເປັນດິນເຈົ້າທີ່ ເຫດ ເຈົ້າຫາກໃຫ້ທ່ານປ່ອຍກ່ອນແລ້ວ ຮຽກວ່າຊ້າງຕົວລຸນນີ້ຊິວທີ່ທ່ານ ແລ ຍັງເປັນອິນຕາຍແກ່ຊ້າງຕົວກ່ອນ ໃຫ້ເຈົ້າຊ້າງຕົວລຸນແທນ ຄ່າຊ້າງຕົວຕາຍນັ້ນຕົວສຽງ ຜີເຈົ້າດິນບໍ່ພິຈາລະນາໃຫ້ທີ່ແລໃຫ້ອະ ນຸຍາດຊູ່ຕົວ ໃຫ້ເຈົ້າດິນແທນຄ່າຊ້າງຕົວຕາຍເຄິ່ງໜຶ່ງ ໃຫ້ແກ່ ເຈົ້າຊ້າງຕາຍ ຜີເຈົ້າດິນເລົ່າວ່າຊ້າງທ່ານເອົາມາປ່ອຍໜີ້ ບໍ່ເປັນ ທີ່ປ່ອຍຜຽງດັ່ງນັ້ນ ຫາກຍັງດິນປ່ອຍແທ້ ບໍ່ເປັນໂທດແກ່ເຈົ້າດິນ ທໍ່ ໃຫ້ພິຈາລະນາຊ້າງທັງສອງນັ້ນຕາມອັນຫນັກອັນເບົາ.

ຜີຊ້າງໂຮງພະຍາເຈົ້າປ່ອຍຜຽງທີ່ໃດກໍດີ ໃຫ້ເຂົາເອົາຊ້າງເຂົາ ຫລີກ ຜີບໍ່ຫລີກແທງຕາຍຫາກແລ້ວ ຜີຊ້າງເຂົາແທງຊ້າງຫລວງ ຕາຍໃຫ້ໃຊ້ຊ້າງແທນ.

ຜີຜູ້ເປັນສາກສີແກ່ທ່ານ ເອົາມາຖາມມັນບໍ່ມີສັດຈະ ມັນລ່າຍ ໃຫ້ມາສວນກວ້ານວ່າ ຄວາມໜຶ່ງແລກ່າວຕົກ ມີຜູ້ເຈົ້າກວ້ານເລົ່າ ປີ້ນຄວາມພ້ອມເຈົ້າມັນ ວ່າໃຫ້ແມ່ນຄວາມມັນ ຜູ້ນັ້ນກໍຢ່າກີເອົາ ຄວາມ ມັນເປັນອະລັດຊິ ແມ່ນສວນເອົາໄພ່ເມືອງກໍດີເທື່ອໜຶ່ງ ມັນ ພ້ອມວ່າໄພ່ໄດ້ມາເປັນໄພ່ແລ້ວເທື່ອໜຶ່ງ ມັນປີ້ນຄວາມວ່າບໍ່ໃຊ່ໄພ່ ຜູ້ນັ້ນບໍ່ກີເອົາຄວາມມັນປາກຫລາຍເປັນອະລັດຊິແລ.

ຊື້ຂອງດອມກັນຂາດແລ້ວ ມັນໃຫ້ບໍ່ໝົດ ເຈົ້າຂອງມາເອົາຄ່າ ອັນນັ້ນກໍດີ ອັນໜຶ່ງມັນຊື້ຂອງແມ່ນລັກໂຈນ ມັນປ້ານເປັນໂທດມັນ ຣິບປີ້ນຄວາມວ່າບໍ່ໄດ້ຊື້ ວ່າດັ່ງນັ້ນກໍດີ ມັນຊື້ດອມຜູ້ໃດກໍດີ ມັນໄດ້ຊື້ ແລ້ວມັນໃຫ້ຄ່າບໍ່ໝົດ ເຈົ້າຂອງມາເອົາຄ່າອັນບໍ່ໝົດນັ້ນ ວ່າບໍ່ໄດ້ ຊື້ເທົ່າມາເຈືອດດາຍດອກວ່າອັນ ສວນຕົກມັນຊື້ແທ້ ໃຫ້ໄໝຂັນໜຶ່ງ ຜູ້ໃດທ່ານເອົາເຄື່ອງໄວ້ດອມ ເຫັນຂອງທ່ານ ເພິ່ງໃຈປາກໄດ້ຂອງ ທ່ານ ເອົາຂອງໄປແທນເອົາ ລວດວ່າຈ່າຍຂາດແລ້ວດາຍ ບໍ່ໃຫ້ ແລ້ວວ່າດັ່ງນັ້ນ ຜີສວນຕົກວ່າທ່ານບໍ່ໄດ້ຂາຍ ທໍ່ເອົາໄປເຈືອດແທ້ ໃຫ້ໄໝຂັນໜຶ່ງ.

ຜີວ່າຜົວເມຍຮ້າງກັນໃຫ້ປະຕິຍານຄວາມເຂົ້າໃຫ້ກັນແຕ່ກ່ອນ ມັກວ່າໃຫ້ຕັດແລ້ວ ຜີມັນຫາກໜີໄປຢູ່ດອນພີ່ນ້ອງ ພໍ່ແມ່ມັນຫາ ເຫດການບໍ່ໄດ້ ມັນບໍ່ມາຫາເມຍມັນດັ່ງນັ້ນ ຮູ້ວ່າປະສົງດອມເມຍ ມັນແທ້ ໃຫ້ແຕ່ສົມມາພໍ່ແມ່ເມຍ ຜີມັນບໍ່ປະສົງພໍ່ແມ່ຫາກວ່າຜິດ ມັນບໍ່ແຕ່ງ ໃຫ້ພິຈາລະນາດູກ່ອນ ຄວນຂາດຈຶ່ງວ່າຂາດ ບໍ່ຄວນ ຂາດຢ່າວ່າຂາດ ຄວາມຜົວຄວາມເມຍທ່ານເສຍ.

ຜູ້ໜຶ່ງລະເມຍໄປຄ້າກິນລວດບໍ່ມາກໍດີ ຫາກໄປຄ້າເອົາເມຍ ຢູ່ ພໍ່ແມ່ຄ້ຳການເມືອງບໍ່ໄດ້ມາຮອດອາດຍາ ໃຫ້ຜົວໃໝ່ຄ້ຳການ ເມືອງຊ່ວຍພໍ່ແມ່ ເມື່ອລຸນຜູ້ເກົ່າມາຮອດໃຫ້ເອົາໃຈໃສ່ຜູ້ຍິງມັນ ມັກ ຜົວເກົ່າຕາມໃຈມັນມັກ ຜີມັກຜົວໃຫມ່ໃຫ້ຕາມໃຈມັນ ຜີຜູ້ຊາຍຍັງ ເປັນຄຸນກັບແຜ່ນດິນແທ້ ໃຫ້ແຕ່ງສົມມາຮອດອາດຍາ ໃຫ້ເອົາຜົວ ໃໝ່ຄ້ຳການເມືອງ ຊ່ອຍພໍ່ແມ່ເມື່ອລຸນແລ ໃຫ້ຜົວໃໝ່ສົມມາຜົວ ເກົ່າດ້ວຍເຂົ້າຕອກດອກໄມ້ເຜີ້ງທຽນ ສິ່ງຂອງຕິດເນື່ອງກັນໃຫ້ຄືນ ຜີ ຜູ້ຊາຍໜີຈາກຜູ້ຍິງເຖິງສາມປີບໍ່ມາຢາມເມຍມັນກໍບໍ່ໄດ້ແລ.

ຜູ້ໜຶ່ງເອົາລູກສາວຫລານຍິງທ່ານ ເຫດການເມືອງມີບໍ່ໃສ່ໃຈ ມາອາສາການແກ່ພໍ່ແມ່ເມຍ ມັນໜີໄປພັດເລື່ອມາຫາເມຍມັນໄປໆ ມາໆເຖິງສາມທີ ຢ່າຍຸໃຈໃຫ້ເອົາມັນໄວ້ ຄັນເຖິງການເມືອງມັນໜີ ຄັນລ່ວງການເມືອງມັນມາ ຢ່າໃຫ້ເປັນເມຍມັນທ້ອນ ເຫດທ່ານ ລ້ຽງລູກຍິງນາງສາວຢາກກິນແຮງ ຄຸນພໍ່ແມ່ລ້ຽງຍາກ ໃຫ້ສົມມາພໍ່ ແມ່ເມຍ ຜີມັນບໍ່ສົມມາໃຫ້ຣະໜີເທົ້ນ ຜີມັນແຕ່ງສົມມາກໍຍັງຄວນ ໃຫ້ມັນຄືນຫາເມຍມັນແລ.

ຜິດກັນກາງລາດ ດ້ວຍລັກໝາກພູ້ພ້າວຕານແຜ່ນແພ ເສື້ອຜ້າ ເບ້ຍຫອຍຂອງຊື້ຂາຍດັ່ງນັ້ນ ໃຫ້ເກີນລາດ ແຕ່ງໃສ່ສາມພັນໜ່ວຍເບ້ຍ ຂອງໃຫ້ແທນ ຜີບໍ່ເຂົ້າໃຈໃຫ້ນຳມາກ້ວານຫລວງ ອັນໜຶ່ງຜີຮູ້ວ່າມັນ ແຮ່ງລັກລ່ຽມ ຈັກຊື້ເສື້ອຜ້າເງິນຄຳດອມກັນ ໃຫ້ພາໄປເລົ່າແກ່ເກີນ ລາດ ເປັນສັກຂີໄວ້ ເຈົ້າຂອງເຫັນບໍ່ເປັນໂທດແລ

ຜີບໍ່ເລົ່າໃຫ້ເປັນສັກຂີໄວ້ໃຫ້ແຈ້ງ ເຈົ້າຂອງເຫັນໃຫ້ມັນຕາມເອົາຜູ້ຂາຍ ໃຫ້ໄດ້ອັນໜຶ່ງຜີຂາຍຄົນເອົາແລ້ວ ຜູ້ໜຶ່ງໄຈດວ່າຄົນກູດາຍວ່າດັ່ງນັ້ນໃຫ້ເຂົາສ່ວນກັນກ່ອນ ຄົນຜູ້ໄກ່ນັ້ນ ໃຫ້ໄວ້ກັບເຈົ້າເງິນຜູ້ໄກ່ກ່ອນ ຢ່າໃຫ້ຂາດວຽກທ່ານເສຍ ເຫດທ່ານມີເງິນໄກ່ ເພື່ອຈັກກິນແຮງ ຄັນເຂົາສວນຕົກຮ່ອມເປັນຄົນຜູ້ໃດຈິ່ງໃຫ້ຕົກເປັນຄົນຜູ້ຂາຍຂາດ ໃຫ້ໃສ່ໂທດແກ່ມັນຜູ້ຍາດເຫີ້ນ ຜີຕົກແມ່ນຄົນຜູ້ຍາດ ໃຫ້ໃສ່ໂທດແກ່ຜູ້ລັກຄົນທ່ານໄປຂາຍ.

ຂ້ອຍທ້າວພະຍາເຈົ້າ ເອົາມ້າມາຕົກນ້ຳຕົກທ່າກໍດີ ໄປທາງຫຼວງກໍດີ ມ້າຮ້າຍ ມ້າແຂ້ງໃຫ້ບອກຄົນທັງຫລາຍຫລີກ ຢ່າທ່ານຕາຍໃຫ້ຜູ້ເຈົ້າມ້າໃຊ້ຄົນທ່ານ ຕົວມັນຜູ້ຂ້ອຍໃຫ້ໃສ່ຄອກສີວັນ ຜີບໍ່ຕາຍເລືອດຕົກຢາງອອກໃຫ້ສູ່ຂວັນຫົກເບ້ຍເງິນ ຜີເສຍອົງຄະ ພໍເສຍການ ໃຫ້ໃຊ້ສອງຮ້ອຍເງິນ ຜີແຕ່ເຈັບເລືອດບໍ່ອອກສູ່ຂວັນເບ້ຍເງິນ.

ຜີເດັກນ້ອຍຊູ່ຄົນ ອາຍຸໄດ້ສິບສອງປີເມືອເຫັງ ເຂົາຊວນກັນໄປຫລິ້ນ ເຂົາກໍ່ມີໄມ້ຄ້ອນກ້ອນດິນໃສ່ກັນ ຫລອນກົກຜູ້ໜຶ່ງຕາຍ ໃຫ້ຜູ້ກະທຳນັ້ນໃຊ້ຄ່າຜູ້ຕາຍ ໃຫ້ພໍ່ແມ່ມັນເສຍໂທດ ຢ່າສົງໄສທ້ອນ ຜີເລືອດຕົກສູ່ຂວັນຫົກເບ້ຍເງິນ ຜີຕີເຈັບໄດ້ພ່ອງຊ້ຳບຸບ ໃຫ້ສູ່ຂວັນຫົກເບ້ຍຍັງເສຍອົງຄະເສຍການ ໃຫ້ໃຊ້ແທນສອງຮ້ອຍເງິນ ຜີຊູ່ຄົນຂຶ້ນໄມ້ກໍດີ ຕາຍເຈັບປວດຢ່າວ່າສັງ ຜີມັນຜູ້ໜຶ່ງປັດໄສ ຕົກຕາຍກໍດີໃຫ້ແຕ່ງດັ່ງຫລັງນັ້ນ ທໍ່ຢ່າບາບໄໝໃສ່ໂທດ ຜີດຕົວໃດເອົາຕົວນັ້ນສູ່ເຂົ້າເລົ້າຂວັນກັນທໍ່ນັ້ນ ຜີຕາຍ ເອົາຕົວແທນຕົວເທົ່ານັ້ນກໍແລ້ວ. ຮັບເອົາຊູ້ໄປນອນເຮືອນທ່ານ ເຈົ້າເຮືອນຍໍອາທິກອນໃສ່ຂັນແປງໜຶ່ງສິມມາເຮືອນທ່ານຊາວເງິນ.

ຜູ້ໃດໄປເຊົາເຮືອນທ່ານ ເສຍຂອງທ່ານໃນຂະນະນັ້ນ ເຈົ້າຂອງຫລົ່ງນ້ຳຂວ້ຳບວຍໄດ້ ໃຫ້ແທນທັງມວນ ຜີເຈົ້າຂອງຕັ້ງສັດຈະບໍ່ໄດ້ຢ່າໃຫ້ແທນເຫີ້ນ ບໍ່ດັ່ງນັ້ນ ໃຫ້ເອົາໃຈດ້ວຍອັນຜ່າກອງພ່ອງສອງເຂົາໄວ້ໃຫ້ແຕ່ງຕາມຄອງ ຜີເຈົ້າເຮືອນບັກຜູ້ແຂກລັກແທ້ ສູ່

ຂວັນໃຫ້ກະທຳດ້ວຍສາຕະສິນ ມີຕົ້ນວ່າ ກິນເຂົ້າກັບແລງ ຜູ້ແຂກ
ບໍ່ໄດ້ໃຫ້ໃສ່ໂທດຕາມວັດຖຸອັນນ້ອຍ ອັນຫລາຍເທີ້ນ ຜິແຂກແລກະ
ທຳບໍ່ຕິດ ໃຫ້ໄໝທໍ່ອັນຂອງເສັຍນັ້ນ ສູ່ຂວັນທັກເບັ້ຍເງິນ ເຫດຄຳ
ອາຍເກີງທ່ານ ຜິເຈົ້າເຮືອນຕູ່ໃຫ້ຫລົ່ງນ້ຳ ຈັກວ່າເສັຍວ່າອັນກໍໃຫ້
ຫລົ່ງແລ້ວແຕ່ງຕາມສັດຈະ ຜິມັນຜູ້ແຂກລັກແຫ້ໃຫ້ໄໝຕາມຄອງ
ເທີ້ນ.

ຜິເຊົ່າເຮືອທ່ານ ໄປຕ້ອນມາຮັບ ໃນບ້ານໃນເມືອງທ່ານ ຜິ
ຫາຄວາມກັນຮອດເຈົ້າຂຸນ ໃຫ້ເສັຍວັນສອງແວ່ນເບັ້ຍ ຍັງເສັຍເຮືອ
ທ່ານໃຫ້ແທນ ຕາມອັນໄດ້ຕ້ານກັນນັ້ນ ຜິເຮືອແຕກໃຫ້ຜູ້ເຊົ່າ
ແປງໃຫ້ດີ ເຈົ້າເຮືອບໍ່ເຂົ້າໃຈເອົາໃຫ້ຜູ້ເຊົ່າແທນ ຕາມຄຳອັນໄດ້
ຕ້ານແຕ່ເກົ່ານັ້ນ ເຮືອໃຫ້ໄວ້ແກ່ຜູ້ເຊົ່າເອົາ.

ແມ່ນປືນງົວ ຄວາຍ ກຽນຊ້າງມ້າເສື້ອຜ້າ ສິ່ງຂອງອັນໃດກໍດີ
ໃຫ້ແຕ່ງສັນດຽວນັ້ນ ສ່ວນດັ່ງຂອງອັນເຊົ່ານັ້ນ ຍັງກາຍດ້ວຍອັນ
ໃຫ້ຄ່າເຊົ່າແກ່ກັນ ຕາມອັນຕ້ານກັນນັ້ນ ພັ້ນດັ່ງຂອງອັນແຕກຫາກ
ຂາດກໍດີ ຈິບຫາຍເສັຍກໍດີ ກໍຫາຄ່າແທນຂອງທ່ານແລ.

ຂຶ້ນລ່ອງທ່ອງທຽວທາງ ຫາກຍັງແພພັດເຮືອທ່ານ ຫາກໄວ້ກັບ
ທ່າແຕກບິ່ນບ່ານຂາງເສັຍ ໃຫ້ແປງຂອງທ່ານໃຫ້ດີ ຜິແປງດີແລ້ວ
ເຈົ້າຂອງບໍ່ເອົາມອບເສັຍແກ່ຜູ້ເຮັດແຕກ ໃຫ້ເລັງດູອັນເກົ່າອັນໃໝ່
ງວດຄ່າອັນຊື້ອັນຂາຍນັ້ນ ເຫັນວ່າແຕກເສັຍແລ້ວ ຈຶ່ງຂຶ້ນຄ່າເຕັມ
ສິນເມື່ອຊື້ໃໝ່ນັ້ນບໍ່ແມ່ນຄອງໃຫ້ວັດຖຸນັ້ນເປັນປະມານ.

ປືນຄຳກີບໍ່ໄດ້ຮ່ານຄ່າ ຄຳເກົ້າເຈົ້າຂອງວ່າຄຳສິບ ໃຫ້ຫລົ່ງນ້ຳ
ເອົາ ຄັນຫລົ່ງໄດ້ໃຫ້ແທນຄ່າຕົ້ງສ້ຽງ.

ຜູ້ຜິດກັນ ສອງຫາກຢູ່ທີ່ຕົວ ກີ້ຄອນກໍດີ ອາວຸດກໍດີ ຂາບໍ່ອອກສູ່
ກັນ ອັນນັ້ນໃຫ້ເປັນໂທດຊູ່ກ້ຳ ຜິເຂົາເອີ້ນດ່າກັນເທົ່າໃດກໍດີ ພິຈາລະ
ນາດູ ອັນເຂົາດ່າກັນນັ້ນ ໃຫ້ການສາກສີຜູ້ຮູ້ ຜູ້ໃດຍັງຊວນກ່ອນໃຫ້
ແຕ່ງຂັນເອົາໃສ່ ຜູ້ຊາຍຮ້ອຍສອງບາດ ຜູ້ຍິງທັກສິບ ຕາມບຸດຕິເທີ້ນ.

ຜີຂ້ອຍລັກໄປຫາຢູ່ດອມ ເຂົາສິມມາລາໂທດກັນແລ້ວ ຈັກເອົາໄປສິ່ງກັນ ໃຫ້ສິ່ງເມື່ອວັນໃຫ້ແຈ້ງແກ່ຕາ ຜີຄໍ່າບໍ່ຮູ້ຈັກໜ້າຄົນຈຶ່ງເອົາໄປສິ່ງ ຜີຜູ້ເຈົ້າຮຽກເອົາດ້ວຍຄໍາວ່າ ມາດີແລ້ວໃຫ້ຢູ່ໜີ້ເທີ້ນວ່າ ດັ່ງນັ້ນກໍດີ ມັນກໍໄດ້ວຽກການເຈົ້າມັນ ວັນໜຶ່ງ ສອງວັນກໍດີ ສາມວັນກໍດີ ຜີມັນຫາກລັກໜີໄປຕາຍເສຍຫາກແລ້ວ ຜີຄອບສິ່ງເຈົ້າມັນໄປ່ທັນເຫັນໜ້າ ມັນລັກໜີກໍດີ ໄປຕາຍເສຍກໍດີ ໃຫ້ຜ່າກ່ອງຂ້ອຍຜູ້ນັ້ນ ໃຫ້ແກ່ເຈົ້າຂ້ອຍ ເຫດເຈົ້າມັນຫາກຮັບເອົາແລ້ວ ທີ່ບໍ່ເຫັນໜ້າຂ້ອຍຕົນ ຜີມັນມາຮອດແລ້ວ ເຈົ້າມັນກໍໄດ້ປາກຈາດອມໄດ້ໃຊ້ສອຍມັນໜີໄປຕາຍຢ່າວ່າສັງແກ່ຜູ້ສິ່ງ ຜີຜູ້ເຈົ້າມັນວ່າຄໍ່າມືດ ບໍ່ຮູ້ຈັກໜ້າຕາຄືນເມື່ອກ່ອນວ່າອັນ ຜູ້ສິ່ງດົນສິ່ງທ່ານ ມັນລັກໜີແລຕາຍໃຫ້ແທນຂ້ອຍທ່ານ ຜີສິ່ງເຮືອເມື່ອຄໍ່າ ເຈົ້າເຮືອໄປດູມ້ຽນດອມ ເຈົ້າເຮືອເຫັນຈຶ່ງມົ້ມ ຜີງົວຄວາຍໄປຄ້ອງໄປແຫລ່ງດອມກັນຈຶ່ງມົ້ມ ຜີບໍ່ໄປແຫລ່ງດອມ ບໍ່ເຫັນ ທັງທີ່ວ່າຄວາມປາກໄປ່ພົ້ນຜູ້ສິ່ງແລ.

ພີ່ນ້ອງມາຢາມ ເຈົ້າເຮືອນສູ່ເຫລົ້າກິນ ບໍ່ມີການຕົນຕັ້ງຮຽກທ່ານມາກິນກໍດີ ມັນເມົາໃຫ້ເຈົ້າເຮືອນສິ່ງຮອດທີ່ຢູ່ ຜີບໍ່ສິ່ງຫ້າມໃຫ້ຢູ່ນອນແຕ່ເຮືອນ ບໍ່ສິ່ງຮອດທີ່ຢູ່ ເມື່ອໂຈນຂ້າຕາຍກາງທາງໃຫ້ເຈົ້າເຮືອນແຕ່ງເງິນຮ້ອຍບາດ ໄປສິ່ງສະການ ຜີເຈົ້າເຮືອນຫ້າມແລ້ວມັນບໍ່ນອນ ໃຫ້ເຈົ້າເຮືອນເລົ່າໃຫ້ເຈົ້າບ້ານໄວ້ເປັນສັກຂີ ມັນໄປໂຈນຂ້າກໍດີ ງູຕອດເສືອກິນຕາຍກາງທາງກໍດີ ຢ່າວ່າສັງແກ່ເຈົ້າເຮືອນ ຜີເຈົ້າເຮືອນສິ່ງຜູ້ເມົາເກີ້ງເຮືອນເດີກ ຊວດລວດກາງທາງໃຫ້ເຈົ້າເຮືອນຜູ້ເມົາ ຫາມຜູ້ສິ່ງໄປນອນ ຜີບໍ່ນອນຄືນມາຍັງຕາຍກາງທາງດ້ວຍເຫດການອັນໃດກໍດີ ໃຫ້ເຮືອນຜູ້ເມົາແຕ່ງເງິນຮ້ອຍບາດໄປສິ່ງສະການຜູ້ເມືອສິ່ງ ຜີຫ້າມແລ້ວມີສາກສີກໍດີທ່ານຮູ້ ມັນບໍ່ຟັງດົນໜີເມືອຕາຍຫາກແລ້ວຢ່າວ່າສັງເທີ້ນ.

ເຈົ້າເຮືອນໄປຮຽກຫາມາກິນເຫລົ້າຢາ ແຂກເມົາເຈົ້າເຮືອນບໍ່

ໄປສິ່ງຍັງຕາຍກາງທາງດ້ວຍເຫດອັນໃດ ອັນໜຶ່ງກໍດີໃຫ້ເຈົ້າເຮືອນໃຊ້ໄຊດ ຜີສິ່ງເດີກພົ້ນພະລະການກໍດີ ຄ່ຳມືດຈວນໃຫ້ເຈົ້າເຮືອນຜູ້ເມົາຫ້າມໃຫ້ນອນ ຜີບໍ່ຫ້າມຄືນເມືອ ຍັງຕາຍກາງທາງດ້ວຍເຫດອັນໃດກໍດີ ໃຫ້ເຈົ້າເຮືອນຜູ້ເມົາໃຊ້ໄຊດໜຶ່ງ ຜີເຈົ້າເຮືອນຜູ້ເມົາຫ້າມຜູ້ສິ່ງບໍ່ຟັງ ທັງຫລາຍຮູ້ຄືນເມືອຕາຍດ້ວຍເຫດອັນໃດຢ່າວ່າສັງເທີ້ນ.

ພີ່ນ້ອງຕ່າງບ້ານມາຢາມ ເຈົ້າເຮືອນນັ້ນບໍ່ຫ່ອນກິນເຫລົ້າກິນຢາ ທໍ່ຫາກທຳໄວ້ແຮເຮືອນ ເອົາມາສູ່ແຂກກິນ ຄົນກ້ຳເຈົ້າເຮືອນບໍ່ກິນຈັກຄົນ ຜູ້ແຂກກິນເບືອເມົາຮ້າຍພ່ອງຕາຍ ຟ່ອງໃຫ້ເຈົ້າເຮືອນຮູ້ອານັດຈັດຕືນ ໃຫ້ກິນເຫລົ້າກິນຢາດາຍ ຜີດເຈົ້າເຮືອນບໍ່ອາໄພກດອນຢ່າໃຫ້ເປັນໂທດ ເຫດທ່ານບໍ່ອາໄພກດ້ວຍເຫລົ້າຢາແລ ທໍ່ໃຫ້ພິຈາລະນາດູ ຜູ້ຢູ່ເຮືອນ ຜູ້ພາລະນັ້ນດູເທີ້ນ ຜີເຈົ້າເຮືອນກໍກິນຊູ່ຄົນ ເມື່ອກິນເຈົ້າເຮືອນກິນກ່ອນ ເຈົ້າເຮືອນບໍ່ຕາຍ ຜູ້ແຂກຫາກຕາຍ ອັນນັ້ນກໍຫາກກຳແຂກ ໃຫ້ເຈົ້າເຮືອນສິ່ງສະການເຜົາເສຍ ບໍ່ໃຫ້ໄໝຜີເຈົ້າເຮືອນບໍ່ກິນກ່ອນ ຊີມກ່ອນ ຜູ້ແຂກກິນຕາຍໃຫ້ໃຊ້ໄຊດໜຶ່ງ ຜີແຕ່ເບືອ ໃຫ້ເຈົ້າເຮືອນປົວໃຫ້ຫາຍ ສູ່ຂວັນໃຫ້ໃສ່ຂັນແປງໜຶ່ງ.

ຜີເຈົ້າເຮືອນຕັ້ງຮຽກທ່ານ ເມື່ອກິນເຫລົ້າໃນເຮືອນຕົນ ບໍ່ຊີມກ່ອນ ແຂກກິນຕາຍໃຫ້ໃຊ້ສອງໄຊດ ຂັນຄ່າຄໍໜຶ່ງ ຜີແຕ່ເບືອ ບໍ່ຕາຍໃຫ້ສູ່ຂວັນຫົກເບ້ຍເງິນ ໄໝສອງຮ້ອຍເງິນ ຜີເຈົ້າເຮືອນກິນກ່ອນແລ້ວບໍ່ເບືອ ແຂກກິນຫາກຍັງເບືອເມົາ ໃສ່ຂັນແປງໜຶ່ງສູ່ຂວັນຫົກບາດ ຜີຫາກເຫລົ້າເຮືອນອື່ນມາສູ່ກິນ ໃຫ້ໃສ່ໂທດຜູ້ເຈົ້າເຫລົ້ານັ້ນເທີ້ນ.

ຜູ້ຂົດຫ່າວໄວ້ກາງວັນ ປັກຂວາກຫລາວໄວ້ກາງວັນກໍດີ ຍັງກືກທ່ານຕາຍ ໃຫ້ແທນຄົນຜູ້ຕາຍໄຊດໜຶ່ງ ຜີຈັບໃຫ້ສູ່ຂວັນຫົກເບ້ຍເງິນ.

ຜີກາງຄືນກີກຄົນກໍດີ ສັດຕົວຂອງລ້ຽງຂອງດູຕາຍກໍດີ ຢ່າວ່າສັງແກ່ເຈົ້າທ່າວເຈົ້າຂວາກເທີ້ນ ເຫດກາງຄືນນີ້ ກິດຈະດ້ວຍສິ່ງໄສຫລາຍແລ.

ຜີໄຮ່ນາຮົ້ວສວນທ່ານ ປູກພິຊະທ່ານລ້ອມໄວ້ ທັບປະຕູຄາດຮິງໄວ້ກໍດີ ອັນໜຶ່ງສິ່ງຂອງທ່ານ ກີສະເໜີດັ່ງກາງຄືນແລ ໃຫ້ຍຸຕິດູເທີ້ນ.

ຂໍລູກທ່ານມາລ້ຽງ ເປັນລູກຕົນໃຫຍ່ພາຍລຸນ ຜູ້ພໍ່ຂໍມັນບໍ່ແກວ່ນຢ່າວ່າສັງ ຂອງກຳນົດໃຫ້ເອົາ ຢາກໄດ້ຈຶ່ງຕ້ານຈາຣະຈາເສັງເອົາດອມພໍ່ແມ່ເທີ້ນ.

ຂໍລູກທ່ານມາເປັນລູກຕົນ ຜີບໍ່ແກວ່ນໜີເມືອຫາພໍ່ແມ່ເກົ່າກໍດີ ພິຊະເຜົ່າພົງວົງສາ ເຊືອແນວແກວເລືອດມັນກໍດີ ໃຫ້ປົ່ງຄ່າມັນໃຫ້ຜ່າຄ່າມັນ ອັນພໍ່ແມ່ຄິງລ້ຽງມັນນັ້ນໄດ້ຈັກປີ ພໍ່ແມ່ຂໍລ້ຽງໄດ້ຈັກປີໃຫ້ບຸນຫາກັນ ຜີຂໍຂາດລ້ຽງແຕ່ນ້ອຍແທ້ ຜີຄືນເມືອຫາມູນມັນໃຫ້ເອົາຄ່າມັນເຕັມກີບ ຜີຂໍເມືອໃຫຍ່ ໃຫ້ຜ່າກ່ອງຄ່າມັນໃຫ້ພໍ່ແມ່ຂໍ ຜີມັນໄປທີ່ອື່ນ ພໍ່ແມ່ຂໍມັນວ່າໃຫ້ໄປຈຶ່ງໄດ້ ບໍ່ໃຫ້ໄປບໍ່ໄດ້ແລ.

ຜູ້ໜຶ່ງຂາຍຂອຍມັນກິນກໍດີ ຂາຍລູກເມຍມັນກິນກໍດີ ພາຍລຸນມັນຢາກຄືນມາຫາພໍ່ແມ່ພີ່ນ້ອງມັນ ຄ່າທີ່ໃດໃຫ້ແກ່ທ່ານ ຜີໄປທີ່ບໍ່ໃຊ່ໝູ່ຊຸມມັນ ຜູ້ເຈົ້າບໍ່ຂາຍຫາກແລ້ວ.

ຜູ້ໃດຫາກິນບໍ່ໄດ້ຂາຍຂ້ອຍຕົນກໍດີ ລູກກໍດີກີນ ຜີມີປະຕິຍານໃຫ້ເອົາປະຕິຍານ ໃຫ້ເຂົາໃຫ້ຄ່າທີ່ເກົ່າ ຢ່າໃຫ້ຂຶ້ນຄ່າລືນເກົ່າເທີ້ນ.

ຜູ້ໃຫ້ລູກຍິງລູກຊາຍໄປເປັນລູກທ່ານຂາດ ພາຍໜ້າແລພໍ່ແມ່ຄິງຕາຍ ບໍ່ຄວນຕ່າວມາກິນຄົວເຮືອນ ພໍແມ່ຄິງໄດ້ແລ ທີ່ຄວນກິນດ້ວຍຜ່າສິບສ່ວນ ກິນສ່ວນໜຶ່ງ ຜີພໍ່ແມ່ຄິງຮັກຫາກໃຫ້ເມືອຍັງມີຊີວິດຫາກແລ້ວ.

ລູກຜູ້ທ່ານຂໍນັ້ນຮັກພໍ່ແມ່ຄິງທຽວມາຢາມ ຢູ່ດອມຍັງຕາຍດ້ວຍພະຍາດອັນໃດກໍດີ ຢ່າວ່າສັງທ້ອນ ລູກເຕົ້າໃຜທ່ອນໃຫ້ຕາຍ.

ລູກຍິງອັນຕ້ານທາຂາດແລ້ວກໍດີ ພາຍລຸນ ບໍ່ໃຫ້ໄປສູ່ທ່ານກໍດີ ສອງຈຳພວກນີ້ ຄວນກິນຄົວເຮືອນພໍ່ແມ່ດີງຕົນໄດ້ແລ ທີ່ໃຫ້ກິນດ້ວຍອັນຂາວເທີ້ນ.

ຊາຍຜູ້ໄປສູ່ທ່ານຂາດກໍດີ ຍິງຜູ້ໄປສູ່ທ່ານຂາດກໍດີ ຂາເປັນຜົວຂາເປັນເມຍກັນແລ້ວ ຂອງອັນຂາພໍ່ແມ່ດີງໃຫ້ລຸນ ອັນເຂົາເອົາກັນເປັນຜົວເມຍນັ້ນ ວ່າເປັນຂອງຂາຜົວເມຍທັງສອງ ຜິຜົວຕາຍໄດ້ແກ່ເມຍ ເມຍຕາຍໄດ້ແກ່ຜົວ ພໍ່ແມ່ບໍ່ຄວນເອົາໄດ້ແລ ຜິບຍອມກັນໃຫ້ຜ່າສາມສ່ວນ ໄວ້ແກ່ຜູ້ເປັນຜົວຍັງກໍດີ ເມຍຍັງກໍດີ ໄວ້ໃຫ້ພໍ່ແມ່ຜູ້ຕາຍສ່ວນໜຶ່ງ ເຫດວ່າຜູ້ມາສູ່ຕາຍຍັງຈັກເອົາຂອງທ່ານເຫັນລູກຍິງນາງສາວຕົນຕາຍ ຈັກເອົາຄືນບໍ່ແມ່ນແລ.

ຜູ້ຈັກຕາຍສັ່ງວ່າ ໃຫ້ໄວ້ຄົວເຮືອນແກ່ລ້ອຍກໍດີ ຫລານກໍດີ ຢ່າມ້າງຄຳຜູ້ຕາຍສັ່ງເທີ້ນ ແມ່ນວ່າໃຫ້ໄວ້ກັບວັດວາອາຣາມທີ່ໃດກໍດີກໍໃຫ້ນຳໄປໄວ້ທີ່ນັ້ນ ແມ່ນຮັກລູກຍິງຊາຍມັນສັ່ງໄວ້ທີ່ໃດ ຈິ່ງໃຫ້ຕາມຄຳຜູ້ຕາຍສັ່ງນັ້ນ ຜີບໍ່ສັ່ງຜົວຕາຍເປັນຂອງເມຍ ເມຍຕາຍເປັນຂອງຜົວແລ ຄຳຂອງຜູ້ຕາຍຫາກໄດ້ແຈກແກ່ຜູ້ໃດ ຜູ້ໜຶ່ງກໍແລ້ວຢ່າມ້າງເທີ້ນ ມັນຫາກໃຫ້ແກ່ຜູ້ອື່ນ ອັນເປັນຄຸນແກ່ມັນ ກໍໃຫ້ຕາມຄຳມັນຜູ້ຕາຍສັ່ງເທີ້ນ ຜິຜົວຕາຍກ່ອນຍັງມີເຂົ້າຂອງຄົນເທົ່າໃດ ມັນສັ່ງໄວ້ແກ່ລູກຫລານມັນ ບໍ່ສັ່ງໄວ້ແກ່ເມຍມັນກ່ອນກໍດີ ເມຍຕາຍກ່ອນທໍ່ມາສັ່ງໄວ້ແກ່ລູກຫລານທັງມວນ ຜົວມັນບໍ່ໄວ້ແກ່ເມຍບໍ່ຊອບແລ ບໍ່ໃຊ່ແຕ່ມັນສ້າງເຮືອນດ້ວຍອັນຊື້ຂາຍນັ້ນ ມີມາກນ້ອຍທີ່ໃດໃຫ້ແກ່ເຈົ້າເຮືອນເທີ້ນ ໄດ້ສອງສ່ວນໃຫ້ແກ່ຜູ້ໄປສູ່ສ່ວນໜຶ່ງ ຜິທຶນເມຍບໍ່ມີ ຜົວມີທຶນກໍດີ ເມຍມີ ຜົວບໍ່ມີກໍດີ ທຶນມີທີ່ໃດໃຫ້ຍົກອອກໄວ້ທີ່ນັ້ນ ໃຫ້ເຈົ້າທຶນກ່ອນ ຍັງໄດ້ດ້ວຍອັນຊື້ຂາຍຍ້ອນທຶນນັ້ນ ໃຫ້ຜ່າໄວ້ແກ່ຜູ້ເຈົ້າທຶນສອງສ່ວນ ໄວ້ແກ່ຜູ້ໄປສູ່ສ່ວນໜຶ່ງ ຜິທຶນແຕ່ຜູ້ຜົວມີ ທຶນເມຍບໍ່ມີ ໃຫ້ຜ່າກ່ອງໃຫ້ຂາຊູ່ກໍ້າ ຍັງມີລູກຍິງຊາຍໄວ້ແກ່ເຈົ້າເຮືອນສອງສ່ວນ ຜູ້ສູ່ສ່ວນໜຶ່ງ.

ຜິຂາພ້ອມກັນກູ້ທ່ານມາເຮັດທຶນ ກຸດເບີບເສຍຫາຍກໍດີ ກູ້ມາສູ່ກັນກິນກໍດີ ໃຫ້ຜູ້ເຈົ້າທີ່ແທນສອງສ່ວນ ຜູ້ມາສູ່ແທນສ່ວນໜຶ່ງ.

ຜິເມຍຫາກໄດ້ກູ້ທ່ານ ຜົວບໍ່ຮູ້ໃຫ້ໄວ້ແກ່ເມຍສອງສ່ວນ ໄວ້ແກ່ຜົວສ່ວນໜຶ່ງ ຜີຜົວຫາກກູ້ທ່ານເມຍບໍ່ຮູ້ເມື່ອ ໃຫ້ໄວ້ຜົວແທນສອງສ່ວນ ໃຫ້ເມຍແທນສ່ວນໜຶ່ງ ຜົວໄປກູ້ມາເຮັດທຶນຄ້າຂາຍ ຍັງເຫລືອທີ່ໃດໃຫ້ປັນແກ່ຜົວສອງສ່ວນ ເມຍສ່ວນໜຶ່ງ ຜິຂາພ້ອມກັນໄປກູ້ມາເຮັດທຶນຄ້າຂາຍໄດ້ແລ້ວ ຂາແທນສ້ຽງແລ້ວ ຍັງໄດ້ນ້ອຍມາກທີ່ໃດຂາເອົາເປັນທຶນ ຂາຫາກເອົາກຳລັງຂາເປັນທຶນໄດ້ທີ່ໃດກໍດີ ປັນຄົນກຸ່ອງເທິ້ນ.

ຜົວເມຍຮ້າງກັນບໍ່ມີເຖົ້າແກ່ຮູ້ໄປ່ຂາດ ແມ່ນຂາຍຽດແກ່ກັນ ຜູ້ຊາຍຫາກຊິເອົາເຜີ້ງທຽມກໍດີ ບໍ່ມີຜູ້ເຖົ້າຜູ້ແກ່ຮູ້ກໍໄປ່ຂາດຄຳຜົວຄຳເມຍແລ ເອົາກັນກໍໜັກ ປະກັນກໍຫນັກດາຍ ຜິຂາຍຽດແກ່ກັນກະທຳບໍ່ແມ່ນໃຈຜົວປະກັນເສຍມີຜູ້ຮູ້ຈຶ່ງຂາດ ຜິຂາປະກັນເສຍແລຍັງຢູ່ເຮືອນດຽວກັນ ຂົບກິນກໍອັນດຽວກັນບໍ່ຂາດ ຜິຂາປະກັນແລ້ວຂົບກິນກໍຕ່າງກັນ ຂັ້ນກາງເຮືອນດຽວບໍ່ຊອດກັນ ສຽງປາກໄດ້ຍິນກັນ ຊາຍຜູ້ໃດມາສູ່ມາເປັນຍິງຜູ້ນັ້ນ ໃຫ້ເປັນດັ່ງ ປິຕຸມາຕຸຮັກຂິຕານັ້ນ ຢ່າໄດ້ໃສ່ຂັນມິດສາຈານ ຜິຂາຈັກເອົາກັນໃຫ້ໂອມດອມຜົວ.

ຜູ້ຍິງມັກຜູ້ຊາຍໄປສູ່ຢູ່ດອມກໍດີ ຜູ້ຊາຍມັກຜູ້ຍິງໄປສູ່ຢູ່ດອມກັນກໍດີ ຫາຜູ້ເປັນໃຫຍ່ບໍ່ໄດ້ ຂາສ້າງເຮືອນດອມກັນບໍ່ລອດ ຜູ້ຊາຍບໍ່ມັກຜູ້ຍິງຫາກແລ້ວ ຜິຂາປະກັນແລຈັກປັນສິ່ງຂອງກັນ ມູນຜູ້ຍິງໃຫ້ໄວ້ຜູ້ຍິງມູນຜູ້ຊາຍໃຫ້ໄວ້ຜູ້ຊາຍ ຂອງຂາສ້າງໄດ້ດອມກັນເອົາທຶນເປັນປະໝານ ຜິຂາເຮັດໄດ້ດ້ວຍກຳລັງຊູ່ຄົນ ໃຫ້ປັນກັນຄົນສ່ວນ ຜິຕາຍເສຍຈາກກັນ ພີ່ນ້ອງກ້ຳຜູ້ຕາຍໄຈດເອົາມູນເຮືອນ ຜິແຕ່ມູນຫລັງໃຫ້ໄວ້ແກ່ມູນຫລັງ ຂອງຂາທີ່ສ້າງໄດ້ດອມກັນໃຫ້ໄວ້ແກ່ຜູ້ຍັງ ຄັນຍາມເມື່ອຂາຊູ່ຢູ່ດອມກັນນັ້ນ ຫາຜູ້ບອກກັນບໍ່ໄດ້ ຜິສອງຊູ່ມາຢູ່ດອມກັນກັບພໍ່ແມ່ບໍ່ວ່າສັງ ຜິຜູ້ຍິງຕາຍ ຜູ້ຊູ່ບໍ່ໄດ້ຄົວເຮືອນ ຜູ້ຊາຍຕາຍ

ຜູ້ຍິງກິນມູນຜູ້ຊາຍແຕ່ມູນຫລັງພາມານັ້ນກໍໄດ້ ເຄົ້າມູນເຂົ້າຂອງກ້ຳຜູ້ຕາຍໃຈດເອົາຄືນສ້ຽງແລ ເວັ້ນໄວ້ແຕ່ຂາຮັກກັນ ຫາກຈ່າຍສູ່ກັນກິນສ້ຽງທີ່ໃດຄວາມໃຫ້ແລ້ວເທີ້ນ.

ຂອງແຕ່ມູນຫລັງຜົວມາຊື້ກູ້ສູ່ເມຍກິນກໍດີ ສ້ຽງທີ່ໃດກໍຄຳແລ້ວ ຂອງມູນເມຍຊື້ສູ່ກິນສ້ຽງທີ່ໃດຄຳແລ້ວເທີ້ນ.

ສອງຜູ້ກໍດີ ມິດສະຫາຍກັນກໍດີ ຮັກກັນຫາກໃຫ້ເຂົ້າຂອງເງິນຄຳເສື້ອຜ້າແກ້ວແຫວນແກ່ກັນ ດ້ວຍສັດທາຄຳແລ້ວ ຢ່າວ່າສັງພາຍລຸນເອົາຄືນບໍ່ໄດ້ແລ.

ບ້ານເມືອງເປັນໂຈນໄພຍໄພອົນຕາຍ ມິດສະຫາຍພີ່ນ້ອງກັນໄປຝາກເຂົ້າຂອງໄວ້ດອມ ດ້ວຍຄຳວ່າໃຫ້ມີ້ມອົນຕາຍກ່ອນ ຈຶ່ງເອົາວ່າດັ່ງນັ້ນໃຫ້ຕາມປະຕິຍານ ຜູ້ໃດສວນເອົາຂອງທ່ານ ຜີສ່ວນຕົກໃຫ້ໄໝສອງທີ່ໃສ່ຂັນແປງໜຶ່ງ.

ຜູ້ໜຶ່ງສວນເອົາຂ້ອຍທ່ານໄດ້ມາຂາຍກິນກໍດີ ຜູ້ເຈົ້າຂ້ອຍຮູ້ວ່າສວນເອົາ ຜີຜູ້ສວນໄດ້ເລົ່າຊື້ໃຫ້ຕາມກົນຄຸນສ່ວນໜຶ່ງ ຜີຍັງຂັດແຂວງສວນເອົາຂ້ອຍທ່ານ ສວນຕົກແມ່ນຂ້ອຍທ່ານໃຫ້ຄືນຕົວສ້ຽງໃສ່ຂັນຄ່າຄໍໜຶ່ງ ຜີບໍ່ໃຊ້ຂ້ອຍຕົວມາສວນໃສ່ຂັນໄໝໜຶ່ງ.

ຜູ້ໃດເອົາຂ້ອຍທ່ານມາຂາຍກິນ ສວນຕົກວ່າເປັນຂ້ອຍທ່ານແທ້ໃຊ້ສອງຄົນໃສ່ຂັນຄ່າຄໍໜຶ່ງ ຜີຜູ້ຂາຍນັ້ນລຸຄະໂທດເຮົ່ງຢ່າວ່າສັງ ຜີບໍ່ລຸຄະໂທດໃຫ້ໄລ່ເອົາ ຜູ້ຊາຍນີ້ສ້ຽງຜູ້ຍິງນີ້ຊຶກ ຍັງໄດ້ຂ້ອຍຄືນຈັກໄລ່ເອົາຄ່າແຮງ ຜີບໍ່ໄດ້ເອົາຂ້ອຍຄືນກັນ ໃຫ້ແທນສອງຄົນ ຂັນຄ່າຄໍຫາກແລ້ວທີ່ນັ້ນແລ.

ຜູ້ໄກ່ພາຍໜ້າຢ່າວ່າສັງທ້ອນ ເຫດທ່ານກິນແຮງດ້ວຍວັດຖຸທ່ານໄກ່ດາຍ ຜູ້ໄກ່ຮູ້ວ່າມັນເປັນຂ້ອຍທ່ານຜູ້ອື່ນ ບໍ່ໃຊ້ຂ້ອຍທ່ານຜູ້ຂາຍດົນໄກ່ ໃຫ້ເອົາຂັນໄໝໜຶ່ງສະໜີ ດັ່ງສິນຄົບດອມກັນຄ່າແຮງໃຫ້ຜູ້ຂາຍເສຍ.

ມີຜູ້ໜຶ່ງເລົ່າໂລມເອົາຂ້ອຍທ່ານມາໃຊ້ສິນທ່ານ ໃຫ້ໃສ່ໂທດແກ່

ທ່ານຜູ້ເອົາລໍ້ຄວາງຂັນຄ່າຄໍໜຶ່ງ ຄ່າແຮງໄລ່ເອົາດອມມັນ ຜູ້ເອົາມາລໍ້ຄວາງຜູ້ເຈົ້າເງິນບໍ່ຮູ້ວ່າເອົາຂ້ອຍທ່ານລໍ້ຄວາງຢ່າວ່າສັງເທີ້ນ.

ຜູ້ຫນຶ່ງວ່າຈັກຂາຍຂ້ອຍແທ້ ຈັກມາໂອມຈັກໄຖ່ ຂາບໍ່ທັນໄຖ່ຜູ້ນັ້ນລັກໜີຫາກແລ້ວ ຢ່າວ່າສັງແກ່ຜູ້ຖາມໄຖ່ຂ້ອຍທ່ານເທີ້ນ.

ໄພ່ໄທ ຜີທ່ານບໍ່ໄດ້ວ່າຈັກຂາຍຂ້ອຍທ່ານ ຫາກໄປຖາມເອົາຂ້ອຍທ່ານຜູ້ນັ້ນລັກໜີ ໃຫ້ຫາຂ້ອຍທ່ານໃຫ້ໄດ້ ຜີບໍ່ໄດ້ຂ້ອຍທ່ານໃຫ້ມັນແທນຂ້ອຍທ່ານ ຕາມຄ່າຂ້ອຍ ຜີຫາກຍັງກາຍສິບວັນກໍດີ ສິບຫ້າວັນກໍດີ ມັນຜູ້ຂ້ອຍຈັກລັກໜີ ຢ່າວ່າສັງແກ່ຜູ້ຖາມໄຖ່ຂ້ອຍທ່ານເທີ້ນ.

ໄພ່ໄທບ່າວແພວ ຂຸນກວານໃຫ້ເອົາມ້າໄປລ້ຽງ ແຄ່ງຂາມ້າຫັກກໍດີ ຄ່າມີທີ່ໃດໃຫ້ເຂົາແທນທີ່ນັ້ນ ມ້າຕົວນັ້ນໃຫ້ແກ່ເຂົາ ຊາງກໍດີມ້າກໍດີ ໃຫ້ເຂົາລ້ຽງ ຜີປ່ອຍເສຍໃຫ້ເຂົາໄຖ່ແທນເທີ້ນ.

ໄພ່ບ່າວແພວຄົນສິນກໍດີ ເອົາສິ່ງຂອງຂຸນກວານມີຕົ້ນວ່າ ກົງໝາກກໍດີ ຫາກເສຍກັບມືເຂົາໃຫ້ເຂົາແທນຕົງສ້ຽງ ເຂົາເອົາຊາງມ້າໄປຕົກນ້ຳທ່າ ເຂົາຮັກສາບໍ່ດີແຄ່ງຂາມ້າຫັກ ຕາບອດແອວຫັກເສຍຄ່າມ້າເທົ່າໃດ ໃຫ້ເຂົາໃຊ້ຄ່າຕາມອັນໄດ້ຊື້ນັ້ນ ມ້າຕົວນັ້ນໃຫ້ມອບແກ່ເຂົາ ຊ້າງກໍດີຜີປ່ອຍຫລູດມືເສຍ ທ່ານໃຫ້ເຂົາໄຖ່ເອົາມາໃຫ້ ຜີເຂົາບໍ່ມີເງິນ ໃຫ້ບໍ່ຈຸບນັ້ນ ຂຸນກວານໄດ້ເອົາເງິນຄຳໄປໄຖ່ທີ່ໃດ ໃຫ້ເຂົາແທນທີ່ນັ້ນແລ.

ຜີໄປທາງນ້ຳກໍດີ ຜີກວານກີຂອງຫລວງມີຕົ້ນວ່າ ເງິນ ຄຳກວານ ບໍ່ເລົ່າບ່າວໃຫ້ຊ່ອຍກັນຮັກສາແທ້ ໂຈນຄຸບເລວກໍດີ ໄປທາງເຮືອຫລົ້ມກໍດີ ຢ່າໃຫ້ບ່າວແລໄພ່ແທນ ເຫດກວານອຳບໍ່ບອກໃຫ້ຮູ້ແລບໍ່ປັນໃຫ້ກີ ໃຫ້ກວານແທນ.

ຂອງຫລວງມີຕົ້ນວ່າ ຂີງທຽມພິກພາຍອັນໜັກໃສ່ເຮືອກໍດີ ແພກໍດີຫາກຫລົ້ມ ຜູ້ບ່າວໄປກີຂຶ້ນກໍດີ ລ່ອງກໍດີ ຜີປະຫມາດບໍ່ໃສ່ໃຈກີເຮືອແພ ພັດຫລົ້ມເສຍໃຫ້ເຂົາແທນຂອງຫລວງ ທັງຂອງກວານ

ສອງສ່ວນໃຫ້ຜ່າເສຍໄປ ບາບມະຄາະສ່ວນໜຶ່ງ ຜິເຂົາກໍໃສ່ໃຈແທ້ແລຫາກສຸດວິໄສ ຫລີກບໍ່ໄດ້ແທ້ ແມ່ນຂອງຫລວງກໍດີ ຂອງກວານກໍດີ ບໍ່ເພິງໃຫ້ເຂົາແທນແລ ເຫດຝູງນັ້ນເປັນໂຈນນ້ຳດາຍ ແມ່ນໂຈນບົກກໍດີ ໄປຄວ່າບ່າວແພວຫາຍຂອງຫລວງໂຈນໂຄບເລວ ເສຍດ້ວຍສຸດກຳລັງກໍດີ ບໍ່ເພິງໃຫ້ເຂົາແທນແລ.

ຂອງອັນເຮືອຫລົ້ມເສຍ ໃຜໄດ້ຊອຍກູ້ກາຍອຍເອົາໄດ້ ຜິເຈົ້າຂອງຍັງຊອຍພາຣະເອົາຫັ້ນໄດ້ ໃຫ້ແກ່ເຈົ້າຂອງສອງສ່ວນ ໃຫ້ແກ່ຜູ້ເອົາໄດ້ສ່ວນໜຶ່ງ ຜິເຈົ້າຂອງປັກໄມ້ໄຄວ່ຕາແຫລວຫ້ອຍໄວ້ ຊຽນໜັງສືປ້ານໄມ້ໄວ້ເປັນສຳຄັນດ້ວຍສາໄລ ຜູ້ໃດເອົາໄດ້ໃຫ້ເລົ່າເຈົ້າຂອງກິນຄຸນກ່ອງໜຶ່ງ ຜິບໍ່ຫມາຍໄວ້ ທ່ານຮູ້ວ່າເຮືອຫລົ້ມເສຍ ທ່ານດຳຫາຂອງຍັງໄດ້ອັນໃດ ກໍຫາກແລ້ວ ບໍ່ຄວນທີ່ເຈົ້າຂອງວ່າຂອງກູແລ ຊາຕິຂອງອັນນັ້ນ ເສຍດ້ວຍເຮືອແພຫລົ້ມຈົມເສຍຊື່ວ່າ ອຸທະກະໂຈນແລ ບໍ່ກູ້ກຂອງອັນຕົນມຽນໄວ້ດາຍ ແມ່ນເຈົ້າຂອງມາຫາເອົາຕົວຈັກໄດ້ຫລືບໍ່ໄດ້ບໍ່ຮູ້ ກໍສິງກາດາຍ ຜິເຈົ້າຂອງປັກໄມ້ໄຄວ່ຕາແຫຼວຫ້ອຍໄວ້ ຜູ້ໃດຫາກຍັງໄດ້ ອັນໃດກໍດີ ເຈົ້າຂອງເຫັນຈັກເອົາໃຫ້ຜ່າກ່ອງເອົາ ຜິຜູ້ໃດມາໂລບ ບໍ່ເລົ່າຊື່ວ່າໄດ້ດ້ວຍທ່ານມາຂາຍ ຜິເຈົ້າຂອງສວນຕົກໃຫ້ຜ່າສາມສ່ວນ ໃຫ້ແກ່ເຈົ້າຂອງວັດກຸສອງສ່ວນ ຜູ້ໄດ້ສ່ວນໜຶ່ງ ແຂງວ່າມັນເລົ່າຊື່ແທ້ ມັນຈັກໄດ້ກິນກ່ອງໜຶ່ງແລ ອັນນີ້ວ່າມັນປັກໄມ້ໄຄວ່ຕາແຫລວໄວ້ດາຍ ອັນບໍ່ໝາຍຜູ້ໃດໄດ້ຫາກແລ້ວແລ.

ອາດຍາໃຫ້ບອກວຽກເກືອງສາມທີບໍ່ໄປໃຫ້ຜູກໄປຮອດໃຫ້ແກ້ເຮັດວຽກ ຢ່າບາປໄຫມເອົາເງິນຄຳເທື້ນ ຄັນເຈົ້າວຽກຈຽກກາຍຢານບໍ່ທັນວຽກ ຈ້າງຜູ້ອື່ນໃສ່ແລ້ວ ຈຶ່ງໄປຜູກເອົາມັນຜູ້ຂັດວຽກນັ້ນມາປ່ຽນຄ່າຈ້າງຈຶ່ງໃຫ້ມັນຜູ້ບໍ່ມາເຮັດວຽກນັ້ນເສຍ ຕາມກວານວຽກຕັດໄວ້ແລວັນໃຫ້ມີເງິນທໍ່ນັ້ນ ແມ່ນຂຸນກວານຫາກໄດ້ໃຫ້ຄົນເຮັດຕາງ ກໍໃຫ້ຄ່າຣາມວຽກດອມຜູ້ຣາມວຽກ ຜິອາດຍາຍັງກະທຳຮ້າຍແກ່ເຈົ້າ

ວງແລຈງກກາຍ ຄືວ່າຜູກຕີໃຫ້ມັນສູ່ຂວັນຫົກສິບ ຜີໄດ້ຜູກດ້ວຍເຊືອກດ້ວຍປີ ໃຫ້ສູ່ຂວັນຫົກເບັ້ຍເວີນ.

ຜູ້ໜຶ່ງເຮັດວງກກໍຍັງບໍ່ຂັດບໍ່ຮາມ ເຈົ້າວງກແລຈງກກາຍ ບໍ່ພິຈາລະນາໃຫ້ກຸຄອນຜູກຕີລູກວງກ ເລືອດບໍ່ຕົກປາງບໍ່ອອກໃຫ້ສູ່ຂວັນຫົກເບັ້ຍເວີນ ຂັນແປງໜຶ່ງ ຜີຕີພໍເລືອດຕົກປາງອອກ ຜູກດ້ວຍເຊືອກປີໃຫ້ສູ່ຂວັນຫົກເບັ້ຍເວີນ ຂັນໄໝໜຶ່ງ ເຫດທ່ານບໍ່ຜິດຜູກທ່ານແລ.

ລູກເສິກລູກວງກຜູ້ໃດ ອາດຍາບອກໄປເອົາຮາຊການເສິກ ທີ່ໃດກໍດີ ຄັນເຈົ້າໜວດໄປລູກເສິກໄປໃຫ້ທັນ ລູກເສິກຜູ້ໃດບໍ່ຍ້າຍພ້ອມກວານບໍ່ມາພ້ອມກວານ ເຈົ້າເສິກຈັກເສຍໜ້າ ເຫດຫົວເຮືອອວ່າຍທ້າຍເຮືອຈອດບໍ່ຈອດ.

ເຈົ້າເສິກຍັງເລວ ລູກເສິກໜີຈາກເຈົ້າເສິກ ພະຍາເຈົ້າຈັກຂ້າເອົາໃສ່ສິນຈ້າງຫານ ຜີລູກເສິກຮົບຊວດເລວຊວດ ເຈົ້າເສິກຈັກລົງຕັ້ງທັບເອົາລີ້ພະລັນກໍດີ ຍ້າຍໄປທັບໜຶ່ງສອງກໍດີ ລູກເສິກບໍ່ຍ້າຍທັບດ້ວຍ ອັນເປັນຜູ້ຫລີ້ນຜູ້ກິນ ຕາມຕີນພະຍາເຈົ້າ ແລຍັງແຕ່ງຜູ້ຕາງໜ້າຕາງໃຈໄປຕັ້ງເຮືອຢູ່ດອນ ຢ່າຟາວວ່າສັງແກ່ຜູ້ລູກເສິກອັນເປັນຜູ້ຫລີ້ນຜູ້ກິນດອນພະຍາເຈົ້ານັ້ນເທີ້ນ.

ຄັນເກີງເມືອງ ຂ້າເສິກຍັງຮົບເລວກັນໄປ່ແພ້ກ້ຳໃດ ຍັງມີຄົວເຂົາເຂົ້າມາສູ່ສິມພານ ຢ່າໃຫ້ຜູ້ໃດຫຍຸບຍາດເອົາ ເປັນຂ້ອຍຄົນໃຜຜູ້ເຈົ້າຊຸມເຂົ້າສູ່ສິມພານ ແຕ່ເມືອຍັງໄປ່ແພ້ກັນ ຜີຍັງແພ້ໄດ້ຂ້າເສິກອັນເປັນຄອບຄົວລູກເມຍມັນ ໃຫ້ຈັດໃຫ້ແກ່ມັນ ບໍຣະນາຄຸນເຂົາຜູ້ໄດ້ຫົວຄີງຄົນຜູ້ຊາຍຫ້າສິບ ຜູ້ຍິງສາມສິບຕາມຜູ້ນ້ອຍຜູ້ໃຫຍ່ ເຫດອາສາກໍເອົາຊີວິດແລກດາຍ.

ຫລາຍຄົນໂຮມກັນໄດ້ຊ້າງມ້າ ຂ້າຄົນກາງເສິກ ຜູ້ໃດຂີ່ຄໍຊ້າງກໍໄດ້ແກ່ມັນ ຜູ້ໃດຂີ່ຫລັງມ້າຊັກແຄ່ມກໍເປັນຂອງມັນ ຜູ້ໃດຜູກແຂວຄົນໄດ້ກໍເປັນຂອງມັນ ຜີເຂົາໄດ້ຜູກພ້ອມກັນ ຜູກແຂວແຄວນໜັກຜູກແຂນຢ່ານັບ ຄັນຍ້າຍໜີມາຫາທັບຮາວຄາວຈອດນອນ ຜູ້ໃດ

ຍັງຈັບຍັງຍາດເອົາເຊີຍທ່ານມີໂທດ ຜິຫຼູດຈາກມືໃຫ້ແທນກ່ອງໜຶ່ງ ງິວຄວາຍຜູ້ໃດໄດ້ກໍເຄົາເອົາເຊືອກ ໃຫ້ໄດ້ແກ່ຜູ້ນັ້ນ ຜີຊາງມ້າງົວ ຄວາຍຂ້າເສິກອັນໃດ ມາຕົກເປັນຂອງຕົນແລ້ວ ຍັງປ່ອຍເສຍໃນທັບ ເສິກເລົ່າ ເຈົ້າເສິກຍັງຕິດຕາມໄປບໍ່ຂາດ ຜີຜູ້ໃດໄດ້ໃຫ້ຜ່າກ່ອງຄ່າ ເອົາຜີບໍ່ຕິດບໍ່ໄດ້ນຳ ຜູ້ໃດໄດ້ໃຫ້ເປັນຂອງຜູ້ນັ້ນ ຜີຄົນເຊີຍລັກໜີຄາບ ທັບເສິກອອກພົ້ນທັບເສິກຄາວສາມພັນວາ ຜູ້ໃດໄດ້ເປັນຂອງຜູ້ນັ້ນ ຜີ ໄປ່ພົ້ນສາມພັນວາຢ່າຟ້າວເອົາເຊີຍທ່ານ ຜີຄຳປາກເຊີຍບໍ່ວ່າລັກໜີ ແທ້ ໃຫ້ຜ່າຕາມລຳດັບມັນໃກ້ໄກຍຸຕິຕາມທີ່ຄວນເທີ້ນ ຜີພົ້ນສາມ ພັນວາຄັນເຈົ້າເຊີຍບໍ່ໄດ້ໄປ ແກ້ວ່າມັນໄປຄວ່າຫາກິນ ຢ່າຟ້າວຟັງ ຄຳມັນເທີ້ນ ເກີດປະເທດໃດທຸງນຍ່ອມກັດຕີຍິນ ດີກັບປະເທດນັ້ນແລ ຜີຍາຍທັບຄືນຍັງກ້ຳໜ້າທັບ ເປັນສາມພັນວາ ສີ່ພັນວາ ບໍ່ເພິງວ່າ ເຂົາລັກໜີ ຜີໄດ້ກ້ຳພາຍຫລັງທັບ ເປັນສາມພັນວາ ສີ່ພັນວາຂ້າງ ກ້ຳຊ້າຍກ້ຳຂວາ ຄັນພົ້ນສາມພັນວາສີ່ພັນວາ ຜູ້ໃດໄດ້ເປັນເຊີຍຜູ້ ນັ້ນ ທໍ່ເວັ້ນໄວ້ແຕ່ຜູ້ເຈົ້າເຊີຍພາໄປຫາກິນ.

ຜູ້ໃດຍັງນຳເຊີຍແລ ຂອງຂ້າເສິກໃຫ້ເລົ່າເສັ້ນແກ່ເຈົ້າທັບ ຈຸງກ ກາຍໃຫ້ໃສ່ເສັ້ນໄວ້ ມາຮອດແລ້ວ ໃຫ້ເຈົ້າຈຸງກກາຍກວາຍແກ່ອາດ ຍາພະຍາເຈົ້າຈັກໃຫ້ຕາມອັນນ້ອຍອັນຫລາຍ ຜູ້ໃດອຳເອົາຣູພາຍລຸມ ຈັກຣິ້ເອົາທັງມວນບໍ່ໃຫ້ແລ ຜີເຈົ້າເຊີຍຜູ້ໃດ ເລົ່າຍັງເສັ້ນເຈົ້າທັບ ຈຸງກກາຍຫາກພ້ອມກັນອຳ ເພື່ອຈັກປັນໂທດມີ ຜີວັດກຸກິກພະຍາ ເຈົ້າຈັກເສຍໜ້າໄໝຊ້ຳ ຜີບິວນາງໜັກຜູ້ໃຫຍ່ ຄວນຂ້າຈິ່ງຂ້າເສຍ ເອົາຫົວປ່າວ ຢ່າໃຫ້ແກ້ວຫານທັງຫລາຍດູ ເບື່ອງກັນໄດ້ກວາຍ ແລ້ວພະຍາເຈົ້າໃຫ້ທານແກ່ຜູ້ໃດ ຜູ້ນັ້ນກໍເປັນຄົນຂອງຜູ້ນັ້ນແລ ເຂົາໄດ້ເຂົາຫາກເອົາບໍ່ຊອບ ບໍ່ໃຊ່ອາດຍາແຫ່ງເຂົາ ຜູ້ໃດໄປດາຍອັນ ໃຫຍ່ໄປ່ທໍ່ເສິກ ທໍ່ບ້ານ ທໍ່ເມືອງທຸງນຍ່ອມດ້ວຍຜູ້ໃຫຍ່ບັງຄັບດາຍ ບໍ່ ໃຊ່ເຂົາຫາກໄປດາຍ.

ບໍ່ເວີນບໍ່ຄຳ ເກີດໃນດິນດອນຂະໜອນເມືອງ ຜູ້ໃດໄດ້ໃຫ້ເອົາ

ມາຂຶ້ນຣາຊໂກດ ຜີເຈົ້າດິນດອນຂະໜອນເມືອງຍັງຮັດບໍ່ທໍ່ແຮງໄດ້ ເປັນຕ່ອນເຕີນໃຫ້ກຸວາຍ ຜູ້ໃດອຳໄວ້ເປັນໂທດ ເຫດພະຍາເຈົ້າ ເປັນແກ່ແຜ່ນດິນ ເຫດຜູ້ບ້ານຜູ້ເມືອງນີ້ ພະຍາເຈົ້າລ້ຽງຜູ້ໃດເປັນ ດັ່ງປູກແປງຜູ້ນັ້ນແລ.

ຜູ້ໃດໄປເອົາຣາຊການ ຂ້ອຍແລລູກຂຸນຜູ້ໃຫຍ່ປ່ວຍກາງທາງຜູ້ ໃດຮັກສາມາມື້ມທີ່ຮ້າຍໃຫ້ຜ່າກ່ອງເອົາ ໃຫ້ພິຈາລະນາດູອິນຕາຍ ອັນຈຸຈິນແລ້ວໃຫ້ແຕ່ງ ອັນໜຶ່ງໃຫ້ພິຈາລະນາດູ ອັນເຂົາປ່ວຍໜັກ ເບົາເປັນປະມານ ແລ້ວໃຫ້ແຕ່ງຜ້າຜ່ອນໃຫ້ແກ່ເຂົາ ຕາມອັນປົວ ກັນມາທີ່ເກາງທີ່ຢ້ານນັ້ນ ຜີແຕ່ພັດກັນເສຍ ເຂົາໄດ້ກັນມາໃຫ້ຜ່າ ສາມສ່ວນ ໃຫ້ຜູ້ໄດ້ສ່ວນໜຶ່ງແລ.

ຂ້ອຍທ່ານລັກໜີ ເຂົ້າມາຫາສັບໄປດ້ວຍທ່ານ ທາງເຮືອກໍດີ ເຂົ້າໝູ່ທຸງວທາງບົກກໍດີ ຜີໄປໄກບ້ານມັນປະມານວ່າຄາວຄືນ ຄາວ ສອງຄືນໄປພາຍໜ້າ ແລໄປໄກບ້ານຜູ້ເຈົ້າມາຫາສັບໄປດ້ວຍກັນນັ້ນ ໃຫ້ເອົາໄປຮອດທີ່ຢູ່ ແລມາເລົ່າແກ່ເຈົ້າຂ້ອຍ ຜີໄປໄກແຕ່ພໍຄາວມື້ ຄາວວັນ ໃຫ້ເອົາສິ່ງແກ່ເຈົ້າຂ້ອຍ ຜີໃຜຍັງພາໄປແທ້ ສະເໜີດັ່ງ ລັກຂ້ອຍທ່ານໄປແລໃຫ້ໃສ່ຂັນຄ່າຄໍໜຶ່ງ.

ຜູ້ໃດໄດ້ຂຸມຄຳຂຸມເງິນ ໃນດິນບ້ານເມືອງຜູ້ໃດ ອັນພະຍາເຈົ້າ ລ້ຽງແມ່ນເອົາໄດ້ດ້ວຍສາຕະສິນຄູສາຕຣາກໍດີ ໃຫ້ຍົກກຸວາຍຈຶ່ງຜ່າ ສາມສ່ວນໃຫ້ແກຜູ້ໄດ້ສ່ວນໜຶ່ງ ໃນສ່ວນໜຶ່ງໂຮມກັນໃຫ້ແກ່ເຈົ້າ ດິນສ່ວນໜຶ່ງ ສອງສ່ວນໃຫ້ຂຶ້ນຣາຊໂກດ ຜູ້ໃດໄດ້ຍັງອຳຣູ້ພາຍຫລັງ ຈັກຮື້ເອົາທັງມວນ ບໍ່ໃຫ້ແລ ເຂົ້າຂອງບູຣິມບູຣານ ອັນທ່ານໄວ້ໃນ ແຜ່ນດິນ ຈັກວ່າເປັນຂອງເຈົ້າແຜ່ນດິນຜູ້ດຽວກໍບໍ່ໄດ້ ຈັກວ່າເປັນ ແຫ່ງເຈົ້າກີນຜູ້ດຽວກໍບໍ່ໄດ້ ຈັກວ່າເປັນຂອງມັນຜູ້ດຽວກໍບໍ່ໄດ້ແລ ຍັງ ເປັນຂອງທັງສາມນັ້ນແລ ເຫດດັ່ງນັ້ນຈັກໄດ້ຜ່າເພື່ອດັ່ງນັ້ນແລ.

ຜູ້ໃດເຫັນທ່ານໄດ້ໄຫເງິນໄຫຄຳ ມັນເລົ່າຕໍ່ອາດຍາຕິດຕໍ່ດູບໍ່ ເປັນດັ່ງຄວາມມັນວ່າ ໂທດມັນຢ່າໃຫ້ໃສ່ເທີ້ນ ຄັນໃສ່ໂທດແກ່ມັນ

ແມ່ນມັນຮູເມື່ອລຸນເຫັນກໍດີ ເກີດໜ້າຄືໄຟໃຜມັນກໍບໍ່ເລົ່າແລ ຜີຍັງໄດ້ດັ່ງຄຳມັນວ່າ ໃຫ້ມັນກິນຄຸມຜ່າກ່ອງນັ້ນສີ່ສ່ວນ ໃຫ້ສ່ວນໜຶ່ງ.

ຜູ້ໃດເອົາເຫລົ້າເຊື້ອຜີທ່ານມາພັດກິນ ໃສ່ຂັນແປງໜຶ່ງ ຍັງແຕກໃຫ້ແທນຄ່າ ຜີແຕ່ກຸກກວນໃຫ້ໄຫເຫລົ້າເຊື້ອລົ້ມທ່າວ ຈັກໄໝຂັນແປງໜຶ່ງ ຜີສະຫາວງານທັບໄຫເຫລົ້າເຊື້ອທ່ານແຕກໄໝຂັນໜຶ່ງສອງຮ້ອຍເງິນ ເຫດທ່ານວ່າມີຄ້ຳມີຜີ ທ່ານຈັກເຊື້ອໄວ້ເພື່ອໃຫ້ສະຫວັດສະດີດາຍ ຜີທ່ານໃຫ້ມາຕົບແຕ່ງດ້ວຍຊື່ ບໍ່ມາຍັງເປັນອິນຕາຍ ງົວຄວາຍຂ້ອຍຄົນທ່ານຕາຍ ທ່ານວ່າເປັນຄວາມໃຫ້ແທນຄ່າຂອງເພິ່ນຕາຍນັ້ນເທີ້ນ.

ຜີງົວຄວາຍກິນເຂົ້າແຮກ ໃຫ້ແປງຊາວ ຜີຊິນກອງເຂົ້າກອງແຮກໃຫ້ແປງຊາວຫ້າ ຜີບອກແລ້ວບໍ່ມາແປງ ງົວຄວາຍຜູ້ຄົນທ່ານຕາຍໃຫ້ແທນຄ່າ ເຫດໂລກຫາວ່າຂັດຂວາງ ງົວຄວາຍຊ້າງມ້າປະປ່ອຍໄວ້ ໄດ້ກິນເຂົ້າທ່ານເມື່ອຜົງປູກ ໃຫ້ປູກແທນ ຜີກິນເມື່ອເຂົ້າແກ່ເປັນສາວຕັ້ງຕົ້ນກໍດີ ຄັນມານກໍດີ ໃຫ້ຕະໜວນດູເຂົ້ານ້ອຍມາກໃຫ້ແທນທໍ່ກິນ ຜີຂ້ອຍຄົນລູກເຕົ້າລ້ຽງເດັກນ້ອຍລ້ຽງໃຫ້ແທນສອງທໍ່ ຜີພໍ່ແມ່ເຈົ້າເກົ້າເຈົ້າເຮືອນລ້ຽງ ໃຫ້ແທນສາມທໍ່ ສັດທັງຫລາຍບໍ່ຫ້ອມຂ້າແກງ ຂອງລ້ຽງຂອງດູທ່ານເສຍ ຜູ້ໃດຍັງໄດ້ຂ້າກິນຂອງທ່ານຕາຍໃຫ້ໃຊ້ຄ່າຕົວສ້ຽງ ສັດຕາຍນັ້ນມອບເສຍແກ່ມັນຜູ້ຂ້າ ຜີບໍ່ຕາຍຈຳປົວໃຫ້ດີ ໃຫ້ເປັນການດັ່ງເກົ່າ ບໍ່ປົວໃສ່ຂັນແປງໜຶ່ງ ຜີແຕ່ເຈັບສິມພິໄໝຊາວຫ້າ ຜີປ່ວຍການ ທີໃຫ້ເສຍຄ່າທັງມວນ.

ຜີໄດ້ເປັນຊ້າງມ້າ ຍັງໜັກກວ່າງົວຄວາຍ ເພາະຍັງເກີດກັບດ້ວຍຣາຊການ.

ຜູ້ໃດຕັກຜີມມ້າ ຕັດຫາງມ້າໃຫ້ຕັດຄໍເສຍ ຜີມ້າປ່ອຍມ້າລະໃຫ້ຕັດນິ້ວມືເສຍສອງນິ້ວ.

ຜູ້ໃດຂີ່ຊ້າງມ້າ ກຸມງົວຄວາຍລົງນາທ່ານ ໄໝຂັນແປງໜຶ່ງ ຜີຊ້າງໄໝສາມຮ້ອຍຜີເຂົ້າແກ່ແລ້ວແລກິນແທນສາມທໍ່ ບໍ່ມີໃຫ້ຕະ

ໜວນດູ ໜ້ອຍຫລາຍໃຫ້ແທນສາມທໍ່ເທື້ນ ຜີຊ້າງມ້າງົວຄວາຍລິງ ຢຽບເສຍທີ່ໃດໃຫ້ແທນທໍ່ນັ້ນ ສັດບໍ່ໄດ້ຕັ້ງໃຈຄຶດດາຍ.

ຜີເຮືອລ່ອງແກ້ງກໍດີ ເຮືອທ່ານເຫລັ້ມໜຶ່ງລ່ອງກ່ອນ ເຫລັ້ມເໜືອມາເຕົ້ງຫລົ້ມເສຍຂອງໃຫ້ເຫລັ້ມເໜືອແທນ ຜີທີ່ນ້ຳຮ້າຍທັງມວນທີ່ແກ້ງຮ້າຍ ໃຫ້ຜ່າສ່ວນໜຶ່ງດ້ວຍເຄາະເຂົາ ຜີຄົນຕາຍກໍໃຫ້ແທນຄ່າສອງສ່ວນ ຜີເຫລັ້ມໃຕ້ເຕົ້ງເຫລັ້ມເໜືອລ່ອງມານັ້ນ ໃສ່ໃຈປາກໃຫ້ກາຍທ່າຫລົ້ມເສຍຫາກແລ້ວ.

ຜີເຮືອຂຶ້ນເຮືອເຫລັ້ມໃຕ້ກໍ່ເຕົ້ງເຫລັ້ມເໜືອ ເສຍຂອງທ່ານໃຫ້ແທນຕົງສ້ຽງ ຜີເຫຼັ້ມເໜືອວ່າຍເຕົ້ງເຫລັ້ມໃຕ້ ປາກໃຫ້ກາຍທ່ານນັ້ນຫລົ້ມເສຍຂອງຄຳແລ້ວ ຜີເຫລັ້ມໃຕ້ຈອດແຄມຢູ່ໃນທີ່ໄກ ແລ້ວເຮືອເໜືອໂຢດມາເຕົ້ງເຫລັ້ມໃຕ້ເສຍຂອງ ໃຫ້ແທນກຸ່ອງໜຶ່ງ ຜີຫາກໄຫລຄະມະເຕົ້ງເຫລັ້ມໃຕ້ ເຮືອເໜືອຫາກຫລົ້ມເສຍຂອງຄຳແລ້ວເຄາະເຂົາຫາກຮ້າຍແລ ຜີເຮືອທ່ານໄຫລມາເຮືອໃຕ້ບໍ່ຈອດຢູ່ ຍັງກໍ່ຂຶ້ນເຕົ້ງເຮືອເໜືອຫລົ້ມເສຍຂອງ ໃຫ້ແທນຕົງສ້ຽງ ຄົນທ່ານຕາຍໃຫ້ໃຊ້ຄົນທ່ານ.

ເຮືອທ່ານໄວ້ກັບທ່າ ມີຂອງໄວ້ເຮືອເຫລັ້ມຂຶ້ນຍັງເຕົ້ງຫລົ້ມເສຍຂອງທ່ານໃຫ້ແທນຕົງສ້ຽງ ຜີແຕກແຫງບີ່ນບ່ານແປງໃຫ້ທ່ານດີດັ່ງເກົ່ານັ້ນເທື້ນ.

ເຮືອເຫລັ້ມໜຶ່ງຈັກຈອດ ເຫລັ້ມໜຶ່ງຂຶ້ນແຕ່ໃຕ້ ໃຫ້ເຫລັ້ມໃຕ້ຈອດຢູ່ທີ່ຄວນກ່ອນເຫດເຮືອຂຶ້ນນີ້ປັ້ງວິໄສ ເຮືອເໜືອລ່ອງມາດ້ວຍນ້ຳບໍ່ໄດ້ດັ່ງໃຈ ຜີເຫລັ້ມໃຕ້ຍັງດົນ ຂຶ້ນເຮືອທ່ານເຫລັ້ມເໜືອເຕົ້ງເຫລັ້ມໃຕ້ເສຍຂອງກໍດີ ເຮືອແຕກເສຍກໍດີຫາກແລ້ວ ຜີເຮືອເໜືອໂຄມຫລົ້ມເສຍຂອງ ໃຫ້ເຫລັ້ມໃຕ້ແທນຕົງສ້ຽງ ຜີເຫລັ້ມໃຕ້ຈອດຢູ່ແລ້ວ ເຫລັ້ມເໜືອຈັກຈອດບໍ່ໄດ້ ໄຫລມາຄະມະເຫລັ້ມຈອດຢູ່ ເຮືອລ່ອງຫລົ້ມຫາກແລ້ວ ຜີເຮືອເຫລັ້ມຈອດຢູ່ຫລົ້ມເສຍຂອງເສຍ ໃຫ້ເຫລັ້ມລ່ອງແທນກຸ່ອງຄ່າເຫດນ້ຳແຮງເຮືອໜັກ ທ່ານກໍໃສ່ໃຈປາກ

ຈອດໃຫ້ໄດ້ທ່າແລ້ວທໍ່ບໍ່ໄດ້ດາຍ ຜິເຮືອເຫລັ້ມຂຶ້ນກໍຈອດຢູ່ແທ້ແມ່ນ ໂທມທ່າຈອດເຮືອລ່ອງຕົງຫລົ້ມເສຍກໍດີ ເຮືອແຕກເສຍກໍດີ ຫາກ ແລ້ວ ຜີຈັກຈອດທ່າດງວນັ້ນ ໃຫ້ເຫລັ້ມເໜືອບອກໃຫ້ຮູ້ວ່າຈັກຈອດ ເຫລັ້ມຍັງເປັນວີໄສແຮງຄົນ ຜິເຫລັ້ມລ່ອງບໍ່ເອີ້ນເລົ່າເຫລັ້ມຂຶ້ນແລ ຫລົ້ມໃຫ້ແທນຂອງສອງສ່ວນ ຫາກເອີ້ນແລ້ວບໍ່ຟັງເສຍຫາກແລ້ວ ຜິເຮືອທ່ານຈອດຢູ່ກັບທ່າກ່ອນ ເຫລັ້ມລ່ອງໄດ້ຕົງເຫລົ້ມເສຍຂອງ ທ່ານໃຫ້ແທນກ່ອງຄ່າ ຜິເຮືອແຕກໃຫ້ຊອຍເສຍຄ່າແປງກ່ອງໜຶ່ງ ເຫດກຳລັງນ້ຳພົ້ນກຳລັງຄົນ ກໍບໍ່ໄດ້ໃສ່ປາກໃຫ້ແຕກ.

ເຮືອແພຄ້າຂາຍກໍດີ ເຮືອເຈົ້າຂຸນ ຊາວບ້ານ ຊາວເມືອງທັງ ຫລາຍໄວ້ກັບທ່າໃຫ້ຜູກໄວ້ໃຫ້ໝັ້ນ ຢ່າໄດ້ໃສ່ກໍ່ ໃສ່ວ່າມໃຫ້ພົ້ນປະ ມານແມ່ນແພຂອງຫລວງກໍດີ ໃຫ້ຄຶດຫາໄພ່ຟ້າຂ້າໄທຂຶ້ນລ່ອງທ່ອງ ທຽວເປັນວີໄສກໍ່ວ່າມທ່ານຄ້ຳເກີງ ຜິເຮືອຫລວງໃຫ້ໄທຂັນເຮືອ ປົງ ແພໄປໃຫ້ທ່ານໄດ້ຄ້ຳໄດ້ໃສ່ຂຶ້ນ ເຫດທ່ານ້ຳນີ້ ບໍ່ໃຊ່ເປັນວີໄສແຫ່ງ ຜູ້ດຽວ ທຽນຍ່ອມເປັນທ່າເປັນທາງທັງຫລາຍ ຂຶ້ນລ່ອງທ່ອງທຽວຊູ່ ຄົນຊູ່ໄດ້ວຽກບ້ານການເມືອງ ຜິຜູ້ໃດຍັງກາດໄມ້ຮົ້ວໄມ້ວ່າລືມລົ້ນພົ້ນ ປະມານ ກໍ່ວ່າມທ່ານບໍ່ເກີງເຮືອທ່ານສຸດວີໄສ ກໍ່ຫາທີ່ຄ້ຳບໍ່ໄດ້ ໃຫ້ ຫລົ້ມເສຍຂອງ ໃຫ້ມັນຜູ້ຄາດຮົ້ວຄາດວ່ານັ້ນແທນຕົງສຽງ ຄົນເຮືອ ທ່ານຫລົ້ມຕາຍດິກນ້ຳ ທ່ານຜູ້ອື່ນເອົາອອກໄດ້ ໃຫ້ມັນແຕ່ງຄ່າ ຍາກໃຫ້ແກ່ຜູ້ໄດ້ນັ້ນເທີ້ນ ແມ່ນເຮືອແພຫລວງພະຍາເຈົ້າ ອັນໄທ ເຮືອບໍ່ໄດ້ໃຫ້ໃສ່ພວງແພໄວ້ ເຂົາຜູກເຂົາຄາດສືບກັນ ປົງໄປເກີງທີ່ ສຸດກໍ່ວ່າມທັງຫລາຍ ຫາທີ່ຄ້ຳທີ່ໃສ່ບໍ່ໄດ້ ເຂົາກໍ່ຂຶ້ນຄວາມແລ້ວເຮືອ ແພຄ້າຂາຍຢູ່ນ້ຳຂ້າງທ່າ ສຸດວີໄສ ກໍ່ໃສ່ດິນບໍ່ເກີງ ເຂົາໄດ້ໃສ່ກໍ່ ກາງຄ່ອຍຄ້ຳຂຶ້ນຍູຂຶ້ນ ຜູ້ໃດສະຫາວດ່າທ່ານ ຕີທ່ານກີວ່າຜິດຄອງ ເມືອງຜູ້ໃດພົ້ນປະໝານໃຫ້ໃສ່ໂທດ ຜິກຽງດ່າກັນໃຫ້ຍົກັນເສຍ ຜິຜູ້ ໜຶ່ງຍັງເຈັບເລືອດຕົກຢາງອອກແລບໍ່ອອກໃຫ້ໃສ່ຕາມ ຜູ້ຜິດຕີຜູ້ບໍ່ຜິດ ຜູ້ບໍ່ຜິດຕີຜູ້ຜິດນັ້ນເທີ້ນ ຜິຜູ້ກົ້ມກໍ່ຫາກພາງານ ກົ້ມແຮງກີກເຮືອ

ກົກຂອງທ່ານແຕກໃຫ້ມັນແທນ ຜິມັນຄາດຮົ້ວຄາດຮາວໄວ້ຍາວສຸດວິໄສກໍ່ບໍ່ເກີງດິນ ເຂົາພາຍບວງຂຶ້ນ ນ້ຳກີບມາ ເຂົາຈັບໄມ້ງ່າຍູ້ຂຶ້ນ ເຂົາກີກໍ່ໃສ່ຂ້າງແພທ່ານ ໝໍ້ເຂົ້າມວຍກ້ວຍກຽບແຕກເສຍກໍດີເຮືອແພໄຫຼໄປ ຄະນະເຮືອທ່ານຫຼົ້ມເສຍກໍແລ້ວ ຢ່າຕີຜູ້ຂຶ້ນ ຫາກເປັນໂທດແຫ່ງເຂົາຜູ້ໃສ່ວ່າ ກວ່າຍາວບໍ່ໃຫ້ຄົນກຸ້ມກໍ່ນັ້ນ ຄົນທັງຫລາຍພ້ອມກັນຢູ່ຈຶ່ງເປັນບ້ານເປັນເມືອງດາຍ ອັນນີ້ຈັກກີຊາດັ່ງເຮືອຢູ່ເທິງບົກແລຂີດໝາຍດ້ວຍຮົ້ວ ຂັ້ນແດນອັນລ້ອມໄວ້ນັ້ນບໍ່ໄດ້ ທາງນ້ຳນີ້ເປັນທາງເຮືອແພທຽວດາຍ ຜິກໍ່ເກີງດິນເຂົາບໍ່ໃສ່ດິນ ໃສ່ເຮືອແພທ່ານເປັນອິນຕາຍອັນໃດ ໃຫ້ພິຈາລະນາດູຕາມຄອງເມືອງ.

ເຮືອທ່ານກັບທ່າຫາກໄຫລເສຍ ຜູ້ໃດຍັງຮູ້ຈັກເຈົ້າເຮືອໃຫ້ເລົ່າແກ່ເຈົ້າເຮືອ ຜິບໍ່ຮູ້ຈັກເຈົ້າໃຫ້ບອກແກ່ຜູ້ບ້ານໃຕ້ ບ້ານເໜືອເຫລືອໄວ້ເປັນສຳຄັນສັນຍາ ເຈົ້າເຮືອໄປໄຕ່ຫາໃຫ້ບອກ ໃຫ້ເຈົ້າເຮືອໃຫ້ຄ່າຍາກ ເປັນໝາກຫົວເຮືອກ່ອນ ເຮືອເພີ່ນໃຫ້ຄືນບໍ່ຄືນບໍ່ຊອບ ອັນໜຶ່ງໄດ້ເຮືອທ່ານໄຫລຄາວນີ້ ຜິບໍ່ບອກໃຫ້ທ່ານຮູ້ເປັນສັກຂີໄວ້ ຄືວ່າອຳໃສ່ສະເໜີລັກເທີ້ນ ຜິຫາກບອກໃຫ້ເປັນສັກຂີໄວ້ແລ້ວ ເຈົ້າເຮືອໄປໄຕ່ຫາ ເຈົ້າເຮືອໃຫ້ຄ່າຍາກແກ່ຜູ້ໄດ້ນັ້ນ ເປັນເງິນເຄິ່ງໜຶ່ງຈຶ່ງເອົາເຮືອໜີເທີ້ນ ອັນໜຶ່ງໄດ້ເຮືອໄຫລຄາວຄືນໜຶ່ງສອງຄືນດັ່ງນັ້ນ ຜິເຈົ້າເຮືອໄປໄຕ່ຮອດຈະເອົາເຮືອໜີ ໃຫ້ເຈົ້າເຮືອໃຫ້ຄ່າຍາກແກ່ຜູ້ໄດ້ນັ້ນ ເປັນເງິນບາດເງິນເບັ້ຍເທີ້ນ ອັນຜິໄດ້ເຮືອທ່ານແລ້ວແລຫາກເຮືອເສຍໃຫ້ໄໝກ່ອງ ຂັນແປງໜຶ່ງແລ້ວເຮືອທ່ານໃຫ້ຄືນ ຜິບໍ່ຄືນໃຫ້ເອົາຄ່າເຮືອ ອັນໄດ້ນັ້ນໃຫ້ແກ່ເຈົ້າເຮືອຕົງສຽງເທີ້ນ.

ເຈົ້າຊ້າງນາຍຊ້າງໄປແຊ່ໄປລ້າງ ບໍ່ກີ້ຊ້າງໃຫ້ດີ ຍັງໄປພ້ອມໄປດິດ ເຮືອແພທ່ານຫລົ້ມຈົມເສຍຂອງທ່ານກໍດີ ມ້າໄປຢຳເຮືອທ່ານແຕກກໍດີ ໃຫ້ເຈົ້າຊ້າງນາຍຊ້າງແທນ ຜິນາຍຊ້າງເປັນຂ້ອຍໃຫ້ເຈົ້າຊ້າງແທນ ຜິວ່າພໍ່ຄ່າຄົນ ເຈົ້າຂ້ອຍບໍ່ແທນໃຫ້ເອົາຕົວຂ້ອຍຜູ້ນາຍຊ້າງ ຜິຊ້າງຣາຊວັງພະຍາເຈົ້າ ກໍໃຫ້ເອົາຕົວມັນຜູ້ຂີ່ຊ້າງ ຜິ

ລູກເມຍມັນມີໃຫ້ຂາຍແທນ ຜີຫາກຊ້າງຫາກລຸຫາກແຂວງເສຍຟັນບໍ່ຟັງທັງຫລາຍເຫັນແຈ້ງ ຫາກລົ້ມກຳລັງຢ່າວ່າສັງ ເຫດໃຈສັດຕົວນັ້ນແມ່ນເຈົ້າແມ່ນຄວາມມັນ ມັນກໍຈັກຂ້າເຫດມັນແຂວງດາຍ.

ຜູ້ໃດລັກນ້ຳນາທ່ານໃສ່ນາຕົນ ໃຫ້ໄໝຂັນໜຶ່ງສອງຮ້ອຍເງິນ ຜີເອົາແຕ່ທ້າງເໜືອງຫລວງສາທານທັງຫລາຍຢ່າວ່າສັງ.

ຜີຜູ້ໃດລັກເອົາເນື້ອກຶກທ່າວ ກຶກຫລາວທ່ານກໍດີ ໝາທ່ານຂົບກໍດີ ຜີໄດ້ຂອງຄືນໄໝກ່ອງຂັນແປງໜຶ່ງ ຜີບໍ່ໄດ້ໄໝຂັນແປງໜຶ່ງ.

ຜູ້ໃດພະຍາລ້ຽງກິນບ້ານກິນເມືອງ ຜູ້ໃດໄປຂົ່ມເຫງເອົາວອດວາຄ່າບ້ານເມືອງມີຕົ້ນວ່າເງິນຄຳລຳຫອກປອກແຂນ ພົກທຽມຂີງຫອມບົ່ວເຂົ້າວອດຫລວງ ເຂົາເສຍປົກກະຕິບໍ່ເອົາຕາມພົມຈາຣິດ ແລຍັງຂົ່ມເຫງຕົງບີບເອົາ ເຫລືອຄືວ່າແລເບັຍຫລວງເສຍປົກກະຕິທີ່ໃດ ບໍ່ເອົາທີ່ນັ້ນ ຍັງຂົ່ມເຫັງເອົາກາຍຕື່ມແຕ່ກ່ອນ ເຫລືອໃຈໄພ່ມາຮ້ອງມາຄາງ ພະຍາເຈົ້າໃຫ້ສວນຕົກຈັກເສຍນາ ຂອງໄພ່ເຫລືອພົມເອົາຄືນຕົງສ້ຽງ ຫາໃຫ້ບໍ່ໄດ້ຂາຍລູກເມຍຂ້ອຍຂ້າຊ້າງມ້າມັນ ເພື່ອຄຳບໍ່ມີໄພ່ຫາກມາຮ້ອງ ໃຫ້ໃສ່ຂັນຄ່າຄີໄພ່ໜຶ່ງ ຂອງອັນເຂົາຕູ່ນັ້ນ ໃຫ້ເອົາທີ່ເຂົາຕູ່ໄດ້ແລ້ວໃຫ້ຜ່າສາມສ່ວນ ຈ່າເມືອງສ່ວນໜຶ່ງ ຣາຊໂກດສ່ວນໜຶ່ງ ວິນິດໄສສ່ວນໜຶ່ງ.

ຜູ້ໄພ່ແລເຈົ້າເມືອງຫາກຜິດຂອງກັນ ບໍ່ມັກເຈົ້າເມືອງຄວາມຊື່ເຂົາຮ້ອງເສຍ ເຈົ້າເມືອງໄປພິຣຸດຈຸດຈາດ ກໍເສຍໄຮ່ນາຄ່ອຍສັ່ງສອນເຂົາຫາກັນກ່ອນ ເຫດຜູ້ຈັກອາສາໃຫ້ເປັນຄຸນແກ່ບ້ານເມືອງນີ້ຍາກແລ.

ຜູ້ໃດຊື້ກິນບ້ານ ກິນເມືອງ ຢ່າໃຫ້ກິນ ເຂົາຈັກຣາວີບ້ານເມືອງໄພ່ບ່າວຈັກວິນາດຈິບຫາຍເສຍ ຜູ້ໃດຮູ້ເອົາໃຈໄພ່ໄທກວ້າງຂວາງຈັກໃຫ້ກິນແມ່ນອາສາເປັນຄຸນກິນ ໃຫ້ຕູາດູທີ່ໃດຍັງພໍຂົບພໍກິນລ້ຽງຢາວເຮືອນໝູ່ຊຸມກິນ ເຫດຄຳຮູ້ມັນຫາກບໍ່ມີ ຈຶ່ງບໍ່ໄດ້ກິນຫລາຍເພື່ອອັນແລ.

ໜ້າຕ້ອນໜ້າຫລີທ່ານ ໄປຕຶກໄປຜ່າເອົາໃສ່ແລວງວາຍຕາມປັກກະຕິ ຜູ້ໃດໄປລັກຕຶກເອົາປາທ່ານໄໝເອົາກ່ອງຂັນແປງ ເວັ້ນໄວ້ແຕ່ຜູ້ຫງວສອກອອກທາງ ຈົກດ້ວຍມືສະເລັກ ສະໜ່ອຍກັບເຂົ້າຜ່ອງແລວງວາຍຢ່າວ່າສັງ ຜີບັງໃສ່ໃຈເອົາຂອງທ່ານຫລາຍ ພໍຫາບຫາມໜີ ເມືອຫາຢາວເຮືອນຈຶ່ງໄໝເທີ້ນ ບ່ອນຫລີ້ຕ້ອນເປັນຕາແຫລວແລ.

ຜູ້ໃດຜູ້ໜຶ່ງຮັກມິດສະຫາຍມັນ ພາໃຫ້ແລ້ວປະໂຍຊະນະແກ່ກັນອັນໃດກໍດີ ມັນຫຼັ່ງນ້ຳມອບເວນເຂົ້າຂອງເງິນຄຳມັນໃຫ້ສະຫາຍມັນວ່າ ກູຕາຍເຂົ້າຂອງກູໄວ້ແກ່ເຈົ້າທັງມວນເທີ້ນ ເຂົ້າຂອງເຈົ້າຄັນຕາຍໄວ້ແກ່ຂ້ອຍທັງມວນວ່າດັ່ງນັ້ນ ຂາຂອດຄຳຮັກກັນ ພາບຸລຸມເມືອມັນຈັກໃກ້ຕາຍແທ້ ມັນເລົ່າສັ່ງໃຫ້ແກ່ລູກເມຍທັງມວນ ຫລັ່ງນ້ຳກໍດີມັນຕາຍໄປ ຄຳມັນຢ່າໃຫ້ເສຍທັງສອງ ເປັນດັ່ງເມືອຂາຈັກຮ້າງກັນພຸ້ນ ອັນໄດ້ແກ່ຜູ້ຊາຍກໍໄດ້ແກ່ສະຫາຍມັນ ອັນຈັກຄວນໄດ້ແກ່ລູກເມຍມັນໃຫ້ໄດ້ແກ່ລູກເມຍມັນ ເຫດຄຳຜູ້ຕາຍໜັກດາຍ.

ເປັນໄທເມຍທະຣິງຄັບ ມີປະຕິຍານແກ່ກັນວ່າ ຄັນລູກຮາເປັນຍິງຜູ້ໜຶ່ງຊາຍຜູ້ໜຶ່ງ ໃຫ້ຂາເປັນຜົວເມຍກັນເທີ້ນ ຜີເປັນຜູ້ຊາຍທັງສອງກໍດີ ຜູ້ຍິງທັງສອງກໍດີ ໃຫ້ຂາເປັນເຮືອນດຽວກັນ ລູກຂ້ອຍມັກຂອງເຈົ້າອັນໃດຢ່າຂືນ ລູກເຈົ້າມັກຂອງຂ້ອຍອັນໃດຢ່າຂືນວ່າດັ່ງນັ້ນ ໃຫ້ກະທຳຕາມປະຕິຍານເຂົາໃຫ້ແກ່ກັນເທີ້ນ.

ຂ້ອຍສືບຂ້ອຍ ຄັນເຂົາຕາຍ ເຂົ້າຂອງຄົນມັນໃຫ້ໄດ້ແກ່ຜູ້ລຸມຜູ້ເປັນເຄົ້າ ຜີເມຍມັນເປັນຜູ້ອື່ນ ມັນລັກໜີໄປຫາພີ່ນ້ອງມັນໃຫ້ໄປແຕ່ຕົວມັນ ເຂົ້າຂອງອັນຜົວມັນແຕ່ງເອົານັ້ນຢ່າວ່າສັງທ້ອນ ຜີເມຍມັນຢູ່ດອມ ໃຫ້ຜ່າກ່ອງເປັນສາມສ່ວນ ໃຫ້ເມຍມັນສ່ວນໜຶ່ງລູກມັນສ່ວນໜຶ່ງ ຜີວ່າລູກບໍ່ມີໃຫ້ແກ່ເຈົ້າສອງສ່ວນ ຜີເມຍໜີຍັງແຕ່ລູກໃຫ້ໄດ້ແກ່ເຈົ້າສອງສ່ວນ ລູກສ່ວນໜຶ່ງ ເພິ່ງຜ່າໄວ້ໃນເກິງເຈັດເຊັ່ນຂ້ອຍດັ່ງນັ້ນເທີ້ນ.

ຜີຜູ້ໃດຜູ້ໜຶ່ງເປັນຂ້ອຍກໍດີ ລູກຂຸນກໍດີ ຜູ້ເກົ່າຜູ້ກວ້າງໃຫ້ມັນໄປແຕ່ງແປງກັບບ້ານເມືອງ ມັນໄດ້ຍອມບຸນທ່ານແມ່ນຕົວເຂົາກໍຍັງເປັນຂ້ອຍເປັນບ່າວທ່ານດາຍ ພະຣັນດັ່ງເຂົ້າອາສາເສິກທັບຈັບໄດ້ກໍຍັງຄວນໄດ້ແກ່ ກວາມດາຍ ຜີເຂົາໃຫ້ແກ່ຜູ້ໃດແຕ່ຍັງມີຊີວິດຢ່າວ່າສັງເທີ້ນ.

ແມ່ນຜູ້ບ້ານຜູ້ເມືອງ ອັນພະຍາໃຫ້ກິນບ້ານກິນເມືອງ ມັນຕາຍຫລ້າງພະຍາເຈົ້າກິນຄົວເຮືອນ ຍັງມີລູກເມຍຫລານເຫລັນພີ່ນ້ອງວົງສາເຂົາ ໃຫ້ມັນຕາມລຳດັບຜູ້ຊຸ້ນຜູ້ປາຍ ລູກເຕົ້າເຂົາມີສິບແນນແທນເຊື້ອ ໃຫ້ແທນໝູ່ຊຸມໃຫ້ໄດ້ຣາຊການ ຜີບໍ່ມີພີ່ນ້ອງລູກຫຼານເຜົ່າພົງວົງສາ ຈຶ່ງນຳຂຶ້ນຣາຊໂກດເຈົ້າແຜ່ນດິນເທີ້ນ ຜີເມຍເຄົ້າເມຍເດີມບໍ່ມີ ຍັງລູກເລັກເດັກນ້ອຍເມຍນ້ອຍຫລາຍຄົນ ຜູ້ໃດເຈົ້າເຮືອນໄວ້ໃຫ້ອານັດຈັດເຕີນ ລູກນ້ອຍເມຍປາຍຂ້ອຍຄົນ ໃຫ້ເອົາຜູ້ນັ້ນເປັນໃຫຍ່ແກ່ທ່ານ.

ຜູ້ບ້ານຜູ້ເມືອງ ອັນກິນບ້ານກິນເມືອງມາແຕ່ກ່ອນ ບໍ່ໄດ້ພິຈາລະນາຮູ້ພິລຸດຈຸດໃນອາດຍາສັງ ພະຍາເຈົ້າຕົນໃໝ່ຂຶ້ນນັ່ງ ຢ່າຟ້າວລຶດຟ້າວມ້າງເສຍໄຮ່ນາ ຍົດສັກເຂົາໃຫ້ໄວ້ດັ່ງເກົ່າ ເມື່ອໃດມີຣາຊການເຂົາບໍ່ໃສ່ໃຈອາສາ ຈຶ່ງກອດໄຮ່ນາເຂົາໃຫ້ຜູ້ໃຫມ່ກິນເທີ້ນ.

ເຮືອຄ້າຂາຍຂຶ້ນລ່ອງທ່ອງທຽວແຕ່ສິບທ່າມາເຖິງຄ່າ ເຂົ້າເຕັມເຮືອຄົນລ່ອງມາຈອດເກີນພັນຕາ ຜີເຮືອຂັ້ນສີ່ສອກໃຫ້ເອົາເກີນຊາວຫ້າ ໃຫ້ເອົາແກບຫາງສອງດວງ ພວງຫລັງໜຶ່ງ ກໍ່ໜຶ່ງໄວ້ແຮການເມືອງ ລ້ຳນັ້ນເກືອງຕ່ຳພື້ນມາໃຕ້ ໃຫ້ຜ່ອນເສຍຫ້າບາດ ມາໃຕ້ໃຫ້ຜ່ອນຊາວ ມາໃຕ້ແທ້ຜ່ອນສິບ ຕາບເທົ່າຮອດວຽງຈັນ ໃຫ້ເອົາຈິດເຈົ້າເກີນຕ່ຳພື້ນ ລຳດັບມາໃຕ້ໃຫ້ຜ່ອນລົງເທົ່າຮອດວຽງຈັນເຮືອຮອດເຈົ້າຄັງບ່າວແພວເຈົ້າຂຸນເອົາເຂົ້າໄກ່ເຂົ້າກົງມາຫາກວາມກໍດີ ເຂົ້າໄຮ່ນາມາສິ່ງຂຸນກວາມກໍດີ ຢ່າເອົາຕຸກເຕີນແຕ່ພໍຂ່າວເຂົາຜູ້ຢຽມຫ້ອງເຮືອຂຶ້ງກໍດີ ທຽມບົ່ວກໍດີ ຜີເຮືອມີຈຸ້ມຕາຜາສາດ ຕັດ

ຕຸກເຕີນ ຜີເຮືອຂີງຫອມບົ່ວຫຽມກໍດີ ເຮືອຄ່າແຕ່ສິບທ່າທີ່ໃຫ້ມີແຕ ຂອງຝາກໝາກຂ່າວໄປເລົ່າແລ້ວໃຫ້ກາຍ.

ເກີນລາດອັນທ່ານຕ້ອນຮັບກິນ ເຊັ່ນຜັກດວງຫາຍບໍ່ໄດ້ນັ້ນຂັ້ນ ຂວາຍແຜ່ນໜ້າຕາດຫວາຍໜ້າບຽນ ຢ່າເອົາແກ່ເຂົາຜູ້ໃດນັ່ງຂາຍ ຮ່ວມໜ້າຕາດບຽນໃຫ້ຊ່ວຍເສຍດອມ ເຈົ້າໜ້າຕາດ ໜ້າບຽນນັ້ນ ເທີ້ນຢ່າເອົາຜອກເຫລືອ ອັນໜຶ່ງຢ່າໄປຄວ່າເອົານອກລາດ ນອກລີ ມາຕົກລາດຈຶ່ງເອົາ.

ໜ້າເກີນທາງນ້ຳຢ່າເອົາ ເຮືອທາງນ້ຳ ເຮືອໜຶ່ງລ່ອງມາໄດ້ ຍິນເກີງເກີນໃຫ້ຈອດ ຜີບໍ່ຈອດໃຫ້ກິນໃຫ້ດູ ອັນທ່ານໃສ່ສ້ອຍໝາຍ ຕາແຫລວໃຫ້ຈອດ ຜີຍັງລວງກາຍຊົ່ວພັນວາກໍດີ ຫ້າຮ້ອຍວາກໍດີ ໃຫ້ກືເອົາຂອງຄ້າຕົງສຽງ ຜີນ້ຳກີບໃສ່ບໍ່ຈອດທັນໃຈໄດ້ກາຍແຕ່ຮ້ອຍ ວາສອງຮ້ອຍວາ ຢ່າວ່າສັງເຫດນ້ຳກີບຜັນ ຜີບໍ່ມາແກ່ຕຸກເຕີນ ມື້ ໜຶ່ງວັນໜຶ່ງໃຫ້ກືເອົາຂອງຄ້າຕົງສຽງ ຜີເຂົາມານຳຂໍໃຫ້ຜ່າກ່ອງ ຄືນ ຜີເຮັດກ່ອຍຫ້ອຍຄວາມເຈົ້າຂຸນໃຫ້ເອົາສອງສ່ວນ ຄືນສ່ວນໜຶ່ງ ເງິນຄຳຄຸດແສງໃນກົງທ່ານຢ່າເອົາ ອັນໃຊ່ເຄື່ອງຄ້າຂອງຂາຍຢ່າຫື ເອົາເຮືອຂຶ້ນມາແຕ່ວຽງຈັນ ເກີນຕ່ຳພື້ນ ເກີນພັນຕາ ເຮືອແຜນ ແລຣານຮຽດຂັ້ນສາມສອກ ສາມຫ້ອງມີເຄື່ອງຄ້າຂາຍ ມີຕົ້ນວ່າ ເກືອ ປາສົ້ມ ປາແດກ ໃຫ້ເອົາເຫລັ້ມຊາວເງິນ ຜີຂັ້ນສີ່ສອກເຫລັ້ມ ສາມສິບເງິນ ຄັນເກີນມະເຫສັກເອົາແລ້ວ ໃຫ້ໝາຍໜ້າຈິດເກີນ ໜ້າຄັງເອົາຜ່ອນຂຶ້ນ ຕາມລຳດັບເທົ່າຮອດເກີນພັນຕາ ເກີນຄົກຄຳ ປາ ສີບໄປເປັນເກີນລົດຕ່ຳພື້ນ ເກີນມະເຫສັກຂາເອົາແລ້ວຢ່າໃຫ້ ເອົາ ເກີນຄົກຄຳເປັນເກີນໜ້າຄັງ ເກີນຊຽງຄູນເກີນປາສີບເປັນເກີນ ໜ້າຄັງ ເກີນຫນ້າຄັງເກີນເມືອງຄັງ ເກີນທາງຂົວຕ່ຳພື້ນ ເກີນມະ ເຫສັກຂາເຈົ້າສີມຄາມຈັກແລ້ວທັງມວນ ເກີນທາງຫ້ວຍຫລວງນ້ຳ ງືມ ນ້ຳຊວຍ ນ້ຳຊັນ ສັບພະທາງຫ້ວຍໃຫ້ເກັບແຕ່ທາງຫ້ວຍສີງ ດຽວ ກ້ຳເໜືອປາກເຫືອງເປັນຕົ້ນ ສັບພະທາງຫ້ວຍທີ່ຕັ້ງ ເກີນໃຫ້

ເອົາແຕ່ທາງຫ້ວຍ ເຂົາທຽວຄ້າຂາຍງົວຄວາຍຕ່າງຫາບ ຫາກເຂົາຕົກຕາແສງເກີນຈຶ່ງເອົາເສດເຊົາແກ່ເຂົາ ເກີນຫລວງຈັດແລ້ວໃຫ້ເອົາຕາແສງທາງບົກ ລາດຄຳນະຄອນກັບເມືອງໄລກະບານທາງນ້ຳແຕ່ນະຄອນເທົ່າຫົວຫລີ່ ທາງບົກກ້ຳນະຄອນເອົານະຄອນແລເມືອງໄຊກຊວງ ຜາພຽງ ເກົ່ງເມືອງໝັ້ນຄຳທອງນານ້ອຍ ສັບພະຂາຍເຄື່ອງທາງບົກ ຜີຂາຍຊ້າງເອົາຕົວຫ້າສິບ ຂາຍມ້າເອົາຕົວຊາວ ຂາຍຄົນຜູ້ລະຊາວ ຂາຍຄວາຍມາເອົາຕົວສິບ ເໜືອຂາຍງົວຄວາຍເອົາຕົວຊິກ ເໜືອກໍດີ ບັກກໍດີ ຜີຂາຍໄໝເປັນໝື່ນເປັນແສນຈຶ່ງເອົາເສດເຂົາ ຜີຂາຍແຜ່ນແພສິ້ນຜ້າ ຊື້ໄປຂາຍເປັນຮ້ອຍເປັນເຊືອກຈຶ່ງເອົາດອມເຂົາຜູ້ໄດ້ເງິນ.

ເຈົ້າຂຸນຕາມເກີນໃຫ້ໄປລຽບໄປລ່ຳ ຜູ້ໃດຂາຍອັນໃດໃຫ້ເລົ່າຊື່ຜູ້ໃດຍັງຮູ້ວ່າຈັກເກັບເກີນລັກຂາຍແທ້ໃຫ້ກື້ຮື້ເອົາ ຜີເຂົາຂ່ຳຂໍໃຫ້ຄືນກ່ອງໜຶ່ງ ຜີບໍ່ຂ່ຳຂໍໃຫ້ຄືນສ່ວນໜຶ່ງ ໃຫ້ນຳຂຶ້ນຣາຊໂກດສອງສ່ວນ.

ຜີຜູ້ຍິງຜູ້ຊາຍສອງຊູກັນ ໃຫ້ສັດຈະວ່າຈັກເອົາກັນ ຜີຫາຜູ້ເປັນໃຫຍ່ກວ່າບໍ່ໄດ້ ໃຫ້ເອົາຕາມປະຕິຍານເຂົາໃຫ້ແກ່ກັນນັ້ນ ແມ່ນຍິງສາວກໍດີ ເຂົາປະກັນແກ່ກັນດ້ວຍຄຳວ່າ ຄັນກະທຳດັ່ງນີ້ໄດ້ແທ້ຈັກເປັນເມຍເຈົ້າແລວ່າດັ່ງນັ້ນ ຜີຊົ່ວຊອງໜ້າພໍ່ແມ່ ປູ່ຍ່າຕານາຍ ພີ່ເອື້ອຍພີ່ຊາຍເຜົ່າພົງວົງສາ ຜູ້ເປັນໃຫຍ່ກວ່າຕົວມັນບໍ່ວ່າສັງ ໃຫ້ໄດ້ຕາມປະຕິຍານ ຜີແຕ່ນ້ອງນຸ່ງຊຸງປາຍ ລູກຫລານມັນຜູ້ບໍ່ວ່າໄດ້ກໍດີ ຊ້ອງໜ້າຜູ້ອື່ນຮູ້ກໍດີ ຂາທັງສອງຫາກວ່າແກ່ກັນກໍດີ ກໍເພິ່ງວ່າໄດ້ຕາມປະຕິຍານເຫດຜູ້ເປັນໃຫຍ່ກວ່າຕົວ ຮັກສາມັນຫາກຍັງຜີມີດັ່ງນັ້ນ ທໍ່ໃຫ້ມັນແຕ່ງເງິນຊາວ ເສື້ອຜ້າໃຫ້ແກ່ມັນເປັນເຄື່ອງສູ່ຂວັນກັບຄ່າເຂົ້າແກ້ຂວັນເທົ່ານັ້ນ ເຫດຜູ້ເປັນໃຫຍ່ຫາກມີ ພາຍວ່າເຂົາມັກກັນມາກ່າວມາໂອມດອມ ໃຜຜູ້ເປັນໃຫຍ່ຮັກສາບໍ່ໃຫ້ເອົາກໍບໍ່ໄດ້ດາຍ.

ຜູ້ໃດຈັກເອົາຄ່າລູກຂຸນຈຳພວກໜຶ່ງ ສິບກະກຸນມາແຕ່ເກົ້າແຕ່ແກກິນໄຮ່ບໍ່ຈ້າງ ກິນນາບໍ່ເສຍຄ່າ ຈຳພວກໜຶ່ງ ເຂົາຈັກໜີຈາກ

ເຈົ້າລູກຂຸນ ເອົາຄ່າຫົວຄີງຄົນສອງຮ້ອຍເງິນ ລູກຂຸນຈຳພວກໜຶ່ງ ຕິດກັບດ້ວຍເບ້ຍເງິນ ອັນເຂົາແລຢູ່ກັບດ້ວຍເງິນນັ້ນ ລູກຂຸນຈຳພວກໜຶ່ງ ເມື່ອຈັກໜີໃຫ້ເອົາຄີງຄົນສາມຮ້ອຍເງິນ ລູກຂຸນຈຳພວກໜຶ່ງມາຢູ່ພາຍເພິ່ງຂາດໄດ້ປ້ານກ້ອຍປ້ານຄວາມ ສັບພະອິນຕາຍອັນຈັກໜີໃຫ້ເອົາໜຶ່ງແລຄົວສອງຮ້ອຍເງິນເທື້ນ ລູກຂຸນຢາກເມືອ ຈັກໜີຄືນຫາເຈົ້າ ລູກຂຸນໃຫ້ບໍຣະນາຄຸນອັນຮັກສາເກັບຫອມໄວ້ບໍ່ໃຫ້ຊ່ານເຊັນຕາມໜັກເບົາເທື້ນ.

ຂອງອັນຕົກມີຜູ້ອື່ນ ຄວນເອົາຄືນໄດ້ນັ້ນ ຂອງອັນໃດອັນຜູ້ໃຫ້ກຶກຂຶ່ມເຫັງເອົານັ້ນ ຄັນເຈົ້າວັດກຸມີທີ່ເພິ່ງເປັນຕົ້ນວ່າ ອາດຍາຈັກເອົາຄືນໄດ້ ຂອງອັນຂຶ່ມເຫງບາບໃໝຜິດຮີດບ້ານຄອງເມືອງ ເອົາຄືນຳໄດ້ຂອງອັນໃດອັນໃຫ້ວິກັບດ້ວຍຄຳວ່າ ຄັນແລ້ວປະໂຫຍດຂໍບູຊາວ່າດັ່ງນັ້ນ ຜີບໍ່ແລ້ວປະໂຍຊະນະເອົາຄືນໄດ້ ອັນທ່ານບໍ່ໃຫ້ແລະບາດທົ້ນເອົາໄວ້ ກໍເອົາຄືນໄດ້ຂອງຝູງນີ້ບໍຣະສຸດແລ.

ຊາວບ້ານຊາວເມືອງທັງມວນຫານາກິນເສຍຄ່າຊູ່ປີ ທ່ານເຈົ້ານາຍັງກິນເສຍຄ່າ ຢ່າໃຫ້ເຈົ້ານາໄດ້ກອດກ່ອນ ຜີເຂົາກິນບໍ່ຊ່ອຍເຕີມວຽກ ບໍ່ໄດ້ໄປສິ່ງມາຮັບ ຈຶ່ງກອດກອນໃຫ້ຜູ້ໃໝ່ກິນ ຜີທ່ານຍັງໄດ້ວຽກຫານ ເຈົ້ານາຫາກຍັງກຸມກອດກອນໃຫ້ຜູ້ອື່ນກິນ ເຂົາກຸມຂ້າຕີກັນໂທດເຈົ້ານາດາຍ.

ຜູ້ກິນນາທ່ານໃຫ້ມີເຫລົ້າຢາ ອາຫານການກິນ ກັບເຫລົ້າໄປຮອດໄປຫາເຈົ້ານາຊູ່ປີ ໝາຍໄວ້ໃຫ້ຮູ້ວ່າ ທ່ານຜູ້ກີນາເຮັດກິນຊູ່ປີແຕ່ງເໜືອງແຕ່ງຝາຍໄວ້ດັ່ງນັ້ນ ຜີເຈົ້ານາຍັງເຫັນແກ່ຜູ້ໃໝ່ແລກອດເສຍ ເຂົາຜິດກັນຜູກຕີກັນຕາຍກໍດີ ເຈັບກໍດີ ໂທດເຈົ້ານາໜັກແລ ເມື່ອລະດູຈັກໃຫ້ຕົກກ້າລົງນາ ຜູ້ປົກກະຕິເຮັດນາບໍ່ແຕ່ງອັນໃຫ້ຮູ້ວ່າຍັງເຮັດ ເຈົ້ານາຢຽວວ່າບໍ່ເຮັດ ຈຶ່ງໃຫ້ຜູ້ໃໝ່ມາຫາເຮັດ ເຂົາຜິດກຽງຂ້າຟັນກັນເຈັບກໍດີ ຕາຍກໍດີ ບໍ່ເປັນໂທດແກ່ເຈົ້ານາແລ.

ຄົນກືດາບເມື່ອກາງຄືນ ມີຜູ້ໜຶ່ງກິນເຫລົ້າກາງລາດກາດລີແລ

ເມີາຮ້າຍ ໃຫ້ເຈົ້າດ່ານເອົາຜູກໄວ້ ຮຸ່ງເຊົ້າຊື່ນຕາຍັງຮູ້ຈັກເຈົ້າມັນ ຈຶ່ງໃຫ້ນຳໄປສົ່ງ ຜີບໍ່ສົ່ງຮອດເຈົ້າ ຍັງເສຍລ້ອຍທ່ານໃຫ້ແທນຄ່າ ຄົນຜູ້ໜຶ່ງ ຜີບໍ່ຮູ້ຈັກຕົວມັນໃຫ້ນຳໄປຫາໝື່ນລ່າມ ຜີຮູ້ຈັກຕົວມັນກໍດີຍັງເຫັນເຄື່ອງອາວຸດກັບຕົວມັນ ມີຕົ້ນວ່າມີດບ້ອງກໍດີ ຊຸດໄຟກໍດີ ຢ່າໄດ້ໃຫ້ນຳໄປຫາເຈົ້າມັນ ໃຫ້ນຳໄປຫາໝື່ນສອກ ໝື່ນລ່າມພິຈາລະນາດູໂທດມັນ ກິນເຫລົ້າຢາແຕ່ຜູ້ໃດ ຕ້ອງກືມັນວ່າຍັງເຫັນເຄື່ອງວ່າເປັນຄົນຮ້າຍແລ້ວແລ.

ຜູ້ໃດກຸ້ມບ້ານກາງຄືນ ກືວ່າເປັນຄົນຮ້າຍ ໃຫ້ໃສ່ຂື່ນທຽມໂຈນເທີ້ນ.

ຄົນບໍ່ມີບ້ານກໍດີ ຄົນເຂົ້າບ້ານກໍດີ ຄົນທັງຫລາຍຕ້ອນກໍດີ ຜິກເອົາກໍດີ ໄດ້ຜູ້ໜຶ່ງກາງທາງຫລວງໃກ້ອັນກຸ້ມເຮືອນ ໃຫ້ເອົາໄປຫາໝື່ນລ່າມທັງສອງພິຈາລະນາດູ ເຫດຜູ້ໄປຄວ່າກາງຄືນຜິດກັບດ້ວຍໂທດ ປະການໜຶ່ງມີຄຳສິງໄສແກ່ມັນມາກ ກືວ່າເປັນຄົນຮ້າຍແລ.

ຜູ້ໃດກືໜີ້ກິນສິນກໍດີ ກາມບໍ່ໄດ້ກໍດີ ໄປຄວ່າລີ້ຊ່ອນຢູ່ຈຶ່ງເຫັນກໍດີ ຕັດໜີ້ຊີ້ໂທດໃສ່ເຂົາກໍດີ ເຫັນກັນຢູ່ຫລອນຫຍຸບຍາດເອົາດ້ວຍວ່າຍໃຫ້ຮ້ອນແກ່ບ້ານເມືອງ ເຮືອນມີທົ່ງມີຝາ ບ້ານມີຈ່າມີກວານ ໃຫ້ເອົາຮີດບ້ານຄອງເມືອງ ໃຫ້ເອົາເຈ້ຍເອົາລາຍໄປໃສ່ ຈັດມາພິ-ຈາລະນາຕາມຄອງເມືອງ ຄວນໄດ້ຄວນເສຍບາປໄໝກັນ ໃຫ້ກ້ວານສານຕັດແຕ່ງໃຫ້ຈຶ່ງເອົາ ເວັ້ນແຕ່ເຫັນຂ້າລັກຄົນໂຈນ ບໍ່ຮູ້ທີ່ຢູ່ຢາວເຮືອນມັນ ຄັນຈັບຍາດໄດ້ແລ້ວໃຫ້ນຳໄປຫາໝື່ນລ່າມ ທັງສອງພິ-ຈາລະນາດູ ອັນໜຶ່ງເວັ້ນໄວ້ເຫັນຂ້ອຍລັກໜີເຈົ້າ ບ່າວລັກໜີກວານ ບໍ່ຮູ້ທີ່ຢູ່ຢາວເຮືອນ ເຂົາເຫັນກາງສອກ ກາງທາງລາດລີໃຫ້ຈັບເອົາແລ້ວໃຫ້ໄປບອກເລົ່າແກ່ສອງໝື່ນລ່າມໃຫ້ຮູ້. ມີຜູ້ຄ້ຳພາຂາຄ່ອງໃຫ້ຄາດໄວ້ ໃຫ້ຜູ້ຄ້ຳມາສູ່ອາດຍາ ຍັງໜີແລຕາຍ ໃຫ້ເອົາດອມຜູ້ຄ້ຳເທີ້ນ.

ທີ່ໃດຂອກຄຸ້ມຂອກວັງກໍດີ ທີ່ໃດເປັນຮາຊການອາດຍາ ຢ່າໃຫ້ຜູ້ໃດໄປລ່ວງລ້ຳ ຜູ້ໃດຍັງໄປຊື່ວ່າເປັນໂທດແລ ຜີຜູ້ຮັກສາໄດ້ຜູກໄດ້

ຕີຫາກແລ້ວ ຜີຫາກຍັງລົ້ມຕາຍ ໃຫ້ຜູ້ຮັກສາທີ່ກ່ຽວກັນສິ່ງສະການ ເຫດວ່າຈັບທ່ານແລ້ວ ເຂົາໃຫ້ກຸມມາສູ່ອາດຍາ ໃຫ້ພິຈາລະນາດູ ກ່ອນຢ່າຟ້າວຮີບຂ້າທ່ານໃຫ້ຕາຍດາຍ ບໍ່ຮູ້ຈັກຄົນຮ້າຍຄົນດີ.

ຣາຊສາດໂພທິສານ

ຣາຊສາດໂພທິສານເຈົ້າຕັ້ງໄວ້ ໃຜຈັກພິຈາລະນາ ໃຫ້ລະນຶກ ຄຶດເກືອງນາງຄໍາປາດ ມີອັດກະປາລີ ອັດກະດີກາ ອາຈະຣິຍະວາທີ ວິເມຫາປະເທສະ ຫ້າປະການຄືວ່າ: ສຸຕະສຸຕານຸໂລມະ ອາຈະ-ຣິຍະວາໂທ ອັດຕະໂນມະຕິ ສັກຂີຕີ ເອົາທັມມະອອກໄວ້ດ້ວຍປະ ຫຍາໄວ້ທຽມໂລກໂວຫານ ເພື່ອໃຫ້ເປັນອຸປະມານແກ່ນິນຕີຊື່ ອັກ-ກະຍະທັກກະຍະໄທວາຈາ ຜູ້ຈັກໄຕ່ກ້ອຍສວນຄໍາ ແລຜູ້ພິຈາລະນາ ຊອບທໍາຊື່ວ່າ ສຸຄະຕິຍັນຕີ ຜູ້ບໍ່ພິຈາລະນາຊອບຊື່ວ່າ ນິຣິຍະຍັນຕີ ແລ ຄົນທັງຫລາຍຟູງວ່າຄວາມເຮັດດີ ຫລີໃຫ້ພົ້ນທີ່ຮ້າຍເທີ້ນ.

ຫ້ອງຜິດຫ້ອງຊອບ

ສິດທິການ ຈັກກ່າວຕໍານານທັມມະສາດ ຫ້ອງຜິດຫ້ອງຊອບ ນັກປາດເພິ່ງຮູ້ດ້ວຍໄນຍະສັນນີ້ເທີ້ນ.

ຜີວ່າຜູ້ໜຶ່ງເມົາເຫລົ້າ ແລ່ໄປກືກຕ້ອງເມຍທ່ານດັ່ງນັ້ນ ໃຫ້ ການຄົນທັງຫລາຍດູ ຜີວ່າມັນຫາກເມົາພົ້ນປະຫມານແທ້ ໃຫ້ໃສ່ ຂັນໃໝມັນ ຜີວ່າມັນເມົາບໍ່ຮູ້ສະຕິໄດ້ດັ່ງນັ້ນ ບໍ່ຄວນໃສ່ຂັນໃໝແກ່ ມັນເທົ່າຄວນ ໃຫ້ມັນສິມມາເປັນເງິນເບັ້ຍໜຶ່ງກໍດີ ບາດໜຶ່ງກໍດີ ເພື່ອບໍ່ໃຫ້ມັນກະທໍາເມື່ອພາຍລຸນແລ ທຽມດັ່ງພິກຂຸຕົນໜຶ່ງເປັນບ້າ ເວດທະນາແລ ໄດ້ໄປກືກຕ້ອງຜູ້ຍິງດັ່ງນັ້ນ ພະເຈົ້າບໍ່ໃສ່ອາບັດສັງ ເຫດວ່າຫາສະຕິບໍ່ໄດ້ ເປັນດັ່ງເມົາເຫລົ້າພົ້ນປະໝານ ບໍ່ຮູ້ດັ່ງນັ້ນ ແລບໍ່ຄວນໃສ່ຂັນໃໝເພື່ອອັນແລ.

ຄົນຜູ້ໃດເປັນພໍ່ໃຊ້ແມ່ສື່ ແກ່ເມຍເພິ່ນໃຫ້ມີຊູ້ມາສູ່ທ່ານດັ່ງນັ້ນ ໃຫ້ໃສ່ຂັນໃໝແລ ທຽມດັ່ງພິກຂຸຕົນໜຶ່ງ ກະທໍາສັນຈະຣິດຕະ ຄື ວ່າເປັນພໍ່ໃຊ້ແມ່ສື່ ໂອມຜູ້ຍິງຜູ້ຊາຍມາໃຫ້ແກ່ກັນດັ່ງນັ້ນ ພະເຈົ້າ

ໃສ່ອາບັດສັງຄາທິເສດ ແກ່ພິກຂຸຕົນນັ້ນແລ ເຫດດັ່ງນັ້ນ ຄົນຜູ້ໃດ ເປັນຜູ້ໃຊ້ຜູ້ສື່ແກ່ເມຍທ່ານ ຄວນໃສ່ຂັນໄຫມແກ່ມັນຈິ່ງຊອບແລ.

ຜີວ່າຜູ້ໜຶ່ງມັນລັກເອົາຂອງທ່ານ ຝາກໄວ້ດອມຜູ້ໜຶ່ງ ມັນຜູ້ ນັ້ນກໍຮູ້ວ່າຂອງລັກທ່ານ ເມື່ອເພິ່ນໄຕ່ຕາມມາຮອດແທ້ ຄວນໃສ່ ຂັນແປງແກ່ມັນ ຜູ້ເຈົ້າເຮືອນແລ ເຫດມັນອຳໂຫດແຫ່ງທ່ານໄວ້ ທຽມດັ່ງພິກຂຸຕົນໜຶ່ງຮູ້ວ່າ ພິກຂຸຕົນໜຶ່ງ ເກີງອາບັດປະຣາຊິກແທ້ ດັ່ງນັ້ນແລອຳໄວ້ດັ່ງນັ້ນ ພະເຈົ້າໃສ່ອາບັດປາຈິດຕີ ແກ່ພິກຂຸຕົນອຳ ໂຫດທ່ານໄວ້ນັ້ນແລ ພະເຈົ້າບໍ່ໃສ່ອາບັດສັງຄາແລປະຣາຊິກ ເຫດ ວ່າອຳບາບອຳໂຫດທ່ານໄວ້ແລ ແມ່ນວ່າທັມໂລກກໍຄວນແຕ່ງຂັນ ແປງຈິ່ງຊອບແລ.

ຜີວ່າຄົນຜູ້ໜຶ່ງ ມັນໄປຕໍ່ຄົນຜູ້ໜຶ່ງໄປກະທຳຊູ້ສູ່ເມຍທ່ານ ອັນ ຫາເຄົ້າຫາມູນບໍ່ໄດ້ ຄວນໃສ່ໂທດເປັນຂັນໄໝແກ່ມັນ ເຫດມັນປັກ ຄຳຕາຍ ໝາຍຄຳຮ້າຍໃສ່ທ່ານດາຍ ທຽມດັ່ງພິກຂຸຕົນໜຶ່ງ ຍົກ ໂທດແກ່ທ່ານວ່າ ເປັນປະຣາຊິກແລໃສ່ຂັນແປງຊອບແລ ຜີວ່າຄົນຜູ້ ໜຶ່ງຢູ່ສະຫວັດ ຄືວ່າທີ່ລັບທີ່ບັງ ກັບດ້ວຍເມຍທ່ານມີສອງຂາດັ່ງນັ້ນ ໃຫ້ຂຽນການຄວາມປາກຂາດູ ຜີວ່າເກີງເມຖຸນທຳໃຫ້ໃສ່ຂັນຄ່າຄໍ ຜີ ວ່າແຕ່ກຶກແຕ່ບາຍໃຫ້ໃສ່ຂັນໄຫມ ຜີວ່າແຕ່ປາກວາໃຫ້ໃສ່ຂັນແປງ ຊອບແລ ທຽມດັ່ງພິກຂຸຕົນໜຶ່ງ ໄປສູ່ທີ່ສະຫວັດ ກັບດ້ວຍມາຕຸຄາມ ຍັງມີນາງອຸບປາສິກາຜູ້ໜຶ່ງ ມີສີນທ້າສີນແປດມາບອກກ່າວດ້ວຍຄຳ ມີແທ້ ກໍເພິ່ງຄຳແທ້ ຄວນໃສ່ປະຣາຊິກໃຫ້ໃສ່ ຄວນໃສ່ອາບັດສັງ ຄາທິເສດໃຫ້ໃສ່ ຄວນໃສ່ອາບັດປາຈິດຕີໃຫ້ໃສ່ເທີ້ນ ທັມໂລກໃຫ້ພິ ຈາລະນາດູກີ່ແລ້ວຈິ່ງໃສ່ຕາມວິໄນພະເຈົ້າຊອບແລ.

ອັນໜຶ່ງຄົນຜູ້ໃດສໍ່ທ້າວພະຍາ ອັນຮັກກັນໃຫ້ນ້າງຈາກກັນດ້ວຍ ຄຳສໍ່ດັ່ງນັ້ນ ພິຈາລະນາເປັນໂທດແກ່ມັນແທ້ ໃຫ້ໃສ່ຂັນໄຫມແກ່ ມັນເຫດມັນມັກປາກແລ ທຽມດັ່ງພິກຂຸຕົນໜຶ່ງ ສໍ່ສິງໃຫ້ນ້າງຈາກ ກັນດັ່ງນັ້ນ ພິກຂຸທັງຫລາຍນຳໄປໄຫວ້ພະເຈົ້າ ພະເຈົ້າໃສ່ອາບັດ

ສັງຄາທິເສດແກ່ພິກຂຸຕົນນັ້ນແລ ແມ່ນວ່າທົນໂລກສໍ່ທ້າວພະຍາ ໃຫ້ຜິດກັນ ຄວນໃສ່ຂັນໄໝຊອບແລ.

ຄົນຜູ້ໃດເອົາແດນບ້ານດິນເມືອງທ່ານ ດິນນາທ່ານ ໄຮ່ທ່ານ ກາຍເຂດທີ່ປັ່ງຫລັກປັກແດນ ສວນແພ້ໃຫ້ໃສ່ຂັນຄ່າຄໍແກ່ມັນ ເຫດ ວ່າແຜ່ນນີ້ຄ່າມາກນັກດາຍ ທຽມດັ່ງພິກຂຸຕົນໜຶ່ງໄປຊິງເອົາທີ່ແດນ ວັດວາອາຣາມກາຍແດນ ພິກຂຸທັງຫລາຍນຳໄປເຫວັພະເຈົ້າ ພະ ເຈົ້າໃສ່ອາບັດປະຣາຊິກ ເຫດວ່າແຜ່ນດິນມີຄ່າມາກດາຍ ທົນໂລກ ກໍຊອບໃສ່ຂັນຄ່າຄໍແລ.

ຄົນຜູ້ໃດຜູ້ໜຶ່ງ ມັນໄປເອົາຂອງທ່ານແລບໍ່ເຫັນເຈົ້າຂອງແລບໍ່ ການມັນລວດໃສ່ໃຈວ່າ ກູຢືມເອົາມາກ່ອນແລວ່າດັ່ງນັ້ນ ມັນແລ ກ່າວໃຫ້ຜູ້ອື່ນໄດ້ຍິນກໍດີ ແມ່ນຫາກກ່າວວ່າດ້ວຍຕົນມັນກໍດີໄປ່ຄວນ ໃສ່ໂທດແລ ເຫດວ່າມັນບໍ່ໃສ່ໃຈວ່າຈັກລັກແລ ມັນຍັງປາກຍັງຮຽກ ໃຫ້ທ່ານຮູ້ດາຍ ທຽມດັ່ງພິກຂຸຕົນໜຶ່ງໄປເອົາຂອງແຫ່ງສົງ ມາຄ້ຳ ມາກະທຳວິຫານແຫ່ງຕົນ ດ້ວຍອັນໃສ່ໃຈວ່າກູຢືມດັ່ງນັ້ນ ພິກຂຸຕົນ ອື່ນລວດໂຈດວ່າ ທ່ານນີ້ບໍ່ເປັນສິນແລ ວ່າດັ່ງນັ້ນພິກຂຸທັງຫລາຍ ນຳໄປເຫວັພະເຈົ້າ ພະເຈົ້າການວ່າທ່ານໃສ່ໃຈສິ່ງໃດ ພິກຂຸຕົນ ນັ້ນວ່າໃສ່ໃຈວ່າກູແລ ພະເຈົ້າວ່າບໍ່ມີອາບັດ ເຫດນິມິດຕະວ່າ ຕະ ກາຣິກຄືວ່າກູຢືມແລ ທົນໂລກບໍ່ຄວນໃສ່ຂັນດາຍ ຜີວ່າເສຍຂອງກູ ເທົ່າໃດ ໃຫ້ແທນຊອບແລ ຜີວ່າບໍ່ເສຍ ກໍບໍ່ຄວນຈັກວ່າສັງແກ່ມັນ ແລຜີວ່າຄົນຜູ້ໃດຜູ້ໜຶ່ງມັນໄປລ່າຍ ເອົາຂອງໃນສຳນັກແຫ່ງຄົນຜູ້ ໜຶ່ງຂອງອັນນັ້ນມັນກໍບໍ່ໄດ້ໃຫ້ ຜູ້ມັນເອົາຄວາມໄປເວົ້ານັ້ນຮູ້ ມັນ ຫາກເອົາເຫິງນານຈິ່ງຮູ້ ຂອງອັນນັ້ນໃຫ້ແທນຕົງສຽງ ຜີວ່າວັດກໆ ໜັກໃຫ້ໃສ່ຂັນແປງໜຶ່ງ ເຫດວ່າມັນລ່າຍດາຍ ຈັກວ່າມັນລັກກໍບໍ່ຂຶ້ນ ເຫດມັນຍັງເອົາຄວາມຜູ້ໜຶ່ງເປັນນິມິດແລ ທຽມພິກຂຸຕົນໜຶ່ງເອົາ ຄວາມນາງຈຸລະນັນທາພິກຂຸນີ ໄປເອົາແຕ່ກະກຸນອຸບປະການແຫ່ງ ທ່ານມາບໍຣິໂພກແກ່ຕົນ ພິກຂຸທັງຫລາຍຮູ້ຕິຕຽນ ນຳໄປເຫວັພະ

ເຈົ້າ ພະເຈົ້ໃສ່ອາບັດປາຈິດຕີ ແກ່ພິກຂຸຕົນນັ້ນແລ ທັນໂລກກໍດີເອົາຄວາມຜູ້ນີ້ໄປລ່າຍເອົາຂອງທ່ານສັນນີ້ ຄວນໃສ່ຂັນແປງຊອບແລ.

ຄົນຜູ້ໜຶ່ງມັນຕາກຜ້າໄວ້ກໍດີ ຕາກຂອງໄວ້ກໍດີແລລືມກູ້ ດັ່ງນັ້ນຜູ້ໜຶ່ງ ເຫັນມັນຢ້ານກົວເສຍແລກູ້ມາໄວ້ດັ່ງນັ້ນ ເຈົ້າຂອງໂຈດວ່າຂອງກູຕາກໄວ້ຫນີ້ໃຜລັກເອົາຈາ ຜູ້ກູ້ວ່າຂ້າກູ້ໄວ້ແລ ວ່າດັ່ງນັ້ນໂທດບໍ່ຂຶ້ນແກ່ຜູ້ກູ້ແລ ເຫດວ່າມັນບໍ່ໃສ່ໃຈວ່າຈັກລັກ ມັນຍັງວ່າກູ້ໄວ້ດາຍທຽມດັ່ງພິກຂຸຕົນໜຶ່ງ ຕາກຜ້າໄວ້ກາງແຈ້ງ ຕົນໜຶ່ງຢ້ານກົວເສຍແລກູ້ໄວ້ດັ່ງນັ້ນ ຕົນເຈົ້າຜ້າວ່າ ກູຕາກໄວ້ຫນີ້ໃຜລັກເອົາ ຕົນກູ້ວ່າຂ້າກູ້ໄວ້ແລ ຜູ້ເຈົ້າຜ້າວ່າ ທ່ານບໍ່ເປັນສິນແລ ວ່າດັ່ງນັ້ນຈຶ່ງພາໄປໄຫວ້ພະເຈົ້າ ພະເຈົ້າວ່າຫາອາບັດບໍ່ໄດ້ ເຫດວ່າທ່ານພິກຂຸຜູ້ກູ້ຍັງບອກດາຍ ໄທຍະຈິດບໍ່ມີແລ ຍັງມີພິກຂຸຕົນໜຶ່ງເຫັນຜ້າອັນລົມຫາກພັດມາຕົກທີ່ອື່ນ ແລເອົາດ້ວຍໃສ່ໃຈວ່າ ແມ່ນຂອງໃຜ ມາກາມຈຶ່ງໃຫ້ທ້ອນຂ່າວເຖິງພະເຈົ້າ ພະເຈົ້າວ່າຫາອາບັດບໍ່ໄດ້ ເຫດວ່າພິກຂຸຕົນນັ້ນ ບໍ່ມີໄທຍະຈິດດາຍ ແມ່ນວ່າທັນໂລກກໍດີເຫັນຂອງທ່ານຫາກເສຍດ້ວຍນ້ຳດ້ວຍໄຟ ດ້ວຍລົມກໍດີແລໄດ້ເອົາໄວ້ ຜີວ່າເຈົ້າຂອງມາກາມຫາແລບອກດ້ວຍຊື່ແທ້ ບໍ່ເປັນສັງ ຄວນບໍຣະນາຄຸນດາຍ ເຫດວ່າກະທຳພຽນອຸດສາຫະຍາກດາຍ.

ຜີວ່າເຮືອຫລົ້ມ ຜູ້ເຈົ້າຂອງວ່າໃຫ້ຊອຍ ເອົາຂອງຜູ້ໄປຊ່ອຍໄດ້ຂອງກໍຄວນບໍຣະນາຄຸນຕາມກາລະແລ ຜີວ່າຜູ້ຊ່ອຍແລມີໃຈໂລບໂລພາແທ້ແລອຳເອົາດັ່ງນັ້ນກໍຄວນໃຫ້ໃຊ້ຂອງເຈົ້າເຮືອເຈົ້າແພນັ້ນແລ ຜູ້ມີປະຫຍາເພິ່ງຮູ້ແລພິຈາລະນາດູ ຕາມວັດຖຸອັນກີກອັນແພງ ອັນນ້ອຍອັນຫລາຍ ຕາມຄຸນແລໂທດເທີ້ນ ເຈົ້າອານົມຢູ່ໃນໂຮງໄຟແລໄດ້ນຸ່ງຜ້າພິກຂຸຕົນໜຶ່ງ ດ້ວຍອັນແປກຜ້າກັນ ເຈົ້າຜ້າວ່າເຈົ້າອານົມລັກນຸ່ງຜ້າຂ້າສັງຈາ ເຈົ້າອານົມກ່າວວ່າ ຂ້າໃສ່ໃຈວ່າຜ້າຂ້າໄດ້ນຸ່ງແລ ເຈົ້າຜ້າວ່າເຈົ້າອານົມນີ້ບໍ່ເປັນສິນແລ ວ່າດັ່ງນັ້ນຈຶ່ງພາກັນໄປຫາພະເຈົ້າ ພະເຈົ້າວ່າ ຫາອາບັດບໍ່ໄດ້ແກ່ເຈົ້າອານົມແລ

ເຫດໃສ່ໃຈວ່າຂອງຕົນ ແລ້ໄດ້ມຸ່ງໄກຍະຈິດບໍ່ມີດາຍ ທັນໂລກແປກ ຂອງກັນຈັກວ່າລັກກໍໄປຂຶ້ນ ບໍ່ຄວນຈັກໃສ່ໂທດແກ່ກັນແລ ນັກປາດຜູ້ ຈັກພິຈາລະນາ ໃຫ້ຮໍາເພິງດູກິດຈະວິໄນພະເຈົ້າຕັ້ງໄວ້ ແກ່ພິກຂຸທັງ ຫລາຍດັ່ງນີ້ຈຶ່ງຊອບແລ.

ຍັງມີພິກຂຸສອງຕົນເປັນສະຫາຍຄຸ້ນເຄີຍກັນ ຕົນໜຶ່ງໄປບິນດິ ບາດຕົນໜຶ່ງຢູ່ວິຫານ ກໍເອົາສ່ວນເຂົ້າຕົນໄປບິນດິບາດນັ້ນ ມາກິນ ດ້ວຍໃສ່ໃຈວ່າ ກູເຄີຍກິນ ຕົນເຈົ້າເຂົ້າວ່າທ່ານບໍ່ເປັນສິນແລ ລວດ ນໍາໄປເຫວ້ພະເຈົ້າ ພະເຈົ້າວ່າ ກໍເອົາດ້ວຍວິສາດຄຸ້ນເຄີຍກັນທາ ອາບັດບໍ່ໄດ້ແລ ທັນໂລກເປັນວິສາດຄຸ້ນເຄີຍກັນແລກິນຂອງກັນ ເອົາ ຂອງກັນກໍດີ ບໍ່ຄວນໃຫ້ເປັນໂທດແກ່ກັນແລ.

ໄນຍະໜຶ່ງ ຄົນຜູ້ໃດກິນເຂົ້າແລແຄ້ນເຂົ້າ ຜູ້ໜຶ່ງມັນໃສ່ໃຈ ວ່າປາກໃຫ້ລົງແລຕົກຫລັງກໍດີ ທີ່ໃດກໍດີ ຄົນແຄ້ນນັ້ນລວດຕາຍເສຍ ດັ່ງນັ້ນຈັກໃສ່ໂທດແກ່ຜູ້ຕີ ກໍບໍ່ຂຶ້ນດາຍ ເຫດວ່າທ່ານບໍ່ໃສ່ໃຈໃຫ້ຕາຍ ແລ ທຽມດັ່ງພິກຂຸຕົນໜຶ່ງກິນເຂົ້າແລແຄ້ນ ຕົນໜຶ່ງໃສ່ໃຈວ່າຈັກໃຫ້ ລົງຕີ ຕົນແຄ້ນລວດຕາຍ ກໍສິນເທລວດໄປເຫວ້ພະເຈົ້າ ພະເຈົ້າວ່າ ຜິມະຣະນະທີບາດບໍ່ມີ ທາອາບັດບໍ່ໄດ້ແກ່ຕົນຕີແລ ເຫດຢາກໃຫ້ ລົງນັ້ນແລ ແມ່ນຜູ້ໃດໃຫ້ຫວ້ານຢາ ແກ່ຜູ້ເປັນພະຍາດ ໃສ່ໃຈວ່າ ຢາກໃຫ້ດີ ຄືໃຫ້ດ້ວຍສຸຈະຣິດ ຢາກໃຫ້ພະຍາດຫາຍແລ ດັ່ງນັ້ນທາ ໂທດບໍ່ໄດ້ແລ ຜູ້ໃດທາກກຸມວ່າເປັນໂທດເປັນຂັນ ດັ່ງນັ້ນຄົນຜູ້ນັ້ນ ຊື່ວ່າອັນທະພານໄປ້ບອດ ບໍ່ຮູ້ຈັກທັມມະຈັກ ແລອານາຈັກສັກອັນແລ.

ຄົນຜູ້ໃດກະທໍາການພາຍບົນ ຜູ້ໜຶ່ງຢູ່ລຸ່ມ ແລະຍື່ນພ້າຂວານ ຜູ້ຢູ່ບົນກໍບໍ່ໝັ້ນ ຫລູດມືກົກຜູ້ຢູ່ລຸ່ມຕາຍ ບໍ່ເປັນໂທດ ເຫດມັນບໍ່ໃສ່ ໃຈໃຫ້ຫລູດມືດາຍ ທຽມດັ່ງພິກຂຸຕົນໜຶ່ງ ຢູ່ໃນເມືອງອາຣະວີກະທໍາ ການ ພິກຂຸຕົນໜຶ່ງຢູ່ລຸ່ມຍື່ນພ້າຂວານໃຫ້ຕົນຢູ່ເທິງກໍບໍ່ໝັ້ນຫລູດມື ຕົກກົກຜູ້ຢູ່ລຸ່ມຕາຍ ຄໍາສິນເທມີລວດໄປເຫວ້ພະເຈົ້າ ພະເຈົ້າວ່າຜິ ວ່າບໍ່ໄດ້ໃສ່ໃຈທາກຫລູດມືກົກ ທາອາບັດບໍ່ໄດ້ ຜິວ່າບໍ່ຕາຍແຕ່ເລືອດ

ຕົກປາງອອກ ຍັງເພິ່ງໃຫ້ສິມມາເປັນເຜີ້ງທຽມ ຢ່າໃຫ້ເປັນຄຳໂທດຄຳຄຽດເປັນເວນແກ່ກັນເທີ້ນ ທົນໂລກກໍດີ ບໍ່ຄວນໃສ່ໂທດເປັນເງິນຄຳ ເທົ່າແຕ່ເປັນການພາຍນອກ ອັນສິມມາຢ່າໃຫ້ຜິດຂ້ອງກັນຫາກຊອບແລ.

ອັນໜຶ່ງຜີໂຈນຫາກລັກຂອງເພິ່ນມາທອດໄວ້ ທີ່ຈື່ມໃກ້ບ້ານໃກ້ເຮືອນຜູ້ໃດ ກໍຍັງຄວນໃຫ້ເຈົ້າບ້ານເຈົ້າເຮືອນທີ່ນັ້ນສະສ່ວຍຕາມກາ–ລະເທສະດາຍ ຈັກວ່າຕູບໍ່ຮູ້ບໍ່ເຫັນບໍ່ຄວນເປັນໂທດເປັນໄພຍຈັກວ່າບໍ່ໄດ້ແລ ທຽມດັ່ງພິກຂຸຕົນໜຶ່ງຢູ່ປະຣິວາສະກັມ ແລມານັດຕະກຳຫຼອນມີພິກຂຸຕົນໃດຕົນໜຶ່ງ ລຸກທີ່ອື່ນມາຢໍາມາທ່ອງທີ່ນັ້ນ ຕົນຢູ່ກຳນັ້ນບໍ່ຮູ້ກໍຍັງເສຍກຳ ພິກຂຸຄືນນັ້ນດ້ວຍຄຳວ່າ ຣັດຕິເສດມີດາຍແມ່ນວ່າບໍ່ຮູ້ກໍຍັງເປັນສັນນັ້ນດາຍ ນັກປາດພິຈາລະນາກ້ອຍຄຳໃຫ້ຮ່ຳເພິ່ງຫາກົດຈະວິໄນຈຶ່ງຊອບ ຜູ້ໃດພິຈາລະນາກ້ອຍຄຳ ແລບໍ່ພິຈາລະນາຫາຄອງທັມມະສາດດັ່ງນັ້ນຊື່ວ່າ ອັນທະພາລະໄປບອດແລ.

ເມຍ 4 ຈຳພວກ

ຈັກກ່າວເມຍສີ່ຈຳພວກ ນັກປາດເພິ່ງຮູ້ເທີ້ນ ສັນທະວາສິນີອັນວ່າເມຍຜູ້ຊື່ວ່າ ສັນທະວາສິນີນັ້ນ ເຫດວ່າມັນຫາກມາຢູ່ດອມຜູ້ຊາຍຕາມສັນທະອັນມັກແຫ່ງມັນ ຜູ້ຊາຍກໍມັກມັນແທ້ ລວດໃຫ້ມັນຢູ່ເປັນເມຍແຫ່ງຕົນ ອະທິບາຍອັນນີ້ຕາມປັດທະພາຊະນີວ່າ ສັນທະວາສິນີ ນາມະ ປີໂຍທທິຍັງ ວາເສຕິ ດັ່ງນີ້.

ເມຍຜູ້ໜຶ່ງຊື່ວ່າ ໂພຄະວາສິນີ ເຫດມັນມາຢູ່ກັບດ້ວຍຜູ້ຊາຍເພື່ອມັນມັກໄຄ່ໄດ້ຍັງວັດຖຸເຂົ້າຂອງບໍຣິໂພກ ອັນເປັນເຄື່ອງເຮືອນມີຄົກແລະສາກເປັນຕົ້ນ ອັນຜູ້ຊາຍຫາກແປງໄວ້ໃຫ້ແກ່ມັນ ຄັນວ່າມັນໄດ້ເຄື່ອງຟູງນັ້ນແລ້ວ ມັນລວດເຂົ້າພາວະອັນເປັນເມຍຈຶ່ງໄດ້ຊື່ວ່າໂພຄະວາສິນີດາຍ ເຫດອັດກະກະຖາວ່າສັນນີ້. ໂພເຄນະ ວະສະຕິຕິ ໂພຄະວາສິນີ ອຸທຸກຂະລະມຸສາວາທີ ຍະຣຸສະທະຣູປະກະ–

ລະຄະນັງ ລະພິຕວາ ພະຣິຍະພາວັງ ຄັດສັນຕິ ຍາຊະປັດທະກິ–ຍາເອວັງ ອະທິວະຈະນັງ ດັ່ງນີ້ແລ.

ປັດຕະວາສິນີ ເມຍຜູ້ໜຶ່ງຊື່ວ່າ ປັດຕະວາສິນີ ເຫດວ່າມັນມາຢູ່ດ້ວຍແຜ່ນຜ້າ ອັນຜູ້ຊາຍຫາກໃຫ້ແກ່ມັນ ຄັນວ່າມັນໄດ້ແລ້ວຍັງແຜ່ນຜ້າ ອັນເປັນຜ້ານຸ່ງກໍດີ ຜ້າຫົ່ມກໍດີ ມັນລວດເຂົ້າສູ່ພາວະອັນເປັນເມຍ ຈິ່ງໄດ້ຊື່ວ່າ ປັດຕະວາສິນີແລ ເຫດອັດຖະກະຖາໄຂວ່າ ປັຕເຕນະ ວະສະຕີຕິ ປັຕຕະວາສິນີ ດັ່ງນີ້.

ໂອທະປັຕຕະກິນີ ເມຍຜູ້ໜຶ່ງຊື່ວ່າ ໂອທະປັດຕະກິນີ ເຫດວ່າຄົນທັງຫລາຍເປັນຕົ້ນວ່າຍາດ ກໍມາແບນມືຂາຜູ້ຍິງຜູ້ຊາຍນັ້ນ ໃນພາຊະນະອັນດຽວກັນ ເລົ່າລວດກ່າວຄຳອັນເປັນມຸງຄຸນສັນນີ້ ນ້ຳໃນພາຊະນະອັນນີ້ ເຈືອກັນເປັນແຫ່ງໜຶ່ງແຫ່ງດຽວ ບໍ່ແຕກບໍ່ມ້າງຈາກກັນດັ່ງຣີ ໃຫ້ເຂືອທັງສອງເຈົ້າຈົ່ງຢ່າໄດ້ມ້າງຈາກກັນ ໂດຍປະການດັ່ງນັ້ນເທີ້ນ ເຂົາລວດກ່າວກອຍຄຳສັນນີ້ ເພື່ອໃຫ້ເປັນມຸງຄຸນດີວິເສດເຫດດັ່ງນັ້ນຈິ່ງໄດ້ຊື່ວ່າ ໂອທະປັຕຕະກິນີແລ.

ທາສີຈະ ພະຣິຍາຈະ ເມຍຜູ້ໜຶ່ງຊື່ວ່າ ທາສີພະຣິຍາ ເຫດວ່າຜູ້ຊາຍຫາກເອົາຂ້າຍິງແຫ່ງຕົນເປັນເມຍ ຈິ່ງໄດ້ຊື່ວ່າ ທາສີພະຣິຍາແລ ເຫດອັດຖະກະຖາວ່າ ທາສີຈາຕິ ອັຕຕະເນຍຍະ ເອວັງດັ່ງນີ້ແລ.

ຣາຊສາດບຸກຄະລະຜູ້ໃດບໍ່ຫ່ຽງ ຈັກໄດ້ໄປສູ່ອະບາຍນະຣົກບໍ່ຄາດຄາແລ.

ກະກຸນ 4 ຈຳພວກ

ສີສະຫວັດດີ ທີ່ນີ້ອາຈານເຈົ້າ ກ່າວຕຳນານນິທານ ມະຄະຣະກັນກິ ດ້ວຍໄນຍະໜຶ່ງອັນມີ ກະກຸນສີ່ຈຳພວກຕາມຊາດແຫ່ງເຂົາ.

ລູກຈຳພວກໜຶ່ງນັ້ນ ພໍ່ກໍ່ຜູ້ດຽວ ແມ່ກໍມີຊາດອັນດຽວແລໄດ້ກ່າວໃນຄາຖາຫ້າ ອັນສຳແດງວ່າລູກຊ່າຍມີສິບສາມ ອະທິບາຍ

ດັ່ງນີ້ເລົ່າ ລ້ຳລູກຊາຍທັງຫລາຍສິບສາມຈຳພວກນີ້ ເມື່ອພໍ່ແມ່ເຈົ້າເຮືອນຍັງມີຊີວິດ ຮັກຜູ້ໃດແລແຈກປັນຂອງໃຫ້ແກ່ເຂົາ ກໍຕາມໃຈຜູ້ພໍ່ຜູ້ແມ່ຫາກໃຫ້ແກ່ເຂົາກໍຫາກແລ້ວ ເມື່ອພໍ່ແມ່ເຂົາແລຕາຍເຊົ້າຂອງພໍ່ແມ່ບໍ່ໄດ້ສັ່ງ ຜິແລມີດັ່ງນັ້ນ ຈັກແຈກປັນດັ່ງຣີ ໃຫ້ແມ່ນທຳມະສາດນີ້ຈາ ມີຄຳສິງໄສດັ່ງນີ້ : – ນັກປາດເພິ່ງຮູ້ ຕາມໃນຍະຄາຖາອັນນີ້ວ່າ ປີນດາທະສະຫະເຣ ເຕສັງ ປຸພພະພາເວ ປະ–ຣັມປະຣາ ນັກປາດເຈົ້າ ຄວນພິຈາລະນາກ້ຳ ລ້ຳລູກສິບສາມນັ້ນ ຜິວ່າລູກກ່ອນ ອັນເປັນໂອຣະສາຊາຕິແລບໍ່ມີດັ່ງນັ້ນ ລູກຊາຍທັງມວນຝູງຫລ້າຝູງລຸມ ກໍຈິ່ງໄດ້ກິນຄົວເຮືອນພໍ່ແມ່ແຫ່ງເຂົາແລ ຜິວ່າລູກກ່ອນແລຍັງມີດັ່ງນັ້ນ ລູກອັນເປັນໂອຣະສາຊາຕິ ຫາກໄດ້ກິນຜູ້ດຽວແລ ລູກຝູງໃດອັນໃຊ່ໂອຣະສາຊາຕິ ບໍ່ໄດ້ກິນຄົວເຮືອນແທ້ດີຫລີແລຊາຕິສະວະຍັງ ປະວັກຂາຕະນະເຍ ສຸປະຍາວິນີຊາໂຕປີ ທາສະ–ລາ ສຸທທັສສະການະຕັງ ສະຫະໂຣ ພະເວ ມະເຕ ປິຕາະຣິກະເຣຍຍະ ພາຕະຣາຕັສສະ ພາວັງ ອະພາຕຸໂກ ທະເຣ ສັພພັງທຸຫິຕະຣະກາ ສຸຕາວັຊເຊ ອະຍັງ ວິທີ ອັນວ່າກິຍາອັນແຕ່ງແປງນີ້ ມະຍາປະວັກຂັງ ເຮົາຫາກໄດ້ກ່າວແລ້ວ ຕະນະເຍສຸ ໃນລູກຊາຍທັງຫລາຍ ປະຫະຊາຕິສຸ ອັນຊາດສະເໝີກັນ ປຸຕໂຕ ອັນວ່າລູກສຸທທັສສະແຫ່ງສຸດທັດສະກະກຸນ ຊາໂຕ ອັນເກີດມາ ທາສະລາແຕ່ຂາຍັງນັ້ນ ອະສັງຫະໂຣ ອັນວ່າເອົາສ່ວນຂອງ ການະໂຕ ຕາມໃຈແຫ່ງພໍ່ແມ່ມັນມັກໃຫ້ ພະເວ ກໍມີແລ ປິຕຣີ ໃນເມື່ອພໍ່ ມະເຕແລຕາຍແລ້ວພາຕະໂຣ ອັນວ່າພີ່ອ້າຍນ້ອງຊາຍອັນເປັນລູກແມ່ຫລວງນັ້ນ ພັນທຸ ອັນວ່າພີ່ນ້ອງອັນເປັນຜູ້ຊາຍເຊື້ອສາຍດຽວກັນກໍດີສິສສາ ອັນວ່າລູກສິດມັນກໍດີ ສະຫະພຣະຫະມະຈາຣີ ອັນວ່າຄົນຜູ້ເປັນກັບດ້ວຍ ພຣົມມະຈາຣີ ກໍດີ ພະເວຍຍຸງ ກໍເພິ່ງມີ ອະພາເວໃນເມື່ອຫາບໍ່ໄດ້ ເຕສັງ ປະຕະນາທີນັງ ລ້ຳເຂົາສິບຈຳພວກມີຕົ້ນວ່າ ປະຕະນີນັ້ນ ປຸພພັສສະ ແຫ່ງອັນລຳດັບຜູ້ກ່ອນນັ້ນ ອຸຕຕະ

ໂຣຕະຣະ ອັນວ່າຄົນລຳດັບຜູ້ລູກນັ້ນ ວະນະພາຄົງ ກໍຈິ່ງໄດ້ກິນ
ເຂົ້າຂອງຄົວເຮືອນນັ້ນ ພະເວ ກໍເພິ່ງມີແລ ອະຍັງ ວິທີ ອັນວ່າ
ແຕ່ງແປງນີ້ ສຸຄະຕັສສະແຫ່ງພໍ່ຜູ້ໄປສູ່ເມືອງຟ້າ ອະປຸຕຕະກັສສະ
ອັນຫາລູກຊາຍບໍ່ໄດ້ນັ້ນ ວິຊາເນຍຍະ ຜີຜູ້ມີພະຫຍາເພິ່ງຮູ້ ສັພ
ພະວັນເນສຸ ໃນວັນນະຊາດທັງຫລາຍທັງມວນນັ້ນແລ ອະທິບາຍ
ວ່າ ຄຳອັນກ່າວແລ້ວແຕ່ພາຍພຸ້ນແລ ອາໄສເຊື້ອຄົນຜູ້ມີລູກຊາຍ
ແລ້ວແລແຈກປັນເຂົ້າຂອງທັງຫລາຍແລ ສະວິຕະກັມມະກາຣິໂນ
ອະຍັດຕະຄາລັມພຸຕຕຣະ ທະເວ ທຣັພຍະ ນະ ໂຈເທຍຍະ
ມະເຕ ປິຕະປຸຕຕະໂກ ຍັທຍັຕກິຄຸມຸປປະກາຣາ ເອກະ ພາຄົງ ປິ
ຕາທັສສິ ສັສສຸທິນັງ ລັພເພຍຍະ ອະຄຸເນ ກຸປປະທຸປປະທັງ ເອ–
ກະພາວັງ ສັນເດຄະຕາ ອະຍັງວຸຕຕິ ທັມມະຕາຍະ ກັມມະກາຣິ–
ຍະ ປຸພພະໂຕ ນະ ວິເສຍໂຍ ອັນເຍຕຕະຣັງ ປັຈເຈເກ ອິຕຕະ–
ໂຣ ສັພພິ ມະເຕ ທະເວ ສັພພະສາທະວະເຣ ປຸຕຕະຍາຕິ ຈະ
ຍະກາປໂປ ປຸຕຕາ. ອັນວ່າລູກຊາຍທັງຫລາຍ ສະຕິປິຕະກັມມະ–
ກາຣິໂນ ອັນມີການເມືອງກັບພໍ່ອັນຍັຕຣະຄາຣັງ ອັນສ້າງເຮືອນກິນ
ຕ່າງລັທເທທຣັພຍະ ໃນເມື່ອຂາຜົວເມຍຫາກໄດ້ເຂົ້າຂອງ ນະໂຈ–
ເທຍຍະ ບໍ່ເພິ່ງໂຈດກາມເອົາດອມຂາຜົວເມຍ ມະເຕ ໃນເມື່ອລູກ
ຊາຍແລຕາຍ ປຸຕຕະໂກ ອັນວ່າແຮງແຫ່ງລູກ ປິຕັສສະ ຄວນໄດ້
ພໍ່ກິນແຮງລູກຊາຍຕົນ ຄຸມຸປປະຄາຣາ ອັນວ່າ ກິຍາອັນກະທຳເປັນ
ຄຸນຍັທທະຍັຕກິ ຜີຍັງມີແກ່ພໍ່ ປິຕາທາສິ ຄວນໃຫ້ພໍ່ກິນ ເອກັງ
ພາຄົງ ຍັງສ່ວນແຮງພູດໜຶ່ງ ທະວິນນະລັພພະເຣ ເພິ່ງໃຫ້ສອງ
ພູດສັປປຸນັງ ແກ່ລູກສະໃພ້ ອະຄຸເນກັປປະທຸປປະກັງ ໃນຄຸນບໍ່ມີແກ່
ພໍ່ກໍຄວນໄດ້ກິນແລເຖິງແລເຖິງຊູ່ຄົນ ສັນເດຕະຕາ ໃນເມື່ອລູກໃພ້
ແລໜີຈາກທີ່ ເອກັງ ພາຄົງ ໄດ້ກິນສ່ວນອັນໜຶ່ງ ອະຍັງ ອັນວ່າ
ອັນນີ້ ທັມມະຕາ ຍັງເປັນສ່ວນພາວະທັມມະຍັຕຕິໃນຄອງ ກັມມະ
ກາຣິຍະປຸພພະໂຕ ແຫ່ງຜູ້ຮັບການເມືອງແຕ່ກ່ອນພຸ້ນມາແລ ປຸຕ–

ໂຕ ອັນວ່າລູກ ນະວິເສໂສ ອັນບໍ່ເປັນວິເສດ ດ້ວຍການເມືອງກັບ ຕົນ ອັນເຍຕຣະ ຫາກເປັນອັນຕ່າງ ຄະປະເວໂກ ອັນວ່າລູກຜູ້ຮັບ ການເມືອງຫາກກັບຕົນຕາງພໍ່ແມ່ນັ້ນ ມະເຕ ແລຕາຍ ອິຕໂຣ ອັນວ່າລູກຜູ້ມີຊີວິດ ຄືເມຍລູກຊາຍຜູ້ການເມືອງກັບວິເສດ ທາສະມິ-ກັງເປັນເຈົ້າແຫ່ງເຈົ້າຂອງນັ້ນແລ ທະເວ ໃນເມືອຂາຜົວເມຍ ມະ ເຕ ຕາຍເສຍ ສັພພະສາທະເຣ ມັກວ່າ ສັພພະທາຣະນິເຍ ເຂົ້າ ຂອງທັງມວນແຫ່ງຂາຜົວເມຍນັ້ນ ກໍເປັນສາທາຣະນະທົ່ວໄປຊູ່ຄົນ ສັງວິພາຄະຍະ ເພິງແຈກ ທະເວໂກ ອະໂທ ສ່ວນໜຶ່ງກໍດີ ສອງ ສ່ວນກໍດີ ປຸຕາະຍາຕິຈະ ແກ່ລູກກໍດີ ແລຍາຕິຜົ່າພົງວົງສາເຊື້ອ ແນວແກາວໂຄດແຫ່ງຂາຜົວເມຍ ຍະຖາປໂປ ໂດຍປະໂຫຍກອັນ ເປັນເຊື້ອຊາດພົງສານັ້ນແລ.

ອະທິບາຍໃນຄາຖາສີອັນນີ້ ໃນຄາຖາບົດຕົ້ນນັ້ນວ່າ ລູກຊາຍ ອັນເປັນກັບພໍ່ໄປ່ວິເສດມີການເມືອງກັບພໍ່ຕົນ ລູກຊາຍຜູ້ນັ້ນມີເມຍຂາ ຫາກເຮັດກິນຕ່າງພໍ່ ຍັງໄດ້ວັດຖຸເຂົ້າຂອງເງິນຄຳ ພໍ່ແມ່ຈັກເອົາ ດອມຂາບໍ່ໄດ້ ເມື່ອລູກຜູ້ນັ້ນຕາຍ ແຮງລູກອັນສ້າງໄດ້ນັ້ນ ໃຫ້ຜູ້ພໍ່ ໄດ້ກິນ ອະທິບາຍໃນຄາຖາບົດກ້ວນສອງນັ້ນວ່າ ຜີວ່າ ຜູ້ລູກຊາຍ ນັ້ນຍັງກະທຳເປັນຄຸນແກ່ພໍ່ ເປັນຜູ້ຄ້ຳການເມືອງມີຕົ້ນວ່າ ຍັງໄດ້ ຮັບພໍ່ແລເຂົ້າຂອງເປັນເຄື່ອງບໍຣະໂພກດັ່ງນັ້ນ ໃຫ້ແກ່ຜູ້ໄດ້ກິນສ່ວນ ໜຶ່ງ ແກ່ລູກສະໃພ້ສອງສ່ວນ ຜີລູກຊາຍຜູ້ນັ້ນ ຍັງກະທຳເປັນຄຸນ ແກ່ພໍ່ ມັນຫາກໄປຂົນຂວາຍກິນໄດ້ບໍ່ມາລ້ຽງພໍ່ ຜີແລມີດັ່ງນັ້ນ ວັດ ຖຸອັນຂາສ້າງໄດ້ນອກເຮືອນພໍ່ນັ້ນ ໃຫ້ພໍ່ມັນເຄິ່ງໜຶ່ງ ໄວ້ແກ່ລູກໃພ້ ກິນເຄິ່ງໜຶ່ງ ຜີລູກສະໃພ້ໜີເສຍຈາກທີ່ພໍ່ຜົວ ໃຫ້ລູກສະໃພ້ກິນສ່ວນ ໜຶ່ງ ຍັງມີລູກດອມກັນໃຫ້ໄວ້ທີ່ກັບທ່ານ ເຂົ້າຂອງແຕ່ພໍ່ເຂົາໃຫ້ໄວ້ ແກ່ລູກສອງສ່ວນ ຜີບໍ່ມີລູກໃຫ້ໄວ້ແກ່ພໍ່ມັນກິນແຮງລູກຊາຍມັນ ລູກ ຊາຍລົງສ້າງເຮືອນ ກິນຕ່າງນອກເຮືອນ ພໍ່ຫາກຄ້ຳການເມືອງໃຫ້ ແຕ່ງສັນນີ້ ຫາກເປັນທັມມະດາແຫ່ງລູກຊາຍ ອັນໄປ່ມີການວິເສດ

ກັບຕົນ ມັນລົງສ້າງເຮືອນກິນນອກເຮືອນ ພໍ່ຫາກຄ້ຳການເມືອງ ຜີລູກຫາກມີເສັ້ນການເມືອງນອກພໍ່ ແລລົງສ້າງເຮືອນກິນດັ່ງນັ້ນ ເມື່ອມັນຕາຍ ເມຍມັນໄດ້ກິນຄົວທັງມວນກ່ອນ ຜີຜູ້ເມຍຕາຍເສຍ ລູກຍິງຍັງມີໃຫ້ມັນໄດ້ກິນຄົວແມ່ມັນ ຜູ້ຍິງນັ້ນບໍ່ມີຫລານຊາຍ ມັນຜູ້ເປັນລູກແຫ່ງພີ່ຊາຍ ນ້ອງຊາຍມັນໄດ້ກິນຄົວມັນ ຜີຫລານສອງຈຳພວກນັ້ນບໍ່ມີ ພີ່ນ້ອງຍາຕິກາເຜົ່າພົງວົງສາ ອັນສືບສາຍກະກຸນອັນດຽວແຫ່ງມັນຜູ້ຕາຍນັ້ນໄດ້ກິນຄົວມັນແລ ຜີພີ່ນ້ອງວົງສາຜູ້ເປັນຍິງນັ້ນບໍ່ມີ ລູກສິດອັນມາຮຽນສາຕສິນດອນ ແລໄດ້ຮັກເອົາເປັນລູກ ລູກສິດນັ້ນກິນຄົວມັນ ຜີລູກສິດນັ້ນບໍ່ມີ ສະພົມມະຈາຣີອັນເປັນລູກຊາຍຄື ຄົນຜູ້ເປັນຄູໃຫ້ທຳບຸນຟັງທຳຈຳສິນ ສັ່ງສອນມັນໄດ້ກິນຄົວເຮືອນມັນແລ.

ປະການໜຶ່ງ ຜູ້ໃດອັນແມ່ເຈົ້າເຮືອນ ອັນຫາລູກຜູ້ຍິງບໍ່ໄດ້ແລຕາຍໄປນັ້ນ ຊາຍຜູ້ເປັນຜົວເມື່ອລຸນນັ້ນ ກໍໄດ້ກິນຄົວມັນແລ ຜີມັນບໍ່ມີລູກຊາຍ ຜູ້ເປັນນ້ອງແຫ່ງຍິງຜູ້ນັ້ນ ອັນເປັນແມ່ດຽວກັນກໍໄດ້ກິນຄົວຜູ້ລູກຊາຍກໍມີ ແມ່ມັນກໍໄດ້ກິນຄົວແລ ຜີແມ່ມັນບໍ່ມີນ້ອງຍິງມັນອັນສ້າງເຮືອນກິນນອກເຮືອນ ກໍໄດ້ກິນຄົວມັນແລ ຜີພີ່ນ້ອງຍິງມັນບໍ່ມີ ຫລານຄິງມັນອັນເກີດນອກເຮືອນ ຄວນກິນຄົວມັນແລ ຜີຫຼານຄິງຜູ້ເປັນດັ່ງນັ້ນບໍ່ມີ ລູກສິດມັນໄດ້ກິນຄົວມັນ ຮັບການສິ່ງໃດ ກໍໃຫ້ຜູ້ໄດ້ກິນມັນຮັບການສິ່ງນັ້ນ ຫາກບໍ່ມີເຊື້ອແນວແກາວພັນ ຍາດພີ່ນ້ອງມັນສຸດສູງເສຍ ຄົວມັນທັງມວນຄວນຂຶ້ນເລັ້ມສາງທ້າວພະຍາມະຫາກະສັດເກິ່ງໜຶ່ງ ໃຫ້ກະທຳບຸນໃຫ້ທານຫາມັນເກິ່ງໜຶ່ງ ຜີເຊັ່ນການເມືອງກັບໃຫ້ລຶບເສຍເຫິ້ນ ແຕ່ງເປັນສັນນີໄດຍຕາມລຳດັບກະກຸນ ມັກປາດກໍເພິ່ງແຕ່ງຕາມ ວັນນະຊາດສີ່ຈຳພວກນັ້ນແລດ້ວຍແທ້ຊາຍຜູ້ໄປສູ່ທີ່ຜູ້ຍິງ ບໍ່ຂາດເຊັ່ນການເມືອງກໍດີ ເມື່ອສ້າງເຮືອນບໍ່ຮອດ ບໍ່ຂາດຢ່າກັນຂອງສ້າງໄດ້ໃຫ້ປັນຕາມດັ່ງໄດ້ວັນມາໃນຄາຖາກ່າວແລ້ວໃນພາຍຫຼັງພຸນເຫິ້ນ ຜີມີລູກກໍໃຫ້ແກ່ຜູ້ສູ່ພູດໜຶ່ງ ໄດ້

ແກ່ເຈົ້າທີ່ສອງພູດ ຜິຜູ້ຊາຍຕາຍກ່ອນຍັງມີລູກຍິງຊາຍໃຫ້ປັນຜູ້ຕົ້ນ
ມາກ້ຳພໍ່ຜູ້ໜຶ່ງລ້ຳນັ້ນໃຫ້ໄວ້ກ້ຳແມ່ ພູດຂອງອັນຂາສ້າງໄດ້ ໃຫ້ປັນ
ມາແກ່ລູກຜູ້ມາກ້ຳກະກຸນພໍ່ສ່ວນໜຶ່ງ ຕາມດັ່ງຂາຈັກຮ້າງຢ່າກັນນັ້ນ
ຜິພໍ່ມັນບໍ່ໃສ່ໃຈສ້າງເຮືອນ ຂີ້ຄ້ານມັກງ່າຍ ຜິນອັນມີຍອມຜູ້ຍິງໃຫ້
ປັນມາແກ່ລູກ ອັນຕົກກ້ຳກະກຸນພໍ່ນັ້ນເຄິ່ງສ່ວນ ອັນກ້ອນສາມນັ້ນ
ເຫດພໍ່ມັນຫາກຄ້ານສ້າງເຮືອນດາຍ ອັນໜຶ່ງເມື່ອຂາຢ່າກັນ ໃຫ້ພິ-
ຈາລະນາດູເງິນຄຳໝາຍ ຫາກບໍ່ມີທີ່ນັບວ່າສູ່ເປົ່າດາຍ ແມ່ນມັນ
ມີລູກຍິງຊາຍຈິ່ມກັນພໍສີ່ພໍຫ້າ ຈັກໃຫ້ປັນແກ່ມັນຜູ້ໜຶ່ງ ເປັນດັ່ງຂອງ
ອັນສ້າງໄດ້ໃໝ່ຈິ່ງປັນໃຫ້ ແຕ່ງຕາມອັນໃສ່ໃຈສ້າງເຮືອນ ແລບໍ່ໃສ່
ໃຈສ້າງນັ້ນ ຂອງເມຍແຕ່ຫລັງກໍດີ ຂອງຜົວແຕ່ຫລັງກໍດີ ຫາກຊື້ສູ່
ກັນກິນສ້ຽງກໍຫາກແລ້ວແລ ຜິໜີ້ຫລັງຂອງຜົວມີເມຍເອົາໄປໃຊ້ຕາງ
ກໍດີ ໜີ້ແຕ່ຫລັງເມຍມີຜົວເອົາຂອງຫລັງໄປໃຊ້ຕາງກໍດີ ເມື່ອຂາຢ່າ
ກັນ ຂອງໃຜໃຫ້ໃຊ້ແທນທ່ານ ຜິປ່ອຍເຈັບໄຂ້ເອົາໄປເຢົາຢາກັນ
ຫາກແລ້ວ ຢ່າກາມເອົາເທີ້ນ ຜິສູ່ບໍ່ຂາດເມຍມັນຕາຍ ຜູ້ຊາຍຈະ
ຄືນຫາກະກຸນຕົນ ມີລູກຫລາຍໃຫ້ເອົາລູກຜູ້ຕົ້ນໜີຜູ້ໜຶ່ງ ຂາສ້າງ
ເຮືອນໄດ້ດອມກັນ ມັນໄດ້ກ່ອງໜຶ່ງ ຜິສູ່ຂາດເມຍຕາຍແລຈັກຄືນ
ຫາກະກຸນຫລັງຂອງຂາສ້າງໄດ້ສ່ວນໜຶ່ງ ຜິບໍ່ໃສ່ໃຈສ້າງໄດ້ເຄິ່ງສ່ວນ
ໜຶ່ງອັນກ້ອນສາມນັ້ນເທີ້ນ ຜິວ່າມີລູກໄວ້ກັບທີ່ທັງມວນ ຜິຜູ້ຊາຍຊື້
ເອົາເມຍຂາດ ຜິຜົວຕາຍແລຈັກຄືນຫາກະກຸນຄືນ ກໍໃຫ້ແຕ່ງສົນ
ດຽວດັ່ງຜູ້ຊາຍສູ່ຂາດນັ້ນເທີ້ນ ຜິຊື້ເມຍມາເຮືອນແທ້ທໍ່ບໍ່ກ້ອນ ຜິ
ເຈົ້າມູນຜູ້ຍິງບໍ່ໂຈດກໍຫາກແລ້ວ ຜິໂຈດຊື່ວ່າເອົາຄົວທ່ານບໍ່ຂາດແລ
ເມື່ອຈັກແຈກປັນລູກໃຫ້ເອົາສິນຊື້ນັ້ນເປັນປະມານ ຜິສິນຊື້ຫລາຍນັກ
ໃຫ້ແຈກຕາມສິນຊື້ ຜິສິນຊື້ນັ້ນເຄິ່ງຄ່າ ກໍໃຫ້ແຕ່ເຄິ່ງ ແມ່ນຂອງ
ຂາສ້າງໄດ້ດອມກັນໃໝ່ກໍດີ ຜິເຈົ້າມູນສາມີໂຈດກິນ ຄຳອັນໄດ້ໃຫ້
ແຕ່ງຕາມສິນຊື້ອັນນ້ອຍນັ້ນ ຄັນໃຫ້ສິນຊື້ບໍ່ກ້ອນນັ້ນ ຢ່າໃຫ້ເຈົ້າ
ມູນສາມີຄິດເອົາຄ່າຊ້ຳນັ້ນ ບໍ່ຄວນແລ ຜິຍິງຜູ້ອັນຊື້ຂາດກໍດີ ເສຍ

ຄ່າບໍ່ກ້ວນກໍດີ ເມື່ອຂາຍ່າກັນ ຈັກຄືນຫາມູນຕົນ ຍັງມີລູກແລຄົນ
ໃຫຜ່ອນສິນຊື້ຫ້າສິບເກິ່ງ ຜີບໍ່ມີລູກສາມປີໃຫ້ຫ້າສິບໃຫ້ເກິ່ງ ສັນນີ້
ຊອບຄອງທຳນັ້ນແລ ແຕ່ງດັ່ງກ່າວ ດ້ວຍສອງສ້າງເຮືອນກິນຕ່າງ
ຫາກພໍ່ແມ່ນັ້ນ ຜີຊື້ຜູ້ເມຍຂາດກໍດີ ໄປສູ່ຜູ້ຍິງ ຜູ້ຍິງປູ່ກາງເຮືອນພໍ່
ແມ່ ເຂົາເບັຍອັນໃດພໍ່ແມ່ເຂົາກໍເອົາສ້ຽງແລ ເມື່ອພໍ່ແມ່ໃຫ້ເຂົ້າ
ຂອງລົງສ້າງເຮືອນນອກເຮືອນ ພໍ່ແມ່ຈັກໃຫ້ກໍຈິ່ງໄດ້ ບໍ່ໃຫ້ກໍບໍ່ໄດ້ແລ
ຂອງອັນລູກໄດ້ມານັ້ນ ພໍ່ແມ່ເຂົາເມື່ອຈັກໃກ້ຕາຍ ມັນຈັກໃຫ້ແກ່ຜູ້
ໃດຜູ້ໜຶ່ງຕາມໃຈມັນແລ ຜີວ່າພໍ່ແມ່ເຂົາຈັກຕາຍແລ ບໍ່ແຈກບໍ່ປັນ
ແກ່ລູກຜູ້ໃດດັ່ງນັ້ນ ເພິ່ງເອົາມາແຈກລູກ ຜູ້ໃດໄດ້ຍັງວັດຖຸສິ່ງໃດມາ
ກໍດີບໍ່ຄວນວ່າ ວັດຖຸອັນນີ້ກູຫາກໄດ້ ກູຈັກເອົາແລ ບໍ່ຄວນວ່າ ເຫດ
ໄດ້ມາຕົກເຮືອນພໍ່ແມ່ ກໍເປັນຂອງແຫ່ງພໍ່ແຫ່ງແມ່ມັນສ້ຽງ ພໍ່ແມ່
ກໍຄວນປັນຂອງພໍ່ແມ່ແຈກປັນທົ່ວໄປແກ່ລູກທັງຫລາຍຊູ່ຄົນແລ ເມື່ອ
ພໍ່ແມ່ເຂົາຕາຍແລສັ່ງໃຫ້ແກ່ລູກຜູ້ໃດວັດຖຸອັນນັ້ນມາ ຂອງອັນມີວິນ
ຍານກໍດີ ບໍ່ມີວິນຍານກໍດີ ບໍ່ຄວນວ່າຂອງກູ ກູຫາກໄດ້ ກູຈັກເອົາເດ
ບໍ່ຄວນວ່າແລພໍ່ແມ່ໃຫ້ຂອງໄດ້ມາຕົກເຮືອນນັ້ນແກ່ຜູ້ໃດ ກໍຕາມໃຈ
ມັກແລ ນັກປາດກໍເພິ່ງຮູ້ຕາມຄາຖາອັນນີ້ວ່າ ມະຫິປະຕະລະສາຄະ
ຣາປັພພະໂຕ ສິເນຣຸ ພາໂຣ ນັຕເກວະ ມາຕະຣາປິຕຸມະຫັນຕາ
ຄິວະນຸປະກາປະຕະຄະໂຕ ທຣັພຍະລັພພະ ມາຕະຣາປິຕຸສສະ ອະ
ຫານັຕເກວະ ຄຸນຸສະທິໂສ ຕັສມາທຣັພຍະ ນະ ພະຣູ ມະມະ
ມະຫິປະຕະລະສາຄະຣາ ອັນວ່າພື້ນແຜ່ນດິນ ແລນ້ຳສະໝຸດກໍດີ
ປັພພໂຕ ສິເນຣຸ ອັນວ່າເຂົາສະເໝນແລພູດອຍກໍດີ ພາໂຣວ່າໜັກ
ນັຕເກວະ ຫາບໍ່ໄດ້ສິ່ງດຽວມາຕະຣາປິຕຸ ອັນວ່າພໍ່ແລແມ່ ມະຫັນ
ຕາຄຸນຸປະກາຣາ ອັນເປັນຄຸນອັນຍິ່ງກວ່າແຜ່ນດິນ ແລນ້ຳສະໝຸດ
ແລ ເຂົາສະເໝນນັ້ນ ຕປຸຕຕາ ອັນວ່າລູກທັງຫລາຍ ອັນພໍ່ແມ່
ຫາກລ້ຽງແຕ່ທ້ອງນັ້ນ ລັພພະ ນັກວ່າ ລັພພາປິ ແມ່ນວ່າໄດ້ກໍດີ
ທຣັພຍັງ ຍັງເຂົ້າຂອງເງິນຄຳ ປະຕະລະໂຕ ແຕ່ພື້ນແຜ່ນດິນທັງ

ມວນອະທາ ກໍໃຫ້ ມາຕະຣາປິຕຸສສະ ແກ່ພໍ່ແມ່ແຫ່ງຕົນ ຄຸນະສະທິໂສ ແລຈັກສະເໜີດ້ວງຄຸນພໍ່ແມ່ ນັຕກິເອວະ ຫາບໍ່ໄດ້ສິ່ງດຽວຕັສມາ ທຣັພເຍ ເຫດດັ່ງນັ້ນໃນເມື່ອລູກໄດ້ເຂົ້າຂອງແຕ່ພື້ນແຜ່ນດິນທັງມວນ ມາໄວ້ໃນເຮືອນແຫ່ງພໍ່ແມ່ ນະພະຣູ ບໍ່ເພິ່ງກ່າວຫວງເອົາ ມະມະ ມັກວ່າ ມະມະສັນຕະກັງວ່າເປັນຂອງກູ ກູຫາກໄດ້ແລ ກິຍາ ອັນແຕ່ງແປງດັ່ງນີ້ ກໍເປັນທັມມະສາດ ແມ່ນຄອງປະເວນີມະຫາສຳມຸດຕິເທວະຣາດເຈົ້າຕັ້ງແຕ່ງໄວ້ແລ.

ຜົວເມຍມີການເມືອງກັບຕົນ

ກົດນີ້ຈາຫອງຜົວເມຍ ອັນມີເຊັ່ນການເມືອງກັບຕົນ ອັນວິເສດຫາກເປັນໃຫຍ່ ອັນຮັບການເມືອງບໍ່ເຈືອກັບພໍ່ແມ່ນັ້ນ ເມື່ອສອງຜົວເມຍຫາກສ້າງເຮືອນກິນ ແລຮັບການເມືອງຕ່າງພໍ່ແມ່ ຜູ້ໜຶ່ງແລຕາຍເສຍດັ່ງນັ້ນ ເຂົ້າຂອງຈັກຄວນແຕ່ງດັ່ງຣືຈາ? ເພິ່ງຮູ້ຕາມໄນຍະດັ່ງນີ້ : – ທົມມະທຣັພຍັງ ສັມກາປິຕັງ ອະວິພັຕເຕ ກັສມິງມະເຕ ອິຕໂຣ ສາມີ ທຣັພເຍ ອັນເຍສັງ ການະໂຕ ທຣັພເຍທຣັພຍັງ ຫວິມນັງ ແຫ່ງປຸກຄະລະສອງຄົນ ຄືສອງຜົວເມຍອັນມີການກັບດ້ວຍຕົນ ແລກະທຳເຮືອນກິນຕ່າງພໍ່ແມ່ ສັມກາປິຕັງ ອັນຕັ້ງໄວ້ສັງຣອມທີ່ດຽວກັນ ອະວິພັຕຕັງ ອັນບໍ່ແຈກປັນກັນ ເອກັສສະສັມໂພຄັຕຕາ ເຫດພາວະແຫ່ງຂາຜົວເມຍທັງສອງ ບໍຣະໂພກເປັນອັນດຽວດອມກັນ ເອກັສມິງ ໃນເມື່ອຜູ້ໜຶ່ງ ມະເຕ ແລຕາຍແລ້ວອິຕໂຣ ອັນວ່າ ຜູ້ມີຊີວິດແລຕັ້ງຢູ່ນັ້ນ ສາມີກໍເປັນເຈົ້າເປັນໃຫຍ່ຫອມຫຍັບ ຕະຣະທຣັພເຍ ມັກວ່າ ຕັສມິງ ທຣັພເຍ ໃນຂອງອັນນັ້ນແລ ໂສ ປຸຄຄະໂລ ອັນວ່າບຸກຄະລະຜູ້ນັ້ນ ເປັນເຈົ້າຂອງພາຍລຸມຜູ້ຕາຍນັ້ນ ທະເທຍຍະ ຄວນຈັກໃຫ້ ອັນເຍສັງ ແກ່ຜູ້ອື່ນ ການະໂຕ ຕາມຄຳມັກມັນຈັກໃຫ້ແລ. ອະທິບາຍ ມັກວ່າ ສອງຜົວເມຍອັນມີການເມືອງກັບຕົນດ້ວຍອັນວິເສດ ຫາກສ້າງເຮືອນກິນດອມກັນຕ່າງພໍ່ແມ່ ມັນໄດ້ຍັງທັບພະສິນບັດເຂົ້າຂອງຫອມຫຍັບທີ່ໜຶ່ງທີ່

ດຽວກັນ ບໍ່ໄດ້ປັນກັນດ້ວຍຄຳວ່າ ອັນນີ້ເປັນຂອງແຫ່ງຜົວ ອັນນີ້ເປັນຂອງແຫ່ງເມຍດັ່ງນັ້ນ ເມື່ອຜູ້ເມຍຕາຍກ່ອນ ເຂົ້າຂອງຝູງນັ້ນເປັນເຂົ້າຂອງຜົວທັງມວນຜູ້ດຽວແລ ຜີຜົວຕາຍກ່ອນຂອງຝູງນັ້ນກໍເປັນເຂົ້າຂອງເມຍທັງມວນ ຈັກບໍ່ເປັນແຈກໃຫ້ຜູ້ໃດ ຄືວ່າ ຜູ້ລູກຫລານເຜົ່າພົງສາກ້ຳຜົວກໍດີ ກ້ຳຕົນມັນກໍດີ ເຫດມັນເປັນ ພັນດະສາມີກະແລ້ວດາຍ ໄນຍະໜຶ່ງ ຜີວ່າຜົວເມຍສາງໄດ້ດອມກັນແຫ້ຍັງພິຊະໝາຍວ່າລູກຍິງທັງຫຼາຍ ກໍໄປ່ໄດ້ສ່ວນອັນແຈກຂອງພໍ່ແຫ່ງເຂົາ ເມື່ອໃດແມ່ຕາຍຝູງລູກຍິງທັງຫລາຍ ເຂົາກໍໄດ້ກິນຄົວແມ່ເຂົາຕາມອັນລຳດັບ ລູກຍິງຜູ້ພີ່ກະທຳສະເໝີດັ່ງແມ່ ຜີລູກຍິງຊາຍຝູງນັ້ນເຂົາຊະນະກ້ອຍຄວາມດ້ວຍຄຳວ່າ ເມຍເຈົ້າເປັນພີ່ນ້ອງຕູ ເຂົ້າຂອງເມຍເຈົ້ານັ້ນ ຕູຈັກເອົາວ່າອັນ ກໍບໍ່ຄວນໃຫ້ໄດ້ ແມ່ນຜົວຕາຍກ່ອນ ພີ່ນ້ອງກ້ຳຜົວກໍບໍ່ຄວນໄດ້ສິ່ງດຽວນັ້ນແລ ດີທີ່ພໍຂ່າວ ມູນວົງສາເຂົາກໍໄດ້ພໍ່ນັ້ນ ຢ່າໃຫ້ຂາດເຊື້ອແນວແກວເຄືອກັນ ອັນນີ້ ກໍຫາກເປັນຄອງແຕ່ປຸບພະປະເວນີມາແລ.

ອັສສະ ບັສສະ ວະນະນາມາ ຕຸໂສ ທະຣັສສະ ຕຸໂສ ທະຣະທາ ມິຕຣາ ປະຫະເຣ ອະສັງ ກິຕັສສະ ກະວະມະຕະຈະນານາມາຕຸປຸຕຕາ ອັນວ່າລູກອັນເກີດມາຕ່າງແມ່ນັ້ນ ທະທາຕິກໍຄວນໃຫ້ ອະສັງ ບັງສ່ວນຂອງອັນພໍ່ຫາກກົດໝາຍໄວ້ນັ້ນ ກິຕັສ-ສະຈະອັນຍັສສະ ຈະ ແກ່ລູກຜູ້ຍັງມີຊີວິດແລມີແມ່ອັນຕ່າງກັນນັ້ນຈະ ປະການໜຶ່ງ ນານາມາຕຸ ອັນວ່າລູກອັນຕ່າງແມ່ນັ້ນ ອະປະຫະເຣກໍຄວນເອົາໄປ ອະສັງ ບັງສ່ວນຂອງ ມະຕັສສະ ຈະ ແຫ່ງລູກຜູ້ຕ່າງແມ່ອັນຕາຍແລ້ວນັ້ນ ໂສ ທະນະປຸຕໂຕ ອັນວ່າລູກອັນຮ່ວມແມ່ດຽວ ທະທາຕິກໍຄວນໃຫ້ ອະສັງ ບັງສ່ວນຂອງອັນພໍ່ຫາກກົດໝາຍໄວ້ນັ້ນ ກິຕັສສະ ໂສທະຣັສສະ ແກ່ລູກຜູ້ຮ່ວມແມ່ດຽວອັນຍັງມີຊີວິດນັ້ນ ຕຸປະການໜຶ່ງເລົ່າ ໂສທະຣະປຸຕໂຕ ອັນວ່າລູກຜູ້ຮ່ວມແມ່ດຽວກັນນັ້ນ ອະປະຫະເຣ ກໍຄວນນຳເອົາໄປ ອະສັງ

ບັງສ່ວນຂອງ ມະຕັສສະຈະ ໂສຣັສສະ ຈະ ແຫ່ງລູກຜູ້ຮ່ວມແມ່ດຽວກັນ ອັນຕາຍແລ້ວນັ້ນ.

ອະທິບາຍດັ່ງນີ້ ຂອງອັນໃດເມື່ອພໍ່ຍັງມີຊີວິດ ພໍ່ມັນໃຫ້ແກ່ລູກແລ້ວ ຂອງອັນນັ້ນ ລູກທັງຫລາຍ ກໍເອົາສ່ວນພູດຂອງເຂົາໄປແລ້ວ ແລຂອງອັນໃດ ອັນພໍ່ຫາກກົດໝາຍປັນໃຫ້ລູກທັງຫລາຍແຕ່ເມື່ອຍັງມີຊີວິດນັ້ນ ລູກຫງັ່ມວນບາງຜ່ອງຍັງນ້ອຍ ບໍ່ມີຂອງນັ້ນອັນພໍ່ປັນໃຫ້ ກໍຍັງໄດ້ພູດແຫ່ງພໍ່ດັ່ງນັ້ນ ເມື່ອພໍ່ເຂົາຕາຍລູກຝູງນັ້ນ ອັນມີພໍ່ຜູ້ດຽວແລຕ່າງແມ່ກໍດີ ມີພໍ່ຜູ້ດຽວມີແມ່ຜູ້ດຽວກໍດີ ເມື່ອພໍ່ເຂົາແລຕາຍໄປດັ່ງນັ້ນ ລູກທັງຫລາຍມວນ ອັນເຂົ້າຂອງຂອຍຄົນແຕ່ຫລັງຫາກກົດໝາຍ ປັນໃຫ້ໄວ້ແກ່ລູກຜູ້ໃດ ກໍຄວນປັນໃຫ້ຕາມຄຳພໍ່ເຂົາໃຫ້ນັ້ນຢ່າມ້າງເທີ້ນ ຕຸປະການໜຶ່ງໂສດ ນານາມາຕຸ ອັນວ່າລູກອັນມີແມ່ຕ່າງ ຄືວ່າເອົາແມ່ຜູ້ກ່ອນແລມີລູກດອມຜູ້ກ່ອນແລ້ວ ເມື່ອແມ່ມັນຕາຍ ໄດ້ກົດໝາຍເຂົ້າຂອງຂ້າຄົນໄວ້ ກັບລູກຕົນແລ້ວແລຕາຍໄປ ຂອງຝູງນັ້ນພໍ່ມັນກໍຍັງເກັບຫອມໄວ້ ພໍ່ມັນເອົາເມຍຜູ້ລຸນພອຍມີລູກດອມເມຍ ລູກຜູ້ໜຶ່ງກໍດີ ສອງຄົນກໍດີ ຜູ້ພໍ່ຮູ້ຈັກມີຊີວິດໃກ້ຕາຍ ເມື່ອລຸນບໍ່ຄວນເອົາຂອງເມຍຜູ້ກ່ອນ ອັນຈັກຕາຍແລກົດໝາຍໄວ້ແກ່ລູກຕົນມັນ ຜູ້ເມຍຜູ້ກ່ອນນັ້ນ ຂອງອັນນັ້ນກໍໃຫ້ໄວ້ແກ່ລູກຜູ້ນັ້ນພໍ່ມັນບໍ່ຄວນມ້າງໄດ້ແລ ຜິແມ່ມັນໃຫ້ແກ່ລູກຕົນທັງມວນ ບໍ່ມີການຮຳເພິງ ຂອງອັນແມ່ມັນໃຫ້ແກ່ລູກມັນນັ້ນ ກໍຄວນເອົາມາປັນແກ່ລູກທັງຫລາຍ ອັນມີຊີວິດເລົ່າເທີ້ນ.

ວ່າໄນຍະໜຶ່ງ ປະການໜຶ່ງ ຜີຜູ້ພໍ່ຈັກຕາຍກ່ອນໄດ້ແບ່ງປັນເຂົ້າຂອງໄວ້ແກ່ລູກ ອັນບັງເກີດມີດອມເມຍຕົນນັ້ນແລຕາຍ ແມ່ເອົາຜົວໃໝ່ ມີລູກດອມຜູ້ໃໝ່ ຜູ້ໜຶ່ງກໍດີ ສອງຄົນກໍດີ ແມ່ແລຈັກມ້າງເອົາເຂົ້າຂອງແຕ່ພໍ່ ອັນໃຫ້ແກ່ລູກແລຕາຍເສຍນັ້ນ ໃຫ້ໄດ້ແກ່ຕາມຄຳສັ່ງພໍ່ມັນຜູ້ຕາຍ ຫາກໃຫ້ນັ້ນເທີ້ນ ຜີພໍ່ມັນໃຫ້ດອມທັງມວນ ອັນບໍ່ພິຈາລະນາດັ່ງນັ້ນ ຄວນເອົາມາປັນແກ່ລູກທັງຫລາຍ

ອັນມີຊີວິດຕາມລຳດັບ ລູກເກົ່າລູກປາຍນັ້ນເທີ້ນ ໆປະການໜຶ່ງເລົ່າ ເອກຸທະຣະປຸຕຕາ ອັນວ່າລູກອັນເກີດຮ່ວມທ້ອງແມ່ດຽວກໍດີ ພໍ່ເຂົາຈັກຕາຍກໍດີ ແມ່ເຂົາຈັກຕາຍກໍດີ ຮັກລູກຜູ້ໃດຜູ້ໜຶ່ງແລ ກົດໝາຍແບ່ງໄວ້ໃຫ້ເຂົ້າຂອງໜ້ອຍກໍດີ ແລໄວ້ແກ່ລູກທັງຫລາຍກໍດີ ເມຍຜູ້ຍັງມີຊີວິດກໍດີ ແມ່ກໍດີຕາຍໄປ ຜູ້ຍັງມີຊີວິດກໍບໍ່ຄວນເອົາແກ່ມັນແລໃຫ້ເປັນສ່ວນແກ່ມັນຜູ້ລູກ ອັນໄດ້ປັນແຕ່ກ່ອນໃຫ້ແກ່ເຂົາ ໂດຍດັ່ງພໍ່ແມ່ເຂົາແບ່ງໄວ້ນັ້ນເທີ້ນ ບໍ່ຄວນລຶດ ຄວນມ້າງຄຳຜູ້ຕາຍໄດ້ໃຫ້ນັ້ນແລ ຜີຜູ້ໃຫ້ດ້ວຍບໍ່ພິຈາລະນາຄືວ່າ ໃຫ້ແກ່ລູກຜູ້ດຽວດັ່ງນັ້ນ ກໍຄວນເອົາຄືນມາປັນແກ່ລູກທັງຫລາຍ ພໍ່ກໍດີ ແມ່ກໍດີຜູ້ໄປ່ຕາຍນັ້ນຊອບທຳມະສາດແລ.

ປະການໜຶ່ງ ຜີວ່າລູກຜູ້ໄດ້ສ່ວນເອົາຂອງອັນພໍ່ແມ່ຫາກປັນໃຫ້ເມື່ອຈັກຕາຍນັ້ນ ໃຫ້ລູກຜູ້ນັ້ນກໍຕາຍເສຍ ຂອງອັນນັ້ນຍັງບໍ່ທັນປັນໃຫ້ຜູ້ໃດຜູ້ໜຶ່ງ ໃຫ້ລູກທັງຫລາຍເອົາຂອງແຫ່ງຜູ້ຕາຍປັນກັນເທີ້ນ.

ປະການໜຶ່ງ ລູກທັງຫລາຍ ຝູງໄດ້ສ່ວນເອົາຂອງແຕ່ພໍ່ແມ່ເຂົາກົດໝາຍໄວ້ໃຫ້ກໍດີ ເມື່ອເຂົາກົດໝາຍໄວ້ໃຫ້ເມື່ອຈັກໃກ້ຕາຍດັ່ງນັ້ນແລຕາຍເສຍ ຍັງຫລໍທີ່ລູກຜູ້ດຽວກໍດີ ມັນກໍຫາກໄດ້ສ່ວນແບ່ງລູກທັງມວນນັ້ນສິ້ນແລ ພີ່ນ້ອງກ້ຳແມ່ກໍດີ ພີ່ນ້ອງຍາດວົງສາແຫ່ງເຂົາກໍດີ ຈັກຕູ່ເຍັຍຄຳແກ່ມັນດ້ວຍຄຳວ່າ ມັນກຸມເອົາເຂົ້າຂອງອັນເປັນສ່ວນແກ່ພໍ່ແມ່ຫລານຕູດາຍ ມຶງລວດກຸມເອົາເຂົ້າຂອງຫລານຕູສຽງ ຂອງຫລານຕູ ຜູ້ຕາຍນັ້ນເປັນຂອງແຫ່ງຕູແລວ່າອັນ ກໍບໍ່ແພ້ມັນແລ ວິນິດໄສຄວນຕັດແຕ່ງໃຫ້ແກ່ມັນ.

ນານາມາຕຸປິຕາ ທະທາ ເອກຸທະຣະມາຕະຕະກາຕະເມວະ ໂທຕຸ ຕາສານັງ ປຸຕຕະກາເລ ມະເຕ ເອກັສສະ ເກຈິ ພັນ–ທຸມາຕາປິຕາ ໂຈທະຍັມປີ ນະ ຄັນເທຍຍະ ຕັສເສວະ ທາຕຸທຣັພຍັງ ຕິປິນດິຕາ ອະວິຊະທະຍາ ສັພພະທັຍຍະ ໂກຈິ ອະວິຈາ–ຣະຍະ ເອກະໂຕ ສັງທະຣາເປຍຍະ ປຸມະ ປຸຕຕານັງ ວິພາເຄຍ–

ບະລັພພະ ນະ ຍະກາຣະເຫ ນານາມາຕຸປິຕາ ອັນວ່າລູກຕ່າງແມ່ກໍດີ ຕ່າງພໍ່ກໍດີ ທະທາ ອັນໃຫ້ເຂົ້າຂອງ ຍັສສະ ກັຕກະຈິປຸຕຕານັງ ແກ່ລູກຜູ້ໃດຜູ້ໜຶ່ງ ຕະກາ ກໍຄວນໄວ້ໂດຍປະການສັນດຽວນັ້ນແລ ປຸຕຕະກາເລ ມະເຕ ໃນເມື່ອລູກທັງຫລາຍອັນໄດ້ສ່ວນຂອງແຕ່ພໍ່ແມ່ໃຫ້ນັ້ນ ເກີງກາລະອັນຕາຍແລ້ວ ຜູ້ໜຶ່ງຍັງຫລໍຢູ່ບໍ່ຕາຍ ເອກັສສະເຂົ້າຂອງລູກຝູງຕາຍ ກໍເປັນຂອງຜູ້ດຽວອັນຫລໍນັ້ນແລໂກຈິ ພັນທຸ ອັນວ່າພີ່ນ້ອງທັງຫລາຍ ຜູ້ໃດຜູ້ໜຶ່ງກໍດີ ມາຕາປິຕາ ມັກວ່າ ມາຕາປິຕະສະຫິຕາ ອັນກັບດ້ວຍເບື້ອງພໍ່ກ້ຳແມ່ກໍດີໂຈທະຍັມປິ ແມ່ນມາໂຈດເອົາສ່ວນຂອງລູກຝູງຕາຍນັ້ນ ຕັສເສວະແກ່ລູກຜູ້ອັນຍັງຫລໍບໍ່ຕາຍສິ່ງດຽວ ມາຕຸປິເຕ ມະເຕ ໃນກາລະເມື່ອພໍ່ແມ່ຈັກຕາຍ ອະວິຈາຣະຍະ ບໍ່ພິຈາລະນາ ສັພພັທຍະທິ ຜິແລໃຫ້ເຂົ້າຂອງທັງມວນເອກະປຸຕຕັສສະ ແກ່ລູກຜູ້ດຽວ ຄະສັງຫາຣາເປຍຍະ ກໍເພິງສັງໂຮມເອົາ ເອກະໂຕ ຕັ້ງໄວ້ທີ່ດຽວກັນ ວິພາເຄຍ-ຍະນັກປາດທັງຫລາຍ ກໍຄວນແຈກປັນ ປຸຕຕານັງແກ່ລູກທັງຫລາຍປຸນະເມື່ອພາຍລຸນ ລັພພະເຕນະ ດ້ວຍສ່ວນອັນຄວນໄດ້ ຕະກາເຫດຕາມລຳດັບລູກທັງຫລາຍແລ ອະທິບາຍຫາກໄດ້ສຳແດງແຕ່ພາຍຫລັງພຸ້ນແລ້ວແລ.

ກໂວ ອະເປຕິ ຕະຍະປັງຄຸຣຸມມັຕຕະໂກ ຊະວະດະ ອັນໂທອະວິກິສສໂລກະຍາທະຣາ ພັຕຕັພຍາ ເຕ ນິສັງກາ ກໂວ ອັນວ່ານະປຸງສັງກະ ກໍດີ ພະກະ ອັນໜຶ່ງ ປະຕິຕະຍາ ອັນວ່າຄົນອັນຕົກແຕ່ທີ່ສູງ ຫາອັນຈັບແຂວນບໍ່ໄດ້ມັກວ່າ ຄົນບໍ່ຮູ້ຈັກຄອງອັນຮ້າຍອັນດີກໍດີ ປັງຄຸຣຸມມັຕຕະໂກ ອັນວ່າຄົນຜູ້ເປັນເປ້ຍເປັນງ່ອຍກໍດີ ອັນໂທ ອັນວ່າຄົນຜູ້ເປັນຕາບອດ ຕາປິ້ນເສຍທັງສອງເບື້ອງກໍດີ ຊະວະດະອັນວ່າຄົນຜູ້ເປັນໃບ້ງ່າວກືກກໍດີ ອະວິກິສສະໂຣຄຍາ ອັນວ່າຄົນຜູ້ຜາງຮ້າຍກໍດີ ສິ່ງມີຕົ້ນວ່າ ເປັນພະຍາດ ອັນບໍ່ຄວນເຢົາຢາໄດ້ນັ້ນກໍດີສະຕິແລມີ ເຕ ປຸຕຕາ ອັນວ່າລູກທັງຫລາຍຝູງນັ້ນ ພັຕຕັພຍາປິ

ແມ່ນວ່າເພິ່ງແຈກແບ່ງປັນກໍດີ ນີຣະສັງກາເຂົາບໍ່ປາດສະຈາກສ່ວນປັນນັ້ນ ສິຍຸງ ກໍເພິ່ງມີດີຫລີແລ ອະທິບາຍມັກວ່າ ລູກທັງຫລາຍອັນຄວນໄດ້ສ່ວນເຂົ້າຂອງນັ້ນ ລູກຝູງປາດສະຈາກໂທດກ້ວນລ້ວນບໍຣະສຸດດັ່ງກ່າວມານີ້ ຄວນໄດ້ກິນຄົວເຮືອນແຫ່ງພໍ່ແມ່ເຂົາ ດ້ວຍອັນສະເໝີດາຍ ລູກຝູງໃດແລ ມີໂທດດັ່ງກ່າວມານີ້ ກໍບໍ່ໄດ້ຄົວເຮືອນອັນເປັນສ່ວນອັນແຈກອັນປັນສະເໝີ ດັ່ງລູກຜູ້ໃຫ້ແລ້ວກິດການອັນລ້ຽງອັນດູດີນັ້ນແລ ເທົ່າຍັງຄວນກົກກອດໃຫ້ດ້ວຍກູນາ ຕາມອັນສົມພໍສະໜ່ອຍເທີ້ນ ເຫດວ່າພາວະເຂົາຝູງນັ້ນປະກອບດ້ວຍໂດຍອັນບໍ່ບໍຣະສຸດ ອາດຈັກແລ້ວໃນການອັນໜັກຄືວ່າ ເຂົາບໍ່ເປັນຄົນການແລ.

ໂອຣະສະເຂຕຣະຊາ ເຕສັງ ນີໂທສາ ພາຄະຫາຣິກາ ປຸຕ–ຕາ ສະເວ ເຕສັງ ພັຕຕັພຍາ ຍາວະ ເຈ ອັຕກຸະຄາກະຕາ ເຕ–ສັງ ປຸຕຕາ ອັນວ່າລຳດັບລູກທັງຫລາຍຝູງນັ້ນ ໂອຣະສະ ປຸຕຕາອັນວ່າລູກອັນເກີດແຕ່ອົກແຫ່ງພໍ່ແມ່ກໍດີ ເຂຕຣະຊາປຸຕຕາ ອັນວ່າລູກອັນເກີດໃນໝູ່ຊຸມຕົນກໍດີ ນີໂທສາ ອັນປາດສະຈາກໂທດ ດັ່ງໄດ້ກ່າວແລ້ວນັ້ນ ພູຕາອັນເກີດເປັນແລ້ວ ພາຄະໂຫຣິກາ ອັນຄວນເອົາສ່ວນເຂົ້າຂອງອັນນັ້ນ ພະວັນຕິ ກໍເປັນແລ ພັຕກຸະກາ ອັນວ່າຜູ້ ອັນເກີ້ຽວເຊີ່ງອັນເພິ່ງກະທຳແຈກຂອງໃຫ້ນັ້ນ ຍາວະຕາບໃດປຸຕຕາ ອັນວ່າລູກທັງຫລາຍຝູງນັ້ນ ເອເຕສັງ ໂທສານັງ ໂອຣະສາທີນັງ ແຫ່ງລູກທັງຫລາຍມີຕົ້ນວ່າ ລູກໂອຣົດອັນມີໂທດ ພັຕຕັພຍາ ກໍເພິ່ງແຈກຕາວະຕາບນັ້ນ ອະທິບາຍມັກວ່າ ລູກທັງຫລາຍມີຕົ້ນວ່າ ໂອຣະສານັ້ນ ຄັນວ່າປາດສະຈາກໂທດດັ່ງກ່າວແລ້ວ ພໍ່ແມ່ເຂົາກໍມີຊາດສະເໝີກັນດັ່ງນັ້ນ ເຂົາກໍໄດ້ຂອງອັນແຈກແລ ຜິວ່າລູກເຂດຕະຊາ ເຂົາສະເໝີກັນດັ່ງນັ້ນ ເຂົາກໍໄດ້ສ່ວນຂອງອັນແຈກນັ້ນກໍສະເໝີກັນແລ ຜິວ່າໂອຣະສາຫາໂທດບໍ່ໄດ້ ລູກຜູ້ເຂຕຣະຊານັ້ນ ກໍບໍ່ໄດ້ສ່ວນຂອງອັນແຈກແທ້ແລ ໄນຍະໜຶ່ງ ຄວນມັນໄດ້ສ່ວນຂອງອັນແຈກນັ້ນ ສ່ວນສາມອັນຜ່າເກິ່ງນັ້ນແລ ອະປຸຕຕາ

ພະຣິຍາເຕສັງ ພັຕຕັພຍາ ສາທຸພພັສສະ ນິພພາສະລາພຍາ ພິ–
ຈາຣິນຍະປະຕິກຸລຕະເກວະຈະ ພະຣິຍາ ອັນວ່າເມຍ ອະປຸຕຕາ ອັນ
ຫາລູກບໍ່ໄດ້ ສາທຸພພັຕຕັສສະ ແລເມຍຜູ້ນັ້ນ ອັນມີຄອງວັດບົວຣະ
ບັດດີນັກ ເຕສັງ ສະໂທສະປຸຕຕານັງແຫ່ງລູກທັງຫລາຍຝູງມີໂທດ
ນັ້ນ ພັຕຕັພພຍາ ກໍເພິງແຈກ ສ່ວນຂອງໃຫ້ແລ ຕະເກວະ ປະ
ການໜຶ່ງ ພະຣິຍາ ອັນວ່າເມຍ ພຍາພິຈາຣິນຍະ ອັນມີຄອງວັດ
ບົວລະບັດ ອັນບໍ່ດີ ປະຕິກຸລາ ອັນບໍ່ຟັງຄຳແຫ່ງຜົວແລ ຄວນກຽດ
ໜ່າຍນັກ ນິພພາສະລາ ກໍເພິງຂັບໜີຈາກເຮືອນນັ້ນແລອະທິບາຍ
ນັກວ່າລູກທັງຫລາຍ ເປັນຕົ້ນວ່າໂອຣະສານັ້ນມີໂທດ ຜູ້ນັ້ນບໍ່ໄດ້ຄືວ
ດ້ວຍອັນຜ່າແບ່ງປັນ ລູກຜູ້ປາດສະຈາກໂທດແລ ມີດັ່ງນັ້ນເມື່ອພໍ່
ເຂົາຕາຍລູກຊາຍຝູງນັ້ນກໍໄດ້ຄືວໂດຍສ່ວນອັນແຈກແລ ຜີລູກຊາຍກໍ
ມີເມຍ ມີຄອງວັດບົວລະບັດດີດັ່ງນັ້ນ ເມຍຜູ້ນັ້ນກໍໄດ້ຄືວຜົວມັນແລ
ລາວຄາບນັ້ນເມຍບໍ່ດີບໍ່ຊອບ ຕອບກ້ອຍຄຳແຫ່ງຜົວຕົນດັ່ງນັ້ນ ຄືວ
ຜົວມັນກໍບໍ່ໄດ້ແກ່ມັນ ເມຍຜູ້ນັ້ນຄວນຂັບໜີແລ.

ໂປຣີ ທາຣັງ ປະຣະຄັນທີ ອັຕຣະນາ ອັຊຊະວິທີຕາ ມະເຕ
ເອກະປຸຕຕາ ລັພພີ ທຣັພຍັນຈະ ເອກະພາຄິນາ ໂປຣີ ອັນວ່າຜູ້
ຊາຍ ຄັນທີ ກໍເອົາ ທາຣັງ ບັງເມຍ ປະຣັງ ນັກວ່າ ປະຣະກຸລັຕ
ກາເນ ໃນທີ່ກະກຸນອັນອື່ນພາຍໜ້າ ອັຊຊະວິທີຕາ ບໍ່ລະບໍ່ເວັ້ນ
ອັຕຣະນາ ນັກວ່າ ອັຕຣະເນ ກຸເລ ບັງກະກຸນແຫ່ງຕົນ ໂສ ໂປໂສ
ອັນວ່າຊາຍຜູ້ນັ້ນ ເອກະ ປຸຕຕັງ ລັພພີ ກໍໄດ້ບັງລູກຜູ້ໜຶ່ງ ມະເຕ
ໃນເມື່ອຊາຍຜູ້ນັ້ນແລຕາຍ ທຣັພຍັນຈະ ອັນວ່າເຂົ້າຂອງກໍດີ ເອ
ກະພາຄິນາ ກໍຄວນແຈກ ແລແບ່ງປັນໃຫ້ສ່ວນໜຶ່ງແລ ອະທິບາຍ
ວ່າ ຜູ້ຊາຍໄປສູ່ເມຍໃນກະກຸນທ່ານພາຍໜ້າພຸ້ນ ແລຊາຍຜູ້ນັ້ນບໍ່
ລະບໍ່ເວັ້ນ ບັງກະກຸນພໍ່ແມ່ວົງສາແຫ່ງຕົນ ດ້ວຍພາວະອັນໄປສູ່ບໍ່
ຂາດ ເຊັ່ນພາຍຫລັງບໍ່ຂາດ ເມື່ອຊາຍຜູ້ນັ້ນຕາຍ ບັງມີລູກບິງຊາຍ
ທັງຫລາຍໃຫ້ໄດ້ກ້ຳຫລັງຜູ້ໜຶ່ງ ເຫດວ່າໄປສູ່ບໍ່ຂາດ ຈາກມູນພາຍ

ຫລັງ ເຂົ້າຂອງສາງໄດ້ກໍດີ ກໍໃຫ້ສ່ວນແກ່ລູກ ເພື່ອມັນຈັກກະທຳການແທນພາຍຫລັງດາຍ.

ສາມີເນ ປະນະ ພະຕິຕວາ ອະທະພາຄາວິວາປະເຍ ປັຕ-ຕະລາກຍະ ອະທາຕະກາ ວິທະເຍ ມະເຕວະ ກາເຣຍຍະ.

ປະນະ ປະການໜຶ່ງ ພະຣິຍາ ອັນວ່າເມຍ ພະຕິຕວາ ກັບຄືນມາ ສາມິເນ ມັກວ່າ ສາມີນນັຕກາເນ ສູ່ທີ່ແຫ່ງຜູ້ຜົວ ວິພາເປຍຍະ ມັກປາດຄວນແຈກ ອະທະພາຄັງ ຍັງອັນເປັນສ່ວນແລເຄິ່ງ ກະເຣຍຍະເພິ່ງກະທຳ ວິທະເວ ມະເຕ ຈະ ໃນເມື່ອຮ້າງກັນກໍດີ ຕາຍກໍດີ ປຸຕຕາລາກຍະ ອັນວ່າ ກິຍາ ອະທະຕະກາ ກໍເພິ່ງສີ່ງດຽວນັ້ນແລ.

ອັປປິເຈວະ ຄຸນຸຕຕະໄຣ ເຂຕຕັງ ທັຊຊາ ປຸຣັງ ຕັສສະ ເຕ-ສານັງ ລັພພະເຕ ທຣັພຍັງ ອະທະພາເຄນະ ວິພາກຍັງ ອະປິ-ຈະ ປະການໜຶ່ງ ປຸຣິໂສ ອັນວ່າຊາຍຜູ້ໜຶ່ງ ຄຸນຸຕຕະໄຣ ອັນມີຄຸນແຄວນຍິ່ງ ເຂຕຕັງ ມັກວ່າ ເຂຕຕາທິປະຕິຍາ ອັນເປັນເຈົ້າເປັນແກ່ໄຣ່ນາ ທັຊຊາ ຫາກໃຫ້ ປຸຣັງ ຍັງເມືອງ ຕັສສະ ແກ່ຜູ້ມີຄຸນນັ້ນ ລັພພະເຕ ໃນເມື່ອໄດ້ ທຣັພຍັງ ຍັງເຂົ້າຂອງອາພອນ ເຕ-ສານັງແຕ່ອັນເກັບຄ່າໄຣ່ນາບ້ານເມືອງຝູງນັ້ນ ອະທະພາເຄນະ ວິພາຄຍັງ ກໍເພິ່ງແຈກດ້ວຍອັນເປັນສ່ວນແລ ວິປປະໂຍຄະເຕ ໃນເມື່ອຮ້າງຢ່າໜີເສຍກັນ.

ມະຕະທະເຍຕຍະ ພາວິຍະ ເອກະອະສັງສາມີ ທັຊຍະທະຍັຕ-ກິ ອັຕຣະໂຈທະເກ ທະວະຍະພາຄາ ເອເທກັສສະ ມະຕະຈະເຍໃນເມື່ອຕາຍສິ້ງຊີວິດ ພາວິຍະກໍເພິ່ງແຈກເຂົ້າຂອງເປັນສາມສ່ວນເອກັງສັງ ອັນວ່າສ່ວນອັນໜຶ່ງ ສາມີທັຊຊາ ກໍເພິ່ງໃຫ້ແກ່ລູກຜູ້ເປັນເຈົ້າເປັນໃຫຍ່ ອັຕຣະ ໂຈທະເກ ໃນເມື່ອຄົນຜູ້ຜົວຫາກໂຈດ ທະ-ວະຍະພາຄາ ອັນວ່າກິຍາອັນແຈກເປັນສອງສ່ວນແຕ່ຂອງອັນໄດ້ຄ່າໄຣ່ນາບ້ານເມືອງ ປະການໜຶ່ງ ອະເທກັສສະ ແກ່ກ້ຳແລເຄິ່ງແລ.

ອະທິບາຍໃນບົດຄາຖາສອງບົດ ຜູ້ໃດໄປສູ່ເມຍພາຍຫລັງ ມູນຫລັງຫລູດໄປກໍດີແລເອົາເມຍ ມັນມາສ້າງເຮືອນກິນ ໃນທີ່ຜົວແລອັນສູ່ພາຍຫລັງ ມູນຫລັງບໍ່ຫລູດແລເອົາເມຍມາສູ່ທີ່ແຫ່ງຜູ້ຊາຍອັນເປັນຜົວນັ້ນ ຂາສ້າງເຮືອນດອມກັນ ເມື່ອຢ່າຫນີເສຍກັນ ຂອງອັນສ້າງໄດ້ນັ້ນປັນຄົນກ່ອງ ແມ່ນມີລູກກໍດີ ໃຫ້ປັນຄົນເກິ່ງຊູ່ກ້ຳ ປະການໜຶ່ງ ລາງຄາບຊາຍຜູ້ຜົວມີຄຸນກັບຕົນກໍດີ ມີຄຸນແກ່ທ້າວພະຍາເສນາອາມາດກໍດີ ໃຫ້ຄ້ຳໄຮ່ນາ ບ້ານເມືອງອັນນັ້ນ ເກັບຫອມໄວ້ຊື້ຊ້າງມ້າຂ້ອຍຄົນ ນອກອັນໃຫ້ທານກະທຳບຸນ ແລໃຫ້ແກ່ລູກຫລານຜູ້ໜຶ່ງເມື່ອມີຊີວິດ ເມື່ອຢ່າກັນ ຜີສູ່ແລບໍ່ຂາດພາຍຫລັງໃຫ້ໄດ້ສ່ວນຂອງອັນໄຮ່ນານັ້ນ ສ່ວນໜຶ່ງແກ່ເມຍ ໄດ້ແກ່ຜູ້ຊາຍສອງສ່ວນ ຜີສູ່ແລຂາດໄປພາຍໜ້າແລເອົາເມຍມາສູ່ທີ່ຜູ້ຊາຍ ໃຫ້ສ່ວນຂອງອັນໄດ້ໄຮ່ນານັ້ນ ແລຄົນແລເກິ່ງ ລູກຍິງຊາຍກໍໃຫ້ໄດ້ຄົນເກິ່ງເຫດທີ່ເກີດໃນທີ່ຜູ້ຊາຍ ຜີຜົວຕາຍເສຍຂອງອັນຫອມໄວ້ນັ້ນ ໃຫ້ຜ່າເປັນສ່ວນສາມອັນ ໃຫ້ໄດ້ແກ່ທ້າວພະຍາຜູ້ເປັນໃຫຍ່ແກ່ບ້ານເມືອງກ່ອນສ່ວນສອງອັນນັ້ນໃຫ້ແລກ້ຳແລເກິ່ງ ເມື່ອເມຍຈັກຫນີເສຍທີ່ຢູ່ຜູ້ຊາຍແລໄນຍະປະການໜຶ່ງ ຜີເມຍອັນຜູ້ຊາຍໄປສູ່ແລບໍ່ຫລູດມູນຫຼັງໄດ້ເອົາເມຍມາຢູ່ໃນທີ່ຜູ້ຊາຍແລມີດັ່ງນັ້ນ ເມື່ອຜູ້ເມຍເຫັນຜົວມັນຕາຍແລຈັກຫນີເສຍທີ່ຜູ້ຊາຍ ຂອງອັນສອງສ່ວນນັ້ນ ແຈກໃຫ້ເປັນສາມສ່ວນ ໃຫ້ໄດ້ແກ່ເມຍສ່ວນໜຶ່ງ ເຫດວ່າສ້າງໃນທີ່ແຫ່ງຜູ້ຊາຍອັນໜຶ່ງ ໄດ້ຍ້ອນຄຸນແຫ່ງຜູ້ຊາຍ ເຈົ້າຜູ້ເປັນໃຫຍ່ ຈຶ່ງໃຫ້ກິນບ້ານເມືອງ ເຫດຄຸນຜູ້ຊາຍດາຍ ຄັນວ່າຜູ້ຊາຍສວນເຂົ້າຂອງອັນໄດ້ແຕ່ບ້ານເມືອງ ໃຫ້ໄດ້ກ້ຳມູນຜູ້ຊາຍພາຍຫລັງເກິ່ງໜຶ່ງ ມີລູກດອມໃຫ້ໄດ້ລູກຜູ້ໜຶ່ງ ເຂົ້າຂອງໃຫ້ມາກ້ຳມູນພໍ່ມັນແລ ໃຫ້ລູກຜູ້ນັ້ນກິນ ເພື່ອຄຸນພໍ່ມັນມີຈຶ່ງໄດ້ກິນ ບ້ານເມືອງໄຮ່ນາໃຫ້ໄວ້ຜູ້ເມຍ ແລລູກກັບທີເກິ່ງໜຶ່ງເທີ້ນ ຜີແລສູ່ຂາດພາຍຫລັງຄຸນຜູ້ຊາຍມີແລ ເຈົ້າຜູ້ໃຫຍ່ຫາກໃຫ້ກິນໄຮ່ນາ ບ້ານເມືອງ ກໍໃນທີ່ຜູ້ຍິງໃຫ້ໄວ້ເມຍມັນກິນທັງ

ມວນ ຜີຮັກປາກ້ຳຜົວມັນ ໃຫ້ມັນໃຫ້ຂ່າວມູນກ້ຳຜົວມັນທີ່ໃດ ກໍໄດ້ທີ່ນັ້ນເມື່ອວ່າທ່ານລ້ຽງລູກ ກໍຍັງເປັນອັນຍາກດີຫລີດາຍ.

ອະປິຈະ ໄນຍະໜຶ່ງເມື່ອເຂົາຢ່າກັນ ຜີວ່າຂາຜົວເມຍສ້າງໄດ້ໃນເຮືອນພໍ່ ຫາກເປັນຂອງພໍ່ເມຍມັນ ໃຫ້ແຈກຂອງອັນນັ້ນຫ້າພູດໄດ້ແກ່ຜູ້ຊາຍພູດໜຶ່ງ ໃຫ້ໄວ້ແກ່ເມຍມັນ ຜີມີລູກໃຫ້ໄວ້ກັບພໍ່ມັນທັງມວນ ຜີມີລູກເຂີຍໄດ້ກິນບ້ານກິນເມືອງກັບກາງເຮືອນພໍ່ເມຍ ຜະລະໄດ້ຍ້ອນຄຸນລູກເຂີຍ ເປັນຄ່າໄຮ່ນາບ້ານເມືອງນັ້ນ ໃຫ້ແຈກສາມພູດໃຫ້ລູກເຂີຍພູດໜຶ່ງ ໄດ້ແກ່ພໍ່ເມຍສອງພູດ ຜີສອງຜົວເມຍສ້າງເຮືອນກິນນອກພໍ່ແມ່ເມຍມັນ ເມື່ອຂາຢ່າກັນ ຂອງຂາສ້າງໄດ້ດອມກັນ ກໍດີ ລູກມີຫລາຍຄົນກໍດີ ໃຫ້ແຈກແກ່ລູກສາມສ່ວນ ໃຫ້ໄດ້ແກ່ຜົວສ່ວນໜຶ່ງ ໄດ້ແກ່ເມຍສອງສ່ວນ ຜີໄດ້ກິນບ້ານເມືອງຍ້ອນກຳອັນຄ້ຳບ້ານເມືອງໄຮ່ນາ ຂອງອັນໄດ້ຄ່າໄຮ່ນາອາກອນ ບ້ານເມືອງນັ້ນໃຫ້ໄດ້ຄົນເຖິງຊູ່ກ້ຳເທີ້ນ ເຫດວ່າດ້ວຍຜະລະຄຸນຜູ້ຊາຍແລ.

ທັຕວາ ກັນຍັງ ທະຮັງ ທັນໂດພພຍັງ ທະທາ ຈະ ໂສທະຍັງ ມະຕັສສະ ສັພພະມາທະທາ ປະຣິໂສໂຄທະຍັງ ປິຕາ ອັນວ່າພໍ່ ທັຕວາ ໃຫ້ແລ້ວ ກັນຍັງ ຍັງລູກສາວຕົນ ອັນຍັສສະ ປຸຣິສັສສະ ແກ່ຊາຍຜູ້ອື່ນ ທະຣັນໂຕ ມັນຜູ້ພໍ່ນັ້ນເລົ່ານຳເອົາມາຍັງລູກສາວຕົນໜີຈາກຜົວ ທັນໂດ ກຳເພິ່ງໃສ່ສິນໄໝແກ່ພໍ່ຜູ້ສາວນັ້ນສິຍາກໍມີແລ ແລທ່ານຜູ້ພໍ່ສາວນັ້ນ ທະທາຈະ ກໍເພິ່ງໃຫ້ ປະຊະໂສທະຍັພພະຍັງ ໃນຂອງກັບດອມນັ້ນ ກັນຍາຍະ ໃນເມື່ອນາງຜູ້ນັ້ນ ມະຕັສສະ ອັນຕາຍ ປິຕະເຄເຫໃນເຮືອນພໍ່ນັ້ນ ປິຕາ ອັນວ່າພໍ່ຜູ້ນັ້ນປະຣິໂສພພະຍະ ກໍເພິ່ງໃຊ້ເພິ່ງແທນແລ ອຸທະຍັພພະຍັງ ຍັງຂອງອັນມີນັ້ນ ອະທະທາອັນທ່ານພໍ່ນັ້ນ ກໍເພິ່ງເອົາ ສັພພັງທະນັງ ຍັງຂອງລູກຍິງມັນທັງມວນແລ.

ອະທິບາຍດັ່ງນີ້ ມີນາງສາວຜູ້ໜຶ່ງ ອັນພໍ່ແມ່ໃຫ້ໄປເປັນເມຍຜູ້ຊາຍຜູ້ໜຶ່ງ ແລ້ວພາຍລຸນວ່າລູກເຂີຍຜິດ ລວດເອົາລູກສາວໜີມາ

ຢູ່ເຮືອນຕົນ ເພິ່ງໃຫ້ແຕ່ງທັນດະແກ່ນາງ ຄືວ່າໃຫ້ພໍ່ນາງຄືນຂອງ ລູກເຂີຍ ຜີລູກສາວມັນໄດ້ກິນໜີ້ສິນທ່ານເທົ່າໃດ ໃຫ້ພໍ່ແທນຕາງ ຕົວສັ້ງເທີ້ນ ຜີວ່າພໍ່ຄືນລູກເຂີຍໝົດສັ່ງແລ້ວດັ່ງນັ້ນ ລູກສາວມັນ ຕາຍໃນເຮືອນພໍ່ ຂອງແຫ່ງລູກສາວມັນມີເທົ່າໃດກໍດີ ພໍ່ມັນໄດ້ໝົດ ສັ່ງແລ ຜີວ່າຜົວມັນ ເມຍກູຕາຍໃນເຮືອນພໍ່ ຂອງແຫ່ງເມຍກູມີ ເທົ່າໃດ ເປັນຂອງກູແລ ວ່າດັ່ງນັ້ນ ກໍບໍ່ແພ້ພໍ່ເມຍ ໃຫ້ຕັດໃຫ້ແກ່ ພໍ່ກິນຄົວລູກຍິງທັງມວນເທີ້ນ ຜີພໍ່ໄປຄືນຂອງແກ່ລູກເຂີຍດັ່ງນັ້ນ ລູກ ຍິງຕາຍໃນເຮືອນມັນດັ່ງນັ້ນ ຂອງລູກສາວມັນມີເທົ່າໃດ ກໍເປັນຂອງ ລູກເຂີຍມັນຕົວສັ່ງແລ ຜີວ່າເມຍມັນ ໄດ້ກູ້ໜີ້ສິນທ່ານກິນເທົ່າໃດ ໃຫ້ຜົວມັນແທນທັງມວນ ຜີວ່າພໍ່ເມຍວ່າ ລູກກູຄືນມາຕາຍໃນ ເຮືອນກູ ບໍ່ໃຫ້ຂອງເມຍມຶງ ແກ່ມຶງແລ ກໍບໍ່ແພ້ລູກເຂີຍ ຄືວ່າໃຫ້ ແຕ່ງໃຫ້ລູກເຂີຍເທີ້ນ ຜີວ່າລູກຍັງຖຽງວ່າ ລູກທ່ານໜີຄືນມາດອມ ທ່ານຈິ່ງຕາຍດາຍ ບໍ່ແທນແລວ່າອັນ ເມື່ອພໍ່ໄປແທນໃຫ້ພໍ່ກິນຄົວ ລູກສາວເອົາຂອງທ່ານມາກິນ ພໍ່ເມຍກໍແທນ ລູກເຂີຍກໍແທນທໍ່ກັນ ໃຫ້ລູກເຂີຍ ແລພໍ່ເມຍກິນຄົວສະເໝີກັນເທີ້ນ ປະການໜຶ່ງ ພໍ່ເອົາ ລູກສາວຄືນມາຢູ່ເຮືອນແລ້ວ ຫາກກ່າວຕາມຈາຣະຈາຕໍ່ໜ້າທ່ານ ອັນເປັນເກົ້າແກ່ວ່າຂອງລູກເຂີຍກູມີແຕ່ໃດ ກູຈັກຄືນແຕ່ນັ້ນແລ ລູກ ເຂີຍກໍວ່າຜີທ່ານຄືນຂອງແກ່ກູແທ້ ກູຈັກໃຫ້ແລ້ວຄຳເມຍແລວ່າດັ່ງ ນັ້ນ ເຂົາກໍກົດໝາຍປີເດືອນ ມື້ວັນໄວ້ໃຫ້ໝັ້ນທ່ຽງ ແລ້ວແລໜີໄປ ຄັນເຖິງເມື່ອກົດໝາຍນັ້ນ ລູກຍິງນັ້ນລວດຕາຍເສຍ ຜູ້ພໍ່ໄດ້ຄືນຂອງ ແຕ່ອັນກົດໝາຍໄວ້ຕໍ່ໜ້າທັງຫລາຍນັ້ນແລ ຂອງລູກຍິງຍັງຫລໍນັ້ນ ຜູ້ພໍ່ໄດ້ໝົດແລ ລູກເຂີຍຈັກມາໂຈດເອົາກໍບໍ່ໄດ້ແລ.

ວິວາເວຍຍະ ປິຕຸມາຄະມິ ຍະທິພະຍາທິ ປີຣິຕະເລ ກິຈຈະ ສາກຍາ ປິຕຸທຣັພຍັງ ຕັສສັທຣາ ຕັງ ຫະຣາກະມິ ວິວາເວຍຍະ ໃນເມື່ອຜິດຖຽງກັນ ສາອິຕກີ ອັນວ່າຍິງຜູ້ໄປເຮືອນຜົວນັ້ນ ປິຕຸມາ ຄະມິ ແລຫນີມາສູ່ເຮືອນພໍ່ແມ່ຕົນ ພະຍາທິກາເລ ໃນກາລະເມື່ອ

ເປັນພະຍາດ ປິຕາ ຫາກບຽດບຽນ ຍະທິ ຜິແລ ປິຕຸທຣັພຍັງ ອັນວ່າເຂົ້າຂອງແຫ່ງພໍ່ ວິຈະກິຈຈະສາທຣາ ໃຫ້ແລ້ວຍັງການອັນ ເຢົາຢາ ທະຣາ ກໍເພິ່ງຜູ້ເປັນຜົວໃຫ້ ຕັງ ທຣັພຍັງ ຍັງເຂົ້າຂອງ ອັນຢານັ້ນ ຕັສສະ ປິຕຸຍາ ແກ່ພໍ່ແມ່ຜູ້ນັ້ນ ທະຣາກະມິ ຈຶ່ງຄວນ ນຳໜີ.

ອະທິບາຍວ່າ ຍິງອັນພໍ່ແມ່ໃຫ້ໄປເຮືອນຜົວ ແລ້ວຂາຜົວເມຍ ຜິດກັນ ລູກສາວນັ້ນໜີມາສູ່ເຮືອນພໍ່ແມ່ຕົນ ຫລອນມີພະຍາດບຽດ ບຽນ ເມື່ອໃດໄດ້ເອົາຂອງພໍ່ແມ່ເຢົາຢາ ຄວນຜົວມັນແທນພໍ່ກ່ອນ ຈຶ່ງໃຫ້ນຳໜີເທີ້ນ.

ອັນຍັສມິງ ທາຣັງ ຄະເທຕວາ ນິຣາລັຍຍະ ຕັມຫາ ຄະຣາ ປະເຣຍິ ອັຕຣະການະຍັງ ຕັສສະ ທິຣາ ສິນທັປເປຕຍະ ສັພພັງ ທຣັພຍັງ ເລຂິຕະກາ ຍະກຸາ ພາເຄຍຍະ ຕະກຸາພາຄີ ເອກະ ໂກຕກັງ ອິຕເຣເສວະ ອິຕຣັສສັທທິຕາ ຕິຕກະຍະ ໂປຣິໂສ ອັນ ວ່າຜູ້ຊາຍ ທາຣັງ ຄະເທຕວາ ວະ ໄປເອົາເມຍ ອັນຍັສມິງ ກຸ ເລ ໃນກະກຸນທີ່ອື່ນ ນິຣາລັຍຍະ ອັນທາອາໄລກັດຕິກັບດອມເມຍບໍ່ ໄດ້ ນິກຂັນໂຕ ອອກໜີ ຕັມຫາ ຄະຣາ ຈາກເຮືອນເມຍແລກະ ກຸນແຫ່ງເມຍ ປະເລຍິ ກໍພ່າຍ ອັຕຣະກາມັຍຍະ ຕາມໃຈມັກຕົນ ທິຣາ ອັນວ່ານັກປາດ ສິນທະເປຕຍະ ກໍເພິ່ງວ່າຕັດເສຍວ່າຂາດ ບໍ່ ຄວນເປັນເມຍ ຕັສສະ ປຸຣິສັສສະ ແຫ່ງຊາຍຜູ້ນັ້ນແລ ເລຂິຕຣະ ກາ ທີ່ໃຫ້ກຳນົດກົດໝາຍດູ ສັພພະທຣັພຍັງ ຍັງເຂົ້າຂອງແຫ່ງຂາ ສາວໄດ້ທັງມວນນັ້ນ ຍະກຸາພາຄັຍຍະ ຄວນແຈກໂດຍປະການສິ່ງ ໃດ ຕະກຸາພາຕິ ກໍຄວນແຈກແບ່ງປັນໂດຍປະການດັ່ງນັ້ນ ເອກະ ໂກຕກັງ ອັນວ່າສ່ວນໂກດກຸາກອັນໜຶ່ງ ອິຕະເຣເສວະ ແກ່ຜູ້ໄປສູ່ ທີ່ຢູ່ແຫ່ງທ່ານ ຕິຕກະ ກໍເພື່ອຕັ້ງໄວ້ ທະວິທາ ດ້ວຍປະການສອງ ສ່ວນ ອິຕຣັສສະ ແກ່ຜູ້ເປັນເຈົ້າເທີ້ນ.

ອະທິບາຍວ່າ ຊາຍຜູ້ໄປສູ່ເອົາເມຍໃນກະກຸນແຫ່ງໜຶ່ງ ມີໃນ

ກາລະໜຶ່ງ ມັນລວດໜີຈາກເຮືອນກະກຸນພໍ່ແມ່ເມຍ ອັນຫາຄໍາປະ
ສົງບໍ່ໄດ້ແລ ກັດຕິໃນເມຍບໍ່ໄດ້ ຕາມໃຈອັນບໍ່ມັກ ຜູ້ມີປະຫຍາຄືວ່າ
ວິນິດໄສ ກໍຄວນຕັດເສຍວ່າ ບໍ່ຄວນເປັນເມຍແຫ່ງຊາຍຜູ້ບໍ່ກັຕຕິຮັກ
ເມຍ ແລພ່າຍໜີຈາກກະກຸນເມຍມັນ ກັບທັງພໍ່ແມ່ມັນຕາມໃຈມັກ
ທີ່ໃຫ້ກົດໝາຍດູຍັງເຂົ້າຂອງອັນຂາທັງສອງສາງໄດ້ນັ້ນ ໃຫ້ໄດ້ແກ່ຜູ້
ໄປສູ່ທີ່ແຫ່ງທ່ານສ່ວນໜຶ່ງ ແກ່ເຈົ້າທີ່ສອງສ່ວນແລ.

ທຸພພິກເຂ ທັມມະກາເຍວະ ພະຍາເທ ປະຕິໂພທະເກ
ຄະຫິຕັຕກີ ທະນັງ ພັຕຕາ ນັຕກີເຍ ທາຕຸມະຣະຫະຕິ
ອະທິວິນັຕກີເຍ ທະທາ ພາຄີເວທະນີກັງ ສະນັງ
ມະທັກກັຕກີ ທະນັງ ຍະເສ ທັຕຕັງ ອະທັງ ປະກິຕຕິຕັງ

ພັຕຕາ ອັນວ່າຊາຍຜູ້ເປັນຜົວ ອະຫະຣະຕິ ກໍບໍ່ຄວນ
ທາຕຸງ ເພື່ອວ່າໃຊ້ແທນ ອິຕກີທະນັງ ຍັງເຂົ້າຂອງແຫ່ງຜູ້ຍິງອັນ
ເປັນເມຍ ຄະຫິຕັງ ອັນຜົວຫາກເອົາ ທຸພພິກເຂ ກາເລ ໃນກາ
ລະເມື່ອເຂົ້າແພງນັ້ນກໍດີ ທັມມະກາລະເຍ ຈະ ໃນກາລະເມື່ອ
ແຕ່ງທໍາບຸນໃຫ້ທານກໍດີ ພະຍາເທ ໃນກາລະເມື່ອເປັນພະຍາດກໍດີ
ສະປະຕິໂພທະເກ ໃນກາລະມາຣິບໄຣເອົານັ້ນກໍດີ ອິຕກີເຍ ແກ່ຜູ້
ຍິງອັນເປັນເມຍນັ້ນແລ ຍັງ ທະນັງ ອັນວ່າເຂົ້າຂອງອັນໃດ ມະ
ທັຕຕັງອັນບໍ່ຄວນໃຊ້ແທນ ຍະເສຍັຕກີເຍ ແກ່ຍິງຜູ້ໃດ ອະທິວິຕະ–
ທັຕຕາ ອັນວ່າຜົວຜູ້ເປັນໃຫຍ່ນັ້ນ ມະທັຕຕາ ກໍບໍ່ເພິ່ງໃຊ້ແທນ
ຕັງ ທະນັງ ຍັງເຂົ້າຂອງອັນນັ້ນ ອະທິເວທະນີກັງ ອັນເປັນກັບດ້ວຍ
ປະຣິໂພຄະອັນຂອງນັ້ນ ສະນັງ ອັນສະເໜີເກົ່າຂອງນັ້ນ ທັຕເຕ
ໃນເມື່ອຈັກໃຊ້ຂອງອັນນັ້ນ ສະຕິ ແລມີດັ່ງນັ້ນ ອະທັງ ອັນວ່າເກືງ
ໜຶ່ງ ປະກິຕຕິ ອັນອາຈານເຈົ້າແຕ່ກ່ອນກ່າວວ່າຊອບ ຄວນທັມມະ
ສາດເປັນປະເວນີມາແລ.

ອະທິບາຍວ່າ ຜູ້ຜົວເອົາຂອງເມຍຈ່າຍ ໃນກາລະເມື່ອເຂົ້າ
ແພງກໍດີ ໃນເມື່ອໃຫ້ທານທໍາບຸນນັ້ນກໍດີ ອັນໜຶ່ງ ເມື່ອພະຍາດ

ຮ້າຍນັ້ນກໍດີ ເມື່ອທ່ານຜູ້ອື່ນ ມາຮິບເອົານັ້ນກໍດີ ບໍ່ຄວນໃຫ້ຜົວໃຊ້ແທນຂອງຝູງນັ້ນແລ ປະການໜຶ່ງ ຂອງເມຍມັນໃຫ້ທ່ານຜູ້ອື່ນກູ້ເພື່ອໄດ້ກິນດອກ ທໍ່ເອົາແຕ່ກ່ອນພຸ້ນກໍດີ ຜູ້ຜົວການເອົາຈ່າຍກິນດົ່ງນັ້ນ ເມື່ອຂາຜົວເມຍຢ່າເສຍກັນຄືວ່າ ກູ້ເຂົ້າຂອງເມຍມັນແຕ່ກ່ອນເມື່ອໄປ່ໄດ້ເອົາກັນເປັນຜົວເປັນເມຍ ນັບອ່ານດູດົ່ງເງິນນັ້ນບໍ່ທໍ່ນັ້ນໆ ຜູ້ຜົວຮູ້ກໍການເອົາມາຈ່າຍກິນທັງດອກທັງເຄົ້າ ບໍ່ຄວນໃຫ້ຜົວແທນທັງມວນທໍ່ໃຫ້ແທນແຕ່ເຄົ້າທັງມວນແລດອກເກິ່ງໜຶ່ງເທົ້ນ.

ເອກະມາຕາປິຕາປຸຕຕາ ວິສຸທເທປາຄິຍາ ຍະກາ

ອະວິສຸທທະທາສະຍາປຸຕຕາ ກັມມະທິນນະ ທັຊຊະດິເຕ

ອະຄະຕິຍາ ລັພເພ ຕັສສະ ປະຍະມະຫາວິນາ ຈະຕຸຕ–

ກັທເທ ໂກຕກາສັງ ອະທະປາຕັນຈະ ຄຸນາຄຸເນ ວິພາຄິຍາ

ອະປຸຕຕະໂຄຕຕະທາສັມປິປຸຕຕາ ອັນວ່າ ລູກອັນເກີດມາ ເອກະ ມາຕາປິຕາອັນມີແມ່ແລພໍ່ຜູ້ດຽວ ວິສຸທເທ ໃນເມື່ອບໍຣະສຸດແຫ່ງລູກທັງຫລາຍ ອັນເກີດມາພໍ່ດຽວກັນນັ້ນ ຍະກາປາຕິຍາ ເຂົາໄດ້ສ່ວນຂອງພໍ່ແມ່ ເມື່ອຕາຍ ໂດຍລຳດັບແຈກແລ ອະວິສຸທທາ ອັນວ່າ ລູກອັນເກີດອັນບໍ່ບໍຣະສຸດກໍດີ ທາສະປຸຕຕາ ອັນລູກອັນເກີດດອມຂ້າຍິງກໍດີ ທິນນະຊາຕິເຕ ອັນມີດອມເມຍເຊີຍເມຍອັນໄກ່ເອົາເຂົ້າຂອງເງິນຄຳ ແລເອົາມາເປັນເມຍກໍດີ ແລລູກອັນຂໍທ່ານເອົາໄປຊຸດເສຍເຫັນເກັບເອົາມາລ້ຽງເປັນລູກກໍດີ ລັພພາ ກໍຍັງຄວນໄດ້ ເຕສັງ ປຸຕຕານັງ ແກ່ລູກທັງຫລາຍຝູງນັ້ນ ອະທະຕະຍາ ດ້ວຍສ່ວນອັນກ້ວນສາມແລຜ່າເກິ່ງແລ.

ວິນິດສະຍາ ອັນວ່າຜູ້ພິຈາຣະນາ ປັນຈະພາວິນາ ຄວນແຈກຂອງແຕ່ພໍ່ແມ່ອັນຕາຍນັ້ນ ດ້ວຍຫ້າສ່ວນກໍດີ ຈະຕຸຕກະ ດ້ວຍສີ່ສ່ວນກໍດີ ທະເວໂກຕກາສັງ ອະທະມາຕິນຈະ ລຳດັບເປັນສອງສ່ວນເກິ່ງສ່ວນໜຶ່ງກໍດີ ພາວິຍາ ກໍເພິ່ງແຈກ ຄຸນາຄຸເນ ຫລິງດູລູກທັງຫລາຍຝູງນັ້ນ ໃນອັນມີຄຸນແລຫາຄຸນບໍ່ໄດ້ ອະປຸຕຕາໂຄຣ

ຕຣະ ອັນວ່າຜູ້ຫາລູກບໍ່ໄດ້ແລຫາແນວແກວເຊື້ອຍາດບໍ່ໄດ້ ທາສັ່ມ ປີ ແມ່ນວ່າຂ້າຊາຍກໍດີ ຜູ້ເປັນຄຸນກໍໃຫ້ແທນຄົວ ແຫ່ງເຈົ້າມັນ ແລ້ວເອົາການເມືອງດັ່ງເມື່ອກວາມມັນມີຊີວິດນັ້ນເທີ້ນ.

ອະທິບາຍວ່າ ລູກອັນເປັນໂອຣົດສະຊາດ ອັນເປັນພໍ່ດຽວແມ່ ດຽວກໍດີ ລູກທັງຫລາຍຝູງເປັນພໍ່ດຽວແມ່ດຽວນັ້ນ ປາດສະຈາກໂທດ ອັນໄດ້ກ່າວແລ້ວພຸ້ນ ບໍຣະສຸດແທ້ ເມື່ອພໍ່ແມ່ຈັກຕາຍໃຫ້ແຈກຄົວ ແກ່ເຂົາຕາມລຳດັບ ອັນເປັນພີ່ ຜູ້ກາງແລຜູ້ຫລ້າ ອັນຍັງກັບເຮືອນ ລ້ຽງພໍ່ແມ່ຕາງນັ້ນໃຫ້ມັນປັນຄົວໃຫ້ແກ່ເຂົາ ມີລູກສາມຄົນໃຫ້ແຈກ ຄົວສີ່ສ່ວນ ເພິ່ງໃຫ້ແກ່ຜູ້ພີ່ສອງສ່ວນ ຜູ້ກາງສ່ວນເຄິ່ງ ຜູ້ຫລ້າ ສ່ວນໜຶ່ງຜິພໍ່ເຂົາໄດ້ລູກດອມຂ້າຍິງຜູ້ໜຶ່ງ ໃຫ້ແຈກຄົວຫ້າສ່ວນ ໄດ້ ແກ່ຜູ້ພີ່ສອງສ່ວນ ໄດ້ແກ່ຜູ້ກາງສ່ວນໜຶ່ງ ໄດ້ແກ່ຜູ້ຫລ້າສ່ວນໜຶ່ງ ໄດ້ແກ່ຜູ້ລູກອັນພໍ່ເອົາຂ້າຍິງເປັນເມຍແລມີລູກດອມນັ້ນເຄິ່ງສ່ວນໜຶ່ງ ລູກອັນຂໍທ່ານກໍດີ ລູກອັນມີດອມເມຍເຊີຍ ເມຍຊື້ຄວນໄດ້ແລເຄິ່ງ ສ່ວນ ແລລູກແຕ່ຫົວອົກຊູ່ຄົນແທ້ ໃຫ້ຫລິງດູ ຜິຜູ້ໜຶ່ງເປັນພີ່ແທ້ ຫາຄຸນແກ່ພໍ່ແມ່ບໍ່ໄດ້ ລູກຜູ້ນ້ອງຍັງມີຄຸນແກ່ພໍ່ແມ່ຫລາຍ ໃຫ້ໄດ້ສະ ເໝີກັນຄົນເຄິ່ງ ຜິລູກອັນບໍ່ບໍຣະສຸດ ຄວນໄດ້ແຕ່ເຄິ່ງສ່ວນ ກາງ ສ່ວນນັ້ນແລ.

ອັນໜຶ່ງ ລູກຝູງນັ້ນ ອັນພໍ່ແມ່ຫາກໄດ້ໃຫ້ລິ້ງເຍັຍເຮືອນກິນ ຕ່າງເຮືອນພໍ່ແມ່ແລ້ວນັ້ນ ໃຫ້ແຕ່ງພໍຂ່າວກໍໄດ້ເທົ່ານັ້ນ ສະເລັກ ສະໜ່ອຍ ເພື່ອເຂົາສ້າງເຮືອນເຂົາຫາກເອົາແລ້ວແລ ບາງຄາບລູກ ຝູງຫາກສ້າງເຮືອນຕ່າງເຊັ່ນ ເຂົາທໍ່ວິເສດອັນຂຶ້ນການເມືອງ ການ ເມືອງກັບດ້ວຍຕົນມັນ ຍັງລ້ຽງພໍ່ແມ່ມັນ ອັນໜຶ່ງຜູ້ກະທຳດອມຂຸນ ເມື່ອອຸບປະທະວະ ອິນຕາຍໄພຍໄພເກີດແກ່ພໍ່ແມ່ມັນ ໄດ້ປ້ອງປົກ ຍາກ ລູກຜູ້ມີຄຸນຈຳພວກນີ້ ຄວນໃຫ້ເຄິ່ງສ່ວນໜຶ່ງກໍດີ ຕາມຄຸນ ເຂົານັ້ນເທີ້ນ ບາງຄາບລູກອັນພໍ່ແມ່ສັ່ງສອນບໍ່ເອົາຄຳ ຫາກກະທຳ ຕາມໃຈມັກຕົນໄປໆມາໆຫາປະໂຍຊະນະອັນໃດບໍ່ໄດ້ກໍດີ ພໍ່ແມ່ຫາກ

ຂັບໜີຈາກເຮືອນ ລູກອັນທ່ານຂີໄປເປັນພາຍໜ້າຂາດກໍດີ ລູກຊາຍອັນໄປສູ່ເມຍຂາດໄປພາຍໜ້າແທ້ກໍດີ ລູກຝູງນີ້ບໍ່ກິນຄົວພໍ່ແມ່ພາຍຫລັງໄດ້ແລ ຜິເມື່ອເຂົາທຽວມາຢາມກາມຂ່າວພໍ່ແມ່ເຂົາເມື່ອຍັງມີຊີວິດຢູ່ ພໍ່ແມ່ຫາກຮັກຫາກໃຫ້ເຂົ້າຂອງແກ່ເຂົາ ໃຫ້ເປັນຂອງເຂົາເທີ້ນ ຜີໄປສູ່ເມຍພາຍຫລັງ ເຂົາຍັງທຽວໄປມາລ້ຽງພໍ່ແມ່ ພາຍຫລັງດັ່ງນັ້ນກໍຍັງຄວນໃຫ້ເຂົາໄດ້ກິນຄົວ ດ້ວຍອັນເຖິງອັນບາງ ສ່ວນອັນກ້ວນສາມ ຄືວ່າສ່ວນອັນກ້ວນສາມນັ້ນ ມາຜ່າໃຫ້ເປັນສາມສ່ວນໃຫ້ສ່ວນໜຶ່ງແກ່ເຂົາ ເຫດເຂົາໄປສ້າງເຮືອນພາຍໜ້າ ໄດ້ອັນໃດເຂົາຫາກເອົາພູດແລ້ວແລ ຜີເຂົາບໍ່ໄດ້ມາລ້ຽງພໍ່ແມ່ສັກອັນ ບໍ່ໄດ້ຄົວພໍ່ແມ່ເຂົາສະເລັກສະໜ່ອຍແລ.

ວິພາຄະນິຄຄະເມຊາຕິ ພັນທຸສາກຂີ ກິເລຂິເຕ

ວິພາຄະນາ ເບຍໂຍ ເຄຫັກເຂຕເຕ ສຸໂປຕິເກ

ວິພາຄະພາວະນາ ອັນວ່າອາການອັນປາກົດ ດ້ວຍອັນແຈກເຂົ້າຂອງຄອບຄົວນັ້ນ ເຄຫັກເຂຕເຕ ສຸໂປຕິເກ ອັນລູກຫລານທັງຫລາຍຝູງຢູ່ກິນໃນເຮືອນ ເບຍໂຍ ນັກປາດເພິ່ງຮູ້ ຊາຕິພັນທຸສາກສີ ກິເລຂິເຕ ໂດຍຄຳໜັງສືອັນຊາດທັງສີ່ ແລພີ່ນ້ອງເຊື້ອແນວແລສັກຂີຫາກກົດໝາຍໄວ້ນັ້ນ ວິພາຄະນິຄຄະເມ ໃນກາລະເມື່ອແລ້ວແຫ່ງອັນແຈກເຂົ້າຂອງຄອກຄົວນັ້ນເທີ້ນອະທິບາຍດັ່ງນີ້ ອາການອັນແຈກປັນຄົວທັງມວນອັນກ່າວມານີ້ ໃຫ້ແຕ້ມໜັງສືກົດໝາຍເຂົ້າຂອງອັນແຈກປັນນັ້ນ ໂດຍຕາມອັນມັນໄດ້ກົດໝາຍໃຫ້ນັ້ນແລ້ວໃຫ້ໝາຍຊື່ຊາດຄົນສີ່ຈຳພວກນັ້ນ ຜູ້ໃດກໍດີ ແລຄົນຝູງເປັນພີ່ນ້ອງພົງສາມັນກໍດີ ແລມິດສະຫາຍຄົນທັງຫລາຍ ຝູງເປັນສັກຂີອັນມາກນັ້ນກໍດີ ຍັງຄົນທັງຫລາຍໃນຢ້າວເຮືອນນັ້ນ ກໍຄວນໃຫ້ເຂົາກົດໝາຍຮູ້ຈື່ຈຳຍັງຄຳ ອັນພໍ່ແມ່ແຕ່ງແປງແຈກປັນສິ່ງຂອງ ຄອກຄົວນັ້ນຈິງໝັ້ນດີຫລີກໍຈິ່ງຈັກແລ້ວ ວິພາຄະ ກິຍາອັນນັ້ນ ຕາມຄອງທັມມະສາດ ອາດຍາ ແຫ່ງໂລກະທັມແລ.

ວາມະປະຣັຕກະຍະຕິ ພຣະຫະມະຈາຣິ ນັມເພທະພາວິນະ ກະເມນະ ຈາຣະຍະສັສສິຍະ ທັມມະພັຕເຕຣ ຕິຕກິນັງ ເພ ທະ ພາຄິນະ.

ພາຄິນະ ອັນວ່າປັດໄຈຍະໄທຍະທັມ ອັນເກີດແຕ່ສາຕສິນ ເພດ ສິບຸງ ກໍເພິງວ່າເປັນ ກະເມນະ ດ້ວຍອັນລຳດັບ ວາມະປັຕ-ກະຍະຕິ ພຣະຫະມະຈາຣິນັງ ແຫ່ງພຣາມະນະທັງຫລາຍ ຄືວ່າ ພຣົມະຈາຣີ ແລຍະຕິແລວະນະປັດກະນັ້ນ ຕິຕກິ ອັນວ່າສິ່ງຂອງ ຄືວ່າໜັງສື ແລປະຣິຂານອັນເປັນເຄື່ອງນັກບວດ ແລກຸດຄີວິຫານ ແລອາຣາມນັ້ນ ສິບຸງ ກໍເປັນແລ ກະເມນະ ດ້ວຍອັນລຳດັບ ອາ-ຈະຣິຍະສັຈຈະທັມມະພາເວ ໃນນັກບວດທັງຫລາຍຄືວ່າ ອາຈະຣິ-ຍະແລລູກສິດຜູ້ດີ ມີຄຸນອັນອຸບປະກາກ ແກ່ອາຈະຣິຍະແລລູກສິດ ຜູ້ອື່ນອັນປະກອບດ້ວຍ ອັນຮຽນທັມມະຄວາມຮູ້ ແລປູ່ດອມນັ້ນ ແລ ພາມສາມຈຳພວກນີ້ ເຂົາມາຢູ່ມາກິນດອມກັນໃນທີ່ໜຶ່ງທີ່ດຽວ.

ອະທິບາຍ ອາຈະຣິຍະ ແຈກຄົວພາມແລພຣົມມະຈາຣີ ຜູ້ໃດ ກະທຳຄອງວັດບໍວຣະບັດ ສັນນີ້ຊື່ວ່າ ພຣົມມະຈາຣີ ກະທຳວັດປະ ຕິບັດສັນນີ້ຊື່ວ່າ ຍະຕິ ກະທຳຄອງວັດປະຕິບັດສັນນີ້ ຊື່ວ່າ ວານະ ປັຕກະ ແລພາມທັງຫລາຍເຂົາກົດໝາຍຄອງວັດ ແຫ່ງເຂົາສັນນີ້ ແລພາມສາມຈຳພວກນີ້ ເຂົາມາຢູ່ດອມກັນທີ່ໜຶ່ງທີ່ດຽວກັນ ເຂົາ ໄດ້ຍັງປັດໄຈຍະບັງເກີດສິ່ງອັນໃດ ດ້ວຍສາຕເພດເຂົາ ພາມເວນະ ປັຕກະນັ້ນ ກໍໄດ້ຄົວແຫ່ງພາມທັງມວນນັ້ນແລ ລາງຄາບພຣາມະ-ນະວານະປັດກະນັ້ນບໍ່ມີ ເທົ່າແຕ່ຍະຕິແລພຣົມມະຈາຣີຫາກ ຢູ່ ລ້ຳພາມທັງສອງນັ້ນ ພາມຜູ້ໜຶ່ງຕາຍກ່ອນ ພາມຜູ້ຍັງຄົນນັ້ນກໍໄດ້ ຄົວແລ.

ອະທິບາຍນັກວ່າດັ່ງນີ້ ຍັງມີນັກບວດສາມຕົນ ຕົນໜຶ່ງກະທຳ ປະຕິບັດເປັນມິດຈະການ ແກ່ອາຈະຣິຍະຍະຕິ ລູກສິດຕົນໜຶ່ງເທົ່າ ມາຮຽນທັມຄຳຮູ້ດອມອາຈະຣິຍະ ແລບໍ່ກະທຳຄອງວັດ ປະຕິບັດແກ່

ອາຈະຣິຍະ ຊາວເຈົ້າສາມຈຳພວກນັ້ນ ມາຢູ່ກິນໃນກຸດຕິວິຫານອາ
ຣາມທີ່ໜຶ່ງທີ່ດຽວກັນ ເມື່ອອາຈະຣິຍະແລຕາຍ ລູກສິດອຸບປະການກໍ
ໄດ້ຄືວອາຈະຣິຍະຄືວ່າໜັງສືແລ ປະຣິຂານ ກຸດຕິວິຫານແຫ່ງອາ
ຈະຣິຍະທັງມວນແລ ຜີລູກສິດຕົນນິດຈະອຸບປາການະບໍ່ມີ ລູກສິດ
ຕົນອື່ນຄືວ່າ ທັມມະຄາຕຣະນັ້ນ ກໍຈຶ່ງໄດ້ຄືວອາຈະຣິຍະເມື່ອລູກສິດ
ອຸບປະການແລ ທັມມະຄາຕຣະຕາຍກ່ອນ ອາຈະຣິຍະກໍໄດ້ຄືວທັງ
ມວນ ມີຕົນວ່າ ປະຣິຂານເມື່ອອາຈະຣິຍະບໍ່ມີ ເທົ່າມີລູກສິດທັງ
ມວນຢູ່ກັບດອມກັນລ້ຳຂາທັງສອງນັ້ນ ຜູ້ໜຶ່ງຕາຍ ຜູ້ໜຶ່ງຍັງມີຊີວິດ
ກໍເປັນໃຫຍ່ໄດ້ຄືວທັງມວນແລ ພິຈາລະນາມັກບວດໄດ້ແທນຄືວກັນ
ຕາມວະລັມພະສາຕສິນ ເທົ່າອາໄສເຊິ່ງຊາວເຈົ້າ ອັນບໍ່ເຊື່ອກິດຈະ
ການອັນຕ່າງ ຕັດຍັງປະຣິໂພດເສຍ ບໍ່ເມື່ອງດັ່ງຄົນຄະຫັດຢູ່ໃນກຸດ
ຕິວິຫານ ໄດ້ປະຣິຂານອັນໃດອັນໜຶ່ງແລ ເອົາສັງໂຣມໄວ້ໃນທີ່ໃດທີ່
ໜຶ່ງທີ່ດຽວກັນ ກໍບໍຣະໂພກກັບອັນດຽວກັນ ບໍ່ແຈກແບ່ງປັນໃຫ້ແກ່
ກັນດາຍ ຜີວ່າແຈກແບ່ງປັນກັນແລ້ວດັ່ງນັ້ນ ກໍເປັນຂອງມັນຊູ່ຄົນ
ຂອງຜູ້ໃດຜູ້ນັ້ນກໍຫາກເປັນໃຫຍ່ ເປັນເຈົ້າແກ່ຂອງອັນນັ້ນແລ ຜີ
ເຈົ້າຂອງນັ້ນບໍ່ທັນໃຫ້ແກ່ຜູ້ໃດຜູ້ໜຶ່ງ ຂອງອັນນັ້ນກໍເປັນຂອງຜູ້ຢູ່ໃນ
ກຸດຕິວິຫານອາຣາມທີ່ນັ້ນທັງມວນແລ ອັນໜຶ່ງ ມີສົມຕົນໜຶ່ງຫາກ
ຢູ່ໃນກຸດຕິວິຫານອາຣາມທີ່ໜຶ່ງ ທີ່ດຽວ ມີກາລະອັນໜຶ່ງສົມຕົນໜຶ່ງ
ນັ້ນກໍຕາຍລະປະຣິຂານເສຍ ປະຣິຂານອັນນັ້ນກໍເປັນປະຣິຂານແຫ່ງ
ສະມະນະທັບທັງມວນແລ.

ອະທັງ ທຣັພະຍັງ ພາຄັງ ອະທິສະມັຕຕັງ ທັມມະສາຕຣະ–
ເກນານາ ທະສິຕາ ຄະຫັດເກ ນີຣະປັຕກະ ພຣາຫະມະນັມປິ
ວິທິພາຄິຍະ ວາກຂະຍາ ສະມັຕຕາ ອິທັງ ທຣັພຍັງ ວິພາຄັງ
ອັນວ່າ ກິຍາອັນແຈກແບ່ງເຂົ້າຂອງອັນນີ້ ສະມັຕຕາ ທັມມະສາຕ
ຣະເກ ຫາກເປັນທັມມະສາດອາດຍາ ແຫ່ງສຳມຸດຕິເທວະຣາຊເຈົ້າ
ທະສິຕາກໍສຳແດງ ຄະຫັຕເກໃນຄົນຄະຫັດ ນານາ ຫາກເປັນອັນ

ຕ່າງ ວານະປັຕກະ ພຣະທະມະນັມປີ ແມ່ນໃນອັນເປັນຄົວນັກ ບວດສາມຕົນນີ້ ອັນຢູ່ທີ່ໜຶ່ງທີ່ດຽວກັນ ໄດ້ບໍຣິຂານມາກໍບໍຣະໂພກທີ່ ດຽວກັນແລ ແຈກຄົວແຫ່ງພຣາມະນະສາມຈຳພວກນີ້ກໍດີ ນານາ ກໍເປັນອັນຕ່າງ ອາທີ ນັກວ່າ ປຸພພະໂຕແຕ່ຕົ້ນແຕ່ເຄົ້າພຸ້ນມາ ແລ ວິພາຄິຍະ ວາກຂະຍະ ອັນວ່າກ່າວຍັງກິຍາແຈກຄົວ ສະມັຕ ຕາກໍແລ້ວແລ.

ອະທິບາຍວ່າ ຄອງອັນເປັນຄົວແຫ່ງຄົນຄະຫັດ ກໍຫາກຕ່າງ ອັນໜຶ່ງ ເປັນຄົວແຫ່ງນັກບວດແລພາມ ສາມຈຳພວກນັ້ນ ກໍຫາກ ຕ່າງບໍ່ເຈືອກັນ ອັນໜຶ່ງກໍຫາກເປັນຄອງທັມມະສາດອາດຍາ ແຫ່ງ ພະຍາສຳມຸດຕິເທວະຣາດເຈົ້າຕັ້ງໄວ້ ແຕ່ເຄົ້າພຸ້ນແລ ນັກປາດເຈົ້າ ຝູງວິນິດໄສພິຈາລະນາແບ່ງປັນຄົວ ໃຫ້ຫລິງດູຍັງຜູ້ຈັກແທນຄົວຜູ້ ຕາຍ ດ້ວຍກັນອັນຕ່າງໆ ຜູ້ໃດເປັນການ ແລບໍ່ເປັນການເປັນຄຸນ ແລ ບໍ່ເປັນຄຸນດັ່ງກ່າວມາແຕ່ພາຍຫລັງພຸ້ນເທີ້ນ.

ບັດນີ້ ຈັກຕັ້ງຍັງ ພັນທະ ອະພັນທະ ພັນທິຍະຕິດັ່ງນີ້ : ອະໂທສາ ກາຣັຕເວ ໂທສະເຣ ຕັງໂທສັງ ອັປປະກັງ ສິຍຸງ ອຸຈ–ຈະບັຕຕິ ອະໂທເສ ກະຣຸ ພະລະຫາໂທສັງ ຄັດສັມປັຕເຕ ໂທເສ ພັນທະຕິ ດັ່ງນີ້ເປັນເຄົ້າ ນັກປາດເຈົ້າທັງຫລາຍເພິ່ງຮູ້ເທີ້ນ ຊະ ນາ ອັນວ່າຄົນທັງຫລາຍ ອະໂທສາ ອັນຫາໂທດບໍ່ໄດ້ ກຣັຕເວ ແລກະທຳ ໂທສະເຣ ໃນຄົນຜູ້ມີໂທດ ຕັງໂທສັງ ອັນວ່າໂທດອັນ ນັ້ນອັປປະກັງສິຍຸງ ກໍມີນ້ອຍແກ່ຜູ້ກະທຳແລ ຊະໂນ ອັນວ່າຄົນຈະ ປະຕິ ກໍຍົກໃສ່ ອະໂທເສ ໃນຄົນຜູ້ຫາໂທດບໍ່ໄດ້ ກະຣຸງແລກະທຳ ຄັດສັມປິເຕ ກໍເກີງ ພະລະຫາໂທສັງ ຍັງໂທດອັນມາກ.

ອະທິບາຍວ່າ ຜູ້ບໍ່ຜິດກະທຳຜູ້ຜິດມີຕົ້ນວ່າ ຕີບຕີໂທດອັນນັ້ນ ກໍໄດ້ນ້ອຍ ນັກວ່າ ຜູ້ບໍ່ຜິດຕີຍັງຜູ້ຜິດເລືອດບໍ່ອອກ ກໍຄວນກະທຳຂັນ ຕີແຕ່ຊາວ ຜິແຕກພໍເລືອດອອກຍັງກະທຳສູ່ຂວັນຫົກສິບ ກະຫາປະ ນະເວີນ ຜິຜູ້ຜິດຍົກໃສ່ຍັງໂທດແກ່ຜູ້ຫາໂທດບໍ່ໄດ້ ແລກະທຳຮ້າຍ

ແກ່ທ່ານ ຜີຕິເລືອດບໍ່ອອກ ໃຫ້ກະທຳສູ່ຂວັນຫົກສິບແລ້ວໄໝສິບກະຫາປະມະເທີ້ນ ຜີເລືອດອອກແທ້ໃຫ້ກະທຳສູ່ຂວັນຮ້ອຍຊາວ ກະຫາປະມະແລ້ວໄໝເກົ້າຄ່າຄົວຄົນແກ່ມັນເທີ້ນ.

ໄນຍະໜຶ່ງສອງຜິດກັນ ເຂົາຕີກັນຊູ່ຄົນຕໍ່ມືກໍດີ ຄ້ອນກໍດີ ບໍ່ແຕກ ຜູ້ຕີລຸ້ນພອຍເລົ່າແຕກ ໂທດເທົ່າກັນເທີ້ນ ອັປປະເກໂທເສໃນເມື່ອຄົນຜູ້ມີໂທດອັນນ້ອຍ ພັນທະຕີ ແລຜູກມັດ ສັລລັກຂະເປນັກປາດກໍຄວນກົດໝາຍຮູ້ ປະທິສສະເຣ ກໍຄວນເຫັນດ້ວຍ ປະວິກິ-ຍະທັມມະຈັກຂຸ ຄືວ່າປະຫຍາ ອັນພິຈາລະນາເຫັນຍັງໂທດອັນນັ້ນອັປປະໂກ ໂທຕີ ວ່ານ້ອຍ ພັນທັສສະ ແກ່ຜູ້ມັນຜູກມັດທ່ານນັ້ນຕັງ ໂທສັງ ອັນວ່າໂທດອັນນັ້ນ ສາຍະຣູປັງ ຕະນາຣະຫັງຍັງຄວນແກ່ກະທຳຜູກເຂົ້າເລົ່າຂວັນມັນຜູ້ຈັບແລ ມັກວ່າ ຄົນອັນມີໂທດແທ້ເທົ່າໂທດອັນນ້ອຍແຕ່ຜູກມັດ ຜູ້ພິຈາລະນາ ກໍຄວນແກວດກົດໝາຍຍັງໂທດອັນນັ້ນມີນ້ອຍແກ່ມັນ ມັກວ່າບໍ່ຄວນຈັກໄໝ ກໍ່ຍັງດີໃຫ້ສູ່ຂວັນມັນຜູ້ຈັບນັ້ນແລ ພັນທະເຣ ໃນເມື່ອກຳອັນຄວນຜູກມັດໂທສະເກ ຍັງຄົນຜູ້ມີໂທດ ພັນທິ ກໍຜູກມັດ ປະຕິຣູປັສສະເກ ໂທ-ສະເກ ອັນຄວນແກ່ໂທດອັນມີ ອະໂທສາ ອັນວ່າກິຍາອັນຫາໂທດບໍ່ໄດ້ ພະເວຍຍະ ກໍເພິ່ງມີ ພັນທັສສະວະແກ່ຜູ້ຜູກມັດ ທີຣາ ອັນວ່ານັກປາດທັງຫລາຍ ວິຈາເຣຍຍະ ກໍພິຈາລະນາດູ ອັປປະພະລະຫາ ຍັງໂທດອັນນ້ອຍອັນໃຫຍ່ແຫ່ງໂທດອັນນັ້ນເທີ້ນ.

ອະທິບາຍວ່າ ຜູ້ເປັນໂທດອັນຄວນຜູກມັດຮັດ ກໍຫາໂທດບໍ່ໄດ້ແກ່ຜູ້ຜູກນັ້ນແລ ຜູ້ພິຈາລະນາ ກໍເພິ່ງພິຈາລະນາຫາໂທດອັນຄວນຜູກແລ ບໍ່ຄວນຜູກນັ້ນແລ້ວ ກໍເພິ່ງແຕ່ງທັນດະຕາມໂທດອັນນ້ອຍອັນໃຫຍ່ເທີ້ນ.

ທະເວ ຊະເນ ໃນເມື່ອສອງຄົນ ຄັຄຣະຕີ ແລໄປຊູຂ້າຍັງທ່ານມະຄາເຕ ໃນເມື່ອເຈົ້າທີ່ ໄດ້ຂ້າຍັງທ່ານຜູ້ຊູນັ້ນຕາຍ ໂທສາອັນວ່າໂທດ ນັຕຖິ ກໍບໍ່ມີ ກາມັສສະແກ່ຜູ້ເຈົ້າທີ່ແລ ການະມະເຕ

ໃນເມືອຜູ້ໄປ່ຊູໄດ້ຂ້າເຈົ້າທີ່ຕາຍ ທັມດາຣະຫະຕິ ກໍຄວນໄໝ ທັນ
ດະເກ ໃນອັນໃສ່ສິນໄໝ ປະນະວັສເສວະ ແກ່ຜູ້ຊູສີ່ງດຽວ ມັກວ່າ
ສອງຜິດກັນ ແລກືເອົາອາວຸດຫອກດາບຊູ່ຄົນ ມີຜູ້ໜຶ່ງແລຊູໄປຂ້າ
ທ່ານເກີງທີ່ ຜູ້ເຈົ້າທີ່ໄດ້ຂ້າຜູ້ໄປຊູຕາຍຫາໂທດບໍ່ໄດ້ແກ່ເຈົ້າທີ່ ຜູ້ໄປ
ຊູໄດ້ຂ້າເຈົ້າທີ່ຕາຍ ຄວນໃສ່ສິນໄໝແກ່ຜູ້ໄປຊູຂ້າທ່ານເກີງທີ່ນັ້ນໃຊ້
ຄ່າຜູ້ຕາຍສອງຄົນ ແລສິນໄໝຄ່າຄົນຜູ້ຂ້າໜຶ່ງ ແມ່ນວ່າຜູ້ກື້ຄອນກໍ
ດີ ໄປຊູຂ້າທ່ານ ຕີທ່ານຕາຍ ກໍແຕ່ງສັມດຽວນັ້ນເທີ້ນ.

ໄນຍະໜຶ່ງ ຜີຜູ້ໄປຊູທ່ານເກີງທີ່ນັ້ນ ໃຊ້ຄ່າຜູ້ຕາຍສອງຄົນ
ສິນໄໝຄ່າຄົນຜູ້ມັນຂ້ານັ້ນໜຶ່ງ ຜູ້ໄປຊູທ່ານບາດເຈັບຕາຍ ກໍຫາກ
ແລ້ວ ຜີເຈົ້າທີ່ເຈັບແຕ່ບໍ່ຕາຍ ຜີເຈັບແລບໍ່ເສຍອົງຄະໃຫ້ສູ່ຂວັນຜູ້
ເຈັບນັ້ນຮ້ອຍຊາວກະຫະປະນະ ເປັນຄ່າຢາສິນໄໝເກີ່ງຄ່າຕົວມັນ
ຜີເຈັບບາດພໍເສຍອົງຄະແຫ້ ໃຫ້ສູ່ຂວັນຜູ້ເຈັບສິນໄໝຄ່າຕົວມັນໜຶ່ງ
ຜີເຈັບດ້ວຍບາດຄອນພໍເລືອດອອກ ກໍໃຫ້ແຕ່ງສິນໄໝສີ່ງດຽວ ນັ້ນ
ເທີ້ນ ຜີບໍ່ແຕກເລືອດບໍ່ອອກ ໃຫ້ສູ່ຂວັນແຕ່ຫົກສິບ ສູ່ຂວັນຮ້ອຍໜຶ່ງ
ກະຫະປະນະ ທະເວ ກັນເຫ ໃນເມື່ອສອງກະທຳຜິດກຽງກັນສະ
ກັຕກາເນ ໃນທີ່ຢູ່ແຫ່ງຕົນຊູ່ຄົນ ທັຕເກວຸທາ ອັນມີມືກືອາວຸດສະ
ກະກາມາ ແຕ່ທີ່ແຫ່ງຕົນ ທັນດະກັງ ອັນວ່າໂທດຄວນໃສ່ສິນໄໝ
ນັຕກິ ກໍບໍ່ມີ ຕາສັງແກ່ຄົນຜູ້ມີມືກືອາວຸດແລຢູ່ທີ່ຕົນນັ້ນແລ ເອກັຈ-
ໄຈອັນວ່າຄົນຜູ້ໜຶ່ງ ນິກຂັນໂຕ ອັນອອກໄປ ສະກະໂຕ ຈາກທີ່ຢູ່
ແຫ່ງຕົນ ມັຊຊະເຣຕກຸ້ມປີ ແມ່ນຢືນທີ່ກາງ ມີສສະກາ ກໍເຈືອກັບ
ດ້ວຍໂທດແລ.

ອະທິບາຍວ່າ ສອງຜິດກຽງກັນ ດ້ວຍກ້ອຍຄຳອັນຕ່າງໆຢູ່ໃນທີ່
ຊູ່ຄົນບໍ່ອອກຈາກທີ່ຕົນ ແມ່ນມີກືອາວຸດກໍດີ ກໍໄປ່ຄວນໃສ່ສິນໄໝ ຜູ້
ໜຶ່ງແລຍ້າຍອອກຈາກທີ່ຕົນ ແລກືອາວຸດຫອກດາບ ຢືນຢູ່ລະແວກ
ຫວ່າງກາງທາງກໍເປັນໂທດ ຜີກືອາວຸດໄໝຮ້ອຍສິບ ຜີກືຄ້ອນໄໝ
ຫ້າສິບ ຜີກືດາບແລຫອກເຂົ້າຊູເກີງທີ່ທ່ານ ທໍ່ໄປ່ໄດ້ຂ້າແຫງໄໝ

ເກືອງຄ່າຄົງມັນ ຜີກໍ່ຄອນເຂົາຊູທີ່ທ່ານວ່າ ຈັກຕີກໍບໍ່ໄດ້ຕີໄໝສິບເອັດກະຫາປະນະແລ.

ວິຈາເຣ ໃນເມື່ອຜູ້ພິຈາລະນາ ຕາເມື່ອສັ່ງສອນຄົນທັງຫລາຍໃຫ້ຮູ້ບັງຄອງ ອະນຸຮູປະຕຸ ຈົ່ງຫລິງດູໃນທີ່ຄວນໄໝ ຄະຣຸ ລະຫຸ-ນາຈ ບັງໂທດອັນໜັກແລເບົາ ຍະຖານາ ໂດຍປະການມີສົນໃດອັງຄານຸອັງຄະວັຕຕັງ ບັງອັນຄວນແຫ່ງໂທດອັນນ້ອຍອັນໃຫຍ່ ສົມປາທຍາເພິງແຕ່ງ ຕະຖາທັນດັງ ບັງໂທດອັນຄວນແຕ່ງອັນໄໝໂດຍອັນມີຕາມໂທດ ອັນສົມອັນຄວນກໍດີແຫ່ງຜູ້ມີຍົດແລຫາຍົດບໍ່ໄດ້ກໍດີ ໂດຍປະການຕາມອັນນັ້ນເທີ້ນ.

ອະທິບາຍວ່າ ຜູ້ພິຈາລະນາສັ່ງສອນບັງຄົນທັງຫລາຍ ອັນຜິດຄອງແລໃຫ້ເຂົາເຫັນແຈ້ງ ບັງຄອງອັນກະທຳຜິດ ແຫ່ງເຂົາຕາມໂທດອັນໜັກອັນເບົາ ປຸນຈັກຄວນໃສ່ສິນໄໝເທົ່ານີ້ ຕາມໂທດ ແລວັດຖຸອັນ ໜັກອັນເບົາ ຕາມຜູ້ມີຍົດນ້ອຍຍົດໃຫຍ່ ແລຫາຍົດບໍ່ໄດ້ຕາມກະກຸນເທີ້ນ.

ປະການໜຶ່ງ ທະເວ ຊະເນ ໃນເມື່ອສອງຄົນ ວິຣຸທະວາ ອັນຜິດກຽງກັນ ນານາເພທາ ອັນປະເພດຕ່າງໆກັນ ອະຫຸຈະເກໃນເມື່ອຄຳອັນຊູ່ດ່າ ປະກະເນກ່ອນ ເອກະວາຈາມັຕເຕ ມາຕຣາຄວາມດຽວໜຶ່ງ ອິຕະໂຣ ອັນວ່າຄົນຜູ້ເປັນຄູ່ຜິດກັນນັ້ນ ປັດສາໂກສິ ແລດ່າເມື່ອລຸນ ທຸຕິຍະປະຖາ ສຽງວ່າສອງຄວາມ ສາທິສາເມກໍຈົ່ງສະເໝີກັນ ອະທິກາພາເສ ໃນເມື່ອຜູ້ດ່າບັງລື່ນກວ່ານັ້ນ ທະທາເປຍບັງ ກໍເພິ່ງໃສ່ ເສສະທັນດັງ ບັງສິນໄໝແກ່ຜູ້ດ່າເຫລືອນັ້ນວະຈິວາ ທັກຂະເສນະ ດ້ວຍຄຳປາກອັນກ້າແຂງ ທະເວ ສະມາທິສະຕະປະມານະກະຫາປະນັງ ບັງກະຫາປະນະ ປະໝານວ່າຮ້ອຍຊາວ ປຸຣິສັສສະແກ່ຜູ້ຊາຍ ເຈ ອິຕກິ ກໍາຜູ້ຍິງ ສະປາທັງ ປະມານິກັງ ສາມສິບກະຫາປະນະແລ ປະຫາຣະທັນດາປິ ແມ່ນຕີດ້ວຍຄ້ອນກໍດີ ອະຖາທະຍັຄເຄ ໃນທີ່ອັນບໍ່ໃຊ່ທີ່ແຫ່ງຜູ້ໃດ ປະກະມະພິຊ-

ຊີເຕ ໃນເມື່ອຜູ້ຕີ່ກອນແລແຕກ ປັດສາປະຫາເຣຍຍະ ພິຊີເຕ ຜູ້ຕີລຸນແລບໍ່ແຕກ ເຕໂທສາ ອັນວ່າໂທດແຫ່ງຂາທັງສອງນັ້ນ ສະ–ເມ ແລຈັກສະເໜີນັຕກິ ກໍຫາບໍ່ໄດ້ແລ ປະກຸະມັທຍະ ທັນດັງ ກໍເພິງໃສ່ສິນໄໝເຄິ່ງໜຶ່ງ ແກ່ຜູ້ຕີກ່ອນແລ ປະກຸະມະຫາຣະທັນດາ ອັນວ່າຜູ້ຕີກ່ອນ ອະພິນທິກາ ອັນບໍ່ແຕກ ປັດສາປະຫາເຣ ໃນເມື່ອຜູ້ຕີພາຍລຸນ ພິຊຊະຕິ ກໍແຕກພໍເລືອດຕົກ ສະທິສະເມວະກໍຖືສະເໜີກັນ ປະການໜຶ່ງ ປະຫາຣະປັດສາ ອັນວ່າ ຜູ້ຕີພາຍລຸນເຈ ອົງຄະປະຣະວິນາສສະຕິ ປັດສານິກາ ອັນວ່າຜູ້ຕີລຸນແລໃຫ້ທ່ານຜູ້ຕີກ່ອນນັ້ນເສຍອົງຄະມີຕີນວ່າ ແຂນຫັກຕາແຕກ ເພສັຊຊາທາເປຍຍະ ກໍເພິງໃຫ້ຢາປິ່ນປົວ ທັນທັງທາເປຕິ ກໍເພິງແຕ່ງສິນໄໝໃສ່ເຄິ່ງຄ່າຄົນແກ່ຜູ້ຕີເມື່ອພາຍລຸນແລ ໃຫ້ທ່ານເສຍອົງຄະນັ້ນ ເຫດໃດແລມາໃສ່ສິນໄໝເຄິ່ງຄົນຈາ ? ປະກຸະມະປະຫາຣະຕັຕຣາ ເຫດມັນຫາກຕີທ່ານກ່ອນ ໃຫ້ທ່ານເຈັບພໍເລືອດອອກດາຍ ອະປິຈະປະການໜຶ່ງ ອັນຍັງ ປະຣິຫາຣິເກ ໃນເມື່ອຜູ້ຫນຶ່ງແລຕີ ອິຕຣະອັນວ່າຜູ້ໜຶ່ງແລພໍເລືອດຕົກ ທະວະຍະສະຕະຣູປະມະເຣຫາ ຄວນກະທຳສູ່ຂວັນສິບສອງກະຫາປະນະແລ ໃສ່ສິນໄໝ ອະທະຕາເຄິ່ງຕົນມັນ ປະການໜຶ່ງ ເຈ ພິນາອະເພທະກາ ໃນເມື່ອຜູ້ໜຶ່ງແລຕີທັນດະກະເຣມະ ດ້ວຍຄ້ອນ ອະພິນທະກາອັນບໍ່ແຕກ ອະທະສະຕະນາຣູປາປະນັງ ຄວນກະທຳສູ່ຂວັນທ່ານຫົກສິບກະຫາປະນະ ເອ–ກະທະສະສະຕະທັນດັງ ຄວນໄໝຮ້ອຍສິບເອັດແລ ເຈ ມະເຕໃນເມື່ອຜູ້ໜຶ່ງແລຕາຍ ທັນດະກາເຕຍຍະ ຕະກຸາເປຍຍະ ກໍເພິງໃຫ້ໃຊ້ຄ່າຜູ້ຕາຍສາມຄົນເຫິ້ນ ໄນຍະໜຶ່ງ ຜູ້ຕາຍນັ້ນກໍຜິດແທ້ ທີ່ໄປ່ພໍ້ຂາເສຍ ໃຫ້ໃຊ້ຄ່າຜູ້ໜຶ່ງຄືວ່າ ທັນດະໄໝຄ່າຄໍມັນເຫິ້ນ ໄນຍະໜຶ່ງ ເວວິຕະຣາຄະ ໃນເມື່ອມັນຜູ້ນັ້ນມີໂທດຄວນຂ້າແລ້ວ ອະກິ–ຍຸສສະຊາເນຍຍະ ແລບໍ່ກ່າວອາດຍາ ມັກວ່າມັນຫາກຂ້າເສຍດ້ວຍຕົວຄືວະໂທໂສ ອັນວ່າໂທດຄ່າຄໍມັນ ໂຫຕິ ກໍມີແລ ຈະ ປະການໜຶ່ງ

ຜີມັນຜູ້ຕາຍເປັນໄທດໜັກມີຕົ້ນວ່າ ລັກຂອງທ່ານເອົາໄປສູ່ພິຈາລະ
ນາ ມັນກຶເຄືອງອາວຸດຣິບເລວທ່ານ ໄດ້ຂ້າຕາຍເສຍ ຢ່າໃຫ້ເປັນ
ໄທດແກ່ຜູ້ຂ້າເທີ້ນ ຜີຍັງຮູ້ຈັກມັນແຈ້ງແທ້ ກໍຢ່າຟ້າວຂ້າຕີເສຍ
ໃຫ້ຮອດເຈົ້າໄທ ໃຫ້ເອົາມາໄຕ່ຕອງດູໄທດ ອັນຄວນຂ້າຈຶ່ງຂ້າເສຍ
ຜີບໍ່ຮອດເຈົ້າໄທ ແລຣິບຂ້າເສຍໃຫ້ໃຊ້ຄ່າມັນຜູ້ໜຶ່ງ ຜີບໍ່ຮູ້ຈັກທ່ານ
ແລດລ້ອມອ້ອມເອົາມັນ ມັນບໍ່ອ່ອນຍັງດິ້ນຣິບທ່ານໄດ້ຂ້າຕາຍກໍຫາກ
ແລ້ວ ເຫດກຳແຫງມັກຊຸກໃຫ້ກະທຳຜິດມັນຈຶ່ງຕາຍດາຍ ປະການ
ໜຶ່ງ ຜູ້ໄປຫລິ້ນຊູ້ສູ່ເມຍທ່ານກໍດີ ຄັນຈັບໄດ້ຂ້າເສຍແລ ຜີເມຍມັນ
ຫາກໃຫ້ຄຳປະຕິຍານຂານຄຳວ່າແມ່ນແລ້ວ ຜີຂ້າທັງເມຍຕົນເສຍ
ໄດ້ແທ້ ຈຶ່ງຢ່າໃຫ້ເປັນໄທດເທີ້ນ ປະການໜຶ່ງໄດ້ກັບເມຍຕົນກໍດີ
ເທົ່າມາດຕາມັດແຕ່ຜູ້ຊາຍ ບໍ່ມັດຮັດຍັງເມຍຕົນກໍຄວນໄໝຮ້ອຍສິບ
ກະຫາປະນະແລ ໃຫ້ກະທຳຂວັນທັກສິບກະຫາປະນະເທີ້ນ ໄທດ
ອັນຜິດເມຍທ່ານນັ້ນໃຫ້ຕາມຄອງຣາຊທັນດະ ອັນຕັ້ງນັ້ນເທີ້ນ ຜີ
ຫາກມັດຮັດທັງເມຍກັບຜູ້ຊາຍ ຄວາມກໍແລ້ວກັນ ມັດແຕ່ຜູ້ຊາຍເມຍ
ຕົນບໍ່ມັດດັ່ງນັ້ນ ບາງຄາບກະທຳເພທຸບາຍຄອບງຳໄຄ່ໃຫ້ທ່ານເປັນ
ໄທດກໍມີແລ ໄນຍະໜຶ່ງເມຍມີຊູ້ຫາກເລົ່າແກ່ຜົວຕົນ ບໍ່ຄວນໄໝ
ເມຍໃຫ້ໄໝແຕ່ຜູ້ຊາຍເທີ້ນ ແມ່ນຜູ້ຊາຍມີຊູ້ກັບເມຍທ່ານ ມັນ
ຫາກມາກ່າວແກ່ຜົວ ຢ່າໃຫ້ໄໝຄ່າຕົນມັນ ໃຫ້ໄໝເຄິ່ງຄ່າຕົນມັນ
ຜີຂ້າພາກັນລັກໜີ ມິດສາຈານຢ່າໃສ່ໄທດ ໃຫ້ໄໝພູດອັນມັນລັກນັ້ນ
ເທີ້ນ ແມ່ນວ່າມີຜູ້ໜຶ່ງມັນລັກເອົາຂ້າທ່ານໜີ ມັນຮູ້ໄທດຫາກມາ
ກ່າວແກ່ຜູ້ເຈົ້າໄທດຢ່າໄໝ ທໍ່ໃຫ້ໄລ່ເອົາຄ່າຣາມຂາຕົວສຽງ ແມ່ນ
ຜູ້ລັກເອົາຂອງທ່ານອັນໃດກໍດີ ຫາກມາກ່າວ ມາເລົ່າແກ່ເຈົ້າຂອງ
ໄທດຢ່າໄໝເທົ່າໃຫ້ໃຊ້ຄ່າຕົວສຽງ ຜີຜູ້ໜຶ່ງມັນເຂົ້າມາລັກກິນທ່ານ
ແລ້ວ ມັນມາກ່າວສ້ຽງແກ່ເຈົ້າຂອງ ໄທດຢ່າໃສ່ມັນ ຄຸນອັນມັນຈັກ
ໄດ້ກິນ ກໍຢ່າໃຫ້ໄດ້ກິນ ພູດມັນກິນມີເທົ່າໃດ ໃຫ້ຄືນແກ່ເຈົ້າຂອງຕົວ
ສ້ຽງເທີ້ນ ແມ່ນມັນບໍ່ຮູ້ຈັກເຈົ້າຂອງກໍດີ ມັນສິ່ງຂ່າວແກ່ເຈົ້າໄທໃຫ້

ປາກົດແກ່ເຈົ້າຂອງກໍດີ ເຫດມັນໄດ້ເອົາເຂົ້າມາສືບກິນດອມຜູ້ລັກກິນ ເທົ່າໃດໃຫ້ຄິດເອົາພູດອັນມັນໄດ້ກິນ ຄືນແກ່ເຈົ້າຂອງຕົວສູງ ຄຸນຢ່າໃຫ້ມັນກິນໂທດກໍຢ່າໃສ່ມັນເທີ້ນ ໂທດມັນຫາກລຶບເສຍແລ້ວແລ ຍັງອຳໄວ້ໄຕ່ຫາຈື່ງວ່າມີ ໃຫ້ໄໝສະເໝີລັກ ພູດອັນມັນໄດ້ກິນ ກໍໃຫ້ຄືນແກ່ເຈົ້າຂອງຕົວສູງເທີ້ນ.

ເວທະກຸລັດເສທະ ພິນາສສະ ຣະປີເສ ວິຣັທທະເກ ຕັນທີພະຣິກາຣຸຕັພພັງ ປະໂຍໂຄ ຍະກາ ວາຈະບັງເລປີ ອະກະຣະສະພະຣິເກ ມະຣະຄະວະທິເສນະ ສະບັງສັມທີ ມະຕະພັນທະບຸງກະຣຸມທີ ນັຕກິ ພັນດະທາເສທະ ພິນທາ ອັນວ່າຜູ້ຕັດເສຍບັງຕົ້ນໄມ້ມະລ້າງເສຍກໍດີ ເທວະກຸລັງ ບັງທີ່ອັນຄົນທັງຫລາຍຫາກສົມມຸດຕິວ່າເປັນທີ່ເສື້ອເມືອງຢູ່ ວິຣຸທທະເກ ໃນເມືອກະທຳຜິດ ຄະຣະປີເສ ບັງເຮືອນອັນກໍວ່າມີດ້າມີຜີເຮືອນ ພະລິກາຣຸນຕັພພັງເພິ່ງໃຫ້ກະທຳພະລິກຳ ຕາມອັນກົດໝາຍເປັນຂອບ ເປັນແດນນັ້ນ ເຈປີອະກິສສະຜິແລມີຜູ້ໜຶ່ງບໍ່ກະທຳ ພະລີເກບັງເຄື່ອງພະລີແກ່ເທວະດາເສື້ອເມືອງກໍດີ ມະເຣທະເຣທິເສ ໃນເມືອຄົນກໍດີ ງົວຄວາຍກໍດີມາສະບັງ ແລຈິບຫາຍ ກໍໃຫ້ຫາຕົ້ນໄມ້ ອັນມີມິ່ນທີ່ນອັນງາມໃຫ້ມັນດີດັ່ງປົກກະຕິ ຜີມັນບໍ່ທຳພະລີສັງໃນບ້ານນັ້ນຈິບຫາຍເສຍ ຈຳໃຊ້ຄ່າທັງມວນຫາກບໍ່ມີອັນໃຊ້ ໃຫ້ເອົາຄົນມັນແລຕົວມັນໃຊ້ການຝູງຈິບຫາຍເສຍ ຜີງົວຄວາຍຕາຍໃຫ້ໃຊ້ການເຖິງສາມປີ. ຕົວໃໝ່ເກີດມາພໍຊຸກພໍເຂັ້ນຈື່ງວາງ ລ້ຳກວ່ານັ້ນຢ່າວາງເທີ້ນ ອັນໜຶ່ງ ມີສສາຣະຄັງເຮືອນອັນທ່ານກໍດ້າຄຳຜີ ມີຜູ້ໃດຜູ້ໜຶ່ງໄປກະທຳຜິດກັບຢາວເຮືອນທ່ານດ້ວຍອັນໃດກໍດີ ມີຕົ້ນວ່າຕີກັນພໍເລືອດຕົກຢາງອອກ ໃຫ້ສະປີຕັກກະສອງງົວ (?) ແລສັດສີ່ງທຽນທົກຄູ່ເງິນຮ້ອຍໜຶ່ງແປງດ້ຳແປງຜີເຮືອນທ່ານ ຜີຕີແລບໍ່ແຕກເລືອດບໍ່ຕົກຢາງບໍ່ອອກໃຫ້ຫາ ສັດຈະຕັກກະ (?) ງົວໜຶ່ງໄກ່ຄູ່ໜຶ່ງ ທຽນຄູ່ໜຶ່ງ ເງິນຫ້າບາດ ແປງດ້ຳແປງຜີເຮືອນທ່ານ ຜີຕີລູກແຕກແລພາຂຶ້ນເຮືອນທ່ານ ໃຫ້ຫາ

ສະປິຕັກກະງົວໜຶ່ງ ໄກ່ຄູ່ໜຶ່ງ ທຽນຄູ່ໜຶ່ງ ເງິນຮ້ອຍໜຶ່ງ ແປງ
ດ້ຳແປງຜີເຮືອນທ່ານ ຜີກະທຳຜິດເສົາມຶ່ງ ເສົາຂວັນທ່ານແຕ່ລຸ່ມ
ລ່າງໃຫ້ມີສະປິຕັກກະໜຶ່ງ ໄກ່ຄູ່ໜຶ່ງ ທຽນຄູ່ໜຶ່ງ ເງິນຫ້າບາດແປງ
ຜີທ່ານ ຜີກະທຳຜິດຄືໄຟໄຫເຂົ້າທ່ານກໍດີ ເຄາະຕີຫົວຂັ້ນໄດໄກ່
ນ້ອຍທ່ານຝູງນີ້ວ່າຜິດ ກໍໃຫ້ຫາສະປິຕັກກະການໜຶ່ງ ໄກ່ຄູ່ໜຶ່ງທຽນ
ຄູ່ໜຶ່ງ ເງິນບາດໜຶ່ງແປງທ່ານ ຝູງນີ້ເຂົາຫາກກະທຳຜິດດ້ວຍຕົນ
ເຂົາຮູ້ໂທດແລ້ວ ບໍ່ຫາເຄື່ອງມາແປງທ່ານ ສັດສີ່ງົວຄວາຍ ຂ້ອຍ
ຄົນລູກຫລານທ່ານເຮືອນນັ້ນ ລົ້ມຕາຍຫາຍໃຫ້ໃຊ້ຄ່າຕົວສ້ຽງ ຜີ
ເຫັນທ່ານປ່ວຍເປັນພະຍາດ ໄປ່ໄດ້ລົ້ມຕາຍໃຫ້ສິມມາຜີເຮືອນທ່ານ
ຮ້ອຍໜຶ່ງ ແລ້ວໃຫ້ສູ່ຂວັນຜູ້ຄົນປ່ວຍຫົກສິບເທີ້ນ ຜີງົວຄວາຍທຳຜິດ
ເສົາແຮກແປກຂວັນທ່ານ ໃຫ້ເຈົ້າເຮືອນຫຍຸບມັດໄວ້ ໃຫ້ກ່າວເຈົ້າ
ຂອງ ຜ່າຄ່າສັດຕົວຜິດນັ້ນເຄິ່ງໜຶ່ງ ແປງດ້ຳແປງຜີທ່ານ ຜີບໍ່ໄດ້
ຮູ້ຈັກເຈົ້າຂອງ ໃຫ້ກ່າວບອກແລ້ວຜ່າຄ່າສັດຕົວຜິດນັ້ນເຄິ່ງໜຶ່ງ ພະ
ລີຜີເຮືອນທ່ານຜີງົວຄວາຍຢ່ຳລານເຂົ້າ ກິນເຂົ້າແຮກທ່ານກໍໃຫ້ຫາ
ສະປິຕັກກະສອງການ ໄກ່ສອງຄູ່ ທຽນສອງຄູ່ ເງິນຫ້າບາດ ແປງ
ຜີມາ ຜີເຮືອນທ່ານ ງົວຄວາຍກິນກ້ານມາແຮກທ່ານໃຫ້ສະປິຕັກກະ
ການໜຶ່ງ ໄກ່ຄູ່ໜຶ່ງ ທຽນຄູ່ໜຶ່ງ ເງິນຊາວຫ້າບາດ ແປງຜີມາຜີ
ເຮືອນທ່ານຜີຫຍຸບ ບໍ່ໄດ້ຮູ້ຈັກເຈົ້າຂອງ ໃຫ້ກ່າວບອກມາແປງທ່ານ
ທ່ານບອກແລ້ວ ບໍ່ມາຕົບແຕ່ງແປງທ່ານ ສັດສີ່ງົວຄວາຍມາລວາ
ຊ້າງທ່ານວິນາດເສຍ ບໍ່ຕາຍໃຫ້ຫາຈິງໄດ້ ຜີບໍ່ໄດ້ໃຫ້ໃຊ້ຄ່າເຄິ່ງໜຶ່ງ
ຜີຜູ້ອື່ນໄດ້ໃຫ້ມັນເສຍຄ່າຍາກ ເອົາມາໃຫ້ແກ່ເຈົ້າຂອງເທີ້ນ ກ່າວ
ທັມມະສາດສັນນີ້ ຫາກເປັນຄອງແຕ່ສຳມຸດຕິເທວະຣາດເຈົ້າ ມາ
ແລ ທີໂຣ ອັນວ່າ ນັກປາດຜູ້ພິຈາລະນາ ທາເປຕິ ກໍໃຫ້ເພິ່ງໃສ່
ທັນດັສສະແກ່ຄົນຜູ້ຄວນໃສ່ ຍັງໂທດກໍດີ ຍະກາພູຕັງ ໂດຍອາທິ
ກອນອັນເປັນໂທດ ອັນເກີດມີ ນະຣະທຸສສະແກ່ຊາວເມືອງຝູງກະ
ທຳຜິດຄອງອະບັງທັມໂມ ອັນວ່າພາວ່ະອັນນີ້ ວະເມຕິ ກໍສັ່ງສອນ

ໃຫ້ເຂົ້າລະເສຍບັງຄອງອັນຜິດ ນັພພະພູຕະບັງ ກໍເພິ່ງໃຫ້ໄດ້ເມືອ ເກີດສະຫວັນສຸກ ສັຄຄະເຕ ໃນສະຫວັນເທວະໂລກ ນະຄະຣະສາ ທຸງ ບັງຊາວເມືອງທັງຫລາຍໃຫ້ສຸກກະເສີມດີແລ.

ລິກຍະປະຕະບັງ ກັນຫາມະວະໂນ ທະເວ ກັນເຫວີໂຣທທະ ກຣັຕເວ ທຸວິທາ ໂທສາ ທັທທາປເປ ກັນຍາອານະສັມພູຕຣາ ອະ ຕິກະປະມານີ ກະເຕ ຄັນທາຕິ ທຣັພະບັງ ວິໂຣເທຍຍະ ສວາປ-ປັສສະນະ ສິຍາ ໂທໂສທັນດະ ນະໂຫຕິ ທຣັພຍັສເສທະ ຄັນທະ-ມາເນ ໃນເມື່ອເກັບເອົາ ລິກຍະປະຕະບັງ ບັງຂອງໃນກາດລາດລີ ອັນເປັນສ່ວຍໄຣ ທະເວ ຊະເນ ໃນເມື່ອຄົນທັງສອງ ກຣັຕເວແລ ກະທຳກັນເຫ ວິຣັທທັງ ບັງກ້ອຍຄຳອັນຜິດກຽງກັນ ໂທສາ ອັນວ່າ ໂທດທັທທາປເປ ວິນິສເສຍຍະ ກໍເພິ່ງແຕ່ງໃຫ້ ທຸວິທາ ມີສອງປະ ການ ກັນທາອານະສິມພູຕາເຫດພາວະ ອັນເກີດແລເຈືອກັບດ້ວຍ ອັນຜິດກຽງກັນກໍດີ ດ້ວຍອາດຍາພະຍາຕັ້ງໄວ້ວ່າ ຜູ້ໃດເອົາສິ່ງຂອງ ມາຂາຍໃນກາດລາດລີທີ່ນີ້ ໃຫ້ເອົາເປັນກີບດັ່ງນັ້ນ ວິໂຣເທຍຍະ ໃນເມື່ອຜິດກຽງກັນ ຄັນທາຕິ ມັກວ່າ ຄັນທາມາເນນະ ດ້ວຍອັນ ກິເອົາ ທັຣພບັງ ບັງຂອງ ອະຕິກະມານະ· ກຣັຕເວ ໃນອັນກະທຳ ລື່ນກວ່ານັ້ນ ໂທໂສ ອັນວ່າໂທດ ນະສິຍາ ກໍບໍ່ເພິ່ງຈັກມີ ສວາມະ ປັສສະ ແກ່ຜູ້ເຈົ້າຂອງ ທັນດະ ອັນວ່າສິນໄໝ ນະໂຫຕິ ກໍບໍ່ມີ ທຣັພຍັສເສແກ່ເຈົ້າຂອງແລ.

ອະທິບາຍວ່າທ້າວພະຍາຕັ້ງອາດຍາໃຫ້ເກັບ ເຈົ້າຂອງດ່າທ່ານ ຜູ້ເກັບໂທດແຫ່ງຜູ້ເຈົ້າຂອງ ມີສອງປະການ ຄືວ່າໂທດອັນເຈົ້າຂອງ ດ່າທ່ານກໍດີ ຕີທານກໍດີ ເນື້ອຄວາມຮອດອາດຍາກໍດີ ອັນໜຶ່ງຕີຜູ້ ເກັບພໍເລືອດຕົກຢາງອອກ ໃຫ້ເຈົ້າຂອງຜູກເຂົ້າເລົ່າຂວັນ ຢ່າໃຫ້ມີ ສິນໄໝເທີ້ນ ຜີຜູ້ເກັບເອົາໄຣບັງເອົາລື່ນກວ່າ ຂະໜັນດັ່ງນັ້ນຈັກໃສ່ ສິນໄໝແກ່ເຈົ້າຂອງກໍບໍ່ໄດ້ ເຫດມັນຫາກເອົາລື່ນກວ່າຂະໜັນທ່ານ ຊື້ຂາຍກໍເພື່ອອາໄສໄດ້ກິນດາຍ ເອົາລື່ນຂະໜັນກໍຂາດທຶນທ່ານແລ.

ທະສະ ສະມັຕກະ ວິຊະຫາຄາມະໂຕ ຂຕຕັນຕະຣັຕໂນ ກັສສິຂະທັງ ອະທະທັນດະໂຕ ມັຕກິ ທຸເຣ ຕັສສະ ນາໂຄ ອັນ ວ່າຊ້າງວິຊະຫາ ອັນເອົາໄປປ່ອຍໄປຜຽງ ຄາມະໂຕ ແຕ່ບ້ານກໍດີ ຂຕຕັນຕະຣັຕໂຍ ແຕ່ໄຮ່ນາແຫ່ງຄົນກໍດີ ທະສະ ມັຕກະ ອັນ ໄກສິ້ນພັນວາ ໂສ ນາໂຄ ອັນວ່າຊ້າງຕົວນັ້ນ ກັສສິຂາທັງ ອັນ ລ່ວງມາກິນເຂົ້າໄຮ່ ເຂົ້ານາເຄືອງປູກທ່ານ ອະທະທັນດະຍັງ ເພິງ ເຈົ້າຊ້າງໃຊ້ຄ່າເຖິງໜຶ່ງ ພັນດະຍະທຣັພຍັງ ອັນວ່າກິຍາອັນໃຊ້ ແທນມັຕກິ ກໍບໍ່ມີ ຕັສສະແກ່ເຈົ້າຊ້າງຕົວນັ້ນ ທຸເຣ ຕະໂຕ ທີ່ ອັນໄກກວ່າພັນວານັ້ນແລ ມັກວ່າ ຊ້າງອັນເອົາໄປປ່ອຍຜຽງ ຍັງໃກ້ ບ້ານໃກ້ນາທ່ານພັນວາໜຶ່ງ ແລຊ້າງຕົວນັ້ນລົງຮາວີ ກິນເຄືອງປູກ ເຄືອງຝັງ ແລະເຂົ້າໄຮ່ເຂົ້ານາທ່ານໃຫ້ໃຊ້ຄ່າເຖິງໜຶ່ງເທີ້ນ ຜີເຈົ້າ ບ້ານເຈົ້າໄຮ່ ເຈົ້ານາຫາກກະທຳໃຫ້ຊ້າງຕົວນັ້ນ ເປັນອັນຕາຍດ້ວຍ ອັນສັກແຫວຊັດຍິງພໍເສຍອົງຄະ ໃຫ້ເອົາລູກເມຍກັບຕົວມັນເປັນຄ່າ ຊ້າງຕົວນັ້ນຕາບທໍ່ເທົ້າຊ້າງຕາຍຈຶ່ງໃຫ້ພົ້ນເທີ້ນ ຜີຜຽງຊ້າງຍັງລ້ຳ ກວ່າພັນວາ ອັນໄກບ້ານແລໄຮ່ນາ ຄັນຊ້າງຕົວນັ້ນລົງຕະເດີນກິນ ຂອງປູກເຂົ້າກ້າໄຮ່ນາທ່ານ ບໍ່ໃຫ້ເຈົ້າຊ້າງໃຊ້ຂອງແລ.

ບັທຍັນຕະ ທະເວ ມິສສະກັງ ສະວະກະຣະກຸກກຸຕະ ຈະຄາວະ ມະຫິງສະ ສະວະຮັກເຂຍຍະ ວັພໂພ ກຸຣຸເກສສີ ພິຊຊາ ນາໂຄ ອັນວ່າຊ້າງ ອັນຕະເຣ ອັນປ່ອຍຜຽງ ໃນທີ່ອັນເປັນກ້ຳກາງແຫ່ງ ບ້ານແລນາທ່ານ ທະເວສະກັງ ອັນກິຍາອັນກັບດ້ວຍໂທດ ສອງປະ ການໂທຕິ ກໍມີ ສະວະກະຣະກຸກກຸຕະກັງຈະ ອັນວ່າຫມູກໍດີ ໄກ່ກໍດີ ຄາວະມະຫິງສາ ງົວຄວາຍກໍດີ ສະວະຮັກເຂຍຍະ ມັກວ່າສຸຮັກຂິໂຕ ອັນຮັກສາດີ ວັຕໂຍ ອັນວ່າຮົ້ວ ກັສສິພິຊະ ອັນເຈົ້ານາ ຕະພິຊຊະ ກະຣັງ ເພິງກະທຳ ມັກວ່າ ຜີປ່ອຍຜຽງຊ້າງຫວ່າງທ່າງໄກບ້ານໄກ ນາທ່ານ ອັນບໍ່ລ້ຳພັນວາ ຜີຍັງລົງກິນເຂົ້າໄຮ່ ເຂົ້ານາທ່ານ ໂທດ ສອງປະການ ຄືວ່າໃຫ້ໃຊ້ຄ່າເຂົ້ານາອັນຊ້າງກິນນັ້ນທັງມວນ ອັນ

ໜຶ່ງແລໃຫ້ກະທຳຂວັນໄຮ່ນາທ່ານ ອັນໜຶ່ງເຈົ້າໝູກໍດີ ເຈົ້າໄກ່ກໍດີ ເຈົ້າງົວເຈົ້າຄວາຍກໍດີໃຫ້ຮັກສາດີເທີ້ນ.

ໂຍ ຄາຕາ ພັນດັນຈະ ອະທະທັທທາ ສາມີກສັສະ ສັພພັງປີ ເຈ ອຸໂພ ອັສສາ ຂາທາ ຕະກາ ໂຍ ຊະໂນ ອັນວ່າຄົນຜູ້ໃດ ຄາຕາ ແລ້ວຂາເສຍ ພັນດັນຈະ ທັຊຊາ ຍັງຂອງແຫ່ງທ່ານຝູງອື່ນ ຊີວີຕາ ອັນມີຊີວິດ ອະທະທັທທະ ກໍເພິ່ງໃຫ້ມັງສັງ ຍັງຊີ້ນເຄິ່ງໜຶ່ງ ສາມີກັສສະ ແກ່ເຈົ້າຂອງ ສັພພະຂາເທ ໃນເມື່ອຜູ້ຂ້ານັ້ນແລ ກິນທັງມວນ ເຈ ອັຕກີ ຜິແລມີ ທັນດະທັຊຊາ ອັນວ່າກີຍາອັນໃຊ້ແທນ ສັພພັງປີ ແມ່ນທັງມວນແລ ອຸໂພ ອັສສາ ອັນວ່າມ້າສອງຕົວແລຂົບດິດກັນກໍດີ ເອໂກ ອັສໂສ ອັນວ່າມ້າຕົວໜຶ່ງ ມະໂຕອັນຕາຍ ສະຕິ ແລມີດັ່ງນັ້ນ ທັທທາ ກໍເພິ່ງໃຊ້ ຕະກາໂດຍປະການດັ່ງດຽວນັ້ນແລ.

ອະທິບາຍວ່າ ເຈົ້າໄຮ່ ເຈົ້ານາ ເຈົ້າສວນ ໃຫ້ລ້ອມຂອງຕົວໃຫ້ດີ ເຈົ້າໝູ ເຈົ້າໄກ່ ເຈົ້າທ່ານ ງົວຄວາຍ ກໍໃຫ້ຮັກສາຍັງຂອງລ້ຽງແຫ່ງຕົນໃຫ້ດີ ຜິສັດທັງຫລາຍຝູງນັ້ນຫາກລົງກິນ ໃຫ້ເຈົ້ານາເຈົ້າຂອງປູກກ່າວບອກຮອດເຈົ້າຂອງລ້ຽງ ເຖິງສອງທີ ສາມທີກ່ອນຢ່າຣິບຂ້າຂອງທ່ານກິນເທົ່າໃດ ເພິ່ງໃຫ້ເຈົ້າສັດໃຊ້ເທົ່ານັ້ນ ຜິເຈົ້າໄຮ່ເຈົ້ານາກ່າວບອກແລ້ວ ເຈົ້າສັດຫາກຮັກສາຂອງລ້ຽງຕົນບໍ່ດີ ຍັງລົງກິນຂອງແຫ່ງທ່ານ ເຈົ້າໄຮ່ເຈົ້ານາຂ້າສັດຕົວນັ້ນຕາຍ ໃຫ້ປັນກັນຄົນເຄິ່ງ ຂອງທ່ານອັນສັດກິນນັ້ນ ໃຫ້ໃຊ້ເຄິ່ງໜຶ່ງຊອບທັມມະສາດແລ ຜິບໍ່ກ່າວບອກແກ່ເຈົ້າຂອງລ້ຽງ ໄດ້ເສຍໄດ້ຕາຍແລ້ວ ຈຶ່ງຍົກອາທິກອນແກ້ວ່າ ສັດຕົວນັ້ນຫາກເຂົ້າມາກິນເຂົ້າໄຮ່ ເຂົ້ານາຕູຈຶ່ງໄດ້ຂ້າແລ ວ່າສັນນີ້ກໍຢ່າຟັງຄຳຜູ້ຂ້າເທີ້ນ ເຫດມັນກົວເປັນໂທດມັນຈຶ່ງຍົກຕອບດາຍ ຜິໝູຕົວມີຄ່າຊາວ ໃຫ້ໃຊ້ສີ່ສິບ ຜິຄ່າຫ້າສິບໃຫ້ໃຊ້ສາມຕົວ ຜິລ້ຳກວ່ານັ້ນເມືອເທິງໃຫ້ຕູບເທົ່າ ຜິໄກ່ໃຊ້ເກົ້າຕົວໃຫ້ຍັງຕົວໄກ່ສິບ ຜິໄກ່ຕ່ຳທ່ານຕົວຫ້າສິບ ໃຊ້ສາມເທົ່າ ຜິເປັດກໍຄ່າ

ສີສິບ ໃຊ້ສີ່ເທົ່າ ຜີທ່ານຕົວສີ່ສິບ ໃຊ້ສາມເທົ່າ ຜີງົວຄວາຍຕົວຮູ້ຊັກຮູ້ເຂັນ ຫາກລ້ຽງແຕ່ນ້ອຍມາກືຕົວຮ້ອຍໃຊ້ຄຸບເທົ່າ ຜີໄດ້ຊື້ທ່ານແພງ ໃຫ້ເອົາສັດຈະເຈົ້າຂອງເປັນຄ່າເຕີມ ຊື້ນ້ອຍມາກໃຫ້ແຕ່ງຕາມຄອງ ຜີທ່ານຊື້ກຶກແທ້ ແຕ່ຮູ້ຊັກຮູ້ເຂັນ ທ່ານເຝິກຊຳນິດີ ກືຄ່າຕົວຮ້ອຍເງິນ ຄຳອັນກ່າວສັນນີ້ດວຍເທສະສາມັນດາຍ ຜີປະເທດໜຶ່ງຄ່າແພງ ກໍໃຫ້ແຕ່ງອັນແພງເທີ້ນ ປະການໜຶ່ງ ຜີຜູ້ຂາຕາຍແລໄດ້ກ່າວບອກແກ່ເຈົ້າຂອງ ແລ້ວແລກິນສັດຕົວຕາຍນັ້ນທັງມວນ ກໍໃຫ້ໃຊ້ຄ່າຂອງລ້ຽງທັງມວນ ປະຫານໜຶ່ງ ຜີມາປ່ອຍລະກິນ ກໍໃຫ້ແຕ່ງຕາມໄນຍະອັນໜັກອັນເບົານັ້ນເທີ້ນ ຜີມ້າສອງຕົວດິດຂິບກັນຕາຍ ບໍ່ໃຊ່ທີ່ແຫ່ງຂາທັງສອງ ມ້າຕົວຕາຍນັ້ນໃຫ້ຂາປັນກັນຄົນກ່ອງ ມ້າຕົວເປັນກໍໃຫ້ປັນຄົນເກິ່ງ ອັນນີ້ອາໄສເຊື່ງຄ່າມ້າເທົ່າກັນດາຍ ຜີວ່າມ້າຕົວຕາຍແພງ ໃຫ້ເອົາມ້າຕົວກຶກໃຊ້ທັງມວນເທີ້ນ ເຫດມັນຫາກຜິດຕົວໃດ ເອົາຕົວນັ້ນເທີ້ນ ເຫດສັດເດຍຣະສານໃຜບໍ່ຈຸ່ງບໍ່ຈຳດາຍ ຜີມ້າຕົວຄ່າກຶກຕາຍ ໃຫ້ຄ່ຽນຄ່າຕົວຕາຍ ມີເທົ່າໃດໃຫ້ເຈົ້າມ້າໃຊ້ເທີ້ນ ແມ່ນຊ້າງກໍດີ ງົວຄວາຍກໍດີ ກໍເພິງແຕ່ງໂດຍລຳດັບອັນດຽວນັ້ນເທີ້ນ.

ສະກັຕກາເນ ຄາວະມະຫິງສາ ທຸຣະໂຕ ຈະ ອຸປປະຄະຕິ
. ສະກະມະເຕ ໂທສາ ສິຍຸງ ປະຣະມະເຕ ນັຕກິ ທຸໂສ.

ຄະວະມະຫິງສາ ອັນວ່າງົວແລຄວາຍ ອຸປປະຄະຕິກໍເຂົ້າມາທຸຣະໂຕ ແຕ່ທີ່ໄກ ບຸຊຊະຕິ ກໍດິດກໍຊົນກັນ ສະກັຕກາເນ ໃນທີ່ຕົວຢູ່ທີ່ຕົນ ອະໂທຄະຣັງ ທ່ານຫາກໄວ້ໃນທີ່ໃຕ້ກຸນເຮືອນ ສະກະມະ–ເຕ ໃນເມື່ອງົວຄວາຍຕົວຢູ່ທີ່ແລຕາຍ ໂທໂສ ອັນວ່າໂທດຄືວ່າໃຊ້ແທນຍັງສັດຕົວນັ້ນ ສິຍຸງ ກໍເພິງມີແລ ປະຣະມະເຕ ໃນເມື່ອຕົວມາສູ່ແລຕາຍ ໂທໂສ ອັນວ່າໂທດ ຄືວ່າໃຊ້ແທນ ນັຕກິ ກໍບໍ່ມີແກ່ຕົວຢູ່ທີ່ນັ້ນແລ.

ອະທິບາຍວ່າ ຊ້າງກໍດີ ມ້າກໍດີ ງົວຄວາຍກໍດີ ອັນທ່ານເອົາ

ໄວ້ໃນທີ່ຢູ່ແຫ່ງເຂົາ ໂດຍປົກກະຕິດັ່ງນັ້ນ ມີຕົວໜຶ່ງຫາກເຂົ້າມາຊູ ຣິບຊິນ ຜິຕົວຢູ່ທີ່ຕາຍ ໃຫ້ເອົາຄ່າຕົວມາຊູນັ້ນໃຊ້ຕໍ່ຕົວ ຜິຕົວມາຊູ ຕາຍຫາກແລ້ວ ຜິງົວຄວາຍຫາກປ່ອຍໄປກິນກາງທົ່ງ ມີຜູ້ໜຶ່ງເອົາ ຂອງຕົວມາຣິບມາຊິນງົວຄວາຍ ແລຊ້າງມ້າທ່ານ ອັນປ່ອຍໄວ້ກິນ ຫຍ້າ ຜິຕົວຢູ່ຕາຍໃຫ້ໃຊ້ສອງຕົວ ໄໝຜູ້ເອົາຫຼ່ງວຣິບຊິນທ່ານນັ້ນ ສອງຮ້ອຍຊາວກະຫາປະນະ ຜິງົວຄວາຍຊ້າງມ້າທ່ານ ຫາກປ່ອຍ ຜຽງໄວ້ໃຫ້ກິນຫຍ້າກາງທົ່ງ ກາງປ່າ ມີຜູ້ໜຶ່ງບໍ່ໃຊ່ເຈົ້າຂອງ ເຫັນ ຂອງທ່ານແລຈັບເອົາໄປໃຫ້ຣິບຊິນກັນ ຜິຕົວໜຶ່ງຕາຍ ຈຳມັນຜູ້ນັ້ນ ໃຊ້ຄ່າຄູບເທົ່າ ໃຫ້ໄໝມັນສອງຮ້ອຍຊາວ ສັດຕົວຕາຍໃຫ້ແກ່ມັນ ເທີ້ນ ຜິເຈົ້າຂອງຍັງກິນທັງມວນ ໃຫ້ໃຊ້ຕົວໜຶ່ງ ໂທດອັນໄໝຢ່າ ຍອມເທີ້ນ.

ວິຊະທີ ມັຄຄະນັຕາງາຕິ ວັສເສ ສັນລັບບະພັຊຊຸ້ມຕາ ຍະທິ ຕະໂຍ ຈະ ອິພາວິກາ ອະຕິກກັນຕາ ລັພພັຍຍຸ ສັພພັງ ນາໂຄ ອັນວ່າຊ້າງ ວິຊະທີວາ ມັຄລັຕາກາເນ ແລຈິບຫາຍເສຍ ໃນທີ່ອັນ ປ່ອນຜຽງກໍດີ ໃນທົ່ນທາງກາງປ່າກໍດີ ສາລະບະພັຊຊຸ້ມຕາ ອັນເຈົ້າ ຂອງຍັງມີຫົວໃຈຂ້ອງຢູ່ ຕິວັສເສ ໃນລະແວກແຫ່ງສາມປີ ຍະທິກາ ລັພພາ ຜິແລມີຜູ້ໃດໄດ້ ທະວິຕະໂຍ ຈະວິກາ ໃນລະຫວ່າງແຫ່ງ ສອງສາມປີ ຊ້າງຕົວນັ້ນ ກໍຄວນຜ່າສອງສ່ວນກໍດີ ສາມສ່ວນກໍດີ ອະຕິກກັນຕາ ໃນເມື່ອຊ້າງຕົວເສຍຫາກລ້ຳກວ່າສາມປີ ລັພພັຍຍຸ ສັພພັງ ຜູ້ອັນໄດ້ຊ້າງຕົວນັ້ນກໍເພິ່ງໄດ້ທັງມວນແລ.

ອະທິບາຍວ່າ ຊ້າງຕົວອັນໄປປ່ອຍຜຽງໃນປ່າທີ່ໄກກໍດີ ຊ້າງອັນ ຂີ່ທ່ຽວທາງ ຫາກປ່ອຍເສຍແລບໍ່ເອົາໄດ້ ໃນລະແວກພາຍໃນແຫ່ງ ສາມປີສາໄລແຫ່ງຜູ້ເຈົ້າຊ້າງນັ້ນຍັງຂ້ອງຢູ່ຄືວ່າ ຍັງສັ່ງໄວ້ດ້ວຍຄຳ ວ່າ ຜູ້ໃດໄດ້ໃຫ້ກ່າວບອກດັ່ງນີ້ ຜູ້ໃດໄດ້ໃນລະແວກແຫ່ງສາມປີແທ້ ໃຫ້ຜ່າຄ່າຊ້າງຕົວນັ້ນເປັນສອງສ່ວນກໍດີ ສາມສ່ວນກໍດີໃຫ້ແກ່ເຈົ້າຜູ້ ໄດ້ ຄືວ່າຊ້າງນັ້ນຫາຍປີໜຶ່ງ ຜູ້ໃດໄດ້ຄວນຜ່າໃຫ້ເປັນສາມສ່ວນ

ໃຫ້ແກ່ຜູ້ໄດ້ສ່ວນໜຶ່ງ ໃຫ້ແກ່ເຈົ້າຂອງຊ້າງວອງສ່ວນ ຜີໄດ້ໃນລະ
ແວກແຫ່ງສອງປີ ໃຫ້ຜ່າເຄິ່ງຊູ່ກ້ຳ ຜີໄດ້ໃນລະແວກປີກ້ອນສາມກໍ
ເພິ່ງຜ່າໃຫ້ແກ່ຜູ້ໄດ້ສອງສ່ວນ ໄວ້ແກ່ເຈົ້າຊ້າງສ່ວນໜຶ່ງເທີ້ນ ຢ່າ
ວ່າແຕ່ຊ້າງ ແມ່ນຂອງລ້ຽງຂອງດູທັງຫລາຍ ຄື ງົວ ຄວາຍ ມ້າ
ລວາກໍດີ ຫາກຫາຍເສຍ ຜູ້ໃດໄດ້ໃຫ້ແຕ່ງສົມດຽວນັ້ນເທີ້ນ ຜູ້ໃດໄດ້
ຂອງທ່ານບໍ່ກ່າວຮອດເຈົ້າຂອງກໍດີ ບໍ່ກ່າວແກ່ເພື່ອນຝູງຢູ່ທາງໃກ້ກັດ
ກັນໄວ້ ເຈົ້າຂອງເຫັນກໍດີ ມີຜູ້ມາກ່າວແກ່ເຈົ້າຂອງກໍດີ ເຈົ້າຂອງ
ວ່າເປັນກ້ອຍເປັນຄວາມເກີງເຈົ້າເກີງຂຸນຈຶ່ງເລົ່າ ຂອງທ່ານໃຫ້ຄືນ
ໂທດກໍຢ່າໃສ່ ຄຸນກໍຢ່າໃຫ້ກິນ ຄ່າແຮງກໍຢ່າໄດ້ເອົາ ຜີເລົ່າຊື່ໄດ້ແລ
ຜີມີຜູ້ຮູ້ເຫັນແທ້ ກໍເພິ່ງໃຫ້ມັນກິນຄ່າຍາກ ຜີມັນຜູ້ໄດ້ແລອຳສວນ
ເອົາຂອງທ່ານວ່າຂອງລ້ຽງແຕ່ນ້ອຍວ່າດັ່ງນັ້ນ ທ່ານແພ້ມັນໃຫ້ໄໝ
ຕາມໂທດວັດຖຸອັນນ້ອຍອັນຫລາຍ ອັນລັກຂອງທ່ານໃຫ້ຄືນ ຜີຍັງ
ຫາຍເສຍກໍດີ ດ້ວຍອັນຮັກສາບໍ່ຮອດໃຫ້ໃຊ້ຄຸບເທົ່າ ຜີເລົ່າຊື່ແທ້ ຮັກ
ສາບໍ່ຮອດຫາຍເສຍດັ່ງນັ້ນ ໃຫ້ໃຊ້ຄ່າທໍ່ກ່ອງ ຜີມັນແລກ່າວແກ່ຝູງ
ອື່ນໄວ້ໃຫ້ຮູ້ແຕ່ເຄົ້າແທ້ ຍັງຫາຍເສຍ ກໍບໍ່ຄວນໃຫ້ມັນໃຊ້ໂທດກໍບໍ່ມີ
ແກ່ມັນແລ ຜີໄດ້ລ້ຳກວ່າສາມປີ ຜູ້ໃດໄດ້ກໍເປັນຂອງມັນຜູ້ໄດ້ແລ້ວ
ຊາຕິໂດຍຣະສານ ຈັກທີຄ່າດັ່ງຄົນອັນເປັນຂ້າທ່ານບໍ່ໄດ້ດາຍ ພະລົມ
ດັ່ງຜູ້ຂ້າໄດ້ຂ້າທ່ານລັກໜີເສຍ ເຈົ້ານາຍມັນຜູ້ໄດ້ ຮັກສາບໍ່ຮອດລັກ
ໜີ ຣາຊວະສະຕິທັມມະສາດ ພະເຈົ້າສາມຸດຕິເທວະຣາດຕັ້ງໄວ້ໃຫ້
ໃຊ້ຄຸບເທົ່າ ຜີຕາຍໃຊ້ເທົ່າເຄິ່ງ ເຫດຄົນຮູ້ເບື້ອງການຊູ່ອັນແລ້ວມັນ
ເປັນຂ້ອຍຜູ້ໃດມັນກ່າວເຈົ້າມັນແລ ຜີສົ່ງຂ່າວສານເກີງຜູ້ເຈົ້າຮູ້ ແລ
ບໍ່ໄດ້ເອົາຂ້າຜູ້ນັ້ນລັກໜີກໍດີ ຕາຍກໍດີກໍຫາກແລ້ວ ຜີມັນບໍ່ກ່າວເຈົ້າ
ມັນໃຫ້ຮູ້ ກໍໃຫ້ຜູ້ໄດ້ສົ່ງຂ່າວສູ່ແຫ່ງ ດ້ວຍຄຳວ່າຂ້າຜູ້ໃດລັກໜີໃຫ້
ມາເອົາ ມາເບິ່ງໜ້າມັນເທີ້ນວ່າອັນ ແລ້ວໃຫ້ຜູ້ໄດ້ນັ້ນຮັກສາກິນ
ຄຸນ ຜີຍັງລັກໜີ ໃຫ້ໃຊ້ຄ່າຄົນທ່ານທໍ່ໃດໃຫ້ໃຊ້ທໍ່ນັ້ນ ຜີຕາຍໃຫ້ໃຊ້
ເຄິ່ງໜຶ່ງ ຜີມັນຫາກບໍ່ກ່າວ ບໍ່ສົ່ງຂ່າວໄປໃຫ້ທ່ານຮູ້ຊູ່ແຫ່ງໃຫ້ມາດູ

ຜີລັກໜີໃຫ້ໃຊ້ສອງຄ່າຂ້ອຍ ບັງຕາຍໃຫ້ໃຊ້ທໍ່ເກິ່ງ ຜີບັງກ່າວໃຫ້ເຈົ້າ
ນາຍມັນຮູ້ແລ້ວແທ້ ຈຳມັນໃຊ້ຄ່າຂ້ອຍຜູ້ນັ້ນ ຜີລັກໜີໃຊ້ສອງຄ່າ
ແຕ່ມັນໄປ່ໜີຈາກນັ້ນ ຜີຕາຍໃຫ້ໃຊ້ຄ່າທໍ່ເກິ່ງ ດັ່ງອັນມັນໄປຕາຍ
ໃຫ້ຈັດເອົາຄ່າຕົວສູງ ຜີບໍ່ໜີ ບໍ່ຕາຍ ເຈົ້າຂ້ອຍຫາກຮູ້ດ້ວຍທ່ານຜູ້
ອື່ນກໍດີ ຂາເຫັນຂ້າທ່ານໃຫ້ຂຶ້ນໂທດ ໃຫ້ໃສ່ສະໜີລັກຂ້າໄວ້ກິນ
ແຮງ ຄ່າຣາມດອກການໃຫ້ລັດເອົາຢ່າຍອມ ຢ່າໃຫ້ມັນຫຍ້າມເຍັດ.
ອັນໜຶ່ງຢ່າໃຫ້ຜູ້ອື່ນດູເຍື່ອງ ຄັນບໍ່ຕັ້ງສັນນີ້ ຜູ້ໄດ້ຂ້າທ່ານຈັກອຳເອົາ
ກິນແຮງຊູ່ແຫ່ງແລ ຊາຕິຂ້ານີ້ ໜັກດ້ວຍ ທະນະກິຕາ ອັນໜຶ່ງ
ທ່ານລ້ຽງແຕ່ອັນໂຕຊາດກໍຍາກດີຫລືດາຍ.

ໂຍ ວິວາໂທ ສັນເທຫະໂກ ອະສັກຂິມາ ທຸຊານິຍາ ໂຍ ສັຈເຈ-
ນະ ທັລຫາກາຣຸງ ຈະ ສັຈຈັງ ອະສັຈຈັງ ພານິໂນ ໂຍ ວິວາໂທ-
ອັນວ່າ ອາທິກອນຜິດຖຽງກັນນັ້ນ ທັລຫາກາຣຸງ ເພິ່ງກະທຳໃຫ້ມີສັດ
ຈະດ້ວຍອັນໝັ້ນ ສັຈຈັງ ອະສັຈຈັງ ພານິໂນ ອັນວ່າກິຍາຜູ້ກ່າວຄຳ
ມີສັດແລ ບໍ່ມີສັດສະສັນເທນະ ດ້ວຍຄ່າອັນມີສັດຈະແຂ່ງກັນແທ້ແລ.

ອະທິບາຍວ່າ ກ້ອຍຄຳອະທິກອນແກ່ກັນ ມີຕົ້ນວ່າ ມັນຜູ້ນີ້
ມາຕູ່ກູເອົາຂອງແຫ່ງມັນ ຂອງກູໃຊ້ສ້ຽງເທົ່ານີ້ ມັນຜູ້ນີ້ເອົາຂອງກູ
ຜູ້ນັ້ນວ່າດັ່ງນັ້ນຫາສັກຂີບໍ່ໄດ້ ວິນິດໄສຈັກຮູ້ຍາກຈັກແຕ່ງບໍ່ໄດ້ຕັ້ງວ່າ
ໃຫ້ເຂົ້າກິນພະລັນ ກິນອັນໃດກໍດີຜູ້ມີສັດຈະແລ ຫາສັດຈະບໍ່ໄດ້ເທບ
ພະດາຫາກຈັກເຫັນ ຈັກແຕ່ງແຈ້ງດ້ວຍອານຸພາບ ເທບພະດາແລ.

ສະມານິເຍ ເອກະປັກເຂ ກຣິຍາວາເທ ສັດໂຈທະກັງ ສັຈຈະ
ຫັງ ວະຈະນັງ ພານິເຕ ນະວະເຂຍຍະ ນະ ເຕສານັງ ນະທິທ-
ທະຍະ ອັນຍະມັນຍັງ ອັຕຕານັງ ທັລລະກະຣາປເປ ເວນະກະ-
ເສຍຍະ ຍະຖາໂທສັງ ພັນດັນຈະ ພັນດະເທຍຍະ ຣະຫາສາກຍະ-
ເນ ໃນເມື່ອຜູ້ເປັນສາກສີ ສະມະນິເຍ ເອກະປັກເຂ ອັນກ່າວຄຳສະ
ເໜີຄຳຊູ່ກ້ຳກໍດີ ອັນໜຶ່ງເປັນທີ່ຮັກແກ່ເຈົ້າຄຳກໍດີ ເປັນປັກຂະອັນ
ດຽວແຫ່ງເຈົ້າຄຳກໍດີ ສະເຕປັນຂິຍາ ລ້ຳສັກຂີທັງຫລາຍຜູ້ນັ້ນ ເຈ

ກຣິຍາວະເທ ຜີເຈົ້າຄຳຫາກກ່າວ ສັຈໂຈທະກັງ ຍັງອັນຫລັ່ງນ້ຳມີ ສັດຈະ ສັທທະຫະວະຈະນັງ ພາມີແລກ່າວກ້ອຍຄຳມີຈິງເປັນທີ່ເຊື່ອ ແທ້ ທີໂຣ ອັນວ່າວິນິດໄສຝູງສະຫລາດ ເຕສານັງ ຄວນກະທຳ ໃຫ້ຝູງນັ້ນສະບົດດ້ວຍນ້ຳ ເຕນະວາກເຂຍຍະນະ ຕາມຄວາມ ແຫ່ງເຈົ້າຄວາມ ນະຫິ ຜີແລບໍ່ມີດັ່ງນັ້ນ ກະຣາເປຍຍະ ເພິງກະ ທຳ ອັຕຕານັງ ຍັງຕົນ ທະວະຍະ ອັນຍະມັນຍັງ ແຫ່ງຂາທັງ ສອງເຊິ່ງກັນຕໍ່ກັນ ທັນທັງກາເຣນະ ດ້ວຍອາການອັນໃຫ້ຮູ້ດ້ວຍຄຳ ອັນໝັ້ນ ເຈ ນະ ກັປເປຍຍະ ຜີແລບໍ່ກະທຳໄດ້ ທັນດັນຈະ ພັນ ດະທະຍາຣະຫາ ອັນວ່າຄວນເປັນໂທດກໍດີ ໃຊ້ກໍດີ ຍະຖາ ໂທສັງ ຕາມໂທດແຫ່ງເຂົາອັນຍົກອາທິກອນແຫ່ງກັນນັ້ນເທີ້ນ.

ອະທິບາຍວ່າ ຜີສັກຂີຜູ້ໃດ ຄວາມສັກຂີກ່າວກໍສະເໝີກັນ ດັ່ງ ເຈົ້າຄວາມຊູ່ກ້ຳ ສັກຂີຜູ້ໃດກໍຫາກແມ່ນມັນຊູ່ກ້ຳກໍດີ ອັນໜຶ່ງສັກຂີ ເປັນຜູ້ຮັກສາເຈົ້າຄຳ ສັກຂີອັນເປັນປັກຂະເຈົ້າຄຳດຽວກັນກໍດີ ອັນ ຂ້າງໜຶ່ງຫາກຮ້ອງຫາກ້ຳຂ້າງໜຶ່ງ ບໍ່ຮ້ອງຫາກໍດີ ສັກຂີທັງຫລາຍ ຝູງນີ້ ຜີເຈົ້າຄຳກ່າວວ່າ ໃຫ້ສັກຂີກະທຳສັດຈະ ດ້ວຍອັນຫລັ່ງນ້ຳ ໃຫ້ຕົກແຜ່ນດິນກໍດີ ແລກ່າວຄຳອັນໃຫ້ເປັນທີ່ເຊື່ອ ຄວນໃຫ້ກະທຳ ຕາມກ້ອຍຄຳແຫ່ງຜູ້ເປັນເຈົ້າຄຳເທີ້ນ ບໍ່ມີດັ່ງນັ້ນ ວ້າງສັກຂີເສຍ ແລ້ວ ໃຫ້ເອົາເຈົ້າຄຳທັງສອງຕໍ່ກັນ ພະລັນກັນກໍດີ ໃຫ້ເຈົ້າຄຳຕັ້ງ ສັດຈະ ດ້ວຍອັນຫລັ່ງນ້ຳໃຫ້ໝັ້ນ ຜີບໍ່ກະທຳໄດ້ໂທດສອງປະການ ຄືວ່າສິນໄໝກໍດີ ສິນໃຊ້ກໍດີ ກໍໃຫ້ແຕ່ງຕາມໂທດອັນເຂົາຍົກກັນນັ້ນ ເທີ້ນ.

ໃນຍະໜຶ່ງ ວະສາຕຣະ ມະຫາສຳມຸດຕິເທວະຣາຊເຈົ້າ ຕັ້ງ ໄວ້ສອນໂລກວ່າ :

ວິນິດສະຍັຕກາເລ ຈຸໂພ ກິລິກຂິຕຕຸ ສັຈຈະຄາທິການ

ວາເຂຍຍະ ນະ ສັລລັກເຂຍຍະ ຍະຖາຕະເກມະ ທະວະຍະ

ກາຣິເຍ ອັນເຍນະ ວິຣັທທັກເຂຍໂຍ ໂຍ ຕັງນະຄັນເທຍຍະ ວິຈາຣິກາ ປະຣາຊຍາ ຕັສສະ ທັງດັງ ປຸນະ ສັຈຈັງ ອະລັພ–ພະໂຕ ສະລິກຂິຕຕະເກ ລິກຂະຕິ ຕະທາ ທັນເດນະ ວິ–ຈັຍເຍ ອະສັຈຈາ ອະປະຣາຊິຕະເກ ອິວະວາເຂຍຍະ ຕັສ–ເສນັງ ດັ່ງນີ້ ອຸໂພຊະນາ ອັນວ່າຄົນທັງສອງ ໃຫ້ກະທຳ ດ້ວຍສັດຈະ ອັນກິນພະລັນ ວາເຂຍເຍນະ ອັນຈ່າເມືອງ ສັລລັກເຂ–ເປ ຫາກແກວດກົດໝາຍໄວ້ໃຫ້ກະທຳ ສັດຈະພະລັນແຂ່ງກັນ ຍະ–ກາ ມັກວ່າ ເຍນະ ປະກາເຣນະ ດ້ວຍປະການສິ່ງໃດ ທະວະຍະ ພາຕິເຍ ຄວນຂາເພິ່ງກະທຳ ຕະເກວະ ໂດຍປະການອັນຈ່າເມືອງ ກົດໝາຍໃຫ້ກະທຳນັ້ນແລ ໂຍ ມັກວ່າ ໂກຈິ ຊະໂນ ອັນວ່າຄົນຜູ້ ໃດ ວິສຸທັກເຂຍາ ອັນກະທຳຜິດ ອັນເຍນະ ດ້ວຍອັນອື່ນ ວາວິຈະ–ຣິກາ ອັນຈ່າເມືອງຜູ້ພິຈາລະນາ ຍັງກົດຈະອາທິກອນກ້ອຍຄຳ ນະ ຄົນເທຍຍະ ກໍບໍ່ເພິ່ງກືເອົາ ຕັງ ວະຈະນັງ ຍັງກ້ອຍຄຳແຫ່ງມັນນັ້ນ ອະລັພພະໂຕ ກໍບໍ່ໄດ້ ປຸນະ ສັຈຈັງ ຍັງອັນກະທຳສັດຈະ ເມື່ອພາຍ ລຸນລ້ຳ ທີໂຣ ອັນວ່າຈ່າເມືອງຜູ້ມີພະຫຍາ ທະເທຍຍະເຂປເປ ກໍ ເພິ່ງໃສ່ ທັນດັງຍັງສິນໄໝ ຕັສສະແກ່ມັນຜູ້ນັ້ນ ປະຣາຊິຕາ ອັນ ທ່ານຫາກແພ້ມັນແລ ສັລລັກຂິຕະເກ ໃນເມື່ອກ້ອຍຄຳອັນໃດຫາກ ກົດໝາຍ ລິຂະຕິ ກໍຫາກຂຽນໄວ້ສັນໃດ ອະສັຈຈາມັກວ່າ ຈະລະຍາ ອັນວ່າຄົນຜູ້ຄາດຈາກສັດຈະ ອະຣາຊັງ ຍັງອັນບໍ່ແພ້ທ່ານມັກວ່າ ທ່ານຫາກແພ້ມັນ ໂກວິວາກຂະໂຍ ອັນວ່າຈ່າເມືອງຜູ້ສະຫລາດ ວິດາປເປ ກໍເພິ່ງແຕ່ງ ທັນເດນະ ດ້ວຍສິນໄໝແລສິນໃຊ້ ຕັສສາ ນັງແກ່ມັນຜູ້ນັ້ນ ຕະກາ ໂດຍດັ່ງໄດ້ແກວດກົດໝາຍຂຽນໜັງສືໄວ້ ນັ້ນເທີ້ນ.

ອະທິບາຍວ່າ ບຸກຄະລະທັງສອງ ອັນເຂົ້າໄປວ່າກ້ອຍຄຳໃນທີ່ ວິນິດໄສຄຳ ອັນຮູ້ຍາກບໍ່ແຈ້ງແກ່ຜູ້ພິຈາລະນາ ແລກົດໝາຍໜັງສື ໃຫ້ກະທຳສັດຈະ ອັນກິນພັນກັນໂດຍປະການສິ່ງໃດ ຄົນທັງສອງຜູ້

ມາສູ່ວິນິດໄສນັ້ນ ກະທຳຕາມຄຳແຫ່ງວິນິດໄສ ກະທຳຕາມກົເອົາຄຳຕາມໃຈມັກຂອງມັນ ສິນໃຊ້ສິນໄໝ ອັນໄດ້ກົດໝາຍໜັງສືໄວ້ນັ້ນ ຄວນໃສ່ຕາມຄຳໝາຍເທີ້ນ ເຫດທ່ານຫາກແພ້ມັນແລ້ວມັນຜູ້ຈັກຮ້ອງກະທຳສັດຈະກິນພັນທ່ານເມື່ອລຸນ ເລົ່າບໍ່ເພິ່ງໃຫ້ກະທຳອັນຈັກພັນແລ ມັນຜູ້ຄາດຈາກສັດຈະ ຫວັ່ນໄຫວໄປມາສັນນັ້ນຮຽກຊື່ທ່ານຫາກແພ້ມັນແລ້ວ ວິນິດໄສກໍຄວນແຕ່ງສິນໄໝ ໃສ່ແກ່ມັນຕາມດັ່ງໄດ້ກົດໝາຍໃສ່ໜັງສືໄວ້ນັ້ນເທີ້ນ.

ກ່າວສາທຸ ມະຄະຣະສຸດະຕິ ເປັນວິໄນຍະກະຖາແລ້ວເທົ່ານີ້ກ່ອນແລ.

<u>ກະບິນເມືອງ 11 ປະການ</u>

ບັດນີ້ຈັກກ່າວຍັງລະບິນເມືອງ ມີສິບເອັດປະການດັ່ງນີ້ :

1) ເມືອງໃດຫລ້າງມີເຈົ້າໝື່ນ ບໍ່ໃຫ້ມີກໍຜິດ
2) ຈາຣີດມີເຈົ້າພັນ ແລໃຫ້ມີເຈົ້າໝື່ນກໍຜິດ
3) ເມືອງໃດຫລ້າງມີເຈົ້າໝື່ນ ແລໃຫ້ມີເຈົ້າພັນກໍຜິດ
4) ເມືອງໃດຫລ້າງມີມາ ແລໃຫ້ມີຊາງກໍຜິດ
5) ເມືອງໃດຫລ້າງມີຊາງ ແລໃຫ້ມີມາກໍຜິດ
6) ຫລ້າງເມືອງມີກະເສີມຫລົ້ມມະໂກສິບ ແລະບໍ່ມີກໍຜິດ
7) ຫລ້າງໄປເກີງເມືອກະເສີມແລໃຫ້ມີກໍຜິດ
8) ທີ່ຄວນແປງ ແລບໍ່ແປງກໍຜິດ
9) ທີ່ບໍ່ຄວນແປງ ແລແປງກໍຜິດ
10) ທີ່ຄວນຂຶນ ແລບໍ່ຂຶນກໍຜິດ
11) ທີ່ບໍ່ຄວນຂຶນ ແລຂຶນກໍຜິດ

ກະບິນເມືອງມີສັນນີ້ ທ້າວພະຍາມະຫາກະສັດ ເສນາແຕ່ງເມືອງໃຫ້ຕາມກະບິນເມືອງແຕ່ກ່ອນສັນໃດ ໃຫ້ຕາມຮີດບູຮານ ຄັນແຕ່ງຍິ່ງຄືວ່າ ຫລ້າງບໍ່ຫ່ອນມີກໍຢ່າໃຫ້ມີ ຢ່າໃຫ້ລະຮີດ ຄັນແຕ່ງເມືອງແລຜິດຮີດບູຮານເມືອງ ຍ່ອມເດືອດຮ້ອນແກ່ແຜ່ນດິນ ນ້ຳ

ຟ້ານ້ຳຝົນ ເມື່ອກ້ວມກໍນັກ ເມື່ອແລ້ງກໍນັກ ຕາຍດ້ວຍຄົນເກີດເປັນພະຍາດຫລາຍປະການ ເກີດເປັນລັກເປັນໂຈນ ຕາຍດ້ວຍອັນປາກເຊົ້າ ຄັນແຕ່ງບໍ່ຊອບດ້ວຍອັນຜິດບູຮານ ທຸງນຍ່ອມຂ້ຳເຂືອກເຍືອກໄກລາທົ່ນແກ່ແຜ່ນດິນແລ.

<u>ຜິດຈາຣິດບ້ານ 16 ປະການ</u>

ທີ່ນີ້ຈັກກ່າວຈາຣິດບ້ານອັນຜິດ ມີສິບຫົກປະການດັ່ງນີ້ :

1) ທີ່ເໜືອງມາກຸ້ມໃຫ້ເປັນນາກໍຜິດ
2) ທີ່ນາຂຸດໃຫ້ເປັນເໜືອງກໍຜິດ
3) ທີ່ນາກະທຳໃຫ້ເປັນບ້ານກໍຜິດ
4) ທີ່ບ້ານກະທຳໃຫ້ເປັນນາກໍຜິດ
5) ທີ່ຫລ້າງຝາຍ ບໍ່ໃຫ້ເປັນຝາຍກໍຜິດ
6) ທີ່ບໍ່ຄວນໃຫ້ມີຝາຍ ໃຫ້ມີຝາຍກໍຜິດ
7) ທີ່ຂົວບໍ່ໃຫ້ເປັນຂົວກໍຜິດ
8) ທີ່ບໍ່ຄວນມີຂົວ ໃຫ້ມີຂົວກໍຜິດ
9) ທີ່ເປັນທາງແລຕັນເສຍກໍຜິດ
10) ທີ່ບໍ່ຄວນແປງທາງເລົ່າແປງທາງກໍຜິດ
11) ທີ່ຫລຸມທີ່ໜອງຈິ່ງໃຫ້ເປັນນາກໍຜິດ
12) ທີ່ນາຂຸດໃຫ້ເປັນໜອງກໍຜິດ
13) ຄວນກະທຳ ແລບໍ່ກະທຳກໍຜິດ
14) ທີ່ບໍ່ຄວນເປັນຮີດ ແລໃຫ້ເປັນຮີດກໍຜິດ
15) ທີ່ຫລ້າງອັນໃຫ້ເປັນຮີດ ແລບໍ່ໃຫ້ເປັນຮີດກໍຜິດ
16) ທີ່ບໍ່ຄວນກະທຳ ແລກະທຳກໍຜິດ

ອັນນີ້ເປັນຈາຣິດບ້ານເມືອງແລ ໃນລັກຂະນະສິບຫົກປະການນີ້ ໃນບົດຕົ້ນວ່າ ທີ່ເໜືອງໃຫ້ເປັນທີ່ນາ ທີ່ນາໃຫ້ເປັນເໜືອງກໍຜິດນັ້ນ ຜີທີ່ຕົນມັນກະທຳໃຫ້ຫລ້າງຄະລຳເຂັດຂວງ ກໍຊ່າງມັນ ຜີຜູ້ໜຶ່ງຫາກກຸ້ມເໜືອງທ່ານເສຍ ກໍດີ ຂຸດນາໃຫ້ເປັນເໜືອງກໍດີວ່າ

ບໍ່ຄວນທຳ ຜີມີຜູ້ໜຶ່ງຫາກກະທຳດັ່ງນັ້ນ ຮຽກວ່າຜິດ ໃຫ້ມັນຫາສະປີຕັກກະສອງການເງິນຊາວ ໄກ່ຄູ່ໜຶ່ງ ທຽນສອງຄູ່ແປງເຈົ້ານາໃຫ້ກິນມາໃຫ້ດີ ຜີມັນຫາກບໍ່ກິນບໍ່ແປງດີ ໃຫ້ຫາສະປີຕັກກະສອງການ ໝູໂຕໜຶ່ງ ທຽນສີ່ຄູ່ແປງຜີ ຜີບໍ່ແປງສັດສິ່ງຄົນເຮືອນເຈົ້າມານັ້ນ ຫາກຍັງວິນາດຈິບຫາຍ ໃຫ້ໃຊ້ຄ່າຂອງທ່ານທັງມວນ.

<u>ກະບິນບ້ານເມືອງມີຫົກປະການ ອັນບໍ່ງາມຕາມຈາຣິດ</u>

1) ບ້ານໃດບໍ່ມີນາຍບ້ານກໍບໍ່ງາມ ບ້ານໃດເທົ່າມີນາຍບ້ານໆ ບໍ່ມີກໍຜິດ
2) ບ້ານໃດບໍ່ມີຍຸ້ງສ້າງເຂົ້າກໍບໍ່ດູດີ
3) ບ້ານໃດຫລ້າງມີປະເທດກຽນ ບໍ່ໃຫ້ມີກໍຜິດ
4) ທີ່ປະເທດກຽນບໍ່ມີ ແລໃຫ້ມີກໍຜິດ
5) ບ້ານແລຕັ້ງຕູບຢູ່ ບໍ່ແປງເຮືອນກໍຜິດ
6) ທີ່ຄວນຕັ້ງຕູບ ແລະແປງເຮືອນຢູ່ກໍຜິດກະບິນບ້ານ ດັ່ງນີ້ແລ.

<u>ກະເສີມເມືອງກໍມີຫ້າປະການ :</u>

1) ຂຶ້ນລະດູສັງຂານຫລິ້ນມະໂຫສົບ
2) ປີໃໝ່ຫລິ້ນມະໂຫສົບ
3) ອອກພັນສາຫລິ້ນມະໂຫສົບ ນຳດອກໄມ້ໄປຖວາຍສັກກາ ຣະບູຊາຂ່ວງເທວະດາ ກຸລະປຸບພະກາຣີ ເທວະດາກະກຸນ
4) ຕັ້ງບູຊາຕາມປະທີບ
5) ທັດສິງຍັງຜູ້ເຖົ້າຜູ້ແກ່ ປູ່ຍາຕານາຍ ພໍ່ແມ່ອັນມີຄຸນ
6) ສີສິດທິເທດສະໜາທຳ

ອັນນີ້ຊື່ວ່າກະເສີມເມືອງມີດັ່ງນີ້ແລ.

<u>ຜິດຄອງເມືອງ 16 ປະການ</u>

ບັດນີ້ຈັກກ່າວ ມະຄະຣະວິຣຸດທະປະເວນີ ມີສິບຫົກປະການດັ່ງນີ້:

1) ໄພ່ເມືອງເອົາຕົນທຽມນາຍກໍຜິດ

2) ນາຍເອົາຕົນທຽມໄພ່ກໍຜິດ

3) ນາຍສິບເອົາຕົນທຽມນາຍຫ້າກໍຜິດ

4) ນາຍຫ້າເອົາຕົນທຽມນາຍສິບກໍຜິດ

5) ນາຍສິບເອົາຕົນທຽມນາຍຮ້ອຍກໍຜິດ

6) ນາຍຮ້ອຍເອົາຕົນທຽມນາຍຫ້າກໍຜິດ

7) ນາຍຮ້ອຍເອົາຕົນທຽມນາຍພັນກໍຜິດ

8) ນາຍພັນເອົາຕົນທຽມນາຍຮ້ອຍກໍຜິດ

9) ເຈົ້າພັນເອົາຕົນທຽມເຈົ້າໝື່ນກໍຜິດ

10) ເຈົ້າໝື່ນເອົາຕົນທຽມເຈົ້າພັນກໍຜິດ

11) ໄພ່ນັ່ງຮ່ວມຂຸນກໍຜິດ

12) ຂຸນນັ່ງຮ່ວມໄພ່ກໍຜິດ

13) ທີ່ນັ່ງໜ້າ ພອຍມານັ່ງຫລັງກໍຜິດ

14) ເຈົ້າຂຸນອັນຫລາວນັ່ງພາຍຫລັງພອຍເລື່ອມານັ່ງໜ້າກໍຜິດ

15) ໄພ່ເມືອງກິນເຂົ້າດອມນາຍກໍຜິດ

16) ເຈົ້າຂຸນກິນເຂົ້າດອມໄພ່ກໍຜິດ

ມະຄະຣະວິຣຸດທະດັ່ງນີ້ແລ ຄອງວິຣຸດທະອັນກ່າວມານີ້ ຜູ້ນ້ອຍກະທຳຕົນນັ່ງຮ່ວມຜູ້ໃຫຍ່ກໍຜິດ ກໍຄວນໃຫ້ສົມມາຄາຣະວະ ຜີແລກ່າວຂື່ນສິດທິສັກນາມມະກອນທ່ານເສຍ ອັນເຈົ້າຫາກປູກແປງໃຫ້ເປັນຍົດ ດ້ວຍນາມວິເສດຊື່ວ່າຄວນໄໝນັກ ຕົນຫາກຂ່າສິດທິສັກເສຍ ເຈົ້າຕົນຫາກໃຫ້ແລ້ວ ຍັງເອົາຕົນທຽມຜູ້ນ້ອຍ ກໍຊື່ວ່າຜິດ ຄວນໃຫ້ສົມມາແກ່ຜູ້ໃຫ້ຍົດແກ່ຕົນເທີ້ນ.

ຈັກກ່າວ ວິຣຸດທະຄາມະເຂດຕະຫານິຍະ ດັ່ງນີ້ : ເໜືອງຫລ້າງເສຍໃຫ້ເປັນນາ ກໍຜິດ ທີ່ນາໃຫ້ເປັນເໜືອງກໍຜິດ ວິຣຸດທະບົດນີ້ ຜີທີ່ມັນ ມັນຫາກມ້າງ ຫາກເປັນອົນຕາຍແກ່ມັນຜູ້ມ້າງ ທີ່ທ່ານວ່າຜິດ ໃຫ້ກົມໃຫ້ດີດັ່ງເກົ່າ ແລ້ວໃຫ້ຫາສະປີຕັກກະສອງການ

ເງິນຊາວ ໄກ່ຄູ່ໜຶ່ງ ທຽນຄູ່ໜຶ່ງ ແປງທ່ານ ຜີມັນບໍ່ກຸມເໃຫ້ດີແທ້ ໃຫ້ຫາສະປີຕັກກະສອງການ ໝູຕົວໜຶ່ງ ທຽນສີຄູ່ ເງິນຮ້ອຍໜຶ່ງ ແປງທ່ານ ຜີບໍ່ແປງ ສັດສີ່ງງິວຄວາຄເຈົ້ານາຕາຍ ຈຳໃຊ້ຂອງທ່ານ ເຫດວ່າເຂດຂຶ້ງແຫ່ງທ່ານດາຍ ອັນໜຶ່ງ ທີ່ນາແລຕັ້ງບ້ານກໍຜິດ ບ້ານໃຫ້ເປັນນາກໍຜິດ ທີ່ຝາຍແລບໍ່ໃຫ້ເປັນຝາຍກໍຜິດ ທີ່ບໍ່ຄວນແປງຝາຍເລົ່າແປງຝາຍກໍຜິດແລ.

ເຍ ອານາວິຣຸທທະກາຍາ ທາເຣຕິ ຣາຊັສສະ ເຕສັງ ພຸຊ–ຊິສສະມະນຸສສາ ທາສສະ ອັຕຣະກຣະຕາ ປະຣາຄັຕຕາ ເຍ ຊະນາ ອັນວ່າຄົນທັງຫລາຍຝູງໃດ ອານາວຸທທະກາຍາ ອັນຢູ່ໃນແຄວ້ນເມືອງຕົນ ແລກະທຳຜິດອາດຍາ ແຫ່ງທ້າວພະຍາ ມະຫາກະສັດແຫ່ງຕົນ ເຕ ຊະນາ ອັນວ່າຄົນທັງຫລາຍຝູງນັ້ນ ພຸຊຊິສສາ ມະນຸສສາ ອັນເປັນຄົນເກີດມາມີຊາດອັນເປັນໄທກໍດີ ທາສາກໍຊື່ວ່າເປັນຂ້າ ຣາຊັສສະແຫ່ງພະຍາແລ ອັຕຣະກຣະຕາ ປະຣາທັຕຕາ ດ້ວຍພາວະ ອັນເຂົາກະທຳຜິດອາດຍາ ດ້ວຍຕົນເຂົາ ສວາປີເນນະ ກຣະຕັຕຕາ ເຫດເຈົ້ານາຍເຂົາກະທຳກະບົດຄິດນັ້ນແລ.

ອະທິບາຍວ່າ ຄົນອັນຜິດທ້າວພະຍາ ຢູ່ເມືອງດຽວແລເຈົ້ານາຍເຂົາກະທຳຜິດແກ່ບ້ານເມືອງ ແລເຈົ້າແຜ່ນດິນ ພະຍາມີອາດຍາໃຫ້ນຳເອົາຍັງຄົນທັງຫລາຍ ຝູງບ່າວ ແມ່ນເຂົາມີຊາດອັນເປັນໄທກໍດີ ຄົນທັງຫລາຍຝູງນັ້ນ ກໍເປັນຂ້າແຫ່ງພະຍາທັງມວນແລ ກຣັຕຣາປະຣາເທ ທຣັພຍາສເສ ຣາຊັສສະ ທຣັພຍະໄທຕິ ຕັງ ຍັສສະ ອະທາຕັສເສ ຣຸລທະນາ ອະເທນະ ຣາວິປັຕຍາ ກຣັຕຣາປະຣາທະເວ ໃນເມື່ອຄົນທັງຫລາຍຝູງກະທຳຜິດທ້າວພະຍາ ອັນເປັນເຈົ້າແຜ່ນດິນນັ້ນ ທຣັພເຍສເສ ອັນວ່າເຂົ້າຂອງແຫ່ງເຂົາທັງຫລາຍຝູງນັ້ນ ໄທຕິ ກໍເປັນ ຣາຊັສສະ ທຣັພຍັງ ຊື່ວ່າເປັນຂອງພະຍາສິ້ນແລ ທຣັພຍັງ ອັນວ່າຂອງຝູງນັ້ນ ມະຣາປັຕຕິຍາ ອັນທ້າວພະຍາຜູ້ເປັນໃຫຍ່ ແກ່ຄົນທັງຫລາຍ ອັທທາ ກໍໃຫ້ ຍັສສະ

ແກ່ບຸກຄະລະຜູ້ໃດ ຣຸລຫະນາ ກໍຂຶ້ນ ຕັສສະ ແກ່ບຸກຄະລະຜູ້ນັ້ນ
ຕັ້ງ ທຣັພຍັງ ອັນວ່າເຂົ້າຂອງນັ້ນ ນະຣາທິປັຕນາ ອັນທ້າວພະ
ຍາຜູ້ເປັນໃຫຍ່ແກ່ແຜ່ນດິນ ແລຄົນທັງຫລາຍ ນະອະເທ ແລບໍ່
ໃຫ້ ຍັສສະ ກັຕກະຈິ ແກ່ບຸກຄະລະຜູ້ໃດຜູ້ໜຶ່ງ ຣາຊັສສະ ທຣັພຍາ
ໄຫຕິ ກໍເປັນຂອງແຫ່ງພະຍາແລ.

ອະທິບາຍວ່າ ເຂົ້າຂອງແຫ່ງຜູ້ກະທຳຜິດ ອັນບໍ່ຄວນເຢົາປາ
ໄດ້ ກໍມາເປັນຂອງພະຍາສັ້ງ ພະຍາມັກໃຫ້ແກ່ຜູ້ໃດຂຶ້ນແລ ຜີແລ
ບໍ່ໃຫ້ແກ່ຜູ້ໃດ ກໍເປັນຂອງແຫ່ງພະຍາແລ ແມ່ນຄົນຜູ້ນັ້ນກໍຍັງເປັນ
ຂ້າແຫ່ງພະຍາແລ.

ຄືວະທັນດັ່ງ ທັຕວາ ມຸນຈິ ພຸຊຊິສສະ ອັຕຣະນາ ສິບາ ອິ–
ນັມປີ ທຸລັພພາ ພະເວ ຄາຕະເກ ວິນາສເສຍຍະ ອິໂນ ກຣັຕຣະ
ປະຣາທະຊະນາ ອັນວ່າຄົນທັງຫລາຍຜູ້ກະທຳຜິດອາດຍາ ທ້າວ
ພະຍາດ້ວຍຕົນ ທັຕວາ ໃຫ້ແລ້ວ ຄືວະທັນດັ່ງ ຍັງໜີ້ຄ່າຄໍ ມຸນ
ຈິ ກໍພົ້ນ ອິນັມປີ ແມ່ນອັນວ່າໜີ້ ທຸລັພພາ ອັນເຈົ້າໜີ້ໃຫ້ຍາກ
ພະເວ ກໍເພິງມີ ຄາຕະເກ ໃນເມື່ອພະຍາແລຂ້າເສຍ ຍັງຄົນຜູ້
ຜິດອາດຍາອັນກູ້ໜີ້ນັ້ນ ອິນາ ອັນວ່າໜີ້ ວິນາເສ ກໍຈິບຫາຍເສຍ
ສິບາ ກໍເພິງມີແລ.

ອະທິບາຍວ່າ ຜູ້ຜິດອາດຍາແລຂ້າເສຍ ມັນຍັງກູ້ໜີ້ທ່ານ
ມັນເສຍໜີ້ຄ່າຄໍ ອັນພົ້ນເປັນໄທແລ ມັກວ່າ ໜີ້ອັນນັ້ນຈັກໄດ້ກໍ
ເປັນອັນຍາກ ມັກວ່າໃຫ້ເຈົ້າໜີ້ຄ່ອຍການເອົາ ມັນມີໃຫ້ມັນຄ່ອຍ
ຫາໃຫ້ ຈັກແຕ່ງກໍບໍ່ໄດ້ ຜິດອາດຍາແລຂ້າມັນ ຜູ້ກູ້ໜີ້ນັ້ນເສຍແລ້ວ
ແລເອົາຄົວເຮືອນມັນແທ້ ໜີ້ອັນນັ້ນຈິບຫາຍ ຈັກວ່າແກ່ພີ່ນ້ອງ
ເຜົ່າພົງວົງສາວ່າພີ່ນ້ອງມຶງກູ້ໜີ້ຕູ ໃຫ້ໃຊ້ວ່າອັນກໍບໍ່ໄດ້ ຜີເຂົາຜູ້ງ
ເປັນພີ່ນ້ອງ ຍັງໄດ້ຄົວມັນອັນເສດສະຫລໍ ກໍຈຶ່ງໃຫ້ໃຊ້ຕາມອັນໄດ້
ຄົວອັນໜ້ອຍອັນຫລາຍນັ້ນເທື້ອນ.

ປິຕຸປິຕາທະຍາ ມະເຫສີ ມາຕາປິຕາ ປະຣະອິນັງ ອັຕກະ

ເປນຕິ ປຸຕຕະນັຕຕາ ອິນະສັນຕິເກ ສວະກາເຣຍເຍ ນະເສນຕິ ສັພພັທຍະ ອິນະ ປະຣິຄັນທີ ຕະມາຍະເທເສ ອັທເຍ ຄະຣະກັມ–ເມສຸ ກຣັຕຕະກາ ຊະເນ ປຣັຕຍາ ອັນວ່າຜູ້ເປັນໃຫຍ່ ປິຕຸປິຕາທະຍາ ມະເຫສິທີ ຄືວ່າ ປຸຕຕະມາຕາປິຕຸ ລູກພໍ່ແມ່ກໍດີ ຄັນທັນ–ຕິ ກໍກືເອົາ ປະຣະອິນັງ ຍັງໜີ້ແຫ່ງທ່ານ ອັຕກາເປນຕິ ກໍນຳມາຕັ້ງໄວ້ ປຸຕຕະນັຕຕາ ຍັງລູກແລຫລານແຫ່ງຕົນ ອິນະສັນຕິເກໃນເຈົ້າໜີ້ ກາເຣຍຍະ ເພື່ອໃຫ້ຄ້ຳທະຣົງໄວ້ຄືວ່າໃຫ້ໃຊ້ສອຍ ບໍ່ໃຫ້ຈຳເຣີນຍັງດອກ ເຕຊະນາ ອັນວ່າຄົນທັງຫລາຍຝູງມາຄ້ຳໜີ້ນັ້ນມາສເສນຕິ ກໍຈິບຫາຍ ຍັງ ວັຕກຸງ ຍັງວັດກຸອັນໃດ ຍະເທ ອິນະຍະເສ ໃນເມື່ອພໍ່ແລແມ່ແລມາໃຫ້ຍັງໜີ້ເມື່ອໃດ ລັພພັຍຍະ ກໍເພິງວ່າໄດ້ ຕັງ ວັຕກຸງ ຍັງວັດກຸອັນເສຍນັ້ນ ສັພພັງ ອັນທັງມວນແລ ອິນະປະຣິຄັນທິຕະມາ ອັນວ່າເຈົ້າໜີ້ນັ້ນແລກືເອົາຍັງໜີ້ແຫ່ງທ່ານຝູງອື່ນມາຊື້ສູ່ກິນ ຍະເທ ອິນະ ປສັເສ ໃນເມື່ອໃຊ້ແທນຍັງໜີ້ອັນນັ້ນແລ້ວແລຈັກມີ ດັ່ງນັ້ນ ນະ ທັຍຍະ ກໍບໍ່ເພິງວ່າຈັກໃຫ້ມັນໃຊ້ແທນ ດອມຍັງໜີ້ຝູງກູ້ມາສູ່ກິນນັ້ນແລ ກຣັຕຕະ–ຕາ ເຫດພາວະແຫ່ງເຂົາໄດ້ກະທຳ ຄະຣະກັມເມສຸ ໃນອັນເປັນການຢາວເຮືອນແລ້ວແລ.

ອະທິບາຍວ່າສັນນີ້ ຜູ້ປູ່ຄ້ຳສິນທ່ານ ແລເຈົ້າສິນໄປຄວ່າທະວີໜີ້ທ່ານຜູ້ອື່ນມາສູ່ກິນ ເມື່ອໃຊ້ແທນໜີ້ອັນນັ້ນ ກໍບໍ່ຄວນຕົກໃສ່ແກ່ມັນຜູ້ຄ້ຳສິນຊ່ອຍໃຊ້ແລ ມັນຄ້ຳສິນແຫ່ງເຂົານັ້ນ ກໍໄດ້ການເຈົ້າເຮືອນແລ້ວແລ ຊາຕິ ກິຍາ ຜູ້ໃຊ້ສິນຫລ້າງກິນດອມເຈົ້າເຮືອນເມື່ອມັນໜີບໍ່ທ່ອນໄລ່ເອົາຄຳເຂົ້າ ອັນກິນນັ້ນໄດ້ສັກເທື່ອແລ ຜີວ່າເປັນພະຍາດ ເຈົ້າເຮືອນເອົາຂອງໄປເຢົາຢາ ຜີແລມີແຫ້ໃຫ້ໃຊ້ເກິ່ງໜຶ່ງຄວນແລ ຂອງອັນມັນໃຫ້ຈິບຫາຍນັ້ນ ມີເທົ່າໃດໃຫ້ໃຊ້ເທົ່ານັ້ນເທີ້ນ.

ອະກາເລ ອິນະຄາຣິກາ ບຸຊາເປ ວາຣະຈະມິຄຄາທີ ອະທັທ–

ຍາ ເສສັງ ທັທທະວາເປ ສະມຸຣະກາ ສະທຣັພຍະທາ ອິນະກາຣິ–ກາ ອັນວ່າຄົນຜູ້ມາຄ້ຳໜີ້ ກາລັງ ກະຕາ ແລກະທຳຍັງກາລະຕາຍ ອະກາເລ ໃນກາລະທີ່ອັນໄປ່ຄວນພໍຕາຍ ບຸຊຊະເປ ໃນທີ່ອັນໃຊ້ໃຫ້ໄປຣົບ ວາຣະວະນິຄາທິ ຍັງເນື້ອຕົວກ້າຈັ່ງໄຣເປັນຕົ້ນ ອະ–ທັທທະຍາ ກໍເພິງໃຫ້ໃຊ້ເຄິ່ງໜຶ່ງ ທັທທາປເປ ກໍເພິງວ່າໃຫ້ໃຊ້ເສສັງ ຍັງຄ່າອັນຫລໍ ສະມູລະກາ ສະທຣັພຍະຕາ ເຫດຍັງເປັນກັບດ້ວຍເຂົາກຶໜີ້ແຫ່ງທ່ານດາຍ.

ອະທິບາຍວ່າຄົນທັງຫລາຍ ຝູງອັນເປັນພໍ່ແມ່ ປູ່ຍ່າຕານາຍເຂົາໃຫ້ມາຢູ່ຄ້ຳໜີ້ນັ້ນ ອັນເຈົ້າໜີ້ເຈົ້າສິນ ຫາກຈຸກຈຳໃຫ້ໄປຣົບຍັງສັດທັງຫລາຍຕົວກ້າແຂງກໍດີ ວ້າຍນ້ຳຂຶ້ນຕົ້ນໄມ້ເປັນຕົ້ນແລຕາຍດ້ວຍເຫດອັນໄປ່ພໍຕາຍດ້ວຍອາຍຸ ຜິແລມີດັ່ງນັ້ນ ຄວນໃຊ້ຄ່າຄົນທ່ານເຄິ່ງໜຶ່ງ ໄນຍະໜຶ່ງຄ່າຄົນທ່ານນັ້ນເຫລືອຄ່າໜີ້ນັ້ນ ໃຫ້ໃຊ້ທັງມວນ ຜິສິນນັ້ນເຫລືອຄ່າຄົນທ່ານ ໃຫ້ໃຊ້ເຄິ່ງໜຶ່ງ ເຫດຝູງມາໃຊ້ການເພື່ອໃຫ້ຂຶ້ນດອກ ຍັງເປັນກັບດ້ວຍມູລະບໍ່ຂາດແລ ເປັນກັບດ້ວຍເຂົ້າຂອງທ່ານດາຍ ຈຶ່ງໃຫ້ໄດ້ໃຊ້ເຄິ່ງໜຶ່ງເພື່ອອັນແລ.

ວາຕກະປະຍິຕເກ ວິຣຸທເຍ ເວປັນນາ ມິຕຕເກວະທາອິນນັຕກິ ທຸຣະກັຕເຕ ຈະເສສະກາ ທັຊຊາ ປະບິສສະວາຕກະປະ–ຍິຕເກ ໃນເມື່ອຄົນອັນພໍ່ແມ່ປູ່ຍ່າຕານາຍ ເຂົາຫາກມາຕັ້ງໄວ້ຄ້ຳໜີ້ສິນທ່ານ ວິຣຸທເຍ ກໍຜິດ ເຈ ປັກກາມິແລໜີ ວະທາອັນວ່າຈຳເຣີນດອກສິນຂຶ້ນນັ້ນ ຕັຕເກ ໃນທີ່ມັນຄ້ຳໜີ້ຢູ່ນັ້ນ ວາ ປະນະປະການໜຶ່ງ ກັຕເຕ ຈະ ມັກວ່າ ສາມິນາ ກັຕເຕ ໃນເມື່ອເຈົ້າໜີ້ແລກະທຳ ອິນັຕກິ ທຸຣາ ຍັງອາການອັນຮ້າຍຜິດແກ່ຍິງຜູ້ອັນຢູ່ຄ້ຳໜີ້ ຫາກກະທຳສິ່ງມີຕົ້ນວ່າ ໃຈແຫ່ງຍິງນັ້ນບໍ່ມັກສູ່ດ້ວຍກາມາຣົມ ເສສາ ອັນວ່າໂທດອັນເຫລືອກວ່າໂທດ ອັນຜິດໃນຍິງນັ້ນ ທັຊຊາປະເຍ ກໍເພິງໃຫ້ແກ່ເຈົ້າສິນ ໂທສາ ມັກວ່າ ໂທສະອະທິກາອັນເຫລືອແຫ່ງໂທດອັນເຈົ້າໜີ້ຫາກກະທຳຜິດນັ້ນ.

ອະທິບາຍວ່າ ຄົນອັນທ່ານເອົາມາຕັ້ງໄວ້ ໃຫ້ຄ້ຳໜີ້ສິນທ່ານ ແລຜີມັນໜີໄປຄວ່າຢູ່ທີ່ໃດ ດອກສິນກໍຈຳເຣີນຂຶ້ນໃນທີ່ອັນມັນຢູ່ນັ້ນ ປະການໜຶ່ງ ຜີຜູ້ເຈົ້າສິນຫາກກະທຳຜິດໃຈແຫ່ງມັນ ດ້ວຍປະສົງ ສູ່ມັນ ເຈົ້າໜີ້ແລເກາະກຸມມັນ ດ້ວຍ ກາມະຣາຄະຕັນຫາ ຜີວ່າ ສິນຍັງເຫລືອກວ່າໂທດມັນນັ້ນ ໃຫ້ໄດ້ແກ່ມັນເຈົ້າໜີ້ເຈົ້າສິນ ຜີສິນ ຍັງພໍໂທດນັ້ນກໍຫາກແລ້ວ ຜີສິນນັ້ນນ້ອຍ ບໍ່ພໍໂທດກໍໃຫ້ໂທດແຖມ ເທີ້ນ ປັກກາເມ ອິນະພັນຕິ ເຈ ຜີເຈົ້າໜີ້ສິນແລເຫດມັດຣັດເອົາ ຍັງຄົນຜູ້ຄ້ຳໜີ້ສິນນັ້ນ ໂທສາ ອັນວ່າໂທດ ວິທາປະເຍ ນັກປາດກໍ ຄວນແຕ່ງ ຕະກາ ກໍຕາມໂທດອັນມີ ຄືວ່າ ໂທດອັນມັນຄວນໃຊ້ ສິນນັ້ນ ເສສາ ອັນວ່າສິນອັນເຫລືອກວ່າໂທດ ທະປະຍາ ກໍເພິງ ໃຫ້ ອິນສັສະແກ່ເຈົ້າໜີ້ສິນ ສະກັ້ມປິມູລັສສະ ກຣັຕຣາ ເຫດອັນ ຄົນສິນຜູ້ໜີ້ ຜູ້ເຈົ້າມູນຫາກຍັງໄດ້ທຳອາການອັນຄ້ຳ ອັນມາຍັງ ເປັນຄົນຕົນມັນບໍ່ຂາດ ມັກວ່າ ຜີຄ້ຳສິນນັ້ນໜີໄປຄວ່າຢູ່ ເຈົ້າສິນ ເຫັນແລມັດເອົາ ເຈົ້າສິນກໍເປັນໂທດ ເພື່ອຍັງມີເຈົ້າມູນຄ້ຳການ ຜີວ່າ ຄົນຜູ້ຄ້ຳໜີ້ຜ່າຍໜີໄປຢູ່ກັບທີ່ໃໝ່ ດອກສິນທ່ານກໍຈຳເຣີນກັບ ທີ່ນັ້ນ ດີທໍ່ໃຫ້ທີເອົາເງິນເທີ້ນ ຍັງເຫັນຄົນຄ້ຳສິນທ່ານແລຜູກເອົາ ຜີວັດກຸສິນນັ້ນທໍ່ໂທດ ອັນຜູກມັດນັ້ນຫາກແລ້ວ ຜີຍັງມາກກວ່າໂທດ ອັນເຫລືອກວ່ານັ້ນໃຫ້ແຕ່ງໃຫ້ເຈົ້າສິນເທີ້ນ ຫົນປະເທດເມືອງຕັກ ກະສິລານີ້ ຜີທ່ານບໍ່ຜິດແລຍັງຜູກມັດ ໃຫ້ໃສ່ສິນໄໝເກືອງຄ່າຄົນຕົນ ມັນຜູກມັດທ່ານນັ້ນ ສິນສາຣູບຮ້ອຍຊາວ ເຄົ້າດອກນັ້ນກໍຫາກຕັ້ງຢູ່ ແກ່ຜູ້ເອົາ ຍັງໜີ້ສິນນັ້ນ ເຫດນັ້ນຈຶ່ງໃຫ້ເອົາດອກຄຸບເທົ່າແລ ໃຫ້ ຜູ້ເຈົ້າສິນກິນເທົ່າໜຶ່ງ ຜູ້ຄ້ຳໜີ້ເອົາໜຶ່ງເທີ້ນ.

ມະຍະເມວະ ອິນະຄັນທາ ຕັສເສ ຕັງ ຍະທິສິຕິ ເຈ ວະ-ສະນັມປິ ປະຣາຍິປິ ອິນະມຸຕເຕນະ ອັຕຣະການປາ ອິນະມຸຕເຕ ຍັສສັຕກາເນ ຕັສສະ ນະ ອິດສິຕັງ ຕະກາມູລະສວາມີ ອະກັ້ມ-ພິກາ ອິທັງ ສະຍະອິນະລັກຂະນັງ ໂຍ ນະໂຣ ອັນວ່າຄົນຜູ້ໃດ ອິ

ນະຄົນທາຕິ ກໍກີເອົາບັງສິນແຫ່ງທ່ານ ສະຍະເມວະ ດ້ວຍຕົນສຶ່ງ ດຽວ ມູລະສວາມີ ອະກຸ້ມພິຕາ ອັນຜູ້ເຈົ້າມູລະທາກບໍ່ຮັບບໍ່ຄ້ຳເອົາ ສິນແຫ່ງເຈົ້າສິນ ໂສ ນະໂຣ ອັນວ່າຄົນຜູ້ນັ້ນ ຍະທິມິຕິ ເຈ ຜິ ແລ ມັກໂດຍປະການສັນໃດ ວະສະນັມປິ ແມ່ນກິຍາອັນຈັກໃຫ້ຢູ່ກໍ ດີ ປະຣາຍິປິ ແມ່ນກິຍາອັນຈັກໃຫ້ໜີກໍດີ ຕັສເສຕັງ ກິຍາອັນນັ້ນ ຕາມໃຈຜູ້ເຈົ້າສິນນັ້ນ ອິນະມຸຕເຕ ໃນເມື່ອມັນແລຈັກພົ້ນຈາກໜີ້ ອັນມັນທາກທາໃຊ້ໄດ້ແລ້ວນັ້ນ ອັຕຣະການປາ ກໍເຕີມໃຈ ອັນຕົນ ມັນມັກ ອິນະມຸຕເຕ ໃນເມື່ອມັນພົ້ນໜີ້ສິນແຫ່ງທ່ານແລ້ວ ອິດສິ ຕັງ ກໍມັກ ຍັສສັຕກາເນ ໃນທີ່ໃດ ຕະກາ ກໍຕາມໃຈ ຕັສສະນັງ ແຫ່ງມັນຜູ້ນັ້ນ ມູລະສວາມີ ອະກຸ້ມພິກາ ເຫດຜູ້ອັນເປັນເຈົ້າມູນ ມັນທາກບໍ່ຄ້ຳເອົາໜີ້ແຫ່ງທ່ານ ອິທັງ ລັກຂະນັງ ອັນວ່າລັກຂະ ນະອັນນີ້ ສະຍະອິນະລັກຂະນັງ ແມ່ນລັກຂະນະແຫ່ງຜູ້ເອົາສິນ ດ້ວຍຕົນມັນແລ.

ອະທິບາຍວ່າ ຜູ້ໃດເອົາສິນແຫ່ງທ່ານ ມັນກໍໃຫ້ເຈົ້າມູນຮູ້ ແລ້ວແລ ບໍ່ຄ້ຳຮັບເອົາບັງໜີ້ສິນແຫ່ງທ່ານ ດ້ວຍຄຳວ່າສິນອັນຄົນ ຜູ້ຂາມາເອົາໜີ້ ຜິໜີແລຕາຍເສຍ ໜັກແກ່ຂ້າແລ ວ່າອັນພອຍ ເຕີມໃຈແຫ່ງມັນໄປເອົາ ເມື່ອອຸບປະທະວະອັນຕາຍ ເກີດເປັນສິນ ບາບສິນໄໝ ມັນເອົາມາເສຍໂທດເສຍຂົນມັນດັ່ງນັ້ນ ເອົາສິນຜູ້ໃດ ມັນກໍໄປຢູ່ກັບດອມເຈົ້າສິນ ເມື່ອມັນດີແລໃຊ້ແລ້ວ ເຈົ້າໜີ້ເອົາແລ້ວ ຈັກໃຫ້ມັນຢູ່ກັບກໍໄດ້ ຈັກໃຫ້ໜີກໍໄດ້ ຜິເຈົ້າມູນທາກໄດ້ແລເອົາໄປໃຊ້ ແທນ ຜູ້ເຈົ້າໜີ້ຈັກມັກເອົາກໍໄດ້ ຈັກວ່າຮືກໍບໍ່ໄດ້ແກ່ຜູ້ເຈົ້າສິນແລ ເຫດວ່າເມື່ອເອົາ ກໍໄປຮຽກຮ້ອງເອົາບັງສິນທ່ານ ຜິມັນຕາຍກໍຈິບ ຫາຍເສຍ ເມື່ອມັນພົ້ນຈາກໜີ້ສິນທ່ານແລ້ວ ຜູ້ເຈົ້າສິນທາກສະ ຫວ່າງໃຫ້ໜີ ມັນຈັກໄປຫາມູນເຈົ້າມັນກໍໄດ້ ມັນບໍ່ໄປສູ່ໄປຫາເຈົ້າ ມູນ ມັນມັກໄປຢູ່ກັບດອມຜູ້ໃດກໍໄດ້ແລ ອັນໜຶ່ງອາໄສເຊື່ອ ກະຕະ ປະຣະວະດາຍ (?) ຜິຫາເຫດການບໍ່ໄດ້ ຄົນຜູ້ໄປດວ່າເອົາສິນ

ທ່ານ ຜູ້ເຈົ້າສິນໄປ່ຄວນໃຫ້ສິນດາຍ ຜີໃຫ້ກໍບໍ່ຄວນຂາດມູນຄົນທ່ານ ຜີເຈົ້າມູນທາກສະຫວ່າງເສຍດ້ວຍຄຳວ່າ ກູຫາອັນໃຫ້ບໍ່ໄດ້ ຕາມມຶງຈັກໄປເອົາສິນທ່ານທີ່ໃດກໍຕາມເທີ້ນວ່າອັນ ຄັນມັນໄປເອົາສິນທ່ານທີ່ໃດກໍດີ ກໍຕາມໃຈຜູ້ເຈົ້າສິນ ຄັນຮັບເອົາສິນນັ້ນແລ້ວ ຈັກມັກໃຫ້ໜີກໍໄດ້ ເອົາແລ້ວຈັກມັກໃຫ້ຢູ່ກັບກໍໄດ້ແລ ຜີເຈົ້າສິນມັນເອົາແລ້ວໃຫ້ໜີ ມັນມັກຢູ່ທີ່ໃດ ກໍຕາມໃຈມັນແລ ຜູ້ໜີ້ກູ້ກບິດວ່າ ອິມະວິນິມຸຕໂຕ ອັຕຕານັງ ອິສສະໂຣ ໂຫຕິ ນັ້ນແລ ອັດກະວ່າ ອິນະຄັນທັນໂຕ ປຸຕຕະນັຕຕັງ ນັຕກາປະຍິ ທຣັພຍາ ວະເທສັພພະທາທັຍຍະ ມາເນ ທີຣາ ວິນຍູ ອະກະ ປະການໜຶ່ງ ອິນະຄັນທັນເຕ ໃນເມື່ອຄົນທັງຫລາຍແລກູ້ເອົາຍັງໜີ້ສິນທ່ານນັ້ນ ນັຕກາປະຍິ ແລບໍ່ນຳມາຕັ້ງໄວ້ ປຸຕຕະນັຕຕັງ ຍັງລູກແລຫລານ ປະຣະອິນະທາຣິຕຸງ ເພື່ອໃຫ້ຄ້ຳທະຣົງຄືວ່າ ໃຫ້ໃຊ້ດອກສິນທ່ານ ທຣັພເຍ ອັນວ່າເຂົ້າຂອງຄືວ່າດອກສິນທ່ານ ວະເທຕິ ກໍຈຳເຣີນຂຶ້ນ ສັພພະທາ ໃນກາລະທຸກເມື່ອ ທຣັພຍະມາເນ ໃນເມື່ອໃຊ້ແທນກັນ ທີໂຣ ອັນວ່ານັກປາດຜູ້ພິຈາລະນາ ວິນຍູ ຮູ້ແລ້ວກໍເພິງແຕ່ງເທີ້ນ.

ອະທິບາຍວ່າ ຜູ້ອັນກູ້ເອົາໜີ້ສິນແຫ່ງທ່ານ ແລບໍ່ເອົາລູກຫລານໄປຕັ້ງໄວ້ຄ້ຳຂອງດອກສິນທ່ານ ອັນວ່າດອກສິນອັນນັ້ນກໍຈຳເຣີນໄປທຸກເມື່ອ ເມື່ອວິນິດໄສພິຈາລະນາກ້ອຍຄຳຮູ້ແຈ້ງແລ້ວ ຍັງຄຳກັຕຕິກາ ເມື່ອເອົາສິ່ງໃດກໍໃຫ້ແຕ່ງຕາມກັຕຕິກາ ແຫ່ງຂາອັນກົດໝາຍໜັງສືໄວ້ນັ້ນ ຜີແລບໍ່ມີຄຳກັຕຕິກາແກ່ກັນ ດອກສິນກໍຈຳເຣີນຕາມຄອງ ເຫດທ່ານໄດ້ເຂົ້າຂອງເງິນຄຳ ກໍເປັນອັນຍາກດາຍ.

ປະຣະກຸ້ມພະເຕ ມູລັທຍາ ອິນັປປະກາເປຕວາ ຍະກາ ມະເຕ ປະຣາຍິ ຄະທະນັງ ປຸປຜະກັງ ກາຕຸງ ປະຣະກຸ້ມພະເຕ ໃນເມື່ອບຸກຄະລະຜູ້ຄ້ຳຍັງໜີ້ສິນໃຫ້ແກ່ທ່ານ ຜູ້ເອົາ ກະເປຕວາ ເວັ້ນແລ້ວ ອິນະປຸປຜັງ ຍັງດອກສິນ ມະເຕ ໃນເມື່ອຜູ້ເອົາສິນນັ້ນ

ແລຕາຍເສຍກໍດີ ປະຣາຍະຕິ ກາມບໍ່ໄດ້ແລພ່າຍໜີໄປຢູ່ເຮືອນອື່ນກໍດີ ຍະຖາໃນກາລະເມື່ອໃດ ມູລັທຍາ ຜູ້ຄ້ຳນັ້ນຄວນໃຫ້ແຕ່ສິນອັນມັນຄ້ຳນັ້ນ ປຸປຜະກັງ ອັນວ່າດອກ ກາຕຸງ ຈິ່ງຕັ້ງໄວ້ ຄະທານັງ ແກ່ເອົາໜີ້ນັ້ນເທີ້ນ.

ອະທິບາຍວ່າ ແມ່ນສິບປີກໍດີ ວິສະວັສສະກາ ແມ່ນຊາວປີກໍດີ ກວ່າສິບປີກໍດີ ນະວະເທ ກໍບໍ່ຈຳເຣີນຂຶ້ນ ປຸພພະນິຍັຕຕັງ ກໍທຽມຍ່ອມທຽງຢູ່ແຕ່ກ່ອນ ກະຣິເຍຕຸງ ນັກປາດຜູ້ພິຈາລະນາຈິ່ງທຳຕະກາທຍາ ເພິ່ງແຕ່ງໃຫ້ເຂົາໃຊ້ແທນກັນ ຕາມຄຳກັດຕິກາເອົາເຂົ້າຂອງແລໃຫ້ແກ່ກັນດັ່ງນັ້ນເທີ້ນ.

ອະທິບາຍວ່າ ໜີ້ຈຳພວກໜຶ່ງ ເມື່ອເອົາດອກກັນນັ້ນ ເຂົາກ່າວວ່າ ຈັກເອົາດອກທໍ່ເກົ່າວ່າດັ່ງນັ້ນກໍດີ ຜູ້ເອົາຂໍໃຫ້ມີດອກທໍ່ເກົ່າວ່າດັ່ງນັ້ນກໍດີ ໜີ້ອັນນັ້ນຈັກຂຶ້ນເອົາດອກລື່ນກວ່ານັ້ນບໍ່ໄດ້ ເມື່ອລ້ຳສິບປີກໍດີ ຊາວປີກໍດີ ກໍຍັງດອກທໍ່ເທົ່າດັ່ງເກົ່າທັ້ນແລ ຜູ້ພິຈາລະນາຈິ່ງຕັດແຕ່ງໃຫ້ເຂົາໃຊ້ແທນກັນ ຕາມກັຕຕິກາແຫ່ງເຂົາເມື່ອກູ້ຢືມນັ້ນເທີ້ນ ອິຕິ ສາທຸນະຄະຣະ ກັຕກິຍະ ອິນະຍິກະກາ ສັງເຂປະວັນນະນາ ສະມັຕຕາ ແລ້ວທໍ່ນີ້ແລ.

<u>ອະວະຫານ 25</u>

ຈັກກ່າວຕຳນານ ອະວະຫານຊາວຫ້າລູກ ຕາມອັນພະພຸດທະໂຄສາຈານກ່າວໃນ ສາມັນຕະປາສາທິກາ ຜູ້ມີຜະຫຍາເພິ່ງຮູ້ດັ່ງນີ້ :

ລູກອະວະຫານຊາວຫ້າ ຜູ້ໜຶ່ງໄດ້ຄ້ຳສິນໃຫ້ແກ່ທ່ານ ເມື່ອຜູ້ເອົາສິນທ່ານນັ້ນແລຕາຍເສຍກໍດີ ຢູ່ໄກກາມບໍ່ໄດ້ກໍດີ ກາມແລ້ວບໍ່ໄດ້ ມັນພ່າຍໜີໄປຄວ່າເວັ້ນຢູ່ກໍດີ ໃຫ້ຜູ້ຄ້ຳໃຊ້ແຕ່ຄ່າສິນທ່ານເຫດອັນຄ້ຳນີ້ ເພື່ອບໍ່ໃຫ້ເສຍວັດຖຸທ່ານດາຍ ດອກໃຫ້ໄວ້ແກ່ຜູ້ເອົາຜີມັນບໍ່ຕາຍຍັງເຫັນ ຈັກເອົາດອກແລເຄົ້າໄດ້ແລ້ວ ພູດດອກໃຫ້ຜູ້ຄ້ຳກິນເຄິ່ງໜຶ່ງ ໄນຍະໜຶ່ງວ່າ ໃຫ້ເອົາສອງພູດ ໃຫ້ແກ່ເຈົ້າສິນ

ພູດໜຶ່ງ ຜູ້ຄ້າກິນພູດໜຶ່ງ ໄນຍະໜຶ່ງ ກໍແຕ່ຜູ້ຄ້າຕາວນັ້ນໃຫ້ຜູ້ໄດ້ໃຊ້ນັ້ນ ທີເອົາແຕ່ດອກອັນເງິນມັນໃຊ້ຕາວນັ້ນ ແມ່ນການເອົາມາດອມຜູ້ກູ້ຍາກບໍ່ໄດ້ ກໍໃຫ້ຜູ້ຄ້າໃຊ້ແຕ່ເຄົ້າດາຍ.

ເອໂກ ເຈ ວະເທ ມູລັສສະ ທັສສະວາ ວິສະວັສສະກາ ນະວະເທ ປຸພພະນິວັຕຕັງ ຕັຕກາທຍາ ກະຣິເບຕຸ ເອໂກ ອິນະຍິ–ໂກ ອັນວ່າຜູ້ກຶເອົາຍັງສິນທ່ານພວກໜຶ່ງ ເຈ ວະເທ ຜີແລເຈົ້າຂອງຫາກກ່າວກໍດີ ມູລັສສະ ມັກວ່າ ປຸປຜະກັງ ວາ ເອົາດອກທີ່ເຄົ້າວ່າອັນກໍດີ ອິນັງ ອັນວ່າໜີ້ອັນນັ້ນ ທະສະ ສາມສິບຫົກ (ຄວນເປັນປັນຈະຊາວຫ້າ) ກ່າວຄື : ນານາພັນດະປັນຈະກະ ໝູ່ໜຶ່ງສະຫັດກິກະປັນຈະກະໝູ່ໜຶ່ງ ເອກະປັນຈະກະໝູ່ໜຶ່ງ ປຸພພະປະໂຍຄະປັນຈະກະໝູ່ໜຶ່ງ ເກຍຍາວະຫາຣະປັນຈະກະໝູ່ໜຶ່ງ ລ້ຳປັນຈະກະທັງຫ້າໝູ່ນັ້ນ ມີແລຫ້າລູກຄືວ່າ ນານາພັນດະປັນຈະກະນັ້ນມາແຈກອອກແຕ່ນານາປັນຈະກະ ກໍດີ ເອກະປັນຈະກະ ກໍດີ ມີຄິຕຕະ (?) ສະເໜີກັນດາຍ ເຫດເຈົ້າ ອັດກະກະກາວ່າສັນນີຕັຕກະ ນານາພັນດະປັນຈະກະ ເອກະພັນດະປັນຈະກະ ອາທິເຍຍຍະ ຫາເຣຍຍະ ອະວະຫາເຣຍຍະ ອິຣິຍາ ປັຕກະວິໂກເປຍຍະການາຈາເວຍຍາຕິ ອິເມສັງ ປະທານິວະເສນະ ລັພພັນຕິ ດັ່ງນີ້ທີ່ຍັງຕ່າງແຫ່ງວັດກຸສິ່ງດຽວ ເຫດສັນໃດ ວ່າຕ່າງຈາແທ້ແລ ໄດ້ວ່າຕ່າງເຫດວ່າ ເອກະພັນດະນັ້ນ ເທົ່ານິຍົມເອົາວັດກຸອັນເປັນກັບດ້ວຍວິນຍານສິ່ງດຽວ ນານາພັນດະນັ້ນ ນິຍົມເອົາວັດກຸອັນເປັນກັບດ້ວຍວິນຍານແລ ອັນບໍ່ເປັນກັບດ້ວຍວິນຍານ ເຫດ ອັດກະກະກາວ່າສັນນີ້ ເອກະພັນດະວະເສນະ ປີຈະ ສະວິນຍາເນເຍວະ ລັພ–ພະຕິ ນານາພັນດະວະເສນະ ວິນຍາກາ ວິນະຍະກັສສະເກນະດັ່ງນີ້ ພິກຂຸຕົນໃດຕົນໜຶ່ງ ຄຸບເອົາມັກວ່າ ໂຈດເອົາອາຣາມແຫ່ງທ່ານຝູງອື່ນນີ້ຕົ້ນວ່າ ບຸບຜາຣາມກໍດີ ອັນເປັນຂອງແຫ່ງທ່ານແທ້ລວດໄປຂຶ້ນເອົາດ້ວຍລາຍແຫ່ງຕົນດັ່ງນີ້ ພິກຂຸຕົນນັ້ນຮຽກຊື່ວ່າ ລັກ

ດ້ວຍ ອາຫິເຍຍ້ຍາວະຫານແລ ອະວະຫານລູກນັ້ນ ຍັງຕໍ່ພິກຂຸຕົນ ໂຄບເອົາອາຣາມແຫ່ງທ່ານແລ ເມື່ອພິກຂຸຕົນນັ້ນເພິງໃຈດເອົາອາ ຣາມແຫ່ງທ່ານຝູງອື່ນວ່າ ອາຣາມເປັນຂອງກູ ເປັນກົມສວນກູ ເປັນ ພ້າວຕານຫວານສົ້ມແຫ່ງກູດາຍວ່າສັນນີ້ ໄດ້ອາບັດທຸກກົດແລ ເມື່ອ ພິກຂຸໃຫ້ບັງເກີດ ເວມະຕິ ຊື່ວ່າໃຫ້ສົງງແກ່ເຈົ້າຂອງທອດພຽນເສຍ ດັ່ງນັ້ນ ພິກຂຸຕົນນັ້ນສ່ວນເປັນປະຣາຊິກແລ.

ອະທິບາຍສັນນີ້ ກໍສີມຄຳເຈົ້າອັດກະກະຖາວ່າ ອາທິເຍຍຍະຕິ ອາຣາມັງ ອະກິຍຸຊຊະຕິ ອາປັຕຕິ ທຸກກຕັສສະ ສາມິກັສສະ ວິມະ– ຕິ ອຸປປະເທຕິ ອາປັຕຕິ ກຸລລັຈເຈຍຍັສສະ ສາມິໂກ ນາມັຍຫັງ ກັຈຈິ ສະຕິຕິ ທະຣະນິຂິປປັຕຕິ ອາປັຕຕິ ປະຣາຊິກສັສະ ດັ່ງນີ້ ຜີຈັກປົງລົງໃນອາຣາມ ອັດກະກະຖາກໍໄດ້ໃນປະໂຍກວ່າ ອາຣາມັງ ອະພິຍຸຊຊະຕີຕິ ປະຣະສັນຕະກັງ ມະມະ ສັນຕະໂກ ກະຍັນຕິ ປັດ– ສາ ກະນິຕວາ ອະພິຍຸຊຊະຕິ ອະທິນນາທານະສະໂຍຄະຕາ ທຸກ– ກະຕັງ ສາມິກະວິມະຕິ ອຸປປາທະຕີຕິ ວິເສຍຍະ ກຸສະລະຕາ ຍະຖາ ລະວະນິສີຕາ ພາເວນະ ວາ ອາຣາມະສາມິກັສສະ ສັງສະຍັງ ຊິ– ເນຕິ ກະກັງ ຄົນທີ ຕະກາ ວິມິສາເສຍຍະ ປະສຸຕາ ທີສວາ ສາ ມິໂກ ວັນເຈສີ ປັກຂິ ສາມິ ນຸໂຂ ອະຫັງ ອິມັງ ອາຣາມັງ ອັຕ– ຕະໂນ ກາຕຸງ ນະ ສັກຂິສສາມິ ນຸໂຂຕິ ເອວັງ ຕັສສະ ວິມະຕິ ອຸປປັຊຊະມານັງ ເຕນະ ອຸປປາທິກາ ໂຫຕິ ຕັສມາ ກຸລລັຈເຈຍ– ຍັງ ອາປັຊຊະຕິ ກຸລານິ ຂິປະຕີຕິ ຍະກັປປະນະສາມິໂກ ມະອະ ຍັຕກັຸທໂທ ຂັຊຊະໂຣຊຊີວິຕະ ພຣະຫະມະຈາຣີຍັນຕັຕກະ–ປິ ເນ ກາເຣຍຍະ ອະລັທທາ ມັຍຫັງ ອິມິນາ ອາຣາເມນາຕິ ກູລະນິຂິ ປະຕິ ອະພິຍຸນຊະໂກ ປະຣາຊິກັງ ອາປັຊຊະຕິ ດັ່ງນີ້ ລັກສະນະ ອັນທອດພຽນເສຍ ກໍຍັງລຽງວດາຍ ເຫດສັນໃດວ່າລຽງວນັ້ນຈາແທ້ແລ ຜີພິກຂຸຕົນນັ້ນຫາກທອດພຽນເສຍ ກູບໍ່ໃຫ້ຂອງແກ່ມັນແລ້ວວ່າສັນນັ້ນ ເຈົ້າຂອງກໍທອດພຽນເສຍວ່າ ກູກໍບໍ່ອາດຈັກໄດ້ຂອງກູແລ້ວແລ ຄວາມ

ວ່າດັ່ງນັ້ນ ຕັ້ງວ່າທັງສອງເພິ່ງທອດພຽນເສຍສະເໜີກັນ ດັ່ງນັ້ນພິກ–
ຂຸໂຄບເອົາຂອງທ່ານ ຈຶ່ງເປັນປະຣາຊິກກາຍ ຜີວ່າທອດພຽນວ່າ ກູບໍ່
ໃຫ້ຂອງແກ່ມັນແລ້ວ ເຈົ້າຂອງກໍບໍ່ທອດພຽນເສຍວ່າ ເມື່ອໃດກູບໍ່ຮິດ
ຝູງເປັນລັກ ເປັນປັກແຫ່ງກູແລ້ວ ກູຍັງຈັກຮູ້ເມື່ອພາຍລຸນ ກູຈັກສວນ
ເອົາຂອງກູໃຫ້ໄດ້ດີຫລີ ບໍ່ຢ່າບໍ່ຍ່ອມວ່າດັ່ງນັ້ນ ຜີເຈົ້າຂອງຍັງເປັນ
ກັບດ້ວຍອຸດສາຫະ ໃນອັນຈັກທຳພຽນເອົາຂອງຕົນ ບໍ່ຢ່າບໍ່ຍ່ອມດັ່ງນັ້ນ
ກໍຍັງຄ່ອຍຮັກສາ ມັກວ່າພິກຂຸຕົນນັ້ນ ຍັງໄປ່ເປັນປະຣາຊິກແລ ຄຳ
ອັນນີ້ເປັນທຽມໃນອັດຖະກະຖາທຸກແຫ່ງແລ ຢ່າສົງກາເທີ້ນ ເຮົາເພິ່ງ
ຮູ້ດ້ວຍປະໂຫຍກອັນນີ້ນ້ອຍໜຶ່ງ ດ້ວຍສັງເຂບແລ ຍະທາ ປະນະ
ໂສປິ ພິກຂຸ ນະ ເທມີຕິ ສາມີກາປິ ນະ ລະສະມີຕິ ເອວັງ ຊຸໃພ
ທຸຣັງ ນິກຂິສັນຕິ ຕະທາ ອະພິຍຸນຊະ ກັສສະ ປະຣາຊິກັງ ດັ່ງນີ້
ເມື່ອວ່າຈັກທຽມທັນໂລກ ເປັນດັ່ງບຸກຄະລະຜູ້ໃດຜູ້ໜຶ່ງ ໄປຄອບເອົາ
ຊີ້ນສວນໝາກທ່ານ ກໍເປັນອະວະຫານລູກ ອາທິເຍຍຍາວະຫານ
ອັນເຮົາຫາກໄດ້ກ່າວແຕ່ພາຍຫລັງພຸ້ນແລ້ວ ຫາເຣຍຍາວະຫານນັ້ນ
ໄດ້ດັ່ງພິກຂຸລັກຂອງທ່ານຝູງອື່ນ ອັນທ່ານນຳໄປດ້ວຍຫົວ ຄືວ່າຫາບ
ດ້ວຍບ່າ ລັກໂຈມດອກໄມ້ຄຳ ອັນທ່ານທະຣົງໃນຫົວກໍດີ ຝູງນີ້ນັບ
ເຂົ້າເປັນຫາບຫົວຈຳພວກໜຶ່ງແລ ພິກຂຸຕົນໜຶ່ງ ຫາກໄປລັກຂອງທ່ານ
ຝູງນີ້ ດ້ວຍໄກຍະຈິດຮຽກວ່າ ໄດ້ລັກດ້ວຍຫາເຣຍຍາວະຫານ ເມື່ອ
ພິກຂຸລູບບາຍດູຂອງໃນຫົວທ່ານ ໄດ້ອະບັດທຸກກົດແລ ເມື່ອພິກຂຸໃຫ້
ຂອງຫວັ່ນໄຫວນັ້ນ ໄດ້ອາບັດຖຸລລັດໄຈແລ ເມື່ອພິກຂຸປົງຂອງນັ້ນ
ລົງຈາກຫົວ ໃຫ້ລົງມາຮອດຄໍເປັນປະຣາຊິກແລ ຢ່າວ່າເອົາແລ່ນໜີ
ເປັນປະຣາຊິກກາຍ ເຫດເຈົ້າອັດກະຖາວ່າສັນນີ້ ຫາເຣຍຍິຕຍັສສະ
ພັນດະຫະຣັນໂຕ ສີເສ ພາຣັງ ໄກຍະຈິຕໂຕ ສະມະຕິ ຖຸລລັຈ–
ຈະຍັສສະ ຂະນັງ ໂອໂຣເປຕິ ອາປັຕຕິ ປະຣາຊິກັສສະ ດັ່ງນີ້ ອະ–
ວາເຣຍຍາວະຫານນັ້ນ ໄດ້ດັ່ງພິກຂຸຕົນໃດຕົນໜຶ່ງ ອັນທ່ານຝາກ
ຂອງໄວ້ດອມຕົນ ເມື່ອເຈົ້າຂອງຫາກໄປການເອົາ ຂອງອັນຝາກໄວ້

ດອມ ພິກຂຸຕົນນັ້ນລວດມີໃຈມັກໄດ້ ອຳເອົາຂອງທ່ານ ໄດ້ອາບັດທຸກ ກົດແລ ເມື່ອພິກຂຸຕົນນັ້ນໃຫ້ບັງເກີດວ່າດັ່ງນີ້ ກູບັງຈັກໄດ້ເອົາຂອງກູ ໃຫ້ໄດ້ຣືບໍ່ໄດ້ຈາ ຄັນວ່າກາມເຈົ້າຂອງໄດ້ນັ້ນ ພິກຂຸລວດໄດ້ອາບັດ ກຸລລັດໄຈແລ ເມື່ອໃດເຈົ້າຂອງໄດ້ລະພຽນເສຍວ່າ ຕົນບໍ່ອາດຈັກໄດ້ ບັງຂອງນັ້ນແລວ່າສັນນັ້ນ ພິກຂຸຕົນນັ້ນລວດປະຣາຊິກແລ.

ອະທິບາຍສັນນັ້ນ ກໍສິມຄຳ ອັດຖະກະຖາວ່າ ອາວະຫາເຣຍ-ຍະຕິ ອຸປປະນິກຂິຕຕັງ ພັນດັງເທຕິ ເມ ພັນດັນຕິ ສະວະສາໄຣ ນາຫັງ ຄັນຫານິ ຕົພພະນະຕິ ອາປັຕຕິ ທຸກກະຕັສສະ ສາມິກັສ-ສະ ວິມະຕິ ອຸປປາເທຕິ ອາປັຕຕິ ກຸລລັຈຍັສສະ ສາມິໂກ ມະ-ບັງ ທະສະຕິ ວິທຸຣະນິກຂິປະຕິ ອາປັຕຕິ ປະຣາຊິກສັສະດັ່ງນີ້.

ອິຣິຍາປະກະວິໂກປຍຍາວະຫານ ນັ້ນໄດ້ດັ່ງພິກຂຸຕົນໜຶ່ງເຫັນ ຜູ້ໃດຜູ້ໜຶ່ງ ມັນກຶຂອງໄປໃນມືມັນກໍດີ ອັນໜຶ່ງຂ້ອຍຍິງ ຂ້ອຍຊາຍ ທ່ານເອົາຂອງເຈົ້າພາໜີໄປດັ່ງນັ້ນກໍດີ ພິກຂຸຕົນນັ້ນລວດບັງເກີດໄກ ຍະຈິດສັນນີ້ ຈັກລັກນຳເອົາທັງຂອງ ອັນມັນກໍໃນມືນັ້ນໜີແລດັ່ງນັ້ນ ເມື່ອພິກຂຸຊຸກມັນໄປບາດຍ່າງໜຶ່ງ ໄດ້ອາບັດກຸລລັດໄຈແລ ເມື່ອພິກ ຂຸຊຸກມັນໄປສອງບາດຍ່າງ ມັກວ່າ ຍ້າຍໃຫ້ມັນຍ່າງຕີນກວ່ມສອງ ບາດຍ່າງໄປ ພິກຂຸຕົນນັ້ນລວດເປັນປະຣາຊິກແລ ເອົາອະທິບາຍສັນ ນີ້ ກໍສິມຄຳອັດຖະກະຖາວ່າແລ ອິຣິຍາປະກັງ ວິໂກປຍຍະຕິ ສະ ຫະພັນດະຫະຣະກັງ ເນສສາມີຕິ ປະກະມະປາທັງ ສະກາເມຕິ ອາປັຕຕິ ກຸລລັຈຈະຍັສສະ ທຸຕິຍາປາທັງ ສະກາຕິ ອາປັຕຕິ ປະ-ຣາຊິກສັສະ ດັ່ງນີ້ແລ.

ກາມະຈາເວຍຍາວະຫານນັ້ນ ໄດ້ດັ່ງພິກຂຸຕົນໃດຕົນໜຶ່ງເຫັນ ຂອງຕັ້ງໄວ້ໃນບົກມັກວ່າ ໄວ້ເໜືອແຜ່ນດິນກໍດີ ພິກຂຸເຫັນຝັງໄວ້ກໍ ດີ ພິກຂຸຕົນນັ້ນລວດມີໄກຍະຈິດ ລັກເອົາຂອງທ່ານ ເມື່ອພິກຂຸຫຍຸບ ບາຍໄດ້ອາບັດທຸກກົດແລ ເມື່ອໃຫ້ຂອງໄຫວໄດ້ອາບັດກຸລລັດໄຈ ເມື່ອ ພິກຂຸໃຫ້ຂອງຄາດຈາກທີ່ເກົ່າ ມັນລວດເປັນປະຣາຊິກແລ ເຫດເຈົ້າ

ອັດກະກະກາວ່າສັນນີ້ ການາຈາເວປາຕິ ເລກັງ ພັນດັງ ໄກຍະ ຈິຕໄຕ ອານະສະຕິ ພັທທາເປຕິ ການາຈາເປຕິ ອາປັຕຕິ ປະ-ຣາຊິກັສສະ ດັ່ງນີ້.

ກ່າວຕຳນານ ອະວະທານ ອັນອາຈານເຈົ້າແຈກແຕ່ ເອກະພັນດະປັນຈະກະ ແລອາການແຫ່ງອະວະທານ ອັນອາຈານເຈົ້າແຈກອອກແຕ່ ເອກະພັນດະປັນຈະກະນັ້ນ ທໍ່ຍັງຕໍ່ພິກຂຸຕົນໂຄບເອົາຂອງທ່ານ ອັນເປັນກັບດ້ວຍວິນຍານສິ່ງດຽວ ວ່າໂຄບເອົາຂອງທ່ານຜູ້ຍິງຜູ້ຊາຍທ່ານຝູງນັ້ນກໍດີ ໂຄບເອົາດ້ວຍສັດເດຍຣະສານ ເປັນຕົ້ນວ່າ ນົກຍູງ ງົວຄວາຍກໍດີ ທໍ່ຍັງຕໍ່ຂອງອັນເປັນກັບດ້ວຍວິນຍານສັນນີ້ດາຍ ການອັນພິກຂຸໂຄບເອົາ ດ້ວຍອະວະທານຫ້າລູກ ຄື ອາທິເບຍຍາວະທານ ທາເຣຍຍາວະທານ ອະວະທາເຣຍຍາວະທານ ອິຣິຍາປະກະວິໂຄເປຍຍາວະທານ ການາຈາເວຍຍາວະທານ ທັງຫ້າລູກນີ້ ກໍສິ່ງດຽວດັ່ງອະວະທານ ອັນເຮົາຫາກໄດ້ກ່າວແລ້ວແຕ່ພາຍຫລັງພຸ້ນແລ ປຸຄຄະໂລອັນວ່າປຸກຄົນ ອະຕິມັນເຍຍຍະ ກໍບໍ່ເພິງໃສ່ໃຈເປັນອັນຍິ່ງ ທັສສະເນ ໃນອັນຕົນຮູ້ເຫັນ ຄຸຣຸປະເທເອກຸປະເທ ໃນຄອງແຫ່ງຄຸຣຸປະເທດ ແລເອກຸບປະເທດແລ ອັນເປັນດັ່ງຣິຈາ ຕົນະທາພານຸມາ ເປັນປະດຸດຈະດັ່ງ ພະສຸຣິຍະອາທິດອັນມີລັດສະໝີອັນກວ້າງຂວາງ ແລໃຫ້ຮຸ່ງເຮືອງສ່ອງແຈ້ງໃນທີບໃຫຍ່ທັງຫລາຍ ແລວັນແລສາມ ອັນຕົນະໂຕ ເວລຸປະຄາສາ ແລຣັດສະໝີແຫ່ງພະອາທິດອັນນັ້ນແລ ຈັກມາສ່ອງແຈ້ງກຳຈັດອັນມືດມົນ ໃນໂກນໄມ້ໄຜ້ກອງທັງຫລາຍນັ້ນ ກໍບໍ່ມີດີຫລີແລ ເຫດດັ່ງນັ້ນບຸກຄະລະຜູ້ມີພະຫຍາ ຄວນຮຳເພິງດູຕັ້ງກີ່ ໃນຄະດີໂລກ ໃນຄະດີທຳທັງຫລາຍກ່ອນຈິ່ງຕັດແຕ່ງບັງກອຍຄວາມ ໃຫ້ສຸຄະຕິຄະມະນະເທີ້ນບໍ່ຄິດດູຕັ້ງກີ່ ຢູງຕອງອະຄະຕິທຳ ຈັກຈິບຫາຍໃນຊົ່ວນີ້ຊົ່ວໜ້າດີຫລີແລ.

<u>ລັກຂະນະກູ້ເອົາສິ່ງຂອງຄວນຫລືບໍ່ຄວນ</u>

ບັດນີ້ ຈັກຈາຍັງລັກຂະນະ ອັນບຸກຄະລະທັງຫລາຍກູ້ເອົາຍັງສິ່ງຂອງອັນເປັນກັບດ້ວຍວິນຍານແລອະວິນຍານ ເຊິ່ງກັນອັນຄວນຕັດເສຍແລບໍ່ຄວນຕັດເສຍແກ່ບຸກຄະລະຝູງເປັນສີເມືອງແລ. ເມືອວ່າເຂົ້າຂອງ ອັນຄວນຕັດເສຍນັ້ນ ເປັນສັນໃດຈາ ເຫດສັກຂີມີສັນນີ້ວ່າ ປັສສະໄຕ ຄຸວະໄຕ ຫານີ ພູມິວິສະຕິ ວາສະກິປະເຣນະ ພຸນຊະມານັສສະ ທະນັສສະ ວາສະກິ ດັ່ງນີ້ ແປວ່າ ຫານີ ອັນວ່າອັນກູ້ອບເສຍ ພູມີງຍັງແຜ່ນດິນ ວິສະຕິ ວັສສະຕິ ອັນມານໄດ້ຊາວປີ ປັສສະໄຕ ດ້ວຍອັນເຈົ້າດິນຫາກເຫັນກໍດີ ພູວະໄຕ ດ້ວຍອັນໄຈດການເອົາກໍດີ ຫານີ ອັນວ່າອັນກູ້ອບເສຍ ທະນັສສະແຫ່ງເຂົ້າຂອງທະສະວັສສະຕິ ອັນມານໄດ້ສິບປີ ປະເຣນະ ອັນທ່ານຝູງອື່ນ ພຸນ–ຊະມານັສສະ ຫາກໄດ້ກູ້ເອົາໄປບໍຣະໂພກ ກ່າວຄືເຈົ້າຂອງຫາກໃຫ້ອະທິບາຍວ່າ ເຂົ້າຂອງອັນບຸກຄະລະທັງຫລາຍ ຫາກໃຫ້ແກ່ທ່ານຝູງອື່ນໄປບໍຣະໂພກ ສິ້ນເຈຍຣະການນານປະໝານວ່າໄດ້ ສິບປີແລ້ວຈິ່ງມາໄລ່ເມືອພາຍລຸນແລ ມາໂຈດເອົາຄືນດັ່ງນັ້ນ ຄວນຕັດເສຍແລແມ່ນວ່າແຜ່ນດິນກໍດີ ຫາກຮູ້ຫາກເຫັນວ່າເປັນຂອງຕົວ ແລບໍ່ໂຈດບໍ່ຈາເອົາ ທ່ານຝູງອື່ນຫາກມາຢູ່ສ້າງກະທຳກິນ ແລຫວງແຫນພິທັກຮັກສາໄວ້ ສິ້ນເຈຍຣະການນານປະໝານວ່າ ໄດ້ຊາວປີ ດ້ວຍອັນຜູ້ເຈົ້າດິນຮູ້ເຫັນ ແລລະພຽນເສຍ ບໍ່ວ່າສັງແກ່ທ່ານ ສິ່ງນັ້ນກໍຄວນຕັດວ່າລ້າເສຍແລ ປະການໜຶ່ງ ອາທິກອນກູ້ອບຄຳສິບປະການຈ່າເມືອງຄວນຕັດເສຍ ເຫດສັກຂີມີສັນນີ້ວ່າ ປະເສຍທັງ ອະໜູຕັນຈະ ປະຣະຫາຣັນຈະ ວາທະກັງ ວັນຈະ ນິຄະທະນັງ ລຸປັງ ໂຈ–ຣະກັງ ຄາຕະກັນຕິເມ ອັຕຕານີ ທະສະ ປະຣິໄຕ ຣາເຊນະ ວິ–ນິສເສຍເຍນະ ອິນະກັງ ມະຈະວະຕັພພັງ ປັດສາ ທະສະ ປະລາ–ຍະນັງ ດັ່ງນີ້ແປວ່າ ອັຕຕານີ ອັນວ່າກູ້ອບຄວາມທັງຫລາຍຝູງນີ້ທະສະ ອັນປະໝານສິບປະການ ປະເສຍທັງ ຄືວ່າຂົ່ມເຫັງເອົາຂອງ

ກັນ ອະພູຕັນຈະ ຄືວ່າພະມັນກັນປັກຕູກັນກໍດີ ປະຣະທາຣັນຈະ ຄືວ່າ ກະທໍາຊູ້ສູ່ເມຍທ່ານກໍດີ ວະຈະກັງ ຄືວ່າໝາຍໝັ້ນອາຄາດບາດໃຈກັນກໍດີ ວັນຈະນັງ ຄືວ່າຕົວະພາງເອົາຂອງກັນກໍດີ ຄະທະນັງຄືວ່າກຶເອົາເຂົ້າຂອງດ້ວຍກູ້ຢືມກໍດີ ລຸປປັງ ຄືວ່າລືບເອົາຂອງກັນກໍດີ ໂຈຣະມາກັງ ຄືວ່າເປັນໂຈນເອົາຂອງກັນກໍດີ ຄາຕະກັງຄືວ່າ ຂ້າຟັນກັນກໍດີ ອິເມ ທະສະ ອັຕຕານິ ອັນວ່າກ້ອຍຄວາມທັງຫລາຍສິບປະການຝູງນີ້ ວິນາ ເວັ້ນ ຣາເຊນະ ວິນິສເສຍຍະນະ ຈາກທ້າວພະຍາແລຂຸນວິນິດໄສພິຈາລະນາ ທະສະ ນານເຈຍຣະການປະໝານວ່າໄດ້ສິບປີ ລວດບໍ່ວ່າສັງແກ່ກັນ ອັນບໍ່ກ້ອງ ບໍ່ການເອົາດອມກັນດັ່ງນັ້ນ ອິນັງ ອັນວ່າ ໜີ້ຂັນ ຣາເຊນະ ວິນິສເສຍຍະນະ ອັນທ້າວພະຍາແລຂຸນວິນິດໄສ ນະ ວາຕັພພັງ ບໍ່ເພິງກ່າວ ມັກວ່າ ເພິງຕັດເສຍ ປະລາຍະນັງ ອັນກິຍາອັນພ່າຍຄືວ່າ ບໍ່ຄວນໃສ່ສິນໄໝທ່ານໃຫ້ແກ່ບຸກຄະລະຜູ້ຍົກ ໂທຕິ ກໍມີແລ.

<u>ລັກຂະນະຄົວເຮືອນ</u>

ບັດນີ້ຈັກຈາລັກຂະນະອັນເປັນຄົວເຮືອນແຫ່ງບຸກຄະລະຜູ້ຕາຍໄປສູ່ປໍຣະໂລກຂ້າງໜ້າ ພາຍໜ້າອັນບໍ່ສັ່ງໄວ້ແກ່ບຸກຄະລະຜູ້ໃດຜູ້ໜຶ່ງໃຫ້ແຈ້ງແກ່ວິນິດໄສທັງຫລາຍ.

ລັກຂະນະອັນເປັນຄົວເຮືອນແຫ່ງບຸກຄະລະຜູ້ຕາຍ ອັນບໍ່ໄດ້ສະບໍ່ໄດ້ສັ່ງນັ້ນເປັນສັນໃດຈາ? ຄືວ່າໃຫ້ພິຈາລະນາຫາລູກຫົກຈໍາພວກມາປັນໃຫ້ແກ່ເຂົາ ເມື່ອລູກຫົກຈໍາພວກນັ້ນຄືຝູງໃດຈາ ? ລູກຫົກຈໍາພວກນັ້ນຄືວ່າ ອັຕຣະໂຊໜຶ່ງ ເຂດຕະໂຊສອງ ທິນນະໂກສາມອັນໂຕວາສິໂກສີ່ ອັປປະວິໂທຫ້າ ປູພພະໂກຫົກ ລູກອັນຄວນສິບທັບ–ພະຍະສິນບັດ ເຂົ້າຂອງພໍ່ແມ່ມີຫົກຄົນຝູງນັ້ນແລ ຜິລູກຫົກຄົນຝູງນີ້ຫາກບໍ່ມີດັ່ງນັ້ນ ໃຫ້ພິຈາລະນາຫາຂ້ອຍສີ່ຈໍາພວກມາປັນ ຜິຂ້ອຍສີ່ຈໍາພວກບໍ່ມີ ໃຫ້ແຕ່ງເຂົ້າຂອງແຫ່ງມັນສ່ວນໜຶ່ງ ໃຫ້ແຕ່ງສິ່ງສະການມັນ ສ່ວນໜຶ່ງໃຫ້ກະທໍາບຸນຫາມັນ ສ່ວນໜຶ່ງໃຫ້ເອົາເມືອ

ກວາຍ ເປັນຣາຊສິນບັດເຈົ້າພູມີບານເທື້ນ ເມື່ອປັນແກ່ຂ້ອຍສີ່ຈຳພວກນັ້ນໃຫ້ຜ່າເຂົ້າຂອງມັນ ເປັນຫ້າສ່ວນສອງສ່ວນ ໃຫ້ແກ່ຂ້ອຍຜູ້ຊື່ວ່າ ທາສັພພັຍຍະ ເຫດບໍ່ມີເຂົ້າຂອງຕິດເນື້ອກັບດ້ວຍມັນ ມັນຫາກໃສ່ໃຈມາເປັນຂ້ອຍຕົນເອງ ລ້ຳນັ້ນໃຫ້ຄົນສ່ວນສະເໝີກັນຊອບແລ ເຫດພາວະແຫ່ງຂ້ອຍສາມຄົນນັ້ນໄດ້ເຂົ້າດ້ວຍພາວະອັນຍາກຈຶ່ງໄດ້ມາເປັນຂ້ອຍ ເມື່ອວ່າປັນແກ່ລູກຫົກຈຳພວກ ແລກະກຸນວົງສາສີ່ຈຳພວກໃຫ້ປັນດ້ວຍຄຸນແຫ່ງເຂົາເຕີມສຸດຕາມໂລມວ່າ ຍັງມີກະດຸມພີຜູ້ໜຶ່ງ ມີລູກຊາຍສີ່ຄົນ ຜູ້ພີ່ນັ້ນກະທຳນາລ້ຽງພໍ່ແມ່ ຜູ້ກວ້ນສອງໄປຄ້າຂາຍມາລ້ຽງພໍ່ແມ່ ຜູ້ກວ້ນສາມໄປກະທຳຄຸນດອມຂຸນຜູ້ກວ້ນສີ່ບວດໃນສາດສະໜາ ຜູ້ບວດໄດ້ສອງທໍ່ ຜູ້ເປັນຂຸນໄດ້ທໍ່ເຄິ່ງ ຂາສອງຄົນຜູ້ທຳນາ ແລໄປຄ້ານັ້ນໄດ້ສະເໝີກັນ ຜູ້ບວດນັ້ນໄດ້ສອງທໍ່ເພື່ອມີຄຸນອັນມາກນຳພໍ່ແມ່ໃຫ້ເຖິງສຸກຜູ້ກະທຳດອມຂຸນນັ້ນ ກົ້ງບັງບັງອົນຕາຍທັງມວນ ເປັນຕົ້ນ ວງກການຈຶ່ງສະບາຍ ເຣັດນາຄ້າຂາຍວ່າສັນນີ້ ມີໃນສຸດຕະນິບາດແລ.

ປະການໜຶ່ງ ຍັງມີກະສັດຕົນໜຶ່ງ ສະເຫວີຍຣາຊສິດບັດ ມີລູກຊາຍສີ່ຄົນ ຜູ້ໜຶ່ງໄປຢູ່ເມືອງຕາວັນອອກ ຜູ້ໜຶ່ງໄປຢູ່ເມືອງເໜືອຜູ້ໜຶ່ງໄປຢູ່ເມືອງໃຕ້ ຜູ້ໜຶ່ງໄປຢູ່ຕາວັນຕົກ ກຸມານທັງສີ່ນັ້ນ ມີປັກກະຕີມາເຝົ້າພະຍາຕົນພໍ່ຊູ່ວັນ ກວ່າໃກ້ອະນິດຈະກະສັດຕົນພໍ່ຈຶ່ງສັ່ງໄວ້ວ່າ ລ້ຳລູກີສຄົນນັ້ນ ຜູ້ໃດມີຄຸນແວນຍິ່ງ ຈຶ່ງໃຫ້ແທນຣາຊສິນບັດແທນກູເທີ້ນວ່າດັ່ງນັ້ນ ຍາມນັ້ນໂພທິສັດ ເປັນປະໄຣທິດແສນເມືອງ ມາພິຈາລະນາຫາຄຸນແຫ່ງຣາຊກຸມານທັງສີ່ ຈຶ່ງມາເຫັນຄຸນຣາຊກຸມານຢູ່ເບື້ອງຕາເວັນອອກ ອັນເຝົ້າພໍ່ແຫ່ງຕົນ ແລ້ວຄືນມາຫາທີ່ຢູ່ຕົນ ກໍປິ່ນໜ້າຕໍ່ຕາວັນ ເມື່ອເຝົ້າພໍ່ແຫ່ງຕົນກໍໄດ້ປິ່ນໜ້າຕໍ່ຕາວັນສັນນີ້ ຈຶ່ງສະໃຫ້ແທນຣາຊວົງສາສີສິນບັດ ເຕີມຄຳແຫ່ງພະກະສັດຕົນພໍ່ ກໍເປັນສຸດຕະຕິດຄະມະນະແລ ວິນິດໄສຈັກແຈກປັນສິ່ງຂອງ ໃຫ້ຫລິ່ງດູດ້ວຍຄຸນສັນນີ້ເທີ້ນ ອອກໃນສຸດຕະນິບາດແລ ປະ

ການໜຶ່ງ ສິນບັດຕິເຂົ້າຂອງແຫ່ງຜູ້ຕາຍ ຫາກໄປໄດ້ສະໃຫ້ລູກເຜົ່າພົງວົງສາຜູ້ໃດດັ່ງນັ້ນ ເຂົາຫາກມາສູ່ວິນິດໄສປັນໃຫ້ແກ່ເຂົາ ເພື່ໃຫ້ສື່ເນື່ອງປັນເຕີມຄຳເສີມ ດັ່ງພະໂພທິສັດເຈົ້າ ຄືເຈົ້າວິທຸຣະບັນດິດນັ້ນເທີ້ນ ເມື່ອວ່າປັນນັ້ນເປັນສັນໃດຈາ? ລ້ຳລູກຫລານ ຜີວ່າຜູ້ໃດມີບຸນຍະສົມພານແລມີຄຸນອັນຍິ່ງ ອາດເພື່ອວ່າຈັກສືບ ອັກຄະທາ ແລອັກຄະທູຕາພໍ່ແມ່ໄປພາຍໜ້າ ບໍ່ໃຫ້ວົງສາອັນນັ້ນຈິບຫາຍເສຍ ເອົາຜູ້ນັ້ນແທນທີບພະເຂົ້າຂອງໃຫ້ເປັນໃຫຍ່ ລ້ຳນັ້ນຈຶ່ງແບ່ງປັນຕາມຄຸນ ຕາມສະຕິແຫ່ງເຂົາທັ້ນແລ ເຫດສັກຂີມີສັນນີ້ວ່າ ປຸຕ-ຕັງວາ ພາຕະຣາ ວາປີ ສີເລສຸ ອະສະມາທິເຕ ອະນະຄະວາທິ-ເຕ ພາລາ ຍະກາ ເປຕາ ຕະກາວະໂຈຣັນຈະ ປິນດັນຈະ ໝ-ສັງ ອະສະມານັມປິ ທາປະເຍ ທາສະກັມມະກາເຣ ໂປເສ ທັນເດອຸຕກາມະສັມປັນເນ ອະວິປະຕິມທີ ຕະກາ ປະເຍ ດັ່ງນີ້ ອອກໃນ ທະສະຊາດ ອັນເຈົ້າວິທຸຣະບັນດິດ ຊັດມາປັນຄົວເຮືອນແລ.

ອະທິບາຍໃນຄາກາບົດນີ້ວ່າ ແມ່ນລູກກໍດີ ພີ່ອ້າຍ ແລນ້ອງຊາຍກໍດີ ຜູ້ໃດຕັ້ງຢູ່ໃນສິນທ້າສິນແປດ ແລອາດຈັກສືບ ອັກຄະທູຕາພໍ່ແມ່ໄປພາຍໜ້າ ບໍ່ໃຫ້ເຂົ້າຂອງພໍ່ແມ່ສວ່ານເຊັນຈິບຫາຍເສຍໃຫ້ເອົາຜູ້ນັ້ນສືບໄວ້ໃຫ້ເປັນໃຫຍ່ ລ່ວງສູງໄປແມ່ນຄົນກະທຳກັມມະການກໍດີ ໃຫ້ເອົາລ້ຳນັ້ນ ຜີຜູ້ໃດບໍ່ຕັ້ງຢູ່ໃນອົງຄະດັ່ງນັ້ນ ຢ່າປະລະເຂົາເສຍ ໃຫ້ລ້ຽງດູດ້ວຍເຂົ້າຂອງ ເຂົ້ານ້ຳ ເສື່ອສາດອາດສະໜາ ເສື້ອຜ້າອາພອນ ຢ່າໃຫ້ເຂົາເປັນທຸກ ລ້ຽງດູເຂົາຢ່າໃຫ້ຂາດກະກຸນວົງສາເສຍ ເພິ່ງໃຫ້ສື່ເນື່ອງແຕ່ງເຂົ້າຂອງ ອັນຄວນຂ່າວເຂິງແກ່ເຂົາເປັນຕົ້ນວ່າ ແກ້ວແຫວນເງິນຄຳເສື້ອຜ້າ ອັນຄວນຂ່າວ ສິນຜູ້ໜັກຜູ້ເບົາເທີ້ນ ຢ່າໃຫ້ຜິດສູດຜິດທຳວິໄນ ພະພຸດທະສາດສະໜາ ເປັນສຸຄະຕິແລ ທີ່ແທ້ລັກສະນະອັນແຈກຄົວເຮືອນ ຍັງມີຫລາຍປະການເປັນສັນນີ້ ຜີວ່າລູກກໍດີ ຫລານກໍດີ ຫາກຍັງມີຫລາຍກໍດີ ເລົ່າມີຄຸນສະເໝີກັນດັ່ງນັ້ນ ໃຫ້ປັນຕາມໄນຍະວ່າ ອ້າຍກິນສີ່ ຍີ່ກິນສາມ ອາມ

ກິນສອງ ສ່ວນນັ້ນເທື່ນ ກໍຫາກສິມທົບດ້ວຍກ້ອຍຄຳ ແຫ່ງບຸພາຈານ ເຈົ້າທັງຫລາຍແຈກໄວ້ໃນທັມມະສາດ ພາຍຫລັງພຸ້ນດີຫລີແລ ແມ່ນ ໃນ ມະໂນອີສີກໍດີ ກໍຫາກແຈກແບ່ງໄວ້ເປັນອັນແຈ້ງຈິງ ແກ່ວິນິດໄສ ພຸ້ນແລ້ວແລ.

ອະທິບາຍມັກວ່າ ເຂົ້າຂອງຄົວເຮືອນເຂົານັ້ນ ໃຫ້ແຈກເປັນ ສິບສ່ວນ ເອົາສ່ວນໜຶ່ງອອກເປັນສິນແກ່ວິນິດໄສ ພິຈາລະນາເກົ້າ ສ່ວນນັ້ນປັນເຂົາເຕີມ ໄນຍະອັນໄດ້ແຈກແຕ່ກ່ອນ ຢ່າໃຫ້ສີ່ເມືອງ ຜ່າເອົາວັດກຸຫລືອກວ່າສ່ວນໜຶ່ງນັ້ນບໍ່ຊອບ ເຫດວ່າບໍ່ໃຊ່ໜີ້ ບໍ່ໃຊ່ ຂັນອັນໄໝດາຍ ອັນວ່າຜ່າສາມສ່ວນນັ້ນ ທໍ່ວັດກຸໄໝສິ່ງດຽວ ວັດ ກຸເກົ່ານີ້ທໍ່ແຕ່ກອດສິບສ່ວນໜຶ່ງຈິ່ງຄວນ ແມ່ນຜະລະພິດຊະເຄືອງ ປູກຂອງຝັງກໍດີ ກໍທໍ່ຜ່າເປັນສິບສ່ວນ ເອົາສ່ວນໜຶ່ງມາເປັນເບັຍເຊົ່າ ຈິ່ງຄວນດີຫລີແລ ເຫດສິນອັດກະກະກາມະຫາຈັກວ່າສັນນີ້ ພາຄັງ ເທຕິຕິ ທະສະມະພາຄັງ ທັຕວາ ອິທັງກິຣະ ຊຸມພູທີປະ ໂປຣາ– ມະຈາຣິກະ ຕັສມາ ທະສະໂກຕາກາເສ ກັຕວາ ເອກະໂຕ ໂກຕ– ກາໂສ ພູມິສາມິການັງ ນະວະໂກຕາກາສັງ ວະທະສາມິການັງ ທາ– ຕັພພັງ ດັ່ງນີ້.

ອະທິບາຍ ເຈົ້າອັດກະກະກາ ກ່າວສຳແດງໃນຄາກາບົດນີ້ວ່າ ຄວນຜ່າວັດກຸເຂົ້າຂອງໃຫ້ເປັນສິບສ່ວນ ເອົາສ່ວນໜຶ່ງອອກມາເປັນ ຣາຊໂກດແກ່ພະເຈົ້າແຜ່ນດິນ ເກົ້າສ່ວນໄວ້ແກ່ເຈົ້າຂອງກິນ ອັນນີ້ ກໍຫາກເປັນບູຮານແຫ່ງຊຸມພູທີບ ແຕ່ປະກົມມະກັບພຸ້ນມາດີຫລີແລ ມັດປາດຜູ້ມີຜະຫຍາຢ່າກະທຳລື່ນຫລືອກວ່ານັ້ນເທື່ນ.

ບັດນີ້ຈັກຈາລັກຂະນະອັນເປັນຄົວເຮືອນ ຜູ້ຍັງມີຊີວິດແຫ່ງບກ ຄະລະທັງຫລາຍ ເປັນຕົ້ນວ່າ ຜູ້ຊາຍຄືວ່າເຈົ້າຂຸນອັນໄດ້ໄປສູ່ທີ່ຜູ້ຍິງ ບໍ່ຂາດເຊັ່ນຫລັງ ແລເອົາເມຍຄືນມາຫາທີ່ແຫ່ງຜູ້ຊາຍ ຍັງມີຄຸນເຈົ້າ ລ້ຽງໃຫ້ກິນບ້ານກິນເມືອງ ຂອງອັນໄດ້ດ້ວຍຄຸນແຫ່ງຜູ້ຊາຍ ເມື່ອຂາ

ຮ້າງກັນ ຂອງອັນດ້ວຍພະລະກິນເມືອງນັ້ນ ໃຫ້ປັນກັນຄົນເຄິ່ງ ຜົວຜູ້ຊາຍຕາຍເສຍ ບັງມີລູກຊາຍລູກຜູ້ເຄົ້າ ໃຫ້ປັນມາກ້ຳມູນພໍ່ ຂອງຂາສ້າງໄດ້ຍອມເມືອງນັ້ນ ໃຫ້ປັນມາແກ່ລູກເຄິ່ງໜຶ່ງ ຜົວບໍ່ມີລູກ ພໍ່ແມ່ພີ່ນ້ອງຜົວໃຈດເອົາກິນຄົວ ໃຫ້ປັນມັນເຄິ່ງໜຶ່ງ ເຫດໄດ້ພະລະດ້ວຍຄຸນແຫ່ງຜູ້ຊາຍອັນໜຶ່ງ ເມື່ອມັນຜູ້ໄດ້ກິນເມືອງຈັກຕາຍນັ້ນ ຂອງອັນເກົ່າຫອມໄວ້ນັ້ນ ບໍ່ຄວນຈັກແຈກປັນໃຫ້ແກ່ຜູ້ໃດ ໄປໄດ້ກູວາຍແກ່ເຈົ້າຜູ້ເປັນໃຫຍ່ ອັນປູກແປງໃຫ້ກິນເມືອງນັ້ນ ໃຫ້ຈັດຂອງນັ້ນສາມພູດ ໃຫ້ຂຶ້ນເຫລັ້ມເຈົ້າເມືອງສ່ວນໜຶ່ງ ໃນສອງສ່ວນນັ້ນ ໃຫ້ປັນແກ່ເມຍມັນເຄິ່ງໜຶ່ງ ໄດ້ແກ່ມູນຜົວເຄິ່ງໜຶ່ງ ຊອບທັມມະສາດແລ ອອກໃນສາຄຸນະຣະຄັມກີ ເມືອງຕັກກະສິລາແລ ອັນໜຶ່ງຜົວຜູ້ຊາຍຂາດແຫ້ ໄດ້ເອົາຜູ້ຍິງສາວກິນທີ່ຜູ້ຊາຍ ເມື່ອຂາຢ່າກັນໃຫ້ປັນຄົວຄົນເຄິ່ງ ບັງມີລູກກໍໃຫ້ປັນເຄິ່ງສີ່ງດຽວນັ້ນ ເຫດໄດ້ຢູ່ໃນທີ່ທ່ານຜົວຜູ້ຊາຍຕາຍເສຍ ຜູ້ຍິງຄືນມາຫາມູນ ກໍໃຫ້ແຕ່ງສີ່ງດຽວນັ້ນແລ ກ່າວໃນຣາຊສາດ ອະນະວັຕຕະຄັມກີ ໃນລັງກາແລ ກ່າວໃນສາຄຸ-ນະຄະຣະຄັມກີວ່າ ສາມີເນ ປະນະ ພຣັຕຕິຕວາ ອະທະພາຄີວິ-ວາປະເຍ ປຸຄຄະລາພພຍະ ອະທາຕະກາ ວິຄະເວມະເຕວະ ກະ-ເຣຍຍະ ປະນະ ອັນໜຶ່ງ ພຣັຕຕິຕວາ ກັບຄືນມາ ສາມີເນ ສູ່ທີ່ແຫ່ງຜົວ ວິຄາເປຍຍະ ນັກປາດເພິ່ງແຈກ ອະທະພາຄາ ອັນເປັນສ່ວນແລເຄິ່ງ ກະເຣຍຍະ ເພິ່ງກະທຳ ວິຄະເວມະເຕ ວະ ໃນເມື່ອຮ້າງກັນກໍດີ ຕາຍກໍດີ ປຸຕຕະລາພພຍະ ອັນກິຍາອັນໄດ້ລູກ ອະທະຕະກາ ກໍໄດ້ເຄິ່ງສີ່ງດຽວແລ.

ອະທິບາຍມັກວ່າ ຜູ້ຊາຍອັນໄດ້ໄປສູ່ເອົາເມຍ ກະກຸມພາຍໜ້າແລເອົາເມຍມັນຄືນມາ ສ້າງກິນໃນທີ່ແຫ່ງຜົວ ເມື່ອຂາຢ່າກັນກໍດີ ຕາຍເສຍກໍດີ ໃຫ້ໄດ້ແບ່ງປັນເຂົ້າຂອງແລເຄິ່ງຊູ່ກ້ຳ ລູກກໍດີ ກໍໃຫ້ແລຄົນເຄິ່ງສີ່ງດຽວກັນນັ້ນແລ ອະປິເຈກາ ຄຸນຸຕຕະໂກ ເຂຕຕັງ ທັຊ-ຊາ ປຸຣັງ ຕັສສະ ເຕສານັງ ລັພພະເຕ ທຣັພຍັງ ອະທະປີ ພາ-

ເຄນະ ວິພາຄຍັງ ອະປີຈະ ປະການໜຶ່ງ ເອໂກ ປຸຣິໂສ ອັນວ່າ ຊາຍຜູ້ໜຶ່ງ ຄຸນຸຕຕະໂຣ ມັນມີຄຸນແຄວນຍິ່ງ ເຂຕຕັງ ມັກວ່າ ເຂຕຕະທີປັຕຕິຍາ ອັນເຈົ້າຜູ້ເປັນໃຫຍ່ແກ່ໄຮ່ນາ ທັຊຊາ ຫາກໃຫ້ ປຸຣັງ ຍັງເມືອງ ຕັສສະ ແກ່ຜູ້ມີຄຸນນັ້ນ ລັພພະເຕ ໃນເມື່ອໄດ້ ທຣັພພະຍັງ ຍັງເຂົ້າຂອງຄືອາກອນ ເຕສານັງ ແຕ່ອັນເກັບໄຮ່ນາ ບ້ານເມືອງຝູງນັ້ນ ອະທະພາເຄນະ ວິພາຕຍັງ ກໍເພິງແຈກດ້ວຍ ອັນເປັນສ່ວນແລເກິ່ງ ວິປປະໂຍຄະເຕ ໃນເມື່ອຮ້າງປ່າໜີເສຍຈາກ ກັນນັ້ນ ມະຕະວະເຍຕຍະ ພາຄີຍັງ ເອກັງ ມັງສວາມີ ທັຊຊາ-ເທຍະ ວິສັຕຣະ ໂຈທະເກທທິພາຄະ ອະເທ ຕັສສະ ມະຕະວະ-ເຍ ໃນເມື່ອຕາຍສິ້ງຊີວິດ ຕັສສະ ພາຄີຍັງ ກໍເພິງແຈກເຂົ້າຂອງ ເປັນສາມສ່ວນ ເອກັງສັງ ອັນວ່າ ສ່ວນອັນໜຶ່ງ ສາມີທັຊຊາ ກໍ ເພິງໃຫ້ຜູ້ເປັນເຈົ້າເປັນໃຫຍ່ ອັຕຣະ ໂຈທະເກ ໃນເມື່ອກ້ຳຜູ້ເປັນ ຜົວຫາກໂຈດ ທະວະຍະພາຄາ ອັນວ່າສ່ວນອັນແຈກເປັນສອງສ່ວນ ແຕ່ຂອງອັນໄດ້ຄ່າໄຮ່ນາບ້ານເມືອງນັ້ນ ອະເທ ຕັສສະ ກໍໃຫ້ໄດ້ແກ່ ຜູ້ນັ້ນແລກ້ຳແລເກິ່ງແລ.

ອະທິບາຍໃນສອງຄາຖານີ້ ມັກວ່າຊາຍຜູ້ໄປສູ່ເອົາເມຍພາຍໜ້າ ມູນອັນຫລັງຫລູດໄປກໍດີແລ ເອົາເມຍຄືນສ້າງກິນໃນທີ່ຜົວເລົ່າ ອັນ ສູ່ແລມູນພາຍຫລັງບໍ່ຫລູດ ແລເອົາເມຍມັນມາສູ່ທີ່ຕົນ ຂາສ້າງດອມ ກັນ ເມື່ອຂາໜີເສຍກັນ ຂອງສ້າງໄດ້ດອມກັນນັ້ນ ໃຫ້ແລຄືນແລ ເກິ່ງ ແມ່ນມີລູກກໍດີ ໃຫ້ປັນເກິ່ງຊູ່ກ້ຳ ປະການໜຶ່ງລາງຄາຍ ຜົວ ນັ້ນມີຄຸນກັບຕົນກໍດີ ແລມີຄຸນແກ່ທ້າວພະຍາເສນາອາມາດເປັນອັນ ຍິ່ງ ແລໃຫ້ມັນກິນເມືອງ ແລໄດ້ເກັບໄຮ່ນາ ດ້ວຍຄ່າໄຮ່ນາບ້ານ ເມືອງອັນນັ້ນ ແລປົກຫອມໄວ້ຊື້ຊ້າງມ້າຂ້ອຍຄົນ ນອກອັນໃຫ້ທ່ານ ແລລູກຫລານຜູ້ໃດຜູ້ໜຶ່ງ ເມື່ອຍັງມີຊີວິດນັ້ນ ເມື່ອປ່າກັນ ຜີສູ່ບໍ່ຫຼູດ ພາຍຫລັງ ໃຫ້ໄດ້ສ່ວນຂອງອັນໄດ້ຍອມຄ່ານານັ້ນສ່ວນໜຶ່ງແກ່ເມຍ ໄດ້ແກ່ຜູ້ຊາຍສອງສ່ວນແລ ຜີສູ່ແລຂາດໄປພາຍໜ້າ ແລເອົາເມຍ

ມາຢູ່ທີ່ຜູ້ຊາຍ ໃຫ້ໄດ້ສ່ວນຂອງຍ້ອນມານັ້ນ ແລຄົນແລເຄິ່ງ ມີລູກຊາຍຍິງກໍໃຫ້ໄດ້ຄົນເຄິ່ງ ເຫດວ່າເກີດໃນທີ່ແຫ່ງຜູ້ຊາຍ ຜິວ່າຜົວຕາຍເສຍ ຂອງອັນປົກທອມໄວ້ນັ້ນໃຫ້ຜ່າສາມສ່ວນ ສ່ວນໜຶ່ງໃຫ້ໄດ້ແກ່ທ້າວພະຍາຜູ້ເປັນໃຫຍ່ ແກ່ບ້ານເມືອງໄຮ່ນາອາກອນ ສ່ວນສອງນັ້ນໃຫ້ໄດ້ແລກ້ຳແລເຄິ່ງ ເຫດວ່າເອົາເມຍຢູ່ໃນທີ່ຜູ້ຊາຍແລ ມີດັ່ງນັ້ນ ເມື່ອຜູ້ເມຍເຫັນຜົວຕາຍເສຍ ຈັກໜີເສຍທີ່ຜູ້ຊາຍ ຂອງອັນສອງສ່ວນນັ້ນ ໃຫ້ຈັດເປັນສາມສ່ວນ ໃຫ້ໄດ້ມູນກ້ຳຜົວສອງສ່ວນ ໃຫ້ໄດ້ແກ່ເມຍສ່ວນໜຶ່ງ ເຫດວ່າສ້າງໃນທີ່ແຫ່ງຜູ້ຊາຍ ອັນໜຶ່ງກໍໄດ້ຍ້ອນຄຸນຜູ້ຜົວມີຄຳຮູ້ ເຈົ້າຜູ້ເປັນໃຫຍ່ຈຶ່ງໃຫ້ກິນບ້ານເມືອງ ເຫດຄຸນຜູ້ຊາຍແລ ຜີໄປສູ່ທ່ານພາຍໜ້າ ຫລັງບໍ່ຫລູດໄດ້ກິນບ້ານເມືອງໄຮ່ນາ ກໍໃນທີ່ແຫ່ງຜູ້ຍິງດ້ວຍຄຳຮູ້ຜູ້ຊາຍ ສ່ວນເຂົ້າຂອງອັນໄດ້ຄ່າບ້ານເມືອງນັ້ນ ໃຫ້ໄດ້ກ້ຳມູນຜູ້ຊາຍພາຍຫລັງເຄິ່ງໜຶ່ງ ມີລູກດອມກັນໃຫ້ໄດ້ຜູ້ໜຶ່ງ ເຂົ້າຂອງໃຫ້ມາກ້ຳມູນພໍ່ມັນນັ້ນ ໃຫ້ລູກຜູ້ນັ້ນກິນເພື່ອວ່າຄຸນພໍ່ມັນ ຈຶ່ງໄດ້ກິນບ້ານເມືອງໄຮ່ນາ ໃຫ້ໄວ້ແກ່ຜູ້ເມຍແລລູກກັບທີ່ເຄິ່ງໜຶ່ງ ຜີໄປສູ່ທ່ານແລຫລູດພາຍຫລັງ ຄຸນຜູ້ຊາຍມີ ຜູ້ເປັນໃຫຍ່ຫາກໃຫ້ກິນໄຮ່ນາບ້ານເມືອງ ກໍໃນທີ່ຜູ້ຍິງ ໃຫ້ໄວ້ແກ່ເມຍມັນກິນທັງມວນ ຜີວ່າຮັກຢາ ກ້ຳຜົວມັນໃຫ້ຂ່າວກ້ຳຜົວມັນແກ່ພໍ່ນັ້ນ ເພື່ອວ່າທ່ານລ້ຽງລູກກໍຍາກດີຫລືດາຍ ຜີກະກຸນຊາວບ້ານຊາວເມືອງ ຜີໄປສູ່ທ່ານ ເບື່ອງເຊັ່ນການບໍ່ມີກັບຕົນ ບໍ່ເນື່ອງບໍ່ເຈືອກັບພໍ່ແມ່ ພາຍຫລັງຜີຜົວຕາຍເສຍ ເຂົ້າຂອງອັນຂາສາງໄດ້ດອມກັນນັ້ນ ໃຫ້ໄວ້ແກ່ເມຍ ຜີເມຍຕາຍເສຍໃຫ້ໄວ້ແກ່ຜົວ ໃຫ້ຂ່າວແກ່ເຜົ່າພົງວົງສາພໍ່ແມ່ກ້ຳຜູ້ຊາຍກໍດີ ກ້ຳຜູ້ຍິງກໍດີແລ.

ອັນໜຶ່ງຜີຂາຜົວເມຍຫາກລ້ຽງເຮືອນກິນຕ່າງ ການບ້ານການເມືອງຍັງຕິດກັບພໍ່ແມ່ອັນດຽວກັນ ພໍ່ແມ່ຫາກຄ້ຳການເມືອງຢູທ່າງຂາຄ້າຂາຍກິນ ມັ່ງມີເປັນດີ ຜູ້ລູກຊາຍຕາຍເສຍ ເຂົ້າຂອງອັນຂາສາງໄດ້ດອມກັນນັ້ນ ໃຫ້ຜ່າເຄິ່ງ ເຄິ່ງໜຶ່ງໃຫ້ໄວ້ແກ່ເມຍ ເຄິ່ງໜຶ່ງໃຫ້ໄວ້

ແກ່ພໍ່ແມ່ ເຫດວ່າພໍ່ແມ່ຫາກຄ້ຳການເມືອງ ຈິ່ງຍູທ່າງຄ້າຂາຍກິນດາຍ ອັນໜຶ່ງ ຜິຜູ້ຊາຍໄປສູ່ຜູ້ຍິງຂາດ ມີລູກຍິງຊາຍ ຜິຂາຮ້າງເສຍກັນໃຫ້ໄວ້ກັບທີ່ທັງມວນ ຜິຜູ້ຍິງຄົນຈັກໜີເມືອຫາເຄົ້າຫາມູນຕົວຂອງອັນຂາສາວໄດ້ດອມກັນນັ້ນ ໃຫ້ປັນໄວ້ແກ່ເຈົ້າທີ່ສອງສ່ວນ ຜູ້ບໍ່ໃຊ່ເຈົ້າທີ່ສ່ວນໜຶ່ງ ອັນນີ້ຈາ ເມື່ອຕາຍເສຍກັນແລຈັກຄືນຫາມູນຕົວແລ ຜິຂາຮ້າງກັນມີລູກກໍດີ ກໍໃຫ້ປັນດັ່ງກ່າວແຕ່ພາຍຫລັງນັ້ນເທີ້ນ. ອັນໜຶ່ງ ຜິວ່າ ຕ້ານຜູ້ຍິງມາເຮືອນ ຜູ້ຊາຍໄປ່ຂາດດ້ວຍຄຳຕ້ານກໍດີ ປະຕິຍານວ່າ ຕ້ານທໍ່ໃຫ້ບໍ່ທຸກສີ່ຮ້ອຍກໍດີ ເມື່ອຂາຮ້າງກັນຜິຍັງມີລູກດອມກັນສາມຄົນ ໃຫ້ໄດ້ແກ່ແມ່ຜູ້ໜຶ່ງ ໄດ້ແກ່ພໍ່ສອງຄົນຜິລູກສອງຄົນໃຫ້ໄວ້ແກ່ພໍ່ຜູ້ໜຶ່ງ ແມ່ຜູ້ໜຶ່ງ ຜິຜົວຕາຍເສຍ ຜູ້ຍິງຄືນຫາມູນຫລັງ ກໍດັ່ງໄນຍະດັ່ງນັ້ນແລ ຜິເຈົ້າລູກຂຸນຜູ້ຊາຍຕ້ານຄ່າແລເສຍຂາດເອົາມາເຮືອນ ເມື່ອຜົວຕາຍເສຍ ມັນຄືນເມືອຫາມູນຫລັງມັນ ໃຫ້ແຕ່ຕົວດຽວມັນຄືນ ມັນມີລູກຍິງຊາຍເທົ່າໃດກໍດີ ໃຫ້ເອົາໄວ້ຕັ້ງສັງ ຜິຂາຮ້າງກັນເສຍ ຢ່າໃຫ້ໜີ ໃຫ້ເອົາຜົວໃໝ່ ໃຫ້ເປັນວຽກແກ່ເຈົ້າຂຸນພາຍໜ້າເທີ້ນ ອັນໜຶ່ງຜິເຈົ້າລູກຂຸນກ້ຳຜູ້ຍິງຕ້ານເອົາລູກຂຸນທ່ານອັນເປັນຜູ້ຊາຍ ມາເປັນຜົວຄົນຕົວຜູ້ຍິງວອດຄ່າ ກໍຫາກຕ້ານແລ້ວທຸກອັນ ຜິຂາຮ້າງກັນ ຜູ້ຊາຍບໍ່ເພິ່ງໃຫ້ໜີໃຫ້ເຈົ້າລູກຂຸນຫາເມຍໃຫ້ ໃຫ້ຄ້ຳວຽກ ຜິຂາມີລູກຊາຍດອມກັນ ຕາມທີ່ລູກມັກຢູ່ດອມພໍ່ກໍດີ ຢູ່ດອມຕານາຍກໍດີ ຕາມແຕ່ໃຈມັກ ເຫດວ່າຫາກເປັນລູກຂຸນທີ່ດຽວກັນດາຍ ອັນໜຶ່ງຜິຜູ້ຊາຍເປັນໄທ ແລໄປເອົາຂ້ອຍທ່ານເປັນເມຍ ຜິຂາຮ້າງກັນແມ່ນມີລູກສີ່ຄົນກໍດີ ທໍ່ໃດກໍດີ ເມື່ອມັນໜີໃຫ້ເອົາລູກໄວ້ທັງມວນ ໃຫ້ໜີແຕ່ຕົວດຽວມັນ ຜິມັນບໍ່ມີລູກຍິງລູກຊາຍ ມັນໜີໃຫ້ມັນເອົາເງິນມາແປງເຮືອນ ຮ້ອຍໜຶ່ງຈິ່ງໃຫ້ໜີ ອັນໜຶ່ງຜິຜູ້ຍິງເປັນໄທໄດ້ເອົາຂ້ອຍຊາຍທ່ານເປັນຜົວ ຜິຜົວມັນຕາຍເສຍ ມັນຈັກໜີໄປຫາພີ່ນ້ອງມັນ ຢ່າໃຫ້ເຈົ້າຂ້ອຍຜູ້ຊາຍວ່າສັງແກ່ມັນເທີ້ນ ຜິມັນມີລູກດອມກັນ ລູກນັ້ນເຂົາມັກໄປນຳແມ່ ກໍໃຫ້

ເຂົາໄປ ຜິເຂົາມັກຢູ່ດອມພໍ່ກໍຕາມເຂົາ ທໍ່ຢ່າໃຫ້ຜູ້ເຈົ້ານັ້ນວ່າ ເປັນຂ້ອຍເປັນຂ້າ ຜິຜູ້ເຈົ້າຫາກວ່າເປັນຂ້ອຍ ແລຂາຍກິນໃຫ້ໄໝສອງຮ້ອຍຂັນແປງໜຶ່ງ ເຫດວ່າແມ່ເຂົາເປັນໄທແລ ທຽມວີໃນອັນກ່າວໃນທັມມະສາດວ່າ : ປິຕະທາໂສ ມາຕາ ອະທາສາ ບຸຕາ ປັພ-ພະເຊຕັພພາ ດັ່ງນີ້ ອັນທຽມໃນສູດກໍສົມດັ່ງຄຳນາງ ອັນຊະນະເທ-ວີ ຕັດລູກເມຍນາຍສາງ ພະຍາກຸສະລາດໃຫ້ນຳແມ່ມັນ ເຫດວ່າແມ່ເປັນໄທດາຍ. ອັນໜຶ່ງຜິຜູ້ຊາຍໄປສູ່ທີ່ຜູ້ຍິງ ທຶນຂາມີຊູ່ຄົນໄດ້ແກ່ຜູ້ຍິງສອງສ່ວນ ໄດ້ແກ່ຜູ້ຊາຍສ່ວນໜຶ່ງ ຜິຜູ້ຍິງໄປສູ່ທີ່ຜູ້ຊາຍ ກໍລຳນຳສັນດຽວນັ້ນແລ ຜິຜູ້ຊາຍໄປສູ່ທີ່ຜູ້ຍິງແທ້ ທໍ່ວ່າທຶນຜູ້ຍິງບໍ່ມີ ທຶນຜູ້ຊາຍມີໃຫ້ປັນທໍ່ກັນ ຜິບໍ່ມີທຶນຊູ່ຄົນ ຂາພ້ອມກັນກູ້ສິນທ່ານມາເປັນທຶນກໍດີ ຂາເອົາແຮງຂາເປັນທຶນກໍດີ ກໍໄດ້ແກ່ເຈົ້າທີ່ສອງສ່ວນ ໄດ້ແກ່ຜູ້ບໍ່ໃຊ່ເຈົ້າທີ່ສ່ວນໜຶ່ງຊອບແລ ຜິຜູ້ຍິງເປັນກະກຸນພະຍາ ຜົວຕາຍເສຍເຂົ້າຂອງທັງມວນນັ້ນ ໃຫ້ຜ່າເປັນຫ້າສ່ວນ ໃຫ້ແກ່ພໍ່ແມພີ່ນ້ອງຜູ້ຜົວນັ້ນສ່ວນໜຶ່ງ ໃຫ້ແກ່ຕົວຜູ້ເມຍສີ່ສ່ວນ ຜິຜູ້ຍິງເປັນກະກຸນພານ ຜົວຕາຍເສຍເຂົ້າຂອງທັງມວນນັ້ນ ໃຫ້ຜ່າເປັນສີ່ສ່ວນໃຫ້ໄດ້ແກ່ພໍ່ແມ່ພີ່ນ້ອງຜົວນັ້ນສ່ວນໜຶ່ງ ໃຫ້ໄດ້ແກ່ຜູ້ເມຍນັ້ນສາມສ່ວນ ຜິຜູ້ຍິງເປັນກະກຸນພໍ່ຄ້າ ຜົວຕາຍເຂົ້າຂອງທັງມວນນັ້ນໃຫ້ຜ່າເປັນສາມສ່ວນ ໃຫ້ໄດ້ແກ່ເຜົ່າພົງວົງສາຜົວສ່ວນໜຶ່ງ ໃຫ້ໄດ້ແກ່ຜູ້ເມຍສອງສ່ວນ ກ້າຜູ້ຍິງກະກຸນເປັນພໍ່ນາ ຜົວຕາຍເສຍ ເຂົ້າຂອງທັງມວນໃຫ້ຜ່າເປັນສອງສ່ວນ ໃຫ້ໄດ້ແກ່ເຜົ່າພົງວົງສາຜົວນັ້ນເຄິ່ງໜຶ່ງ ໄດ້ແກ່ເມຍເຄິ່ງໜຶ່ງສັນນີ້ຊອບແລ. ຜິວ່າເຈົ້າຂຸນກິນເມືອງເອົາໄພ່ເປັນເມຍ ຄັນໜີເສຍເມືອງ ໃຫ້ວາງລູກຜູ້ຍິງອັນໄດ້ດອມກັນນັ້ນໄວ້ກັບເມືອງ ລູກຜູ້ຊາຍໃຫ້ເອົາໄປນຳພໍ່ ຜິວ່າໄດ້ຊື້ໄພ່ຂາດເປັນເມຍ ຍັງຢ່າເສຍກັນໃຫ້ມັນຄືນຫາໄພ່ ຜິຜົວຕາຍມີລູກຍິງຊາຍດອມກັນ ແມ່ມັກຄືນຫາກະກຸນໄພ່ ລູກນັ້ນເອົາໄວ້ກັບຜູ້ພໍ່ ອັນໜຶ່ງ ຜິຜູ້ໃດໄປສູ່ໄພ່ຍັງຢ່າຮ້າງກັນເສຍ ຍັງມີລູກສາມຄົນ ໃຫ້ແກ່ພໍ່ຜູ້ໜຶ່ງ ຂອງອັນຂາ

ສາວໄດ້ດອມກັນນັ້ນ ກໍໃຫ້ປັນແກ່ຜົວສ່ວນໜຶ່ງ ໃຫ້ແກ່ເຈົ້າທີ່ສອງ
ສ່ວນ ຜີຜູ້ຊາຍຕາຍເສຍ ລູກຜູ້ຕົ້ນນັ້ນໄດ້ແກ່ພໍ່ ເມືອແທນການພໍ່
ເຂົາກໍ້າມູນພໍ່ ອັນໜຶ່ງສູ່ບໍ່ຂາດການເມືອງຫລັງມີກັບຕົນ ຜີສູ່ຂາດເອົາ
ຢ້າວເຮືອນແທ້ ຜີເມຍຕາຍເສຍຈັກຄືນຫາມູນຫລັງ ຜີມີລູກໃຫ້ເອົາ
ລູກກັບມູນແມ່ ຂອງອັນຂາສ້າວໄດ້ດອມກັນນັ້ນ ໃຫ້ປັນເປັນສ່ວນສິບ
ຜີຜູ້ຍິງກໍດີ ຜູ້ຊາຍກໍດີອັນຊື້ຂາດ ເມື່ອເຂົາຢ່າກັນມີລູກກໍດີ ຂອງອັນ
ຂາສ້າວໄດ້ ກໍໃຫ້ແຈກແກ່ເຈົ້າທີ່ສອງສ່ວນ ຜູ້ຊື້ຜູ້ສູ່ໄດ້ສ່ວນໜຶ່ງເທິ້ນ
ໄນຍະໜຶ່ງ ຜູ້ຊາຍສູ່ທີ່ຜູ້ຍິງຂາດ ຜູ້ຍິງທ່ານຊື້ຂາດແທ້ ທໍ່ຄືນມາສ້າວ
ກິນໃນທີ່ຜູ້ຍິງ ເມື່ອເຂົາຢ່າກັນຍັງມີລູກສິບຄົນ ໃຫ້ຢັກໄວ້ກັບທີ່ສອງ
ຄົນກໍດີ ຜູ້ໜຶ່ງກໍດີ ອາກອນຍັງເຫລືອນັ້ນ ຈິ່ງໃຫ້ປັນກັນຄົນເຄິ່ງ ແມ່ນ
ຂອງອັນສາວໄດ້ດອມກັນນັ້ນ ກໍໃຫ້ປັນກັນສັນດຽວນັ້ນແລ ຜີຂາຕາຍ
ເສຍກັນ ລູກເຕົ້າຍັງມີດອມແມ່ນ້າແລໜີເສຍ ຂອງອັນສ້າວໄດ້ນັ້ນ
ໃຫ້ຍົກໄວ້ສິບພູດ ໃຫ້ໄວ້ແກ່ເຈົ້າທີ່ພູດໜຶ່ງກ່ອນ ຂອງອັນຍັງເຫລືອ
ນັ້ນໃຫ້ປັນໄດ້ແກ່ແມ່ນ້າສອງພູດ ໄດ້ແກ່ລູກເກົ່າຜົວນັ້ນພູດໜຶ່ງ ເຫດ
ວ່າມັນຄ້ຳການສືບພໍ່ມັນ ຜູ້ຊາຍສູ່ຜູ້ຍິງຂາດແທ້ ທີ່ບໍ່ພໍກິນ ໄປສ້າວ
ກິນທີ່ຜູ້ຍິງ ລູກເກົ່າຄ້ຳການຂົ່ມການ ໄປ່ໄດ້ແຈກຄົວໃຫ້ພໍ່ມັນຜູ້ຕາຍ
ນັ້ນ ຂອງຫລັງພໍ່ມັນມີ ໃຫ້ໄດ້ແກ່ລູກນັ້ນເກົ້າພູດ ໃຫ້ໄວ້ແກ່ແມ່ນ້າ
ນັ້ນພູດສິບ ໄດ້ດ້ວຍອັນເກັບຫອມບໍ່ໃຫ້ຈິບຫາຍເສຍ ຂອງອັນສ້າວໃໝ່
ນັ້ນ ໃຫ້ຍົກອອກສິບພູດ ໄວ້ກັບທີ່ສອງພູດກໍດີ ພູດໜຶ່ງກໍດີ ອັນຍັງ
ເຫລືອນັ້ນໃຫ້ແກ່ລູກສອງພູດ ໃຫ້ໄດ້ແກ່ແມ່ນ້າພູດໜຶ່ງ ຜີບັງເກີດ
ລູກກັບແມ່ນ້າຫ້າຄົນໃຫ້ໄວ້ຜູ້ໜຶ່ງ ຂອງອັນໄດ້ໃໝ່ແຈກສິບພູດ ໃຫ້
ໄວ້ແກ່ເຈົ້າທີ່ພູດໜຶ່ງກໍດີ ສອງພູດກໍດີ ລ້ຳນັ້ນໃຫ້ສັງຮອມເຂົ້າກ່ອນ
ແລ້ວໃຫ້ແຈກສິບພູດ ໃຫ້ໄດ້ແກ່ລູກເກົ່າແລພໍ່ນັ້ນພູດໜຶ່ງແລ ເຫດ
ວ່າມັນໄດ້ຄົວຫລັງແຕ່ພໍ່ມັນແລ ໃຫ້ໄດ້ແກ່ລູກຕົ້ນເມຍໃໝ່ນັ້ນສອງ
ພູດ ໃຫ້ໄດ້ແກ່ລູກຜູ້ກັ້ດນັ້ນສອງພູດ ສອງພູດເພິ່ງໃຫ້ແກ່ແມ່ນ້າແລ
ລູກຜູ້ໄດ້ກັບທີ່ນັ້ນຄົນພູດ ຜີລູກແມ່ນ້າບໍ່ມີ ເທົ່າມີແຕ່ລູກເກົ່າຜົວ ໃຫ້

ໄດ້ແກ່ລູກຜົວນັ້ນຫົກພູດ ໃຫ້ໄດ້ແກ່ແມ່ໝ້າສີພູດ ຜິວ່າຊື້ຜູ້ຍິງຂາດມາສູ່ທີ່ຕົນ ລູກເກົ່າຜົວຜູ້ໜຶ່ງຢູ່ກັບເຮືອນ ພໍ່ມັນເລົ່າລູກກັບແມ່ໝ້າມີສອງຄົນ ສາມຄົນດັ່ງນັ້ນ ໃຫ້ແຈກຂອງນັ້ນເປັນແປດພູດແລ້ວ ໃຫ້ໄດ້ແກ່ລູກເກົ່າຜົວນັ້ນສາມພູດ ໃຫ້ໄດ້ແກ່ແມ່ໝ້າສອງພູດເກິ່ງ ໃຫ້ແກ່ລູກຕົ້ນແມ່ໝ້ານັ້ນພູດເກິ່ງ ໃຫ້ໄດ້ແກ່ລູກຜູ້ກົດນັ້ນພູດໜຶ່ງ ໃຫ້ແກ່ຜູ້ຊອຍນັ້ນເກິ່ງພູດ ໃຫ້ໄດ້ແກ່ແມ່ໝ້ານັ້ນສອງພູດເທີ້ນ ຜິວ່າຂອງສ້າງໄດ້ໃໝ່ນັ້ນ ໃຫ້ໄດ້ແກ່ແມ່ໝ້າສາມພູດ ໃຫ້ໄດ້ແກ່ລູກຕົ້ນຜົວເກົ່າສອງພູດ ໃຫ້ໄດ້ແກ່ລູກຕົ້ນອັນມິດອມແມ່ໝ້ານັ້ນພູດເກິ່ງ ໃຫ້ໄດ້ແກ່ຜູ້ກົດພູດໜຶ່ງ ໃຫ້ໄດ້ແກ່ຜູ້ຊອຍນັ້ນເກິ່ງພູດ ຂອງອັນພໍ່ເຂົາສ້າງໄດ້ນັ້ນແລ ໄດ້ໃຫ້ແຕ່ມີຊີວິດນັ້ນ ຢ່າວ່າເກິງເທີ້ນ ຜິວ່າພໍ່ຜູ້ນັ້ນໄດ້ກິນເມືອງຂີ່ມການ ຄ່າບ້ານຄ່າເມືອງເກີດດອມ ພະລະຄຸນພໍ່ເຂົານັ້ນຂອງອັນນັ້ນໃຫ້ແຈກເປັນເກົ້າພູດ ແລ້ວໃຫ້ແກ່ແມ່ໝ້ານັ້ນສາມພູດໃຫ້ແກ່ລູກຜົວເກົ່ານັ້ນສາມພູດ ໃຫ້ໄດ້ແກ່ລູກຕົ້ນມິດອມກັນນັ້ນພູດເກິ່ງ ໃຫ້ໄດ້ລູກຜູ້ກົດນັ້ນພູດໜຶ່ງ ໃຫ້ໄດ້ແກ່ລູກຜູ້ຊອຍເກິ່ງພູດ ຜິວ່າລູກເກົ່າຜົວ ນັບວ່າມີໄປພໍເຂົ້າການຊອຍພໍ່ດັ່ງນັ້ນ ໃຫ້ໄດ້ແກ່ແມ່ໝ້າສາມພູດ ໃຫ້ໄດ້ແກ່ລູກເກົ່າຜົວນັ້ນສອງພູດ ໃຫ້ແກ່ລູກຜູ້ຕົ້ນມິດອມແມ່ໝ້ານັ້ນສອງພູດ ໄດ້ລູກຜູ້ກົດນັ້ນພູດເກິ່ງແລ ໃຫ້ແກ່ລູກຜູ້ກົດອີກນັ້ນພູດໜຶ່ງ ໃຫ້ໄດ້ແກ່ຜູ້ຊອຍນັ້ນເກິ່ງພູດ ຜິວ່າລູກຜົວບໍ່ມີ ແມ່ໝ້າກໍບໍ່ມີລູກ ໃຫ້ປັນກັນຄົນເກິ່ງເທີ້ນ ຜິວ່າລູກຜົວມີທີ່ພີໄປຂີ່ມການດັ່ງນັ້ນ ຂອງອັນນັ້ນໃຫ້ແຈກເປັນພູດ ແລ້ວໃຫ້ໄດ້ແກ່ລູກຜົວ ສາມພູດລູກແມ່ໝ້ານັ້ນສີພູດເທີ້ນ ຜິວ່າລູກຜົວເກົ່າ ພໍ່ມັນໄດ້ປູກໄດ້ແປງໃຫ້ລົງສ້າງເຮືອນກິນຕ່າງແລ້ວ ແມ່ນມີສິ່ງຂອງພໍ່ຫາກໃຫ້ແລ້ວທໍ່ໃດພໍມີແລ້ວທໍ່ໃຫ້ຂ່າວມູນເຮືອນຫລັງພໍ່ມັນເທີ້ນ ຜິວ່າຕາຍແລສັ່ງວ່າໃຫ້ແບ່ງໃຫ້ປັນຈຶ່ງປັນເທີ້ນ ຜິວ່າກະກຸນຊາວບ້ານຊາວເມືອງກໍດີ ມີລູກຍິງລູກຊາຍຫາກວ່າໄດ້ໃຫ້ລົງສ້າງເຮືອນກິນຕ່າງ ແລມີຊຸ້ມການເມືອງກັບດ້ວຍຕົນ ບໍ່ເນື່ອງບໍ່ເຈືອກັບພໍ່ແມ່ດັ່ງນັ້ນ ຜິວ່າຜົວຕາຍໃຫ້ໄດ້ແກ່

ເມຍ ຜີວ່າເມຍຕາຍໃຫ້ໄດ້ແກ່ຜົວ ທໍ່ໃຫ້ຂ່າວແກ່ພໍ່ແມ່ຜູ້ຍັງເທີ້ນ ຜີວ່າພໍ່ແມ່ຕາຍເສຍ ກໍໃຫ້ຂ່າວຜູ້ກິນມູນເຮືອນ ພໍ່ແມ່ເຂົານັ້ນເທີ້ນ ອັນໜຶ່ງຜີວ່າມີລູກຊາຍ ການເມືອງບໍ່ຕິດກັບຕົວມັນ ພໍ່ແມ່ຫາກຫາເມຍໃຫ້ກໍດີ ມັນຫາກຫາເມຍໄດ້ກໍດີ ຂາຍັງຢູ່ເຮືອນພໍ່ແມ່ດັ່ງນັ້ນ ຂາສ້າງໄດ້ກໍດີ ພໍ່ແມ່ມັກໃຫ້ກໍຈຶ່ງໄດ້ ຫາກເປັນຂອງພໍ່ແມ່ສ້າງທັງມວນແລ ເມື່ອເຂົາຈັກລົ້ງສ້າງເຮືອນກິນຕ່າງນັ້ນ ພໍ່ແມ່ມັກໃຫ້ອັນໃດກໍຈຶ່ງໃຫ້ ບໍ່ມັກໃຫ້ອັນໃດກໍບໍ່ໄດ້ແລ ເມື່ອພໍ່ແມ່ເຂົາຕາຍນັ້ນ ຈັກໃຫ້ຜູ້ໃດກໍຊ່າງໃຈແລ ບໍ່ມັກໃຫ້ແກ່ລູກແກ່ຫລານຜູ້ໃດ ກໍບໍ່ໄດ້ແລ້ວ ບໍ່ຄວນວຽນເອົາແລ ອັນໜຶ່ງ ຜີວ່າຂາຜົວເມຍ ຫາກລົ້ງສ້າງເຮືອນກິນຕ່າງງດັ່ງນັ້ນ ການບ້ານການເມືອງ ຍັງຕິດເຮືອນພໍ່ແມ່ແຫ່ງດຽວກັນ ຢູ່ໄດ້ຂ້າສ້າງຄ້າຂາຍກິນນອກເຮືອນພໍ່ແມ່ ແລມັ່ງມີເປັນດີດ້ວຍເຂົ້າຂອງ ເມື່ອລູກຊາຍເຈົ້າເຮືອນໄປຕາຍ ພໍ່ແມ່ຈັກເອົາບໍ່ໄດ້ ດັ່ງເມື່ອຢູ່ໃນເຮືອນພໍ່ແມ່ນັ້ນແລ້ວ ຂາມັກໃຫ້ອັນໃດກໍຈຶ່ງໄດ້ ຂາບໍ່ມັກໃຫ້ກໍບໍ່ໄດ້ແລ ຜີວ່າລູກຊາຍເຈົ້າເຮືອນຕາຍເສຍແລ້ວ ພູດເຂົ້າຂອງລູກຊາຍນັ້ນ ໃຫ້ໄດ້ແກ່ເມຍມັນກິນ ຜີວ່າລູກຊາຍຜູ້ຕາຍນັ້ນຫາກບໍ່ຊ່ອຍ ການເມືອງກັບພໍ່ແມ່ມັນອັນໃດອັນໜຶ່ງ ແລບໍ່ໃຫ້ຂ້າຄົນເງິນຄຳແກ່ພໍ່ແມ່ແທ້ ໃຫ້ພໍ່ແມ່ກິນຄົວເຮືອນເຄິ່ງໜຶ່ງ ຜີວ່າໃຫ້ເງິນຄຳລ້ຽງພໍ່ແມ່ ແລໃຫ້ຂ້າຄົນລ້ຽງດູຍັງພໍ່ແມ່ ຜີວ່າມີດັ່ງນີ້ແທ້ ໃຫ້ຈັດຄົວເຮືອນລູກຜູ້ຕາຍນັ້ນໃຫ້ແກ່ພໍ່ແມ່ມັນກິນພູດໜຶ່ງ ໃຫ້ໄວ້ແກ່ເມຍມັນສອງພູດແລ ຜີວ່າເມຍມັນຫາກຈັກໜີ ໃຫ້ປັນຄົວເຮືອນພູດໜຶ່ງ ຜີວ່າມີລູກຍິງລູກຊາຍ ໃຫ້ໄວ້ກັບມູນພໍ່ເຂົາ ໃຫ້ກິນຄົວເຮືອນແມ່ເຂົາຂອງພູດອັນໄດ້ນັ້ນເທີ້ນ. ຜີວ່າລູກບໍ່ມີ ໃຫ້ແກ່ມູນພໍ່ແມ່ຜູ້ຊາຍນັ້ນກໍດີເທີ້ນ ເຫດວ່າການເມືອງນີ້ໜັກ ພໍ່ແມ່ຫາກຄ້ຳການເມືອງຂາຫາກຍູທ່າງຫາກິນ ລູກຜູ້ເປັນກັບພໍ່ແມ່ ອັນເປັນກັບການເມືອງເປັນສັນນີ້ແລ.

ບັດນີ້ຈັກຈາລູກຜູ້ລົ້ງສ້າງເຮືອນກິນຕາຍ ແລມີເຊັ່ນການເມືອງ

ຫາກຕ່າງ ກິນພູດອັນຄ້ຳຄິງນັ້ນ ອັນນີ້ວ່າດ້ວຍອັນຂາຫາກຂົນຂວາຍ ດ້ວຍແຮງຂາເປັນທຶນຄ້າຂາຍກໍດີ ຂາຫາກກູ້ຢືມທ່ານມາເປັນທຶນກໍດີ ໃຫ້ແຕ່ງດັ່ງນີ້ ກໍຫາກເປັນຄອງແຫ່ງປະເວນີເມືອງມາແຕ່ຈາຣິດແລ ອັນໜຶ່ງ ຜີວ່າຂາເອົາທຶນແຕ່ພໍ່ແມ່ເຂົາ ໄປເປັນທຶນໄປສິ່ງໄປແທນແຮງລູກມັນກໍດີ ຂາສ້າງໄດ້ ລູກຊາຍຊ່ອຍການເມືອງກໍດີ ບໍ່ຊ່ອຍກໍດີ ໃຫ້ຜ່າເຄິ່ງໜຶ່ງໃຫ້ແກ່ເມຍມັນເຄິ່ງໜຶ່ງເທີ້ນ ຜີວ່າລູກສະໄພ້ໜີໃຫ້ແກ່ມັນພູດໜຶ່ງ ຍັງມີລູກໃຫ້ເອົາໄວ້ ຜີວ່າມີຫ້າຄົນ ໃຫ້ແກ່ແມ່ມັນຜູ້ໜຶ່ງເທີ້ນ ຜີວ່າຂາຫາກກູ້ຫາກຫາທ່ານມາໄກ່ເອົາກໍດີ ຂາເອົາເງິນຂາສ້າງໄດ້ແລ້ວໄປໃຊ້ແທນ ຂາເລົ່າກູ້ທ່ານມາເປັນທຶນຄ້າຂາຍກິນກໍດີ ຂາຜົວເມຍຫາກແທນກໍດີ ຂາຫາກເອົາແຮງເປັນທຶນກໍດີ ເມື່ອຊາຍເຈົ້າເຮືອນຕາຍເສຍ ຂອງອັນຂາສ້າງໄດ້ນັ້ນ ໃຫ້ແຕ່ງດັ່ງກ່າວແຕ່ກ່ອນນັ້ນເທີ້ນ.

ໂອຣະສະປຸຕຕາ ອັນວ່າລູກອັນເກີດແຕ່ອົກ ເຂຕຕະຊາ ລູກຂ້າຍິງ ໂທຕກິມາ ລູກແມ່ນ້ອຍ ກິຕຕິມາ ລູກຜູ້ຊາຍກໍດີ ລູກຜູ້ຍິງກໍດີ ບໍ່ໃຊ່ລູກທັງສອງກໍດີ ປຸປຜະກາ ລູກອັນເກີດແຕ່ດອກມາເປັນລູກກໍດີ ອັປປະວິທະ ເກັບລູກທ່ານມາເປັນລູກກໍດີ ສະປຸຕຕາ ລູກຫົກຄົນນີ້ ອາຫາພັນທຸວາ ຄວນສືບກະກຸນແທນຄົວເຮືອນພໍ່ແມ່ໄດ້ແລ ບໍ່ຄວນແທນຄົວເຮືອນພໍ່ແມ່ໄດ້ນີ້ ມີຫົກຄົນ ອັນໜຶ່ງຜູ້ຊາຍໄປສູ່ຜູ້ຍິງທຶນຜູ້ຍິງບໍ່ມີ ທຶນຜູ້ຊາຍມີ ຂາຮູ້ເຮັດສ້າງດັ່ງກັນ ຂາຢ່າກັນ ຜູ້ຊາຍມີທຶນທໍ່ໃດ ຜູ້ຊາຍເອົາຂອງອັນເຍັດໄດ້ດອມກັນນັ້ນ ໃຫ້ປັນມາຄົນເຄິ່ງ ຜີຜູ້ຍິງບໍ່ຮູ້ສ້າງດັ່ງນັ້ນ ຂອງນັ້ນໃຫ້ຜ່າເປັນສາມສ່ວນ ໃຫ້ແກ່ຜູ້ຊາຍສອງສ່ວນ ໃຫ້ແກ່ຜູ້ຍິງສ່ວນໜຶ່ງເທີ້ນ ຜີວ່າ ກະກຸນພາມນັ້ນຕາຍເສຍ ພີ່ນ້ອງມັນບໍ່ມີ ພາມຕໍ່ພາມ ກໍຄວນກິນຄົວເຮືອນພາມຜູ້ຕາຍນັ້ນກໍຊອບແລ ຂອງສິງກໍດີ ຂອງພາມກໍດີ ໃຫ້ພິຈາລະນາຕາມໄນຍະນີ້ເທີ້ນ ເຈົ້າມະໂນອິສີກ່າວແລ ທະວິນນັງ ສັນຕະກັງ ອະ–ວິພັຊຊິຕວາ ເອກັສມິງ ກາລະກະເຕ ເອກັສເສວະ ໂຫຕິ ສັທທິງ–

ວິຫາຣິກາທີນັ້ງ ເທຕິ ອະທິມມະເນວະ ໂທຕິ ສັນຕະກັງ ອັນວ່າ ເຂົ້າຂອງ ທະວິນນັ້ງ ແຫ່ງພິກຂຸສອງຕົນ ອະວິພັຊຊິຕວາ ອັນບໍ່ໄດ້ ແຈກເອກັສນີງ ໃນເມື່ອພິກຂຸຕົນໜຶ່ງ ກາລະກະຕາ ອັນຕາຍໄປ ດັ່ງນັ້ນຕັງ ຈີວະຣັງ ອັນວ່າຜ້າຜືນນັ້ນ ສັທທິງວິຫາຣິກາທີນັ້ງ ຄວນແກ່ບຸກຄະລະທັງຫລາຍ ອັນມີສັດທິວິຫາຣິກເປັນຕົ້ນ ຕັງ ຈີ ວະຣັງ ອັນວ່າຜ້າຜືນນັ້ນ ອະທິມນັງ ເອວະ ອັນພິກຂຸບໍ່ໄດ້ໃຫ້ ສີ່ງດຽວ ໂທຕິ ກໍມີແລ ອັຕຕະໂນ ເປັນຂອງຕົນສີ່ງດຽວ ພິກຂຸສອງ ຕົນບໍ່ໄດ້ອາໄສເຊິ່ງໃຜແລ.

ອັນໜຶ່ງ ຜູ້ໃດຈັກໃຫ້ສິນແກ້ຂ້ອຍແກ່ໄພ່ ແກ່ລູກຂຸນທ່ານ ຫາກ ບໍ່ເລົ່າແກ່ເຈົ້າລູກຂຸນ ແລເຈົ້າໄພ່ ແລເຈົ້າຂ້ອຍດັ່ງນັ້ນ ໃຫ້ລຶບເສຍ ເທີ້ນ ອັນລູກທ່ານກໍດີ ຂ້ອຍທ່ານກໍດີ ທຽວຫາວຄອມກັນ ເຫັນພິຊະ ລູກໄມ້ແລຊວນກັນຂຶ້ນ ແລຕົກຕາຍດັ່ງນັ້ນ ໃຫ້ທັງຫລາຍສີ່ງສະການ ແກ່ມັນເງິນຮ້ອຍໜຶ່ງເທີ້ນ.

<u>ລັກຂະນະທ້ອງພິກຂຸ</u>

ບັດນີ້ຈັກຈາລັກຂະນະທ້ອງພິກຂຸ ອັນກໍ່ເອົາເສນະສະນະໃນອາ- ຣາມພາຍໜ້າ ແລ້ວບໍ່ຄວນຈັກທວງເອົາລາພະສັງ ໃນອາຣາມະສີມາ ອັນຕົວໄດ້ຢູ່ແຕ່ກ່ອນ ເປັນດັ່ງມະຫາອຸບປະນັນທະ ອັນມາຢາຍຍັງ ບໍຣິຂານໄວ້ ໃນເສນາສະນະທີ່ຕົວຢູ່ແຕ່ກ່ອນນັ້ນແລ ມາກະທຳຍັງ ໄລ້ລັ້ງໄວ້ດວຍຄຳວ່າ ເສນາສະນະທີ່ນີ້ເປັນຂອງກູ ກູໄວ້ໃນເທົ່າທີ່ນີ້ ເສ ນາສະນະທີ່ນີ້ ເປັນເສນາສະນະກູ ກູໄວ້ທຳມະກະຣົກ (ຜ້າຕອງນ້ຳ) ໜີ້ ມາກະທຳອາໄລ້ໄວ້ດັ່ງນີ້ ລາພະສີມາເກີດແລມາໂຈດເອົາຍັງລາ ພະສີມາເມື່ອພາຍລຸນ ສັບພັນຍູເຈົ້າເທດສະໜາວ່າ ບໍ່ຄວນໄດ້ແລ ສັບພັນຍູເຈົ້າຈິ່ງໄດ້ເທດສະໜາສຳແດງໄວ້ວ່າ ຄະທະປະເນນະ ຄະ- ທະນັງ ປະຕິສັມພິດັ່ງນີ້ ເຈົ້າປະທະພາຊະນີ ຈິ່ງໄຂໃນຍະປາລິພະ ພຸດທະເຈົ້າບົດວ່າ ຄະທະປະເນນະ ຄະທະນັງ ປະຕິສັມພິ ນັ້ນ ວ່າ ຄະທະປະເນນະ ອາລະໂຍ ປະຕິສັມພະຕິ ອາລະເຍນະ ຄະ-

ທະນັງ ປະຕິສັມພິຕິ ອາລະໄຍ ປະຕິສັມພະຕິ ດັ່ງນີ້ ເທດເຈົ້າ ອັດກະກະຖາຈຸນລະວັກວ່າ ອະຍັມປີ ເນຕກະ ວິນິສສະເຍ ຄະທະ-ເນນະ ຄະທະນັງ ປະຕິສັມພະຕິ ຄະທະເນນະ ອາລະໄຍ ປະຕິ-ສັມພະຕິ ອາລະເຍນະ ຄະທະນັງ ປະຕິສັມພະຕິ ອະລະໄຍ ປະ-ຕິສັມພະຕິ ດັ່ງນີ້ແປວ່າ ອະຍັງ ວິນິສສະໄຍ ອັນວ່າພິຈາລະນາ ອັນນີ້ ປັນດິເຕນະ ອັນບຸກຄະລະຜູ້ມີຜະຫຍາ ເວທິຕັມໂພ ກໍເພິງ ຮູ້ ເອຕກະ ປະເທ ໃນປາລີພະພຸດທະເຈົ້າເທດສະໜາວ່າ ຄະທະ-ປະເນນະ ຄະທະນັງ ປະຕິສັມພີນັ້ນ ອາລະໄຍ ອັນວ່າອາໄລ ປະ-ຕິສັມພະຕິ ກໍຣະວັງບເສຍບັດນີ້ ພິກຂຸໃນແກ່ພິກຂຸ ຄະທະເນນະ ດ້ວຍ ອັນກຶເອົາ ປາລີບົດວ່າ ຄະທະເນນະ ຄະທະນັງ ປະຕິສັມພີນັ້ນ ຄະທະນັງ ອັນວ່ຈກິຍາອັນກຶເອົາ ປະຕິສັມພະຕິ ກໍລະວັງບເສຍບັດນັ້ນ ພິກຂຸໃນແກ່ພິກຂຸ ອາລະເຍນະດ້ວຍອາໄລ ອາລະໄຍ ອັນວ່າອະໄລ ປະຕິສັມພະຕິ ກໍລະວັງບເສຍບັດນັ້ນ ພິກຂຸໃນແກ່ພິກຂຸແລ ມີຄຳປຸດ-ສາວ່າ ກະກັ່ງດັ່ງນີ້ຈາ ບຸກຄະລະ ຜູ້ມີຜະຫຍາເພິ່ງຮູ້ວ່າອາໄລ ມາ ລະວັງບເສຍແກ່ພິກຂຸດ້ວຍອັນກຶເອົາແລ ກິຍາ ອັນກຶເອົາ ມາລະວັງບ ເສຍແກ່ພິກຂຸດ້ວຍອາໄລ ອັນມາລະວັງບເສຍນັ້ນເພິງຮູ້ເປັນສິ່ງໃດຈາ ມີຄຳປຸດສາສັນນີ້ ເຈົ້າອັດກະກະຖາຈານຈຶ່ງຂຶ້ນຄຳແກຸມ ເຈົ້າປະທະ ພາຊະນີ ບົດວ່າ ຄະທະເນນະ ອາລະໄຍ ປະຕິສິມພິ ນັ້ນວ່າ ອິ-ເທກັຈໄຈ ວັສສຸປະນາຍິກະທິວະໄສ ເອກັສມິງ ວິຫາເຣ ເສນາສະ-ນັງ ຄະເຫຕວາ ສະມັນຕາ ວິຫາຣັງ ຄັນຕວາ ຕັຕຣາປິ ຄັນ-ທະຕິ ຕັສສະ ອິມິນາ ຄະທະເນນະ ຄະທະນັງ ປະຕິສັມພະຕິ ດັ່ງນີ້ ແປວ່າ ວັສສຸປະນາທິວະເສ ໃນເມື່ອວັນອັນຈັກເຂົ້າພັນສາ ສັມປັຕເຕ ແລມາຮອດມາເກິງ ສະຕິແລມີດັ່ງນັ້ນ ເອກັຈໄຈ ມັກ ວ່າ ເອໂກ ພິກຂຸ ອັນວ່າພິກຂຸຕົນໜຶ່ງ ອິທະສາສະເນ ໃນພະສາດ ສະໜານີ້ ຄະເຫຕວາ ກຶເອົາແລ້ວ ເສນາສະນັງ ຍັງເສນາສະນະ ເອກັສມິງ ວິຫາເຣ ໃນວິຫານແຫ່ງໜຶ່ງ ຄັນຕວາ ໜີໄປ ວິຫາ-

ຣັງ ສູ່ວິຫານອັນໜຶ່ງ ສະມັນຕາ ອັນມີໃນທີ່ໄກ ຄັນຫາຕິ ກໍກືເອົາ ບັດນັ້ນ ເສນາສະນັງ ຍັງເສນາສະນະ ຕັຕຣາປິ ແມ່ນໃນວິ ຫານອັນໃໝ່ນັ້ນ ຄະຫະນັງ ອັນວ່າກິຍາ ອັນກືເອົາຍັງເສນາສະ- ນະອັນເກົ່ານັ້ນ ປະຕິສັມພະຕິ ກໍລະງັບເສຍບັດນັ້ນ ຕັສສະພິກຂຸໂນ ແກ່ພິກຂຸຕົນນັ້ນ ອິມິນາ ຄະຫະເນນະ ດ້ວຍກິຍາພິກຂຸຕົນນັ້ນກື ເອົາ ເສນາສະນະ ອັນໃໝ່ນັ້ນແລ ອັດຖະກະຖາຈານເຈົ້າເລົ່າຂຶ້ນ ຄຳແຖມ ເຈົ້າພາຊະນີບົດວ່າ ອາລະເຍນະ ຄະຫະນັງ ປະຕິສັມ- ພິ ນັ້ນວ່າ ອະປະໂຣ ອິວະ ວັສສິສສາມິຕິ ອະລະຍະມັຕຕັງ ກັຕວາ ສະມັນຕະວິຫາຣັງ ຄັນຕວາ ຕັຕເຖວະ ເສນາສະນັງ ຄັນຫາຕິ ຕັສສະ ອິມິນາ ຄະຫະເນນະ ປຸຣິມະ ຄະຫະນັງ ປະຕິສັມພະຕິ ອາລະໂຍ ປະຕິສັມພະຕິ ດັ່ງນີ້ ແປວ່າ ອະປະໂຣ ພິກຂຸ ອັນວ່າ ພິກຂຸຕົນອື່ນ ກັຕວາ ກະທຳແລ້ວ ອາລະຍະມັຕຕັງ ຍັງມາດຕາ ອາໄລໄວ້ ດ້ວຍຄຳໃສ່ໃຈວ່າ ອິທະ ວະສິສສາມິ ອິຕິ ດັ່ງນີ້ ອະຫັງ ອັນວ່າກູ ວະສິສສາມິ ຈັກຈຳພັນສາ ອິທະ ໃນອາຣາມທີ່ນີ້ ກະທຳ ອາໄລໄວ້ດັ່ງນີ້ ຄັນຕວາ ໜີໄປ ສະມັນຕາ ວິຫາຣັງ ສູ່ວິຫານ ອັນມີໃນທີ່ໄກ ຄັນຫາຕິ ກໍກືເອົາບັດນັ້ນ ເສນາສະນັງ ຍັງເສນາ- ສະນະ ຕັຕເຖວະ ໃນອາຣາມອັນໃໝ່ນັ້ນແທ້ດັ່ງນັ້ນ ປຸຣິມະຄະ- ຫະນັງ ອັນວ່າ ກິຍາອັນກືເອົາຍັງເສນາສະນະອັນກ່ອນນັ້ນ ປະຕິ- ສັມພະຕິ ກໍລະງັບບັດນັ້ນ ຕັສສະ ພິກຂຸໂນ ແກ່ພິກຂຸຕົນນັ້ນ ອາ- ລະໂຍ ອັນອາໄລ ປະຕິສັມພະຕິ ກໍລະງັບເສຍບັດນັ້ນ ຕັສສະພິກຂຸ ໂນ ແກ່ພິກຂຸຕົນນັ້ນແລ.

ອັດຖະກະຖາຈານເຈົ້າຂຶ້ນຄຳແຖມ ເຈົ້າປະທະພາຊະນີ ບົດ ວ່າ ອາລະໂຍ ປະຕິສັມພະຕີນັ້ນວ່າ ເອໂກ ອິທະ ວະສິສສາມິຕິ ເສນາສະນັງ ຄະເຫຕວາ ອາລະຍັງ ກັຕວາ ສະມັນຕາ ວິຫາຣັງ ຄັນຕວາ ຕັຕເຖວະ ເສນາສະນັງ ຕັນຫາຕິ ອິເທ ອິມານິ ວະ ສິສສາມິຕິ ອາລະຍັງວາ ກະໂຣຕິ ອິຈັສສະ ອາລະເຍນະວາ ຄະ-

ທະນັງ ອາລະເບນະ ວາ ອາລະໂບ ປະຕິສັມພະຕິ ດັ່ງນີ້ແປວ່າ ເອໂກພິກຂຸ ອັນວ່າພິກຂຸຕົນໜຶ່ງ ຄະເຫຕວາ ກືເອົາແລ້ວ ເສນາ ສະນັງ ບັງເສນາສະນະ ກັຕວາ ກະທຳ ອາລະບັງ ບັງອາໄລໄວ້ ວ່າ ອິທະ ວະສິສສາມິ ອິຕິ ດັ່ງນີ້ ອະຫັງ ອັນວ່າກູ ວະສິສສາ– ມິ ກໍຈັກຈຳວັດສາ ອິທະໃນອາຮາມທີ່ນີ້ ກະທຳອາໄລໄວ້ດັ່ງນີ້ ຄັນ– ຕວາໜີໄປ ສະມັນຕະ ວິຫາຣັງ ສູ່ວິຫານອັນມີໃນທີ່ໄກ ຄັນທາຕິ ກໍກືເອົາບັດນັ້ນ ເສນາສະນະຕັຕເກວະ ໃນອາຮາມທີ່ນັ້ນ ວາໄນ ບະໜຶ່ງ ໂສ ພິກຂຸ ອັນວ່າພິກຂຸຕົນນັ້ນ ກະໂຣຕິ ກະທຳບັດນັ້ນ ອາ– ລະບັງ ບັງອາໄລ ໄວ້ວ່າ ອິເທອິທານິ ວະສິສສາມິ ອິຕິ ດັ່ງນີ້ ອະຫັງອັນວ່າກູ ວະສິສສາມິ ກໍຈຳພັນສາ ອິທະເອວະໃນທີ່ນີ້ແທ້ ອິທານິ ໃນກາລະບັດນີ້ ຄະຫະນັງ ອັນວ່າ ກິບາອັນກືເອົາບັງເສ– ນາສະນະອັນເກົ່ານັ້ນ ປະຕິສັມພະຕິ ກໍລະງັບເສຍບັດນັ້ນ ອັສສະ ພິກຂຸໂນ ແກ່ພິກຂຸຕົນນັ້ນ ອາລະເບນະວາ ດ້ວຍອາໄລ ປະຕິ– ສັມພະຕິ ກໍລະງັບເສຍ ອັສສະ ພິກຂຸໂນ ແກ່ພິກຂຸຕົນນັ້ນ ອາລະ– ເບນະ ດ້ວຍອາໄລກໍດີ ອິຕິ ມັກວ່າ ອິມິນາ ວຸຕຕະປາກາເຣນະ ດ້ວຍປະການອັນກ່າວມານີ້ແລ ເຈົ້າອັດກະກະຖາຈານເລົ່າຊ້ຳຂຶ້ນຄຳ ໄວ້ໃຫ້ຈິ່ງວ່າ ສັພພັຕກະ ປັດສິເມຄະຫະເນ ວາ ອາລະເບວາ ຕິຕກະຕິ ດັ່ງນີ້ແປວ່າ ພິກຂຸ ອັນວ່າພິກຂຸ ຕິຕກະຕິ ຕັ້ງຢູ່ດັ່ງນັ້ນ ອາລະເບວາ ໃນອາໄລກໍດີ ຄະຫະເນວາ ໃນອັນກືເອົາກໍດີ ປັດສິເມ ອັນນ້ອຍ ສັພພັຕກະ ໃນທີ່ທັງມວນແລ ອັດກະກະຖາ ຊ້ຳຂຶ້ນຄຳ ອັນນີ້ໄວ້ໃຫ້ແຈ້ງວ່າ ໂບ ປະນະ ເອກັສມິງ ວິຫາເຣ ເສນາສະ– ນັງ ຄະເຫຕວາ ອັນບັສມິງ ວິຫາເຣ ວະສິສສາມີຕິ ຄັດສະຕິ ຕັສ– ສະ ອຸປະຈາຣະສີມາຕິກກະເມວະ ເສນາ–ສະນະຄາໂຫ ປະຕິສັມ– ພະຕິ ດັ່ງນີ້ ປະນະປະການໜຶ່ງ ໂບ ພິກຂຸ ອັນວ່າພິກຂຸຕົນໃດ ຄະເຫຕວາ ກືເອົາແລ້ວ ເສນາສະນັງ ບັງເສນາສະນະ ເອກັສ– ມິງ ວິຫາເຣ ໃນວິຫານອັນໜຶ່ງ ຄັດສະຕິ ກໍໜີໄປບັດນັ້ນ ດ້ວຍ

ຄຳໃສ່ໃຈວ່າ ອັນຍັສມິງ ວິຫາເຣ ວະສິສາມິ ອິຕິ ດັ່ງນີ້ ອະຫັງ-
ອັນວ່າກູ ວະສິສສາມິ ກໍຈັກຈຳວັດສາ ອັນຍັສມິງ ວິຫາເຣ ໃນວິ
ຫານອັນອື່ນໜຶ່ງແລ ເສນາສະນະຄາໄຫ ອັນວ່າກິຍາອັນກຶເອົາຍັງເສ
ນາສະນະອັນເກົ່ານີ້ ປະຕິສັມພະຕິ ກໍລະວັບເສຍບັດນັ້ນແລ ຕັສສະ
ພິກຂຸໂນແກ່ພິກຂຸຕົນນັ້ນ ອຸປປາຈາຣະສິມາ ຕິກກະເມ ໃນກິຍາອັນ
ພິກຂຸຂ້າມພົ້ນຍັງອຸປປະຈາຣະສິມາ ແຫ່ງວິຫານອັນເກົ່ານັ້ນແລ ເຈົ້າ
ອັດກະກະຖາຈານເລົ່າຊ້ຳຂຶ້ນຄຳໄວ້ວ່າ ຍະທິ ປະນະ ສະເຈ ຕັຕ-
ກະ ຜາສຸພະວິສສະຕິ ວະສິສສາມິຕິ ໂນ ເຈ ອາຄະມິສສາມິຕິ
ຄັນຕວາ ອະພາສຸກະພາວັງ ຍັຕວາ ປັດສາ ຄັດສະຕິ ວັຕຕະຕິ
ດັ່ງນີ້ແປວ່າ ປະນະ ດ້ວຍມີແທ້ ປະຣິວິຕັກໂກ ອັນວ່າຄຳຕິຄະນິງ
ອັຕກິ ຜີແລມີ ພິກຂຸໂນແກ່ພິກຂຸວ່າ ສະເຈ ຕັຕກະ ຜາສຸກະພະ-
ວິສສະຕິ ວະສິສສາມິ ໂນ ເຈ ອາຄັດສາມິ ອິຕິດັ່ງນີ້ ຜາສຸອັນວ່າ
ຄຳສະບາຍ ສະເຈ ພະວິສສະຕິ ຜີແລມີ ຕັຕກະ ໃນທີ່ນັ້ນ ອະ-
ຫັງອັນກູ ພະວິສສາມິຈັກຢູ່ ຕັຕກະໃນທີ່ນັ້ນ ຜາສຸ ອັນວ່າ ຄຳສະ
ບາຍ ໂນ ເຈ ພະວິສສະຕິ ຜີແລບໍ່ມີ ອະຫັງອັນວ່າກູ ອາຄະມິສ-
ສາມິ ກໍຈັກຄືນມາແລ ຄຳຕິຄະນິງ ມີແກ່ພິກຂຸດັ່ງນີ້ ໂສ ພິຂຸ ອັນ
ວ່າ ພິກຂຸຕົນນັ້ນ ຄັນຕວາ ຕະເດີນໄປ ຍັຕວາຣູ້ ອະຜາສຸກະພາ-
ວັງ ຍັງພາວະອັນບໍ່ສະບາຍ ດັ່ງນັ້ນ ປັດສາ ຄັດສະຕິ ກໍຄືນມາເມືອ
ພາຍລຸນ ວັຕຕະຕິ ກໍຄວນແລ ມີໃນອັດກະກະຖາ ວັດສູປະນາ-
ຍິກະເສນາສະນະຂັນທະແລ.

ເຈົ້າສາຣັຕກະທີປະນີ ຕີກາຂຶ້ນຄຳແກ້ໄວ້ວ່າ : ຍັສມາ
ນານາສີມາຍັງ ທວິສຸ ອາວາເສສຸ ວັສສະວະສັນຕັສສະ ທຸຕິເຍ ວະ
ວັສສາມີຕິ ຈິຕເຕ ອຸປປັນໂນ ປະກະມັງ ເສນາສະນະຄາໄຫ ປະ-
ຕິສັມພະຕິ ປຸນະ ປະກະມະເຍວະ ວັສສາມິຕິ ຈິຕເຕ ອຸປປັນເນ
ທຸຕິໂຍ ປະຕິສັມພະຕິ ຕັສມາ ຕັສສະ ພິກຂຸໂນ ປຸຣິມິກາ ຈະ
ປະນະ ຍາຍະຕິ ວຸຕຕັງ ດັ່ງນີ້ ແປວ່າ ຈິຕເຕ ໃນເມືອຈິດ ອຸປ-

ປັນເນ ແລເກີດມີວ່າ ທຸຕິເຍວະ ວັສສານິ ອິຕິ ດັ່ງນີ້ ພິກຂຸໃນ ແກ່ພິກຂຸ ວະສັນຕັສສະ ອັນຈຳ ວັສສັງຍັງວັດສາ ທະວິສຸ ອາວາ– ເສສຸ ໃນອາວາດ ທັງຫລາຍສອງອັນ ເສນາສະນະຄາໂຫ ອັນວ່າກິຍາ ອັນພິກຂຸກືເອົາ ຍັງເສນາສະນະ ປະກະມັງ ອັນເປັນປະກົມມັ້ນ ປະຕິສັມພະຕິ ກໍລະວັງບເສຍບັດນັ້ນ ຕັສສະ ພິກຂຸໂນ ແຕ່ພິກຂຸຕົນ ນັ້ນ ຈິຕເຕ ໃນເມື່ອຈິດ ອຸປປັນເນ ແລເກີດມີ ພິກຂຸໂນ ແກ່ພິກ ຂຸວ່າ ປະກະເມ ວັສສານິ ອິຕິວ່າດັ່ງນີ້ ປຸນະ ເມື່ອພາຍລຸນ ອະ– ຫັງ ອັນວ່າກູ ວະສານິ ກໍຈັກຈຳ ບັດນີ້ ວັສສັງ ຍັງວັດສາ ປະ– ກະເມເຍວະ ໃນອາວາດອັນເປັນປະກົມແລ ເສນາສະນະຄາໂຫ ອັນວ່າ ກິຍາອັນກືເອົາຍັງເສນາສະນະ ທຸຕິເຍ ອັນກ້ວນສອງ ປະ– ຕິສັມພະຕິ ກໍລະວັງບເສຍບັດນັ້ນ ຕັສສະ ພິກຂຸໂນ ແກ່ພິກຂຸຕົນນັ້ນ ບັສມາ ເຫດໃດ ຕັສມາ ການະນາ ເຫດດັ່ງນັ້ນ ວະຈະນັງ ອັນ ວ່າຄຳ ຕັສສະ ພິກຂຸໂນ ປຸຣິມະພາວະ ນະ ປັນຍາຍະຕິ ອິຕິ ດັ່ງ ນີ້ ຕິກາອາຈະຣິເຍນະ ອັນເຈົ້າສາຣັດກະທິປະນີ ຕິກາຈານ ວຸຕ– ຕັງ ກ່າວແລ້ວ ປຸຣິມິກາ ວະ ອັນວ່າປຸຣິມະວັດສາ ນະ ປັນຍາຍະຕິ ກໍບໍ່ປາກົດ ຕັສສະ ພິກຂຸໂນ ແກ່ພິກຂຸຕົນນັ້ນແລ ຫ້ອງພິກຂຸເປັນ ສັນນີ້ແລ ຫ້ອງຄົນລະຫັດ ກໍທຽມດັ່ງພິກຂຸ ກໍຄວນແລ ເມື່ອວ່າຄວນ ນັ້ນເປັນດັ່ງຣືຈາ ? ຜີວ່າ ບຸກຄະລະທັງຫລາຍຫາກຜິດກັນໃນບ້ານ ໃນເມືອງ ໃນຊົນນະບົດແລປະຈັນຕະປະເທດ ທີ່ໃດທີ່ໜຶ່ງ ຫາກຕົບ ຫາກແຕ່ງກັນເສຍ ດ້ວຍນ້ຳເຕົ້າເຫລົ້າໄຫກໍດີ ດ້ວຍເຂົ້າຕອກດອກ ໄມ້ເຜີ້ງທຽນກໍດີແລ ເປັນເງິນບາດ ເງິນເບັ້ຍກໍດີ ໃນປະເທດທັງ ຫລາຍຝູງນັ້ນ ວ່າເປັນຄຳແລ້ວ ດ້ວຍອັນກືເອົາຍັງເຄື່ອງກິຍາ ອັນ ທ່ານຫາກແຕ່ງຫາກແປງດັ່ງນັ້ນ ເມື່ອພາຍລຸນຜິດກັນດ້ວຍເຫດການ ອັນໃດອັນໜຶ່ງກໍດີ ມາຍົກຮອດອາດຍາໃຫ້ສື່ເມືອງຕັດເສຍ ເຫດມັນ ຫາກກືເອົາຂອງທ່ານແລ້ວ ກໍບໍ່ຄວນທີ່ມັນຄົ້ນຄຳລຸກປຸກຄຳນັ້ນ ເມື່ອ ພາຍລຸນແລ ເມື່ອວ່າກຳສັນນີ້ ກໍສົມຄຳພະພຸດທະເຈົ້າຕັດວ່າ ຄະ–

ທະເນນະ ຄະທະນັງ ປະຕິສັມພິ ນັ້ນແລ ແມ່ນວ່າກ້ອຍຄວາມອັນເຂົາຫາກມາວ່າ ຮອດສີ່ເມືອງໄດ້ພິຈາລະນາແຈບແລບແລ້ວ ສີ່ເມືອງເລົ່າເອົາໄວ້ ຂາທັງສອງກໍວ່າເຂົ້າໃຈຊູ່ເບື້ອງແລ້ວ ຈຶ່ງຂຽນໜັງສືໄວ້ເຕີມປະຕິຍານ ຂາຈຶ່ງຕັດຜ້າຜ່ອງ (ຜ້າກ່ອງ) ແບ່ງປັນໃຫ້ແກ່ຂາກໍດີແລ ໃສ່ຂັນໄໝ ສິນໄໝໃຫ້ເບື້ອງດຽວໜຶ່ງກໍດີແລ້ວແລ ໃຫ້ໜັງສືກັບຕາກວ້ານສານໄວ້ກໍດີ ວ່າເປັນອັນລື້ມອັນແລ້ວ ແລໜີໄປຢູ່ທີ່ອື່ນທີ່ກິນເກີງສອງປີ ສາມປີກໍດີແລ ເກີງເຊັ່ນໜຶ່ງ ສອງເຊັ່ນມະຫາກະສັດກໍດີ ເມື່ອລຸນຈຶ່ງຄົ້ນຄຳລູກປຸກຄຳຕື່ນມັ້ນ ໃຫ້ຕັດເສຍເຫດມັນຫາກກືເອົາຂອງທ່ານໄປຈ່າຍຊື້ກິນ ເຮັດທຶນເຮັດຮອນກິນ ເປັນເຈຍຣະການນານນັກແລ້ວ ເພິ່ງໃຫ້ຕັດເສຍເທີ້ນ ກໍຫາກສິມເບີນປາລີ ພະພຸດທະເຈົ້າເທດສະໜາວ່າ ຄະທະເນນະ ຄະທະນັງ ປະຕິສັມພິ ນັ້ນແລ ປະການໜຶ່ງ ຜີບຸກຄະລະຜູ້ໃດ ໃຫ້ເຂົ້າຂອງອັນເປັນ ອັຕຕະໂນ ສັນຕະກະແຫ່ງຕົນແກ່ທ່ານຜູ້ອື່ນ ດ້ວຍເຈຕນາອັນເຫຼື້ອມໃສກໍດີ ດ້ວຍກ້ອຍຄຳອັນຍິນດີແລ້ວ ແລໄດ້ອະນຸໂມທະນາກໍດີແລ ບຸກຄະລະຜູ້ໃດໃຫ້ນັ້ນແລ ຜິດກຽງກັນດ້ວຍເຫດອັນໃດອັນໜຶ່ງກໍດີແລເສຍດາຍຈັກເອົາຄືນພາຍລຸນກໍດີ ກໍບໍ່ຄວນໄດ້ແກ່ບຸກຄະລະຜູ້ນັ້ນແລ ໃຫ້ສີ່ເມືອງຕັດເສຍເທີ້ນ ເມື່ອວ່າສັນນີ້ ເຫດເຈົ້າສາມັນຕະປະສາທິກາວ່າ ໂຍ ປະນະ ປະກະມັງເຍວະ ສຸຕກຸກະຕັງ ຕະຍາ ມະມະ ສັນຕະກັງ ຄັນທັນເຕນາຕິ ວະຈິເພເທນະວາ ຈິຕ-ຕຸປປາທະມັຕເຕນະ ວາ ອະນຸໂມເທຕວາ ປັດສາ ເຍນະ ເກ-ນະຈິ ການະເນນະ ກຸປປິໂຕ ປັດສາ ທະຮາເປຕຸງ ນະ ລັພພະ-ພະຕິ ຈາຫ້ອງອັນເປັນປະກົມບໍຣະບວນທໍ່ນີ້ແລ.

<u>ສຸດຕະບັນທາ</u>

ບັດນີ້ຈັກຈາ ອັນເປັນສຸດຕະບັນທາ ໃຫ້ນັກປາດຕິຄະນິງດ້ວຍປັນຍາ ຕັດແຕ່ງໃຫ້ຊອບທຳ ຄັນນັກປາດຜູ້ໃດຕັດແຕ່ງບັນທາສາມປະການນີ້ ຄ່ອງແທ້ດັ່ງນັ້ນ ນັກປາດຜູ້ນັ້ນຈຶ່ງຕັດກ້ອຍຄວາມຕໍ່ລ້າວ

ຕໍ່ລົງເປັນສຸຄະຕິຄະມະນະແລ.

ຜີຈັກຕັດຄວາມບັນຫາສາມປະການນີ້ ໃຫ້ປົງ ປະຣະມັດກະ–ທຳລົງໃຫ້ແຈບແລ້ວແລຕັດແຕ່ງເທີ້ນ ຄຳອັນນີ້ໄວ້ໃຫ້ນັກປາດມີທີ່ຣິມເພິ່ງແລ ເມື່ອວ່າບັນຫາສາມປະການນັ້ນຄືອັນໃດຈາ? ແທ້ແລຍັງມີມານະວະສາມຄົນ ເຂົາພ້ອມກັນໄປຄວ່າໄຄ່ວອນຂໍມາໄດ້ຄຳພັນໜຶ່ງແລ້ວ ເຂົາມັກຈັກໄປຂໍອັນອື່ນ ກໍຕິດຈິດແລ້ວຈຶ່ງໄປໄວ້ກັບດອມຍ່າເຖົ້າຜູ້ໜຶ່ງ ກັບທັງຫໍ່ສິ້ນປ່ອຍອັນໜຶ່ງກໍຝາກໄວ້ ເຂົາທັງສາມນັ້ນຈຶ່ງສັ່ງຍ່າເຖົ້າວ່າ ເມື່ອໃດໆທັງສາມນີ້ມາພ້ອມກັນ ຍ່າຈຶ່ງໃຫ້ລ້ຳໆທັງສາມນີ້ ຜູ້ໃດຜູ້ໜຶ່ງຫາກມາເອົາບໍ່ພ້ອມກັນ ອີຍ່າຢ່າໃຫ້ເທີ້ນ ຍ່າເຖົ້າກໍຮັບເອົາປະຕິຍານເຂົາແລ້ວ ເຂົາກໍອອກໜີຈາກບ້ານຍ່າເຖົ້າໄປຮອດນອກບ້ານຫັ້ນພໍຊົ່ວຄອຍເຫັນ ແລເອີ້ນໄດ້ຍິນກ້ອຍຄວາມແຈ້ງຈຶ່ງເຂົາເຫັນນ້ຳຫ້ວຍອັນໜຶ່ງໃສງາມ ເຂົາວ່າຈັກອາບ ເຮົາຄືນເມືອເອົາສິ້ນປ່ອຍມາສະຫົວເຮົາທ້ອນ ວ່າດັ່ງນັ້ນຈຶ່ງໃຊ້ຜູ້ໜຶ່ງເມືອເອົາສິ້ນປ່ອຍດອມຍ່າເຖົ້າ ຍ່າເຖົ້າບໍ່ໃຫ້ ມັນຄືນມາຫາຂາສອງນັ້ນໜ້ອຍໜຶ່ງແລ້ວມັນຈຶ່ງເອີ້ນຂາສອງຄົນນັ້ນວ່າ ເຂືອທັງສອງເຮີຍ ອີຍ່າເຖົ້າບໍ່ໃຫ້ໜາວ່າດັ່ງນັ້ນ ຂາສອງຄົນນັ້ນຈຶ່ງເອີ້ນຄືນວ່າ ໃຫ້ອີຍ່າເຖົ້າໃຫ້ແກ່ມັນທ້ອນວ່າດັ່ງນັ້ນ ຍ່າເຖົ້າໄດ້ຍິນວ່າໃຫ້ສອງໆ ຄອງວ່າໃຫ້ມາເອົາກົງຄຳກັບທັງຫໍ່ສິ້ນປ່ອຍ ອີຍ່າກໍຂາຍເອົາກົງຄຳ ກັບທັງຫໍ່ສິ້ນປ່ອຍໃຫ້ແກ່ມັນ ມັນໄດ້ແລ້ວລົງເຮືອນຍ່າເຖົ້າ ແລ້ວມັນກໍພາເຮັ່ງໜີຫັ້ນແລ ຂາສອງຄົນດູນານບໍ່ເຫັນ ຄືນມາຫາຍ່າເຖົ້າຈຶ່ງວ່າໃຫ້ແກ່ມັນຜູ້ເຂືອໃຊ້ມາເອົາເຕີມກ້ອຍຄວາມ ເຂືອວ່າໃຫ້ອີຍ່າໃຫ້ແກ່ມັນທ້ອນວ່າອັນ ມັນບໍ່ໄປຫາເຂືອເຈົ້າຣິ ຂາບໍ່ຍອມແກ່ຍ່າເຖົ້າ ຈັກໃຫ້ຍ່າເຖົ້າໃຊ້ ຍ່າເຖົ້າບໍ່ໃຊ້ ຈຶ່ງພາກັນໄປຫາວິນິດໄສ ບາງພ່ອງວ່າຄວນໃຊ້ບາງພ່ອງວ່າບໍ່ຄວນໃຊ້ອັນນີ້ຕໍ່ໜຶ່ງ.

ຕໍ່ໜຶ່ງເລົ່າ ຍັງມີພານຜູ້ໜຶ່ງ ເມຍມັນປະກອບດ້ວຍຣາຄະຕັນຫາຄຽວເປັນອັນຍິ່ງ ພານຜູ້ຜົວຈັກໄປຄ້າ ເມຍມັນບໍ່ໃຫ້ໄປ ເຫດມັນ

ຄຸງວຫາຜູ້ເຍັດບໍ່ໄດ້ ພາມຜູ້ຜົວບໍ່ຟັງຄວາມເມຍ ມັນຈຶ່ງຈຳພາມຜູ້ເປັນຜົວ ໄປຫາຜູ້ເຍັດຕາງຕົວມັນມາໄວ້ ພາມຜູ້ຜົວນັ້ນຈຶ່ງໄປຫາໜໍມິນໃຫ້ຄວັດຮູບໄມ້ ແລ້ວຈຶ່ງສິບມິນໃສ່ຈຶ່ງບອກພາມວ່າ ຄັນປາກໃຫ້ເປັນຄົນ ໃຫ້ບາຍຫູເບື້ອງຂວາ ແລ້ວໃຫ້ເມຍທ່ານເອົາເຍັດມັນເທີ້ນ ມັນຫາກເຍັດເມຍທ່ານຕາງຕົວທ່ານແລ ຄັນເຍັດພໍອີ່ມໃຈແລ້ວ ໃຫ້ເມຍທ່ານບາຍຫູຍິນເບື້ອງຊ້າຍ ມັນຫາກຈັກເປັນຮູບໄມ້ຢູ່ດັ່ງເກົ່າຫັ້ນແລ ພາມກະທຳຕາມຄຳມັນແລ້ວ ກໍໜີໄປຄ້າຫັ້ນແລຢູ່ພາຍລຸນພາມໄປແລ້ວ ໃນວັນໜຶ່ງ ຊາຍໂກງຜູ້ໜຶ່ງມັນຫາກຮູ້ວ່າຍິງຜູ້ນັ້ນຄຸງວນັກ ມັນຈຶ່ງເມືອເມືອຄືນ ເພື່ອວ່າຈັກເຍັດ ທໍ່ວ່າມືດມັນງົມງວາລວດໄປບາຍຫູຍິນເບື້ອງຂວາ ລວດກາຍເປັນຄົນກຸມຊຳ (ເລົ່າ) ພະລັນຫຍຸບເອົາບັ້ງຊາຍໂກງຜູ້ນັ້ນໄວ້ ເມຍພາມລວດງົມງວາໄປຈວບກົ່ງຄຳຊາຍໂກງຜູ້ນັ້ນ ພັນຄຳໜຶ່ງ ໃນແອວຊາຍໂກງຜູ້ນັ້ນ ມັນກໍແກ້ເອົາໄດ້ແລ້ວ ມັນຈຶ່ງຮ້ອງໃຫ້ໄທເຮືອນອື່ນມາຊ່ອຍຕ້ອນຂ້າເອົາຊາຍໂກງຜູ້ນັ້ນ ມັນຢ້ານນັກກຸມພິດບໍ່ຫລູດ ຍິງຜູ້ນັ້ນຮູ້ວ່າຊາຍໂກງຜູ້ນັ້ນຢ້ານ ກົວເປັນອັນຍິ່ງ ມັນຈຶ່ງຮີບບາຍຫູຍິນເບື້ອງຊ້າຍລວດກາຍເປັນໄມ້ ຊາຍໂກງຜູ້ນັ້ນຈຶ່ງປີບໜີ ມັນຢ້ານກົວຫັ້ນແລ ບໍ່ນານທໍ່ໃດພາມຜູ້ເປັນຜົວຈຶ່ງມາຮອດ ຍິງຜູ້ເມຍມັນຈຶ່ງເລົ່າເຫດອັນຕົນໄດ້ຄຳພັນນັ້ນໃຫ້ແຈ້ງແກ່ພາມຜູ້ເປັນຜົວ ຄວາມອັນນັ້ນກໍຜາກົດໄປຮອດໜໍມິນຜູ້ແປງຮູບຍິນນັ້ນ ໜໍມິນຈຶ່ງມາໂຈດເອົາຄຳພັນນັ້ນດອມພາມ ເຫດໜໍມິນບໍ່ໄດ້ກິນຈ້າງແຫ່ງພາມ ທໍ່ແປງຍິນນັ້ນໃຫ້ພາມ ດ້ວຍວິສາດສິ່ງດຸງວວ່າຍິນກູຫາກແປງນັ້ນ ຫາກກຸມເອົາໂຈນເມຍທ່ານຈຶ່ງໄດ້ຄຳພັນນັ້ນດາຍ ວ່າດັ່ງນັ້ນເຂົາທັງສາມຄົນນັ້ນ ຄືວ່າພາມແລໜໍມິນ ແລເມຍພາມນັ້ນຊູ່ຄົນຊູ່ວ່າປາກໄດ້ຫລາຍ ອັນນີ້ຕໍ່ໜຶ່ງໃຫ້ຜູ້ມີຜະຫຍາປັ່ງຮູ້ເທີ້ນ.

ອີກຕໍ່ໜຶ່ງເລົ່າ ຍັງມີຂາພໍ່ລູກສອງຄົນ ພໍ່ຕາຍເສຍເປັນເຜດມາສຳແດງແກ່ລູກຊາຍວ່າ ໃຫ້ກະທຳບຸນຫາໃຫ້ໄດ້ເມືອທີດີດັ່ງນັ້ນ

ລູກຊາຍຜູ້ນັ້ນມາພິຈາລະນາຫາວັດຖຸເຂົ້າຂອງ ກໍບໍ່ມີສັງ ຍັງແຕ່ໝູ ອັນພໍ່ຫາກລ້ຽງ ແຕ່ຍັງເປັນຄົນນັ້ນຕົວດຽວໜຶ່ງ ກະໄທຊາຍຜູ້ລູກນັ້ນ ຈິ່ງຂ້າເອົາຊີ້ນໝູຕົວນັ້ນ ກະທຳເປັນອາຫານ ກະທຳອຸດທິດສະໃຫ້ ແກ່ພໍ່ ທີ່ວ່າເມື່ອອັນກະໄທຊາຍຜູ້ລູກ ຈັກຂ້າຍັງໝູຕົວນັ້ນ ໝູຕົວ ນັ້ນຄຶດຮອດອັດຊາໄສກະໄທຊາຍຜູ້ນັ້ນ ຈັກຂ້າຍັງຕົນລວດມີຈິດເຫຼື້ອມ ໃສໃນທານອັນຈັກຂ້າເອົາຊີ້ນຕົວໃຫ້ທານນັ້ນ ຄັນຈຸຕິຕາຍຈາກຊາດ ອັນເປັນໝູດັ່ງນັ້ນ ກະໄທຊາຍຜູ້ເປັນເຜດນັ້ນ ກັບທັງໝູຕົວນັ້ນ ກໍ ເມືອຜາກົດເປັນເທວະບຸດຢູ່ໃນຊັ້ນຟ້າຈາຕຸມ ເປັນນາຣະທະເທວະ ບຸດພ້ອມກັນ ຜາສາດທິບຫລັງໜຶ່ງເກີດໃນກາລະບັດທັດ ອັນຂາທັງ ສອງເມືອຮອດນັ້ນສີ່ງດຽວ ຂາທັງສອງຊີງກັນເປັນເຈົ້າວິມານ ພາກັນ ໄປຫາພະຍາທັງສີ່ກໍຕັດບໍ່ໄດ້ ພາກັນຂຶ້ນເມືອຮອດພະຍາອິນ ກໍບໍ່ຕັດ ຂາຍັງກຽງກັນເທົ່າກາລະບັດນີ້ວ່າສັນນີ້ ນັກປາດຜູ້ມີປັນຍາໃຫ້ຟັງມະ ຫາປະການ ອັນເປັນ ປະຣະມັດກະທຳແລ້ວ ແລຕັດເທິ້ນແຈບແລ. ບົດບັນຫາສອງອັນ ອັນເກົ່າຢ່າວ່າແຕ່ຟັງມະຫາປະການ ແລປະ– ຣະມັດກະ ໃຫ້ຫລີງຫາສຸດຕັງສຸດຕານຸໂລມ ມາຊອຍແຈບແລ ນັກ ປາດຜູ້ໃດ ຕັດຄວາມສາມຕໍ່ນີ້ຄ່ອງນັກ ຜູ້ນັ້ນໄດ້ຊື່ວ່າ ຮູ້ຫລັກແຈບ ໃນມະຫາປະເທດສີ່ດີຫລີແລ ເມື່ອວ່າມະຫາປະເທດສີ່ຄືວ່າ ສຸດຕັງ ໜຶ່ງ ສຸຕຕານຸໂລມະໜຶ່ງ ອາຈະຣິຍະວາເທໜຶ່ງ ອັຕຕະໂນມັຕຕິ ໜຶ່ງແລ.

ສິສຸຂະສະຫວັດສະດີ ອະໂຣຄຍາ ນິທຸກຂະ ນິຣຸປປະທະວາ ຄັມພີຣະສາຕຣະຄັນກີ ປະກະຣະນະ ສັງສະວັນນະນາ ນິຕກິຕາ– ພັນຣະນາຍັງຄຳພີຊື່ວ່າ ຄຳພີຣະສາຕຣະຄັນກີ ອັນໃຫ້ລະງັບເສຍ ຍັງທຸກຂະແລ ອຸບປະທະວະອັນຕາຍທັງມວນ ແລໃຫ້ຈຳເຣີນຍັງສຸ ຂະສະຫວັດສະດີ ອັນມາກແກ່ສັພພະສັດຕະໂລກທັງມວນ ນິຕກິຕາ ກໍສະເດັດບໍຣະບວນ ອັນຄວນເປັນສຸກອັນລ້ຳຍິ່ງສິ່ງກ່າວມານີ້ແລ.

ປຽບທຽບອານາຈັກກັບທຳມະຈັກ

ບັດນີ້ ຈັກພິຈາລະນາຫາອອານາຈັກ ແລທັມມະຈັກ ທັງສອງ ມາທຽມກັນຜູ້ມີປະຫຍາເພິງຮູ້ດັ່ງນີ້ : ຜີຜູ້ໜຶ່ງເມົາເຫລົ້າເມົາຢາ ແລໄດ້ກະທຳຜິດຕໍ່ເມຍທ່ານດັ່ງນັ້ນ ໃຫ້ການຄົນທັງຫລາຍດູ ຜີວ່າມັນເມົາພໍປະມານໃຫ້ໃສ່ຂັນໄໝ ຜີເມົາພົ້ນບໍ່ຮູ້ສະຕິໄດ້ ບໍ່ຄວນໃສ່ຂັນໄໝ ທໍ່ໃຫ້ສົມມາເງິນບາດໜຶ່ງ ເພື່ອຢ່າໃຫ້ມັນກະທຳຫລາຍເທື່ອ ທຽມດັ່ງພິກຂຸຕົນເປັນບ້າເວດທະນາ ແລໄດ້ກະທຳຕໍ່ຜູ້ຍິງ ພະເຈົ້າບໍ່ໄດ້ໃສ່ອາບັດ ເຫດຫາສະຕິບໍ່ໄດ້ ເປັນດັ່ງຄົນຜູ້ເມົາພົ້ນປະໝານນັ້ນ ບໍ່ຄວນໃສ່ຂັນໄໝແລ.

ຜູ້ໃດເປັນພໍ່ໃຊ້ແມ່ສື່ ເກາະເມຍທ່ານໃຫ້ມີຊູ້ ຄວນໃສ່ຂັນໄໝແກ່ມັນ ທຽມດັ່ງພິກຂຸກະທຳ ສັນຈະຣິດຕະຄື ເປັນໃຊ້ເປັນສື່ ໂອມຜູ້ຍິງຜູ້ຊາຍໃຫ້ແກ່ກັນນັ້ນ ພະພຸດທະເຈົ້າໃສ່ອາບັດສັງຄາທິເສດແກ່ພິກຂຸຕົນນັ້ນ ເຫດດັ່ງນັ້ນ ຜູ້ໃດເປັນໃຊ້ເປັນສື່ ແກ່ເມຍທ່ານຄວນໃສ່ຂັນໄໝແລ.

ຜີຜູ້ໜຶ່ງໄປລັກຂອງຝາກໄວ້ດອມຜູ້ໜຶ່ງ ມັນຜູ້ນັ້ນກໍຮູ້ວ່າຂອງລັກແທ້ ເມື່ອໃດເພິ່ນໄຕ່ຕາມມາຮອດ ຄວນໃສ່ຂັນແປງແກ່ເຈົ້າເຮືອນເຫດອຳໂທດໄວ້ ທຽມດັ່ງພິກຂຸຕົນໜຶ່ງຮູ້ວ່າ ພິກຂຸຕົນໜຶ່ງເກີງອາ-ບັດປະຣາຊິກແທ້ແລ ອຳໂທດໄວ້ນັ້ນ ພະເຈົ້າໃສ່ອາບັດປາຈິດຕີແກ່ພິກຂຸຕົນອຳນັ້ນ ເຫດອຳບາບອຳໂທດໄວ້ແລ ທີ່ນໂລກຄວນໃສ່ຂັນແປງຊອບແລ.

ຜີວ້ຳຜູ້ໜຶ່ງ ຫູ່ເພິ່ນຫລິ້ນຊູ້ກັບເມຍທ່ານ ຫາເຄົ້າຫາມູນບໍ່ໄດ້ຄວນໄໝຄຳປາກມັນ ເຫດວ່າມັນມັກຄວາມ ບັກຄຳຕາຍໝາຍຄຳຮ້າຍໃສ່ທ່ານດາຍ ທຽມດັ່ງພິກຂຸຕົນໜຶ່ງ ຍົກໂທດແກ່ພິກຂຸຕົນໜຶ່ງວ່າທ່ານນີ້ເປັນປະຣາຊິກແລ ຄຳອັນນັ້ນຫາເຄົ້າຫາມູນບໍ່ໄດ້ ພະເຈົ້າໃສ່ອາບັດສັງຄາທິເສດແກ່ພິກຂຸຕົນນັ້ນແລ ທີ່ນໂລກຄວນໃສ່ສິນໄໝແກ່ຜູ້ຍົກແລ.

ພີວ່າຜູ້ໜຶ່ງ ຊວນເມຍທ່ານໄປທີ່ອື່ນ ທໍ່ແຕ່ສອງຂາຫາກໄປ ດອມກັນ ທໍ່ຄວນໃສ່ຂັນແປງແກ່ມັນຜູ້ຊວນນັ້ນ ທຽມດັ່ງພິກຂຸຕົນ ໜຶ່ງຊວນຜູ້ຍິງໄປທຽວທາງຜູ້ດຽວກັບຕົນ ພິກຂຸທັງຫລາຍນຳໄປເຫວົ້ ພະເຈົ້າ ພະເຈົ້າໃສ່ອາບັດປາຈິດຕິແລ ທັນໂລກຄວນໃສ່ຂັນແປງ ຊອບແລ.

ພີຜູ້ໃດໄປນຳວງດວາອາກອນທ້າວພະຍາ ມັນກໍອຳເອົາຂອງພະ ຍາເປັນຂອງມັນ ພາຍລຸນຈິ່ງຮູ້ ຄວນໃຫ້ແທນທັງມວນແລ ໃສ່ຂັນ ແປງແກ່ມັນ ເຫດມັນໂລບເອົາຂອງທ່ານດາຍ ທຽມດັ່ງພິກຂຸຕົນ ໜຶ່ງ ນ້ອມເອົາຂອງສິງມາເປັນຂອງຕົນ ພິກຂຸທັງຫລາຍນຳໄປເຫວົ້ ພະເຈົ້າ ພະເຈົ້າໃສ່ອາບັດປາຈິດຕິແກ່ພິກຂຸຕົນນັ້ນ ແລທັນໂລກໃສ່ ຂັນແປງຊອບແລ.

ພີຜູ້ໜຶ່ງຢູ່ສະຫງັດ ຄືວ່າທີ່ລັບທີ່ບັງ ກັບເມຍທ່ານສອງຕໍ່ສອງ ຂາດັ່ງນັ້ນ ໃຫ້ຂຽນກາມດູ ຜີໄດ້ເກີງມີກຸມະທຳ ໃຫ້ໃສ່ຂັນຄ່າຄໍ ແຕ່ ປາກຈາດອມກັນທີ່ສະຫງັດໃຫ້ໃສ່ຂັນແປງຊອບແລ ທຽມດັ່ງພິກຂຸຕົນ ໜຶ່ງ ຢູ່ໃນທີ່ສະຫງັດກັບມາຕຸຄາມ ຍັງມີອຸປາສິກອຸປາສິກາ ຜູ້ມີສິນ ທ້າ ສິນແປດເຫັນ ແລມາບອກເລົ່າຍັງຄຳມີແທ້ ຄວນໃສ່ປະຣາຊິກ ກໍໃສ່ ຄວນໃສ່ສັງຄາທິເສດກໍໃສ່ ປາຈິດຕິກໍໃສ່ ທັນໂລກພິຈາລະນາ ດູໃຫ້ແຈ້ງ ຄວນຂັນທໍ່ໃດຈິ່ງໃສ່ຕາມພະວິໄນພະເຈົ້າເທີ້ນ.

ພີຜູ້ໜຶ່ງໄປສັບສໍ່ທ້າວພະຍາຜູ້ຮັກກັນ ໃຫ້ມ້າງຈາກກັນດ້ວຍຄຳ ສໍ່ນັ້ນ ພິຈາລະນາດູເປັນໂທດ ໃຫ້ໃສ່ຂັນໄໝແກ່ມັນ ເຫດວ່າມັນ ປາກຫລາຍ ທຽມດັ່ງພິກຂຸຕົນໜຶ່ງ ມ້າງສິງໃຫ້ຜິດກັນ ພິກຂຸທັງ ຫລາຍນຳໄປເຫວົ້ພະເຈົ້າ ພະເຈົ້າໃສ່ອາບັດສັງຄາທິເສດແກ່ພິກຂຸຕົນ ນັ້ນແລ ທັນໂລກຄວນໃສ່ຂັນໄໝຊອບແລ.

ພີຜູ້ໃດໄປຊິງເອົາດິນບ້ານ ແດນເມືອງ ດິນໄຮ່ ດິນນາທ່ານ ກາຍຫລັກປັກແດນແທ້ ຄວນໃສ່ຂັນຄ່າຄໍແກ່ມັນ ເຫດແຜ່ນດິນມີຄ່າ ມາກດາຍ ທຽມດັ່ງພິກຂຸຕົນໜຶ່ງ ໄປຊິງແດນດິນອາວາດອາຣາມ

ທ່ານ ກາຍທີ່ຝັງຫລັກແຫ້ ພິກຂຸທັງຫລາຍນຳໄປໄຫວ້ພະເຈົ້າ ພະເຈົ້າໃສ່ອາບັດປະຣາຊິກ ເຫດແຜ່ນດິນມີຄ່າມາກດາຍ ທັມໂລກຄວນໃສ່ຂັນຄ່າຄໍຊອບແລ.

ຜີຜູ້ໜຶ່ງເອົາຂອງທ່ານ ບໍ່ເຫັນເຈົ້າຂອງແລບໍ່ກາມ ໃສ່ໃຈວ່າຢືມກ່ອນວ່າດັ່ງນີ້ ທີທ່ານຜູ້ອື່ນໄດ້ຍິນນຳກໍດີ ແມ່ນຫາກວ່າດ້ວຍຕົນກໍດີ ໄປ່ຄວນໃສ່ໂທດ ເຫດມັນບໍ່ໄດ້ລັກ ຍັງຮ້ອງຮຽກຫາດາຍ ທຽມດັ່ງພິກຂຸຕົນໜຶ່ງ ໄປເອົາໄມ້ຂອງສົງມາທຳວິຫານແຫ່ງຕົນ ດ້ວຍຄຳໃສ່ໃຈວ່າຢືມດັ່ງນັ້ນ ພິກຂຸທັງຫລາຍໂຈດທ່ານວ່າ ທ່ານນີ້ບໍ່ເປັນສົມແລ ນຳໄປໄຫວ້ພະເຈົ້າ ພະເຈົ້າວ່າທ່ານນີ້ໃສ່ໃຈສິ່ງໃດ ພິກຂຸຕົນນັ້ນວ່າ ຂ້າໃສ່ໃຈວ່າຢືມແລ ພະເຈົ້າວ່າ ອະນາບັດ ຫາອາບັດບໍ່ໄດ້ ເຫດຢືມ ທັມໂລກບໍ່ຄວນໃສ່ຂັນເຕັມ ຜິເສຍຂອງອັນກູ້ອັນຢືມທີ່ໃຫ້ແທນຊອບແລຜີບໍ່ເສຍ ກໍບໍ່ຄວນວ່າສັງແກ່ມັນແລ.

ຜີຜູ້ໜຶ່ງເອົາຄວາມຜູ້ໜຶ່ງ ໄປລ່າຍເອົາຂອງໃນສຳນັກແຫ່ງທ່ານຜູ້ໜຶ່ງ ຂອງອັນນັ້ນ ມັນບໍ່ໃຫ້ແກ່ຜູ້ມັນເອົາຄວາມໄປນັ້ນ ມັນຫາກເອົາໄວ້ເຫິງນານຈຶ່ງຮູ້ ຂອງນັ້ນໃຫ້ມັນໃຊ້ແທນຕົງສຽງ ຜີວັດກູອັນໜັກເສຍ ໃຫ້ໃສ່ຂັນແປງແກ່ມັນ ເຫດມັນລ່າຍຈັກວ່າລັກກໍໄປ່ຂຶ້ນເຫດຍັງເອົາຄວາມຜູ້ໜຶ່ງເປັນນິມິດ ທຽມດັ່ງພິກຂຸຕົນໜຶ່ງເອົາຄວາມນາງຈຸລະນັນທາພິກຂຸນີ ໄປເອົາຂອງກະກຸມອຸບປະກາກແຫ່ງນາງມາບໍຣະໂພກແກ່ຕົນ ພິກຂຸທັງຫລາຍຮູ້ໄປໄຫວ້ພະເຈົ້າ ພະເຈົ້າໃສ່ອາບັດປາຈິດຕີ ແກ່ພິກຂຸຕົນນັ້ນ ທັມໂລກເອົາຄວາມໄປລ່າຍເອົາສັນນັ້ນຄວນໃສ່ຂັນແປງຊອບແລ.

ຜີຜູ້ໜຶ່ງຕາກຜ້າໄວ້ລືມກູ້ ຜູ້ໜຶ່ງເຫັນກົວເສຍ ມັນກູ້ໄວ້ ເຈົ້າຂອງໂຈດວ່າຂອງກູຫາກຕາກໄວ້ໜີ້ ໃຜເອົາຂອງກູຈາ ຜູ້ກູ້ວ່າຂ້ອຍກູ້ໄວ້ແລ ເຈົ້າຂອງວ່າ ທ່ານລັກຂອງກູວ່າດັ່ງນີ້ ໂທດບໍ່ມີແກ່ຜູ້ກູ້ ເຫດວ່າບໍ່ໄດ້ໃສ່ໃຈລັກ ມັນເລົ່າກູ້ໄວ້ດາຍ ທຽມດັ່ງພິກຂຸຕົນໜຶ່ງຕາກຜ້າໄວ້ກາງແຈ້ງ ຕົນໜຶ່ງກົວເສຍແລກູ້ໄວ້ ເຈົ້າຜ້າວ່າກູຕາກຜ້າໄວ້ໃຜ

ລັກຈາ ຕົນກູວ່າຂ້ອຍກູ້ໄວ້ແລ ເຈົ້າຜ້າວ່າທ່ານບໍ່ເປັນສິນແລ ພິກຂຸທັງຫລາຍນຳໄປໄຫວ້ພະເຈົ້າ ພະເຈົ້າວ່າຫາອາບັດບໍ່ໄດ້ ເຫດວ່າຍັງບອກກູ້ໄວ້ດາຍ ໄກຍະຈິດບໍ່ມີແລ ພິກຂຸຕົນໜຶ່ງ ເຫັນຜ້າດອກໄມ້ອັນລົມຫາກພັດປິວຕົກທີ່ໜຶ່ງ ແລເອົາໄວ້ ໃສ່ໃຈວ່າເຈົ້າຂອງແລມາການຈຶ່ງໃຫ້ ພະເຈົ້າວ່າຫາອາບັດບໍ່ໄດ້ ເຫດໄກຍະຈິດບໍ່ມີ ທົ່ນໂລກເຫັນຂອງທ່ານເສຍດ້ວຍໄຟ ດ້ວຍລົມແລເອົາໄວ້ແກ່ເຈົ້າຂອງ ການເອົາໃຫ້ບອກດ້ວຍຊື່ ບໍ່ຄວນໃຫ້ເປັນໂທດ ຄວນບໍຣະນາຄຸນດາຍ ເພື່ອອຸດສາຫະເອົາໄວ້ຍາກດາຍ.

ຜີເຮືອແພຫລົ້ມ ເຈົ້າຂອງຮ້ອງໃຫ້ຊ່ອຍ ຜູ້ຊ່ອຍໄດ້ຂອງຄວນບໍຣະນາຄຸນ ຜີຊ່ອຍແລມີໃຈໂລບອຳເອົາຂອງທ່ານ ຜູ້ມີພະຫຍາຄວນພິຈາລະນາຕາມວັດຖຸ ອັນນ້ອຍ ອັນຫລາຍ ອັນກົກອັນແພງຕາມໂທດຕາມຄຸນເທີ້ນ ທ່ານອານັນທະຢູ່ໂຮງໄຟໄດ້ນຸ່ງຜ້າພິກຂຸຕົນໜຶ່ງອັນແປກຜ້າກັນ ເຈົ້າຜ້າວ່າເຈົ້າອານັນທະນຸ່ງຜ້າຂ້າສັງຈາ ເຈົ້າອານັນທະວ່າ ຂ້າໃສ່ໃຈວ່າຜ້າຂ້າ ຜູ້ຂ້າກໍໄດ້ນຸ່ງແລ ໄປໄຫວ້ພະເຈົ້າພະເຈົ້າວ່າຫາອາບັດບໍ່ໄດ້ແກ່ເຈົ້າອານັນທະແລ ເຫດໃສ່ໃຈວ່າຂອງຕົນນຸ່ງແລ ທົ່ນໂລກຜີແປກກັນວ່າຊື່ແທ້ ບໍ່ຄວນເປັນໂທດເປັນຂັນອັນມິດສະຫາຍ ເຄີຍໄດ້ຢູ່ໄດ້ກິນດອມກັນ ເອົາດ້ວຍວິສາດຄຸ້ນເຄີຍກັນບໍ່ຄວນເປັນໂທດເປັນໄພຍແກ່ກັນ ຜູ້ໜຶ່ງກິນເຂົ້າແລແຄ້ນ ຜູ້ໜຶ່ງໃສ່ໃຈຈັກໃຫ້ເຂົ້າລົງ ແລຕີທີ່ໃດທີ່ໜຶ່ງກໍດີ ມັນຜູ້ແຄ້ນລວດຕາຍ ຈັກໃສ່ໂທດແກ່ຜູ້ຕີບໍ່ຄວນແລ ເຫດບໍ່ໄດ້ໃສ່ໃຈໃຫ້ຕາຍແລ ທຽມດັ່ງພິກຂຸຕົນໜຶ່ງກິນເຂົ້າແລແຄ້ນ ພິກຂຸຕົນໜຶ່ງໃສ່ໃຈຕີໃຫ້ລົງ ແລຕີຕົນແຄ້ນນັ້ນລວດຕາຍ ຄຳສິນເທມີໄປໄຫວ້ພະເຈົ້າ ພະເຈົ້າວ່າ ມະຣະນະທີ່ບໍ່ມີເຈຕນາ ຫາອາບັດບໍ່ໄດ້ແລ ເຫດວ່າໃສ່ໃຈຢາກໃຫ້ລົງມັນຫາກຕາຍ ທົ່ນໂລກກໍບໍ່ຄວນໃສ່ໂທດແກ່ຜູ້ຕີໃຫ້ລົງນັ້ນແລ ແມ່ນວ່າໃຫ້ຫວ້ານໃຫ້ຢາອັນໃດກໍດີ ມະຣະນະບໍ່ເຈຕນາ ບາບບໍ່ມີ ໃຫ້ດ້ວຍສຸຈະຣິດໃຈ ຢາກໃຫ້ກອຍໃຫ້ດີ ມັນຫາກຕາຍຫາໂທດບໍ່ໄດ້ແລ

ມີຜູ້ໜຶ່ງຜູ້ໃດວ່າເປັນໂທດ ເປັນຂົນ ມັນຜູ້ນັ້ນຊື່ວ່າ ອັນທະ ຕາບອດ ບໍ່ຮູ້ອານາຈັກ ທັມມະຈັກແລ ຜີຜູ້ກະທຳການພາຍບົນ ຜູ້ໜຶ່ງຢູ່ພາຍລຸ່ມ ຍື່ນຄ້ອນແລພ້າຂວານຂຶ້ນໃຫ້ຜູ້ຢູ່ບົນ ກໍບໍ່ໝັ້ນຫລູດຈາກມືມາຖືກຜູ້ຢູ່ລຸ່ມຕາຍດັ່ງນັ້ນ ບໍ່ເປັນໂທດ ເຫດມັນບໍ່ໄດ້ໃສ່ໃຈ ມັນຫາກຕາຍ ມັນຫາກຫລູດມືດາຍ ທຽມດັ່ງພິກຂຸຕົນໜຶ່ງຢູ່ເມືອງ ອາຣະວີ ກະທຳການພາຍບົນ ພິກຂຸຕົນໜຶ່ງຢູ່ພາຍລຸ່ມ ຍື່ນຂວານໃຫ້ແກ່ພິກຂຸຕົນຢູ່ບົນ ກໍບໍ່ໝັ້ນຫລູດມືຖືກຕົນຢູ່ລຸ່ມຕາຍ ຄຳສິນເຫມີນຳໄປໄຫວ້ພະເຈົ້າ ພະເຈົ້າວ່າບໍ່ໄດ້ໃສ່ໃຈ ມັນຫາກຫລູດ ຫາອາບັດບໍ່ໄດ້ ຜີບໍ່ຕາຍພໍເລືອດຕົກຢາງອອກ ຍັງຄວນສົມມາເປັນເຜົ້າທຽມ ຢ່າໃຫ້ເປັນເວນແກ່ກັນ ທັນໂລກບໍ່ຄວນໃສ່ໂທດເປັນເງິນເປັນຄຳ ທໍ່ແຕ່ສົມມາພາຍນອກຊອບແລ.

ອັນໜຶ່ງ ຜີໂຈນລັກຂອງເພິ່ນມາທອດໄວ້ໃກ້ບ້ານ ໃກ້ເມືອງກໍດີ ກໍຍັງຄວນໃຫ້ເຈົ້າບ້ານເຈົ້າເຮືອນສະສ່ວຍຕາມກາລະຈັກວ່າ ກູບໍ່ຮູ້ບໍ່ເຫັນໂຈນລັກບໍ່ໄດ້ ທຽມດັ່ງພິກຂຸຕົນໜຶ່ງຢູ່ ປະຣິວາດ ຫລອນມີພິກຂຸຕົນໃດຕົນໜຶ່ງ ລຸກທີ່ອື່ນມາຢຳທີ່ນັ້ນ ຕົນຢູ່ກໍບໍ່ຮູ້ວ່າພິກຂຸລັກມາທີ່ນັ້ນ ຍັງເປັນຣັດຕິເສດດາຍ ອະທິບາຍວ່າ ແມ່ນບໍ່ຮູ້ກໍຍັງເສຍດາຍ ທັນໂລກກໍຄວນໃສ່ຂັນຫ້າບາດ ສະສ່ວຍຕາມກາລະເທີ້ນ ອັນໜຶ່ງທຽມດັ່ງສະຫະໄສຍາດ ພິກຂຸບໍ່ຮູ້ວ່າກັບແກ້ ແລມີກກາລາບມານອນກຸດິດອມ ພະເຈົ້າກໍຍັງໃສ່ອາບັດທຸກກົດດາຍ ທັນໂລກອານາຈັກໃສ່ຂັນຫ້າບາດຊອບແລ.

ຜີວ່າຜູ້ໃດລັກເຂົ້າທ່ານພໍເໜົ້າ ໃຫ້ໄໝຫ້າບາດ ໃຫ້ໃຊ້ທໍ່ໜຶ່ງແລ ຜີວ່າລັກພໍບຸງໃຫ້ໄໝເຈັດບາດ ໃຫ້ໃຊ້ເກົ້າທໍ່ ຜີວ່າພໍຫາບໃຫ້ໄໝຮ້ອຍໃຊ້ເກົ້າທໍ່ ຜີວ່າລັກກ້ວຍອ້ອຍໃຫ້ໄໝຫ້າບາດ ຜີວ່າລັກຕຶກແຫບວກໜອງທີ່ເປັນງວດໃຫ້ໄໝຫ້າບາດ ຜີວ່າລັກນ້ຳນາເມື່ອເຊົ້າໃຫ້ໄໝສອງຮ້ອຍເງິນແລ ຜີວ່າລັກເມື່ອຄ່ຳໃຫ້ໄໝຮ້ອຍເອັດ ຜີວ່າລັກສະບວກໜອງທ່ານ ໃຫ້ໄໝຫ້າບາດແລ ຜີແລເຮັດເງິນຄຳຄວາງ

ຕົວະຊື້ຂາຍເອົາຂອງທ່ານອາດຍາ ຄວນຂ້າເສຍ ຜີບໍ່ຂ້າໃຫ້ຮື້ເອົາຄົວມັນມາໃສ່ຣາຊໂກດ ແຫ່ງພະຍາຊອບແລ ຜີວ່າຄົນສະຫາວແລຢ່າທ່ອງເຂົ້າ ຢ່າຕົ້ນໜຶ່ງກໍດີ ໃຫ້ໃຊ້ຊິກເງິນ ຜີຢ່າເຂົ້າແຮກແລຫລົກເສຍກໍດີ ໃຫ້ໄໝສາມຮ້ອຍ ສາມບາດ ສາມບັກ ສາມຊິກ ສາມສ່ຽວແລ ເຫດມັນພາງານແລ ຜີວ່າລັກໝາກພູໄໝຫ້າບາດ ຜີວ່າລັກໝາກພ້າວໝາກຕານໄດ້ຂອງເກົ່າຄືນ ໃຫ້ໃຊ້ທໍ່ໜຶ່ງ ບໍ່ໄດ້ຂອງເກົ່າຄືນໃຫ້ແທນສອງທໍ່ ລັກຜັກລັກແຕງໃຫ້ແທນເບ້ຍໜຶ່ງ ລັກຄາດລັກໄກໄດ້ຂອງເກົ່າໃຫ້ໄໝເບ້ຍໜຶ່ງ ບໍ່ໄດ້ຂອງເກົ່າຄືນ ໃຫ້ໄໝສາມບາດ ຜີວ່າລັກກໍ່ລັກພາຍ ໄດ້ຂອງເກົ່າຄືນໃຫ້ໄໝເຟື້ອງໜຶ່ງ ບໍ່ໄດ້ຂອງເກົ່າຄືນໃຫ້ໄໝເບ້ຍໜຶ່ງ ຜີຜູ້ໃດປູກພືຊະຂອງກິນ ເປັນຕົ້ນວ່າ ຕານພ້າວ ເມື່ອເປັນໝາກເຈົ້າກິນມາຊິງເອົາ ດັ່ງນັ້ນໃຫ້ຜ່າສາມສ່ວນໃຫ້ຜູ້ປູກສອງສ່ວນ ໃຫ້ເຈົ້າກິນສ່ວນໜຶ່ງ ລັກຊ້າງມ້າຂ້າຄົນ ໃສ່ຂັນຄ່າຄໍ ລັກງົວຄວາຍເຮືອໃສ່ສອງຮ້ອຍ ລັກໝູໃສ່ຂັນຮ້ອຍໜຶ່ງ ລັກໝາໃສ່ຂັນຫ້າບາດ ລັກເປັດກ່ອງຫ້າບາດ ລັກໄກ່ເບ້ຍໜຶ່ງ ລັກນົກຕໍ່ຂັນຫ້າບາດ ລັກຂ່າຍ ລັກຄືນຂັນບາດໜຶ່ງ ລັກຄາດໄກຂັນບາດໜຶ່ງ ລັກຜັກໝົດທັງສວນຂັນບາດໜຶ່ງ ລັກແຕງເຕົ້າເຂົ້າໂຄດສາລີ ໝາກຟັກໝາກນ້ຳ ຂັນສອງຮ້ອຍ ລັກສຽມລັກພ້າມີດຂັນສອງຮ້ອຍ ລັກສ້ອນລັກໄຊປາກໍດີ ໃສ່ຂັນສອງຮ້ອຍ ຜີວ່າບໍ່ໄດ້ຂອງເກົ່າຄືນດັ່ງນັ້ນຂັນຫ້າຫ້າບາດ ລັກຊ້ອນແຫໂຕ່ງ ນາມຂັນຫ້າບາດ ບໍ່ໄດ້ຂອງເກົ່າຄືນຂັນຮ້ອຍໜຶ່ງ ລັກບວກລັກຫລຸມຂັນຮ້ອຍໜຶ່ງ ລັກຍາດນ້ຳ ທັງປາເປັນທີ່ລວງນາມທີ່ເປັນຂອງໄພ່ ຜູ້ໃດຫາກບອກໃຫ້ທ່ານໄປເອົາໃຫ້ໃສ່ຂັນຄ່າຄໍເທີ້ນ ລັກເຂາະໂປງງົວຄວາຍຂັນຮ້ອຍຫ້າບາດ ລັກຂິກກໍຫ້າບາດ.

ວັນນະນາ ຈາຍັງ ກຳພີ ສຸວັນນະມຸກຂາ ນິດກິຕາ ກໍຈົບເທົ່ານີ້ ນັກປາເຈົ້າຈົ່ງຮຳເພິງເອົາເທາະນາ.

ໝາຍເຫດ: ຄຳພີນີ້ຊື່ຂຽນໃນໃບລານບໍ່ມີ ຂຽນມີເຈ້ຍຕິດບອກພຽງວ່າກົດໝາຍບູຮານລາວ ຂຽນໃສ່ໄມ້ປະກັບວ່າ ສຸວັນນະມຸກຂາ ຂ້າ

ພະເຈົ້າເລີຍເອົາຊື່ນີ້ເຫັນວ່າເໝາະດີ ແຕ່ລັກສະນະທີ່ແທ້ຈິງແມ່ນ ປະມວນກົດໝາຍບູຮານລາວ (The Code of Lao Customary Laws)

<u>ຂອງເກົ່າເລົ່າໃໝ່</u>

ໃຜຜູ້ ເປັນຂຸນກ້າ ຄອງເມືອງມັນຈິ່ງຮຸ່ງ
ຄັນແມ່ນ ຂຸນຂີ້ຢ້ານ ແປງບ້ານກະບໍ່ເຮືອງ
ໄມ້ລຳດຽວ ລ້ອມຮົ້ວບໍ່ໄຄວ່
ໄພ່ບໍ່ພ້ອມ ແປງບ້ານບໍ່ເຮືອງ
ຢ່າເຫັນແກ່ເງິນແສນໄກ່ ໃຫ້ເຫັນແກ່ໄພ່ແສນເມືອງ
ເຈົ້າຜູ້ມີເຮືອແລ້ວ ຢ່າລືມແພໄມ້ໄພ່
ຄັນໄດ້ເປັນໃຫຍ່ແລ້ວ ຢ່າລືມຂ້ອຍຜູ້ພອຍ
ບາດຮ່າ ເຮືອເຈົ້າຫຼົ້ມ ຍັງຊິໄດ້ຂີ່ແພ ວ່າເດ !
ຍາມນ້ຳຫຼາກມາ ປາກິນມົດ ບາດນ້ຳລົດ ມົດກິນປາ
ເວລານ້ຳຂຶ້ນຕໍ່ມຸດ ຄັນນ້ຳຫຼຸດຕໍ່ພົ້ນ ຄົນເຮົາຢ່າປະໝາດ

ພິມທີ່ ວິສາຫະກິດການພິມຈຳໜ່າຍສຶກສາ
ທບ. 606/ພທບ. 070994 ຈຳນວນ 2000ສະບັບ